# ພົງສາວະດານລາວ



ເຈົ້ ອຸ່ມຄໍາ

# ພົງສາວະດານ
# ລາວ



# ສ າ ຣ ະ ບ າ ນ


ຄຳອະທິບາຍຂອງຜູ້ຣຈນາ ໜ້າ

ບົດທີ ໑

ເມືອງຊຽງທອງ ຫລື ສຸວັນນະພູມປະເທດ.......................... 1

ຊາດຂອມ.......................................... 2

ມູນເຫດພວກຂອມອົບພະຍົບມາຢູ່ສຸວັນນະພູມ.......................... 3

ຊາດລົວະ ຫລື ລະວ້າ.................................... 4

ບົດທີ ໒

ກຳເນີດຊາດລາວ...................................... 5

ກຳເນີດຄຳວ່າ ລາວ..................................... 5

ຄວາມໝາຍຂອງຄຳວ່າ ລາວ.................................. 7

ບົດທີ ໓

ອານາຈັກເດີມຂອງລາວ.................................... 9

ບົດທີ ໔

ອານາຈັກລາວໜອງແສ ຫລື ນ່ານເຈົ້າ............................ 11

ຂຸນບໍຣົມຣາຊາທິຣາດ.................................... 12

ຂຸນບໍຣົມຣາຊາທິຣາດທົງຕັ້ງເມືອງກາຫລົງ ຫລື ເມືອງແຖນ.................. 13

ປະເພນີລາວອານາຈັກໜອງແສ................................ 16

ບົດທີ ໕

ອານາຈັກລາວລ້ານຊ້າງ.................................... 22

໑. ຣັຊການພຣະເຈົ້າຟ້າງຸ່ມ (ພຣະຍາຟ້າຫລ້າທໍຣະນີ)................... 26

ເຈົ້າຟ້າງຸ່ມໄປຢູ່ປະເທດຂເມນ................................ 26

ເຈົ້າຟ້າງຸ່ມສະເດັດກັບຄືນປະເທດລາວ............................ 27

ເຈົ້າເມືອງພວນ ຂໍອ່ອນນ້ອມ................................. 29

ເຈົ້າຟ້າງຸ່ມຂຶ້ນສເວີຍຣາດ.................................. 30

ເຈົ້າຟ້າງຸ່ມສະເດັດໄປຕີເມືອງຊຽງແສນ........................... 31

ເຈົ້າຟ້າງຸ່ມ ສະເດັດຕີວຽງຈັນ................................ 32

ໜ້າ

ເຈົ້າຟ້າງຸ່ມ ສະເດັດໄປຕີເອົາເມືອງຮ້ອຍເອັດ........................... 35

ເຈົ້າຟ້າງຸ່ມຫົງ ສລອງໄຊຢູ່ວຽງຈັນ........................................ 36

ພຣະຣາຊໂອວາດ ຂອງພຣະເຈົ້າຟ້າງຸ່ມ..,.................................... 37

ພຣະເຈົ້າຟ້າງຸ່ມນຳເອົາພຣະພຸທສາສນາລັດທິລັງກາວົງ ຫລື
ຫີນະຍານມາຈາກປະເທດຂເມນ.................................................. 38

ພຣະບາງປະດິສຖານຢູ່ວຽງຄຳ.................................................. 39

໒. ຣັຊການພຣະຍາສາມແສນໄທໄຕພູວະນາດ.................................. 41

໓. ຣັຊການພຣະຍາລ້ານຄຳແດງ................................................. 44

ຄວາມວຸ້ນວາຍເນື່ອງຈາກນາງມະຫາເທວີ....................................... 45

໔. ຣັຊການພຣະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ............................. 46

ເຈົ້າຊາຍມຸ່ຍກະບົດ.............................................................. 47

ສົງຄາມລາວກັບແກວ............................................................ 48

໕. ຣັຊການພຣະເຈົ້າສູວັນນະບັນລັງ (ທ້າວແທ່ນຄຳ)........................ 50

໖. ຣັຊການພຣະຍາຫລາແສນໄຕພູວະນາດ..................................... 50

໗. ຣັຊການເຈົ້າຊຸມພູ............................................................ 52

໘. ຣັຊການພຣະເຈົ້າວິຊຸລຣາດ.................................................. 52

໙. ຣັຊການພຣະໂພທິສາຣະຣາດເຈົ້າ............................................ 53

ສົມເດັດພຣະໂພທິສາຣະຣາດ ສະເດັດອອກບວດ................................ 54

ສົມເດັດພຣະໂພທິສາຣະຣາດທົງປະກາດໃຫ້ເລີກນັບຖືຜີ........................ 54

ສົມເດັດພຣະໂພທິສາຣະຣາດສະເດັດຍົກທັບໄປຕີຊຽງຂວາງ..................... 55

ສົມເດັດພຣະໂພທິສາຣະຣາດສະເດັດຍົກທັບໄປຕີນະຄອນສີອະຍຸທຍາ............ 55

ສົມເດັດພຣະໂພທິສາຣະຣາດສະເດັດໄປປະຕິສັງຂອນທາດພະນົມ..................

ສົມເດັດພຣະໂພທິສາຣະຣາດສະເດັດໄປນະຄອນຊຽງໃຫມ່ຕັ້ງພຣະ
ຣາຊໂອຣົດເປັນເຈົ້າແຜ່ນດິນ.................................................... 56

ພະມ້າສົ່ງທູດມາຈະເຣີນໄມຕຣີ................................................. 57

ສົມເດັດພຣະໂພທິສາຣະຣາດສະເດັດອອກຄ້ອງຊ້າງໃຫ້ທູດຕ່າງປະເທດຊົມ............ 58

໑໐. ຣັຊການສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ............................. 58

ສົມເດັດພຣະໄຊຍະເຊດຖາທິຣາດຕີນະຄອນຊຽງໃຫມ່............................. 60

ໜ້າ


ຕັ້ງນະຄອນວຽງຈັນເປັນຣາຊທານີ.................................... 62

ສົມເດັດພຣະໂພທິສາຣະຣາດເຈົ້າຂໍນາງເທບກະສັດຕີ.......................... 63

ພະມ້າຕີວຽງຈັນຄັ້ງທີ ໑............................................ 65

ຕັ້ງສາງທາດຫລວງ................................................ 65

ສະເດັດໄປຕີເມືອງພິສນຸໂລກ ຄັ້ງທີ ໑.................................. 67

ສະເດັດໄປຕີເມືອງພິສນຸໂລກ ຄັ້ງທີ ໒.................................. 68

ທັບພະມ້າຕີວຽງຈັນ ຄັ້ງທີ ໒......................................... 70

ສະເດັດໄປຕີເມືອງອິງການ.......................................... 72

໑໑. ຣັຊການພຣະສຸມັງຄະລະອັຍໂກໂພທິສັດພຣະຍາແສນສຸຣິນທະລືໄຊ........ 73

ພະມ້າຕີວຽງຈັນ ຄັ້ງທີ ໓............................................ 74

໑໒. ຣັຊການພຣະມະຫາອຸປຣາຊາວໍຣະວົງໂສ.......................... 75

ຣັຊການພຣະສຸມັງຄະລະອັຍໂກໂພທິສັດ ຄັ້ງທີ ໒.......................... 75

໑໓. ຣັຊການພຣະຍານະຄອນນ້ອຍ.................................. 76

໑໔. ຣັຊການພຣະໜໍ່ເມືອງ.......................................... 76

໑໕. ຣັຊການພຣະວໍຣະວົງສາທັມມິກະຣາດ............................ 77

ພຣະວໍຣະວົງສາປະກາດອິສຣະພາບ.................................... 78

໑໖. ຣັຊການພຣະອຸປະຍຸວະຣາດ.................................... 79

໑໗. ຣັຊການພຣະບັນດິດໂພທິສານ.................................. 79

໑໘. ຣັຊການພຣະໜ່ອມແກ້ວ........................................ 79

໑໙. ຣັຊການພຣະເຈົ້າຕ່ອນຄຳ...................................... 80

໒໐. ຣັຊການສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ.................. 80


ບົດທີ ໖


ປະເທດລາວແບ່ງເປັນ ໓ ອານາຈັກ.................................... 102


໑. ອານາຈັກລ້ານຊ້າງ


໑. ຣັຊການພຣະເຈົ້າອົງຫລໍ່........................................ 102

໒. ຣັຊການເຈົ້ານັນທະຣາດ.......................................... 103

໓. ຣັຊການພຣະໄຊອົງເວ້ (ພຣະໄຊຍະເຊດຖາທິຣາດ ທີ ໒)................. 103

໔. ຣັຊການພຣະເຈົ້າສິຣິບຸນຍະສານ.................................... 104

ໜ້າ


ພຣະບໍຣົມຣາຊກູ່ແກ້ວເປັນກະບົດ.................................... 104

ພຣະວໍຣະຣາດກະບົດ.................................... 106

ສຳເນົາພຣະຣາຊສານເຈົ້າແຜ່ນດິນວຽງຈັນ ຄັ້ງທີ ໑.................................... 107

ສຳເນົາສູພະອັກສອນຂອງເສນາບໍດີກຸງສີສັດຕນາຄະນະຫຸດກຳກັບພຣະຣາຊສານ ຄັ້ງທີ ໑.... 108

ສຳເນົາພຣະຣາຊສານພຣະເຈົ້າຕາກສິນ ຄັ້ງທີ ໑.................................... 110

ສຳເນົາສູພະອັກສອນເສນາບໍດີກຸງເທບມີກຳກັບພຣະຣາຊສານ ຄັ້ງທີ ໑.............. 111

ພະມ້າກ້ຽວກ່ອມພຣະເຈົ້າສິຣິບຸນຍະສານ.................................... 114

ສຳເນົາສູພະອັກສອນເສນາບໍດີປະເທດໄທມີມາເຖິງເສນາບໍດີວຽງຈັນ ຄັ້ງທີ ໒.......... 115

ສຳເນົາພຣະຣາຊສານຂອງພຣະເຈົ້າສິຣິບຸນຍະສານຄັ້ງທີ ໒.................................... 116

ສຳເນົາສູພະອັກສອນເສນາບໍດີກຸງສີສັດຕນາຄະນະຫຸດມີກຳກັບພຣະຣາຊສານ ຄັ້ງທີ ໒...... 118

ສຳເນົາສູພະອັກສອນຂອງພຣະຍາເມືອງແສນ.................................... 120

ສຳເນົາສມະນະສານຂອງພຣະສັງຄະຣາດວຽງຈັນມີໄປເຖິງພຣະສັງຄະຣາດກຸງເທບ...... 121

ສຳເນົາພຣະຣາຊສານຂອງພຣະເຈົ້າແຜ່ນດິນກຸງເທບ ຄັ້ງທີ ໒.................................... 123

ສຳເນົາສູພະອັກສອນເສນາບໍດີກຸງເທບຄັ້ງທີ ໓.................................... 124

ສຳເນົາສະມະນະສານພຣະສັງຄະຣາດກຸງເທບທີ່ມີມາເຖິງພຣະສັງຄະຣາດ
ກຸງສີສັດຕນາຄະນະຫຸດ.................................... 127

ສຳເນົາສູພະອັກສອນຂອງເສນາບໍດີກຸງເທບຕອບຄືນມາ ຄັ້ງທີ ໔.................................... 130

ສົງຄາມ ລະຫວ່າງ ລາວກັບໄທ.................................... 132


## ໒. ອານາຈັກລ້ານຊ້າງຫລວງພຣະບາງ


໑. ຣັຊການຂອງພຣະເຈົ້າກິງກິສຣາດ.................................... 136

໒. ຣັຊການສົມເດັດພຣະບໍຣົມຂັດຕິຍະວົງສາ (ເຈົ້າອົງຄຳ).............. 136

໓. ຣັຊການເຈົ້າອິນທະໂສມ.................................... 137

໔. ຣັຊການເຈົ້າໂຊຕິກະ.................................... 137

໕. ຣັຊການພຣະເຈົ້າສຸຣິຍະວົງສາ.................................... 137


## ໓. ອານາຈັກນະຄອນຈຳປາສັກ


໑. ພຣະເຈົ້າສ້ອຍສີສມຸດພຸດທາງກູນ.................................... 138

໒. ຣັຊການພຣະໄຊຍະກຸມມານ.................................... 139

## ບັ້ນທີ ຖ

ໜ້າ

ປະເທດລາວພາຍຫລັງເສັຽເອກຣາດແລ້ວ ອານາຈັກລ້ານຊ້າງວຽງຈັນ.................. 141

໑. ຣັຊການພຣະເຈົ້ານັນທະເສນ.......................................... 141

໒. ຣັຊການເຈົ້າອິນທະວົງ.......................................... 142

໓. ຣັຊການເຈົ້າອະນຸວົງ.......................................... 142

ສຳເນົາຈົດໝາຍເຈົ້າພຣະຍາຈັກກຣີ ມາເຖິງເຈົ້າອະນຸ.......................... 144

ພຣະເຈົ້າອະນຸທຳການກູ້ອິສຣະພາບ.......................................... 146

ພຣະເຈົ້າອະນຸຍົກທັບຈາກວຽງຈັນ.......................................... 148

ເຈົ້າອຸປຣາດຕິດສະ ກະບົດຕໍ່ເຈົ້າອະນຸ.......................................... 148

ສົມເດັດພຣະເຈົ້າອະນຸຖອຍທັບ.......................................... 149

ກອງທັບໄທຍົກມາຕໍ່ສູ້.......................................... 150

ກອງທັບໄທຕີຄ້າຍເມືອງຫນອງບົວລຸມພູ.......................................... 151

ກອງທັບໄທຖືກຕີຂນາບ.......................................... 152

ກອງທັບໄທເຂົ້າທຳລາຍເມືອງວຽງຈັນ.......................................... 152

ເຈົ້າອຸປຣາດຕິດສະ ເຂົ້າຫາແມ່ທັບໄທ.......................................... 153

ຣາຍງານແມ່ທັບໃຫຍ່ຂອງໄທ ເຣື່ອງຕີນະຄອນວຽງຈັນ.......................................... 153

ກອງທັບພຣະຍາຊຽງສາຕໍ່ສູ້.......................................... 157

ເຈົ້າຣຸຍເມືອງຈຳປາສັກເຂົ້າຫາໄທ.......................................... 157

ແມ່ທັບແກວມີໜັງສືມາເຖິງພຣະຍາຣາຊສຸພາວະດີ.......................................... 158

ພຣະຍາຊຽງສາ ເຂົ້າຫາພຣະຍາຣາຊສຸພາວະດີ.......................................... 158

ພຣະເຈົ້າອະນຸເຂົ້າຍຶດວຽງຈັນອີກ.......................................... 160

ພຣະຣາຊສານພຣະເຈົ້າກຸງວຽດນາມມີມາເຖິງພຣະເຈົ້າ
ແຜ່ນດິນໄທ ເພື່ອຂໍໂທດພຣະເຈົ້າອະນຸ.......................................... 161

ເຈົ້າຣາຊວົງນຳຕີກອງທັບໄທ.......................................... 162

ໄທຈັບເຈົ້າອະນຸໄດ້.......................................... 163

### ອານາຈັກລ້ານຊ້າງຫລວງພຣະບາງ

### (ສມັຍເສັຽເອກຣາດແລ້ວ)

໑. ຣັຊການພຣະເຈົ້າອະນຸຣຸດທະ.......................................... 165

ໜ້າ


໒. ຣັຊການເຈົ້ານັນທາຕູຣາດ . . . . . . . . . . 165

໓. ຣັຊການພຣະເຈົ້າສຸກເສີມ . . . . . . . . . . 166

໔. ຣັຊການພຣະເຈົ້າຈັນທະຣາດ . . . . . . . . . . 167

໕. ຣັຊການພຣະເຈົ້າຊຸ່ນຄຳ . . . . . . . . . . 168

໖. ຣັຊການເຈົ້າຄຳສຸກ (ພຣະເຈົ້າສັກກະຣິນ) . . . . . . . . . . 170


## ອານາຈັກຈຳປາສັກ

## (ສມັຍເສັຽ ເອກຣາດແລ້ວ)


໑. ຣັຊການເຈົ້າໄຊຍະກຸມມານ . . . . . . . . . . 171

໒. ສມັຍເຈົ້າພຣະວິໄຊຍະຣາຊຂັດຕິຍະວົງສາ . . . . . . . . . . 172

໓. ສມັຍເຈົ້າຫມານ້ອຍ . . . . . . . . . . 173

໔. ສມັຍເຈົ້າຣາຊບຸດໂຍ້ . . . . . . . . . . 173

໕. ສມັຍເຈົ້າຮຸຍ . . . . . . . . . . 173

໖. ສມັຍເຈົ້ານາກ . . . . . . . . . . 174

໗. ສມັຍເຈົ້າຍຸຕິທັມທອນ (ຄຳໃຫຍ່) . . . . . . . . . . 174

໘. ສມັຍເຈົ້າຍຸຕິທັມທອນ (ຄຳສຸກ) . . . . . . . . . . 174


## ບັ້ນທີ ໘


ລາວຂຶ້ນຢູ່ໃນຄວາມປົກຄອງຝຣັ່ງເສດ . . . . . . . . . . 175

ໄທຫວງເອົາລາວຄືນ . . . . . . . . . . 178


------==== O ==========

## ຄຳອະທິບາຍຂອງຜູ້ຣຽບຣຽງ

ການຮຽນປະວັດສາດ ຫລື ພົງສາວະດານຂອງຊາດ ເປັນທາງຈູງໃຈໃຫ້ເກີດຄວາມຮັກຊາດຢ່າງແກ່ກ້າ ເພາະເມື່ອເຮົາໄດ້ຊາບວ່າ ສມັຍນັ້ນປະເທດຊາດບ້ານເມືອງຂອງເຮົາ ມີຄວາມຈະເຣີນຮຸ່ງເຮືອງ ມີອຳນາດສາມາດພາບແພ້ຂ້າເສິກສັດຕູໄດ້ ເຮົາກໍ່ມີຄວາມອອນຊອນໃຈ ເມື່ອໄດ້ຊາບວ່າ ສມັຍນັ້ນປະເທດຊາດຂອງເຮົາຫລົ້ມຈົມ ຫລືຖືກສັດຕູທຳຮ້າຍ ເຮົາກໍ່ມີຄວາມເສັຽໃຈ ຄິດຢາກແກ້ໄຂ ແລະຕາມທັມມະດາຄວາມເປັນໄປຂອງປະເທດບ້ານເມືອງ ມັກເປັນໄປຕາມຮອຍເກົ່າ ຕົວຢ່າງ: ປະເທດລາວເຮົາໄດ້ຍຸບຍອບລົງໃນສມັຍນຶ່ງທີ່ລ່ວງມາແລ້ວນັ້ນ ກໍ່ຍ້ອນປະເທດເຮົາແບ່ງແຍກກັນ ປະຊາຊົນພົລເມືອງແລະເຈົ້ານາຍທັງຫລາຍແຕກກັນເປັນຫລາຍພວກ ບໍ່ສາມັກຄີກັນ ເມື່ອເຮົາຮູ້ດັ່ງນີ້ແລ້ວ ໃນປັດຈຸບັນແລະການຂ້າງຫນ້າເຮົາກໍ່ຈະໄດ້ຫາທາງປ້ອງກັນໄວ້ ບໍ່ໃຫ້ເປັນດັ່ງທີ່ເປັນມາແລ້ວ.

ສມັຍນີ້ເຮົາທັງຫລາຍ ພວມທຳການຟື້ນຟູປະເທດຊາດ ເພື່ອໃຫ້ເຮົາເປັນຊາດຢູ່ໄດ້ແລະໃຫ້ຈະເຣີນທັນຊາດອື່ນ ດັ່ງນັ້ນການຮຽນຮູ້ພົງສາວະດານຊາດຂອງຕົນ ຈຶ່ງເປັນການຈຳເປັນແລະສຳຄັນຍິ່ງເພາະຄວາມຮັກຊາດຢ່າງແກ່ກ້າແທ້ນັ້ນ ເກີດຈາກການຮຽນຮູ້ ປະວັດຫລືພົງສາວະດານ ຂອງຊາດນັ້ນເອງ. ການຮູ້ພົງສາວະດານຂອງຊາດຕົນເອງເປັນຕົ້ນເຫດໃຫ້ເກີດຄວາມອຸດສາພຍາຍາມໃນການສ້າງຊາດໃຫ້ຈະເຣີນ ໃນທາງທັມທີ່ເພິ່ນເວົ້າວ່າ ປຸພເພນິວາສະນຸສສະຕິຍານ ຄືປັນຍາອັນຈື່ຈຳຊາດໄດ້ນັ້ນ ກໍ່ແມ່ນຄວາມຮູ້ໃນພົງສາວະດານຂອງຊາດນີ້ເອງ ພຣະພຸທເຈົ້າຂອງເຮົາທີ່ມະນຸດທົ່ວໂລກນັບຖືວ່າ ເປັນຜູ້ປະເສີດເລີດລ້ຳມີປັນຍາສລາດອາດຮູ້ທຸກສິ່ງທຸກອັນນັ້ນ ກໍ່ຍ້ອນເພິ່ນໄດ້ບັນລຸ ປຸພເພນິວາສະນຸສສະຕິຍານ ຄືຄວາມຮູ້ຈັກພົງສາວະດານແຕ່ງຊາດນີ້ ຈຶ່ງເປັນກະໄດຂັ້ນຕົ້ນແລະເປັນຂັ້ນສຳຄັນ ທີ່ພາໃຫ້ມະນຸດສ້າງຊາດຂອງຕົນໃຫ້ຈະເຣີນ ແລະດວຍເຫດນີ້ອີກ ໂຮງຮຽນທັງຫລາຍຂອງທຸກ ໆ ຊາດ ຈຶ່ງໄດ້ສອນວິຊາປະວັດສາດ ຫລືພົງສາວະດານນີ້ ທຸກ ໆ ໂຮງຮຽນ.

ຫນັງສືປະວັດສາດ ຫລື ພົງສາວະດານຊາດລາວສະບັບນີ້ ຂ້າພະເຈົ້າໄດ້ຊອກຄົ້ນແລະທ້ອນໂຮມມາຈາກຫນັງສືພົ້ນເມືອງລາວ ຫລາຍສະບັບ ຫລາຍຜູກ ດັ່ງມີບັນຊີແຈ້ງຢູ່ຂ້າງຕົ້ນນັ້ນແລ້ວ ແຕ່ວ່າສ່ວນຫລາຍແທ້ນັ້ນແມ່ນເອົາມາຈາກຫນັງສືນິທານຂຸນບູຣົມ (ບໍຣົມ) ອັນເປັນຫນັງສືພົ້ນເມືອງລາວ ຫລື ພົ້ນເມືອງລ້ານຊ້າງ.

ຫນັງສືນິທານຂຸນບູຣົມນີ້ ໄດ້ມີຜູ້ແຕ່ງແລະກ່າຍສືບຕໍ່ກັນມາຫລາຍເທື່ອຫລາຍສະບັບລາງສະບັບ ຜູ້ກ່າຍຕໍ່ມາບໍ່ເຂົ້າໃຈໃນພົ້ນເພເດີມຫລືບໍ່ເຂົ້າໃຈໃນຄຳເວົ້າ ບໍ່ເຂົ້າໃຈໃນອັກຂຣະວິທີ ເປັນແຕ່ ພຽງຂຽນຫນັງສືເປັນກໍ່ຂຽນໂລດ ໂດຍທີ່ໂຕເອງບໍ່ເຂົ້າໃຈເລີຍກໍ່ມີ ດັ່ງນີ້ຈຶ່ງເຮັດໃຫ້ຫນັງສືລາງຜູກມີຄວາມຜິດພາດຂາດເຂີນຫລາຍ ຂ້າພະເຈົ້າໄດ້ເອົາຫນັງສືນິທານຂຸນບູຣົມຕັ້ງ ກ ສະບັບມາທຽບຄຽງກັນເບິ່ງຈຶ່ງໄດ້ຮູ້ວ່າ ລາງສະບັບຜູ້ກ່າຍບໍ່ເຂົ້າໃຈແທ້ ໆ ຕົວຢ່າງຫນັງສືໃບລານທີ່ມີຢູ່ໃນຫໍສມຸດທຸກວັນນີ້ ສ່ວນຫລາຍຜູ້ກ່າຍບໍ່ເຂົ້າໃຈເລີຍ

ເປັນແຕ່ພຽງຂຽນຮັບຈ້າງເອົາເງິນເທົ່ານັ້ນ ທັງເມື່ອຂຽນແລ້ວກໍບໍ່ກວດທວນໃສ່ກັບສະບັບເດີມດ້ວຍ.

ຄວາມຈິງໜັງສືນິທານຂຸນບູຣົມນີ້ ສັງເກດໄດ້ວ່າ ມີຜູ້ແຕ່ງສືບຕໍ່ກັນມາເຖິງ ໔ ສມັຍຫຼື ໔ ເທື່ອຄື:

໑. <u>ເທື່ອທີ ໑</u> ແມ່ນພຣະມະຫາເທບຫລວງ ກັບ ພຣະມະຫາມຸງຄຸນສິທທິ ພ້ອມດ້ວຍສົມເດັດພຣະເຈົ້າວິຊຸລຣາຊ ຈຶ່ງແຕ່ງຂຶ້ນໃນສມັຍຂອງສົມເດັດພຣະເຈົ້າວິຊຸລຣາຊນັ້ນເອງ ດັ່ງມີຂໍ້ຄວາມແຈ້ງຢູ່ໃນຕອນທ້າຍຂອງນິທານຂຸນບູຣົມ ສະບັບຢູ່ວັດສີສະເກດວຽງຈັນແລະສະບັບຢູ່ຫໍສມຸດກຣຸງເທພກ່າວໄວ້ດັ່ງນີ້:

"ຕຳນານຂຸນບູຣົມອັນນີ້ ພຣະມະຫາເທບຫລວງເຈົ້າ ອັນເປັນທັມມະເສນາຕົນພີ່ ຕົນນ້ອງ ຢູ່ວັດວິຊຸນ ທັງມະຫາມຸງຄຸນສິທທິເຈົ້າ ຕົນເປັນທັມມະເສນາເຈົ້າຕົນນ້ອງທັງເຈົ້າແຜ່ນດິນ ແລະເສນາທັງຫລາຍ ພ້ອມກັນແປງໄວ້ ໃຫ້ເປັນໄປຕາບຕໍ່ເທົ້າຫ້າພັນວັສສາ".

ໜັງສືນິທານຂຸນບູຣົມສະບັບແຕ່ງເທື່ອທຳອິດນີ້ສຸດລົງພຽງສມັຍຂອງພຣະເຈົ້າວິຊຸລຣາຊ.

໒. <u>ເທື່ອທີ ໒</u> ແຕ່ງໃນສມັຍຂອງສົມເດັດພຣະເຈົ້າໄຊຍະເຊດຖາທິຣາຊ ແລະ ສມັຍຂອງພຣະຍາແສນສຸຣິນ ຜູ້ແຕ່ງຈະແມ່ນຄົນໃດບໍ່ຮູ້ ແຕ່ຂໍ້ຄວາມຂອງໜັງສືສະບັບນີ້ ສຸດລົງພຽງສມັຍຂອງພຣະຍາແສນສຸຣິນ ດັ່ງກ່າວຢູ່ໃນຕອນສຸດວ່າ ດັ່ງນີ້: "ທັງຫລາຍຈຶ່ງໃຫ້ພຣະຍາແສນສຸຣິນຮັກສາເມືອງໄດ້ປີນຶ່ງ ພຣະຍາແສນຈະເປັນເຈົ້າແຜ່ນດິນ ພຣະຍາຈັນ ຄັດຄ້ານ ພຣະຍາແສນເລີຍຂ້າພຣະຍາຈັນເສັຽ ລວດເປັນເຈົ້າແຜ່ນດິນຕົນແລ ໜັງສືຂຸນບູຣົມຣາຊາທິຣາຊເຈົ້າຜູ້ມີບຸນຫາກໄດ້ແຕ່ງໄດ້ຂຽນໄວ້ສືບ ໆ ມາຫລາຍຊາດຫລາຍເຊັ່ນ ຕັ້ງແຕ່ນີ້ເມື່ອໜ້າ ນັກປາດເຈົ້າທັງຫລາຍ ຜູ້ໃດມັກໃຄ່ເຕີມໃສ່ແຖມ ສືບຕໍ່ແຕ່ນີ້ໄປໃຫ້ກວ້າງໃຫ້ຂວາງ ກໍຈຶ່ງໃຫ້ເຕີມໃຫ້ແປງ ຕາມແຕ່ຫູຮູ້ ຕາເຫັນນັ້ນເຖີ້ນ ແຜ່ນດິນນີ້ບໍ່ມີຕຳນານ ໃຫ້ແປງສືບຕໍ່ໄປເຖີ້ນ".

ໃນປໂຍດສຸດທ້າຍທີ່ວ່າ "ແຜ່ນດິນນີ້ບໍ່ມີຕຳນານ" ນີ້ ສະແດງຢ່າງແຈ່ມແຈ້ງແລ້ວວ່າ ແມ່ນສມັຍຂອງພຣະຍາແສນສຸຣິນ ຜູ້ແຕ່ງນິທານຂຸນບູຣົມເທື່ອທີສອງ ຕ້ອງແຕ່ງໃນສມັຍຂອງພຣະຍາແສນສຸຣິນນີ້ເອງ ແຕ່ບໍ່ຫານກ່າວຄວາມເປັນໄປໃນສມັຍນັ້ນໄດ້ ເພາະຍັງເປັນປັດຈຸບັນຢູ່ ທັງຢ້ານກົວພຣະຣາຊອາດຍາດ້ວຍ ຈຶ່ງບໍ່ຫານເວົ້າເຣື່ອງໃດ.

໓. <u>ເທື່ອທີ ໓</u> ນິທານຂຸນບູຣົມ (ພື້ນເມືອງພວນ) ຄົງແຕ່ງປີຈຸລສັກຣາດ ໙໘໙ ໜັງສືຜູກນີ້ແຕ່ງຕໍ່ຈາກສະບັບຄັ້ງທີ ໒ ເພາະເຣື່ອງມາສຸດລົງໃນສມັຍຂອງພຣະໜ່ອມແກວ ເຊິ່ງໄດ້ຂຶ້ນສເວີຍຣາຊປີຈຸລສັກຣາດ ໙໘໙ ນັ້ນເອງ.

໔. <u>ເທື່ອທີ ໔</u> ຄົງແຕ່ງໃນສມັຍຂອງພຣະເຈົ້າໄຊຍະເຊດຖາທິຣາຊທີ ໒ ຄື ພຣະໄຊອົງເວ້ ໃນລະຫວ່າງຈຸລສັກຣາດ ໑໐໗໐ (ຄ.ສ.໑໗໐໘) ເພາະມີຂໍ້ຄວາມບອກໄວ້ໃນທ້າຍໜັງສືນິທານຂຸນບູຣົມສະບັບນຶ່ງ ດັ່ງນີ້:

"ບັດນີ້ ເຮົາຍັງມັກໃຫ້ແປງຕຳນານເມືອງທັງ ໔ ຫົວເສິກ ທັງເມືອງກອງ ເມືອງພິວ ທັງຕຳນານເມືອງແສນ ເມືອງນະຄອນ ທັງຕົນແທ່ນ ຕົນຊຽງ ຊຽງກາງ ແດນດິນ ແລະຂອບດ້ານທັງມວນ ໃຫ້ແຈ້ງ

ດີຫລີແລ ຜູ້ໃດຈັກເປັນຂື່ເມືອງ ຕາເມືອງ ເປັນເອກ ເປັນທ້າຍເມືອງ ໃຫ້ຫລິງຫາແຕ່ເຄົ້າເທົ້າເຖິງປາຍ ແລວແລແປງໄວ້ເຖິງສັກຣາດໄດ້ ໖໗ ຕົວ (ຈຸລສັກຣາດ ໑໐໖໗) ປີ......ເດືອນ ໓ ເພັງ ວັນ ໕ ຍາມແຖໃກທ່ຽງ ສັບພັນຍູພຣະບາງເຈົ້າສະເດັດຈາກວິຊຸນມະຫາສະຖານ ໄປເຂົ້າເຮືອທ່າເມືອງ ຮອດຈັກທະບຸຣີ ເດືອນ ໔ ແຮມ ໔ ຄ່ຳ ວັນອັງຄານ ຍາມທ່ຽງວັນ ຮາໜາເມືອສູ່ ວັນປ່າສັກຫລວງ.

ສັກຣາດ ໗໐ ຕົວ (ຈຸລສັກຣາດ ໑໐໗໐) ເດືອນ ໖ ຂຶ້ນ ໔ ຄ່ຳ ວັນ ໗ ຍາມກອງງາຍ ມີກົດເຮົາ ພຣະເກສາທາດເຈົ້າສະເດັດມາເມດຕາ ເພັຽສີສຸທາຊິນາລັງການຜົວເມັຽຢູ່ໃນຖົງເປົ້າອັນເອົາເມືອໄວ້ເທິງຫົວນອນບ່ອນຮັກສາພຣະບາງຢູ່ວັດປ່າສັກຫລວງ ເພັຽສີສຸທາໄຂຖົງຈະເອົາເງິນຊື້ອັນທອງ ຍົກຈົວເປັນພຣະຈິ່ງເຫັນ ແລວເອົາເມືອຊອງໜ້ານ້ຳສົມເດັດ ອັຄວໍຣະຣາຊຄຣູເຈົ້າໂຮງຄຳ ຍາມກອງຄອບແກ້ວໃສ ແລະຖວຍແລວໃສ່ອີກ ຍາມຄ່ຳຈິ່ງນຳເມືອໄວ້ທີ່.... ພຣະບາງ ໄດ້ສອງຄືນຈິ່ງນຳໄປຫາຣາຊຄຣູເຈົ້າວັດຈັນ ໄດ້ສອງຄື ຣາຊຄຣູເຈົ້າວັດຈັນ ແລະ ເພັຽສີສຸທາ ຈິ່ງນຳເມືອຖວາຍພຣະໄຊຍະເຊດຖາທັມມິກະຣາຊາທິຣາດເຈົ້າ ພຣະອົງສັກກາຣະແລວໃຫ້ນຳຄືນມາໄວ້ນຳພຣະບາງ ແລວແຜ່ຄຳໄດ້ ໘ ບາທ ມາກເບັ້ຽ ໑ ຕີຮູບພຣະເຈດີໃສ່ເກສາທາດໄວ້ກັບພຣະບາງເຈົ້າທັ້ນແລ".

໔. <u>ເທື່ອທີ ໔</u> ແຕ່ງໃນສມັຍປະເທດລາວໄດ້ເສັຽອິສຣະພາບໃຫ້ແກ່ປະເທດໄທ ໂດຍທີ່ຜູ້ແຕ່ງໄດ້ເກັບເອົາຂໍ້ຄວາມຕ່າງ ໆ ໃນນິທານຂຸນບູຣົມ ມາດັດແປງແລວຈົດຈາຣຶກລົງໄວ້ເປັນພົງສາວະດານລາວຕໍ່ມາ.

ໜັງສືນິທານຂຸນບູຣົມເຊິ່ງສັນນິດຖານວ່າ ໄດ້ມີຜູ້ແກ້ໄຂປັ່ຽນແປງມາແລ້ວເຖິງ ໔ ເທື່ອ ດັ່ງກ່າວມານີ້ ສຳລັບເທື່ອທີ ໑ ເທື່ອທີ ໒ ແລະເທື່ອທີ ໓ ຫລືສະບັບທີ ໑ ທີ ໒ ຫລືທີ ໓ ນັ້ນ ນັບເປັນສະບັບດັ້ງເດີມເກົ່າແກ່ ຂ້າພະເຈົ້າຈິ່ງຈັດເປັນນິທານຂຸນບູຣົມປະເພດທີ ໑ ສ່ວນສະບັບທີ ໔ ແລະທີ ໕ ຫລືສະບັບແຕ່ງເທື່ອທີ ໔ ແລະທີ ໕ ນັ້ນ ຈັດເປັນປະເພດທີ ໒.

ນິທານຂຸນບູຣົມທັງ ໒ ປະເພດນີ້ ມີຂໍ້ຄວາມແຕກຕ່າງກັນຫລາຍໃນຣັຊການຂອງພຣະເຈົ້າຟ້າງຸ່ມ ຄືໃນປະເພດທີ່ ໑ ກ່າວວ່າເຈົ້າຟ້າງຸ່ມຖືກຂັບໜີຈາກປະເທດ ເພາະເກີດມາມີແຂ້ວອອກມາພ້ອມ ເສນາທັງຫລາຍປານເຂັດຂວາງ ຈິ່ງໃຫ້ຂັບໜີ ພຣະຣາຊບິດາຂອງພຣະເຈົ້າຟ້າງຸ່ມບໍ່ໄດ້ສະເດັດໄປນຳ ແລະບໍ່ໄດ້ກະທຳມິດສາຈານຊົ່ວຊ້າຢ່າງໃດເລີຍ ສ່ວນໃນປະເພດທີ ໒ ກ່າວວ່າ ພຣະຣາຊບິດາຂອງພຣະເຈົ້າຟ້າງຸ່ມກະທຳມິດສາຈານກັບນັກສນົມຂອງພຣະຣາຊບິດາຈິ່ງຖືກຂັບໜີ ແລະ ເຈົ້າຟ້າງຸ່ມຈິ່ງໄດ້ໜີໄປນຳພຣະຣາຊບິດາ.

ຂ້າພະເຈົ້າມີຄວາມເຫັນວ່າ ພຣະຣາຊບິດາຂອງພຣະເຈົ້າຟ້າງຸ່ມ ບໍ່ໄດ້ທຳມິດສາຈານແລະບໍ່ໄດ້ຖືກຂັບໜີຈາກປະເທດ ເພາະໃນໜັງສືພົ້ນເມືອງລາວຫລາຍສະບັບ ບໍ່ເຫັນກ່າວເຖິງ-ຂຸນພີ່ຟ້າ ພຣະຣາຊບິດາຂອງທ້າວຟ້າງຸ່ມໃນເວລາຢູ່ປະເທດຂເມນແລະ ເວລາກັບຄືນມາ ເຫັນມີກ່າວເຖິງຢູ່ສະບັບດຽວ ຕອນ

ກັບຄືນມາວ່າ "ພຣະເຈົ້າຟ້າງູ່ມ ມາທາງສົບອູ ເຂົ້າເມືອງໄດ້ກ່ອນ ສ່ວນພຣະຣາຊບິດາ ມາທາງເໜືອບໍ່ທັນຮອດ ທ້າວຟ້າງູ່ມຈຶ່ງໃຫ້ຄົນໄປລັດຂ້າພໍ່ເສັຽທີ່ຫ້ວຍສົບສາມນ້ຳເຊືອງຫັ້ນ" ດັ່ງນີ້ ຄວາມຂໍ້ນີ້ກໍເຫລືອວິສັຍທີ່ຈະເຊື່ອໄດ້ເພາະຖາວ່າ ຂຸນພີຟ້າ ແລະ ທ້າວຟ້າງູ່ມ ພໍ່ລູກ ໄດ້ໄປຕົກທຸກໄດ້ຍາກນຳກັນເຖິງປານນັ້ນແລະທ້າວຟ້າງູ່ມຈະເປັນຄົນໃຈດຳອຳມະຫິດ ຄິດອະກະຕັນຍູເຖິງປານນັ້ນບໍ ? ໃນພຣະຣາຊໂອງການຂອງພຣະເຈົ້າຟ້າງູ່ມເອງ ຕອນພຣະອົງໃຫ້ສລອງໄຊຢູ່ວຽງຊຳ ຜາກົດວ່າພຣະອົງມີພຣະເມດຕາກະຣຸນາເປັນອັນມາກໄດ້ອອກພຣະຣາຊໂອງການ ບໍ່ໃຫ້ຂ້າຄົນຢ່າງເດັດຂາດ ດັ່ງນັ້ນ ຂ້າພະເຈົ້າຈຶ່ງເຊື່ອແນ່ວ່າພຣະຣາຊບິດາຂອງພຣະເຈົ້າຟ້າງູ່ມບໍ່ໄດ້ຖືກຂັບໜີ ຄົງຍັງເປັນກະສັດສເວີຍຣາຊສົມບັດຢູ່ໃນນະຄອນຊຽງທອງນັ້ນເອງ ດັ່ງມີຂໍ້ຄວາມຜາກົດແຈມແຈ້ງຢູ່ໃນໜັງສືພິທານຂຸນບູຣົມສະບັບທີ ໑ ແລະທີ ໒ ຕໍ່ໄປນີ້.

ກ. ຕອນພຣະເຈົ້າຟ້າງູ່ມຖືກຂັບໜີກ່າວວ່າ: ເຂົາຈຶ່ງເອົາຍາຫລວງໂງ່ມ ມາເປັນເຈົ້າແຜ່ນດິນມີລູກ ໕ ຄົນ ຜູ້ຍິງ ໔ ຄົນ ລູກ ໕ ຄົນນີ້ເຮົາບໍ່ຈາກ່ອນແລ ເຮົາທີ່ຈັກຈາຜູ້ກິນເມືອງແທນຫລວງໂງ່ມແລ.

ເຂົາຈຶ່ງເອົາຍາຄຳຮຽວ(໑)ຜູ້ເປັນລູກອາຍມາເປັນເຈົ້າແຜ່ນດິນແທນ ຍາຄຳຮຽວມີລູກ ໔ ຄົນຜູ້ຍິງ ໒ ຜູ້ຊາຍ ໒ ຜູ້ນອງຫລານັ້ນມີແຂວດອກ ຟັນ ເຫລັ້ມແຕ່ໃນທ້ອງອອກມາ ເສນາທັງຫລາຍວ່າເຂັດຂວາງຈັກແພບ້ານແພເມືອງ ວ່າດັ່ງນັ້ນເຂົາຈຶ່ງເອົາໃສ່ແພໄຫລເສັຽ ເອົາຂ້ອຍລ້ຽງທັງນວນໃສ່ແພໄປດອນ ຜູ້ນຶ່ງຊື່ບາຈີແກ ຜູ້ນຶ່ງຊື່ ບາລູ ຂ້ອຍລ້ຽງທັງຫລາຍຜູ້ງນີ້ ທັງຂ້ອຍຍິງຂ້ອຍຊາຍ ທັງນວນ ໝື່ນ ຄົນ ໄຫລແຕ່ຊຽງດົງຊຽງທອງໄປດອນເຈົ້າຫັ້ນແລ ຯລຯ

ຂ. ຕອນເຈົ້າຟ້າງູ່ມຈະກັບຄືນມາກ່າວວ່າ: ພຣະຍານະຄອນຫລວງ ຈຶ່ງນຳເອົາໝື່ນຕູຣາທັງຫລາຍມາດູຊາຕາແລະນັກຂັດຕຣືກເມືອງລານຊາງ ໝໍຈຶ່ງທວາຍວ່າພໍ່ເຈົ້ານແມ່ເຈົ້ານຕາຍແລ້ວ ເຂົາຈຶ່ງເອົາອາວເຈົ້າເປັນເຈົ້າແຜ່ນດິນ ທີ່ຊຽງດົງຊຽງທອງແທນແລ ຯລຯ

ຄ. ຕອນເຈົ້າຟ້າງູ່ມເຂົ້າເຖິງຊຽງດົງຊຽງທອງກ່າວວ່າ: ແຕ່ນັ້ນ ພຣະຍາຟ້າ ລ່ອງມາຮອດສົບອູຫັ້ນ ເຈົ້າຟ້າຄຳຮຽວ ຜູ້ເປັນອາວ ນ້ອງພໍ່ພຣະຍາຟ້າ ພໍ່ພຣະຍາຟ້າຕາຍເສັຽ ເຂົາຈຶ່ງເອົາມັນເປັນເຈົ້າແຜ່ນດິນແທນ ມັນມີລູກຍິງ ໒ ຄົນ ລູກຊາຍບໍ່ມີ ມັນກໍຮູ້ວ່າພຣະຍາຟ້າ ລ່ອງມາຮອດສົບອູ ມັນກໍຢ້ານພຣະຍາຟ້າຂາ ເຂົາທັງສອງຜົວເມັຽໂລດກິນສານຕາຍທັງສອງຫັ້ນແລ ຯລຯ

ງ. ຕອນເຈົ້າຟ້າງູ່ມຂຶ້ນໄປຕີທາງເໜືອກ່າວໄວ້ວ່າ: ພຣະຍາຟ້າ ກໍຂຶ້ນເມືອຮອດທ່າຫົວເຮືອ ເມືອເຫລືອກຫັ້ນຍັງມີລູກອາຍຂຸດຜູ້ນຶ່ງ ມັນເປັນລູກນາງແກວມະຫາຣີ ຮຽກຊື່ ທ້າວອູລອງ ມັນເປັນຫລານເຈົ້າຟ້າຄຳຮຽວ ມັນຈຶ່ງອອກມາໄຫວ້ພຣະຍາຟ້າ ທີ່ທ່າສວງຄຳຄຳ ຫັ້ນ ທ້າວອູລອງຈຶ່ງວ່າ ຂ້ອຍນີ້ເປັນລູກນາແກວມະຫາຣີ ແມ່ຂ້ອຍນີ້ເປັນລູກຟ້າຄຳຮຽວ ກໍຫາກເປັນວົງສາແຫ່ງເຈົ້າກູດາຍ ຯລຯ

---

(໑) ທີ່ຈິງບໍ່ແມ່ນຍາຄຳຮຽວ ແມ່ນຟ້າງຽວ ຍາຄຳຮຽວແມ່ນນ້ອງຟ້າງຽວ ຟ້າງຽວເປັນພຣະບິດາຂອງເຈົ້າຟ້າງູ່ມ,ຍາຄຳຮຽວເປັນອາວຂອງພຣະເຈົ້າຟ້າງູ່ມ (ເບິ່ງຄວາມໃນຂໍ້ ຂ.ຄ. ແລະ ງ.).

໗. ຕອນເຈົ້າຟ້າງຸ່ມອົບມາເຖິງເມືອງພວນກ່າວວ່າ: ພຣະຍາຟ້າ ຈຶ່ງຍໍພົນມາຢູ່ໜືອເມືອງພະນ້ຳຮຸ່ງ(໑) ແຕ່ນັ້ນຊາວເມືອຣອດພຣະຍາເຈັດເຈືອງ ອັນເປັນເຈົ້າເມືອງພວນຊຽງຂວາງ ພຣະຍາເຈັດເຈືອງ ຈິ່ງແຕ່ງ ໝື່ນຫລວງພານ ທັງໝື່ນຄຳ(໒) ມາໄຫວ້ພຣະຍາຟ້າ ໆລໆ.

ຕາມທີ່ກ່າວອ້າງມານີ້ ສະແດງໃຫ້ເຫັນວ່າໜັງສືນິທານຂຸນບູຣົມສະບັບທີ ໑ ແລະທີ ໒ ກ່າວຂໍ້ຄວາມເຣື່ອງພຣະເຈົ້າຟ້າງຸ່ມມີເຫດຜົນເປັນໜ້າເຊື່ອກວ່າສະບັບອື່ນ ໆ ສະນັ້ນ ການຣິຈນາໜັງສືພົງສາວະດານຊາດລາວສະບັບນີ້ ໃນຕອນກ່າວເຖິງພຣະຍາຟ້າງຸ່ມຕລອດເຖິງສມັຍພຣະໄຊຍະເຊດຖາທິຣາດເຈົ້າ ຂ້າພະເຈົ້າໄດ້ຖືເອົາຕອນນິທານຂຸນບູຣົມສະບັບທີ ໑ ທີ ໒ ແລະທີ ໓ ເປັນຫລັກສຳຄັນ ໜັງສືພົງສາວະດານສະບັບນີ້ ຈຶ່ງມີຂໍ້ຄວາມແຕກຕ່າງຈາກສະບັບອື່ນ ໆ ທີ່ເຄີຍພິມເປັນພາສາຝຣັ່ງ ພາສາລາວ ແລະພາສາໄທມາແລ້ວ.

ທ້າຍສຸດນີ້ ຂ້າພະເຈົ້າຂໍອຸທິດບຸນກຸສົນທີ່ຂ້າພະເຈົ້າຄວນໄດ້ຮັບເນື່ອງຈາກການຣິຈນາພົງສາວະດານຊາດລາວອັນໄວ້ນີ້ ຖວາຍແກ່ພຣະມະຫາກະສັດຕາທິຣາດລາວທັງຫລາຍທຸກພຣະອົງ ທີ່ໄດ້ທົງປົກຄອງປະເທດລາວມາ ແລະແກ່ປະຊາຊົນຄົນລາວຜູ້ຮັກຊາດທັງຫລາຍທັງໃນອະດີດແລະປັດຈຸບັນ, ຂໍໃຫ້ປະເທດລາວ ຈົ່ງເປັນດິນແດນແຄ້ວນເຂດຂອງຊົນຊາດລາວຕລອດໄປ ດ້ວຍຄວາມສຸກຊຸ່ມກຸ່ມເປັນຕາບຕໍ່ເທົ້າດິນຟ້າຜ່າພະລາຍເຖີນ.

ປື້ມປວັດສາດຫົວນີ້ ໄດ້ໃຫ້ກະຊວງສຶກສາພິມມາແລ້ວໃນປີ ໑໙໔໒ ແລະໃນປີນີ້ທາງມັທຍົມຟ້າງຸ່ມມີຄວາມຕ້ອງການພິມຕື່ມອີກ ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້ຣິຈນາ ແກ້ໄຂຕື່ມເລັກນ້ອຍ (ເຊັ່ນຕອນຝຣັ່ງເສດເຂົ້າມາປົກຄອງລາວຈາກບົດຂຽນຂອງ ທ່ານ ຄຳເພົາ ພອນແກ້ວ ທີ່ໄດ້ສຳມະນາປວັດສາດລາວ ເມື່ອເດືອນ ຕຸລາ ໑໙໗໒)

---

(໑)ເມືອງພະນ້ຳຮຸ່ງ ແມ່ນເມືອງເກົ່າບໍຣິຄັນທຸກວັນນີ້. (໒) ໃນຜູກອື່ນໆ ກ່າວວ່າ ທ້າວທຽນຄຳຍໍ ບຸດເຈົ້າເມືອງພວນ ທຳມິດສາຈານກັບເມັຍນ້ອຍຂອງພໍ່ ຈຶ່ງໜີມາເພິ່ງພຣະຍາເພົາເຈົ້າເມືອງໄຜ່ໜາມ ຕໍ່ມາໄດ້ເຂົ້າຫາເຈົ້າຟ້າງຸ່ມ ແລະພາເຈົ້າຟ້າງຸ່ມໄປຕີເອົາເມືອງພວນ.

---

ວຽງຈັນ, ວັນທີ ໑ ມະກະຣາ ໒໕໑໕

# ພົງສາວະດານຊາດລາວ

## ບົດທີ ໑

## ເມືອງຊຽງທອງ ຫລື ສຸວັນນະພູມປະເທດ

------=== ໐ ===------

ແຜ່ນດິນອັນເປັນພື້ນພູມປະເທດຂອງລາວໃນປັດຈຸບັນນີ້ໂຮມທັງພື້ນທີ່ອັນເປັນປະເທດ ພະມ້າ, ມະລາຢູ, ໄທ, ຂເມນ ແລະ ວຽດນາມ ແຕ່ກ່ອນນານກວ່າ ໒໕໐໐ ປີມາແລ້ວ ໂຮມເອີ້ນວ່າ ສຸວັນນະພູມປະເທດ ຫລື ແຫລມທອງ ຫລື ເມືອງຊຽງທອງ ດ້ວຍເຫດວ່າພື້ນພູມປະເທດເຫລົ່ານີ້ອຸດົມສົມບູນດ້ວຍທອງຄຳ ເຫດນັ້ນ ເມື່ອຊົນຊາດລາວໄດ້ເຂົ້າມາຕັ້ງຫລັກຖານບ້ານເມືອງຢູ່ໃນດິນແດນນີ້ເຮົາຈຶ່ງເອີ້ນນາມເມືອງຫລວງຂອງປະເທດເຮົາວ່າ ເມືອງຊຽງທອງ.(໑)

ພື້ນທີ່ອັນເປັນສຸວັນນະພູມປະເທດນີ້ ເປັນແຫລມໃຫຍ່ ຕັ້ງຢູ່ລະຫວ່າງມະຫາສມຸດອິນເດຍກັບທະເລຈີນອັ້ນກັນ ດ້ວຍເຫດນີ້ ໃນສມັຍປັດຈຸບັນນີ້ ຈຶ່ງຮຽກວ່າ ປະເທດອິນດູຈີນ.

ສຸວັນນະພູມປະເທດຫລືປະເທດອິນດູຈີນນີ້ ມີຄົນຊາດຂອມແລະຊາດລະວ້າ ຫລືຊາດລົວະເຂົ້າມາຕັ້ງເປັນຫລັກຖານຢູ່ກ່ອນ.

---

(໑)ສຸວັນນະພູມປະເທດນີ້ ເປັນບ່ອນພຣະໂສນະກັບ ພຣະອຸຕຣະໄດ້ອອກມາເຜີຍແຜ່ພຣະພຸທສາສນາຄັ້ງແຣກ ເມື່ອ ພ.ສ. ໒໓໖ (ກ່ອນ ຄ.ສ ໓໐໗) ໃນສມັຍຂອງພຣະຍາອະໂສກຣາດ ຕາມຄວາມສືບສວນຂອງອາຈານ ຣິສເດວິດ (ຄົນອັງກິດ) ວ່າ ສຸວັນນະພູມປະເທດນັ້ນ ໝາຍເອົາປະເທດຣາມັນ (ມອນ) ຄືເຂດແຂວງເມືອງທົ່ງສາວະດີລົງໄປຈົນຕລອດແຫລມມະລາຢູ. ສ່ວນກຣົມພຣະຍາດຳຣົງຣາຊານຸພາບ ນັກປາດແຫ່ງປະເທດໄທລົງຄວາມເຫັນວ່າ: ແມ່ນດິນແດນປະເທດໄທໃນເຂດແຂວງຈັງຫວັດນະຄອນປະຖົມ ເພາະມີພຣະທາດປະຖົມເຈດີເປັນຫລັກແລະກົງທັມມະຈັກອັນສ້າງຂຶ້ນ ໃນສມັຍຂອງພຣະຍາອະໂສກຣາດຢູ່ທີ່ນັ້ນດ້ວຍ ແຕ່ໃນຕຳນານອຸຣັງຄະທາດກ່າວວ່າ ເມືອງສຸວັນນະພູມນີ້ ເປັນເມືອງຂອງທ້າວຄຳບາງຕັ້ງຢູ່ໃນເຂດແຂວງວຽງຈັນ ຕອນບ້ານເກົ້າລ້ຽວ (ທ້າວຄຳບາງເປັນຄົນຊາດຂອມແຕກມາແຕ່ເມືອງໜອງຫານ) ສ່ວນໃນໜັງສືນິທານຂຸນບໍຣົມໝາຍເອົາດິນແດນອັນເປັນປະເທດລາວ ຕັ້ງແຕ່ແຂວງວຽງຈັນລົງໄປຈົນເຖິງແດນປະເທດຂເມນດັ່ງກ່າວໄວ້ວ່າ:

"ທາດອັນມາຕົກເມືອງສຸວັນນະພູມປະເທດທີ່ຫລັກຫີນເປັນເຄົ້າເມື່ອພຣະຍາສີທັມມາອະໂສກຣາດໃຫ້ພຣະອໍຣະຫັນຕາເຈົ້າທັງຫລາຍເອົາທາດມາຕົກໃນເມືອງອັນນີ້ທີ ໑ ວ່າ ກູ່ພຣະຫາງທີ່ນີ້ເປັນເຄົ້າທີ່ ໑ ພຣະນາຣາຍ ທີ ໒ ພຣະສາດ ທີ ໑ ພຣະສະຂຽນທີ່ ໑ ພຣະນາຫຽນ ສອງທີ່ນີ້ຢູ່ເມືອງຂວາງ ໂລກບານທີ ໑

ວ່າ ພະນົມ (ທາດພະນົມ) ທີ ໑ ວ່າ ໂພນຝັງແດດ ອັນທີ່ປາກປາສັກກ້າໃຕ້ເຈົ້າຮັດສີໃສ່ອູບທາດໄມ້ຈັນໄວ້ນັ້ນ ທາດພຣະເຈົ້າທັງ ໔ ຢູ່ໃນອູບແກ້ວທັງ ໔ ລູກ ຈຶ່ງອະທິຖານໄວ້ຫັ້ນແລ ໆລໆ.

## ຊາດຂອມ ຫລື ຂເມນ

----== O ==---

ຄົນຊາດຂອມນີ້ແມ່ນຄົນຊາດແຂກອິນເດັຽບູຮານ ເຊິ່ງທຸກວັນນີ້ ໄດ້ກັບກາຍມາເປັນຂເມນ, ມອນ, ເມັ້ງ, ຂ່າ, ຂະມູ, ມະລາຍູ ພວກຂອມໄດ້ເຂົ້າມາຕັ້ງຖິ່ນຖານຢູ່ໃນປະເທດອິນດູຈີນພາກໃຕ້ກ່ອນຄົນຊາດອື່ນໄດ້ຫລາຍພັນປີມາແລ້ວ ແລະໄດ້ຕັ້ງເປັນອານາຈັກໃຫຍ່ ໆ ຂຶ້ນສອງອານາຈັກຄື:

໑.- <u>ອານາຈັກທະວາຣາວະດີ ຫລື ອານາຈັກສີວິໄຊ</u> ອານາຈັກນີ້ຕັ້ງຢູ່ທາງຕາເວັນຕົກ ຕັ້ງແຕ່ແດນເມືອງນະຄອນປະຖົມໃນປະເທດໄທຄືນໄປເຖິງປະເທດມອນ ແລະ ພະມ້າທາງຕາເວັນອອກຕລອດເຖິງປະເທດມະລາຍູ.

໒.- <u>ອານາຈັກໂຄຕະປູຣະ ຫລື ໂຄຕະບູນ</u> ຕັ້ງຢູ່ພາກຕາເວັນອອກໃນພື້ນທີ່ອັນເປັນເຂດແຂວງວຽງຈັນທຸກວັນນີ້ລົງໄປຈົນເຖິງປະເທດຂເມນ.

ຄຳວ່າ ໂຄຕະປູຣະ ເປັນພາສາສັນສະກຣິດ ແປວ່າ ເມືອງຕາເວັນອອກ ຄຳວ່າ ໂຄຕະປູຣະນີ້ ຕໍ່ມາຮຽກວ່າ ໂຄຕະບູນແລະລາວເຮົາຮຽກວ່າ ໂຄຕະບອງ ຫລື ສີໂຄຕະບອງ (ເມືອງຫລວງຂອງອານາຈັກໂຄຕະປູຣະນີ້ ຕາມຕຳນານທາດພະນົມວ່າ ຕັ້ງຢູ່ໃຕ້ປາກນ້ຳເຊບັ້ງໄຟລົງໄປຮຽກວ່າ ເມືອງໂຄຕະບູນ ພາຍລູນໄດ້ຍ້າຍມາຕັ້ງຢູ່ດົງໄມ້ຮວກທາງຕາເວັນຕົກທາດພະນົມ ເອີ້ນຊື່ວ່າ ເມືອງມະຣຸກຂະນະຄອນ ຕໍ່ມາເມື່ອປະມານ ພ.ສ ໓໑໘ (ກ່ອນ ຄ.ສ. ໒໒໕) ພຣະຍາສຸມິຕທັມກະສັດຂອມ ໄດ້ຍ້າຍລົງໄປຕັ້ງຢູ່ເມືອງສາເກດນະຄອນ ຄືເມືອງຮ້ອຍເອັດ ພາຍຫລັງຍ້າຍຈາກເມືອງສາເກດ ຈຶ່ງລົງໄປຕັ້ງນະຄອນທົມ ແລະອີກພວກນຶ່ງໄດ້ຂຶ້ນມາຕັ້ງວຽງຈັນ).

ສ່ວນເມືອງມະຣຸກຂະນະຄອນ ເດີມກໍມີກະສັດຂອມ ໄດ້ປົກຄອງຕໍ່ມາຈົນເຖິງ ພ.ສ.໔໐໐ (ກ່ອນ ຄ.ສ.໔໒) ເມືອງມະຣຸກຂະນະຄອນຈຶ່ງຮ້າງ ຕໍ່ຈາກນັ້ນມາຫລາຍຮ້ອຍປີ ເມື່ອຄົນຊາດລາວເຮົາມາໄດ້ດິນແດນສ່ວນນີ້ຫມົດແລ້ວ ຄົນຊາດລາວຈຶ່ງມາຕັ້ງເມືອງມະຣຸກຂະນະຄອນຂຶ້ນໃຫມ່ທາງຝັ່ງຊ້າຍແມ່ນ້ຳຂອງ ຄືບໍຣິເວນເມືອງເກົ່າທ່າແຂກທຸກວັນນີ້ ຕໍ່ມາເຖິງປີຂານ ຈຸລສັກຣາດ ໙໗໖ (ຄ.ສ.໑໖໑໔) ພຣະເຈົ້ານະຄອນຫລວງພິຊິດທິສທິສຣາຊທານີ (ນາມເດີມຊື່ ເຈົ້າຫນໍ່ເມືອງ) ຈຶ່ງເພ່ຽນຊື່ເມືອງມະຣຸກຂະນະຄອນໃຫ້ເປັນເມືອງສີໂຄຕະບູນຕາມນາມເດີມ. ອານາຈັກສີໂຄຕະບູນນີ້ ຈີນເອີ້ນວ່າ ເປາະຫນານ ຫລື ຝູນັນ ຫລື ໂພໝຳ ຄືພະນົມນັ້ນເອງ.

ການທີ່ສັນນິດຖານເຫັນວ່າ ພວກຂອມໄດ້ເຂົ້າມາຕັ້ງຫລັກຖານຢູ່ໃນອິນດູຈີນພາກໃຕ້ກ່ອນຄົນຊາດອື່ນ

ນັ້ນເພາະມີເຫດຜົນຫລາຍຢ່າງພໍເຊື່ອໄດ້ ຄື:

໑. ບູຮານວັດຖຸເກົ່າແກ່ ອັນມີຢູ່ແດນດິນດັ່ງກ່າວມານັ້ນເປັນຕົ້ນວ່າ ພາສາດຫີນ, ກູ່ຫີນ, ກຳແພງຫີນ, ສະຫີນ ລ້ວນແຕ່ເປັນສີມືຂອງພວກຂອມບູຮານທັງມວນ.

໒. ຕົວອັກສອນແລະພາສາທີ່ມີຢູ່ໃນສີລາເລກເກົ່າ ໆ ກໍ່ແມ່ນອັກສອນຂອມອັນກ່ຽວກັນກັບຂອງພວກອິນເດັຽບູຮານ.

໓. ພາສາເວົ້າຂອງຄົນຊາດເດີມ ຄືພວກ ສ່ວຍ, ຂ້າ, ຂເມນ, ມະລາຢູ ແລະ ມອນ ມີສຳນຽງເປັນອັນດຽວກັນ ຕົວຢ່າງພາສາທີ່ໃຊ້ເຝິກຊ້າງເປັນຕົ້ນ ພວກຂ້າ, ສ່ວຍ, ມອນ, ຂເມນ ແລະ ມະລາຢູ ຍັງໃຊ້ພາສາດຽວກັນຢູ່.

<u>ມູນເຫດພວກຂອມ ອົພຍົບ ມາຢູ່ສຸວັນນະພູມ</u>

ພວກຂອມໄດ້ພາກັນເຂົ້າມາຕັ້ງຫລັກຖານຢູ່ໃນສຸວັນນະພູມປະເທດນີ້ກ່ອນຄັ້ງພຸທກາລ ຄືກ່ອນ ໒໕໐໐ ປີມາແລ້ວ ແຕ່ທີ່ ອົພຍົບ ມາຫລາຍທີ່ສຸດນັ້ນ ແມ່ນສມັຍຂອງພຣະຍາອະໂສກຣາດ ເຊິ່ງໄດ້ຂຶ້ນສເວີຍຣາດຢູ່ເມືອງປາຕະລີບຸດ ໃນລະຫວ່າງ ພ.ສ ໒໑໘ ເຖິງ ພ.ສ ໒໒໗ (ກ່ອນຕັ້ງ ຄ.ສ ໓໒໕ - ໓໑໖).

ມູນເຫດທີ່ພວກຂອມ ຄືພວກແຂກອິນເດັຽບູຮານຈະໄດ້ ອົພຍົບເຂົ້າມາຢູ່ໃນປະເທດສຸວັນນະພູມຄັ້ງພຣະຍາອະໂສກຣາດນັ້ນ ມີກ່າວໄວ້ໃນຫນັງສືຄັມພີມະຫາວົງແລະໃນສີລາເລກຂອງພຣະຍາອະໂສກຣາດເອງວ່າ:

"ເມື່ອອະໂສກຣາຊາ ມານຂຶ້ນສເວີຍຣາຊສົມບັດເປັນເຈົ້າແຜ່ນດິນໃນນະຄອນປາຕະລີບຸດ ໄດ້ ໑ ປີ ພຣະອົງໄດ້ຍົກທັບຫລວງລົງມາຕີເອົາປະເທດກະລິງຄະຣັດອັນຢູ່ທາງໃຕ້ ໃນການສົງຄາມຄາວນີ້ ຊາວປະເທດກະລິງຄະຣັດຖືກຂ້າຕາຍຫລາຍແສນຄົນ ສ່ວນທີ່ຖືກຈັບເປັນຊະເລີຍກໍ່ຫລາຍແສນ".

ຍ້ອນພັຍສົງຄາມຄາວນີ້ ພວກອິນເດັຽພາກໃຕ້ຈຶ່ງໄດ້ ອົພຍົບເຂົ້າມາຢູ່ໃນປະເທດອິນດູຈີນເປັນການໃຫຍ່ ໃນຄາວນັ້ນພຣະຍາອະໂສກຣາດເກີດພຣະໄທສັງເວດ ຈຶ່ງຫັນເຂົ້າມານັບຖືພຣະພຸທສາສນາ ແລ້ວຮ່ວມມືກັບພຣະໂມກຄັນລີບຸດ ຈັດການສົ່ງພິກຂຸຜູ້ສາມາດອອກໄປເຜີຍແຜ່ພຣະພຸທສາສນາໃນປະເທດຕ່າງ ໆ ຫລາຍປະເທດ, ໃນປີ ພ.ສ ໒໓໖ (ກ່ອນຕັ້ງ ຄ.ສ ໓໐໗) ພຣະໂສນະກັບພຣະອຸຕຣະຖືກສົ່ງມາສຸວັນນະພູມປະເທດ.

ຕໍ່ມາເມື່ອປະມານ ພ.ສ. ໖໐໐ (ຄ.ສ.໕໗) ສາສນາພຣາມອັນເປັນລັດທິສາສນາເກົ່າຂອງພວກອິນເດັຽ ຈຶ່ງໄດ້ແຜ່ຜາຍເຂົ້າມາໃນປະເທດອິນດູຈີນ ໂດຍມີພຣາມຜູ້ນຶ່ງຊື່ ໂກນທັນຍະເປັນຜູ້ນຳມາ ໂກນທັນຍະພຣາມມາໄດ້ກັບພຣະຣາຊບຸດຕີພຣະຍາຂອມ ພາຍລຸນເລີຍໄດ້ເປັນກະສັດຂອງພວກຂອມສືບເຊື້ອສາຍລົງມາດັ່ງນັ້ນ ສາສນາພຣາມຈຶ່ງຈະເຣີນຮຸ່ງເຮືອງຕັ້ງແຕ່ບັດນັ້ນມາ ຈົນເຖິງສມັຍຂອງພຣະເຈົ້າໄຊຍະວະຣະມັນທີ ໓ ຈຶ່ງໄດ້ສ້າງພາສາດຫີນເມືອງນະຄອນທົມຂຶ້ນ ຕາມແບບຢ່າງສາສນາພຣາມ ໃນປີ ຄ.ສ. ໘໕໗ ຕໍ່ມາເຖິງປີ ຄ.ສ. ໑໐໕໗ ກະສັດຂອມອົງນຶ່ງກໍໄດ້ມາສ້າງພາສາດຫີນນະຄອນວັດຂຶ້ນຕາມແບບຢ່າງສາສນາພຣາມດັ່ງ

ດຽວກັນ ໃນລະຍະຕັ້ງແຕ່ລະຫວ່າງ ຄ.ສ. ໖໕໗ ເຖິງ ຄ.ສ. ໑໐໕໗ ເຊິ່ງເປັນເວລານານເຖິງ ໔໐໐ ປີນີ້ ເປັນເວລາທີ່ພວກຂອມກຳລັງມີອຳນາດຮຸ່ງເຮືອງຢູ່ໃນອິນດູຈີນ ໃນລະຍະນີ້ ພວກຂອມໄດ້ແຜ່ຜາຍອານາເຂດຂຶ້ນໄປເຖິງອານາຈັກຊຽງແສນ ຊຽງຣາຍ ແລະ ໃນລະຫວ່າງນີ້ ພວກຊາດລາວເຮົາກຳລັງ ອົພຍົບລົງມາຈາກປະເທດຈີນແລະໄດ້ມາປະທະກັບພວກຂອມ ດັ່ງຈະກ່າວຕໍ່ໄປໃນບັ້ນລາວ ອົພຍົບລົງມາໃນບົດໜ້າ.

<u>ຊາດລົວະ ຫລື ລະວ້າ</u> ຄົນຊາດນີ້ສັນນິດຖານວ່າ ແມ່ນຊາດລາວເດີມພວກນຶ່ງເຊິ່ງໄດ້ເຂົ້າມາຕັ້ງຖິ່ນຖານຢູ່ໃນປະເທດອິນດູຈີນພາກເໜືອກ່ອນພວກຂອມ ຄືຕັ້ງແຕ່ເມືອງລົບບູຣີຂຶ້ນໄປເຖິງອານາຈັກຊຽງແສນຕໍ່ແດນເມືອງຢູນານຂອງຈີນທຸກວັນນີ້ ພວກລົວະເປັນຊາດທີ່ບໍ່ມີຄວາມຈະເຣີນເທົ່າທຽມພວກຂອມ ດັ່ງນັ້ນເມື່ອພວກຂອມແຜ່ອຳນາດຂຶ້ນມາທາງເໜືອ ພວກຂອມຈິ່ງຍາດເອົາດິນແດນຂອງພວກລົວະໄປໝົດ ພວກລົວະຈຶ່ງເສື່ອມສູນລົງ ກາຍມາເປັນພົລເມືອງຂອງພວກຂອມດັ່ງດຽວກັບພວກຂອມເດີມ (ຂາ) ກາຍມາເປັນພົລເມືອງຂອງລາວທຸກວັນນີ້.

--------=== O ===------

# ບົດທີ ໒

## ກຳເນີດຊາດລາວ

----== ໐ ==----

ນັກປາດທາງວິຊາ ປວັດສາດທັງຫລາຍ ໄດ້ລົງຄວາມເຫັນວ່າ ໃນພິພົບນີ້ ມີມະນຸດເກີດຂຶ້ນເປັນເວລາ ປະມານແສນປີມາແລວແລະຄາດຄະເນວ່າ ດິນແດນອັນເປັນບ່ອນເກີດຂອງມະນຸດດັ້ງເດີມນັ້ນຢູ່ໃຈກາງຊຸມພູທີບແຖວພູເຂົາອັນໄຕ ອັນເປັນດິນແດນພາກໃຕ້ຂອງມົງໂກລດຽວນີ້.

ມະນຸດທີ່ເກີດຈາກໃຈກາງຊຸມພູທີບນັ້ນມີຫລາຍພວກ ແຕ່ພວກໃຫຍ່ ໆ ທີ່ຕັ້ງຫລັກຖານຫາກິນຢູ່ໃນດ້ານອາຊີນມີ ໔ ພວກຄື:

໑. <u>ພວກຈີນ:</u>- ຫາກິນດ້ວຍການລ້ຽງສັດຢູ່ເລາະລຽບທະເລສາບແຄັສປຽນ ທາງທິດອາຄະເນ (ພາກຕາເວັນອອກກ້ຳໃຕ້).

໒. <u>ພວກຕາດ:</u>- ອາສັຍຢູ່ຕາມລຽບທະເລຊາຍຫາກິນດ້ວຍການປຸ້ນ ໃຊ້ມ້າເປັນພາຫະນະ.

໓. <u>ພວກຊະນົງຢູ:</u>- ອາສັຍຢູ່ດິນແດນອັນເປັນປະເທດເກົາຫລີ (ກໍເຣ) ຕລອດເຖີງມົງໂກນ ຫາກິນດ້ວຍການປຸ້ນເຫມືອນກັນ.

໔. <u>ພວກອາຍລາວ:</u>- ຕັ້ງຫລັກຖານຢູ່ດິນແດນລະຫວ່າງແມ່ນ້ຳຮວງໂຫ ກັບ ແມ່ນ້ຳຢັ້ງຈື້ (ແຍງຊີກຽງ) ອັນເປັນອານາຈັກຂອງຈີນດຽວນີ້ ພວກອາຍລາວທຳມາຫາກິນດ້ວຍການກະສິກັມ.

ຄົນຊາດລາວໄດ້ມາຕັ້ງຫລັກຖານຢູ່ເລາະລຽບແມ່ນ້ຳຮວງໂຫນີ້ແຕ່ລະຫວ່າງກ່ອນພຸທສັກຣາດ ໒໔໐໐ ປີມາແລ້ວ.

## ກຳເນີດຄຳວ່າ ລາວ

-----== ໐ ==----

ກຳເນີດຄຳວ່າ ລາວ ຫລືຄົນຊາດລາວເຮົາທີ່ເອີ້ນຊື່ວ່າລາວນັ້ນມີກ່າວໄວ້ຕ່າງ ໆ ກັນດັ່ງນີ້:

ກ. ໃນພົງສາວະດານຊາດໄທ ຂອງຫລວງວິຈິດວາທະການກ່າວໄວ້ວ່າ ລາວ ມາຈາກຄຳວ່າ ລົວະ ເລີ ລະວ້າ ເຊິ່ງເປັນຊື່ຂອງຄົນຊາດນຶ່ງ ອັນຕັ້ງຫລັກຖານຢູ່ໃນດິນແດນສ່ວນນີ້ມາກ່ອນ: ເມື່ອພວກໄທອົພຍົບລົງມາຢູ່ປົນກັບຄົນພວກນີ້ ພວກໄທນັ້ນຈຶ່ງເອີ້ນວ່າ ລາວ.

ຂ. ໃນຫນັງສືນິທານຂຸນບໍຣົມຣາຊາທິຣາດກ່າວໄວ້ວ່າ ຄົນຊາດລາວເຮົານີ້ເກີດມາຈາກນ້ຳເຕົ້າໃຫຍ່ ລູກຫນ່ອຍ ຫມາກນ້ຳເຕົ້ານັ້ນ (ຄຳປາລີວ່າ ລາວຸ) ດັ່ງນັ້ນ ຄົນລາວເຮົາຈຶ່ງມີນາມວ່າລາວຕາມຊື່ຂອງຫມາກນ້ຳເຕົ້າ.

ຄ. ໃນຕຳນານເຣື່ອງຊາດໄທ ຂອງພຣະຍາອະນຸມານຣາຊທົນກ່າວໄວ້ວ່າ ກ່ອນຈະໄດ້ຊື່ວ່າ "ລ' ມີເຣື່ອງກ່າວໄວ້ດັ່ງນີ້:

ແຕ່ກ່ອນຄົນພວກນຶ່ງ ຕັ້ງຖິ່ນຖານຢູ່ເລາະນ້ຳຂອງ ຂ້າງພູເຂົາອັນເປັນເຂດແຂວງເມືອງເສສວນຂ' ຈີນທຸກວັນນີ້ ໃນຄົນພວກນັ້ນມີຍິງຄົນນຶ່ງ ມີລູກຊາຍ ໙ ຄົນ ເວລານາງຈະມີລູກຄົນທີ່ ໙ ນັ້ນ ນາງໄດ້ໄປ ສ່ອນປາຕາມລຽບແມ່ນ້ຳຂອງ ແລະໃນຂະນະນັ້ນພາກົດວ່າ ມີຂ່ອນໄມ້ເປັນເກັດຊາ ໆ ມາພາດຂາ ແຕ່ນັ້ນ ມານາງກໍໄດ້ລູກຄົນທີ ໙ ເມື່ອກຸມານ ຜູ້ເກີດລຸນໃຫຍ່ພໍແລ່ນໄດ້ ແມ່ກໍພາໄປຫາປາໃນແມ່ນ້ຳຂອງອີກ ເວລ' ນັ້ນມີນາກຕົວນຶ່ງມາຮ້ອງຖາມນາງວ່າ "ລູກເຮົາຢູ່ໃສ ?" ນາງມີຄວາມຕົກໃຈຈຶ່ງຮ້ອງຂຶ້ນໄດ້ຄຳດຽວວ່າ "ເກົ້າຫລັ້ງ" ແລ້ວກໍແລ່ນໜີໄປພ້ອມກັບພວກລູກຜູ້ໃຫຍ່ ສ່ວນລູກຜູ້ນ້ອຍໜີບໍ່ທັນ ນາກຈຶ່ງລົງມາແລບລົ້ນເລັ' ຫລັງ ຕໍ່ມາເມື່ອຊາຍທັງ ໙ ນັ້ນໃຫຍ່ມາມີຄອບຄົວ ກຸມານ ຄົນທີ ໙ ເປັນຄົນມີປັນຍາສລາດກວ່າໝູ່ຄົນທັງ ຫລາຍຈຶ່ງພ້ອມກັນຍົກໃຫ້ເປັນຫົວໜ້າປົກຄອງໝູ່ສືບເຊື້ອສາຍຕໍ່ມາ ຊາຍທັງ ໙ ນັ້ນໄດ້ເປັນກົກເຄົ້າຂອງ ຊາດລາວ ຈຶ່ງເອີ້ນວ່າພວກອ້າຍລາວ.

ໃນພົງສາວະດານຈີນ ຮຽກພວກອ້າຍນ້ອງທັງ ໙ ນີ້ວ່າພວກລີ ແລະຮຽກປະເທດຂອງພວກລີ ນີ້ວ່າ ປະເທດຈີກ ໃນລະຫວ່າງກ່ອນພຸທສັກຣາດ ໔໐໕໕ ນັ້ນພວກລີທັງ ໙ ເມືອງເຊິ່ງເປັນອ້າຍນ້ອງກັນນັ້ນໄດ້ ທ້າສົງຄາມກັບຈີນເປັນການໃຫຍ່ ດັ່ງນັ້ນ ຄຳວ່າຫລັ້ງ ກັບ ລີ ຄົງແມ່ນຄຳດຽວກັນ ຕໍ່ມາສຽງເລີຍຜ່ຽນເປັ' ລຸງ ແລ້ວຜ່ຽນເປັນລວງ ຕໍ່ ໆ ມາເລີຍເປັນ ລາວ ຄຳທີ່ຈີນເວົ້າວ່າ ເກົ້າຫລັ້ງ ຫລື ກິວລຸງ ນັ້ນກໍໝາຍ ຄວາມວ່າລາວທັງ ໙ ນັ້ນເອງ.

ງ. ມີນັກປາດລາວທ່ານເຫັນວ່າ ຄຳວ່າ ລາວແມ່ນຄຳດຽວກັນກັບຄຳວ່າ ດາວ ເນື່ອງມາຈາກ ພວກລາວຢູ່ບ່ອນສູງແລະມີຄວາມຈະເຣີນມາກ່ອນຈີນ ຈຶ່ງເປັນພວກ ດາວ ຫລື ທຽນ, ແຖນ, ໄທ, ໄທ້ ເຊິ່ງໝາຍຄວາມວ່າ ຟ້າ ດັ່ງດຽວກັນ ດັ່ງນັ້ນ ລາວ ກໍຕ້ອງແປວ່າ ຟ້າ ໄດ້ ເພາະສຽງຕົວ ດ. ກັບ ເປັນ ລ. ພວກເຮົາຈຶ່ງມີລັດທິຖືຜີຟ້າມາແຕ່ເດີມ.

ໂດຍຜົນໃນຂໍ້ ຄ. ແລະ ງ. ນີ້ມີຫລັກຖານພໍເຊື່ອໄດ້ຄື:

໑. ໃນຕຳນານພົງສາວະດານຈີນໄດ້ກ່າວໄວ້ວ່າ ຖິ່ນຖານຕັ້ງເດີມຂອງຊາດລາວນີ້ ຕັ້ງຢູ່ບໍຣິເວນ ພູອ້າຍລາວ ອັນຕັ້ງຢູ່ໃນເຂດເມືອງເສສວນຂອງຈີນທຸກວັນນີ້ ແລະແມ່ນ້ຳຂອງບ່ອນພວກອ້າຍລາວຢູ່ນັ້ນຮຽກ ວ່າ "ເກົ້າຫລັ້ງ" ເຊິ່ງຕໍ່ມາຈີນປ່ຽນໄປວ່າ ກິວລຸງກຽງແປວ່າ ແມ່ນ້ຳນາກທັງ ໙ ໝາຍຄວາມວ່າເປັນ ຖິ່ນຖານຂອງຊາຍທັງ ໙ ເຊິ່ງເປັນຕົ້ນເດີມຂອງຊາດລາວ ແລະກ່າວໄວ້ອີກວ່າ ເນື່ອງຈາກຄົນຊາດລາວ ມີສະກຸນສືບມາຈາກນາກ ພວກອ້າຍລາວຈຶ່ງນິຍົມນັບຖືນາກ ມັກສັກຮູບນາກໃສ່ແຂນ (ຈີນທາງເມືອງເສສວນ ນິຍົມສັກຮູບມັງກອນກຽວແຂນ ເນື່ອງຈາກຂຶ້ນເອງ).

໔. ເມື່ອພວກຊາດລາວ ອົພຍົບລົງມາຢູ່ທາງເມືອງແຖນໃນສມັຍຂຸນລໍ ຈີນກໍເອີ້ນເມືອງແຖນໃນ

ສມັຍນັ້ນວ່າ ເກົ້າຫລ້ຽງ ແລະເອີ້ນແມ່ນ້ຳຂອງ ບ່ອນຊື່ເມືອງຊຽງຮຸ່ງວ່າ ກິວລຸງກຽງ ຕາມນາມເດີມ.

໓. ໃນໜັງສືເຣື່ອງທ້າວຮຸ່ງທ້າວເຈືອງ ກໍເອີ້ນເມືອງຂອງຂຸນລືວ່າ ເມືອງກາຫລົງ (ມາຈາກເກົ້າຫລ້ຽງ ນັ້ນເອງ) ດັ່ງກ່າວໄວ້ໃນຕອນຂຸນລືຈະລົງມາຕີເອົາເມືອງປະກັນ (ຊຽງຂວາງ) ວ່າ:

ພຣະບາດທ້າວ ລ້ານໂລກແຖນລື
ທັມຢຳກົມ ກາຫລົງ ຢູ່ກະເສີມຍູ້ສາງ
ທຸກໄທພ້ອມ ຂຸນແຖນເລີຍກາວ
ວອນພຣະນ້າວ ລົງພ້ອມໄພ່ພົນ.

໔. ໃນໜັງສືເຣື່ອງຂຸນທຶງກ່າວໄວ້ວ່າ ທ້າວຂຸນເທືອງໄປໄດ້ກັບນາງເອກໄຄ້ ລູກສາວພຣະຍານາກຢູ່ໜອງກະແສແສນຍານແລວໄດ້ລູກອອກມາຊື່ ທ້າວຂຸນທຶງ ໆ ຈຶ່ງໄດ້ມາສ້າງເມືອງຊຽງໃໝ່ຂຶ້ນ. ເຣື່ອງນີ້ສັນນິດຖານໄດ້ວ່າ ພວກຂຸນເທືອງ ຂຸນທຶງ ເປັນພວກຂອມເຊື້ອສືບເຊື້ອສາຍມາຈາກ ນາງຈາມະເທວີ ທີ່ໄດ້ຂຶ້ນມາຄອງເມືອງຫະຣິພຸນໄຊ (ລຳພູນ) ແຕ່ລະຫວ່າງ ພ.ສ.໑໐໐໘ ສມັຍນັ້ນລາວເຮົາລົງມາຢູ່ໃນອານາຈັກໜອງແສແລ້ວ ພວກຂອມກັບລາວຈຶ່ງໄດ້ໄປມາຫາສູ່ກັນຕໍ່ ໆ ມາຫລາຍເຊັ່ນຄົນຈົນຂຸນເທືອງມາໄດ້ກັບນາງເອກໄຄ້ ນາງເອກໄຄ້ນັ້ນແມ່ນລູກກະສັດເມືອງໜອງແສ ລາວໜອງແສສືບເຊື້ອສາຍມາຈາກລື່ຫລ້ຽງ ລຸງ, ລວງ ດັ່ງນັ້ນຈຶ່ງຮຽກວ່ານາງລວງແລະຄຳວ່າ ລວງ ນີ້ໝາຍຄວາມວ່າ ນາກ (ລວງ ແມ່ນຄຳລາວ, ນາກ ແມ່ນຄຳປາລີ) ດັ່ງກ່າວໄວ້ໃນໜັງສືສິນໄຊຕອນນຶ່ງວ່າ:

"ເປັນດັ່ງສາຄອນບ້າ ນາງລວງລືມເພດ
ເທືອງໜ່າຍໜ້າ ແໜງຊ້ຳສິ່ງໜີ"

ແລະໃນໜັງສືເວດສັນຕຣະວ່າ:

"ແປ້ນອັດໜ້າ ພີ່ຈັກແຕ້ມລາຍລວງ
ດວງປີພີ່ຈັກໃສ່ຊູ່ຟ້າ" ເປັນຕົ້ນ.

ສະນັ້ນ ຄຳວ່າ ລາວ ຈຶ່ງອາດແປງມາຈາກຄຳວ່າ ລວງ, ລຸງ, ລື, ຫລ້ຽງ ດັ່ງກ່າວມາແລ້ວ.

໕. ຊື່ນະຄອນຫລວງຂອງຊາດລາວ ໃນສມັຍຂອງພວກອາຍລາວກໍເອີ້ນ ນະຄອນລຸງ ຫລື ເມືອງລຸງ ເມືອງລຸງນີ້ຢູ່ທາງທິດເໜືອ ຕອນກົກຂອງແມ່ນ້ຳຮວງໂຫ.

໖. ເນື່ອງຈາກຄົນຊາດລາວສືບສະກຸນມາຈາກ ລວງ, ລຸງ, ຫລ້ຽງ ດັ່ງນັ້ນ ຄົນຊາດລາວຈຶ່ງນິຍົມຖືນາກ ໃຊ້ຮູບນາກເປັນຕາປະຈຳຊາດສືບມາຈົນເຖິງທຸກວັນນີ້.

## ຄວາມໝາຍຂອງຄຳວ່າ "ລາວ"

ຄວາມໝາຍຂອງຄຳວ່າ ລາວ ນີ້ມີຜູ້ສັນນິດຖານໄວ້ຕ່າງກັນດັ່ງນີ້:

໑. ທ່ານສາສຕຣາຈານ ຄຣິບຕັນດອດ (ຄົນອະເມຣິກັນ) ກ່າວໄວ້ວ່າ ລາວ ແປວ່າ ໃຫຍ່ ຫລື ຄົນໃຫຍ່ ໝາຍຄວາມວ່າ: ຊາດລາວເປັນຊາດໃຫຍ່ມີຄົນຫລາຍ ແລະມີຄວາມຈະເຣີນ ຫລືເປັນຊາດມີ ອາຣະຍະທັມສູງໃນສມັຍບູຮານ.

໒. ທ່ານເຈົ້າຄຸນທັມມະທີຣະຣາຊມະຫາມຸນີ (ທີຣ໌) ກ່າວໄວ້ໃນໜັງສືພິມຣາຍເດືອນໂຍນົກວ່າ ລາວ ອາດພຽນມາຈາກຄຳວ່າດາວເຊິ່ງໝາຍຄວາມວ່າ ຟ້າ ຫລື ສູງສຸດ ເພາະພວກລາວເຣົາມີຖິ່ນຖານ ເດີມຢູ່ບ່ອນຣາບສູງໃນປະເທດຈີນ ແລະຖືຕົວວ່າເປັນພວກຈະເຣີນສືບເຊື້ອສາຍມາຈາກແຖນ ຄຳວ່າ ແຖນ, ທຽນ, ໄທ, ໄທ້ ກໍໝາຍຄວາມວ່າ ຟ້າ ດັ່ງດຽວກັນ.

໓. ຂ້າພະເຈົ້າເຫັນວ່າ ຄຳວ່າ ລາວ ພຽນມາຈາກຄຳ ລື້ຫລ້ວງ, ລຸງ, ລວງ ແລະ ຄຳວ່າ ລວງ ພຽນມາເປັນ ຫລວງກໍໄດ້ ດັ່ງນັ້ນລາວຈຶ່ງຄວນໝາຍວ່າ ໃຫຍ່ ຫລື ຈະເຣີນ ດັ່ງດຽວກັນ.

ຢ່າງໃດກໍຕາມ ຄົນຊາດລາວເຣົານີ້ໄດ້ມີກຳເນີດມາແລ້ວໃນໂລກພ້ອມກັບຄົນຊາດຈີນນັບວ່າເປັນ ຊາດເກົ່າແກ່ທີ່ສຸດໃນໂລກຊາດນຶ່ງ ເຊິ່ງມີຄວາມຈະເຣີນກວ້າງຂວາງບໍ່ຕ່ຳກວ່າຊາດອື່ນ ໆ ໃນສມັຍດຽວ ກັນ.

--------=== O ===-------

## ບົດທີ ໓

## ອານາຈັກເດີມຂອງລາວ

-----== ໐ ==----

ຊາດລາວໄດ້ຕັ້ງຫລັກຖານຢູ່ໃນດິນແດນໃນລະຫວ່າງແມ່ນ້ຳ ຮວງໂຫ ກັບແມ່ນ້ຳຢັ້ງຈື (ແຍງຊີກຽງ) ອັນຢູ່ໃນປະເທດຈີນຕອນເມືອງເສສວນທຸກວັນນີ້ເປັນຖິ່ນເດີມ ແລະມີເມືອງໃຫຍ່ຢູ່ ໒ ເມືອງ ຄື:

໑. ເມືອງລຸງ(໑) ຢູ່ຕອນຕົ້ນແມ່ນ້ຳຮວງໂຫດ້ານເໜືອ

໒. ເມືອງປາ ຢູ່ຕອນໃຕ້ແມ່ນ້ຳຮວງໂຫ ເໜືອເມືອງເສສວນ.

ຕໍ່ມາພວກເຮົາໄດ້ຕັ້ງເມືອງຂຶ້ນອີກເມືອງນຶ່ງຊື່ວ່າເມືອງງ້ຽວແຕ່ເມືອງປາເປັນເມືອງໃຫຍ່ແລະສຳຄັນກວ່າເມືອງອື່ນ ໆ ໃນສມັຍນັ້ນຄົນຊາດອື່ນຮຽກພວກລາວວ່າ "ມຸງ" ພຣະເຈົ້າແຜ່ນດິນຈີນໄດ້ສົ່ງຣາຊທູດມາຈະເຣີນທາງພຣະຣາຊໄມຕີຢູ່ນະຄອນປາ.

ຕໍ່ມາເມື່ອປະມານ ໘໔໓ ປີກ່ອນຄຣິຕສັກຣາດ ພວກຊາດຕາດ ໄດ້ເຂົ້າມາຣົບລວນພວກຈີນ ແລ້ວເລີຍເຂົ້າມາຮາວີພວກລາວທີ່ນະຄອນລຸງດ້ວຍ ພວກຊາດລາວນະຄອນລຸງ ຈຶ່ງອົພຍົບໜີພັຍລົງມາຢູ່ນະຄອນປາ ຕໍ່ຈາກນັ້ນມາອີກປະມານ ໗໐ ປີ ພວກຈີນໄດ້ເຂົ້າມາຣົບລວນນະຄອນປາ ແລະ ນະຄອນງ້ຽວຂອງພວກລາວ ໆ ຈຶ່ງອົພຍົບລົງມາຢູ່ທາງໃຕ້ຂອງເມືອງເສສວນຕລອດລົງມາເຖິງເມືອງກຸຍຈິວ ກວາງຕຸ້ງ ກວາງໃສ ແລະເມືອງຢູນານ ຂອງຈີນທຸກວັນນີ້ເປັນອັນມາກ ເວລານັ້ນພວກຈີນເອີ້ນຊາດລາວວ່າໄຕ (ຄຳນີ້ເອງພາຍລຸນມາເລີຍອອກສຽງວ່າ ໄທ) ແຕ່ເຖິງດັ່ງນັ້ນພວກນະຄອນປາ ກໍຍັງຮັກສາເອກຣາດໄວ້ໄດ້ຢູ່.

ເຖິງ ພ.ສ ໒໐໕ (ກ່ອນ ຄ.ສ.໓໓໘) ພວກລາວນະຄອນປາ ຖືກຈີນມາຣົບລວນອີກ ພວກຊາດລາວໄດ້ຕໍ່ສູ້ຢ່າງແຂງແຮງພົນສຸດທ້າຍ ສູ້ພວກຈີນບໍ່ໄດ້ ຈຶ່ງໄດ້ພາກັນຖິ້ມເມືອງໜີລົງມາໂຮມຢູ່ກັບພວກມາກ່ອນ ເຖິງປີ ພ.ສ. ໒໖໗ (ກ່ອນ ຄ.ສ.໒໒໖) ພຣະເຈົ້າແຜ່ນດິນຈີນນາມວ່າ ຈີນຊີຮ້ອງເຕ້ ຜູ້ສ້າງກຳແພງໃຫຍ່ຂອງປະເທດຈີນອັນຍາວເຖິງ ໑໐.໐໐໐ ລີ້ (ລີ້ນຶ່ງເທົ່າກັບ ໕໐໐ ແມັດ) ໄດ້ຍົກທັບມາຕີນະຄອນງ້ຽວຂອງລາວ ພວກນະຄອນງ້ຽວເສັຽເມືອງໃຫ້ແກ່ຈີນໃນປີ ພ.ສ.໓໔໘ (ກ່ອນ ຄ.ສ.໒໑໕) ແລ້ວເລີຍແຕກລົງມາໂຮມຢູ່ກັບພວກມາກ່ອນ.

---

(໑) ຄຳວ່າ ລຸງ ປາ ງ້ຽວ ມີຄວາມໝາຍຄ້າຍຄືກັນ ຄືໝາຍເອົາສັດນ້ຳຈຳພວກ ງູ ຫລື ນາກນັ້ນເອງ.

ເມື່ອພວກລາວລົງມາໂຮມກັນໄດ້ແລ້ວກໍຕັ້ງເມືອງຫລວງຂຶ້ນອີກເມືອງນຶ່ງຮຽກວ່າ ນະຄອນເພງາຍ ມີຊຸນເມັງ (ຂຸນເມືອງ) ເປັນກະສັດ ໃນສມັຍນັ້ນພຣະເຈົ້າແຜ່ນດິນຈີນນາມວ່າ ວູຕີ່ ໄດ້ແຕ່ງໃຫ້ທູດຄນະນຶ່ງ ໄປສືບເບິ່ງພຸທສາສນາໃນປະເທດອິນເດັຽ, ທູດຈີນຄນະນັ້ນຈະເດີນທາງຜ່ານນະຄອນເພງາຍ ເຈົ້າຊຸນເມັງ ບໍ່ຍອມໃຫ້ຜ່ານໄປ ພຣະເຈົ້າວູຕີ່ ຄຽດຈຶ່ງຍົກທັບມາຕີນະຄອນເພງາຍ ຊຸນເມັງໄດ້ທຳການຕໍ່ສູ້ຢູ່ຫລາຍປີ ສຸດ ທ້າຍເລີຍຕົກເປັນເມືອງຂຶ້ນຂອງຈີນໃນລະຫວ່າງປີ ພ.ສ. ໔໕໖.

ເຖິງປີ ພ.ສ.໔໘໔ (ຄ.ສ.໗) ປະເທດຈີນເກີດການກະບົດວຸ້ນວາຍ ຂຸນວັງເມືອງກະສັດຜູ້ສືບສະ ກຸນນະຄອນເພງາຍ ເຫັນເປັນໂອກາດດີ ຈຶ່ງປະກາດອິສຣະພາບແຂງຂໍ້ດບໍ່ຍອມຂຶ້ນກັບຈີນແລະໄດ້ຄອງເມືອງ ເປັນເອກຣາດຕໍ່ມາຈົນເຖິງ ພ.ສ.໕໗໓ (ຄ.ສ.໔໐) ຈຶ່ງຖືກຈີນຍົກທັບມາຕີອີກ ເລີຍໄດ້ຍອມເປັນເມືອງ ຂຶ້ນຂອງຈີນດັ່ງເກົ່າ.

ໃນລະຫວ່າງນີ້ ດິນຊາດລາວໄດ້ແຕກກັນອອກເປັນ ໒ ພວກຄື:

໑. ພວກຢູ່ນະຄອນເພງາຍ ຮຽກວ່າ ພວກອ້າຍລາວ

໒. ພວກຢູ່ທາງໃຕ້ ຮຽກວ່າ ພວກງາຍລາວ.

ເຖິງ ພ.ສ ໖໐໐ ເສດ (ຄ.ສ.໕໗) ພຣະເຈົ້າແຜ່ນດິນຈີນອົງນຶ່ງນາມວ່າ ມິງຕີ່ ທົງຝັນເຫັນຣັສມີ ຂາວຮຸ່ງເຮືອງພຸ່ງຂຶ້ນຟ້າຢູ່ທາງຕາເວັນຕົກ ພວກເສນາຜູ້ໃຫຍ່ພາກັນທວາຍວ່າ ຣັສມີນັ້ນແມ່ນສາສນາໃຫມ່ຊື່ ວ່າ "ໂຟ" ຄືສາສນາທີ່ຮຸ່ງເຮືອງຢູ່ໃນປະເທດອິນເດັຽ ພຣະເຈົ້າມິງຕີ່ ໄດ້ຊາບດັ່ງນັ້ນຈຶ່ງແຕ່ງຄນະທູດໄປສື ເບິ່ງຄນະທູດຈີນອອກໄປອິນເດັຽເປັນເວລາ ໗ ປີຈຶ່ງກັບມາແລະໄດ້ນຳເອົາພຣະພຸທຮູບ ພຣະທັມ ພຣະສົງ ມາດ້ວຍ (ພຣະສົງທີ່ມານັ້ນເປັນຝ່າຍລັດທິມະຫາຍານ) ພຣະເຈົ້າມິງຕີ່ ທົງມີສັດທາເຫລື້ອມໃສແລະໄດ້ແຜ ຜາຍພຣະພຸທສາສນານັ້ນໄປໃນນາໆປະເທດທີ່ຢູ່ໃກ້ກັນໃນສມັຍນັ້ນພຣະກະສັດລາວ ພຣະນາມວ່າຂຸນຫລວງລີ່ ເມົາທີ່ປະທັບຢູ່ນະຄອນງາຍລາວ ອານາຈັກຫນອງແສ ກໍທົງມີພຣະຣາຊສັດທາເຫລື້ອມໃສໃນພຣະພຸທສາສນາ ປະຊາຊົນດິນລາວຈຶ່ງໄດ້ນັບຖືພຸທສາສນາລັດທິມະຫາຍານຕັ້ງແຕ່ລະຫວ່າງປີ ພ.ສ ໖໑໒ ເປັນຕົ້ນມາ. ເຖິງ ພ.ສ ໖໒໑ (ຄ.ສ.໗໘) ຂຸນຫລວງລີເມົາ ສັ້ນພຣະຊົນ ຂຸນໄລລາວ ຣາຊໂອຣົດໄດ້ຄອງເມືອງ ແທນ ເວລານັ້ນພວກຈີນຖືວ່ານະຄອນງາຍລາວ ເປັນເມືອງຂຶ້ນຂອງຈີນ ຈີນຈຶ່ງສົ່ງຂຸນນາງຈີນມາກຳກັບ ຂຸນ ໄລລາວ ບໍ່ຍອມພວກຈີນຈຶ່ງຍົກທັບມາຕີນະຄອນງາຍລາວ ໆ ຈຶ່ງຕົກເປັນເມືອງຂຶ້ນຂອງຈີນແລວຈີນຈຶ່ງໄດ້ບັງ ຄັບໃຫ້ດິນລາວເສັຽສ່ວຍ ຊາຍສະກັນຄົນນຶ່ງໃຫ້ເສັຽເສື້ອສອງຜືນກັບເກືອທີ່ນຶ່ງ ແຕ່ນັ້ນມາພວກລາວກໍພາກັນ ອົພຍົບລົງມາທາງໃຕ້ເລື້ອຍ ໆ.

---

(໑) ຫນັງສືພົງສາວະດານຊາດໄທຮຽກວ່າ ເມືອງພາໃຍ ໃນຫນັງສືເຣື່ອງຊາດໄທຮຽກເມືອງນີ້ຕ່າງ ໆ ກັນ ວ່າເປະຫງາຍ, ເພງາຍ, ເປງາຍ, ພາໃຍ, ພາຍອງ, ກໍມີ ໃນຫນັງສືໄທຈູລາຮຽກວ່າເມືອງປາກອ້າຍ ຫລື ໂພງາຍ ທູກວັນນີ້ຈີນຮຽກວ່າ ປູເອີຟູ.

## ບົດທີ ໔

## ອານາຈັກລາວໜອງແສ ຫລື ນ່ານເຈົ້າ

------== 0 ==------

ໜອງແສເປັນໜອງອັນກວ້າງໃຫຍ່ ຕັ້ງຢູ່ທາງຕາເວັນອອກແມ່ນ້ຳຂອງ ໃນເຂດແຂວງມິນທິນຢູນານ ຂອງຈີນທຸກວັນນີ້ ແຕ່ບູຮານເຮົາເອີ້ນໜອງນີ້ວ່າ ໜອງແສ ຫລື ໜອງກະແສແສນຍານ ຈີນເອີ້ນວ່າ: ຕາລີຟູ.

ໃນສມັຍນະຄອນງາຍລາວຕົກເປັນເມືອງຂຶ້ນຂອງຈີນນັ້ນຄົນຊາດລາວສ່ວນຫລາຍໄດ້ພາກັນອົພຍົບລົງມາຕັ້ງບ້ານເຮືອນຢູ່ເລາະລຽບໜອງແສນັ້ນ ພໍດີໃນສມັຍນັ້ນພວກຈີນໄດ້ແຕກກັນອອກເປັນ ໓ ພວກຄື: ໂຈໂສ ພວກນຶ່ງ, ເລົ້າປີ່ ພວກນຶ່ງ, ຊຸນກວານ ພວກນຶ່ງ, ອາສັຍເຫດທີ່ພວກຈີນເກີດແຕກກັນແລະມົວເມົາຣົບເລວກັນຢູ່ນັ້ນ ພວກລາວຈຶ່ງມີໂອກາດໄດ້ຕັ້ງຕົວ ແລະ ສ້າງເມືອງໃຫຍ່ ໆ ຂຶ້ນໄດ້ເຖິງ ໖ ເມືອງຄື:

໑. ເມືອງ ມົ໋ງຊຸຍ (ເຫັນຈະແມ່ນເມືອງສຸຍ)
໒. " ເອັ້ຽເຊ້ (ບໍ່ຊາບວ່າແມ່ນເມືອງໃດ)
໓. " ລ້າງກົ້ງ (ເຫັນຈະແມ່ນລ້ານກຸ້ງ)
໔. " ເຫັ້ງຊຽງ (ເຫັນຈະແມ່ນທີ່ງຊ້າງ)
໕. " ຊີ້ລາງ (ເຫັນຈະແມ່ນຊຽງລານ)
໖. " ມົ໋ງເສ (ເມືອງແສຄືເມືອງໜອງແສ)

ບັນດາເມືອງທັງ ໖ ເມືອງນີ້ ເມືອງໜອງແສເປັນເມືອງໃຫຍ່ແລະເປັນເມືອງຫລວງຂອງປະເທດ ເຫດນັ້ນ ນາມປະເທດຂອງລາວໃນເວລານັ້ນ ຈຶ່ງຮຽກວ່າ ອານາຈັກໜອງແສ ຫລື ນ່ານເຈົ້າ ອານາເຂດຂອງອານາຈັກລາວໜອງແສໃນສມັຍນັ້ນ ປວັດສາດຂອງຈີນກ່າວໄວ້ວ່າ:

໑. ທິດພາຍັບ ຕິດຕໍ່ກັບປະເທດຊູ້ລູ້ຝັ້ນ (ຄືປະເທດທິເບ )
໒. ທິດເໜືອ ຕິດຕໍ່ກັບເມືອງຫຼິວເຈົ້າ
໓. ທິດຕາເວັນອອກ ຕິດຕໍ່ກັບເມືອງຊູນ (ແຂວງໄກວເຈົາ)
໔. ທິດອາຄະເນ ຕິດຕໍ່ກັບປະເທດເກົ້າຈີ້ (ຄືປະເທດວຽດນາມ)
໕. ທິດຕາເວັນຕົກ ຕິດຕໍ່ກັບເມືອງໜໍ້ກາຖູ້ (ເມືອງມະຄະທະ ຄື ອິນເດັຽ)
໖. ທິດໃຕ້ ຕິດຕໍ່ກັບເມືອງນູ້ຍຫວອງ
໗. ທິດຫໍຣະດີ ຕິດຕໍ່ກັບເມືອງພົວ
໘. ທິດອີສານ ຕິດຕໍ່ກັບເມືອງຈີນໜູ່.

ພວກລາວໃນອານາຈັກໜອງແສໄດ້ຕັ້ງຕົວເປັນເອກຣາດປົກຄອງບ້ານເມືອງເປັນສຸກສະບາຍ ຕໍ່ມາປະມານ ໑໐໐ ປີປາຍ ຄັນເຖິງ ພ.ສ.໗໖໘ (ຄ.ສ.໒໒໕) ຂົງເບັງ ແມ່ທັບຄົນສຳຄັນຂອງພຣະເຈົ້າເລົ້າປີ້ໄດ້ຍົກທັບມາຕີອານາຈັກໜອງແສ ເຈົ້ານະຄອນໜອງແສໄດ້ທຳການຕໍ່ສູ້ຢູ່ຫລາຍປີ ສຸດທ້າຍຕ້ອງຍອມເປັນເມືອງຂຶ້ນຂອງຈີນແຕ່ນັ້ນມາ ພວກລາວຖືກຈີນບຽດບຽນຂົ່ມເຫງຫລາຍກໍພາກັນອົພຍົບ ລົງມາທາງໃຕ້ສເມີ.

ເຖິງ ພ.ສ.໙໓໘ (ຄ.ສ.໓໙໕) ພວກລາວທີ່ຍັງຢູ່ໃນເມືອງທັງ ໖ ເມືອງນັ້ນ ກັບຕັ້ງຕົວກູ້ອິສຣະພາບໄດ້ອີກ ແລະໄດ້ປົກຄອງກັນເອງ ຕໍ່ມາຈົນເຖິງ ພ.ສ. ໑໑໙໒ (ຄ.ສ.໖໔໙) ຈຶ່ງມີພຣະກະສັດລາວອົງນຶ່ງ ພຣະນາມວ່າ ສີຫະນະຣະ(໑) ຫລື ສີນູໂລ (ຈີນເອີ້ນວ່າ ຊິວໂນ້ວຫລໍ້) ໄດ້ທ້ອນໂຮມເມືອງລາວທັງ ໖ ເມືອງນັ້ນ, ເຂົ້າເປັນຣັຖບານດຽວກັນ ຕັ້ງແຕ່ນັ້ນມາ ຣາຊອານາຈັກລາວໜອງແສກໍກັບມີຄວາມຈະເຣີນກວ້າງຂວາງຂຶ້ນອີກ ດັ່ງນັ້ນ ພຣະເຈົ້າສີຫະນະຣະ ຈຶ່ງໄດ້ສົ່ງຣາຊທູດໄປຜູກສັມພັນທະໄມຕີກັບພຣະເຈົ້າແຜ່ນດິນຈີນນາມວ່າ ເກົາຈົງຮ່ອງເຕ້ ງ ກໍທັງຮັບຕ້ອນເປັນຢ່າງດີ.

ຕໍ່ມາເຖິງ ພ.ສ.໑໒໒໘ (ຄ.ສ.໖໘໕) ພຣະເຈົ້າສີຫະນະຣະ ສັ້ນພຣະຊົນ ພຣະເຈົ້າໂລເສັງ (ຫລວງແສ) ຣາຊໂອຣົດໄດ້ຂຶ້ນສເວີຍຣາດໃນນະຄອນໜອງແສ ພຣະອົງກໍໄດ້ຜູກສັມພັນທະໄມຕີກັບປະເທດຈີນອີກ ຄືໃນປີ ພ.ສ.໑໒໓໓ (ຄ.ສ.໖໙໐) ພຣະອົງໄດ້ສະເດັດໄປປະເທດຈີນໃນງານຣາຊາພິເສກພຣະນາງບູເຊັກທຽນ.

ຂຸນບໍຣົມຣາຊາທິຣາດ

----== ໐ ==---

ວົງພຣະກະສັດລາວໄດ້ສເວີຍຣາຊສົມບັດໃນນະຄອນໜອງແສສືບຕໍ່ຈາກພຣະເຈົ້າໂລເສັງ ລົງມາອີກ ໓ ອົງ ຈຶ່ງມາເຖິງຂຸນບໍຣົມຣາຊາທິຣາດ ເຊິ່ງໃນພົງສາວະດານຈີນເອີ້ນວ່າ ພີລໍ້ໂກະ.

ຂຸນບໍຣົມຣາຊາທິຣາດ ຫລື ພຣະເຈົ້າພີລໍ້ໂກະ ເປັນກະສັດລາວຜູ້ກ້າຫານທັງຊຳນານໃນການສົງຄາມຢ່າງຍອດຍິ່ງໄດ້ທັງແຜ່ອານາເຂດລາວໜອງແສໃຫ້ກວ້າງຂວາງທີ່ສຸດ ພຣະອົງໄດ້ຂຶ້ນສເວີຍຣາຊສົມບັດໃນນະຄອນໜອງແສ ປີ ພ.ສ. ໑໒໗໒ (ຄ.ສ.໗໒໙) ເມື່ອພຣະຊົນໄດ້ ໓໒ ປີ ຄັນສເວີຍຣາດແລ້ວ ພຣະອົງໄດ້ສົ່ງຣາຊທູດລາວໄປຈະເຣີນສັມພັນທະໄມຕີກັບພຣະເຈົ້າແຜ່ນດິນຈີນນາມວ່າ ທາງວນຈົງເຫມັງຮ່ອງເຕ້ ພຣະເຈົ້າທາງວນຈົງເຫມັງຮ່ອງເຕ້ກໍໄດ້ສົ່ງບັນນາການມາຕອບແທນ.

---

(໑) ໜັງສືພົງສາວະດານຊາດໄທວ່າ ພຣະເຈົ້າສີຫະນະຣະເກີດທີ່ເມືອງເວງຊຽງ ເມື່ອ ພ.ສ ໑໑໔໙ ຈຶ່ງໄດ້ເປັນກະສັດແລ້ວສ້າງເມືອງໜອງແສຂຶ້ນ ໃນປີ ພ.ສ.໑໑໙໒

## ຂຸນບໍຣົມຣາຊາທິຣາດ

## ທົງຕັ້ງ ເມືອງກາຫລົງ ຫລື ເມືອງແຖນ (໑)

-----== O ==-----

ຂຸນບໍຣົມຣາຊາທິຣາດເຈົ້າປະທັບຢູ່ເມືອງໜອງແສ ທົງພິຈາຣະນາເຫັນວ່າ ປະເທດຈີນມີກຳລັງແຂງແຮງແລະເຄີຍຍົກຣິພົນໂຍທາມາບຸກບຸລຸມນະຄອນໜອງແສຢູ່ສເມີ ເຖິງແມ່ນພຣະອົງຈະໄດ້ຜູກສັມພັນທະໄມຕີໄວ້ແລ້ວກໍຕາມ ກໍຍັງບໍ່ເປັນທີ່ເຊື່ອໃຈໄດ້ສະນັ້ນ ໃນປີ ພ.ສ ໑໒໔໗ (ຄ.ສ.໗໓໑) ພຣະອົງຈຶ່ງໄດ້ຍົກຈະຕຸຣົງຄະເສນາໂຍທາຫານລົງມາສ້າງເມືອງໃຫມ່ທີ່ທົ່ງນານ້ອຍອ້ອຍໜູ

---

(໑) ເມືອງແຖນນີ້ ແຕ່ເດີມເປັນຊື່ອານາຈັກໜອງແສ ເອີ້ນວ່າອານາຈັກແຖນ ເຊິ່ງຈີນທັມມະດາເອີ້ນວ່າ ເມືອງແຖນນັ້ນເອງ ສະນັ້ນເມືອງແຖນຈຶ່ງມີ ໒ ເມືອງຄື: ເມືອງແຖນເກົ່າ ຕັ້ງຢູ່ບໍຣິເວນໜອງກະແສຕອນເໜືອ ຊື່ເມືອງແທ້ຮຽກວ່າ ເມືອງປາກອາຍ ຕັ້ງຂຶ້ນແຕ່ລະຫວ່າງ ພ.ສ.໒໙໙ ເມືອງແຖນເກົ່ານີ້ຖືກຈີນມາຕີໄດ້ໃນ ພ.ສ.໔໕໙ ແລ້ວຈີນຜູ້ຍູ່ນຊື່ໃຫ້ໃຫມ່ວ່າ ເມືອງຍີ່ເຈົ້າ ຫລື ຍົກເຈົ້າ (ເມືອງສອງເຈົ້າ) ຄື ພວກງາຍລາວ ແລະ ອາຍລາວ; ພວກອາຍລາວຢູ່ທາງໃຕ້ໜອງກະແສນັ້ນອັນເປັນເຂດແຂວງຂອງຢູນານທຸກວັນນີ້ຕໍ່ມາເຖິງປີ ພ.ສ. ໗໙໙ ພວກອາຍລາວ ຕັ້ງອິສຣະພາບໄດ້ ແລະມີກະສັດລາວປົກຄອງສືບຕໍ່ມາ ຈົນເຖິງຂຸນບໍຣົມຣາຊາທິຣາດ ໆ ຈຶ່ງມາຕັ້ງເມືອງແຖນຂຶ້ນທີ່ທົ່ງນານ້ອຍອ້ອຍໜູ ເປັນອານາຈັກແຖນເມືອງຫລວງແທ້ ໆ ແມ່ນເມືອງກາຫລົງໄດ້ແກ່ເມືອງຊຽງຮຸ່ງທຸກວັນນີ້ແຕ່ໃນບັນທຶກຫນັງສືພົງສາວະດານຊາດໄທຂອງພຣະບໍຣິຫານເທບທານີກ່າວໄວ້ວ່າ ເມືອງກາຫລົງນັ້ນຕັ້ງຢູ່ຕຳບົນຝາຍ ອຳເພີເຊຽງປ່າເປົ້າ ໃນແຂວງລານນາ ປະເທດໄທ ເປັນເມືອງເກົ່າ ຄົງຈະຕັ້ງຂຶ້ນແຕ່ລະຫວ່າງ ພ.ສ.໕໗໐ ເສດ ແລະເປັນເມືອງທີ່ຮຸ່ງຈັກເຣີດຖ້ວຍລາຍຈົນໄດ້ຍ່າງດີ.

ຂນານນາມເມືອງໃຫມ່ນີ້ວ່າ ເມືອງແຖນ ຫລື ເມືອງກາຫລົງ (ຄືເກົ້າຫລ້ຽງ ນັ້ນເອງ) ແລ້ວພຣະອົງກໍປະທັບຢູ່ເມືອງໃຫມ່ນີ້ເຖິງ ໔ ປີ ໃນລະຫວ່າງສເດັດປະທັບຢູ່ເມືອງກາຫລົງນີ້ ພຣະອົງໄດ້ຍົກທັບຂຶ້ນໄປຕີເອົາຫົວເມືອງຂອງປະເທດຈີນອັນຢູ່ໃນເຂດແດນຕິເບ ໄດ້ຫລາຍເມືອງແລ້ວ ພຣະອົງຈຶ່ງຕັດສັ່ງໃຫ້ພວກນາຍສີສ້າງເມືອງໃຫມ່ຂຶ້ນໃນບ່ອນທີ່ໄດ້ນັ້ນອີກເມືອງນຶ່ງສຳລັບເປັນທີ່ປະທັບ ຮຽກວ່າ ເມືອງຕາຕໍ່(໒) ເມືອງນີ້ຢູ່ຫ່າງຈາກເມືອງໜອງແສໄປທາງເໜືອ ໔໐ ລີ້(໒) ແລ້ວພຣະອົງກໍສເດັດໄປປະທັບຢູ່ນະຄອນຕາຕໍ່ເມື່ອປີ ພ.ສ. ໑໒໘໓ (ຄ.ສ.໗໔໐).

ຕາມນິທານຂຸນບໍຣົມທຸກ ໆ ສະບັບກ່າວວ່າ ຂຸນບໍຣົມຣາຊາທິຣາດເຈົ້າມີພຣະຣາຊໂອຣົດປະສູດຈາກພຣະນາງຍົມພາລາເອກ ອັຄມະເຫສີ ແລະພຣະນາງເອັດແຄງເທວີຊາຍໂຮມ ໗ ພຣະອົງ ຄື:

໑. ຂຸນລໍ
໒. ທ້າວຜາລານ
໓. ທ້າວຈຸສົງ
໔. ທ້າວຄຳຜົງ ຫລື ຄຳຟອງ
໕. ທ້າວອິນ
໖. ທ້າວກົມ
໗. ທ້າວເຈືອງ (໓)

ຢູ່ມາເຖິງປີ ພ.ສ.໑໒໘໖ (ຄ.ສ.໗໔໓) ຂຸນບໍຣົມຣາຊາທິຣາດເຈົ້າໄດ້ທົງແຕ່ງຣາຊທູດໄປຈະເຣີນທາງຣາຊໄມຕີກັບພຣະເຈົ້າແຜ່ນດິນຈີນທີ່ທົງພຣະນາມວ່າ ພຣະເຈົ້າຣຽນຈົງອຶກ ແລ້ວພຣະອົງຈຶ່ງສເດັດກັບມາສເວີຍຣາຊສົມບັດຢູ່ນະຄອນຫນອງແສ ສ່ວນເມືອງຕ້າຫໍ້ນັ້ນ ໄດ້ທົງມອບໃຫ້ທ້າວຜາລານ ພຣະຣາຊໂອຣົດອົງທີ ໒ ຄອບຄອງແທນ.

ຂຸນບໍຣົມຣາຊາທິຣາດເຈົ້າສເວີຍຣາຊສົມບັດຢູ່ນະຄອນຫນອງແສຕໍ່ມາຈົນເຖິງ ພ.ສ.໑໒໙໓ (ຄ.ສ.໗໕໐) ກໍສເດັດສູ່ຣະຄົດໂຣມພຣະຊົນໄດ້ ໕໓ ປີ.

---

(໑) ເມືອງຕ້າຫໍ ລາວເຮົາເອີ້ນວ່າ ຫໍແຕ ຫລື ຫໍໄຕ ຕໍ່ມາເລີຍເອີ້ນວ່າ ຫໍ້ໃຫຍ່.
(໒) ລີ້ ໑ ເທົ່າກັບ ໕໐໐ ແມັດ ໔໐ ລີ້ ເທົ່າກັບ ໒໐ ກິໂລແມັດ.
(໓) ໃນຫນັງສືເມືອງລ້ານຊ້າງກ່າວໄວ້ວ່າ ພຣະຣາຊໂອຣົດຂອງຂຸນບໍຣົມທັງ ໗ ໄດ້ໄປຄອງເມືອງຕ່າງໆ ຄື :

| | | |
|---|---|---|
| ໑- ຂຸນລໍ | ຄອງເມືອງ | ລ້ານຊ້າງ |
| ໒- ຜາລານ | " | ຕ້າຫໍ ຫລື ຫໍແຕ |
| ໓- ທ້າວຈຸສົງ | " | ຈຸລນີ ຄື ເມືອງແກວ |
| ໔- ທ້າວຄຳຜົງ | " | ໂຍນົກ ຄື ລານນາ |
| ໕- ທ້າວອິນ | " | ລ້ານພັຍ ຄື ອະຍຸທຍາ |
| ໖- ທ້າວກົມ | " | ຫລ້າຄຳມວນ |
| ໗- ທ້າວເຈືອງ | " | ປະກັນຊຽງຂວາງ |

ໃນໜັງສືພົງສາວະດານຈີນຊື່ "ຢັ່ງຈັບສິຊູ" ກ່າວໄວ້ວ່າ ເມື່ອຊຸນບໍຣົມຣາຊາທິຣາດ (ພິລໍໂກະ) ສະເດັດສູຣະຄົດແລ້ວ ພຣະຣາຊໂອຣົດນາມວ່າ ໂກະລໍ້ພົງ (ຄືຊຸນລໍ) ໄດ້ຄຸມຄອງປະເທດລາວໜອງແສຕໍ່ມາ ແຕ່ເວລານັ້ນ ທ້າວຊຸນລໍຍັງປະທັບຢູ່ທີ່ນະຄອນກາຫຼົງຄັນຊາບວ່າ ພຣະຣາຊບິດາສະເດັດສູຣະຄົດແລ້ວກໍສະເດັດໄປນະຄອນໜອງແສ ແລະໄດ້ແຕ່ງຣາຊທູດໄປຈະເຣີນຣາຊໄມຕີກັບຈີນ ດັ່ງແຕ່ກ່ອນ ຕໍ່ມາພຣະອົງສະເດັດໄປປະພາດທາງເຂດແດນຈີນ ເຖິງເມືອງຢຸນໜໍາ ຂ້າຣາຊການຈີນຜູ້ຮັກສາເມືອງບໍ່ສະແດງຄວາມໂຄຣົບ ພຣະອົງມີຄວາມຂັດເຄືອງພຣະທັຍຈຶ່ງຍົກກອງທັບໄປຕີເອົາເຂດແດນຈີນໄດ້ທົ່ວເມືອງຕ່າງ ໆ ໃນແຂວງຢຸນໜໍາເຖິງ ໓໒ ເມືອງແລ້ວພຣະອົງກໍປະທັບຢູ່ເມືອງຢຸນໜໍາ.

ເຖິງ ພ.ສ.໑໒໙໔ ພຣະເຈົ້າແຜ່ນດິນຈີນຍົກທັບຫຼວງມາຈະຕີເອົາເມືອງຢຸນໜໍາຄືນ ທ້າວຊຸນລໍຈຶ່ງແຕ່ງທູດໄປຫາແມ່ທັບຈີນຂໍເປັນໄມຕີແລະຍອມສົ່ງເມືອງຄືນໃຫ້ຫຼາຍເມືອງ ແມ່ທັບຈີນບໍ່ຍອມຈັບທູດລາວຂັງໄວ້ ແລ້ວຍົກທັບມາຕີເມືອງຢຸນໜໍາ ທ້າວຊຸນລໍຕີທັບຈີນແຕກຄືນໄປໝົດ ແລ້ວພຣະອົງພິຈາຣະນາເຫັນວ່າ ພວກຈີນຄົງຈະຍົກທັບມາຣົບອີກ ຈຶ່ງໄດ້ໄປທໍາໄມຕີໄວ້ກັບພຣະເຈົ້າແຜ່ນດິນປະເທດຕິເບ .

ເຖິງ ພ.ສ.໑໒໙໗ (ຄ.ສ.໗໕໔) ພວກຈີນໄດ້ຍົກທັບມາຕີເມືອງຢຸນໜໍາ ຄາວນີ້ທ້າວຊຸນລໍ ໄດ້ລໍ້ໃຫ້ກອງທັບຈີນຍົກທັບເຂົ້າໄປເຖິງຕ້າຫໍ ແລ້ວແຕ່ງກອງທະຫານມາລັດດ່ານໄວ້ ກອງທະຫານຈີນຂາດສະບຽງອາຫານລົງແລະເກີດໂຣກອະຫິວາຂຶ້ນໃນກອງທັບ ຈຶ່ງພາກັນຍົກຖອຍຄືນ ຊຸນລໍໄດ້ຍົກທະຫານນໍາຕີ ໄດ້ຂ້າຟັນທະຫານຈີນຕາຍລົງເປັນອັນມາກ.

ທ້າວຊຸນລໍຈຶ່ງມອບຣາຊສົມບັດເມືອງໜອງແສ ໃຫ້ອີເມົາຊິນ(໑) (ຫຼານ) ຜູ້ເປັນໂອຣົດຂອງທ້າວຜາລ້ານຄອບຄອງແທນສ່ວນພຣະອົງສະເດັດກັບມາເອງນະຄອນກາຫຼົງ ອີເອົາຊິນຈຶ່ງໄດ້ເປັນພຣະເຈົ້າແຜ່ນດິນໜອງແສຕໍ່ມາ.

ຣາຊອານາຈັກລາວໜອງແສໄດ້ຮັບຄວາມຈະເຣີນຮຸ່ງເຣືອງແລະກວ້າງຂວາງມາຕັ້ງແຕ່ສມັຍຂອງພຣະເຈົ້າສີນູໂລ ມີອົງກະສັດລາວໄດ້ປົກຄອງສືບຕໍ່ຈາກພຣະເຈົ້າສີນູໂລມາເຖິງ ໑໓ ອົງຄິດເປັນເວລານານເຖິງ ໒໕໔ ປີ ຕໍ່ຈາກນັ້ນມາກໍມີຣາຊວົງ ທີ່ມີເຊື້ອຊາດປະປົນກັບຈີນປົກຄອງບ້ານເມືອງ ປະເພນີແບບແຜນຂອງລາວໜອງແສຈຶ່ງປ່ຽນແປ່ງໄປຕາມແບບຈີນສເມີ ມາເຖິງ ພ.ສ.໑໗໙໗ (ຄ.ສ.໑໒໕໔) ພວກມົງໂກນຄືເຈົ້າແຜ່ນດິນຈີນຣາຊວົງຫງວນຕີເອົາເມືອງຈີນໄດ້ໝົດແລ້ວຈຶ່ງຂຍາຍອໍານາດລົງມາທາງຕາເວັນຕົກສຽງໃຕ້ແລະເຂົ້າຕີເອົາຣາຊອານາຈັກລາວໜອງແສໄດ້ ຣາຊອານາຈັກໜອງແສ ຈຶ່ງໝົດອິສຣະພາບຕົກເປັນປະເທສຣາດຂອງຈີນຕັ້ງແຕ່ນັ້ນມາ.

---

(໑) ອີເມົາຊິນ ເຫັນໃກ້ກັບຊື່ ຊຸນຊິນ ໃນເຣື່ອງທ້າວເຈືອງ.

## ປະເພນີລາວອານາຈັກຫນອງແສ(໑)

### ພຣະເຈົ້າແຜ່ນດິນ

ພຣະເຈົ້າແຜ່ນດິນ ຮຽກວ່າ ນ່ານເຈົ້າອ໋ອງວອລານ່ານເຈົ້າອ໋ອງ ສະເດັດອອກວ່າຣາຊການ ຫັນໜ້າໄປທາງຕາເວັນອອກ ເມື່ອຂ້າຣາຊການເຂົ້າເຝົ້າທູນຂໍ້ຣາຊການ ໃຫ້ຂຽນຫນັງສືບອກແທນທູນດ້ວຍປາກ ພຣະເຈົ້າແຜ່ນດິນຮຽກພຣະອົງເອງວ່າ ຫຽຸມ ຫລື ຫຽວມ ສ່ວນຂ້າຣາຊການຕັດຮຽກວ່າ ສອງ.

### ຂ້າຣາຊການ

ຂ້າຣາຊການຊັ້ນຜູ້ໃຫຍ່ຮຽກວ່າຕ້ານເຈົ້າ,(ທານເຈົ້າ) ໂປວສີເກົ້າຈ່ານ ສາມຕຳແຫນ່ງນີ້ເປັນຊັ້ນເຊັ້ງເຜັ້ງກຸມ (ທີ່ກັບອັກຄະມະຫາເສນາ) ຕຳແຫນ່ງຮອງລົງມາແມ່ນ: ເຢົ້າພ້ອງ, ຈິ່ງເຢົ້າມ້ອງ, ຢູ່ນ້ງອຍ ເຢົ້າມອງ, ໃຕກວານຈຽງ, ຢູ່ນ້ງອຍ ຫ້າຊັ້ນນີ້ເປັນຊັ້ນ ຊຽກຸມ (ຕຳແຫນ່ງຮອງ) ສ່ວນຕຳແຫນ່ງວ່າຣາຊການມີ ໙ ຄື:

| | | |
|---|---|---|
| ໑. ໂມ້ວສອງ(໒) | | ຕຳແຫນ່ງທະຫານ |
| ໒. ຈ້ງສອງ | " | ສຳມະໂນຄົວ |
| ໓. ສີສອງ | " | ຣາຊປະເພນີ |
| ໔. ຝັດສອງ | " | ຍຸຕິທັມ |
| ໕. ອິນສອງ | " | ມະຫາດໄທ |
| ໖. ອິດສອງ | " | ໂຍທາ |
| ໗. ນ່ານສອງ | " | ຄັງ |
| ໘. ຍັນສອງ | " | ຕ່າງປະເທດ |
| ໙. ຫວໍ້ສອງ | " | ພານິດ |

ຕຳແຫນ່ງຂ້າຣາຊການທັງ ໙ ນີ້ເປັນຊັ້ນເຊັ້ງເຜັ້ງກຸມ ຍັງມີຕຳແຫນ່ງຂ້າຣາຊການອີກຊັ້ນນຶ່ງຮຽກວ່າ ຕຸກສອງ (ເຫັນຈະແມ່ນທູກສາງ) ເປັນຕຳແຫນ່ງຣັຖມົນຕີວ່າການສາມກະຊວງ ດັ່ງນັ້ນ ຕຳແຫນ່ງນີ້ ຈຶ່ງມີບ່ວາສູງສຸດໃນຈຳນວນ ໙ ຕຳແຫນ່ງນັ້ນ ຕໍ່ຈາກຕຳແຫນ່ງທັງ ໙ ລົງມາອີກກໍ່ມີ:

---

(໑) ຈາກຄຳແປພົງສາວະດານຈີນ ໃນຫນັງສືພົງສາວະດານຊາດໄທ.

(໒) ສອງ ແມ່ນພາສາລາຫນອງແສວ່າ ສາງ ຫລື ໂຮງການ ນັ້ນເອງ ຈີນອອກສຽງເປັນສອງ.

໑. ຣັດຖາະ ກິນນາ                    ໒. ຫລິກຖາະ ກິນງົວ

໓. ກູຍຖາະ ກິນສາງເຂົ້າ

ຂ້າຣາຊການເກັບສ່ວຍສາອາກອນມີ ໓ ຕຳແໜ່ງຄື: ໑. ສອງເປົ້າ ໒. ນ້ອມ ໓. ອັ້ນໃສ້ ແລະມີຕຳແໜ່ງຮັກສາຣາຊການລັບຢູ່ຕຳແໜ່ງນຶ່ງ ຮຽກວ່າ ປົ້ງຊີ.

ຕຳແໜ່ງຂ້າຣາຊການຝ່າຍຫົວເມືອງ ມີດັ່ງນີ້:

໑. ເຈົ້າເມືອງຊັ້ນເອກຫລື ເມືອງຂວາ ຮຽກວ່າຫຼິນຈັບ ຜູ້ຊ່ວຍຮຽກວ່າ ຫຼິນລ້ານ.

໒. ເຈົ້າເມືອງຊັ້ນໂທ ຫລື ເມືອງຊ້າຍ ຮຽກວ່າ ສົມປູ້ຍ ຜູ້ຊ່ວຍຮຽກວ່າ ສົມລ້ານ.

໓. ເຈົ້າເມືອງຊັ້ນຕີ ຫລື ເມືອງແຜນ ຮຽກວ່າ ຕ້າມເປົ້າ ຜູ້ຊ່ວຍຮຽກວ່າ ຕ້າມລ້ານ.

໔. ເຈົ້າເມືອງຊັ້ນຈັດຕວາ ຫລື ເມືອງປາກ ຮຽກວ່າ ໂມ້ວໄພ ຜູ້ຊ່ວຍ ຮຽກວ່າ ໂມ້ວລ້ານ.

ໃນເມືອງໃດກໍ່ມີຂ້າຣາຊການຜູ້ນຶ່ງ ຊື່ ຖັ້ງເຫົ້າ ເປັນນາຍໜັງສື ແລະອີກຄົນນຶ່ງ ຊື່ຖີ້ໃຈ້ ເປັນຝ່າຍຕູລາການ.

## ການປົກຄອງທ້ອງຖິ່ນ

ຮ້ອຍເຮືອນ ມີຫົວໜ້າຜູ້ນຶ່ງ ຮຽກວ່າ ຈື່ງຈື່ (ກວານບ້ານ)
ພັນ " " " ລື້ປົ້ນກູນ(໑) (ຕາແສງ)
ໝື່ນ " " " ໂຕວຕູກ (ເຈົ້າເມືອງ)

ຂ້າຣາຊການຊັ້ນຜູ້ໃຫຍ່ ໄດ້ຮັບແບ່ງມາຈາກເຈົ້າແຜ່ນດິນ ຄົນລະ ໔໐ ສອງ(໒) ຊັ້ນຮອງລົງມາ ໄດ້ຮັບຄົນລະ ໓໐ ສອງສ່ວນຜູ້ນ້ອຍ ກໍໄດ້ຮັບຫລຸດລົງມາຕາມຊັ້ນ.

ຊາວໜອງແສ ຜູ້ຊາຍສະກັນຕ້ອງເປັນທະຫານທຸກຄົນ ຜູ້ມີມ້າ ກໍເປັນທະຫານມ້າ ປີນຶ່ງ ໆ ທາງຣາຊການແຈກໜັງຮັດທ້ອງ ເສື້ອແລະໂສ້ງໃຫ້.

ໃນທ້ອງຖິ່ນນຶ່ງ ໆ ໃຫ້ມີທະຫານຈຳນວນ ໔ ກູນ(໓) ໃຊ້ທູງປະຈຳການກູນລະຮ້ອຍ ໂຮມ ໔ ກູນ ມີແມ່ທັບຜູ້ນຶ່ງ ທູງປະຈຳກູນ ໔ ຄັນແບ່ງເປັນ ໔ ສີເປັນເຄື່ອງໝາຍ ນອກຈາກນັ້ນກໍມີທະຫານໃກ້ຊິດພຣະອົງ ຮຽກວ່າ ຈົ່ໂມ້ວໂຮ້ຍຈຸ້ຍ ທະຫານຈຳພວກນີ້ໃສ່ເສື້ອແດງ ຖືໜ້າທະນູ ແລະມີແຜ່ນໜັງຮັດແອວ.

## ການເກນທະຫານ

ປະຊາຊົນຕາມບ້ານຕ້ອງຖືກເກນ ເຂົ້າເປັນທະຫານກອງໃດກອງນຶ່ງໃນ ໔ ກູນ (ກອງທະຫານນັ້ນແບ່ງເປັນກອງຮ້ອຍຮຽກວ່າປາກຫລັ້ນ ແປວ່າ ຄົນຮ້ອຍນຶ່ງ ມີຜູ້ນຶ່ງຄອຍຄວບຄຸມ ຮຽກວ່າຫົວປາກ ແປວ່າ ນາຍຮ້ອຍ) ພວກທະຫານໃສ່ໝວກແດງຖືດາງເຮັດດ້ວຍໜັງແຮດ ບໍ່ໃສ່ເກີບແຕ່ແລ່ນໃນທີ່ກັນດານໄດ້ໄວຫລາຍ.

---

(໑) ກູນ (ເຫັນຈະຕົງກັບຄຳວ່າ ກວານ ໃນພາສາເຮົາ)(໒) ສອງ ໑ ທຽບກັບ ໑໐,໐໐໐ ຟີດ.

(໓) ຈຳນວນທະຫານ ໔ ກູນ ມີຈຳນວນພົນ ໑໒,໔໐໐ ຄົນ.

ທະຫານຊາວມ້ອງຈຸ້ຍໝ້ານ ທັງຍິງຊາຍຢູ່ທາງແມ່ນ້ຳລານສອງ(໑)ເບື້ອງຕາເວັນຕົກ ມີຄວາມກ້າຫານແລະວ່ອງໄວ ໃນການໃຊ້ຫອກດາບ ຂີ່ມ້າບໍ່ໃສ່ອານແຕ່ມີເສື້ອໜັງສຳຣັບປ້ອງກັນອີກແລະທ້ອງ ເທິງໝວກມີຫາງແມວແລະຫາງງົວຜູກໄວ້ ໃນການຣົບພວກນີ້ແລ່ນອອກໜ້າສະນັ້ນ ທະຫານຊາວມ້ອງຈຸ້ຍໝ້ານ ນັ້ນຈຶ່ງໃຊ້ ເປັນທະຫານກອງໜ້າ.

## ທະຫານຮັກສາພຣະອົງ

ລູກຫລານຂອງຂ້າຣາຊການຜູ້ໃຫຍ່ ໄດ້ເປັນທະຫານຮັກສາພຣະອົງມີຢູ່ນຳກັນ ໙ ຄົນ ຂ້າຣາຊການຜູ້ໃຫຍ່ ເວລາເຂົ້າເຝົ້າພາຍດາບບໍ່ໄດ້ ເວັ້ນແຕ່ທະຫານຮັກສາພຣະອົງ ໙ ຄົນນີ້ເທົ່ານັ້ນ.

## ຕຳແໜ່ງໄຕ້ກັ້ນຈຽງ

ຂ້າຣາຊການຕຳແໜ່ງ ໂສ້ວຈ່ຽງ ມີ ໖ ຄົນ ຖ້າມີຄວາມຊອບ ກໍໄດ້ເລື່ອນຂຶ້ນເປັນ ໄຕ້ກັ້ນຈຽງ ຕຳແໜ່ງໄຕ້ກັ້ນຈຽງ ມີ ໑໔ ຄົນ ອຳນາດແລະໜ້າທີ່ທຽບກັບຊັ້ນ ເຊງເຜ້ງກຸ້ນ ນອກຈາກເປັນທີ່ປຶກສາແລ້ວ ໄຕ້ກັ້ນຈຽງ ຍັງມີອຳນາດເປັນແມ່ທັບໄດ້ ແລະອາດເລື່ອນເປັນເຊງເຜ້ງກຸ້ນໄດ້.

## ທີ່ປຶກສາພຣະອົງ

ຍັງມີຂ້າຣາຊການຕຳແໜ່ງ ງ້ອຍຊິ້ນກຸ້ນ ເປັນທີ່ປຶກສາຢູ່ໃກ້ພຣະອົງ ແລະຂ້າຣາຊການຕຳແໜ່ງ ງ້ອຍຊິ້ນກຸ້ນ ເປັນຜູ້ຈົດບັນທຶກຄຳຕັດສິນຂອງພຣະເຈົ້າແຜ່ນດິນໜອງແສ ແລ້ວສົ່ງເປັນໝາຍຣັບສັ່ງໄປຫາ ຂ້າຣາຊການຕຳແໜ່ງ ໂສ້ວຈ່ຽງ ດຳເນີນການຕໍ່ໄປ.

## ທ້າວຂຸນປະຈຳຝ່າຍໜ້າ

ມີຂ້າຣາຊການຕຳແໜ່ງ ຈິດໂຕ້ວ ໖ ຄົນ ເປັນທ້າວຂຸນຝ່າຍໜ້າ ຄື: ໑.ລົ້ງຕ້ຽງ ໒.ເວງຊ້ຽງ (ວຽງຈັນ) ໓.ຫງົ້ວຊັ້ງ ໔.ກິມຊູ ໕.ສຽກຕ້ຽງ ໖.ໄລສຸ້ຍ ກັບມີຕຳແໜ່ງໂຕວຕູກ ອີກ ໒ ຄົນຄື ວຸຍຊຸນ ແລະ ທຸງຫອຍ.

## ຫ້ອງຖິ່ນປົກຄອງ

ອານາຈັກນ່ານເຈົ້າ ຫລື ໜອງແສ ແບ່ງອອກເປັນ ໑໐ ລົມ(ເມືອງ) ໑.ຫວັ້ນໜ້ານ (ຍູນານ) ໒.ບາກຫວາຍ ຫລື ປົດລົ້ງ ໓.ປັ້ນຕ້ານ ໔.ຖ້ຽງຊຸນ ໕.ໝົ້ງເສ (ເມືອງໜອງແສ) ໖.ໄຕ້ຫລີ(ຕາລີຟູ) ໗. ຈຸຍເມ ໘.ໝົ້ງສົມ(ເມືອງສົມ) ໙.ໄຕ້ຫຼໍ້ ໑໐. ຈົ້ວຊຸນ.

## ການເຮັດໄໝ

ພູມປະເທດອານາຈັກໜອງແສ ທາງພູເຂົາ ຊື່ ຊີລົມ (ຄີຣີ) ຝ່າຍຕາເວັນຕົກມີໄຂ້ປ່າຫລາຍ ເຖິງຍາມໜາວຫຍ້າກໍບໍ່ມີ ຫ່ຽວແຫ້ງໝົດ ຕັ້ງແຕ່ເມືອງຕູກຈິ່ງເຈົ້າໄປເຖິງເມືອງຖິນສີ ຣາສດອນພາກັນປູກຕົ້ນມອນ ລ້ຽງມອນ ລ້ຽງມອນໄດ້ ໔໐ ວັນ ກໍໄດ້ເສັ້ນໄໝ ເອົາມາຕ່ຳເປັນຜ້າໄໝຢ່າງງາມ. ເມືອງໄຕ້ຫວໍ້

ແລະເມືອງຂີລິມ ທາງຕາເວັນຕົກ ບໍ່ສູ້ລ້ຽງມ້ອນ ໃຊ້ແຕ່ໃບຂອງໝາກ ປົ໊ຫລໍ້ຊື(໔).

## ບໍ່ເກືອ

ທີ່ເມືອງ ລ່າມນິມ ມີບໍ່ເກືອ ເກືອບ່ອນນີ້ແມ່ນເກືອແນວຂາວທີ່ສຸດ ໃຊ້ເປັນເກືອສເວີຍຈຳເພາະກະສັດໜອງແສ ເມື່ອຕົ້ນເກືອໄດ້ພໍແລ້ວ ກໍໃຫ້ເລີກເຕົ້າຕົ້ນເສັຽ ທີ່ເມືອງກວັ້ນເຫັມງສຽງ ກໍມີບໍ່ເກືອ ທາງຣາຊການບໍ່ໄດ້ເກັບພາສີ ຣາສດອນໄດ້ອາສັຍເກືອບໍ່ນີ້.

## ຕົ້ນໄມ້ທີ່ເຮັດຄັນທະນູ

ເມືອງເວງຊຽງ ທາງຕາເວັນຕົກ ມີຕົ້ນມອນອັນເກີດຈາກພະລານຫີນ ຕົ້ນຄົດໄປງໍມາຍອດກ່ອງລົງ ຕົ້ນມອນນີ້ໃຊ້ເຮັດຄັນທະນູບໍ່ຕ້ອງໃຊ້ເອັນພັນໃຫ້ແໜ້ນໜາ ແລະ ບໍ່ຕ້ອງທາຊາດແຕ່ແຂງແຮງທົນທານດີ ຄັນທະນູແນວນີ້ ຮຽກວ່າ ເໜັງກົງ.

## ທອງຄຳ

ຕາມພູຕ່າງ ໆ ທີ່ເມືອງສ່ຽງຊຸ້ມ ມີແຮ່ທອງຄຳ ລາງເທື່ອຫາໄດ້ຕາມຊາຍຫາດກໍມີ ມີແຮ່ທອງຄຳຢ່າງກາງຫລາຍ.

## ມ້າດີ

ເມືອງປິດຍົ້ມ ຢູ່ທາງຕາເວັນຕົກມີປ່າຫຍ້າກວ້າງໃຫຍ່ ສຳຣັບລ້ຽງສັດ ມີມ້າແນວດີມີຊື່ສຽງຈົນຮຽກວ່າ ປິດຍົ້ມງຸມ (ມ້າແລ່ນໄວຂອງເມືອງປິດຍົ້ມ) ເມື່ອເກີດໃໝ່ໆ ຕົວນ້ອຍທໍ່ລູກຍອງ ລະຫວ່າງອາຍຸໄດ້ປີນຶ່ງ ໃຊ້ຫຍ້າແນວນຶ່ງຜູກມັນໄວ້ແລະລ້ຽງດ້ວຍນ້ຳເຂົ້າ ເມື່ອອາຍຸໄດ້ ໓ ປີ ໃຊ້ຂີ່ໄດ້ ສາມາດແລ່ນໄດ້ວັນລະຫລາຍຮ້ອຍລີ້.

## ການສະເດັດດຳເນີນ

ເມື່ອພຣະເຈົ້າແຜ່ນດິນກຸງນ່ານເຈົ້າ (ໜອງແສ) ສະເດັດໄປທີ່ໃດ ມີທຸງຕັ້ງໄວ້ ໒ ຄັນ ທຸງນັ້ນສີແດງແກມເຫລືອງ ກໍມີ ຂາວກໍມີ ແລະມີວີຂົນໄກ່ ໔ ອັນ ທຸງຂົນສັດ ຂວານດ້າມຍາວ ມີຮົ່ມທຳດ້ວຍຂົນນົກສີແດງແກມເຫລືອງກົງ ພຣະຊົນນີຂອງພຣະເຈົ້າແຜ່ນດິນ ຮຽກວ່າ ຊຸນໝັ້ນ ຫລື ເກົ້າໝັ້ນ ພຣະມະເຫສີຮຽກວ່າຈັນໂມຊຸນໝັ້ນ ເມື່ອພຣະຊົນນີ ແລະ ພຣະມະເຫສີສະເດັດໄປ ກໍມີທຸງສີແດງ ໒ ຄັນ ຕັ້ງໄວ້.

---

(໔). ຕົ້ນ ປົ໊ຫລໍ້ຊື ຈະແມ່ນຕົ້ນໄມ້ແນວໃດບໍ່ຊາບ ແຕ່ບອກວ່າມີຢູ່ໃນແຂວງໜ້ານຫອຍ ມີນກົນກວາງຕຸ້ງ ມັກປູກກັນນຳວັດ ໃນສມັຍຣາຊວົງຫລຽງ (ພ.ສ.໑໐໔໔–໑໑໐໐) ມີຂ້າຣາຊການຄົນນຶ່ງຊື່ ຕັດໄລ ຢູ່ເມືອງໃຊ້ ຫວິກ ເປັນຜູ້ເອົາໄປປູກ ຈຸມມາຈຶ່ງແຜ່ຫລາຍອອກໄປ.

## ເຄື່ອງແຕ່ງກາຍຂ້າຣາຊການ

ຂ້າຣາຊການຕັ້ງແຕ່ຕຳແໜ່ງ ໂສ້ວຈຽງ ລົງມາ ໃຊ້ຜ້າມັດແອວສີແດງ ຕຳແໜ່ງສູງກວ່າ ໂສ້ວຈຽງ ໃຊ້ຜ້າມັດແອວສີແດງແກມເຫລືອງ ຂ້າຣາຊການທີ່ທຳຄວາມຊອບ ໄດ້ເລື່ອນຊັ້ນ ຜ້າມັດແອວທີ່ຕ່ຳດ້ວຍແຜ່ນເງິນ ແຜ່ນຄຳ ໆາທຳດີອີກ ໄດ້ເລື່ອນ ໃຫ້ໃສ່ໜັງສື ຖ້າທຳຄວາມຊອບໜ້ອຍ ໃຫ້ນຸ່ງເສື້ອບໍ່ມີແຂນ ຕ່ຳກວ່ານັ້ນອີກ ໃຫ້ນຸ່ງ ເສື້ອແນວດຽວກັນ ຫາກມີແຕ່ທາງໜ້າທີ່ນັ້ນເປັນເຄື່ອງບອກຍົດ ສ່ວນທາງຫລັງໃຊ້ຜ້າທັມມະດາ.

## ລັກສນະ ຜູ້ຍິງລາວໜອງແສ

ຜູ້ຍິງບໍ່ໃຊ້ແປ້ງທາໜ້າແລະຂຽນຄິ້ວ ໃຊ້ແຕ່ນ້ຳມັນກົ່ມຈາກຕົ້ນມອນທາຜົມ ແມ່ຍິງຊັ້ນສູງນຸ່ງສິ້ນທຳດ້ວຍໄໝ ຜົມຖັກເປັນເປັຽຍ່ອນລົງມາທັງສອງຂ້າງ ແລ້ວເກົ້າໄວ້ຫູປະດັບດ້ວຍມຸກ ແກ້ວພິລາ ຫລື ຄຳ.

## ປະເພນີແຕ່ງດອງ

ຜູ້ສາວ ແມ່ຮ້າງ ແມ່ໝ້າຍ ຄົບຫາສະມາຄົມກັບຜູ້ຊາຍບໍ່ຜິດປະເພນີ ໃນຄືນວັນແຕ່ງດອງສົ່ງຂອງໃຫ້ກັນໂດຍລັບ ໆ ສ່ວນຜູ້ຍິງທີ່ມີຜົວຢູ່ ຖ້າໄປມີຊູ້ ຕ້ອງໂທດເຖິງຕາຍ.

## ຣະດູເດືອນ

ຊາວບ້ານໃຊ້ ຫຣົ້ນ ເປັນເດືອນອ້າຍ ຣະດູທັງ ໔ ຣະດູ ບໍ່ຜິດກັບຈີນຫລາຍ (ຫຣົ້ນ ເປັນຊື່ເດືອນອ້າຍຂອງຈີນບູຮານ)

## ອາຫານທີ່ຄົວດ້ວຍປາ

ປາຕັດເປັນທ່ອນ ໆ ທ່ອນນຶ່ງຍາວປະມານ ໑ ນີ້ວ ແກງໃສ່ໝາກອຶ ຫາກພິກ ແລະຜັກຫົມຂາວ ອາຫານແນວນີ້ ຮຽກວ່າ ຫງໍ້ອິດ.

## ດົນຕີແລະການລ້ຽງແຂກ

ຊາວໜອງແສໃຊ້ເປົ່າດົນຕີແນວນຶ່ງ ຮັດດ້ວຍໝາກແຕງແນວນຶ່ງ (ເຫັນຈະແມ່ນໝາກນ້ຳເຕົ້າ) ກັບໄມ້ ຮຽກວ່າ ຜົວຊັ້ງ ຜົວຊັ້ງນັ້ນ ມີຮູສຳລັບນັບ ໔ ຮູ (ເຫັນຈະແມ່ນແຄນ) ເມື່ອເອົາເຫລົ້າຕ້ອນຮັບແຂກໃຊ້ຜົວຊັ້ງຮອງຈອກເຫລົ້າໄວ້ ແລ້ວຂໍໃຫ້ໄທແຂກດື່ມ.

## ສິນຄ້າທີ່ຂາຍກັນໃນຕລາດ

ຜ້າໄໝທັມມະດາຢ່າງມີສີ ຜ້າໄໝຢ່າງດີສີຂາວ ເອົາແລກປ່ຽນກັນກັບເປືອກຫອຍ (ໝາກເບັ້ຽ) ຂນາດຂອງເປືອກຫອຍໃຫຍ່ທີ່ນອນມີ ໑໖ ອັນເປັນນຶ່ງມັດ.

## ວິນັຍທະຫານ

ເມື່ອເວລາອອກເສິກທະຫານຄົນນຶ່ງ ໆ ໄດ້ຮັບສະບຽງອາຫານ ຍັດເຕົ໋າອິ໊ຊົ໊ງ ກອງທັບນຶ່ງມີກຳລັງທະຫານ ໘໕໐໐ ຄົນ ເມື່ອອອກເລວກັນ ທະຫານຜູ້ຖືກບາດເຈັບທາງໜ້າ ໄດ້ຮັບການປິ່ນປົວ ຖ້າບາດເຈັບທາງຫລັງ ໃຫ້ຂ້າຖິ້ມ.

## ການໄຖນາ

ການໄຖນາ ໃຊ້ງົວ ຫລື ຄວາຍ ຕົວນຶ່ງ ມີຄົນຈູງ ມີ ຄົນຜູກງົວໃຫ້ແໜ້ນຕິດກັບຄັນໄຖບ່ອນກາງຕົວ ຣາສດອນມີອາຊີບທາງກະສິກັມເປັນຫລັກ ຣາສດອນທຸກຄົນບໍ່ເລືອກຊັ້ນພາກັນປູກເຂົ້າ ບໍ່ຖືກເກນໄປໃຊ້ງານໂຍທາ ໃນປີນຶ່ງ ໆ ຣາສດອນຄົນນຶ່ງຕ້ອງສົ່ງເຂົ້າ ຈຳນວນສອງເຕົ໋າ ໃຫ້ຝ່າຍປົກຄອງ ແທນຄ່າພາສີຄ່ານາ ເຈົ້າໜ້າທີ່ຝ່າຍປົກຄອງຕ້ອງຫານາໃຫ້ຊາວນາທຳ ເມື່ອເກັບກ່ຽວແລ້ວກໍສົ່ງເຂົ້າຄ່ານາໃຫ້ແກ່ເຈົ້າໜ້າທີ່.

## ບົດທີ ໔

## ອານາຈັກລາວລ້ານຊ້າງ

## ເຈົ້າຂຸນລໍ

## ປະຖົມກະສັດ ແຫ່ງ ອານາຈັກລ້ານຊ້າງ

ໄດ້ກ່າວມາແລ້ວໃນບົດທີ ໑ ຕອນມູນເຫດທີ່ພວກຂອມອົພຍົບ ເຂົ້າມາຢູ່ໃນສຸວັນນະພູມປະເທດວ່າ ໃນລະຫວ່າງສັຕວັດທີ່ ໖ ເຖິງທີ ໗ ແຫ່ງຄິສຕະສັກຣາດນີ້ ພວກຂອມມີກຳລັງອຳນາດຮຸ່ງເຮືອງຢູ່ໃນສຸວັນນະພູມປະເທດ ແລະໄດ້ຂຍາຍອຳນາດຂຶ້ນໄປເຖິງນະຄອນຊຽງແສນ ໃນສມັຍນີ້ ໄດ້ມີກະສັດຂອມອົງນຶ່ງນາມວ່າ ຂຸນເຈືອງຟ້າທັມມະຣາດ ຫລື ຂຸນຮຸ່ງ(໑) (ເຊິ່ງໄທໃຕ້ແລະຂເມນເອີ້ນພຣະຣ່ວງ) ສເວີຍຣາຊສົມບັດຢູ່ນະຄອນເງິນຍາງ ຄື: ເມືອງຊຽງແສນຂຸນເຈືອງໄດ້ທຳສົງຄາມກັບພວກແກວແລະຕີເອົາເມືອງປະກັນ (ຊຽງຂວາງ) ຂອງແກວໄດ້ ເຈົ້າແອງກາ ເຈົ້ານະຄອນປະກັນຕາຍໃນສນາມຣົບ ຂຸນເຈືອງໄດ້ເມືອງປະກັນແລ້ວ ຈຶ່ງທຳການສລອງຊັຍຢູ່ເມືອງປະກັນເຖິງ ໗ ເດືອນ ໃນການສລອງຊັຍຄັ້ງນີ້ ຂຸນເຈືອງໄດ້ຈັດໃຫ້ທຳເຫລົ້າໄຫລ້ຽງໄພ່ພົນເປັນອັນມາກ ໄຫຫີນທີ່ຢູ່ໃນແຂວງຊຽງຂວາງ ຈຶ່ງຖືກັນວ່າ ເປັນໄຫເຫລົ້າເຈືອງຕໍ່ມາຈົນທຸກວັນນີ້.

ຄັນສລອງຊັຍສຳເຣັດແລ້ວ ຂຸນເຈືອງຈຶ່ງໄດ້ຕັ້ງໃຫ້ ຂຸນຄວາງຢູ່ຮັກສາເມືອງ ສ່ວນພຣະອົງໄດ້ກັບຄືນມາຄອງນະຄອນ ຊຽງແສນ ໃນເວລານັ້ນ ແມ່ທັບແກວຄົນນຶ່ງ ຊື່ ທຸມບັງ ໄດ້ຍົກທັບມາຕີນະຄອນປະກັນອີກ ຂຸນເຈືອງໄດ້ຊາບກໍຍົກທັບມາຜາບທຸມບັງ ໆ ສູ້ບໍ່ໄດ້ ຈຶ່ງໜີໄປເພິ່ງ ທ້າວຟ້າຮ່ວນ(໒) ເມືອງຕຸມວາງ ຂຸນ

---

(໑) ຂຸນເຈືອງນີ້ ໃນໜັງສືພົງສາວະດານໂຍນົກກ່າວໄວ້ວ່າ ທ້າວເຈືອງເກີດປີຈຸລສັກຣາດ ໔໖໑ ເມື່ອອາຍຸໄດ້ ໓໔ ປີໄດ້ຍົກທັບໄປຕີເມືອງແກວປະກັນ ໃນຈູລສັກຣາດ ໔໙໖ ເມື່ອອາຍຸໄດ້ ໗໗ ປີໄດ້ຍົກທັບໄປຕີເມືອງແມນຕາທອບຂອບຟ້າຕາປຶ້ນແລ້ວຖືກພວກແມນຂ້າຕາຍກັບຄໍຊ້າງ. ແລ້ວກ່າວວ່າຂຸນເຈືອງເປັນກະສັດໄທ, ຂ້າພະເຈົ້າເຫັນວ່າ ຂຸນເຈືອງແມ່ນຄົນຊາດຂອມ ເພາະໃນຕຳນານຂຸນເຈືອງເອງບອກໄວ້ຄັກແນ່ວ່າ ເປັນພວກເມັງ. ພວກເມັງ, ມອນ, ຂອມເປັນພວກດຽວກັນ ຂຸນເຈືອງໄປຮົບລູ່ພວກແມນນັ້ນ ແມ່ນຮົບລູ່ກັບພວກລາວຊາວໜອງແສນັ້ນເອງ ດັ່ງມີກ່າວໄວ້ໃນເຣື່ອງທ້າວເຈືອງທີ່ເປັນຄຳກອນບົດນຶ່ງວ່າ "ບ່າວຍີ່ໄດ້ ແມນປີກຕັດຄໍ ຊາວໜອງແສປີກໜີວາງດ້າງ" ແຕ່ໃນພົງສາວະດານໂຍນົກ ບໍ່ໄດ້ບອກໄວ້ວ່າ ແມນນັ້ນແມ່ນຄົນຊາດໃດ ສ່ວນສັກຣາດນັ້ນ ຜິດກັນຕັ້ງ ໔໐໐ ປີປາຍ.

(໒) ເຈົ້າຟ້າຮ່ວນ ແມ່ນລາວເມືອງຕຸມວາງ ເປັນຕົວເມືອງຂຶ້ນກັບນະຄອນກາຫລົງ ໃນຕຳນານບອກວ່າ ດາວທາງຫ່າງຈາກຕຸມວາງເຖິງກາຫລົງ ໑໔ ວັນ.



<u>ເຈົ້າຊຸບລໍ</u>

ເຈືອງຍົກທັບນຳໄປເຖິງເມືອງຖຸມວາງ ໄດ້ຕໍ່ສູ້ກັນເປັນສາມາດ ເຈົ້າຟ້າຣ່ວມ ເຫັນວ່າຈະປ້ອງກັນເມືອງໄວ້ບໍ່ໄດ້ ຈຶ່ງແຕ່ງທູດຂຶ້ນໄປເຊີນເຈົ້າຂຸນລໍ ທີ່ນະຄອນກາຫລົງ ໃຫ້ລົງມາຊ່ວຍ ພຣະເຈົ້າຂຸນລໍໄດ້ຮັບພຣະຣາຊສານນັ້ນແລ້ວ ທົງພິຈາຣະນາເຫັນວ່າ ເວລານີ້ການສົງຄາມທາງເມືອງຈີນຍັງສງົບຢູ່ ຄວນຈະຂຍາຍອຳນາດລົງມາທາງໃຕ້ ຈຶ່ງຮັບຄຳເຊີນຂອງເຈົ້າຟ້າຣ່ວມ ແລ້ວກໍຍົກຣີພົນໂຍທາທະຫານລົງມາຜາບຂອມທີ່ເມືອງຖຸມວາງ ພຣະອົງໄດ້ເຂົ້າຊົນຊ້າງກັບຂຸນເຈືອງແລະຟັນຂຸນເຈືອງຕາຍກັບຄໍຊ້າງ ກອງທັບຂອມເລີຍແຕກ ພຣະເຈົ້າຂຸນລໍນຳໄລ່ພວກຂອມລົງມາເຖິງເມືອງຊວາ(໑) (ເມືອງຫລວງພຣະບາງ) ເຂົ້າຕີເມືອງຊວາໄດ້ຈາກຂຸນກັນຣາງ ແລ້ວພຣະອົງຈຶ່ງຈັດຕັ້ງເມືອງຊວາຂຶ້ນເປັນຣາຊທານີແຫ່ງປະເທດລາວລ້ານຊ້າງ ເປັນຄັ້ງແຣກໃນລະຫວ່າງປີ ພ.ສ.໑໓໐໐ (ຄ.ສ.໗໕໗) ແລ້ວປ່ຽນນາມເມືອງໃຫມ່ວ່າ ເມືອງຊຽງທອງ ຕັ້ງແຕ່ນັ້ນມາຈີນຊາດລາວເຮົາ ຈຶ່ງໄດ້ຫລັ່ງໄຫລລົງມາຕັ້ງບ້ານເມືອງຢູ່ໃນດິນແດນລ້ານຊ້າງແລະແຜ່ພາຍອຳນາດອອກໄປຢ່າງກວ້າງຂວາງແທນພວກຂອມ ໃຫ້ຖອຍໄປທາງເມືອງນ່ານ ແລະອີກພວກນຶ່ງຖອຍລົງມາທາງວຽງຈັນ.

ພວກຂອມທີ່ເປັນຊາວບ້ານປ່າຂາດອນ ອົພຍົບ ຫນີບໍ່ທັນຈຶ່ງຫລືອຄ້າງຢູ່ເປັນຊາວພູຊາວດອຍ ເຊິ່ງທຸກວັນນີ້ເຮົາຮຽກວ່າພວກຂມຸ, ຂ່າ, ຫລື ລາວເທິງ ນັ້ນເອງ.

ຈີນຊາດລາວໄດ້ເຂົ້າມາຕັ້ງຫລັກຖານຢູ່ໃນດິນແດນອັນເປັນປະເທດລາວພາກເຫນືອທຸກວັນນີ້ ແຕ່ຄັ້ງຂຸນລໍດັ່ງກາວມາແລ້ວ ແລະແຕ່ນັ້ນມາກໍມີພຣະມະຫາກະສັດລາວໄດ້ສເວີຍຣາຊສົມບັດໃນນະຄອນຊຽງທອງສືບຕໍ່ກັນມາອີກຫລາຍອົງ(໒)ຈຶ່ງມາເຖິງສມັຍ ເຈົ້າຟ້າງຸ່ມ ຄິດເປັນເວລານານເຖິງ ໔໐໐ ປີປາຍ.

---

(໑) ເມືອງຊວາ ເອີ້ນຕາມນາມຂອງຈີນຊາດຜູ່ເປັນເຈົ້າຂອງເດີມຄື ພວກຂອມຊວາເຊິ່ງທຸກວັນນີ້ກາຍມາເປັນພວກແຂກຊວາ.

(໒) ກະສັດລາວທີ່ສືບຕໍ່ກັນມານັ້ນ ມີນາມຜາກົດຢູ່ໃນຕຳນານພື້ນເມືອງດັ່ງນີ້:

| | |
|---|---|
| ໑. ຂຸນຊວາ | ໑໒. ຂຸນມີ |
| ໒. ຂຸນຊວຍ | ໑໓. ຂຸນຄຳ |
| ໓. ຂຸນສູງ | ໑໔. ຂຸນຮຸ່ງ |
| ໔. ຂຸນເຄັດ | ໑໕. ທ້າວແທນ |
| ໕. ຂຸນຄຸມ | ໑໖. ທ້າວເຢີກ |
| ໖. ຂຸນຄິນ | ໑໗. ທ້າວພິນ |
| ໗. ຂຸນຄິວ | ໑໘. ທ້າວພາດ |
| ໘. ຂຸນຄາງ | ໑໙. ທ້າວຫວ້າງ |
| ໙. ຂຸນເຄັມ | ໒໐. ພຣະຍາລົງ |

໑໐. ຂຸນແມງ — ໒໑. ພຣະຍາຄຳຜົງ

໑໑. ຂຸນເມິງ — ໒໒. ເຈົ້າຟ້າງັ່ວ

ແຕ່ໃນໜັງສືພື້ນຂຸນບໍຣົມອີກຜູກນຶ່ງກ່າວລຳດັບພຣະກະສັດຕໍ່ຈາກຂຸນລໍລົງມາດັ່ງນີ້:

໑. ຂຸນຊວາ — ໗. ທ້າວຟ້າພານ

໒. ຂຸນຍີ່ບາ — ໘. ທ້າວຟ້າກ່ຳ

໓. ຂຸນລູລື — ໙. ທ້າວອູນອງ

໔. ທ້າວລອງ — ໑໐. ທ້າວພອງກຶມ

໕. ທ້າວລື — ໑໑. ທ້າວຟ້າໂງ່ມ

໖. ທ້າວຟ້າຍານ — ໑໒. ທ້າວຟ້າງັ່ວ ຫລື ທ້າວຜີຟ້າ

ໃນໜັງສືຂຸນບໍຣົມຜູກ ໒ ເຊິ່ງໄດ້ມາຈາກວັດສີສະເກດວຽງຈັນ ກ່າວລຳດັບວົງຂອງພຣະເຈົ້າຟ້າງຸ່ມໄວ້ດັ່ງນີ້:

ເຈົ້າຟ້າຫລວງໂງ່ມ (ຫລືພຣະຍາສຸວັນນະຄຳຜົງ) ມີພຣະຣາຊໂອຣົດ ໒ ອົງຄື: ໑. ເຈົ້າຟ້າງັ່ວ (ຫລືຂຸນຜີຟ້າ) ໒. ເຈົ້າຟ້າຄຳຮຽວ.

ເຈົ້າຟ້າງັ່ວມີພຣະຣາຊໂອຣົດ ໔ ອົງ ຊາຍ ໒ ຍິງ ໒ ຜູ້ລູກຫລ້ານັ້ນຊື່ ຟ້າງຸ່ມ ມີແຂ້ວເກີດມາພ້ອມ ໃນນິທານຂຸນບໍຣົມ ສະບັບສໍາມຸດບາງກອກ ເຊິ່ງພິມໄວ້ໃນປະຊຸມພົງສາວະດານໄທພາກ ໑໐ ກ່າວເຖິງວົງເຈົ້າຟ້າງຸ່ມໄວ້ດັ່ງນີ້ "ເຂົາຈຶ່ງເອົາຍາຫລວງໂງ່ມມາເປັນເຈົ້າແຜ່ນດິນ ມີລູກ ໙ ຄົນ ຜູ້ຍິງ ໔ ຄົນ ລູກ ໙ ຄົນນີ້ເອົາບໍ່ຈາກ່ອນແລ ເຂົາທໍ່ຈັກຈາຜູ້ກິນເມືອງແທນຫລວງໂງ່ມແລ ເຂົາຈຶ່ງເອົາຍາຄຳຮຽວ ຜູ້ເປັນລູກຊາຍມາເປັນເຈົ້າແຜ່ນດິນແທນ ຍາຄຳຮຽວມີ ໔ ຄົນຜູ້ຍິງ ໒ ຜູ້ຊາຍ ໒ ຜູ້ນ້ອງຫລ້ານັ້ນ ມີແຂ້ວອອກພົມ ເຫລັ້ມ ແຕ່ໃນທ້ອງອອກມາ ເສນາອາມາດທັງຫລາຍວ່າເຂັດຂວາງ ຈັກແພ້ບ້ານເມືອງ ວ່າດັ່ງນັ້ນ ເຂົາຈຶ່ງໃສ່ແພໄຫລເສັຽ ຯລຯ"

## ໑. ຣັຊການພຣະເຈົ້າຟ້າງຸ່ມ (ພຣະຍາຟ້າຫລ້າທໍຣະນີ)

ນັບຈາກລາວໄດ້ເຂົ້າມາຕັ້ງຫລັກຖານຢູ່ໃນດິນແດນສູວັນນະພູມປະເທດ ຕອນທີ່ເປັນອານາເຂດນະຄອນຫລວງພຣະບາງທຸກວັນນີ້ ຕັ້ງແຕ່ຂຸນລໍ ແລະຕໍ່ຈາກນັ້ນມາກໍມີພຣະກະສັດລາວ ໄດ້ສເວີຍຣາຊສົມບັດໃນນະຄອນຊຽງທອງປົກຄອງໄພ່ຟ້າເປັນສຸກ ສືບມາເຖິງ ໒໒ ອົງ(ດັ່ງກ່າວແລ້ວ) ກະສັດອົງທີ ໒໒ ນັ້ນ ຊົງພຣະນາມວ່າ ພຣະເຈົ້າຟ້າງຽວ ເຊິ່ງໃນຕຳນານລາວພູກເອີ້ນວ່າ ຂຸນຜີຟ້າ(໑)ເຈົ້າຟ້າງຽວເປັນພຣະຣາຊໂອຣົດຂອງເຈົ້າຟ້າຫລວງໂງ່ມ ຫລື ພຣະຍາສູວັນນະຄຳຜົງ ເມື່ອເຈົ້າຟ້າຫລວງໂງ່ມ ສະເດັດສູ່ຣະຄົດແລວ ເຈົ້າຟ້າງຽວກໍໄດ້ສເວີຍຣາຊສົມບັດແທນ ເຈົ້າຟ້າງຽວຈຶ່ງມີພຣະຣາຊໂອຣົດແລະພຣະຣາຊທິດາຣວມທັງຫມົດ ໔ ອົງເປັນຊາຍ ໒ ເປັນຍິງ ໒ ອົງຫລານາມວ່າ ເຈົ້າຟ້າງຸ່ມ.

ເຈົ້າຟ້າງຸ່ມປະສູດໃນປີມະໂຮງ ຈຸລສັກຣາດ ໖໗໘(໒) (ຄ.ສ.໑໓໑໖) ພຣະອົງເປັນພຣະຣາຊໂອຣົດ ຂອງພຣະເຈົ້າຟ້າງຽວ (ຫລືຂຸນຜີຟ້າ) ເວລາປະສູດອອກມານັ້ນ ມີພຣະທົນເກີດມາພ້ອມທັງ ໓໓ ເຫລັ້ມ ພວກອາມາດຣາຊບູນຕີທັງຫລາຍ ເຫັນດັ່ງນັ້ນ ຢ້ານຈະເປັນຄົນຂັດຂວາງ ແຜ່ບ້ານແຜ່ເມືອງ ຈຶ່ງພ້ອມກັນກາບທູນພຣະຣາຊບິດາ ຂໍໃຫ້ເອົາໄຫລນ້ຳເສັຽ ພຣະເຈົ້າຟ້າງຽວຂັດຂືນຄຳເສນາບໍ່ໄດ້ ຈຶ່ງຕັດສັ່ງໃຫ້ເອົາທ້າວຟ້າງຸ່ມໃສ່ແພໄຫລນ້ຳ ພ້ອມດ້ວຍພີ່ລ້ຽງນາງນົມແລະຂ້ອຍໃຊ້ ຄື: ປູ່ລ້ຽງ ໑ ນາລ້ຽງ ໑ ຕາລ້ຽງ ໑ ອາວລ້ຽງ ໑ ພີ່ລ້ຽງ ໑ ຂ້ອຍລ້ຽງ ໖ ຄົນ ຄື: ບາໄບ, ບາຄູມ, ບາສຽມ, ບາຈີ່ແຂ, ບາຈີນ, ບາຈູ ແລະບໍ່ຣິວານອີກ ໓໓ ຄົນ.

ແພຂອງທ້າວຟ້າງຸ່ມໄຫລໄປຕາມແມ່ນ້ຳຂອງໄດ້ປີນຶ່ງ ຈຶ່ງໄປເຖິງລີ່ຜີ ເວລານັ້ນມີພຶກຂຸຊາວຂເມນຄົນນຶ່ງນາມວ່າ ພຣະມະຫາປາສມັນ ອາສັຍຢູ່ວັດຄູຫາໃກ້ກັບຫົວຫາດລີ່ຜີ ພຣະມະຫາສມັນ ໄດ້ເຫັນແພຂອງທ້າວຟ້າງຸ່ມມາຈອດຢູ່ທີ່ນັ້ນ ແລະໄດ້ຊາບວ່າເປັນພຣະຣາຊໂອຣົດແຫ່ງກະສັດລາວ ກໍເອົາໄປລ້ຽງໄວ້ ແລ້ວສັ່ງສອນຄວາມຮູ້ສິລປະວິທຍາການຕ່າງ ໆ ໃຫ້ ເມື່ອພຣະກຸມມານມີພຣະຊົນຈະເຣີນມາໄດ້ ໓ - ໗ ປີຈຶ່ງເອົາເມືອຖວາຍພຣະເຈົ້າແຜ່ນດິນປະເທດຂເມນທີ່ເມືອງນະຄອນຫລວງ (ຄືນະຄອນທົມທຸກວັນນີ້).

---

(໑) ຄຳວ່າ ຜີຟ້າ ນັ້ນ ເປັນຄຳທີ່ພວກລາວເອີ້ນພວກຂເມນວ່ານະຄອນຜີຟ້າ ດັ່ງກ່າວໄວ້ໃນນິທານຂຸນບໍຣົມຕອນໄຫລທ້າວຟ້າງຸ່ມວ່າ "ຂ້ອຍທັງຫລາຍຝູງນີ້ໃຫ້ໄຫລໄປດອມພຣະຍາຟ້າງຸ່ມ ແລ້ວໄຫລໄປຮອດທ່ານມະຫາຄຣູຣະເຈົ້າປາສມັນ ອັນມີໃນເມືອງນະຄອນຜີຟ້ານັ້ນ".

(໒) ໃນສະບັບນຶ່ງວ່າປີຈຸລສັກຣາດ ໖໙໐ (ຄ.ສ.໑໓໔໘).

ພຣະກຸມມານຟ້າງຸ່ມ ປະທັບຢູ່ໃນພຣະຣາຊວັງພຣະເຈົ້າແຜ່ນດິນຂແມນ ໄດ້ສຶກສາສິລປະວິທຍາການຕ່າງ ໆ ຢ່າງດຽວກັນກັບພຣະກຸມມານຂແມນທັງຫລາຍຈົນຊຳນານ ພຣະເຈົ້າແຜ່ນດິນຂແມນທັງເຫັນຄວາມສລາດສາມາດຫລັກແຫລມຂອງເຈົ້າຟ້າງຸ່ມດັ່ງນັ້ນ ຈຶ່ງໄດ້ມອບພຣະຣາຊທິດາຂອງພຣະອົງ ຜູ້ມີນາມວ່າ ນາງແກ້ວເກັງຍາໃຫ້ເປັນພຣະເທວີຂອງທ້າວຟ້າງຸ່ມ ໂດຍພຣະອົງມີພຣະປະສົງຈະຜູກໄມຕຣີຮັບຊົນຊາດລາວໄວ້ ແລະທ້າວຟ້າງຸ່ມກໍປະທັບຢູ່ທີ່ນັ້ນຕໍ່ມາ ຈົນພຣະຊົນໄດ້ ໑໖ ປີ (໑)

ໃນລະຫວ່າງປີ ຄ.ສ.໑໓໔໓ ເຈົ້າຟ້າງຽວບິດາເຈົ້າຟ້າງຸ່ມ ສະເດັດສູຣະຄົດ ເສນາອາມາດທັງຫລາຍ ຈຶ່ງເຊີນເຈົ້າຟ້າຄຳຮຽວ ພຣະອະນຸຊາໃຫ້ຂຶ້ນສເວີຍຣາດແທນ ຝ່າຍເຈົ້າຟ້າງຸ່ມທີ່ປະທັບຢູ່ປະເທດຂແມນ ຄັນໄດ້ຊາບຂ່າວວ່າ ພຣະຣາຊບິດາສະເດັດສູຣະຄົດແລ້ວ ແລະອາວໄດ້ຄອງເມືອງແທນ ຈຶ່ງທູນຂໍເອົາກອງທັບຂແມນຂຶ້ນມາຕີເອົາປະເທດລາວ.

ການທີ່ພຣະເຈົ້າແຜ່ນດິນ ຂແມນມີຄວາມເມດຕາລ້ຽງເກືອພຣະເຈົ້າຟ້າງຸ່ມໄວ້ຈົນເຖິງໄດ້ພຣະຣາຊທານພຣະທິດາໃຫ້ເປັນເທວີແລະມອບກອງທັບໃຫ້ນັ້ນ ເນື່ອງຈາກໃນເວລານັ້ນ ປະເທດຂແມນກຳລັງໄດ້ປະສົບພັຍຈາກການໂຄບຊີງຂອງໄທ ທັງປະເທດຂແມນກໍອ່ອນອິສຣະພາບລົງ ນະຄອນສຸໂຂໄທເຊິ່ງເປັນເມືອງຫລວງຂອງໄທ ໃນສມັຍນັ້ນ ແຕ່ກ່ອນເຄີຍເປັນເມືອງຂຶ້ນຂອງຂແມນ ກໍໄດ້ແຍກອອກເປັນອິສຣະຢ່າງເດັດຂາດໂດຍອຳນາດຂອງຂຸນຜາເມືອງແລະຂຸນບາງກາງທ້າວເຈົ້າເມືອງບາງຍາງໃນປີ ຄ.ສ.໑໒໔໗ ຕໍ່ມາເຖິງ ຄ.ສ.໑໒໘໒ ຂຸນຣາມຄຳແຫງ ເຈົ້າເມືອງສຸໂຂໄທ ກໍໄດ້ແຜ່ພາຍອານາເຂດປະເທດໄທອອກໄປຢ່າງກວ້າງຂວາງ ໂດຍຊີງເອົາແດນດິນຂອງຂແມນໄດ້ຫລາຍເມືອງ ໃນທາງຕາເວັນອອກ ຕັ້ງແຕ່ເມືອງສຣະຫລວງຄືເມືອງໜອງຫານລົງໄປຈົນເຖິງເມືອງຮ້ອຍເອັດແລະໂຄຣາດ ຝ່າຍຂແມນມີແຕ່ອ່ອນອຳນາດລົງເລື້ອຍ ຈົນບໍ່ສາມາດປ້ອງກັນການຮຸກຮານຂອງໄທໄດ້.

ອາສັຍເຫດດັ່ງກ່າວນີ້ ພຣະເຈົ້າແຜ່ນດິນເມືອງຂແມນ ມີຄວາມປະສົງຈະແກ້ແຄ້ນໄທ ຫລືຢ່າງນ້ອຍກໍພະຍາຍາມປ້ອງກັນໄທບໍ່ໃຫ້ແຜ່ພາຍອອກໄປໄດ້ອີກ ຈຶ່ງໄດ້ທຳສນັບສນູນເຈົ້າຟ້າງຸ່ມໂດຍຫວັງຈະອາສັຍກຳລັງຂອງເຈົ້າຟ້າງຸ່ມ ໃຫ້ຊ່ອຍປ້ອງກັນການຮຸກຮານຂອງໄທ.

## ເຈົ້າຟ້າງຸ່ມສະເດັດກັບຄືນປະເທດລາວ

ເຖິງ ຄ.ສ.໑໓໔໙ (ພ.ສ.໑໘໙໒) ພຣະເຈົ້າຟ້າງຸ່ມ ກັບພຣະນາງແກ້ວເກັງຍາ ອັຄມະເຫສີ ກໍກາບທູນລາພຣະເຈົ້າແຜ່ນດິນຂແມນ ຍົກຈະຕຸຣົງຄະເສນາໂຍທາຕາມຂຶ້ນມາປະເທດລາວມາເຖິງເມືອງປາກກິບ(໒) ກໍຍົກກອງທະຫານເຂົ້າຕີເມືອງປາກກິບໄດ້ ພຣະຍາພົມມະທັດເຈົ້າເມືອງປາກກິບຖືກຟັນຕາຍ

---

(໑) ບາງຜູ້ກໍກ່າວວ່າໄດ້໒໑ປີ. (໒) ເມືອງປາກກິບຈະແມ່ນເມືອງໃດບໍ່ຊາບ ແຕ່ສັນນິດຖານວ່າຄົງຈະແມ່ນເມືອງຢູ່ບ່ອນປາກນ້ຳຊີ ໄຫລຕົກນ້ຳມູນເຊິ່ງຢູ່ໃນເຂດຈັງຫວັດອຸບົນທາງຕາເວັນຕົກ ເພາະຕາມລະຍະນີ້

ກັບຄໍຊ້າງ ສົມເດັດພຣະເຈົ້າຟ້າງຸ່ມຈຶ່ງຕັ້ງຫລານພຣະຍາພົມມະທັດ ໃຫ້ເປັນເຈົ້າເມືອງແທນ, ແລະທັງຕັ້ງຜູ້ນຶ່ງໃຫ້ເປັນພຣະຍາກຳແຫງ, ຜູ້ນຶ່ງເປັນ ພຣະຍາດອນແດງ, ຜູ້ນຶ່ງເປັນພຣະຍາໂສກ, ຜູ້ນຶ່ງເປັນພຣະຍາຈັນທອນຜູ້ນຶ່ງເປັນພຣະຍາຄອງທອງ, ຜູ້ນຶ່ງເປັນພຣະຍາອາຍ ບັງຄັບໃຫ້ພຣະຍາເຈົ້າເມືອງເຫລົ່ານີ້ ສົ່ງສ່ວຍຊ້າງ ສ່ວຍຄຳ ແລະຂອຍຂ້າທຸກ ໆ ເມືອງ.........

ເມື່ອຈັດການເມືອງປາກກົບບໍຣະບວນແລ້ວ ກໍຍົກທັບມາເຖິງເມືອງກະບອງ(໑)ເຂົ້າຕີເອົາເມືອງກະບອງໄດ້ ພຣະຍານັນທະເສນ(໒) ເຈົ້າເມືອງກະບອງຂີ່ຊ້າງໜີ ກອງທັບຟ້າງຸ່ມນຳຈັບໄດ້ທີ່ປາກທອກ(໓) ແລ້ວເອົາປະຫານຊີວິດເສັຽ ເມື່ອຕີເມືອງກະບອງແລ້ວ ພຣະອົງຈຶ່ງຕັ້ງນ້ອງຊາຍພຣະຍານັນທະເສນເປັນພຣະຍາກະບອງແທນ ບັງຄັບໃຫ້ພຣະຍາກະບອງໃຫມ່ນີ້ ສົ່ງສ່ວຍຊ້າງຮ້ອຍໂຕຄົນລ້ຽງຊ້າງສອງຮ້ອຍຄົນ ຂ້ອຍຍິງຂ້ອຍຊາຍສອງຮ້ອຍຄົນ ຄຳໜັກສອງພັນບາດ ແລະຮົວແຮແພຈີນສອງຮ້ອຍພັບ ເວລາປະທັບຢູ່ເມືອງກະບອງນີ້ ພຣະອົງໄດ້ແຕ່ງກອງທະຫານອອກຫາຕີ ເອົາບ້ານນ້ອຍເມືອງໃຫຍ່ ໄດ້ຫລາຍເມືອງ ຄື: ເມືອງພຣະຍາຈຳປາ, ເມືອງພຣະຍາຈີມ, ເມືອງພຣະຍາຈານ, ເມືອງພຣະຍາດອນຊັກແຄ ຫລື ດອນຊະແຄ, ເມືອງພຣະຍາຊະນັງ, ເມືອງພຣະຍາຊຽງ, ເມືອງພຣະຍາໂສກ(໔) ແລ້ວບັງຄັບໃຫ້ພວກເຈົ້າເມືອງເຫລົ່ານັ້ນສົ່ງສ່ວຍ ສູດມານ(ຜ້າກັ້ງ)ຜ້າຍໄຫມ, ທອງຄຳ, ຊ້າງຈຳຫງາຍ ແລະຂ້ອຍທຸກ ໆ ເມືອງ ສຳເຣັດບໍຣະບວນແລ້ວຈຶ່ງຍົກທັບຂ້າມນ້ຳມືນບູນ ມາເຖິງເມືອງວຽງ(໕) ຈັບເຈົ້າເມືອງປະຫານຊີວິດແລ້ວຕັ້ງນ້ອງຊາຍພຣະຍາວຽງ ໃຫ້ເປັນພຣະຍາເຈັດຈຽງແທນ ແລະຕັ້ງຜູ້ນຶ່ງໃຫ້ເປັນພຣະກວາງສຽມ, ຜູ້ນຶ່ງເປັນພຣະຍາກວາງທົ່ງ, ຜູ້ນຶ່ງເປັນພຣະຍາເມືອງຫລວງ, ພຣະຍາເມືອງມານ, ພຣະຍາເມືອງວັງ, ພຣະຍາກະຕາກພຣະຍາຊຸມພອນ, ພຣະຍາສະໂບນ ໃຫ້ພຣະຍາເຫລົ່ານີ້ສົ່ງສ່ວຍຝ້າຍໄຫມ, ຜ້າກັ້ງ ຜ້າພິດານ ແລະຂ້ອຍຂ້າທຸກ ໆ ເມືອງສຳເຣັດແລ້ວ ສະເດັດຍົກມາຕັ້ງຢູ່ແຄມນ້ຳກະດິງ ພຣະຍາສາມຄອມ ເຈົ້າເມືອງ

---

ແມ່ນທາງເດີນຂອງພວກລາວແລະຂເມນທີ່ໄປມາຕິດຕໍ່ກັນ.

(໑) ເມືອງກະບອງແມ່ນເມືອງໂຄຕະບູນ ແຕ່ເດີມຢູ່ໃຕ້ນ້ຳເຊບັ້ງໄຟພາຍລູນຍ້າຍມາຕັ້ງຢູ່ຕາເວັນຕົກທາດພະນົມເບື້ອງໜ້າເມືອງມະຫາຊະນະຄອນ ເມື່ອ ຄ.ສ. ໑໘໕໗ ເຈົ້າສີໂຄດໂອຣົດຂອງເຈົ້າຣາມບັນດິດຈຶ່ງຍ້າຍມາຢູ່ຝັ່ງຊ້າຍຄືທີ່ເມືອງເກົ່າທ່າແຂກທຸກວັນນີ້. (໒) ພຣະຍານັນທະເສນນັ້ນ ໃນຕຳນານຂຸນບໍຣົມເອີ້ນວ່າ ພຣະຍາແປແປ້ ອີກສະບັບນຶ່ງ ເອີ້ນວ່າ ພຣະຍາສາມລານ. (໓) ປາກທອກຈະແມ່ນບ່ອນໃດບໍ່ຊາບ. (໔) ເມືອງເຫຼົ່ານີ້ຈະແມ່ນເມືອງໃດບໍ່ຊາບ. (໕) ເມືອງວຽງຢູ່ຝາກນ້ຳກົມບູນມາທາງຕາເວັນຕົກ ເມືອງນີ້ໃນສມັຍພຣະໄຊເຊດຖາ ຮຽກວ່າ ເມືອງສູຣິນຫລືວຽງສູຣິນ. (໖) ເມືອງພຣະນ້ຳຮຸ່ງຢູ່ແຄມນ້ຳກະດິງ ເມືອງນີ້ໃນຕຳນານທາດພະນົມບອກວ່າ ໄດ້ສ້າງພ້ອມກັນກັບເມືອງວຽງຄຸກແລະເມືອງສຸວັນນະພູມ.

ພຣະນ້າຮຸ່ງ(໓) ຍົກທະຫານອອກຕໍ່ສູ້ ສົມເດັດເຈົ້າຟ້າງຸ່ມແຕ່ງໃຫ້ບາຈີ່ແຂ້ເປັນແມ່ທັບອອກຮົບ ບາຈີ່ແຂ້ຈັບພຣະຍາສາມຄອນໄດ້ ເອົາໄປມັດຈົມນ້ຳທີ່ປາກຫ້ວຍບາງບາດ(໑) ແລ້ວກອງທັບຫລວງກໍຍົກເຂົ້າໄປຕັ້ງຢູ່ໃນເມືອງ.

## ເຈົ້າເມືອງພວນຂໍອ່ອນນ້ອມ

ຝ່າຍພຣະຍາເຈັດເຈືອງ ຜູ້ເປັນເຈົ້າເມືອງພວນຊຽງຂວາງຄັນໄດ້ຊາບຂ່າວວ່າ ກອງທັບຂອງສົມເດັດພຣະຍາຟ້າງຸ່ມຕີເມືອງພຣະນ້ຳຮຸ່ງໄດ້ ກໍມີຄວາມຢ້ານກົວພຣະເດຊານຸພາບເປັນອັນມາກຈຶ່ງແຕ່ງໃຫ້ໝື່ນຫລວງພານ ກັບ ໝື່ນຄຳ(໒)ເປັນທູດຖືພຣະຣາຊສານລົງມາຂໍອ່ອນນ້ອມ ໃຈຄວາມໃນພຣະຣາຊສານນັ້ນວ່າ: "ຜູ້ຂ້ານ້ອຍຫາກເປັນຫລານເປັນເຫລັນ ເຊື້ອແນວຂຸນບໍຣົມຣາຊາທິຣາດເຈົ້າທັງຂຸນລໍມາແຕ່ບູຮານດີ ຫລືດາຍ ເທື່ອນພຣະຍາຟ້າຈັກໄປຜາບບ້ານຜາບເມືອງໃດກໍດີ ຂ້າຈັກແຕ່ງຣິພົນໄປຊ່ອຍໄປເຕີມຊູແຫ່ງຊູທີ່ແລ" ສົມເດັດພຣະເຈົ້າຟ້າງຸ່ມໄດ້ຊາບດັ່ງນັ້ນ ກໍມີພຣະໂສມະນັດ ຈຶ່ງມີພຣະຣາຊອາດຍາຕອບຄືນໄປວ່າ "ພີ່ນ້ອງເຮົາຍັງຄິດເຖິງເຮົາ ດັ່ງນັ້ນກໍຊອບດີແລ ບ້ານເມືອງຂອງຫລານເຮົາກັບນ້ອງເຮົາແຕ່ກ່ອນທີ່ໃດກໍດີ ໃຫ້ໄວ້ແກ່ນ້ອງເຮົາເຖີ້ນ ເຄື່ອງເສິກ ເຄື່ອງວຽກ ເຄື່ອງຫລັກອັນໃດກໍດີ ເຮົາຫາກຈັກມາເອົາຄອນ ອັນນຶ່ງບ້ານເມືອງທີ່ເຮົາຜາບໄດ້ແຕ່ເມືອງຊາເມືອງມ່ວນ ກໍໃຫ້ມາໄຫວ້ນົບແກ່ນ້ອງເຮົາ" ຄັນທົງມີພຣະຣາຊອາດຍາໄປດັ່ງນັ້ນແລ້ວກໍຕັດສັ່ງໃຫ້ເຈົ້າເມືອງພວນເກນກອງທັບເຂົ້າສົມທົບຍົກໄປຕີເອົາຫົວເມືອງເຂດແດນປະເທດແກວໄດ້ ໓ ເມືອງ ໃນປີ ຄ.ສ ໑໓໔໑ (ພ.ສ.໑໘໘໔).

ຝ່າຍເຈົ້າແຜ່ນດິນປະເທດແກວຄັນໄດ້ຊາບດັ່ງນັ້ນ ມີຄວາມຢ້ານກົວອານຸພາບຂອງພຣະເຈົ້າຟ້າງຸ່ມຈຶ່ງແຕ່ງຣາຊທູດມາກາຍມາຖວາຍພ້ອມກັບສິ່ງທູດມາເຈຣະຈາແບ່ງປັນເຂດແດນແລະພົລເມືອງດັ່ງນີ້:

໑. ພົລເມືອງທີ່ຢູ່ເຮືອນມີຮ້ານກວ້ານມີເສົາ (ຄືເຮືອນຍົກພື້ນ) ໃຫ້ເປັນພົລເມືອງລາວ.

໒. ເຂດແດນປະເທດລາວນັ້ນ ໃຫ້ນັບແຕ່ຕົ້ນສານສາມງ່າໄປເຖິງນ້ຳມາສາມແຄວ ຫລືຫີນສາມເສົ້າໄປເຖິງນ້ຳເຕົ້າສາມແຄວ.

໓. ຫລັກການແບ່ງເຂດແດນນັ້ນ ໃຫ້ຖືເອົາຕາມສັນພູນ້ຳແບ່ງ ຄືຝົນຕົກນ້ຳໄຫລລົງມາສູ່ປະເທດລາວແຕ່ບ່ອນໃດ ໃຫ້ຖືເອົາບ່ອນນັ້ນເປັນເຂດແດນ ຖ້າໄຫລລົງໄປທາງເມືອງແກວ ກໍໃຫ້ເປັນດິນຂອງແກວ.

---

(໑) ຫ້ວຍບາງບາດຢູ່ຝັ່ງແມ່ນ້ຳຂອງ ໃນເຂດອຳເພີບຶງການ ຈັງຫວັດໜອງຄາຍ.

(໒) ສອງຄົນນີ້ເຂົ້າໃຈວ່າແມ່ນພຣະຍາເພົາກັບທ້າວຫຽມຄຳຍໍທີ່ພົງສາວະດານບາງສະບັບວ່າທຳມິດສາຈານກັບເມັຽພໍ່ ແລ້ວໜີມາເພິ່ງເຈົ້າຟ້າງຸ່ມ.

ເມື່ອແບ່ງປັນເຂດແດນກັນແລ້ວ ສົມເດັດພຣະເຈົ້າຟ້າງູ່ມກໍຍົກຣີພົນຂຶ້ນໄປຕີເອົາເມືອງຝ່າຍເຫນືອໄດ້ ຄື: ເມືອງແຖນ, ເມືອງໄຊ, ເມືອງໄລ, ເມືອງກວາງ, ເມືອງໂຮມ, ເມືອງກາງລ້ານ, ເມືອງສິງ ຫາວ, ເມືອງທູນ, ເມືອງວາດ ບັງຄັບໃຫ້ເຈົ້າເມືອງເຫລົ່ານີ້ ສົ່ງສ່ວຍເງິນຄຳ ຂອຍຂາ ຜ້າກັ້ງ ຜ້າໄຫມ ຜ້າເພດານ, ເຄື່ອງເຫລັກ, ເຄື່ອງເສິກ ມາອານແລະຫອກດາບທຸກ ໆ ເມືອງ ຕໍ່ຈາກນັ້ນຈຶ່ງສະເດັດໄປ ຕີເອົາເມືອງບູນໃຕ້ແລະບູນເຫນືອ ໄດ້ທັງສອງເມືອງ ຝ່າຍເຈົ້າເມືອງຊຽງຮຸ້ງໄດ້ຍິນກິດຕິສັບ ກໍມີຄວາມຢ້ານ ກົວພຣະເດຊານຸພາບ ຈຶ່ງແຕ່ງບັນນາການມາຖວາຍ ມີເງິນແສນນຶ່ງມາ ໑໐໐ ໂຕພ້ອມທັງອານເງິນອານ ຄຳແລະລ້ວແຮແພຈີນ ເປັນອັນມາກ.

ຄັນພາບທົວເມືອງທາງເຫນືອໄດ້ຫມົດແລ້ວ ພຣະອົງຈຶ່ງທົງແຕ່ງຕັ້ງ ບາຈື່ມ ໃຫ້ເປັນເຈົ້າຂວາ (ຄືເຈົ້າເມືອງຝ່າຍຂວາ) ສຳລັບປົກຄອງດິນແດນຝ່າຍເຫນືອທັງຫມົດ ແລ້ວສະເດັດຍົກທັບລົງມາ ເຖິງ ເມືອງນອຍ ເຈົ້າເມືອງນ້ອຍອອກໄປອ່ອນນ້ອມ ແລະ ທຳພິທີບາສີຖວາຍ ພຣະອົງມີຄວາມຍິນດີດອມເປັນອັນ ມາກ ຈຶ່ງທົງຕັ້ງເມືອງນ້ອຍໃຫ້ເປັນເມືອງກາງຢາວ ຈາກນັ້ນຈຶ່ງສະເດັດມາເຖິງ ປາກອູຕັດສົ່ງໃຫ້ຢຸດປະທັບ ຕັ້ງຄ້າຍຢູ່ທີ່ນັ້ນ.

ຝ່າຍເຈົ້າຟ້າຄຳຮຽວຜູ້ເປັນອາວ ຄັນໄດ້ຊາບຂ່າວວ່າເຈົ້າຟ້າງູ່ມຍົກທັບມາຕັ້ງຢູ່ປາກອູ ດັ່ງນັ້ນ ກໍ ເກນຣີພົນອອກໄປຕໍ່ສູ້ ເຖິງສາມເທື່ອ ແຕ່ຖືກກອງທະຫານຂອງເຈົ້າຟ້າງູ່ມ ຕີແຕກຄືນເມືອເຖິງສາມຄັ້ງ ເຈົ້າຟ້າຄຳຮຽວມີຄວາມລະອາຍໄພ່ຟ້າປະຊາຊົນ ເປັນອັນມາກ ໃນການທີ່ສູ້ຫລານບໍ່ໄດ້ ກໍສວີຍງວນເບື່ອ ປົງພຣະຊົນ ຂອງພຣະອົງເອງເສັ້ງພ້ອມທັງມະເຫສີ ພຣະອົງບໍ່ມີພຣະຣາຊໂອຣົດ ມີແຕ່ພຣະຣາຊທິດາ,໒ ອົງ ຄື ນາງແກ້ວມະຫາລີ ກັບນາງແກ້ວນິງເຮືອງ.

## ເຈົ້າຟ້າງູ່ມຂຶ້ນສວີຍຣາດ

ເມື່ອເຈົ້າຟ້າຄຳຮຽວສະເດັດສູຣະຄົດແລ້ວ ເສນາອາມາດຣາຊມຸນຕີທັງຫລາຍ ຈຶ່ງພ້ອມກັນອອກໄປ ເຊີນເອົາເຈົ້າຟ້າງູ່ມ ເຂົ້າມາສວີຍຣາຊສົມບັດໃນນະຄອນຊຽງທອງ ເຈົ້າຟ້າງູ່ມຂຶ້ນສວີຍຣາດປີມະເສັງ ຈຸລສັກຣາດ ໗໑໔ (ຄ.ສ.໑໓໕໓) ເມື່ອພຣະຊົນຂອງພຣະອົງໄດ້ ໓໓ ປີ ພວກອາມາດຣາຊມຸນຕີທັງ ຫລາຍພ້ອມກັນຖວາຍພຣະນາມວ່າ "ພຣະຍາຟ້າຫລ້າທໍຣະນີສີສັດຕນາຄະນະຫຸດ " ເມື່ອພຣະອົງສວີຍຣາດ ແລ້ວ ກໍທົງຈັດແຈງ ແຕ່ງຕັ້ງລະບຽບຣາຊການບ້ານເມືອງໃຫມ່ຫລາຍປະການ ໃນພະແນກບົກຄອງພຣະອົງ ໄດ້ທົງແຕ່ງຕັ້ງ ພໍ່ລຽງ ພໍ່ລຽງ ຂອງພຣະອົງ ບັນດາຜູ້ທີ່ໄດ້ຕາມສະເດັດໄປຢູ່ປະເທດຂເມນ ໃຫ້ສະຖິດໃນ ຕຳແຫນ່ງສຳຄັນ ໆ ຕາມຄວາມດີຄວາມຊອບ ຄື:

ໃຫ້ປູ່ລຽງ ເປັນ ແສນເມືອງ (ຕຳແຫນ່ງມະຫາອຸປຣາດ)

| | | |
|---|---|---|
| ໃຫ້ຕາລ້ຽງ | ເປັນ | ໝື່ນຫລວງ |
| ໃຫ້ອາວລ້ຽງ | " | ເຈົ້າພູນເໜືອ |
| ໃຫ້ນາລ້ຽງ | " | ເຈົ້າພູນໃຕ້ |
| ໃຫ້ພີ່ລ້ຽງ | " | ພຣະຍາກາຈຸ໊ກ(໑) |

## ຕີເມືອງຊຽງແສນ

ສົມເດັດພຣະເຈົ້າຟ້າງູ່ມຂຶ້ນສເວີຍຣາຊສົມບັດໄດ້ປີນຶ່ງ ຄືປີ ຄ.ສ.໑໓໕໔(ພ.ສ ໑໘໙໗) ພຣະອົງຈຶ່ງມອບຣາຊການບ້ານເມືອງໃຫ້ພຣະນາງແກ້ວເກັງຍາຢູ່ຮັກສາ ໃນເວລານັ້ນພຣະນາງຖືງຄັນໄດ້ ໓ ເດືອນ ສ່ວນພຣະອົງໄດ້ຍົກຈະຕຸຣົງຄະເສນາໂຍທາຫານ ຈະຂຶ້ນໄປຕີເອົາເມືອງຊຽງແສນໂດຍທາງເຮືອ ສະເດັດໄປຮອດທ່າຫົວເຮືອເມືອງເຕລືອກ ທ້າວອູລອງ ເຈົ້າເມືອງເຕລືອກ ອອກມາເຝົ້າແລະກາບທູນວ່າ ຂ້ອຍນີ້ເປັນລູກນາງແກ້ວມະຫາຣີ ແມ່ຂ້ອຍນີ້ເປັນລູກຟ້າຄຳຮຽວ ກໍຫາກເປັນວົງສາແຫ່ງເຈົ້າດາຍ ສົມເດັດພຣະຍາຟ້າຫລ້າທໍຣະນີ ຈຶ່ງມີພຣະຣາຊອາດຍາວ່າ ຜີວ່າເປັນດັ່ງນັ້ນແທ້ເມືອງເຕລືອກນີ້ເຈົ້າຈົ່ງກິນຖ້ຽມ ໃຫ້ເປັນເມືອງກາງເຮືອນກູຖ້ຽມດັ່ງນີ້ແລ້ວສະເດັດໄປເຖິງເມືອງປາກແບງ ຈັບເອົາລ່າມເມືອງຊຸນແລະເຈົ້າເມືອງປາກແບງໄດ້ແລ້ວສະເດັດໄປປະທັບຢູ່ປາກທາ ເຂົ້າຕີເອົາເມືອງຊຽງຂອງ ເມືອງຄຶກຣຳ ເມືອງຊຽງທອງ ແລະເມືອງຊຽງຕຶ້ນ ໄດ້ທັງ ໔ ເມືອງ ຈຶ່ງທົງຕັ້ງເມືອງທັງ ໔ ນີ້ ໄວ້ເປັນເມືອງ ໔ ໝື່ນທາງນ້ຳ ໃຫ້ເຈົ້າເມືອງຊຽງຕຶ້ນເປັນເຈົ້າ ໔ ໝື່ນຈາກນັ້ນສະເດັດເຂົ້າຕີເອົາເມືອງຜາ ເມືອງພົວ ເມືອງພູຄູນແລະເມືອງແທງໄດ້ ຈຶ່ງທົງຕັ້ງເມືອງທັງ໔ ນີ້ເປັນເມືອງ ໔ ໝື່ນທາງບົກ.

ເວລາປະທັບຢູ່ເມືອງປາກທານີ້ ພຣະອົງໄດ້ທຳບັນຊີຊາຍສະກັນໃນເຂດທີ່ພຣະອົງຕີໄດ້ແລ້ວມີລາວ ໔໐໐,໐໐໐ ຄົນ.........ພວກຢາວແລະແກວມີ ໑໐໐,໐໐໐ ຄົນ ຊ້າງ ໔໐໐ ຕົວ ເມື່ອກວດເບິ່ງບັນຊີພົນເສັດແລ້ວ ຈຶ່ງຍົກຂຶ້ນໄປຕີເອົາເມືອງຫີນ ແລະເມືອງ ງາວ ໄດ້ທັງ ໘ ເມືອງຈາກນັ້ນຈຶ່ງສະເດັດໄປປະທັບຢູ່ເມືອງດອນມູນ (ເມືອງຊຽງຣາຍ).

ຝ່າຍພຣະເຈົ້າສາມພຍາ ກະສັດປະເທດລານນາ ເຊິ່ງເວລານັ້ນປະທັບຢູ່ເມືອງຊຽງແສນ ຈຶ່ງແຕ່ງໃຫ້ພຣະຍາແສນເມືອງເປັນແມ່ທັບຍົກພົລໂຍທາ ສີ່ແສນຄົນ ອອກມາຕໍ່ສູ້ ບາກຶ່ມ (ເຈົ້າເມືອງຂວາ) ຂີ່ຊ້າງເຂົ້າຈົນພຣະຍາແສນເມືອງ ແລະຟັນພຣະຍາແສນເມືອງຕາຍກັບຄໍຊ້າງ ກອງທັບເມືອງຊຽງແສນກໍເລີຍແຕກ ກອງທັບລາວລ້ານຊ້າງໄລ່ຕີເຖິງເມືອງແພວ, ເມືອງເລັນ, ເມືອງໄຣ, ບ້ານຢູ່, ເມືອງຍວງຕຶກພວງ, ຫົວຝາຍ, ຈົນເຖິງເມືອງຊຽງແຂງ ພຣະເຈົ້າສາມພຍາ (ຫລື ອີກຊື່ນຶ່ງວ່າ ທາວຜາຍູ)ເຫັນວ່າຈະຕ້ານໄວ້ບໍ່ໄດ້ ຈຶ່ງແຕ່ງໃຫ້ໝື່ນພູການ, ໝື່ນຊຸມ ແລະໝື່ນກາງເມືອງ ເຊີນພຣະຣາຊສານອອກມາຂໍອ່ອນນ້ອມເປັນໄມຕີ ແລະຂໍສົ່ງສ່ວຍເຂົ້າເປືອກໃຫ້ປີລະ ໑໐໐໐ ຫາບ ພ້ອມກັບສິ່ງບັນນາການມາຖວຍເປັນ

(໑) ພຣະຍາກາຈຸ໊ກ ເປັນຜູ້ປົກຄອງພວກລາວເທິງ

ອັນມາກ ຄື: ຄຳສອງໝື່ນ ເງິນສອງແສນ ແຫວນນິນລູກນຶ່ງ ຊື່ວ່າ ຍອດຊຽງແສນ ແກ້ວພິທູນລູກນຶ່ງ ຊື່ວ່າ ຍອດຊຽງຮາຍແລະແຫວນແດງລູກນຶ່ງ ຊື່ວ່າ ມະນີຝາລວງ ນອກຈາກນີ້ຍັງໄດ້ສິ່ງບັນນາການອື່ນໆມາໃຫ້ພວກແມ່ທັບນາຍກອງອີກເປັນອັນມາກ ແລ້ວພຣະກະສັດທັງສອງ ຈຶ່ງໄດ້ຕົກລົງແບ່ງປັນເຂດແດນກັນ ຄື: ຕັ້ງແຕ່ຜາໃດລົງມາໃຫ້ເປັນເຂດແດນຂອງປະເທດລ້ານຊ້າງ ເມື່ອແບ່ງເຂດແດນກັນແລ້ວ ສົມເດັດພຣະເຈົ້າຟ້າງຸ່ມຈຶ່ງສະເດັດຍົກທັບຄືນ ແລ້ວພຣະອົງໄດ້ສັ່ງໃຫ້ກວດເອົາພວກຂອມເກົ່າ ທີ່ຢູ່ຫົວນ້ຳທາແລະເມືອງຫຼາ ເມືອງກໍ ຕລອດເຖິງແດນລື້ຈຳນວນ ໑໐໐.໐໐໐ ຄົນລົງມາໄວ້ໃນແດນເມືອງຊຽງທອງ ຍັງເຫຼືອໄວ້ພູຄຸ້ມ ໔໐ ຄົວ ພູຈອມແຈງ ໔໐ ຄົວ ແລະພູຄາ ໔໐ ຄົວເທົ່ານັ້ນ ແລ້ວມີພຣະຣາຊອາຍາສັ່ງສອນເຂົາວ່າ: "ສູຢ່າບາຢ່າງານແກ່ໄທແກ່ລາວ ສູຢ່າຢາດເອົາສິ່ງເອົາຂອງລາວອັນໃດກໍດີ ອັນນຶ່ງສູຫາກຜິດກັນ ແລະວ່າຈັກໄປຣົບໄປເຮວກໍດີ ໃຫ້ສູຈື່ຄວາມກູສັ່ງນີ້ ມີກາບ ມີຮົບ ມີຮວາຍ ມີເມີງ ມີເປີກ ຫາມມີໃຫ້ເປັນມີເສິກ ສູຈັກຣົບຈັກເຮວກັນ ກໍຫາມສູ ມີກັດ ມີກິດ ມີຮອງ ມີເຕົ່າ ມີກາ ຫາມມີຢ່າໃຫ້ສູຣົບເຮວກັນ ຢ່າໃຫ້ຢູ່ບເອົາຄວາຍບາຍເອົາເງິນກັນ ຜູ້ໃດຫາກບໍ່ຟັງຄວາມກູສັ່ງນີ້ຫີນໜ່ວຍນີ້ກູເອົາແຕ່ສິບຄານຊຽງດົງຊຽງທອງພູນມາໄວ້ແກ່ສູນີ້ ແລຫີນໜ່ວຍນີ້ໜັກສອງພັນຫາຣອຍບາດຜູ້ໃດຫາກບໍ່ຟັງຄວາມກູ ອັນເປັນເຈົ້າແຜ່ນດິນຊຽງດົງຊຽງທອງນີ້ ໃຫ້ສູທັງ ໔ ຊຸມຣາດນີ້ ຈົ່ງເອົາເງິນທີ່ຫີນໜ່ວຍນີ້ເລົ່າເອົາຄວາຍຕົວນຶ່ງກິນແກ່ສູ ໆລໆ".

ສົມເດັດພຣະເຈົ້າຟ້າງຸ່ມ ສະເດັດຂຶ້ນໄປຕີເອົາຫົວເມືອງຝ່າຍເໜືອສັ້ງເວລາ ໔ ປີຈຶ່ງສະເດັດກັບມາເຖິງພຣະນະຄອນເວລານັ້ນພຣະມະເຫສີຂອງພຣະອົງປະສູດພຣະຣາຊໂອຣົດແລ້ວພວກເສນາອາມາດທັງຫລາຍຈຶ່ງຖວາຍນາມວ່າ ທ້າວອຸ່ນເມືອງ (ບາງສະບັບວ່າ ອຸ່ນເຮືອນ).

## ສະເດັດຕີວຽງຈັນ

ເຖິງ ຄ.ສ.໑໓໕໖ (ພ.ສ.໑໘໙໙) ສົມເດັດພຣະເຈົ້າຟ້າງຸ່ມທົງຍົກທັບຫລວງມາຕີວຽງຈັນ ໃນຄາວນີ້ພຣະອົງທົງແຕ່ງຕັ້ງໃຫ້ ບາໂບ ກັບ ບາຈື່ແຂ.. ເປັນທັບໜ້າມາເຖິງເມືອງຊາຍ (ເມືອງດ່ານຊາຍ) ທ້າວໄຄ ເຈົ້າເມືອງດ່ານຊາຍທຳການຕໍ່ຕ້ານ ບາໂບ ຍົກທະຫານເຂົ້າລ້ອມຈັບທ້າວໄຄໄດ້ແລ້ວ ເອົາໄປປະຫານຊີວິດທີ່ຊຽງສົມ (ຄືຫ້ວຍລົມ) ສົມເດັດພຣະເຈົ້າຟ້າງຸ່ມຈຶ່ງທົງແຕ່ງຕັ້ງໃຫ້ບາໂບເປັນເຈົ້າເມືອງຊາຍສຳເຣັດແລ້ວກໍຍົກພົນລົງມາເຖິງຄຳແກ້ງ, ທັບຫລວງຍົກຂຶ້ນຕັ້ງຢູ່ທ່ານາເໜືອ (ທົ່ງຕາເວັນຕົກບ້ານສີໄຄທຸກວັນນີ້).

ຝ່າຍທ້າວຊຽງມຸງ ເຈົ້ານະຄອນວຽງຈັນແລະພຣະຍາເພົາ (ບຸດທ້າວຊຽງມຸງ) ເຊິ່ງເປັນເຈົ້າເມືອງວຽງຄຳ(໑)

---

(໑) ໃນໜັງສືພົງສາວະດານທັງຫລາຍກ່າວໄວ້ວ່າ ເຫດທີ່ຈະໄດ້ຊື່ວ່າວຽງຄຳນັ້ນ ເພາະພຣະເຈົ້າຟ້າງຸ່ມຕີວຽງຄຳໃສ່ລູກໜ້າ ຍິງສຸມໃສ່ກໍໄຜ່ ແຕ່ຄວາມຈິງ ນາມວ່າ ວຽງຄຳນີ້ ມີມາກ່ອນສະໄໝພຣະເຈົ້າຟ້າງຸ່ມ
(ຕໍ່ໜ້າ 33)

ຄັນໄດ້ຊາບວ່າ ເຈົ້າຟ້າງຸ່ມຍົກທັບມາປຽບຍ່ຳດິນແດນ ກໍເກນພົລເມືອງທັງສອງອອກຕໍ່ສູ້ ທ້າວຊຽງມຸງກັບພຣະຍາເພົາມີພົນ ໘໐.໐໐໐ ຄົນ ຊາງ ໕໐໐ ຕົວ ພຣະຍາເພົາຂີ່ຊ້າງແສນນາງຄອຍ ສູງເກົ້າສອກ ທ້າວຊຽງມຸງຂີ່ຊ້າງວັງບຸຣີ ສູງແປດສອກ ສົມເດັດພຣະເຈົ້າຟ້າງຸ່ມ ທົງຂີ່ຊ້າງ ຊື່ຄົນຊຽງທອງ ພຣະຍາເມືອງຊາຍ (ບາໃບ) ຂີ່ຊ້າງແຜວຈັກວານ ບາຈີ່ແຂຂີ່ຊ້າງຂວານລວງຟ້າ ຍົກອອກມາຣົບກັນທີ່ທົ່ງຈຳປີ ບາຈີ່ແຂໄສ້ຊ້າງເຂົ້າຊົນທ້າວຊຽງມຸງ ແລະຟັນທ້າວຊຽງມຸງ ຕາຍກັບຄໍຊ້າງ ແລ້ວບາໃບກັບບາຈີ່ແຂ ຈຶ່ງຫຸ້ມເຂົ້າຊົນຊ້າງພຣະຍາເພົາ ຝ່າຍພຣະຍາເພົາເຫັນບິດາຕາຍແລ້ວ ເຫລືອກຳລັງຈະຕ້ານທານໄວ້ບໍ່ໄດ້ ຈຶ່ງຖອຍທັບກັບຄືນໄປວຽງຄຳ ກອງທັບຂອງພຣະເຈົ້າຟ້າງຸ່ມກໍເຂົ້າວຽງຈັນໄດ້ ແລ້ວພຣະອົງຈຶ່ງຕັດສັ່ງໃຫ້ບາຈີ່ນ ບາສຽມ, ບາຈີ່ແຂ ຍົກທັບນຳຕີພຣະຍາເພົາໄປຈົນເຖິງວຽງຄຳແຕ່ແມ່ທັບທັງສາມບໍ່ສາມາດເຂົ້າຕີເອົາເມືອງໄດ້ ເພາະເມືອງນັ້ນມີກໍໄຜ່ໜາມເປັນກຳແພງລ້ອມໄວ້ຢ່າງແໜ້ນໜາ ແມ່ທັບທັງສາມຈຶ່ງໃຊ້ທະຫານກັບຄືນມາກາບທູນໃຫ້ຊົງຊາບ ພຣະອົງຕັດສັ່ງ ໃຫ້ກອງພຣະຄັງຫລວງ ເບີກເອົາເງິນແລະຄຳມາຕີເປັນຈຽງໜ້າ ໄດ້ຫລາຍແລ້ວສົ່ງໄປໃຫ້ແມ່ທັບທັງສາມພ້ອມກັບຕັດສັ່ງໃຫ້ເປັນຄວາມລັບໄປວ່າ ໃຫ້ເອົາລູກໜ້າຈຽງເງິນຈຽງຄຳຍິງສຸ່ມໃສ່ກໍໄຜ່ ຕລອດເວລາສາມວັນທຳເໝືອນຈະເຂົ້າຕີເອົາເມືອງແລ້ວໃຫ້ເລີກທັບກັບຄືນມາ ແມ່ທັບທັງສາມກໍປະຕິບັດຕາມພຣະຣາຊໂອງການແລ້ວກໍເລີກທັບກັບຄືນມາວຽງ.

ສົມເດັດພຣະເຈົ້າຟ້າງຸ່ມທົງພັກແຮງລ້ຽງໄພ່ພົນ ຢູ່ວຽງຈັນພໍສົມຄວນແລ້ວ ຈຶ່ງຍົກພົນຂ້າມນ້ຳຂອງໄປຕີເອົາເມືອງແກ່ນທ້າວແລະເມືອງນະຄອນໄທ(໑)ຢູ່ຕິດເຂດແດນກຸງສີອະຍຸທຍາໄດ້ໝົດແລ້ວຈຶ່ງທົງຕັ້ງ ບາຈີ່ແຂ ໃຫ້ເປັນໝື່ນແກ ສຳລັບດູແລປົກຄອງເມືອງຂອບດ້ານອັນຕິດຕໍ່ກັບກຸງສີອະຍຸທຍາ ສຳເຣັດແລ້ວກໍສະເດັດຍົກທັບກັບຄືນມານະຄອນວຽງຈັນ.

ຝ່າຍອານາປະຊາຣາສດອນເມືອງວຽງຄຳ ຄັນເຫັນກອງທັບຂອງເຈົ້າຟ້າງຸ່ມເລີກໜີໄປແລ້ວ ກໍພາກັນອອກມາທຳມາຫາກິນ ແລະໄປເຫັນຈຽງໜ້າຄຳຕົກຢູ່ກາງກໍໄຜ່ ຈຶ່ງພາກັນມາງຖາງກໍໄຜ່ .ຊອກເອົາຈຽງໜ້າ ຈົນກໍໄຜ່ອັນເປັນກຳແພງເມືອງນັ້ນຫັກມູນລົງເປັນປ່ອງຫລາຍດ້ານ ເມື່ອສົມເດັດພຣະເຈົ້າຟ້າງຸ່ມໄດ້ຊົງຊາບດັ່ງນັ້ນ ຈຶ່ງຍົກຣິພົນໂຍທາໄປຕີເອົາເມືອງວຽງຄຳອີກ ພຣະອົງຕັດສັ່ງໃຫ້ທະຫານເອົາໄຟຈູດກໍໄຜ່ທຸກດ້ານ ພວກຊາວເມືອງເຫັນໄຟໄໝ້ກໍໄຜ່ ກໍພາກັນແຕກຕື່ນບໍ່ສາມາດຈະມອດໄຟໄດ້ ປ່າໄຜ່ໜາມອັນເປັນກຳແພງເມືອງຢ່າງແໜ້ນໜາກໍຖືກທຳລາຍລົງດ້ວຍໄຟຈົນແປນ ສົມເດັດພຣະເຈົ້າຟ້າງຸ່ມ ກໍຍົກພົນເຂົ້າຕີເອົາເມືອງໄດ້ໂດຍງ່າຍ.................

---

ແລ້ວ ດັ່ງປາກົດຢູ່ໃນສີລາເລກຂອງຂຸນຣາມຄຳແຫງ ເມືອງສຸໂຂທັຍ ຊຶ່ງໄດ້ຈາຣຶກໄວ້ແຕ່ປີ ຄ.ສ. ໑໘໙໔ ກ່ອນພຣະເຈົ້າຟ້າງຸ່ມມາຕີວຽງຈັນວຽງຄຳເຖິງ ກ໔ ປີ ວ່າເຂດແດນເມືອງສຸໂຂທັຍເວລານັ້ນທິດຕາເວັນອອກເຖິງເມືອງສຣະຫຼວງ ຯລຯ ເມືອງສຣະຄາກະທັ່ງຝັ່ງແມ່ນ້ຳຂອງ ເຖິງວຽງຈັນວຽງຄຳເປັນທີ່ແລ້ວດັ່ງນີ້ ແລະໃນຕຳນານຂຸນບໍຣົມເອງກໍເວັ້ນວ່າວຽງຄຳແຕ່ໃດມາ

(໑) ທຸກວັນນີ້ເປັນອຳເພີ ຊື່ ອຳເພີນະຄອນໄທ ຢູ່ໃນເຂດແດນຈັງຫວັດພິຊຸນູນ ໃນປະເທດໄທ

ເອົາຄືເອົາເມືອງໄດ້ໂດຍງ່າຍແລະຈັບພຣະຍາເພົາເຈົ້າເມືອງໄດ້ຕັດສິ່ງໃຫ້ເອົາໃສ່ຊອງສົ່ງຂຶ້ນໄປເມືອງຊຽງທອງ(໑) ມີໄປເຖິງບ້ານຖົ່ມແຕ້ງ ພຣະຍາເພົາກໍເຖິງແກ່ກັມຢູ່ທີ່ນັ້ນ ພາຍລຸນມາໄດ້ຕັ້ງບ້ານຖົ່ມແຕ້ງຂຶ້ນເປັນເມືອງເອີ້ນວ່າ ເມືອງຊອງ ຕໍ່ ໆ ມາ.

ສົມເດັດພຣະເຈົ້າຟ້າງູ່ມມະຫາຣາດ ຄັນຕີເມືອງວຽງຄຳໄດ້ແລ້ວ ຈຶ່ງສະເດັດກັບຄືນມາປະທັບຢູ່ເມືອງວຽງຈັນ ຄາວນັ້ນພຣະອົງໄດ້ກວດເບິ່ງບັນຊີພົນຊາຍສະກັນແຕ່ໃນດິນແດນທີ່ພຣະອົງຕີໄດ້ ຄືຕັ້ງແຕ່ເມືອງປາກຫ້ວຍຫລວງ(໒) ນີ້ໄປເຖິງເມືອງພາໄດ ມີຄົນຢູ່ ໓໐໐,໐໐໐ ຊ້າງ ໒໐໐໐ ຕົວ ມ້າ ໑໐໐໐ ຕົວ ທາງໃຕ້ແຕ່ເມືອງພຣະນ້ຳຮຸ່ງຊຽງສາ(໓) ລົງໄປເຖິງແດນຈາມແດນຂເມນແລະແດນແກວ ຈົນເຖິງເມືອງປາກວາງ(໔) ມີຄົນ ໔໐໐,໐໐໐ ຄົນ ຊ້າງ ໑໐໐໐ ຕົວ ມ້າ ໔໐໐ ຕົວ ໂຣມພົນສະກັນໃນປະເທດລາວທັງໝົດມີລ້ານຄົນ ເປັນລາວ ໗໐໐,໐໐໐ ຄົນ ເປັນໄທ ໓໐໐,໐໐໐ ຄົນ

ເມື່ອເສັດສົງຄາມວຽງຈັນວຽງຄຳແລ້ວ ພຣະອົງຊົງຕັ້ງໃຫ້ບາຖຸ້ມໃຫ້ເປັນໝື່ນຈັນ ສຳລັບປົກຄອງເຂດແຂວງວຽງຈັນ ບາສຽມໃຫ້ເປັນໝື່ນກະບອງ ປົກຄອງຫົວເມືອງຝ່າຍໃຕ້ ຕັ້ງແຕ່ເມືອງພຣະນ້ຳຮຸ່ງຊຽງສາລົງໄປຈົນເຖິງແດນຈາມ ແລ້ວພຣະອົງຈຶ່ງຕັດສິ່ງພຣະຍາເມືອງຂວາໃຫ້ເອົາພວກຂ້າເກົ່າ ໑໐,໐໐໐ ຄົວ ໃຫ້ມາຢູ່ກະແດຟ້າແດບນອກວຽງຈັນ(໕) ແລະອີກ ໑໐,໐໐໐ ຄົວ ໃຫ້ໄປໄວ້ໜອງຫານນ້ອຍ ໜອງຫານຫລວງ ແລະພູວານເຖົ້າວານປາວ(໖) ກັບເຊືອງຊາຍ(໗) ພົລເມືອງລາວຈຶ່ງໄດ້ແຜ່ພາຍລົງມາ ຕັ້ງຫຼັກຖານຢູ່ໃນດິນແດນຂອງພວກຂເມນຫລາຍຂຶ້ນເປັນລຳດັບແຕ່ສມັຍນັ້ນມາ.

---

(໑) ເຫດການບ່ອນເຈົ້າຟ້າງູ່ມຕີວຽງຄຳນີ້ ໃນຕຳນານເມືອງລ້ານຊ້າງສະບັບນຶ່ງກ່າວໄວ້ວ່າ ສົມເດັດພຣະເຈົ້າຟ້າງູ່ມຊົງເຫັນພຣະຍາເພົາມີຝີມືແຂງແຮງສາມາດຊົນຊ້າງກັບພຣະອົງໄດ້ ຈຶ່ງຜູກໄມຕີກັບພຣະຍາເພົາແລະມອບເມືອງວຽງຄຳໃຫ້ພຣະຍາເພົາຄອບຄອງດັ່ງເກົ່າ.
(໒) ເມືອງປາກຫ້ວຍຫລວງ ຄືບ້ານຫ້ວຍຫລວງ ຢູ່ໃນເຂດອຳເພີໂພນພິໄສ ຈັງຫວັດໜອງຄາຍ
(໓) ເມືອງພຣະນ້ຳຮຸ່ງ ຢູ່ເມືອງປາກຊັນທຸກວັນນີ້
(໔) ເມືອງປາກວາງຈະແມ່ນເມືອງໃດແທ້ບໍ່ຮູ້
(໕) ກະແດຟ້າແດບ ແມ່ນໜອງຄັນແທເສື້ອນ້ຳ ຕາມຕຳນານອູຣັງຄະທາດຄືບໍຣິເວນຮ່ອງແກທຸກວັນນີ້
(໖) ພູວານປາວ ຢູ່ໃນເຂດຈັງຫວັດກາລະສິນ ໃນປະເທດໄທ
(໗) ເຊືອງຊາຍ ຈະແມ່ນບ່ອນໃດຍັງບໍ່ຊາບ

# ສະເດັດລົງໄປຕີເອົາເມືອງຮ້ອຍເອັດ

ຫົວເມືອງພາກອີສານຂອງປະເທດໄທ ນັບແຕ່ເມືອງໜອງຫານ ລົງໄປເຖິງເມືອງຮ້ອຍເອັດ ແຕ່ກ່ອນເປັນຫົວເມືອງຂຶ້ນຂອງປະເທດຂເມນທັງມວນ ຕໍ່ມາໄດ້ຕົກເປັນເມືອງຂຶ້ນຂອງໄທ- ໃນສມັຍຂອງຂຸນຣາມຄຳແຫງ ລະຫວ່າງ ຄ.ສ.໑໘໒໔ ດັ່ງກ່າວແລ້ວ ຕໍ່ມາເມືອງສຸໂຂໄທຂອງຂຸນຣາມຄຳແຫງໝົດອຳນາດລົງ ແລະພຣະເຈົ້າອູ່ທອງ ໄດ້ຕັ້ງເມືອງສີອະຍຸທຍາຂຶ້ນໃນປີ ຄ.ສ.໑໓໕໐ (ກ່ອນພຣະເຈົ້າຟ້າງູ່ມ ຂຶ້ນສເວີຍຣາດ ພຽງ ໓ ປີ) ແຂວງເມືອງຮ້ອຍເອັດ ຈຶ່ງຕົກເປັນເມືອງຂຶ້ນຂອງກຸງສີອະຍຸທຍາດ້ວຍ ສະນັ້ນ ພຣະເຈົ້າຟ້າງູ່ມຈຶ່ງລົງໄປຕີເອົາເມືອງຮ້ອຍເອັດອີກ ດັ່ງຈະກ່າວຕໍ່ໄປ.

ໃນຄາວນັ້ນສົມເດັດພຣະເຈົ້າຟ້າງູ່ມມະຫາຣາດ ຢູ່ໃນປະທັບລ້ຽງໄພ່ພົນຢູ່ນະຄອນວຽງຈັນພໍສົມຄວນແລ້ວ ກໍຫົງກຳໜົດການລົງໄປຕີເອົາປະເທດລານເພັຍ(໑)ຄືກຸງສີອະຍຸທຍາ ພຣະອົງຈຶ່ງຫົງແຕ່ງຕັ້ງໃຫ້ໝື່ນແກກັບໝື່ນກະບອງເປັນທັບໜ້າ ພຣະຍາເມືອງຂວາເປັນປີກຂວາ ພຣະຍາເມືອງຊ້າຍເປັນປີກຊ້າຍ ໃຫ້ໝື່ນຈັນ ເປັນທັບຫລັງໂຮມພົນໄດ້ ໔໒,໐໐໐ ຄົນ ຊ້າງ ໔໐໐ ໂຕ ສະເດັດຍົກທັບອອກຈາກວຽງຈັນໄປທາງບົ່ງພຣະງາມ(໒) ຕີເອົາບົ່ງພຣະງາມໄດ້...ແລ້ວຍົກເລີຍເຂົ້າຕີເອົາເມືອງຮ້ອຍເອັດ ຈັບພຣະຍາເຈົ້າເມືອງຂັງໄວ້ ຈຶ່ງແຕ່ງໃຫ້ກອງທັບແຍກຍ້າຍອອກຫາຕີເອົາເມືອງເລັກເມືອງນ້ອຍໄດ້ອີກຫລາຍເມືອງ ຄື: ເມືອງພຣະສາດ, ເມືອງພຣະສະຂຽນ, ເມືອງພຣະລິງ, ເມືອງພຣະນາຣາຍ, ເມືອງພຣະນາຫຽນ, ເມືອງເຊຊະມາດ(໓), ເມືອງສະພັງສີ່ແຈ(໔), ເມືອງໂພນຝັ່ງແດດ ຈັບເອົາເຈົ້າເມືອງເຫລົ່ານີ້ມາຂັງໄວ້ທີ່ເມືອງຮ້ອຍເອັດໝົດແລ້ວ ຈຶ່ງສົ່ງຣາຊສານລົງໄປຫາພຣະຣາມາທິບໍດີ ອູ່ທອງເຈົ້າແຜ່ນດິນກຸງສີອະຍຸທຍາວ່າ "ຈັກຣົບຫລືຮູ້ວ່າສິ່ງໃດນັ້ນຈາ" ພຣະຣາມາທິບໍດີອູ່ທອງ ໄດ້ຊາບພຣະຣາຊສານດັ່ງນັ້ນ ມີຄວາມຢ້ານກົວ ຈຶ່ງຕອບພຣະຣາຊສານຄືນມາວ່າ "ເຮົາຫາກເປັນພີ່ນ້ອງກັນມາແຕ່ຂຸນບໍຣົມພຸ້ນດາຍ ເຈົ້າຢາກໄດ້ບ້ານໄດ້ເມືອງໃຫ້ເອົາແຕ່ເຂດແດນດົງສາມເສົ້າ(ດົງພຣະຍາໄຟ) ເມືອເທົ້າພູພຣະຍາພໍ່ແລະແດນເມືອງນະຄອນໄທເປັນເຈົ້າຖອນ ອັນນຶ່ງຂ້ອຍຈັກສົ່ງ ນ້ຳອ້ອຍນ້ຳຕານຊູ່ປີ ອັນນຶ່ງລູກຍິງຂ້າ ຊື່ນາງແກ້ວລອດຟ້າ ໃຫ້ຮ່ມາແລ້ວຈັກສົ່ງເມືອໃຫ້ປົກເສື່ອປູໝອນແກ່ເຈົ້າຟ້າແລ" ດັ່ງນີ້ແລ້ວພຣະເຈົ້າກຸງສີອະຍຸທຍາ ຈຶ່ງແຕ່ງຣາຊບັນນາ

---

(໑) ໃນໜັງສືຂຸນບໍຣົມເອີ້ນຊື່ປະເທດທັງສາມຄື: ລາວ, ໄທ ແລະ ຊຽງໃໝ່ ວ່າ ລ້ານຄືປະເທດລາວວ່າ ລ້ານຊ້າງ ຊຽງໃໝ່ ວ່າ ລ້ານນາ ກຸງສີອະຍຸທຍາຂອງໄທ ວ່າ ລ້ານເພັຍ.

(໒) ບົ່ງພຣະງາມແລະບົວກອງ ຈະແມ່ນເມືອງໃດບໍ່ຊາບ. (໓) ເມືອງຕ່າງ ໆ ເຫລົ່ານີ້ຢູ່ໃນເຂດຈັງຫວັດຮ້ອຍເອັດ,ສຸຣິນ,ບຸຣີຣັມ,ແລະສີສະເກດ ໃນປະເທດໄທ. (໔) ເມືອງສະພັງສີ່ແຈເຫັນຈະແມ່ນເມືອງສະສີ່ຫລ່ຽມ ຢູ່ໃນເຂດອຳເພີສຸວັນນະພູມ ຈັງຫວັດຮ້ອຍເອັດ ປະເທດໄທ.

ຄືຊ້າງພາຍ ໔໑ ຕົວ ຊ້າງພັງ ໔໐ ຕົວ ຄຳສອງຫມື່ນ ເງິນສອງຫມື່ນ ນໍແສນຫນ່ວຍ ກັບເຄື່ອງບັນນາການອື່ນ ໆ ອີກຢ່າງລະຮ້ອຍ ສົມເດັດພຣະເຈົ້າຟ້າງູ່ມຈຶ່ງບໍ່ສະເດັດລົງໄປຕີກຸງສີອະຍຸທຍາ ເວລານັ້ນພຣະອົງຈະໄດ້ກະທຳພິທີປະຖົມມະກັມ ປະຫານຊີວິດເຈົ້າເມືອງທີ່ຈັບໄດ້ນັ້ນທັງຫມົດ  ເພື່ອເປັນການສລອງໄຊປາບດາພິເສກ ຄວາມນີ້ຊ່າລືໄປເຖິງພຣະມະຫາປາສມັນຕະເຖຣະເຈົ້າ ຕົນເປັນອາຈານພຣະເຖຣະຈຶ່ງມາຂໍບິນທະບາດຊີວິດເຈົ້າເມືອງເຫລົ່ານັ້ນໄວ້ ພຣະອົງກໍທົງໂປດປະຫານແລະປ່ອຍໃຫ້ຄືນເມືອ ຄອງບ້ານເມືອງຂອງໃຜລາວດັ່ງເກົ່າ ຄັນສັ່ງສອນພວກເຈົ້າເມືອງທັງຫລາຍແລະປ່ອຍ ໃຫ້ຄືນເມືອ ແລ້ວພຣະອົງຈຶ່ງຍົກທັບກັບຄືນມານະຄອນວຽງຈັນ.

## ສລອງຊັຍຢູ່ວຽງຈັນ

ເມື່ອສະເດັດກັບມາເຖິງວຽງຈັນແລ້ວ ພຣະອົງກໍທົງປະທານຄວາມດີຄວາມຊອບແລະເລື່ອນຍົດແກ່ພວກແມ່ທັບນາຍກອງຜູ້ມີຄວາມຊອບຖ້ວນທຸກຄົນ ນອກຈາກນັ້ນກໍໃຫ້ທົງຈັດແຈງແຕ່ງຕັ້ງລະບຽບການປົກຄອງ ແລະ ການທັບຂັ້ນໃຫມ່ ຄື:

໑. ທົງແຕ່ງຕັ້ງໃຫ້ແສນເມືອງ ກັບ ຫມື່ນກະບອງ ເປັນເຈົ້າຫົວເສິກ (ແມ່ທັບໃຫຍ່)

໒. ໃຫ້ຫມື່ນຫລວງ ໑ ພຣະຍາເມືອງຂວາ ໑ ພຣະຍາເມືອງຊ້າຍ ໑ ເຈົ້າພູມເຫນືອ ໑ ເຈົ້າພູມໃຕ້ ໑ ເປັນຫົວເສິກທັງ ໕ (ນາຍທັບທັງຫ້າ)

໓. ໃຫ້ພຣະຍາຫມື່ນຫນ້າ ໑ ພຣະຍາແພນ ໑ ເປັນຣາຊວັດກ້າຫນ້າ (ເຈົ້າກົມຕຳຣວດຫນ້າ)

໔. ຫມື່ນນາເຫນືອ ກັບ ຫມື່ນນາໃຕ້ ເປັນຣາຊວັດກ້າຫລັງ (ເຈົ້າກົມຕຳຣວດຫລັງ)

໕. ໃຫ້ນາຍຫລວງເຫນືອ ຣັກສາຄຸ້ມໃນກ້າຫນ້າ (ຜູ້ພິພາກສາສານຝ່າຍຫນ້າຄືສານລູກຂຸນ)

໖. ໃຫ້ນາຍຫລວງໃຕ້ ຣັກສາຄຸ້ມໃນກ້າຫລັງ (ຜູ້ພິພາກສາຝ່າຍຫລັງຄືຝ່າຍນາງສນົມ)

ສ່ວນຫົວເມືອງຕ່າງ ໆ ນັ້ນ ພຣະອົງໄດ້ຈັດໃຫ້ເປັນເຂື່ອນເມືອງ ແຂວງເມືອງແລະເມືອງດ່ານ ເມືອງທີ່ຈັດເປັນເມືອງເຂື່ອນນັ້ນມີ ໖ ເມືອງ ຄື:

໑. ວຽງຈັນ ໃຫ້ຫມື່ນຈັນ (ບາຄຸ້ມ) ເປັນເຈົ້າເມືອງ.

໒. ວຽງຄຳໃຫ້ພຣະຍາເພົາ (ຄົນໃຫມ່) ເປັນເຈົ້າເມືອງ.

໓. ວຽງແກ ໃຫ້ຫມື່ນແກ (ບາຈີ່ແຂ້) ເປັນເຈົ້າເມືອງ.

໔. ວຽງພຣະນ້ຳຮຸ່ງ ໃຫ້ຫມື່ນນ້ຳຮຸ່ງເປັນເຈົ້າເມືອງ.

໕. ວຽງປາກຫ້ວຍຫລວງ ໃຫ້ພຣະຍາປາກຫ້ວຍຫລວງເປັນເຈົ້າເມືອງ.

໖. ວຽງຊຽງສາ ໃຫ້ພຣະຍາຊຽງສາເປັນເຈົ້າເມືອງ.

ເມືອງດ່ານ ມີ ໔ ເມືອງ ຄື:

໑. ເມືອງແກນທ້າວ ໒. ເມືອງໜອງບົວ

໓. ເມືອງຊາຍຂາວ ໔. ເມືອງສາມໝື່ນ

ຄັນຈັດແຈງແຕ່ງຕັ້ງລະບຽບຣາຊການບ້ານເມືອງສຳເຣັດບໍຣະບວນແລ້ວ ພວກເສນາອາມາດຣາຊມົນຕີທັງຫລາຍ ຈຶ່ງພ້ອມກັນທຳມະຫາພິທີຊັຍຍາພິເສກຖວາຍແກ່ສົມເດັດພຣະຍາຟ້າຫລ້າທໍຣະນີມະຫາຣາດ ເປັນການສລອງມະຫາຊັຍພິເສກຢູ່ວຽງຈັນ ໃນງານສລອງມະຫາຊັຍນີ້ ພວກເສນາອາມາດໄດ້ປຸກໂຮງຣາຊພິທີ ຂຶ້ນແຄມປາກຫ້ວຍປ່າສັກ ຝ່າຍຕາເວັນຕົກ (ຄືບໍຣິເວນໂຮງຣຽນຊ່າງຫູກອັນນີ້) ແລ້ວທຳການສລອງມະຫາຊັຍ ໗ ວັນ ໗ ຄືນ ໃນງານນີ້ ໄດ້ຂ້າຊ້າງ ໑໐ ຕົວ ງົວ ໑໐໐໐ ຕົວ ຄວາຍ ໒໐໐໐ ຕົວ ລ້ຽງໄພ່ພົນ.

## ພຣະຣາຊໂອວາດຂອງພຣະເຈົ້າຟ້າງຸ່ມ

ຄັນທຳການສລອງຊັຍ ຖ້ວນ ໗ ວັນ ໗ ຄືນບໍຣະບວນແລ້ວ ສົມເດັດພຣະເຈົ້າຟ້າຫລ້າທໍຣະນີມະຫາຣາດ ຈຶ່ງມີພຣະຣາຊໂອວາດສັ່ງສອນເສນາອາມາດທັງຫລາຍວ່າ:

໑. ເຈົ້າທັງຫລາຍຮັກສາບ້ານເມືອງຢ່າໃຫ້ມີ ຂ້າລັກ ຄົນໂຈນ ອັນນຶ່ງຢ່າໄດ້ຂ້າຟັນກັນ ແມ່ນວ່າ ຂ້ອຍຕົນຜິດກໍດີ ເມັຽຕົນຜິດກໍດີ ເສນາແລະລູກຄ້ານາຜິດກໍດີ ຕົນຢ່າຫລອນຂ້າຟັນເສັຽ ໃຫ້ຜູ້ອື່ນພິຈາຣະນາດູກ່ອນ ເປັນໂທດອັນໜັກແທ້ຈຶ່ງທຳຕາມເຫດນັ້ນ ໂທດບໍ່ໜັກຢ່າໄດ້ຂ້າ ທໍ່ວ່າໃຫ້ໃສ່ຄອກຂັງໄວ້ ສົມໂທດແລ້ວໃຫ້ປ່ອຍໄປ່ ທາງຣາຊາການ, ສົມບັດອັນຈັກເກີດມາໃນແຜ່ນດິນນີ້ ຄົນມີສົມບັດ ກໍຈຶ່ງມີຄົນບໍ່ມີຄົນ ສົມບັດເຂົ້າຂອງກໍຫາບໍ່ໄດ້ແລ ເຮົາບໍ່ໃຫ້ຂ້າຄົນເພື່ອດັ່ງນັ້ນແລ.

໒. ອັນນຶ່ງ ເຈົ້າທັງຫລາຍກໍຢ່າຜິດຢ່າຂ້າກັນໃຫ້ພ້ອມກັນດູຂອບບ້ານຂອບເມືອງທັງມວນ ຕ່າງບ້ານຕ່າງເມືອງ ເຂົ້າຈັກກະທຳບຽດບຽນບ້ານເມືອງເຮົາກໍໃຫ້ເຕັມແຈງ.

໓. ອັນນຶ່ງ ລອງເດືອນໃດໃຫ້ໃຊ້ຄົນເມືອໄຫວ້ສາທາເຮົາຊູ້ບ້ານຊູ້ເມືອງ ໃຫ້ເຮົາຮູ້ອັນຮ້າຍອັນດີ ສາມປີຈຶ່ງໃຫ້ຕົວເຈົ້າ ທັງຫລາຍຂຶ້ນເມືອໄຫວ້ເຮົາເມື່ອຮອດຊຽງດົງຊຽງທອງພຸ້ນແລ້ວ ເຮົາຈັກໄດ້ບູຊາແຖນຟ້າຄືນ ທັງແຖນຄົນ ແຖນແຕງ ແຖນຊົ່ງ ແຖນເຖືອກ ທັງເຖົ້າເຍີ ເຖົ້າໄລ ແມ່ຍ່າງາມ ແມ່ມົດ ທັງເທວະດາອັນຮັກສາຜາຕັ້ງແລະສົບອູ ງລງ ທັງຫລັກໝັ້ນທາຍຂັນ ທັງນາໃຣຄຽວ ພູເຂົາກາ ອາຍມາ ຫາວຄອງ ຢູ່ໜອງຈຸມພູເຂົາກາຫັ້ນທັງຜາຫລວງກອນຟ້າຢຽມ ທັງກອນກາຍຟ້າ ອັນໝາຍໄວ້ທີ່ຊຽງດົງຊຽງທອງນັ້ນຄັນເມື່ອຮອດແລ້ວເຮົາຈັກໄດ້ບູຊາພີຟ້າພີແຖນທັງຫລາຍຟູ່ງນີ້ ຄັນເຖິງເດືອນຈຽງ ໃຫ້ຂຶ້ນຊູ້ບ້ານຊູ້ເມືອງ ເດືອນ ໓ ໃຫ້ຮອດເມືອງຊວາ ຄັນໃຜບໍ່ຂຶ້ນເຮົາບໍ່ວ່າຊື່ຕໍ່ເຮົາແລ ອັນວ່າໃຫ້ລ້ຽງຟ້າລ້ຽງແຖນປູ່ເຈົ້າຟ້າຫຼວງໂງ່ມຫາກໄດ້ສັ່ງເຮົາໄວ້ ໃຫ້ເຮົາຮູ້ຈັກຫົວໃຈເຈົ້າຂຸນທັງມວນອັນຢູ່ເມືອງລ້ານຊ້າງຜູ້ຊື່ແລະຜູ້ຄົດຈາກເຈົ້າແຜ່ນດິນ ຫັ້ນແລ ປູ່ເຈົ້າຟ້າຫລວງໂງ່ມ ໄດ້ສັ່ງໄວ້ສືບ ໆ ມາດັ່ງນີ້ແລ.

໔. ອັນນຶ່ງ ເຈົ້າທັງຫລາຍຢ່າເອົາໄພ່(໑)ເມືອເປັນຂ້ອຍໄພ່ຜິດກັນເປັນອັນຫນັກ ເປັນຕົ້ນວ່າ ມີຊູ້ສູ່ເມັຽທ່ານ ໃຫ້ໄຫມເອົາແຕ່ ໔ ບາດ ເຂົ້າຫາກຂ້າກັນຕາຍ ເອົາຕົວມັນແທນຜູ້ຕາຍນັ້ນ.

໕. ອັນນຶ່ງ ໄປເສິກຢ່າໄດ້ເອົາຄ່າຕົວໄພ່ ແຕ່ບາດນຶ່ງເຖິງສອງຕໍ່ເທົ້າເຖິງຮ້ອຍວ່າ ເປັນຄ່າຕົວແລເຈົ້າຂຸນຢ່າໃຫມໄພ່ກາຍຮ້ອຍຂຶ້ນໄປເທິງ ຜູ້ໃດຍັງໃຫມຈັກເສັຽຫນ້າ ຕົວມັນຈັກເອົາໃຊ້ຕ່າງໄພ່.

ຄັນທົງພຣະຣາຊທານພຣະບໍຣົມຣາໂຊວາດແກ່ອາມາດມຸນຕີທັງຫລາຍດັ່ງນີ້ແລ້ວ ພຣະອົງຈຶ່ງພາຣິພົນໂຍທາທັງຫລາຍສະເດັດກັບຄືນນະຄອນຊຽງທອງໂດຍທາງບົກ ເຖິງນະຄອນຊຽງທອງເດືອນ ໔ ອອກໃຫມ່ ໓ ຄ່ຳ ວັນອັງຄານ ປີ ຄ.ສ.໑໓໕໗ (ພ.ສ.໑໙໐໑).

## ນຳເອົາພຣະພຸທສາສນາລັດທິລັງກາວົງ ຫລື ຫິນະຍານ

## ມາຈາກປະເທດຂເມນ

ຊົນຊາດລາວທັງຫລາຍຕັ້ງແຕ່ບູຮານພາກັນນັບຖືຜີຟ້າຜີແຖນຜີພໍ່ ຜີແມ່ ຜີດ້າ ຕາມລັດທິຂອງພວກຈີນ ເພາະເຫດດິນແດນຂອງພວກລາວແຕ່ກ່ອນຢູ່ຕິດກັນກັບຊາດຈີນ ທັງມີການສັງຄົມຕິດຕໍ່ກັນມາເປັນເວລານານ ເຖິງວ່າຄົນຊາດລາວໄດ້ເຂົ້ານັບຖື ພຸທສາສນາມາແລ້ວ ຕັ້ງແຕ່ສມັຍຍັງຢູ່ໃນປະເທດຈີນ ຄືງແຜ່ນດິນຂອງຂຸນຫລວງລີເມົາເຈົ້ານະຄອນງາຍລາວ ເມື່ອ ຄ.ສ.໖໙ (ພ.ສ.໖໑໘) ນັ້ນກໍຕາມລັດທິພຸທສາສນາທີ່ລາວໄດ້ນັບຖືໃນຄາວນັ້ນ ແມ່ນລັດທິມະຫາຍານ ຕໍ່ມາອີກຫລາຍຮ້ອຍປີ ເມື່ອຄົນລາວເຮົາແຕກຫນີມາຢູ່ປະເທດລ້ານຊ້າງ ການນັບຖືພຸທສາສນາແຕ່ເກົ່າກ່ອນນັ້ນຈຶ່ງຈືດຈາງໄປ ຄົງນັບຖືຢູ່ແຕ່ສາສນາເດີມຂອງຕົນ ຄືການຖືຜີດັ່ງກ່າວແລ້ວ ຄັນມາເຖິງສມັຍຂອງພຣະຍາຟ້າຫລ້າທໍຣະນີມະຫາຣາດຟ້າງຸ່ມນີ້ ຄົນຊາດລາວກໍຍັງນັບຖືສາສນາຜີຟ້າຜີແຖນຢູ່ ໃນຄັ້ງນັ້ນສົມເດັດພຣະນາງແກ້ວເກັງຍາ ອັຄມະເຫສີ ໄດ້ທອດພຣະເນດເຫັນໄພ່ຟ້າປະຊາຊົນຕລອດຈົນເສນາອາມາດຣາຊມຸນຕີເຈົ້າຂຸນມູນນາຍໃນແລະນອກພຣະຣາຊວັງ ພາກັນຖືຜີ ທຳພລີກັມ ຂ້າຊ້າງ ຂ້າຄວາຍ ບູຊາຜີດ້າ ກໍທົງສັງເວດພຣະທັຍ ດ້ວຍເຫດທີ່ພຣະນາງເຈົ້າເຄີຍໄດ້ນັບຖືພຣະພຸທສາສນາ ເຄີຍໄດ້ສະມາທານສິນກິນທານ ມາແຕ່ເມື່ອຍັງຢູ່ໃນປະເທດຂເມນ ເມື່ອພຣະນາງເຫັນພົລເມືອງລາວປະພຶດປະຕິບັດດັ່ງນີ້ ຈຶ່ງບໍ່ສາມາດປະຕິບັດຕາມໄດ້ ພຣະນາງຈຶ່ງເຂົ້າໄປເຝົ້າພຣະຣາຊສາມີ ຂໍໃຫ້ໄປນຳເອົາພຣະພຸທສາສນາມາປະດິສຖານໃນປະເທດລາວ ເພື່ອພຣະນາງເຈົ້າຈະໄດ້ປະຕິບັດ ບໍ່ດັ່ງນັ້ນພຣະນາງກໍຈະຂໍທູນລາກັບຄືນ ໄປຢູ່ປະເທດຂເມນນຳພຣະຣາຊບິດາ.

ສົມເດັດພຣະຍາຟ້າຫລ້າທໍຣະນີມະຫາຣາດຟ້າງຸ່ມເຈົ້າ ໄດ້ທົງຊາບດັ່ງນັ້ນກໍມີພຣະທັຍໂສມະນັດ ຈຶ່ງ~~ຈັດແຈງແຕ່ງ~~ຂ້າຣາຊການເຊີນພຣະຣາຊສານແລະເຄື່ອງມຸງຄຸນບັນນາການ ມີເງິນ ສາມແສນ ຄຳສາມຫມື່ນແລະແກ້ວນ້ຳຄ້າງ ແກ້ວຈອມເພັດອັນມີຄ່າ ລົງໄປຖວາຍພຣະເຈົ້ານະຄອນຫລວງອິນເປັນພໍ່ເຖົ້າ ຂໍເອົາພຣະ

---

(໑) ໄພ່ຫລືໄພ່ເມືອງຫມາຍເອົາພົລເມືອງສາມັນທົ່ວ ໆ ໄປ ບໍ່ແມ່ນຂ້ອຍ.

ສາສນາເຂົ້າມາເຜີຍແຜ່ໃນປະເທດລາວ  ພຣະເຈົ້ານະຄອນຫລວງໄດ້ຮັບພຣະຣາຊສານນັ້ນແລ້ວ ຈຶ່ງນິມົນເອົາພຣະມະຫາປາສມັນຕະເຖຣະເຈົ້າແລະພຣະມະຫາເທບລັງກາ ພ້ອມດ້ວຍພິກຂຸສົງອີກ ໒໐ ຄົນ  ນັກປາດຜູ້ຮຽນຈົບພຣະໄຕປີດົກອີກ ໓ ຄົນ ຄື: ນໍຣະສິງ ນໍຣະເດດ ແລະ ນໍຣະສາດ ໃຫ້ນໍາເອົາພຣະສາສນາຂຶ້ນມາປະດິສຖານໃນປະເທດລາວພ້ອມກັນນັ້ນພຣະອົງໄດ້ພຣະຣາຊທານພຣະພຸທຮູບ ປັນຈະໂລຫະອົງນຶ່ງນາມວ່າ ພຣະບາງໃຫ້ມາເປັນທີ່ສັກກາຣະບູຊາ ທັງພຣະຄັມພີໄຕປີດົກແລະຫນໍ່ຕົ້ນມະຫາໂພທິ ນອກຈາກນີ້ຍັງພຣະຣາຊທານ ພວກຊ່າງຕ່າງ ໆ ຂຶ້ນມານໍາເປັນອັນມາກ ຄື ຊ່າງຫລໍ່ພຣະພຸທຮູບ ຊ່າງເຫລັກຊ່າງທອງຊ່າງຄໍາເປັນຕົ້ນ ຕລອດເຄື່ອງຕູຣິຍະນົນຕີ ປີ່ພາດ ລະນາດຄ້ອງວົງ ເຄື່ອງຫລິ້ນທຸກຢ່າງດ້ວຍ ສົມເດັດພຣະເຈົ້າເມືອງນະຄອນຫລວງໄດ້ແຕ່ງຄົນຊາວຂະເມນໃຫ້ຂຶ້ນມານໍາພຣະມະຫາປາສມັນໃນຄາວນັ້ນ ມີຄົນ ໔ ບ້ານໂຮມ ໔໐໐໗ ຄົນຄື ໂຍມອຸປຖາກພິຊສົງ ໑໐໐໐ ຄົນ ບໍຣິວານຂອງນັກປາດທັງສາມ ໓໐໐໐ ຄົນບໍຣິວານແມ່ນົມຂອງພຣະນາງແກ້ວເກັງຍາ ໑໐໐໐ ຄົນ.

ປີ ຄ.ສ.໑໓໕໙ (ພ.ສ.໑໙໐໘) ພຣະມະຫາປາສມັນຕະເຖຣະເຈົ້າກັບພວກບໍຣິວານໂຍມອຸປຖາກກໍຍົກອອກຈາກເມືອງນະຄອນຫລວງ ຂຶ້ນມາຕາມຄາວທາງໂດຍລໍາດັບມາເຖິງເມືອງແກ(໑) ແມ່ນົມຂອງນາງແກ້ວເກັງຍາເກີດອາພາດມາບໍ່ໄດ້ ເຈົ້າຫມື່ນແກ ຈຶ່ງໃຫ້ແມ່ນົມກັບພວກບໍຣິວານເຊົາຢູ່ບ້ານໄຜ່ຫນາມໄດ້ສອງເດືອນ ແມ່ນົມຈຶ່ງຫາຍຈາກພຍາດ ຝ່າຍສົມເດັດພຣະເຈົ້າຟ້າງຸ່ມຄັນໄດ້ຊົງຊາບວ່າພຣະມະຫາປາສມັນຕະມາເຖິງເມືອງແກແລ້ວ ກໍຊົງຕົກແຕ່ງໃຫ້ເສນາອໍາມາດລົງໄປຮັບຮອດເມືອງແກ ແລ້ວພຣະມະຫາເຖຣະເຈົ້າ ກໍພາບໍຣິວານແຫ່ແຫນພຣະບາງຂຶ້ນມາຕາມແມ່ນໍ້າຂອງຈົນເຖິງວຽງຈັນຫມື່ນຈັນ ເຈົ້ານະຄອນວຽງຈັນອອກໄປຕ້ອນຮັບແລະນິມົນພຣະມະຫາປາສມັນໃຫ້ເຊົາຢູ່ດອນຈັນ ຊາວນະຄອນວຽງຈັນກໍພາກັນອອກໄປສັກກາຣະບູຊາສົມໂພດຕລອດສາມວັນສາມຄືນ ຄັນຖ້ວນສາມວັນແລ້ວພຣະມະຫາປາສມັນຈຶ່ງໃຫ້ເຊີນພຣະບາງອອກໄປເຖິງວຽງຄໍາ ເຈົ້າວຽງຄໍາອອກມາຕ້ອນຮັບແລະນິມົນພຣະມະຫາປາສມັນເຂົ້າໄປເຊົາໃນເມືອງ ພວກຊາວເມືອງວຽງຄໍາກໍພາກັນມາທໍາສັກກາຣະພຣະບາງຕລອດສາມວັນສາມຄືນ.

## ພຣະບາງປະດິສຖານຢູ່ວຽງຄໍາ

ຄັນຖ້ວນສາມວັນແລ້ວ ຈະເຊີນພຣະບາງຂຶ້ນໄປເມືອງຊຽງທອງ ຄົນສໍາຮັບຫາມພຣະບາງມາແຕ່ກ່ອນຫາມເທື່ອລະແປດຄົນໃນວັນນັ້ນຫາມແປດຄົນບໍ່ຂຶ້ນ ພຣະເຖຣະເຈົ້າຈຶ່ງຈັດຄົນເຂົ້າຫາມ ໑໒ ຄົນຈົນເຖິງ ໘໔ ຄົນ ກໍຍັງຍົກບໍ່ຂຶ້ນ ພວກນັກປາດທັງ ໓ ທີ່ຮັກສາພຣະບາງມານັ້ນ ເຫັນເປັນອັສຈັນ ຈຶ່ງໃຫ້ຈັບສລາກສ່ຽງເບິ່ງ ໃນສລາກນັ້ນອອກວ່າ ເທພເຈົ້າຜູ້ຮັກສາພຣະບາງມີຄວາມປະສົງຈະໃຫ້ພຣະບາງນີ້ສະຖິດຢູ່ວຽງຄໍານີ້ກ່ອນ

---

(໑) ເມືອງແກຢູ່ທີ່ໃດບໍ່ຊາບ ແຕ່ສັນນິດຖານວ່າ ຄົງຈະແມ່ນ ອໍາເພີ ນາແກ  ໃນຈັງຫວັດສະກົນນະຄອນ ປະເທດໄທ.

ພຣະມະຫາເຖຣະເຈົ້າໄດ້ຊາບເຈຕນາຂອງເທພດາດັ່ງນັ້ນ ກໍມອບຫມາຍພຣະບາງໄວ້ໃຫ້ເຈົ້າເມືອງວຽງຄໍາຮັກສາແລະທໍາສັກກາຣະບູຊາ ພຣະມະຫາປາສມັນຈຶ່ງພາບໍຣິວານຂຶ້ນໄປເມືອງຊຽງທອງໂດຍທາງບົກ ຄັນເຖິງກໍເຂົ້າໄປຖວາຍພຣະພອນສົມເດັດພຣະເຈົ້າຟ້າງູ່ມໃຫ້ຊາບທຸກປະການ ສົມເດັດພຣະເຈົ້າຟ້າງູ່ມພ້ອມດ້ວຍ ອັຄມະເຫສີຈຶ່ງນິມົນພຣະມະຫາປາສມັນໃຫ້ໄປຕັ້ງອາຣາມຢູ່ເຫນືອປາກຫ້ວຍໂຮບ ຈຶ່ງເອີ້ນວ່າວັດປາສມັນ ມາຈົນທຸກວັນນີ້ ແລະຫນໍ່ພຣະສີມະຫາໂພກໍທົງພຣະກະຣຸນາໃຫ້ປູກ ໄວ້ໃນອາຣາມນັ້ນ ແຕ່ນັ້ນມາພຣະມະຫາເຖຣະກໍໄດ້ແນະນໍາສັ່ງສອນປະຊາຊົນຊາວລາວໃຫ້ນັບຖືພຣະພຸທສາສນາ ໂດຍມີພຣະນາງແກ້ວເກັງຍາເປັນອັຄສາສະນູປະຖັມພິກາ ພຣະພຸທສາສນາຈຶ່ງໄດ້ຕັ້ງຫມັ້ນລົງໃນປະເທດລາວລ້ານຊ້າງຕັ້ງແຕ່ນັ້ນມາ.

ເຖິງປີ ຄ.ສ.໑໓໖໑ (ພ.ສ.໑໙໐໔) ສົມເດັດພຣະເຈົ້າຟ້າງູ່ມມະຫາຣາດ ໄດ້ຍົກຣິພົນໂຍທາໄປຕີເອົາຂ້າກັນຣາງ ຊາວເມືອງພາແລະເມືອງເຫລືອກໄດ້ທັງສອງເມືອງ ແຕ່ນັ້ນມາອານາເຂດພຣະຣາຊອານາຈັກລາວກໍແຜ່ກວ້າງໄປທົ່ວທຸກທິດ ເຈົ້າແຜ່ນດິນນານາປະເທດທີ່ຢູ່ໃກ້ຖິ່ນລັດລຽງມີຄວາມຢ້ານກົວພຣະເດຊານຸພາບສົມເດັດພຣະເຈົ້າຟ້າງູ່ມເປັນອັນມາກ ກໍພາກັນສົ່ງຣາຊບັນນາການມາຖວາຍບໍ່ໄດ້ຂາດ ຣາຊອານາເຂດປະເທດລາວໃນຄາວນັ້ນ ທິດຕາເວັນອອກຕິດຕໍ່ກັບປະເທດແກວຕາມສັນພູນ້ຳແບ່ງ ທາງທິດອາຄະເນຕິດຕໍ່ດິນຈາມແລະແດນຂະເມນຕັ້ງແຕ່ຫລີ່ຜີຂອນມາ ທາງທິດທັກຂິນແລະຫໍຣະດີຕໍ່ແດນກຸງສີອະຍຸທຍາ ນັບແຕ່ສາຍດົງພຣະຍາໄຟ ໄປເຖິງເມືອງນະຄອນໄທ ທາງທິດປັດສິມຕໍ່ແດນປະເທດລ້ານນານັບຕັ້ງແຕ່ເມືອງພາໃດ ລົງມາ ທາງທິດອຸດອນ ຕິດຕໍ່ປະເທດຈີນ ນັບແຕ່ ເມືອງບູນໃຕ້ ບູນເຫນືອ ລົງມາ.

ສົມເດັດພຣະເຈົ້າຟ້າງູ່ມມະຫາຣາດທົງສເວີຍຣາຊສົມບັດຢູ່ນະຄອນຊຽງທອງ ພຣະອົງມີພຣະຣາຊໂອຣົດພຣະຣາຊທິດາ ປະສູດຈາກພຣະນາງແກ້ວເກັງຍາ ອັຄມະເຫສີຮວມ ມີ ອົງ ຄື: ທ້າວອຸ່ນເມືອງ ໑ ທ້າວຄໍາກອງ ໑ ນາງແກ້ວເກດເກສີ ໑.

ເຖິງປີ ຄ.ສ.໑໓໖໘ (ພ.ສ.໑໙໑໑) ສົມເດັດພຣະນາງແກ້ວເກັງຍາ ອັຄມະເຫສີກໍສັ້ນພຣະຊົນ ແຕ່ນັ້ນມາພຣະອົງບໍ່ຄ່ອຍເອົາໃຈໃສ່ວຽກບ້ານການເມືອງເຫມືອນແຕ່ກ່ອນ ການປົກຄອງພາຍໃນພຣະນະຄອນແລະພຣະຣາຊວັງ ພຣະອົງໄດ້ມອບໃຫ້ ແສນເມືອງ ແລະ ພວກທ້າວຂຸນເປັນຜູ້ເບິ່ງແຍງ ຄາວນັ້ນຈຶ່ງເກີດມີອໍານາດທຸຈຣິຕຜູ້ນຶ່ງຊື່ວ່າ ກວານມືຊາ ໄດ້ຮັບພຣະຣາຊອາດຍາ ໃຫ້ເປັນຜູ້ເກັບສ່ວຍຈາກພົລເມືອງ ກວານມືຊາເກັບເອົາເກີນກໍານົດ ໂດຍອ້າງວ່າເປັນພຣະຣາຊອາດຍາສັ່ງ ອັນເປັນເຫດໃຫ້ພົລເມືອງໄດ້ຮັບຄວາມເດືອດຮ້ອນ ປະການນຶ່ງບັນດາເສນາຂ້າຣາຊການທັງຫລາຍ ທີ່ເປັນຂ້ອຍເກົ່າຂອງພຣະອົງ ເຊິ່ງໄດ້ຕາມພຣະອົງໄປຢູ່ປະເທດຂະເມນນໍານັ້ນ ໄດ້ຮັບຕໍາແຫນ່ງເປັນເຈົ້າກວານ ເຈົ້າທີ ພວກເຈົ້າກວານເຈົ້າທີເຫລົ່ານັ້ນ ພາກັນຮຽກຮ້ອງເອົາເບັ້ຽຫວັດເງິນອັນຫລາຍກວ່າພວກເຈົ້າກວານເຈົ້າທີແຕ່ກ່ອນ ເປັນການຜິດກະບິນເມືອງ ພວກເສນາຂ້າຣາຊການເກົ່າທັງຫລາຍ ກໍມີຄວາມໂທມະນັດຂັດເຄືອງໃຈ ປະການນຶ່ງ ພວກເສນາຂ້າຣາຊການເກົ່າຂອງພຣະຣາຊບິດາ ຖ້າມີຜູ້ມາຟ້ອງວ່າທໍາຜິດແຕ່ເລັກນ້ອຍ ພຣະອົງກໍຕັດສັ່ງໃຫ້ລົງໂທດ

ເປັນອັນຫນັກ ສ່ວນເສນາຂ້າໃຊ້ຜູ້ທີ່ໄດ້ຕິດຕາມພຣະອົງໄປນັ້ນ ແມ່ນທຳຜິດພຣະອົງກໍບໍ່ໄດ້ລົງໂທດ ເຫດນັ້ນ ພໍເຖິງປີ ຄ.ສ.໑໓໗໑ (ພ.ສ.໑໙໑໔) ພວກເສນາອາມາດແລະປະຊາຣາສດອນທັງຫລາຍຈຶ່ງພ້ອມກັນບັງຄັບໃຫ້ພຣະອົງສະລະຣາຊສົມບັດ ແລ້ວເນຣະເທດພຣະອົງ ໄປຢູ່ເມືອງນ່ານ ຢູ່ທີ່ນັ້ນໄດ້ ໒ ປີກໍສະເດັດສູຣະຄົດ (ຄ.ສ.໑໓໗໓) ເມື່ອພຣະຊົນຂອງພຣະອົງໄດ້ ໕໗ ປີ(໑) ເຈົ້າເມືອງນະຄອນນ່ານຈຶ່ງສ້າງວັດກວມອັດຖິທາດຂອງພຣະອົງໄວ້ວັດນຶ່ງ ໃສ່ຊື່ວ່າ ວັດຊຽງງາມ ຢູ່ໃນນະຄອນນ່ານ.

## ໒.ຣັຊການພຣະຍາສາມແສນໄທໄຕພູວະນາດ

ເມື່ອສົມເດັດພຣະເຈົ້າຟ້າງູ້ມສະເດັດຫນີໄປເມືອງນານແລ້ວພວກເສນາອາມາດຣາຊມູນຕີທັງຫລາຍຈຶ່ງພ້ອມກັນອະພິເສກທ້າວອຸ່ນເມືອງ ຂຶ້ນສເວີຍຣາຊສົມບັດໃນນະຄອນຊຽງທອງແທນພຣະຣາຊບິດາ.

ທ້າວ ອຸ່ນເມືອງ ເກີດປີວອກ ຈຸລສັກຣາດ ໗໑໘ (ຄ.ສ.໑໓໕໖) ຂຶ້ນສເວີຍຣາຊສົມບັດໃນປີຊວດ ເດືອນ ໖ ອອກໃຫມ່ ໓ ຄ່ຳ ຈຸລສັກຣາດ ໗໓໖ (ຄ.ສ.໑໓໗໔) ເວລານັ້ນພຣະຊົນຂອງພຣະອົງໄດ້ ໑໘ ປີ.

ເມື່ອທ້າວອຸ່ນເມືອງຂຶ້ນສເວີຍຣາຊສົມບັດໄດ້ ໓ ປີ ພຣະອົງຈຶ່ງມີພຣະຣາຊໂອງການໃຫ້ຈັດທຳບັນຊີພົນຄົນເສິກແລະປ່ຽນແປງລະບຽບຕຳແຫນ່ງຂ້າຣາຊການໃຫມ່ ບັນຊີພົລຄົນເສິກໃນສມັຍນັ້ນແບ່ງອອກເປັນ ໕ ກົວເສິກ ຫລື ໕ ທັບ ມີກຳລັງພົນທັງຫມົດ ໓໐໐,໐໐໐ ຄົນ ຈຳນວນພົນສາມແສນຄົນນີ້ນັບເອົາແຕ່ຄົນລາວຄົນຕ່າງປະເທດທີ່ມາເພິ່ງພາອາສັຍແລະນັກບວດນັກສຶກສາບໍ່ນັບໂຮມເຂົ້ານຳ ສ່ວນພົນຂ້າມີຢູ່ ໔໐໐,໐໐໐ ຄົນ ຮວມກຳລັງພົນເສິກທັງລາວແລະຂ້າ ມີຢູ່ ໗໐໐,໐໐໐ ຄົນ.

ຈຳນວນພົນເສິກ ໕ ທັບເຊິ່ງມີກຳລັງພົນ ເປັນລາວລ້ວນ ໓໐໐,໐໐໐ ຄົນນັ້ນ ພຣະອົງໄດ້ຈັດແບ່ງໄວ້ດັ່ງນີ້:

ກົວເສິກ ໑ ມີພົນຮົບ ໓໐,໐໐໐ ຄົນ ພົນຖືຫາບ ໒໐,໐໐໐ ຄົນ ຮວມ ໕ ກົວເສິກເປັນຄົນ ໒໕໐,໐໐໐ ຄົນເຫລືອໄວ້ເປັນຄົນຮັກສາເມືອງ ໕໐,໐໐໐ ຄົນ ຈຶ່ງຮວມເປັນພົນເສິກ ໕ ທັບມີກຳລັງພົນ ໓໐໐,໐໐໐ ຄົນ.

ອາສັຍເຫດທີ່ພຣະອົງມີກຳລັງພົນເສິກແຕ່ທີ່ເປັນລາວລ້ວນເຖິງສາມແສນຄົນດັ່ງນີ້ ພວກເສນາມູນຕີທັງຫລາຍຈຶ່ງຖວາຍນາມໃຫມ່ວ່າ "ພຣະຍາສາມແສນໄທໄຕພູວະນາຖາທິປັດສີ ສັດຕນາຄະນະຫຸດ" ແລະພ້ອມກັນນີ້ພວກເສນາມູນຕີທັງຫລາຍຈຶ່ງອະພິເສກນາງນ້ອຍນົງຮຽວ ພຣະຣາຊທິດາຂອງເຈົ້າຟ້າ ຄຳຮຽວ(໒)ໃຫ້

---

(໑) ສະບັບນຶ່ງວ່າ ໕໖ ປີ. (໒) ໃນຫນັງສືພົງສາວດານບໍຣົມຜູກ ໒ ທີ່ມີຢູ່ວັດສີສະເກດກ່າວໄວ້ວ່າ ເຈົ້າຟ້າຄຳຮຽວເປັນພຣະອະນຸຊາຂອງບິດາເຈົ້າຟ້າງູ້ມ ນາງນ້ອຍນົງຮຽວເປັນທິດາຂອງເຈົ້າຟ້າຄຳຮຽວ ອັນເຫັນຈະຈິງຢູ່ເພາະໃນຫນັງສືນິທານຂຸນບໍຣົມສະບັບຢູ່ຫໍສມຸດກຸງເທບກໍກ່າວໄວ້ວ່າ "ຈຶ່ງເອົານາງນ້ອຍນົງຮຽວ ລູກພຣະຍາຄຳຮຽວ ອັນເປັນລູກອາວນອງພໍ່ພຣະຍາສາມແສນໄທ ມາເປັນນາງແທນຟ້າ ຈຶ່ງໃສ່ຊື່ວ່າ ບົວແທນ ຕົນແລ.



ພຣະຍາສາມແສນໄທໄຕພູວະນາດ

ເປັນເອກ ອັຄມະເຫສີຖວາຍພຣະນາມວ່າ ເຈົ້ານາງແທ່ນຟ້າ ແລ້ວຈຶ່ງສະຖາປະນາທ້າວຄຳກອງ ພຣະອະນຸຊາຂຶ້ນເປັນແສນເມືອງ.

ພຣະຍາສາມແສນໄທໄຕພູວະນາດເຈົ້າ ຄັນຊົງຈັດແຈ່ງແຕ່ງຕັ້ງລະບຽບຣາຊການບ້ານເມືອງແລ້ວ ພຣະອົງຈຶ່ງແຕ່ງເສນາອາມາດໄປເຊີນເອົາອັດຊິທາດແຫ່ງພຣະຣາຊບິດາ ມາຈາກເມືອງນ່ານແລ້ວເອົາມາສະຖາປະນາເປັນເຈດີໄວ້ທີ່ພູກູ່ໄຕ ຈຶ່ງເອີ້ນວ່າພຣະທາດກູ່ໄຕຕໍ່ມາ ນອກຈາກນັ້ນພຣະອົງໄດ້ສ້າງພຣະອາຣາມຫຼວງຂຶ້ນວັດນຶ່ງ ຂນານນາມວ່າວັດແກ້ວ ທັງສະຖາປະນາພຣະເທບລັງກາກັບພຣະມະຫາສມັນຕະເຖຣະເຈົ້າຂຶ້ນເປັນພຣະມະຫາສາມີເຈົ້າວັດແກ້ວ ແລ້ວພຣະຣາຊທານໄທຄົວຂເມນ ອັນນາມນຳແມ່ນົມແຫ່ງພຣະຣາຊມານດາ ໃຫ້ເປັນຄົນອຸປຖາກວັດແກ້ວ ສຳເຣັດບໍຣະບອນແລ້ວຈຶ່ງຊົງພຣະຣາຊອາດຍາປະທານອະພັຍໂທດແກ່ຄົນຜູ້ກະທຳຜິດພຣະຣາຊອາດຍາ ເຊິ່ງໄດ້ເຂົ້າມາອາສັຍຢູ່ວັດແກ້ວນັ້ນ ບໍ່ໃຫ້ມີໂທດໃຫ້ມີແຕ່ຂຶ້ນດອກໄມ້ສົມມາພຣະມະຫາສາມີເຈົ້າ ແລ້ວກໍໃຫ້ໄປຫາວຽກຫາການດັ່ງເກົ່າ.

ໃນຣັຊການຂອງພຣະຍາສາມແສນໄທໄຕພູວະນາດນີ້ ພຣະອົງໄດ້ຊົງແຕ່ງໃຫ້ກອງທັບເມືອງພວນຍົກໄປຕີເອົາເມືອງຊຽງສາແລະເມືອງຊຽນໄດ້ທັງສອງເມືອງ ຝ່າຍເມືອງຊຽງແສນຄັນໄດ້ຊາບຂ່າວວ່າສົມເດັດພຣະເຈົ້າຟ້າງູ້ມສະເດັດສູ່ຣະຄົດແລ້ວ ແລະພຣະຣາຊໂອຣົດ (ສາມແສນໄທ) ໄດ້ຂຶ້ນສເວີຍຣາຊສົມບັດແທນ ພວກເມືອງຊຽງແສນຈຶ່ງຄິດຄ້າງອ້າງແຂງ ບໍ່ຍອມຂຶ້ນກັບເມືອງຊຽງທອງດັ່ງແຕ່ກ່ອນ ພຣະຍາສາມແສນໄທໄຕພູວະນາດເຈົ້າ ຈຶ່ງຊົງແຕ່ງໃຫ້ໝື່ນທອກກັບແສນອຸ່ນເປັນແມ່ທັບ ເກນພົນໂຍທາຍົກຂຶ້ນໄປຕີເມືອງຊຽງແສນ ພຣະເຈົ້າແຜ່ນດິນເມືອງຊຽງແສນເຫັນວ່າ ຈະຕ້ານທານປ້ອງກັນເມືອງໄວ້ບໍ່ໄດ້ ຈຶ່ງຂໍອ່ອນຍອມຖວາຍດອກໄມ້ເງິນ ດອກໄມ້ຄຳແກ່ນະຄອນຊຽງທອງ ພ້ອມກັນນັ້ນກໍໄດ້ສົ່ງພຣະຣາຊທິດາ ຜູ້ມີນາມວ່າ ນາງນ້ອຍອ່ອນສໍ ມາຖວາຍພຣະຍາສາມແສນໄທດ້ວຍ ແຕ່ນັ້ນມາ ບ້ານເມືອງຈຶ່ງຢູ່ໃນຄວາມສງົບ ອາ ນາປະຊາຣາສດອນມີຄວາມສນຸກສຸກສະບາຍທຸກຖ້ວນໜ້າ ພຣະກຽດຕິຍົດຂອງພຣະຍາສາມແສນໄທເຈົ້າແຜ່ພາຍໄປທຸກປະເທດເຂດຂັນທະສີມາ ບັນດາພຣະມະຫາກະສັດຕາທິຣາຊເຈົ້າທັງຫລາຍທີ່ຢູ່ໃນນານາປະເທດ ຈຶ່ງສົ່ງຣາຊບັນນາການແລະພຣະຣາຊທິດາມາຖວາຍເປັນອັນມາກຄື:

໑. ພຣະເຈົ້າແຜ່ນດິນປະເທດລ້ານນາ ສົ່ງພຣະຣາຊທິດານາມວ່າ ນາງນ້ອຍອ່ອນສໍມາຖວາຍພ້ອມກັບບໍຣິວານພົນຄົນ ພຣະອົງໄດ້ສ້າງຜາສາດພຣະຣາຊທານຫລັງນຶ່ງຊື່ວ່າ ຫໍສູງຊຽງກາງ ສ່ວນບໍຣິວານພົນຄົນນັ້ນ ພຣະຣາຊທານທີ່ໃຫ້ຢູ່ທ້າຍພູເຂົາກາ.

໒. ພຣະເຈົ້າແຜ່ນດິນກຸງສີອະຍຸທຍາ ສົ່ງພຣະນາງແກ້ວຍອດຟ້າມາຖວາຍ ພຣະອົງພຣະຣາຊທານໃຫ້ຢູ່ໂຮງຊຽງໃຕ້ ເໜືອສີບຄົງ.

໓. ເຈົ້າເມືອງຊຽງຮຸ້ງ ສົ່ງນາງແກ້ວສີດາ ມາຖວາຍພຣະອົງພຣະຣາຊທານໃຫ້ຢູ່ທ້າຍໂຮງຊຽງທອງ.

ພຣະຍາສາມແສນໄທໄຕພູວະນາດເຈົ້າ ມີພຣະຣາຊໂອຣົດປະສູດຈາກມານດາຕ່າງກັນຮວມ ໕ ອົງ

ຄື :

໑. ທ້າວລ້ານຄຳແດງ ປະສູດຈາກນາງນ້ອຍນົງຣຽວ ອັນເປັນນາງມະຫາເທວີ.

໒. ທ້າວລືໄຊ (ບໍ່ຊາບພຣະມານດາ)

໓. ທ້າວຄຳເຕັມຊາ ປະສູດຈາກນາງແກ້ວສີດາ.

໔. ທ້າວວັງບຸຣີ ປະສູດຈາກນາງແກ້ວຍອດຟ້າ.

໕. ທ້າວກອນຄຳ ປະສູດຈາກນາງນ້ອຍອອນສໍ.

ແລະມີພຣະຣາຊທິດາ ໕ ອົງ ຄື: ນາງແກ້ວກຸມມາຣີ ໑ ພຣະນາງອະໂນຊາ ໑ ພຣະນາງມະໂນຣາ ໑ ພຣະນາງສຸພັດທາ ໑ ພຣະນາງມະຫາໄກ ໑ (ພຣະນາງມະຫາໄກປະສູດຈາກພຣະນາງແກ້ວຍອດຟ້າ ອາຍຸໄດ້ ໕ ປີກໍຕາຍ ທ້າວວັງບຸຣີຈຶ່ງເອົາດູກມາສ້າງວັດກອນໄວ້ທີ່ວຽງຈັນ ຮຽກຊື່ວ່າ ວັດສີຫອມ).

ເມື່ອພຣະຣາຊໂອຣົດທັງຫລາຍຈະເຣີນໄວແລ້ວ ພຣະອົງທົງປູກແປງໃຫ້ຄອງເມືອງຄືນລະເມືອງຄື:

ໃຫ້ທ້າວກອນຄຳ ໄປຄອງເມືອງຊຽງສາມີນາມວ່າພຣະຍາຈິກຄຳ

ໃຫ້ທ້າວວັງບຸຣີໄປຄອງເມືອງວຽງຈັນມີນາມວ່າພຣະຍາຂວາປ່າສັກ.

ໃຫ້ທ້າວຄຳເຕັມຊາ ໄປຄອງເມືອງປາກຫ້ວຍຫລວງ ມີພຣະນາມວ່າ ພຣະຍາປາກຫ້ວຍຫລວງ

ໃຫ້ທ້າວລືໄຊໄປຄອງເມືອງກະບອງ ມີພຣະນາມວ່າ ພຣະຍາໝື່ນບ້ານ.

ສ່ວນທ້າວລ້ານຄຳແດງ ພຣະອົງຕັ້ງໃຫ້ເປັນແສນເມືອງສົມເດັດພຣະຍາສາມແສນໄທສເວີຍຣາຊສົມບັດມາໄດ້ ໔໓ ປີ ກໍສະເດັດສູຣະຄົດໃນປີວອກ ຈຸລສັກຣາດໄດ້ ៧៧២ (ຄ.ສ.໑໔໑໗) ຣວມພຣະຊົນໄດ້ ໖໐ ປີ.

## ໓.ຣັຊການພຣະຍາລ້ານຄຳແດງ

ເມື່ອສົມເດັດພຣະຍາສາມແສນໄທ ສະເດັດສູຣະຄົດແລ້ວ ພວກເສນາອາມາດທັງຫລາຍ ຈຶ່ງພ້ອມກັນອະພິເສກທ້າວລ້ານຄຳແດງ ຂຶ້ນສເວີຍຣາຊສົມບັດ ເມື່ອພຣະຊົນໄດ້ ໓໐ ປີ ເມື່ອພຣະອົງໄດ້ສເວີຍຣາດແລ້ວ ຈຶ່ງທົງພຣະກະຣຸນາໃຫ້ສ້າງພຣະອາຣາມ ຂຶ້ນໃໝ່ສອງບ່ອນ ຄື ວັດສວນແຖນ ແລະ ວັດໂບດ ແລ້ວພຣະອົງທົງສະຖາປະນາພຣະມະຫາສມຸດ ຂຶ້ນເປັນພຣະສັງຄະເສນາເຈົ້າວັດສວນແຖນ ໃຫ້ພຣະມະຫາສັດທາທິໂກ ເປັນພຣະມະຫາສາມີເຈົ້າວັດໂບດ ວັດສວນແຖນນັ້ນ ທົງສ້າງກອນພຣະອັດຖິທາດຂອງພຣະຍາສາມແສນໄທ.

ພຣະຍາລ້ານຄຳແດງ ທົງສເວີຍຣາດມາໄດ້ ໑໑ ປີ ມີພຣະຣາຊໂອຣົດທີ່ພາກົດພຣະນາມຢູ່ ໒ ອົງ ຄື: ທ້າວພົມມະທັດ ໑ ທ້າວຍຸຄອນ ໑ ລົນເຖິງປີ ຄ.ສ.໑໔໒໘ ພຣະຍາລ້ານຄຳແດງກໍສະເດັດສູຣະຄົດ ຣວມພຣະຊົນໄດ້ ໔໑ ປີ ພວກອາມາດຣາຊມຸນຕີທັງຫລາຍ ທຳການຖວາຍພຣະເພີງແລ້ວ ກໍສ້າງວັດກອນພຣະອັດຖິທາດໄວ້ວັດນຶ່ງ ຮ່ອງກວ່າ ວັດມະໂນຣົມ.

## ຄວາມວຸ້ນວາຍ ເນື່ອງຈາກນາງມະຫາເທວີ

ການເມືອງປະເທດລ້ານຊ້າງ ໃນລະຫວ່າງນັ້ນ ໄດ້ຮັບຄວາມວຸ້ນວາຍເປັນອັນມາກ ເນື່ອງຈາກການປົກຄອງພາຍໃນ ຕົກຢູ່ໃນກຳມືຂອງນາງມະຫາເທວີຜູ້ໃຈບາບ ນາງມະຫາເທວີນັ້ນ....ເປັນພຣະຣາຊພາຄິນີຂອງພຣະຍາສາມແສນໄທ ພຣະນາມເດີມຊື່ວ່າ ນາງເກດແກ້ວເກສີ ໄດ້ແຕ່ງດອງກັບລູກຊາຍປູ່ລ້ຽງ ຢູ່ເປັນແສນເມືອງ ນາງມີຄວາມປະສົງຈະໃຫ້ສາມີຂອງນາງເປັນຜູ້ມີອຳນາດແລະໄດ້ເປັນພຣະເຈົ້າແຜ່ນດິນໃນນະຄອນຊຽງທອງ ດັ່ງນັ້ນເມື່ອພຣະຍາລ້ານຄຳແດງສ້ຽງພຣະຊົນແລ້ວ ນາງຈຶ່ງຈັດການບ້ານເມືອງໄປຕາມຄວາມປະສົງຂອງຕົນເອງ ຄື ນາງໄດ້ຂໍໃຫ້ສາມີຂອງຕົນເປັນແສນຫລວງຊຽງລໍ ເຊິ່ງເປັນຕຳແໜ່ງມີອຳນາດເດັດຂາດແລະສູງສຸດ ສະນັ້ນພໍພຣະຍາລ້ານຄຳແດງສ້ຽງພຣະຊົນແລ້ວ ເສນາອາມາດທັງຫລາຍພ້ອມກັນອະພິເສກເຈົ້າພົມມະທັດ ໂອຣົດພຣະຍາລ້ານຄຳແດງ ຂຶ້ນເປັນເຈົ້າແຜ່ນດິນ ທ້າວພົມມະທັດຄອງເມືອງຢູ່ໄດ້ ໑໐ ເດືອນ ນາງມະຫາເທວີກໍທຳອຸບາຍເອົາຫລານນ້ອຍໄປຂ້າເສັຽທີ່ຜາພານ ແລ້ວຍົກທ້າວຢຸຄອນຂຶ້ນເປັນເຈົ້າແຜ່ນດິນ ໄດ້ ໒ ເດືອນນາງມະຫາເທວີຈະຈັບຂ້າ ພຣະອົງຮູ້ຕົວຈຶ່ງລັກໜີ ນາງມະຫາເທວີໃຫ້ຄົນໄປນຳ ທັນຢູ່ຜາດາວ ກໍປະຫານຊີວິດເສັຽ.......

ແຕ່ນັ້ນ ນາງມະຫາເທວີ ຈຶ່ງໃຫ້ໄປເຊີນເອົາທ້າວກ້ອນຄຳພຣະໂອຣົດຂອງພຣະຍາສາມແສນໄທທີ່ໄປຄອງເມືອງຢູ່ຊຽງສາມາເປັນເຈົ້າແຜ່ນດິນ ຖວາຍນາມວ່າ ພຣະຍາຊຽງສາ. ພຣະຍາຊຽງສາ ຄອງເມືອງໄດ້ ໑ ປີກັບ ໖ ເດືອນ ນາງມະຫາເທວີກໍທຳອຸບາຍເອົາໄປຂ້າເສັຽທີ່ຄົກເຮືອ ເມື່ອພຣະຍາຊຽງສາຕາຍແລ້ວພວກອາມາດທັງຫລາຍຈຶ່ງມາເຊີນເອົາ ທ້າວເຄົ່າຕັນຊາຜູ້ເປັນພຣະຍາປາກຫ້ວຍຫລວງ ເມືອເປັນເຈົ້າແຜ່ນດິນ ພຣະຍາປາກຫ້ວຍຫລວງຄອງເມືອງໄດ້ ໕ ເດືອນຮູ້ຕົວວ່ານາງມະຫາເທວີ ຈະລອບຂ້າຈຶ່ງສະເດັດໜີຄືນມາປາກຫ້ວຍຫລວງ ມາຢູ່ປີດຽວກໍສ້ຽງພຣະຊົນ ອາມາດທັງຫລາຍຈຶ່ງສ້າງວັດກວມອັດຖິທາດໄວ້ທີ່ບ້ານບໍ່ຍາງແຄມຫ້ວຍຫລວງ ເມື່ອພຣະຍາປາກຫ້ວຍຫລວງສະເດັດໜີແລ້ວ ນາງເທວີ ກໍໃຫ້ອາມາດໄປເຊີນເອົາທ້າວລືໄຊ ຜູ້ເປັນພຣະຍາໝື່ນບ້ານຢູ່ເມືອງກະບອງ ມາສເວີຍຣາດ ຖວາຍພຣະນາມວ່າພຣະຍາໝື່ນບ້ານ ພຣະຍາໝື່ນບ້ານຄອງເມືອງໄດ້ ໖ ເດືອນ ພຣະອົງຮູ້ວ່າ ພຣະນາງມະຫາເທວີຈະປອງຂ້າ ກໍປົງພຣະຊົນພຣະອົງເອງເສັຽ ທີ່ສວນອຸທຍານພຣະຍາໝື່ນບ້ານສ້ຽງພຣະຊົນແລ້ວ ພວກອາມາດຈຶ່ງໄປເຊີນເອົາທ້າວໃຄບົວບານ (ຫລານພຣະຍາສາມແສນໄທ) ຜູ້ຄອງເມືອງຊຽງໃຄມາເປັນພຣະເຈົ້າແຜ່ນດິນ ພຣະຍາຊຽງໃຄ ຄອງເມືອງໄດ້ ໓ ປີນາງເທວີກໍທຳອຸບາຍຂ້າເສັຽທີ່ສົບຄານ ເມື່ອພຣະຍາຊຽງໃຄຕາຍແລ້ວພວກເສນາອາມາດຈຶ່ງໄປເຊີນເອົາ ທ້າວວັງບຸຣີ ໂອຣົດພຣະຍາສາມແສນໄທ ທີ່ຢູ່ນະຄອນວຽງຈັນ ມາສເວີຍຣາດ ທ້າວວັງບຸຣີຊາບຄວາມໂຫດຮ້າຍຂອງນາງມະຫາເທວີ ຈຶ່ງບໍ່ສເດັດເມືອ ແຕ່ນັ້ນ ມີຊາຍຄົນນຶ່ງຊື່ທ້າວຄຳເກີດ ເປັນບຸດຂອງສາວໃຊ້ຂອງພຣະຍາສາມແສນໄທ ທ້າວຄຳເກີດ ໄດ້ອ້າງຕົນວ່າ ຕົນແມ່ນພຣະຍາສາມແສນໄທມາເກີດ ຄົນທັງຫລາຍກໍຫລົງເຊື່ອ ເພາະທ້າວຄຳເກີດ ຈື່ຈຳຂ້ອຍຂ້າມາຄົນຂອງພຣະ

ຍາສາມແສນໄທໄດ້ໜີດ ແລະເນື່ອງຈາກຄົນນັບຖືພຣະຍາສາມແສນໄທມາກ ດັ່ງນັ້ນພຣະນາງເທວີຈຶ່ງອະພິເສກທ້າວລຳເກີດຂຶ້ນເປັນພຣະເຈົ້າແຜ່ນດິນ ທ້າວລຳເກີດ ຄອງເມືອງໄດ້ ໒ ປີປາຍ ກໍຕາຍ.

ເນື່ອງຈາກພຣະນາງເທວີເປັນຄົນສາມານໂຫດຮ້າຍ ປອງຂ້າແຕ່ພຣະມະຫາກະສັດຢູ່ບໍ່ຂາດດັ່ງນັ້ນບັນດາວົງພຣະກະສັດ ທັງຫລາຍຈຶ່ງພາກັນຫລົບໜີລີ້ຊ່ອນຢູ່ ບໍ່ມີຜູ້ໃດສາມາດເປັນເຈົ້າແຜ່ນດິນໄດ້ ພວກເສນາອາມາດທັງຫລາຍເຫັນວ່າ ບ້ານເມືອງເກີດວຸ້ນວາຍຍ້ອນນາງເທວີເປັນຕົ້ນເຫດ ກໍພາກັນຈັບນາງເທວີແລະແສນຫລວງຊຽງລໍໄປປະຫານຊີວິດເສັຽທີ່ພາດຽວດ້ວຍການທໍຣະມານຢ່າງສາຫັດ ຄືໃຫ້ນອນທັວໜູນຕີນແລະໃຫ້ເອົາຕີນງຸມນ້ຳຈົນໃຫ້ໃຈຂາດ(໑)ແຕ່ນັ້ນມາພຣະຣາຊອານາຈັກລ້ານຊ້າງກໍຂາດຣະຫວ່າງກະສັດຢູ່ເຖິງ ໓ ປີ ໃນຣະຫວ່າງບ້ານເມືອງວຸ້ນວາຍນີ້ ພຣະມະຫາສມັນຕະຖຸຣະ ແລະພຣະມະຫາເທບລັງກາກໍເຖິງແກ່ມໍຣະນະພາບ ນັກປາດທັງສາມ ອົນມາແຕ່ເມືອງຂເມນກໍເຖິງແກ່ອະນິຈກັມໄປ ຍັງແຕ່ບຸດຂອງນັກປາດທັງສາມນັ້ນ ໄດ້ຮັບຕຳແໜ່ງເປັນນາຍທະຫານເອກຕໍ່ມາຄື: ນໍຣະສິງ ມີບຸດຊາຍ ໒ ຄົນຜູ້ພີ່ຊື່ ນໍຣະສິງ ຜູ້ນ້ອງຊື່ ນໍຣະນາຣາຍ ນໍຣະເດດ ແລະ ນໍຣະຣາດ ກໍມີບຸດຊາຍຄົນລະຄົນ ທັງ ໔ ຄົນນີ້ ໄດ້ເປັນນັກປາດປະຈຳຣາຊສຳນັກ ດັ່ງນັ້ນ ເມື່ອບ້ານເມືອງຂາດພຣະມະຫາກະສັດດັ່ງນີ້ ທ່ານທັງ ໔ ພ້ອມດ້ວຍເສນາອາມາດຈຶ່ງໄດ້ສະຖາປະນາພຣະມະຫາສັດທາທິໂກເຈົ້າວັດແກ້ວຂຶ້ນເປັນພຣະມະຫາສາມີ ແລະນິມົນພຣະມະຫາສມຸດທະໂຄດ ມາເປັນເຈົ້າວັດ ປາສມັນຕະ ແລ້ວມອບຣາຊການບ້ານເມືອງໃຫ້ແກ່ພຣະມະຫາຖຸຣະເຈົ້າທັງສອງ ເປັນຜູ້ເບິ່ງແຍງຊ່ອຍຕລອດ ໓ ປີ.

## ໔.ຣັຊການພຣະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ

ຕໍ່ງນັ້ນ ພຣະມະຫາສັດທາທິໂກ ເຈົ້າວັດແກ້ວ ພຣະມະຫາສມຸດທະໂຄດ ເຈົ້າວັດປາສມັນ ພ້ອມດ້ວຍນັກປາດທັງ ໔ ແລະເສນາມຸນຕີທັງຫລາຍ ຈຶ່ງພາກັນລົງມາອາຣາທນາເອົາທ້າວວັງບຸຣີເຈົ້ານະຄອນວຽງຈັນເຊິ່ງມີພຣະນາມໃນເວລານັ້ນວ່າ ພຣະຍາຂວາປາສັກ (ເພາະພຣະອົງປຸກໂຮງຢູ່ໃກ້ປາກຫ້ວຍປາສັກ) ໃຫ້ຂຶ້ນເມືອສເວີຍຣາຊສົມບັດ ເປັນພຣະເຈົ້າແຜ່ນດິນຢູ່ນະຄອນຊຽງທອງ.

ທ້າວວັງບຸຣີ ເປັນພຣະຣາຊໂອຣົດຂອງພຣະຍາສາມແສນໄທ ພຣະມານດາເປັນຣາຊທິດາຂອງພຣະເຈົ້າກຸງສີອະຍຸທຍາ.....ພຣະອົງປະສູດປີມະແມ ຈຸລສັກຣາດ ໗໗໖(໒)(ຄ.ສ.໑໔໑໔)ໄດ້ຂຶ້ນສເວີຍຣາຊສົມບັດໃນປີ ຄ.ສ.໑໔໔໗ ເມື່ອພຣະອົງໄດ້ ໔໐ ປີ ພວກເສນາອາມາດຣາຊມຸນຕີທັງຫລາຍ ພ້ອມກັນຖວາຍພຣະນາມວ່າ "ສົມເດັດພຣະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ".

ໃນງານຣາຊພິທີຣາຊາພິເສກສົມເດັດພຣະເຈົ້າໄຊຍະຈັກກະພັດແຜ່ນແຜ້ວນີ້ ສົມເດັດພຣະອິນຣາຊາເຈົ້າແຜ່ນດິນກຸງສີອະຍຸທຍາ ໄດ້ສົ່ງເຄື່ອງມຸງຄຸນຣາຊບັນນາການ ມາຊ່ອຍສົມໂພດເປັນອັນມາກ.

---

(໑) ຕາມພົງສາວະດານຫລາຍສະບັບວ່າ ເວລານັ້ນນາງມີອາຍຸໄດ້ ໓໔ ປີ (໒)ໃນພົງສາວະດານກຸງເກົ່າວ່າຈຸລສັກຣາດ ໗໒໔.

ເມື່ອສະເດັດຂຶ້ນສເວີຍຣາດແລ້ວ ພຣະອົງຈຶ່ງທົງສະຖາປະນາພຣະຣາຊຄູ ມະຫາສມຸດທະໂຄດ ຂຶ້ນເປັນພຣະທັມມະເສນາ ສະຖິດຢູ່ວັດມະໂນຣົມ ໃຫ້ພຣະມະຫາຍານຄັມພີ ເປັນພຣະສັງຄະເສນາສະຖິດຢູ່ວັດໂບດກາງເມືອງ ແລ້ວກໍພຣະຣາຊທານ ອະພັຍໂທດແກ່ຄົນຜູ້ກະທຳຜິດພຣະຣາຊອາດຍາ ເຊິ່ງໄດ້ເຂົ້າມາອາສັຍຢູ່ໃນວັດທັງສອງໂດຍດັ່ງພຣະຣາຊບິດາໄດ້ທົງປະທານມາແຕ່ກ່ອນ.

## ເຈົ້າຊາຍໝຸ່ຍກະບົດ

ເມື່ອພຣະອົງສະເດັດຂຶ້ນໄປສເວີຍຣາຊສົມບັດ ໃນນະຄອນຊຽງທອງນັ້ນ ທາງວຽງຈັນໄດ້ມອບໃຫ້ເຈົ້າຊາຍໝຸ່ຍເປັນຜູ້ປົກຄອງ(໑)ເວລານັ້ນ ເສນາໃຫຍ່ຝ່າຍວຽງຈັນ ເລັງເຫັນວ່າ....ເຫດການທາງນະຄອນຊຽງທອງຄົງຈະບໍ່ສງົບ ຈຶ່ງຍົວະເຍົ້າ ເຈົ້າຊາຍໝຸ່ຍ ໃຫ້ແຍກວຽງຈັນອອກເປັນເອກຣາດນຶ່ງຕ່າງຫາກ ກຳໝົດເອົາແຕ່ຕາດນ້ຳລົງໄປ (ເຫັນຈະແມ່ນແກ່ງຈັນ) ສົມເດັດພຣະເຈົ້າຈັກກະພັດໄດ້ທົງຊາບຂ່າວນີ້ ຈຶ່ງແຕ່ງພວກມະຫາດເລັກ ປອມຕົວລົງມາຈັບເອົາເຈົ້າຊາຍໝຸ່ຍໄປປະຫານເສັຽທີ່ດອນຈັນ ແລ້ວທົງຕັ້ງຫານຂອງພຣະອົງນາມວ່າ ພຣະຍາຈັນຫງອກ (ເພາະເກສາຫງອກມາແຕ່ນ້ອຍ)ໃຫ້ເປັນເຈົ້າຄອງນະຄອນວຽງຈັນ.

ສົມເດັດພຣະເຈົ້າໄຊຍະຈັກກະພັດ ມີພຣະຣາຊໂອຣົດ ໖ ອົງ ແລະພຣະຣາຊທິດາ ໒ ອົງ(໒) ພຣະຣາຊໂອຣົດ ໖ ອົງ ຄື:

໑. ທ້າວກ່ອນແກ້ວ ພຣະຣາຊບິດາໃຫ້ເປັນແສນຫລວງຊຽງລໍຕຳແໜ່ງມະຫາອຸປຣາດ.
໒. ທ້າວແທ່ນຄຳ ພຣະຣາຊບິດາໃຫ້ໄປຄອງເມືອງດ່ານຊາຍ
໓. ທ້າວໝື່ນຫລວງ " " ກະບອງ
໔. ທ້າວຫລ້າແສນໄຕ " " ວຽງຄຳ
໕. ທ້າວວິຊຸລຣາຊ " " ວຽງແກ
໖. ທ້າວເທພາ " " ຂວາ

---

(໑) ເຈົ້າຊາຍໝຸ່ຍ ເປັນໂອຣົດຂອງພຣະຍາປາກຫ້ວຍຫລວງ ອີກ ນາມນຶ່ງ ເອີ້ນວ່າ ເຈົ້າຕ່ອນຄຳ.
(໒) ສະບັບນຶ່ງວ່າມີ ໙ ອົງ ຄື: ທ້າວ ກ່ອນແກ້ວ, ທ້າວ ແທ່ນຄຳ, ທ້າວ ຍວນ, ທ້າວຂວັນຍາອ່ອນ ທ້າວ ຊວງ, ທ້າວຫລ້າແສນໄຕ, ທ້າວ ໄຊຍະກຸມມານ, ທ້າວເຍືອງຜາ, ທ້າວພາຍແລະມີພຣະຣາຊທິດາ ໗ ອົງຄື: ນາງສີໄທ ໑ ນາງອິນພາ ໑ ນາງຄານ ໑ ນາງມຸກ ໑ ນາງຂາວ ໑ ນາງທັມມະຣາ ໑ ນາງຕອນຄຳ ໑.

## <u>ສົງຄາມລາວ ກັບ ແກວ</u>

ສົມເດັດພຣະເຈົ້າໄຊຍະຈັກກະພັດແຜ່ນແຜ້ວ ສເວີຍຣາຊສົມບັດມາໄດ້ ໒໓ ປີ ຄືເຖິງປີ ຄ.ສ. ໑໔໗໙ (ປີຈູລສັກຣາດ ໘໔໑) ພຣະຍາປາຕະລີບຸດ ເຈົ້າເມືອງແກນທ້າວ ຄອງໄດ້ຊ້າງເຜືອກ ຕົວນຶ່ງສູງ ໗ ສອກ ຈຶ່ງນຳໄປຖວາຍສົມເດັດພຣະເຈົ້າໄຊຍະຈັກກະພັດແຕ່ນັ້ນກິດຕິສັບກໍລືຊາໄປເຖິງເຈົ້າບົວຫລວງ ພຣະເຈົ້າແຜ່ນດິນປະເທດແກວ ພຣະເຈົ້າບົວຫລວງຈຶ່ງແຕ່ງທູດມາຂໍຂົນຊ້າງເຜືອກໄປເບິ່ງ ເຈົ້າແສນຫລວງຊຽງລໍມີຄວາມຄຽດແຄ້ນໃຫ້ແກວດ້ວຍສາເຫດອັນໃດບໍ່ຊາບ ຈຶ່ງເອົາຂີ້ຊ້າງຍັດໃສ່ບັ້ງພຣະຣາຊສານຕີກາປະຈຳຢ່າງດີ ແລ້ວເອົາໃຫ້ທູດແກວກັບຄືນໄປ ພຣະເຈົ້າບົວຫລວງເປີດບັ້ງພຣະຣາຊສານອອກ ໄດ້ທອດພຣະເນດເຫັນຂີ້ຊ້າງ ກໍຊົງພຣະພິໂຣດໂກດເຄືອງເປັນອັນມາກ ຈຶ່ງໄດ້ມີພຣະຣາຊໂອງການເກນຣີພົນຄົນເສິກມາປຽບຍ່ຳພຣະນະຄອນຊຽງທອງໃນປີ ຄ.ສ.໑໔໘໓ ພຣະເຈົ້າບົວຫລວງຈັດທັບມາຕີປະເທດລາວຄາວນັ້ນ ຈັດເປັນທັບຫລວງ ໕ ທັບຄື:

໑. ໃຫ້ຄົກກົງເປັນທັບຂວາ ຍົກພົນມາທາງເມືອງຂວາ

໒. ໃຫ້ກາງກົງເປັນທັບຊ້າຍ ຍົກພົນມາທາງເມືອງຊ້າຍ

໓. ໃຫ້ໄຕໜົງຫລານເຈົ້າບົວຂັນເປັນທັບກາງ ຍົກພົນມາທາງວຽງຈັນ

໔. ໃຫ້ກົງເຫລືອກ ເປັນທັບໜ້າ ຍົກພົນມາທາງນ້ຳຮຸ່ງຊຽງສາ

໕. ໃຫ້ກົງຜູແສດ ເປັນທັບຫລັງ ຍົກພົນມາທາງກະບອງ(໑)

ຝ່າຍສົມເດັດພຣະເຈົ້າໄຊຍະຈັກກະພັດ ຄັນໄດ້ຊາບວ່າກອງທັບແກວໄດ້ຍົກມາເປັນອັນມາກ ກໍຕົກພຣະທັຍ ພຣະອົງຈຶ່ງມອບເວນຣາຊການສົງຄາມທັງມວນໃຫ້ເປັນພາຣະຂອງແສນຫລວງຊຽງລໍດັ່ງນັ້ນ ເຈົ້າແສນຫລວງຊຽງລໍ ເກນພົນລາວໄດ້ພົນສອງແສນຊ້າງ ໒໐໐໐ ຕົວ ຍົກອອກໄປຕັ້ງຮັບແກວຢູ່ທົ່ງນາເຂົ້າຈ້າວ (ບ່ອນຕັ້ງ ວັດ ວິຊຸລວິຫານດຽວນີ້) ອົງເຈົ້າແສນຫລວງຊຽງລໍເອງ ສະເດັດຂີ່ຊ້າງເຜືອກ ມີຊ້າງອອກໜ້າ ໔໐໐ ຕົວ ພົນຣົບ ໔໐,໐໐໐ ຄົນ ໝື່ນຫຼວງຂີ່ຊ້າງອາຍຕາຂາວ ມີຊ້າງອື່ນຊົນຕາມ ໗໐໐ ຕົວ ພົນຣົບ ໗໐໐໐໐ຄົນ ພຣະຍາຂວາເທພາ ຂີ່ຊ້າງເຜືອກສີແດງ ຊື່ໄຊຍະບັ້ງທອງ ມີຊ້າງຊົນຕາມຫລັງ ໘໐໐ ຕົວ ພົນຣົບ ໘໐,໐໐໐ ຄົນ ເມື່ອຈັດກະບວນທັບບໍຣະບວນແລ້ວ ເຈົ້າແສນຫລວງຊຽງລໍຈຶ່ງໃຫ້ນາຍທະຫານເອກ ໔ ຄົນຄື: ນໍຣະສິງ ໑ ນໍຣະນາຣາຍ ໑ ນໍຣະເດດ ໑ ນໍຣະຣາດ ໑ ຄຸມທະຫານລາວ ໔,໐໐໐ ຄົນອອກໄປລັດທາງແກວຢູ່ຕີນພູມຸງ ນາຍທະຫານທັງ ໔ ໄດ້ປະທະກັບແກວ ຂ້າຟັນທະຫານແກວລົ້ມຕາຍລົງເປັນອັນມາກ ຕລອດເວລາ ໓ ວັນ ຈົນເມື່ອຍລ້າບໍ່ສາມາດຈະຍົກແຂນຂຶ້ນໄດ້ ຈຶ່ງຖອຍມາເຂົ້າທັບຫລວງທີ່ຕັ້ງຢູ່ທົ່ງ

---

(໑)ຕາມຕົ້ນສະບັບວ່າ ພົນແກວຍົກມາຄາວນັ້ນມີພົນເຖິງ ໒໐,໐໐໐,໐໐໐ ຄົນ(ຊາວລ້ານ)ນາຍທະຫານຊຸມຜູ້ໃຫຍ່ ໔,໐໐໐ ຄົນຕາມນີ້ເຫັນວ່າຫລາຍເກີນເຊື່ອ ຖ້າຄິດຕາມແບບນັບຕາຊັ່ງ ກໍໄດ້ພົນພູ ໑ ລ້ານ ໖ ແສນຄົນ (໑,໖໐໐,໐໐໐) ເຫັນຈະພໍໃຊ້ແດ່.

ມາເຂົ້າຈາວ ພໍຮຸ່ງເຊົ້າກອງທັບແກວກໍຍົກນຳມາ ກອງທັບລາວກໍອອກຕໍ່ສູ້ຢູ່ທົ່ງນາມຸງຄຸນຈົນເຖິງທົ່ງນາໃຮ່ ດຽວ ຕັ້ງແຕ່ພໍຕາເວັນທ່ຽງຈົນເຖິງຄ່ຳ ເຈົ້າໝື່ນຫລວງ ກັບ ພຣະຍາຂວາເທພາແລະນາຍທະຫານເອກ ທັງ ໔ ພັກ ຈົນແຜ່ນດິນໄຫລນອງໄປດ້ວຍເລືອດຕລອດສນາມຣົບບໍ່ໄດ້ຢຽບແຜ່ນດິນ ຢຽບແຕ່ຊາກສົບແກວ ແຕ່ປານນັ້ນ ທະຫານແກວກໍຍັງໜຸນແໜ້ນເຂົ້າມາບໍ່ຖອຍ ແລະໃນເວລານັ້ນ ພຣະຍາຂວາເທພາຖືກແມ່ທັບ ແກວທັງ ໔ ນາຍລ້ອມໄດ້ ໝື່ນຫລວງກັບໝື່ນບຸນ ຈຶ່ງໄສ່ຊ້າງເຂົ້າມາຊ່ອຍ ໄດ້ຂ້າຟັນແມ່ທັບແກວຕາຍລົງ ທັງ ໔ ຄົນ ນາຍທະຫານແກວອີກ ໖ ຄົນເຫັນດັ່ງນັ້ນ ກໍຫ້ອມຊ້າງເຂົ້າຊົນນາຍຫລວງໝື່ອກັບພຣະຍາຂວາ ເທພາ ເຈົ້າທັງສອງໄດ້ຂ້າຟັນທະຫານແກວທັງ ໖ ຄົນນັ້ນຕາຍລົງ ແຕ່ຕົວເອງກໍໝົດແຮງ ຈຶ່ງຕົກລົງຈາກ ຫລັງຊ້າງເລີຍຖືກພົນທະຫານແກວຫຸ້ມຟັນເອົາຈົນຕາຍທັງສອງ ສ່ວນຊ້າງໄຊບັ້ງທອງແລະອາຍໝາກຫຽາ ກໍລອຍຂ້າມນ້ຳຂອງໜີ ແຕ່ນັ້ນ ພົນຝ່າຍລາວຈຶ່ງບົກບາງລົງ ແລ້ວກອງທັບແກວກໍຊົນຜ່າເຂົ້າມາເຖິງແສນ ຫລວງຊຽງລໍ ພຣະອົງກັບໝື່ນຫລວງໝື່ນບຸນແລະນາຍທະຫານທັງ ໔ ໄດ້ແທງຟັນຕໍ່ສູ້ແກວຢູ່ຈົນໝົດກຳລັງ ໝື່ນຫລວງກັບໝື່ນບຸນຖືກອາວຸດແກວຕາຍຄາສນາມ ສ່ວນນາຍທະຫານທັງ ໔ ນັ້ນ ແກວຟັນແທງບໍ່ເຂົ້າແຕ່ ຫາກໝົດກຳລັງ ພວກແກວຈຶ່ງຈັບໄດ້ ແລ້ວເອົາໄປສຽບໃສ່ຫລັກໄວ້ທີ່ນາເຂົ້າຈາວ ສ່ວນເຈົ້າແສນຫລວງ ຊຽງລໍ ກໍຖືກອາວຸດແກວ ເປັນສາຫັດ ຈຶ່ງອ່ວາຍຊ້າງຄືນມາໂຮງຊຽງທອງ ສະເດັດຈາກຫລັງຊ້າງໄປເຂົ້າ ເຮືອຊື່ ເພເລົາກາ ພໍອອກຈາກທ່າ ເຮືອກໍຫລົ້ມ ພຣະອົງເລີຍຈົມນ້ຳສ້ຽງພຣະຊົນຢູ່ທ່າໂຮງຊຽງທອງນັ້ນ ເອງ.

ຝ່າຍສົມເດັດພຣະເຈົ້າໄຊຍະຈັກກະພັດ ພໍໄດ້ຊາບຂ່າວວ່າກອງທັບລາວແຕກແລ້ວ ກໍພາພຣະປະຍູນ ຍາດລັກໜີລົງເຮືອ ລ່ອງມາເມືອງຊຽງຄານ ກອງທັບແກວກໍເຂົ້າເມືອງໄດ້.

ໃນຄັ້ງນັ້ນ ເຈົ້າແທ່ນຄຳພຣະຣາຊໂອຣົດຂອງສົມເດັດພຣະເຈົ້າໄຊຍະຈັກກະພັດ ເຊິ່ງເປັນເຈົ້າຄອງ ນະຄອນຢູ່ເມືອງດ່ານຊ້າຍຄັນໄດ້ຊາບວ່າ ແກວຍົກທັບມາຕີນະຄອນຊຽງທອງ ກໍເກນເອົາພົລເມືອງຊຽງຄານ ເມືອງດ່ານຊ້າຍ ຍົກຂຶ້ນໄປຕີເປັນທັບຂນາບຫລັງຝ່າຍພວກແກວບໍ່ຮູ້ວ່າ ມີກອງທັບເມືອງອື່ນມາຊ່ອຍ ແລະ ກຳລັງເມື່ອຍລ້າຢູ່ ຈຶ່ງຖືກກອງທັບທ້າວແທ່ນຄຳຕີແຕກທະລາຍໄປ ເຈົ້າແທ່ນຄຳໃຫ້ທະຫານນຳຕີແກວໄປ ຈົນສຸດເຂດເມືອງພວນ ພວກແກວຖືກຂ້າຕາຍໃນຄາວນັ້ນເຫລືອຈະຄະນະນານັບ ຈຳເພາະນາຍທະຫານ ຊັ້ນຜູ້ໃຫຍ່ຂອງແກວຈຳນວນ ໔,໐໐໐ ຄົນ ເຫລືອກັບຄືນແຕ່ ໖໐໐ ຄົນເທົ່ານັ້ນ.

ເມື່ອເຈົ້າແທ່ນຄຳຂັບໄລ່ແກວອອກໄປພົ້ນເຂດແດນຂອງປະເທດລາວແລ້ວ ພຣະອົງກໍສະເດັດກັບຄືນ ມານະຄອນຊຽງທອງ ຫ້ອມຫອມເສນາອາມາດທີ່ຍັງເຫລືອຢູ່ແລະພຣະສັງຄະເຈົ້າໃຫ້ມາປະຊຸມພ້ອມກັນ ແລ້ວ ຈຶ່ງແຕ່ງໃຫ້ພຣະທັມມະເສນາກັບພິກຂຸ ໘໐ ຕົນລົງມາອາຣາທນາພຣະຣາຊບິດາທີ່ປະທັບຢູ່ເມືອງຊຽງຄານ ໃຫ້ຄືນໄປສເວີຍຣາຊສົມບັດດັ່ງເກົ່າ ແຕ່ພຣະຣາຊບິດາບໍ່ສເດັດໄປ ແລະໄດ້ມອບຣາຊສົມບັດໃຫ້ແກ່ທ້າວແທ່ນ ຄຳນັ້ນເອງ ສ່ວນພຣະອົງກໍປະທັບຢູ່ເມືອງຊຽງຄານ ຕໍ່ມາອີກປີນຶ່ງ ຄືເຖິງ ຄ.ສ.໑໔໗໙ ກໍສະເດັດສູ່ຣະ ຄົດ ຣວມພຣະຊົນໄດ້ ໖໔ ປີ (ສະບັບນຶ່ງວ່າ ໖໙ ປີ) ພວກເສນາອາມາດທັງຫລາຍຈຶ່ງເຊີນພຣະສົບລົງ

ໃສ່ຫີບເງິນໄວ້ ແລ້ວສົ່ງຂ່າວໄປຖວາຍພຣະຣາມາທິບໍດີ ພຣະເຈົ້າແຜ່ນດິນກຸງສີອຸະຍຸທຍາ ພຣະຣາມາທິບໍດີ ຈຶ່ງຫົງແຕ່ງໃຫ້ ຂຸນສີຣາດໂກສາເປັນຣາຊທູດ ເຊີນໂລງຄຳແລະໂລງໄມ້ຈັນກັບແຜ່ນແພ ໕໐໐ ພັບ ມາຖວາຍ ພຣະເພີງຕາມບູຣານຣາຊປະເພນີ.

## ໔. ຣັຊການພຣະເຈົ້າສຸວັນນະບັນລັງ

(ທ້າວແທ່ນຄຳ)

ໃນປີ ຄ. ສ. ໑໔໗໘ ພວກເສນາອາມາດຣາຊມຸນຕີທັງຫລາຍຈຶ່ງພ້ອມກັນຣາຊາພິເສກເຈົ້າແທ່ນຄຳ ຂຶ້ນສເວີຍຣາຊສົມບັດເປັນເຈົ້າແຜ່ນດິນແທນພຣະຣາຊບິດາ ຖວາຍພຣະນາມວ່າພຣະສຸວັນນະບັນລັງ.

ເຖິງປີ ຄ. ສ.໑໔໗໕ ພຣະຣາຊບິດາທີ່ຢູ່ນະຄອນຊຽງຄານ ກໍສະເດັດສູ່ຣະຄົດ ພຣະອົງຈຶ່ງສະເດັດ ມາທຳການຖວາຍພຣະເພີງ ແລ້ວສ້າງວັດກວມອັດຖິທາດຂອງພຣະຣາຊບິດາໄວ້ທີ່ເມືອງຊຽງຄານນັ້ນເອງ.

ພຣະສຸວັນນະບັນລັງ ເປັນວີຣະກະສັດຜູ້ກ້າຫານ ໄດ້ທຳການກູ້ຊາດລາວແລະບ້ານເມືອງລາວໄວ້ໃຫ້ ພົ້ນຈາກອຳນາດຂອງສັດຕູ ພຣະອົງສເວີຍຣາຊສົມບັດໄດ້ ໗ ປີ ກໍສະເດັດສູ່ຣະຄົດ ຣວມພຣະຊົນທັງໝົດໄດ້ ໔໑ ປີ.

## ໕. ຣັຊການພຣະຍາຫລ້າແສນໄຕພູວະນາດ

ເຖິງປີ ຄ.ສ.໑໔໘໔ ເມື່ອສົມເດັດພຣະສຸວັນນະບັນລັງ ສະເດັດສູ່ຣະຄົດແລ້ວ ພວກອາມາດຣາຊ ມຸນຕີທັງຫລາຍ ຈຶ່ງພ້ອມກັນອະພິເສກທ້າວຫລ້າແສນໄຕ (ພຣະຣາຊໂອຣົດອົງທີ ໓ ຂອງພຣະເຈົ້າໄຊຍະຈັກ ກະພັດ ເຊິ່ງເວລານັ້ນເປັນເຈົ້າຄອງນະຄອນວຽງແກ) ຂຶ້ນສເວີຍຣາດ ທ້າວຫລ້າແສນໄຕຂຶ້ນສເວີຍຣາຊສົມ ບັດປີສລູ ເດືອນ ໔ ອອກໃໝ່ ໑໓ ຄ່ຳ ວັນຈັນ ຍາມກອງງາຍ(໑) ຣາຊບັນດິດທັງຫຼາຍຖວາຍພຣະນາມ ວ່າ "ພຣະຍາຫລ້າແສນໄຕພູວະນາດ" ໃນພິທີຣາຊາພິເສກພຣະຍາຫລ້າແສນໄຕນີ້ ພຣະເຈົ້າແຜ່ນດິນກຸງສີ ອະຍຸທຍາກໍຫົງແຕ່ງໃຫ້ ຂຸນອິນ, ຂຸນພົມແລະຂຸນສີຣາຊໂກສາ ເຊີນເຄື່ອງມຸງຄຸນຣາຊບັນນາການມາຣວມ ສົມໂພດເປັນອັນມາກ ເມື່ອພຣະອົງໄດ້ສເວີຍຣາດແລ້ວ ຈຶ່ງໃຫ້ເສນາອາມາດລົງມາອາຣາທນາເອົາເຈົ້າ ວິຊຸລຣາດພຣະອະນຸຊາ ເຊິ່ງເວລານັ້ນເປັນເຈົ້ານະຄອນວຽງຄຳ ໃຫ້ຂຶ້ນເມືອເປັນແສນເມືອງ ພຣະຍາຫລ້າ ແສນໄຕພູວະນາດເປັນກະສັດທີ່ເອົາພຣະໄທໃສ່ພຣະພຸທສາສນາແລະການຕ່າງປະເທດພຣະອົງນຶ່ງ ຄື ໃນທາງ ພຣະພຸທສາສນາ ພຣະອົງໄດ້ສະຖາປະນາພຣະພິກຂຸຄັມພີຣະມະຫາເຖຣະຂຶ້ນເປັນພຣະມະຫາສາມີເຈົ້າວັດແກ້ວ ແທນພຣະສັງຄະເສນາທີ່ມໍຣະນະພາບໄປ ແລະ ສະຖາປະນາພຣະສັດທັມມະວົງສະເຖຣະ ຂຶ້ນເປັນເຈົ້າວັດ ປາສມັນ ໄດ້ທຳເຖຣາພິເສກພຣະມະຫາເຖຣະເທບຫລວງ ຂຶ້ນເປັນພຣະທັມມະເສນາ ໃຫ້ສະຖິດວັດມະໂນ

---

(໑) ບາງສະບັບວ່າ ຈຸລສັກຣາດ ໘໔໓ (ຄ.ສ.໑໔໕໑)



ທ້າວແທ່ນຄຳ

ຣົມ ແລ້ວທົງພຣະຣາຊທານອະພັຍໂທດ  ແກ່ຄົນຜູ້ທຳຜິດເຊິ່ງໄດ້ເຂົ້າມາອາສັຍວັດທັງສາມ ຕາມບູຣານພຣະກະສັດຕາທິຣາດແຕ່ກ່ອນ ໃນການຕ່າງປະເທດ ພຣະອົງໄດ້ຜູກສັມພັນທະໄມຕີກັບພຣະເຈົ້າແຜ່ນດິນກຸງສີອະຍຸທຍາໄວ້ຢ່າງແໜ້ນໜາ ແລະ ໄດ້ທົງກຳນົດເຂດແດນບອນມາເຈຣະຈາຄວາມເມືອງກັນທີ່ນາສອງຮັກໃນເຂດແດນເມືອງດ່ານຊາຍ.

ພຣະຍາຫລ້າແສນໄຕສເວີຍຣາດໄດ້ ໑໐ ປີກໍສະເດັດສູຣະຄົດ ເມື່ອ ຄ.ສ.໑໔໙໕ ພຣະອົງມີພຣະຣາຊໂອຣົດອົງນຶ່ງນາມວ່າເຈົ້າຊຸມພູ ເວລາພຣະຣາຊບິດາສະເດັດສູຣະຄົດ ເຈົ້າຊຸມພູມີພຣະຊົນໄດ້ ໗ ປີ ເຈົ້າວິຊຸລຣາດຜູ້ອາວຈຶ່ງເປັນຜູ້ຮັກສາຣາຊການແຜ່ນດິນຕລອດເວລາ ໒ ປີ ໃນເວລາເຈົ້າວິຊຸລຣາດຮັກສາແຜ່ນດິນ ຢູ່ນັ້ນພຣະອົງໄດ້ຈັດການສ້າງວັດປຸບພາຣາມຂຶ້ນສຳລັບກວມອັດຖິທາດຂອງພຣະຍາຫລ້າ ແສນໄຕ ແລະ ໄດ້ທຳຖຣາພິເສກພຣະສຸເມທາຈານຂຶ້ນເປັນພຣະສັງຄະເສນາ ອາຣາທນາໃຫ້ມາຢູ່ວັດປຸບພາຣາມ ແລ້ວໄດ້ທົງຕັ້ງອາຈານທັມຈຸນລາ ໃຫ້ເປັນຄູສອນໜັງສືແກ່ພິກສຸສາມເນນທັງຫລາຍ ໄດ້ພຣະຣາຊທານເງິນເດືອນໃຫ້ເດືອນລະ ໙ ຮ້ອຍ (໙໐ ກີບ) ກັບເຂົ້າເປືອກປີລະ ໙ ແສນ ທັງເຄື່ອງຢູ່ຂອງກິນອື່ນ ໆ ອີກເປັນອັນມາກ.

## ໗. ຣັຊການເຈົ້າຊຸມພູ

ປີ ຄ.ສ.໑໔໙໗ ເສນາອາມາດທັງຫລາຍຈຶ່ງພ້ອມກັນອະພິເສກເຈົ້າຊຸມພູ ຂຶ້ນເປັນພຣະເຈົ້າແຜ່ນດິນ ເວລານັ້ນເຈົ້າຊຸມພູມີພຣະຊົນໄດ້ ໙ ປີ ເຈົ້າວິຊຸລຣາດເປັນແສນເມືອງ ເຈົ້າຊຸມພູສເວີຍຣາດຢູ່ໄດ້ ໓ ປີ ກໍສິ້ນພຣະຊົນ.

## ໘. ຣັຊການພຣະເຈົ້າວິຊຸລຣາດ

ເຖິງປີ ຄ.ສ.໑໕໐໐ (ຈຸລສັກຣາດ ໘໖໒) ເສນາອາມາດຣາຊມົນຕີແລະພຣະສັງຄະເຈົ້າທັງຫລາຍຈຶ່ງພ້ອມກັນອະພິເສກເຈົ້າວິຊຸລຣາດຂຶ້ນເປັນພຣະເຈົ້າແຜ່ນດິນ ຖວາຍພຣະນາມວ່າ ພຣະວິຊຸນຣາຊາໄຕພູວະນາດທິປັດ ສີສັຕນາຄະນະຫຸດ  ເວລານັ້ນພຣະອົງມີພຣະຊົນໄດ້ ໓໕ ປີ ຄັນພຣະອົງສເວີຍຣາຊສົມບັດແລ້ວຈຶ່ງພຣະຣາຊທານນ້ອງສາວຜູ້ນຶ່ງຊື່ເຈົ້ານາງໝື່ນໜ້າ ໃຫ້ເປັນພະຣິຍາຂອງເຈົ້າຊາຍ ແລະທົງແຕ່ງຕັ້ງເຈົ້າຊາຍໃຫ້ເປັນເຈົ້າພູມເໜືອ  ອີກຜູ້ນຶ່ງຊື່ເຈົ້ານາງແພງ ພຣະຣາຊທານໃຫ້ທ້າວກ້ອນຄຳ  ໂອຣົດຂອງເຈົ້າເມືອງປາກຫ້ວຍຫລວງ ແລ້ວທົງພຣະຣາຊອາດຍາໃຫ້ທ້າວກ້ອນຄຳໄປເປັນເຈົ້າເມືອງກະບອງ ທົງພຣະຣາຊອາດຍາແຕ່ງຕັ້ງພຣະອະນຸຊາ ຂອງພຣະຣາຊມານດາ ໃຫ້ເປັນໝື່ນຫລວງແລະໃຫ້ພີ່ລ້ຽງຜູ້ນຶ່ງໄປກິນເມືອງຂວາ.

ເຖິງປີ ຄ.ສ.໑໕໐໒ (ຈຸລສັກຣາດ ໘໖໕) ສົມເດັດພຣະວິຊຸນເຈົ້າ ຈຶ່ງແຕ່ງຕັ້ງໃຫ້ເສນາອາມາດລົງມາອາຣາທນາເອົາພຣະບາງເຈົ້າ ຂຶ້ນເມືອເມືອງຊຽງທອງໂດຍທາງບົກ ແລ້ວເຊີນໄປປະດິສຖານໄວ້ທີ່ວັດມະໂນຣົມຕົ້ນກ່ອນ ຄັນເຖິງປີ ຄ.ສ.໑໕໐໓ (ຈຸລສັກຣາດ ໘໖໕) ປີວອກ ເດືອນ ໙ ອອກໃໝ່ ໒ ຄ່ຳ

ວັນເສົາ ພຣະອົງຈຶ່ງໃຫ້ສ້າງວັດວິຊຸນມະຫາວິຫານຂຶ້ນ ເຖິງປີ ຄ.ສ.໑໕໐໔ ຈຶ່ງສຳເຣັດບໍຣະບວນ ແລະໄດ້ສ້າງມະຫາທາດເຈດີຂຶ້ນລູກນຶ່ງສູງ ໒໓ ວາ ຈຶ່ງອາຣາທນາພຣະບາງເຈົ້າມາໄວ້ພຣະອາຣາມວິຊຸນມະຫາວິຫານນີ້ແລ້ວກົງບໍຣິຈາກພຣະຣາຊຊັບອອກໃຫ້ທານເປັນອັນມາກ.

ຕໍ່ມາທ້າວກອນຄຳ ຜູ້ເປັນນ້ອງເຂີຍຂອງພຣະອົງ ເຊິ່ງພຣະອົງແຕ່ງຕັ້ງໃຫ້ເປັນເຈົ້າເມືອງກະບອງນັ້ນໄດ້ມີຄວາມຂັດແຍ້ງສົມເດັດພຣະວິຊຸລຣາດເຈົ້າ ຈຶ່ງແຕ່ງໃຫ້ເຈົ້າພູມເໜືອລົງມາຜາບເຈົ້າພູມເໜືອຕໍ່ສູ້ເຈົ້າເມືອງກະບອງບໍ່ໄດ້ ກໍແຕກພ່າຍໜີຄືນມາ ປີລຸນມາ ພຣະອົງຈຶ່ງແຕ່ງໃຫ້ເຈົ້າເມືອງຂວາລົງມາຜາບກອງທະຫານຂອງເຈົ້າເມືອງຂວາກັບທ້າວກອນຄຳໄດ້ຣົບກັນຢູ່ແກ້ງລະໂງກ ທ້າວກອນຄຳສູ້ບໍ່ໄດ້ ຈຶ່ງຖອຍໄປຢູ່ພູກາຫລົງ ພຣະຍາເມືອງຂວາ ນຳຈັບໄດ້ ທ້າວກອນຄຳຂໍອອນຍອມແລະຂໍບວດ ສົມເດັດພຣະວິຊຸລຣາດເຈົ້າກໍຊົງພຣະກະຣຸນາອະນຸຍາດ ໃຫ້ຂຶ້ນມາບວດຢູ່ວັດແກ້ວນຳພຣະມະຫາສາມີເຈົ້າ ແລ້ວຈຶ່ງຊົງພຣະຣາຊອາດຍາເລື່ອນຍົດພຣະຍາເມືອງຂວາຂຶ້ນເປັນພຣະຍາແສນສຸຣິນລືໄຊ ແລ້ວຊົງແຕ່ງຕັ້ງໃຫ້ເປັນແສນເມືອງ.

ໃນລະຫວ່າງຣັຊການສົມເດັດພຣະວິຊຸລຣາດເຈົ້ານີ້ ພຣະພຸທສາສນາໃນປະເທດລາວ ມີຄວາມຈະເຣີນຮຸ່ງເຮືອງຂຶ້ນເປັນອັນມາກຈົນມີນັກປາດຜູ້ມີຄວາມຮູ້ແຕກສານຊຳນານໃນພຣະໄຕປີດົກຫລາຍຄົນໜັງສືຄົມພີປັນຈະຕັນຕະຣະ ອັນເປັນຄັມພີສຳຄັນແລະເປັນພາສາສັນສະກຣິດນັ້ນສົມເດັດພຣະສັງຄະຣາຊາວິຊຸນມະຫາຣາທິບໍດີສີສັດນາຄະນະຫຸດ ເປັນຜູ້ແປອອກມາເປັນພາສາລາວ ແລະແບບການກະວີ ຄືວິທີແຕ່ງກາບວິຊຸມາລີ ກຸມລີ ໂຄງສີ່ສຸພາບນັ້ນ ໄດ້ຈະເຣີນແຜ່ຫລາຍຂຶ້ນໃນສມັຍນີ້ເປັນຕົ້ນມາ ແລະໜັງສືຂຸນບໍຣົມສບັບແຣກກໍໄດ້ຂຽນຂຶ້ນໃນສມັຍຂອງພຣະວິຊຸລຣາດນີ້ ໂດຍພຣະມະຫາເທບຫລວງຕົນເປັນພຣະທັມມະເສນາ ພ້ອມດ້ວຍພຣະເຈົ້າວິຊຸລຣາດກັບທັງເສນາອາມາດຂາຣາຊການທັງຫລາຍດັ່ງມີກ່າວໄວ້ໃນຕຳນານນັ້ນວ່າ "ຕຳນານຂຸນບໍຣົມອັນນີ້ ພຣະມະຫາເທບຫລວງເຈົ້າຕົນເປັນທັມມະເສນາຕົນພີ່ຢູ່ວັດວິຊຸນ ທັງມະຫານຸງຄຸນສິດທິເຈົ້າຕົນເປັນສັງຄະເສນາ ຕົນນ້ອງທັງເຈົ້າແຜ່ນດິນແລະເສນາທັງຫລາຍພ້ອມກັນແປງໄວ້ ງລງ" ດັ່ງນີ້.

ເມື່ອສົມເດັດພຣະວິຊຸລຣາດເຈົ້າສເວີຍຣາຊສົມບັດມາໄດ້ ໒໐ ປີມີພຣະຣາຊໂອຣົດອົງນຶ່ງພຣະນາມວ່າພຣະໂພທິສາຣະຣາຊກຸມມານ ຄັນເຖິງປີ ຄ.ສ.໑໕໒໐ (ຈຸລສັກຣາດ ໘໘໒) ກໍສະເດັດສູ່ຣະຄົດ ຣວມພຣະຊົນໄດ້ ໕໕ ປີ(໑).

## ຝ. ຣັຊການພຣະໂພທິສາຣະຣາຊເຈົ້າ

ໃນປີ ຄ.ສ.໑໕໒໐ (ຈຸລສັກຣາດ ໘໘໒) ນັ້ນ ເສນາອາມາດຣາຊມົນຕີທັງຫລາຍ ອັນມີພຣະຍາແສນສຸຣິນລືໄຊເປັນເຄົ້າ ຈຶ່ງພ້ອມກັນອະພິເສກເຈົ້າໂພທິສາຣະຣາຊກຸມມານເຈົ້າຂຶ້ນເປັນເຈົ້າແຜ່ນດິນຖວາຍພຣະນາມວ່າ "ສົມເດັດພຣະໂພທິສາຣະຣາຊມະຫາ ທັມມິກະທະສະລັກຂະນະກຸນຊອນມະຫາຣາຊາທິປະຕິຈັກກະ

---

(໑) ບາງສະບັບວ່າໄດ້ ໗໗ ປີ.

ພັດພູມິນທ໌ຣິນທະຣາດເຈົ້າ" ເວລານັ້ນພຣະອົງມີພຣະຊົນໄດ້ ໑໙ ປີ(໑) ເຖິງປີ ຄ.ສ.໑໕໒໒ (ຈຸລສັກຣາດ ໘໘໔) ພຣະອົງໄດ້ທົງແຕ່ງຕັ້ງໝື່ນຫລວງລູກພຣະຍາຄຳສັດທາ ເຈົ້າເມືອງພວນ ຂຶ້ນເປັນເຈົ້າຊຽງຂວາງ ແລະແຕ່ງຕັ້ງຜູ້ອາວໝື່ນຫລວງໃຫ້ເປັນແສນເມືອງ ໄດ້ພຣະຣາຊທານເຄື່ອງອະພິເສກແລະຊ້າງມ້າເປັນອັນມາກ ຄັນເຖິງປີມະແມ ຈຸລສັກຣາດໄດ້ ໘໘໕ (ຄ.ສ.໑໕໒໓) ພຣະອົງໄດ້ແຕ່ງຣາຊທູດໄປຂໍເອົາພຣະໄຕປິດົກແລະພຣະສັງຄະເຈົ້າມາຈາກນະຄອນຊຽງໃໝ່ ພຣະເມືອງແກ້ວ ພຣະເຈົ້າແຜ່ນດິນນະຄອນຊຽງໃໝ່ ຈຶ່ງທົງແຕ່ງໃຫ້ພຣະເທບມົງຄົນເຖຣະກັບພຣະສົງບໍຣິວານ ເຊີນຄັມພີພຣະໄຕປິດົກ ໖໐ ຄັມພີ ມາຍັງນະຄອນສີສັດຕະນາຄະນະຫຸດ ສືບພຣະພຸທສາສນາໃຫ້ຮຸ່ງເຮືອງ ປີ ຄ.ສ.໑໕໒໕ ໄດ້ມີເຊື້ອເຈົ້າທາງປະເທດແກວ ຊື່ ບົວກວານສຽວ ກັບເສນາຜູ້ນຶ່ງ ຊື່ ກົງກາງ ພາໄພ່ພົນ ໓໐໐໐ ຄົນເຂົ້າມາເຝົ້າພຣະບໍຣົມໂພທິສົມພານ ຄັນປີ ຄ.ສ.໑໕໒໕ (ຈຸລສັກຣາດ ໘໘໗) ພຣະອົງຈຶ່ງໄດ້ສະເດັດອອກອຸປສົມບົດເປັນພິກຊຸ ທົງປະທັບຢູ່ວັດວິຊຸນມະຫາວິຫານ ໂດຍມີສົມເດັດພຣະສັງຄະຣາດມະຫາສີຈັນໂທເປັນອຸປຊາແລະພຣະມະຫາສມຸດທະໂຄດເຈົ້າວັດອະໂສກາຣາມເປັນກັມມະວາຈາ ສົມເດັດພຣະສັງຄະຣາດມະຫາສີຈັນໂທຕົນນີ້ ເປັນຊາວເມືອງພິສນຸໂລກ ໄດ້ຮຽນໜັງສືຢູ່ວັດສີບຸນເຮືອງເມືອງນ່ານຮູ້ຈົບພຣະໄຕປິດົກ ພຣະມະຫາສມຸດທະໂຄດນັ້ນ ໄດ້ຮຽນໜັງສືມາຈາກເມືອງຊຽງໃໝ່ ພຣະມະຫາເຖຣະເຈົ້າທັງສອງຕົນນີ້ໄດ້ເປັນພຣະອາຈານສັ່ງສອນສົມເດັດພຣະໂພທິສາຣະຣາດເຈົ້າ ຄັນອອກພຣະວັດສາແລ້ວ ພຣະອົງທົງລາຜນວດຄືນມາສເວີຍຣາຊສົມບັດດັ່ງເກົ່າ.

ເຖິງປີ ຄ.ສ.໑໕໒໗ (ຈຸລສັກຣາດ ໘໘໙) ພຣະອົງໄດ້ມີພຣະຣາຊອາດຍາປະກາດໃຫ້ບ່າວໄພ່ພົລເມືອງເລີກນັບຖືຜີຟ້າຜີແຖນອັນເຄີຍຖືມາແຕ່ບູຮານນັ້ນເສັຽໝົດ ບັນດາ ຫໍ ໂຮງ ກວ້ານ ສານອັນເປັນບ່ອນຂຶ້ນຟ້າຂຶ້ນແຖນຂອງພຣະເຈົ້າແຜ່ນດິນແຕ່ກ່ອນນັ້ນ ພຣະອົງກໍ່ໃຫ້ຮື້ຖອນອອກໝົດ ແລ້ວທົງສ້າງພຣະອາຣາມຂຶ້ນແທນ ບ່ອນຫໍພີ້ນັ້ນ ຊື່ວ່າວັດສວັນຄະໂລກ ແຕ່ນັ້ນມາພຣະເດຊານຸພາບຂອງສົມເດັດພຣະໂພທິສາຣະຣາດເຈົ້າ ກໍລືຊາຜາກົດໄປໃນປະເທດເຂດຂັນທະເສມາທັງຫລາຍ ເບື້ອງຕາເວັນອອກພຣະຍາອົງການແລະພຣະຍາຈຳປາທິຣາດ(໒) ກໍສົ່ງພຣະຣາຊບັນນາການມາຖວາຍ ຕລອດພຣະເຈົ້າແຜ່ນດິນປະເທດແກວ ເບື້ອງເໜືອພຣະຍາຫໍ້ວ່ອງເມືອງໂກສົມພີ(໓) ເມືອງເຂັນ ເມືອງແລບ ເມືອງແສນຫວີ ເມືອງຊຽງຮຸ້ງ ກໍສົ່ງບັນນາການມາຖວາຍ.

ເຖິງປີຄ.ສ.໑໕໓໒ (ຈຸລສັກຣາດ ໘໙໔) ເຈົ້າເມືອງຊຽງຂວາງກັບອາວຜູ້ເປັນແສນເມືອງເກີດຜິດກັນແສນເມືອງຊຽງຂວາງຈຶ່ງໜີມານະຄອນຊຽງທອງ ເຈົ້າຊຽງຂວາງກໍທຳການຂັດແຂງ ບໍ່ມາອ່ອນນ້ອມສົມເດັດພຣະໂພທິສາຣະຣາດເຈົ້າ ຈຶ່ງຕັດສັ່ງໃຫ້ພຣະຍາປາກຫ້ວຍຫລວງ ໑ ເຈົ້າພູນເໜືອ ໑ ເຈົ້າພູນໃຕ້

---

(໑) ບາງສະບັບວ່າໄດ້ ໑໕ ປີ. (໒) ເຫັນຈະແມ່ນ ແຂວງນະຄອນຈຳປາສັກ ແລະ ເມືອງນະຄອນທົມຂອງຂະເມນ. (໓) ເມືອງຫໍ້ວ່ອງໂກສົມພີ ແມ່ນແຂວງຍູນານຂອງຈີນທຸກວັນນີ້ ເມືອງເຂັນແມ່ນແຂວງ ໑໒ ພັນນາລື້.

໑ ຍົກກອງທະຫານໄປຕີເມືອງຊຽງຂວາງ ພວກແມ່ທັບທັງ ມີ ຫຳການພາບຢູ່ ໒ ປີຈຶ່ງສງົບ ແລະໃນປີ ຄ.ສ.໑໕໓໓ (ຈຸລສັກກຣາດ ໘໙໕) ນັ້ນ ສົມເດັດພຣະໂພທິສາຣະຣາດເຈົ້າໄດ້ສະເດັດມາປະທັບຢູ່ນະຄອນວຽງຈັນ ໃນເວລານັ້ນ ທາງນະຄອນສີອະຍຸທຍາປະເທດໄທ ແມ່ນສົມເດັດພຣະເຈົ້າອາທິຕຍະຣາດ ໄດ້ຂຶ້ນສເວີຍຣາຊສົມບັດ ເປັນພຣະເຈົ້າແຜ່ນດິນ ຄາວນັ້ນມີເຈົ້າໄທອົງນຶ່ງນາມວ່າ ພຣະໄຊຍະຣາຊາ ບໍ່ຖືກຕອງກັນກັບພຣະເຈົ້າອາທິຕຍະຣາຊ ພຣະໄຊຍະຣາຊາຈຶ່ງໄດ້ໜີມາເພິ່ງພຣະບໍຣົມໂພທິສົມພານພຣະໂພທິສາຣະຣາຊເຈົ້າຢູ່ນະຄອນວຽງຈັນ ແລ້ວໄດ້ທູນຂໍໃຫ້ສົມເດັດພຣະໂພທິສາຣະຣາຊເຈົ້າຍົກທັບໄປຕີເອົານະຄອນສີອະຍຸທຍາ ເຖິງປີສັກກຣາດ ໘໙໖ (ຄ.ສ.໑໕໓໔) ສົມເດັດພຣະໂພທິສາຣະຣາຊເຈົ້າ ຈຶ່ງໃຫ້ເກນເສນາໂຍທາທະຫານເປັນອັນມາກ ຍົກລົງໄປຕີນະຄອນສີອະຍຸທຍາ ໄປເຖິງວຽງພຣະງາມ(໑) ເຈົ້າພັກພົນໂຍທາຢູ່ນັ້ນໄດ້ ໑໐ ວັນ ຊາວນະຄອນສີອະຍຸທຍາ ບໍ່ອອກມາຮົບກໍເລີກທັບກັບຄືນມາ.

ເຖິງປີຈຸລສັກກຣາດ ໘໙໗ (ຄ.ສ.໑໕໓໕) ໄດ້ຍົກທັບສະເດັດໄປຕີເມືອງພິສນຸໂລກ.

ເຖິງປີຈຸລສັກກຣາດ ໙໐໑ (ຄ.ສ.໑໕໓໙) ໄດ້ສະເດັດໄປໄຫວ້ພຣະທາດພະນົມ ພຣະອົງໄດ້ມີພຣະຣາຊອາຊຍາ ໃຫ້ສ້າງວິຫານຂຶ້ນໃນບໍຣິເວນພຣະທາດພະນົມຫລັງນຶ່ງ ມຸງດ້ວຍແຜ່ນກົ່ວທັງມວນ ແລະທັງສະລະຂ້າໃຊ້ສອງຄົນອ້າຍນ້ອງ ທີ່ພຣະອົງລ້ຽງໄວ້ເປັນຂ້າຫັຖບາດ ຜູ້ພີ່ຊື່ຂ້າສະເອີ້ງ ຜູ້ນ້ອງໄດ້ເປັນພັນເຮືອນຫີນໃຫ້ເປັນນາຍກຳກັບຄົນອຸປຖາກພຣະທາດ ຄົນທີ່ເປັນຂ້າອຸປຖາກພຣະທາດນັ້ນມີ ໓໐໐໐ ຄົນ ໑໐ ສາຍອອກວັດສາແລ້ວພຣະອົງມີອາຊຍາໃຫ້ພັນເຮືອນຫີນນຳດອກໄມ້ທູບທຽນມາບູຊາພຣະທາດທຸກປີ.

ເຖິງປີຈຸລສັກກຣາດ ໙໐໒ (ຄ.ສ.໑໕໔໐) ສົມເດັດພຣະເຈົ້າອາທິຕຍະຣາດເຈົ້າແຜ່ນດິນກຸງສີອະຍຸທຍາ ໄດ້ຍົກຣີພົນໂຍທາຂຶ້ນມາຕີນະຄອນວຽງຈັນ ກອງທັບຊາວອະຍຸທຍາຕີວຽງຄູກໄດ້ແລ້ວກໍຍົກຣີພົນຂ້າມຂອງມາຕັ້ງຢູ່ທົ່ງສາລາຄຳໄດ້ ໕ ວັນ ສົມເດັດພຣະເຈົ້າໂພທິສາຣະຣາຊ ຈຶ່ງມີພຣະຣາຊອາຊຍາແຕ່ງໃຫ້ພຣະຍາແສນຫລວງລ້ານຊ້າງ ເຈົ້າເມືອງນະຄອນທ່າແຂກກັບພຣະຊ້າງນ້ຳລູກພຣະຍາແສນຫລວງ ເກນພົນອອກຕໍ່ສູ້ ພຣະຍາແສນຫລວງໄດ້ຕີກອງທັບຊາວອະຍຸທຍາແຕກໄປໃນເວລາດຽວ ຊາວອະຍຸທຍາເສັຽຊ້າງມ້າແລະຣີພົນໂຍທາເປັນອັນມາກ ແລ້ວສົມເດັດພຣະໂພທິສາຣະຣາຊເຈົ້າ ກໍຍົກທັບກັບຄືນພຣະນະຄອນ.

ສົມເດັດພຣະໂພທິສາຣະຣາຊເຈົ້າມີພຣະຣາຊໂອຣົດ ໑ ອົງແລະພຣະຣາຊທິດາ ໑ ອົງ ຄື:

໑. ເຈົ້າເຊດຖາວົງໂສ ປະສູດຈາກພຣະນາງຍອດຄຳ ຜູ້ເປັນພຣະຣາຊທິດາຂອງພຣະເຈົ້າແຜ່ນດິນຊຽງໃໝ່.

໒. ພຣະລ້ານຊ້າງ ປະສູດຈາກມະເຫສີຝ່າຍຊ້າຍ ຜູ້ເປັນພຣະຣາຊທິດາຂອງຊາວອະຍຸທຍາ.

---

(໑) ວຽງພຣະງາມ ເຫັນຈະແມ່ນເມືອງເຂົາພຣະງາມເຊິ່ງຢູ່ທາງທິດເໜືອຂອງເມືອງລົບບຸຣີ ໃນປະເທດໄທທຸກວັນນີ້.

໓. ເຈົ້າທ່າເຮືອ ຫລື ພຣະວໍຣະວັງໂສ ປະສູດຈາກພຣະສົມມເອກ ຜູ້ເປັນທິດາຂອງເຈົ້າຂວາເຫ ພາ.

໔. ເຈົ້ານາງແກ້ວກຸມມາຣີ

໕. ເຈົ້ານາງຄຳເຫລົາ ຫລື ເຈົ້ານາງແທ່ນຄຳ

໖. ນາງຄຳໄຂ

ເຖິງປີຈຸລສັກຣາດ ໘໑໐ (ຄ.ສ.໑໔໔໘) ສົມເດັດພຣະເມືອງເກດແກ້ວ ເຈົ້າແຜ່ນດິນຊຽງໃໝ່ ສະເດັດສູ່ຣະຄົຕ ພຣະອົງບໍ່ມີພຣະຣາຊໂອຣົດຈະສືບເມືອງແທນ ພວກເສນາອາມາດແລະພຣະສົງຄະເຈົ້າທັງຫລາຍ ມີພຣະຍາແສນຫລວງ ພຣະຍາສາມລ້ານພຣະຍາຊຽງແສນເປັນເຄົ້າ ຈຶ່ງພ້ອມກັນມາຂໍເອົາເຈົ້າເຊດຖ-ວັງໂສ ເມືອເປັນເຈົ້າແຜ່ນດິນໃນນະຄອນຊຽງໃໝ່ ເວລານັ້ນເຈົ້າ ເຊດຖວັງໂສມີພຣະຊົນໄດ້ ໑໔ ປີ (໑) ສົມເດັດພຣະໂພທິສາຣະຣາຊເຈົ້າກໍມີພຣະໄທຍິນດີ ຈຶ່ງທົງພຣະຣາຊອາດຍາໃຫ້ຕົກແຕ່ງປຸ່ນແປງການທີ່ຈະແຫ່ແຫນພຣະຣາຊໂອຣົດໄປນັ້ນມີພົນເຖິງ ໓໐໐,໐໐໐ ຄົນ ຊ້າງ ໒໐໐໐ ໂຕ ພ້ອມໄປດ້ວຍອາມາດຣາຊມົນຕີຜູ້ໃຫຍ່ ໙ ຄົນຄື: ພຣະຍາກົງກາງຣາດ ໑ (ພີ່ຊາຍຂອງພຣະມານດາ ເຈົ້າເຊດຖວັງໂສ ) ພຣະຍານະຄອນ ໑ ພຣະຍາວິຊິດສົງຄາມ ໑ ພຣະຍາສຸຣະເດດ ໑ ພຣະຍາທັກຂິນ ໑ ພຣະຍາຍົດລືກຽນ ໑ ພຣະຍາພັນຊ້າຍ ໑ ພຣະຍາສີສັດທັມມະໄຕໂລກ ໑ ພຣະຍາອໍຣະຊຸນ ໑(ສາມຄົນນີ້ເປັນນັກປາດຜູ້ໃຫຍ່) ພ້ອມກັບການແຫ່ແຫນພຣະຣາຊໂອຣົດໄປຄາວນີ້ ພຣະອົງໄດ້ມີພຣະຣາຊອາດຍາແຕ່ງໃຫ້ພຣະຍາວຽງ ກັບແສນນະຄອນ ເປັນເຈົ້າທັບຖືພົນ ໒ ແສນ ຊ້າງສອງພັນໂຕ ຍົກຂຶ້ນໄປຕີເອົາວຽງພຣະບົງດ້ວຍ(໒).

ຄັນຈັດແຈງແຕ່ງການບໍຣະບວນແລ້ວ ສົມເດັດພຣະໂພທິສາຣະຣາດເຈົ້າ ກໍຍົກຣິພົນໂຍທາທະຫານອອກຈາກພຣະນະຄອນ ແຫ່ແຫນພຣະຣາຊໂອຣົດໄປ ເຖິງນະຄອນຊຽງແສນເມື່ອເດືອນ ໙ ອອກໃໝ່ ໑໐ ຄ່ຳ ຈຸລສັກຣາດ ໘໑໐ (ຄ.ສ.໑໔໔໘)ຢູ່ນະຄອນຊຽງແສນ ພຣະອົງໄດ້ທົງພາເພັງພຣະຣາຊກຸສົນທຳພິທີບວດກຸລບຸດໃນອຸທກະສີມານ້ຳຂອງເປັນປະຖົມຣຶກກ່ອນ ເດືອນ ໙ ແຮມ ໔ ຄ່ຳ ສະເດັດເຖິງນະຄອນຊຽງຮາຍ ໗ ວັນ ຈຶ່ງສະເດັດຍົກກະບວນໄພໂດຍສະຖົລມາກ ເຖິງຜານໄຊໝື່ນຂອມ ຕາແສງໜອງແກ້ວ ທີ່ທາງນະຄອນຊຽງໃໝ່ໃຫ້ມາປຸກໄວ້ຮັບສະເດັດໃນເດືອນ ໑໐ ແຮມ ໔ ຄ່ຳ ວັນປະຫັດ ເດືອນ ໑໐ ແຮມ ໖ ຄ່ຳ ພວກເສນາອາມາດນະຄອນຊຽງໃໝ່ ມີແສນພົງໄຊແກ້ວ ໑ ໝື່ນສາມລ້ານ ໑ ເຈົ້າແສນຄາວນິມທະລີຣີ ໑ ເຈົ້າໝື່ນຫລວງພານ ໑ ເຈົ້າໝື່ນຫລວງຈ່າບ້ານ ໑ ເຈົ້າໝື່ນຫລວງພິດທາ ໑ ເຈົ້າໝື່ນຫລວງລ່າມແຂກ ໑ ເຈົ້າຍານະກິດຕິ ໑ ພ້ອມດ້ວຍບໍຣິວານໄດ້ຈັດເຄື່ອງຣາຊປະໂພກອອກມາຖວາຍຢູ່ຜານໄຊ ແລ້ວແຫ່ແຫນພຣະໄຊຍະເຊດຖາທິຣາຊເຈົ້າເຂົ້າໄປປະທັບຢູ່ວັດຊຽງຍືນກ່ອນ ສົມເດັດພຣະໄຊເຊດຖາທິຣາຊເຈົ້າທົງລົດ

---

(໑) ໃນຕຳນານໂຍນົກວ່າ ຈຸລສັກຣາດ ໘໐໗ ແລະວ່າເວລານັ້ນພຣະເຊດຖວັງໂສ ມີພຣະຊົນໄດ້ ໑໒ ປີ

(໒)ວຽງພຣະບົງໃນຕຳນານໂຍນົກເອີ້ນວ່າ ເມືອງພຣະບາງໄດ້ແກ່ອຳເພີສວາງຄະບູຣີໃນປະເທດໄທ.

ເຄື່ອງຕົ້ນອອກໄວ້ ແລ້ວທົງພຣະພຸສາຂາວຖືຂັນດອກໄມ້ທູບທຽນ ເຂົ້າໄປບູຊາພຣະສັບພັນຍູເຈົ້າໃນວິຫານວັດຊຽງຍືນ ເຖິງຍາມຄ່ຳສະເດັດໄປໄຫວ້ພຣະແກ້ວ ເດືອນ ໑໐ ແຮມ ໗ ຄ່ຳຍາມແລງ ສະເດັດພຣະອາຊຸດຄຳເນີນໂດຍພຣະບາດໄປໄຫວ້ພຣະເຈດີຫຼວງ (ທາດຫລວງ).

ເຖິງວັນພຸດເດືອນ ໑໑ ຂຶ້ນ ໔ ຄ່ຳ ຣືກ ໒໖ ຍາມທ່ຽງທຳພິທີມຸຣທາພິເສກ (ຫົດສົງ) ທີ່ສວນແຮ ແລ້ວຕັ້ງພິທີອະພິເສກເຈົ້ານາງຕົນທິບ ແລະເຈົ້ານາງຕົນຄຳ ພຣະທິດາເຈົ້ານະຄອນຊຽງໃໝ່ໄວ້ໃນຕຳແໜ່ງເປັນ ອັຄມະເຫສີຊ້າຍຂວາ(໑).

ເດືອນ ໑໑ ແຮມ ໔ ຄ່ຳສະເດັດໄປໄຫວ້ພຣະທາດດອຍສຸເທບ ເດືອນ ໑໑ ແຮມ ໑໐ ຄ່ຳ ສະເດັດອອກທ້ອງຄຳທົງແຕ່ງຕັ້ງເສນາຂ້າຣາຊການທັງຫລາຍຝ່າຍນະຄອນຊຽງໃໝ່ດັ່ງນີ້:

໑. ໃຫ້ແສນພິງໄຊແກ້ວເປັນພຣະຍາແສນຫຼວງ ສິດທິຣາດປະກອນ
໒. ໃຫ້ໝື່ນສາມລ້ານເປັນພຣະຍາສາມລ້ານລືໄຊເສນາບໍດີ ກິນຊຽງຣາຍ.
໓. ໃຫ້ໝື່ນແກ້ວມະໂນ ເປັນພຣະຍາສະຖິດອຳນາດ.
໔. ໃຫ້ໝື່ນຫລວງພານເປັນພຣະຍາວະຊິຣະອຳນາດກິນເມືອງພານ.
໕. ໃຫ້ໝື່ນພິງຍີ່ ເປັນພຣະຍາສຸທັດສະອຳນາດ ກິນຊຽງແສນ
໖. ໃຫ້ໝື່ນຫລວງລ້ານແຂກ ເປັນແສນແຂກຊັຍນິງລືມ.
໗. ໃຫ້ໝື່ນດ້າວ ເປັນແສນດ້າວເພຣີ ກິນເມືອງລຳພູນແລະສອງຄືນພື້ນພຣະຣາຊທານເຄື່ອງເງິນ.

ສ່ວນພຣະຍາກົງກາງຣາດ (ຜູ້ເປັນລຸງ) ນັ້ນ ພຣະອົງທົງແຕ່ງຕັ້ງໃຫ້ເປັນແສນເມືອງ ຄຸ້ມສຳຣັດບໍຣະບວນແລ້ວ ພຣະໂພທິສາຣທັມມິກະຣາດ ພຣະຣາຊບິດາກໍທົງບໍຣິຈາກຣາຊຊັບອັນເອົາເມືອແຕ່ນະຄອນຊຽງທອງ ແລະທີ່ເສນາອາມາດນະຄອນຊຽງໃໝ່ເອົາມາຖວາຍ ອອກໃຫ້ທານແກ່ພຣະສົງຄະເຈົ້າແລະຍາຈົກວັນນິພົກຄົນອະນາຖາເປັນອັນມາກ.

ໃນເວລາພຣະໂພທິສາຣະຣາດເຈົ້າປະທັບຢູ່ເມືອງຊຽງໃໝ່ນີ້ ສົມເດັດພຣະເຈົ້າບຸເຣງນອງ (ຫລັມັງໜາຕຸຣາດ) ເຈົ້າແຜ່ນດິນເມືອງຕອງອູ(ພະມ້າ) ໄດ້ສົ່ງທູດມາຂໍຂອດພຣະຣາຊໄມຕີແລະພຣະເຈົ້າຕອງອູໄດ້ສົ່ງສານມາຊັກຊວນພຣະໂພທິສາຣະຣາດເຈົ້າໄປຕີເອົາເມືອງອະຍຸທຍາ ພຣະອົງຈຶ່ງແຕ່ງໃຫ້ໝື່ນຂວາກັບນາຍປະທຽບວິຊຸນໄປສືບຄວາມເມືອງພ້ອມກັບທູດພະມ້າທີ່ມານັ້ນ.

ສົມເດັດພຣະໂພທິສາຣະຣາດເຈົ້າປະທັບຢູ່ເມືອງຊຽງໃໝ່ນີ້ ພໍສົມຄວນແລ້ວ ກໍສະເດັດຄືນມານະຄອນຊຽງທອງແລະພຣະອົງໄດ້ເຊີນເອົາພຣະແກ້ວມໍຣະກົດ ກັບ ພຣະແຊກຄຳ ທີ່ສະຖິດຢູ່ໃນວິຫານວັດບຸບຜາຣາມ

---

(໑) ເຈົ້ານາງສອງອົງນີ້ ເປັນທິດາຂອງພຣະເມືອງເກດເກົ້າ ແຕ່ເວລານັ້ນອາຍຸຍັງນ້ອຍຫລາຍ.

ນຳ ຄືນມາເຖິງເມືອງຊ້າຍ(໑) ກໍຢຸດພັກຣີພົນຢູ່ທີ່ນັ້ນ ຈຶ່ງມີພຣະຣາຊອາດຍາໃຫ້ໝໍຊ້າງທັງຫລາຍໄປໄລ່ ຊ້າງປ່າ ທີ່ດອນກາງຂອງ ແລະ ພູເຍີຍຕລອດມາເຖິງບ້ານໝໍ້ຊຽງຂານໃຫ້ເຂົ້າພະນຽດ ມີຊ້າງປ່າມາເຂົ້າ ພະນຽດເຖິງ ໘໐໐໐ ຕົວ.

ຝ່າຍພຣະຍາວຽງກັບແສນນະຄອນ ທີ່ໄປຕີເອົາວຽງພຣະບາງຈັບຕົວເຈົ້າເມືອງໄດ້ ແລະໄດ້ຊ້າງ ໑໐໐໐ ຕົວ ກັບ ຄອບຄົວ ໘໐,໐໐໐ ຄົນ ກໍນຳມາຖວາຍພຣະໂພທິສາຣະຣາດເຈົ້າທີ່ເມືອງທົ່ນຄົນບໍຣະບວນ ແລ້ວ ພຣະອົງຈຶ່ງມີພຣະຣາຊອາດຍາໃຫ້ພຣະມະເຫສີສະເດັດມາທາງບົກ ສ່ວນພຣະອົງສະເດັດມາທາງເຮືອ ຄືນເຖິງພຣະນະຄອນ ກໍຂຶ້ນໄປປະທັບຢູ່ໂຮງຊຽງໃຫມ່ຍອດນະຄອນ ຝ່າຍເຈົ້າຟ້າມັນທາຕຸຣາດ ພຣະເຈົ້າ ແຜ່ນດິນພະມ້າ ຈຶ່ງແຕ່ງໃຫ້ນອຍມັງຈັຽ ໑ ຣາຊາທິມາດ ໑ ສີກະບູນ ໑ ຍີ່ຄຳສີ ໑ ເປັນທູດເຊີນພຣະ ຣາຊສານແລະເຄື່ອງຣາຊບັນນາການມາຈະເຣີນທາງໄມຕີພ້ອມກັບໝື່ນຂວາແລະນາຍປະທຽບວິຊຸນ ເວລາ ນັ້ນມີທູດຕ່າງເມືອງມາເຖິງນະຄອນຊຽງທອງເຖິງ ໑໔ ເມືອງ ເພື່ອເຂົ້າເຝົ້າພຣະໂພທິສາຣະຣາດເຈົ້າ ພຣະໂພທິສາຣະຣາດເຈົ້າມີພຣະປະສົງຈະໃຫ້ທູດພະມ້າແລະເມືອງອື່ນ ໆ ເຂົ້າເຝົ້າພ້ອມກັນຢູ່ສນາມຄ້ອງ ຊ້າງຫລວງ ເພື່ອໃຫ້ພວກທູດທັງຫລາຍໄດ້ຊົມຝີພຣະຫັດໃນການຄ້ອງຊ້າງ ຈຶ່ງມີພຣະຣາຊອາດຍາສັ່ງໃຫ້ ລໍຖ້າຢູ່ ພໍໃຫ້ໝໍຊ້າງທັງຫລາຍໄລ່ຊ້າງປ່າມາຮອດກ່ອນ ພໍໝໍຊ້າງໄລ່ ຊ້າງປ່າມາເຂົ້າພະນຽດໃນສນາມ ແລ້ວ ພຣະອົງກໍສະເດັດຂຶ້ນຂີ່ຊ້າງພັງຊື່ນາງກາຍ ອັນເປັນຊ້າງຕໍ່ອອກໄປສະຖິດຢືນຢູ່ກາງສນາມ ພຣະຍາອໍ ຣະຊຸນ ກັບ ພຣະຍາສີສັດທັມມະໄຕໂລກກໍພາແຂກເມືອງທັງຫລາຍເຂົ້າໄປເຝົ້າຖວາຍບັງຄົມຢູ່ສນາມນັ້ນ ຄັນເສັດພິທີຣັບທູດແຂກເມືອງແລ້ວ ພຣະອົງກໍຖືບ່ວງບາດຄ້ອງຊ້າງປ່າ.... ພໍເຊືອກບ່ວງບາດຖືກ ຊ້າງ ປ່າຕົວນັ້ນກໍຕື່ນແລ່ນລົງທາງນ້ຳຂອງຊ້າງນາງກາຍຕົວທີ່ພຣະອົງຂີ່ນັ້ນລົ້ມລົງທັບພຣະອົງໄວ້ ເສນາອາມາດ ແລະໝໍຊ້າງທັງຫລາຍກຸ້ມເຂົ້າອຸ້ມເອົາພຣະອົງອອກມາໄດ້ ແລ້ວເຊີນຂຶ້ນຍານຸມາດຫາມມາໂຮງຫລວງ ພຣະ ອົງຍັງມີສະຕິດີຢູ່ ຈຶ່ງມີພຣະຣາຊອາດຍາສັ່ງໃຫ້ພຣະຍາອໍຣະຊຸນກັບພຣະຍາສີສັດທັມມະໄຕໂລກ ບອກໃຫ້ທູດ ຕ່າງປະເທດນັ້ນກັບຄືນຫມົດ ຕໍ່ມາໄດ້ ໗ ວັນ ພຣະອົງກໍສະເດັດສູຣະຄົດ ເມື່ອປີຈໍ ຈຸລສັກຣາດ ໙໑໒ (ຄ.ສ.໑໕໕໐) ຮວມພຣະຊົນໄດ້ ໔໙ ປີ.

## ໑໐.ຣັຊການສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ

ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ພຣະນາມເດີມຊື່ວ່າ ເຈົ້າເຊດຖວັງໂສ ເປັນພຣະຣາຊ ໂອຣົດອົງໃຫຍ່ຂອງພຣະເຈົ້າໂພທິສາຣະຣາດ ພຣະມານດາເປັນພຣະຣາຊທິດາຂອງພຣະເຈົ້າແຜ່ນດິນນະ ຄອນຊຽງໃຫມ່ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ປະສູດປີມະເມັຽ ເດືອນອ້າຍ ແຮມ ໙ ຄ່ຳ ວັນ

---

(໑) ເມືອງຊ້າຍ ເຂົ້າໃຈວ່າແມ່ນເມືອງດ່ານຊ້າຍ ແລະເຣື່ອງນຳເອົາພຣະແກ້ວມານັ້ນ ຄົນສ່ວນຫລາຍວ່າ ແມ່ນພຣະໄຊເຊດຖາທິຣາດ.

ອາທິດ ເວລາທ່ຽງ ຈຸລສັກຣາດ ໘໙໖ (ຄ.ສ.໑໕໓໔) ຫມໍໂຫນໄດ້ຜູກດວງຊາຕາໄວ້ດັ່ງນີ້:



ເມື່ອພຣະອົງມີພຣະຊົນໄດ້ ໑໔ ປີ(໑) ພຣະຣາຊບິດາໄດ້ທຳອະພິເສກໃຫ້ເມືອເປັນເຈົ້າແຜ່ນດິນໃນນະຄອນຊຽງໃຫມ່ຕາມຄຳຂໍຂອງເສນາມຸນຕີເມືອງຊຽງໃຫມ່ໃນປີ ຄ.ສ.໑໕໔໘ (ຈຸລສັກຣາດ ໙໑໐) ຕໍ່ມາເຖິງປີ ຄ.ສ.໑໕໕໐ (ຈຸລສັກຣາດ ໙໑໒) ຄັນພຣະຣາຊບິດາສະເດັດສູ່ຣະຄົດແລວ ພວກເສນາອາມາດທັງຫລາຍຝ່າຍນະຄອນຊຽງທອງ ຈຶ່ງແຕ່ງໃຫ້ພຣະຍາຍົດລືກຽມຂຶ້ນໄປເຊີນລົງມານະຄອນຊຽງທອງໃຫ້ພຣະຍາສີສັດທັມມະໄຕໂລກ ຂຶ້ນໄປຄອຍຮັບຢູ່ເມືອງຊຽງທອງ ເພື່ອຖວາຍພຣະເພີງສົບພຣະຣາຊບິດາ ຝ່າຍສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ຄັນໄດ້ຟັງຊາບວ່າພຣະຣາຊບິດາສະເດັດສູ່ຣະຄົດແລ້ວ ກໍມີພຣະທັຍໂສກາອາດູນເປັນອັນມາກ ພຣະອົງຈຶ່ງມອບເວນບ້ານເມືອງໃຫ້ພຣະຍາກົງກາງຣາດຜູ້ເປັນລຸງຢູ່ຮັກສາ ແລ້ວຍົກພົລໂຍທາລົງມານະຄອນຊຽງທອງ ຄັນເຖິງກໍເຂົ້າໄປຖວາຍບັງຄົມພຣະບໍຣົມມະສົບພຣະຣາຊບິດາ.

ໃນຄາວນັ້ນພວກເສນາຝ່າຍໃຕ້ອັນມີພຣະຍາວຽງ ໑ ແສນມະໂຮງ ໑ ນານດາຂອງພຣະລ້ານຊ້າງ ໑ ກວານດ້ານພາ ໑ ເປັນຫົວຫນ້າ ພໍໄດ້ຊາບວ່າພຣະໂພທິສາຣະຣາດເຈົ້າສະເດັດສູ່ຣະຄົດແລ້ວ ກໍພ້ອມກັນຄິດວ່າຈະເອົາພຣະລ້ານຊ້າງຂຶ້ນເປັນພຣະເຈົ້າແຜ່ນດິນຈຶ່ງອັດແຂງຢູ່ເມືອງປາກຫ້ວຍຫລວງ(໒).

ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າໄດ້ຊາບດັ່ງນັ້ນ ຈຶ່ງມີພຣະຣາຊອາດຍາແຕ່ງໃຫ້ພຣະຍາສີສັດທັມມະໄຕໂລກຍົກພົນລົງມາກຳຈັດກອງທະຫານຂອງພຣະເຈົ້າລ້ານຊ້າງ ພຣະເຈົ້າລ້ານຊ້າງກັບພຣະຍາສີສັດທັມມະໄຕໂລກໄດ້ຮົບກັນຢູ່ແກ້ງສາ ພຣະຍາວຽງກວານດ້ານພາ ແລະ ແສນມະໂຮງ ເຫັນວ່າຈະຕ້ານທານບໍ່ໄດ້ ຈຶ່ງເອົາພຣະລ້ານຊ້າງຫນີລົງໄປເພິ່ງພຣະຍານະຄອນ ທີ່ເມືອງກະບອງ(ທ່າແຂກ) ພຣະຍານະຄອນ

---

(໑) ໃນຕຳນານພຣະແຊກຄຳວ່າ ມີພຣະຊົນໄດ້ ໑໒ ປີ ຕຳນານພຣະແກ້ວວ່າໄດ້ ໑໕ ປີແຕ່ໃນຕຳນານອື່ນໆ ສ່ວນຫລາຍວ່າໄດ້ ໑໔ ປີ ແລະເມື່ອໄລ່ຕາມປີຈຸລສັກຣາດແລ້ວກໍແມ່ນ ໑໔ ປີ. (໒) ເມືອງປາກຫ້ວຍຫລວງ ຄືບ້ານຫ້ວຍຫລວງ ໃນເຂດເມືອງໂພນພິໄສທຸກວັນນີ້.

ຈຶ່ງຈັບຄົນທັງສາມສົ່ງໃຫ້ພຣະຍາສີສັດທັມມະໄຕໂລກ ພວກສາມຄົນທີ່ເປັນຕົ້ນຄິດນັ້ນ ພຣະຍາສີສັດທັມກໍໃຫ້ປະຫານຊີວິດເສັຽ ແລ້ວຄຸມເອົາພຣະມານດາແລະພຣະລ້ານຊ້າງຂຶ້ນມານະຄອນຊຽງທອງ ພໍເຖິງແກ່ງປົ່ງ ພຣະຍາສີສັດທັມກໍໃຫ້ປະຫານຊີວິດພຣະມານດາຂອງພຣະລ້ານຊ້າງເສັຽ ຄຸມເອົາແຕ່ພຣະລ້ານຊ້າງກັບແມ່ລ້ຽງຜູ້ນຶ່ງຊື່ວ່າ ນາງກອງສອຍ ຂຶ້ນມານະຄອນຊຽງທອງ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ຈຶ່ງທົງພຣະກະຣຸນາອະພັຍໂທດ ແລ້ວມອບໃຫ້ໄປຢູ່ນຳພຣະຍາແສນເມືອງ ເມື່ອຈັດການບ້ານເມືອງໃຫ້ສງົບແລ້ວ ພຣະອົງຈຶ່ງທົງແຕ່ງການເຜົາສົບພຣະຣາຊບິດາສ່ວນພຣະອົງເອງໄດ້ສະເດັດອອກທົງຜນວດຈູງພຣະບໍຣົມມະສົບ ສຳເຣັດບໍຣະບວນແລ້ວ ພວກເສນາອາມາດຣາຊມົນຕີແລະພຣະສັງຄະເຈົ້າທັງຫລາຍ ຈຶ່ງພ້ອມກັນອະພິເສກພຣະໄຊຍະເຊດຖາທິຣາດເຈົ້າຂຶ້ນເປັນເຈົ້າແຜ່ນດິນໃນນະຄອນຊຽງທອງອີກ ຖວາຍພຣະນາມວ່າ "ພຣະຊຸໄພຍູທອນບໍວອນໄຊເຊດຖາພູວະນາຖາທິປັດສີສັຕນາຄະນະຫຸຕ" ເພາະເຫດທີ່ພຣະອົງໄດ້ເປັນເຈົ້າແຜ່ນດິນທັງສອງນະຄອນແລ້ວ ພຣະອົງຈຶ່ງທົງແຕ່ງຕັ້ງ ພຣະຍາສີສັດທັມມະໄຕໂລກຜູ້ມີຄວາມຊອບຂຶ້ນເປັນພຣະຍາຈັນທະບູຣີ ສີສັດທັມມະໄຕໂລກນາຍອກພຣະເປັນເຈົ້າ ແລ້ວທົງພຣະກະຣຸນາໃຫ້ມານັ່ງວຽງຈັນ ບັນດາເມືອງຫລ້ານັ້ນຄື: ຊວງຄານ, ແກ່ນທ້າວ, ເມືອງແກ, ເມືອງພະນ້ຳຮຸ່ງຊຽງສາ, ເມືອງຫ້ວຍຫລວງ ແລະວຽງຄຳ ໃຫ້ຢູ່ໃນຄວາມປົກຄອງຂອງພຣະຍາຈັນທະບູຣີທັງມວນ ພຣະຍາຈັນທະບູຣີຈຶ່ງກາບຖວາຍບັງຄົມລາລົງມາຢູ່ວຽງຈັນອັນເປັນເມືອງໃຫຍ່ແລ້ວພຣະຍາຈັນທະບູຣີຈຶ່ງສ້າງວັດຂຶ້ນສອງວັດຄື: ວັດພຣະຍາ ຢູ່ທາງຕາເວັນອອກ (ຄືວັດເພັຽວັດທຸກວັນນີ້). ແລະວັດຈັນທະບູຣີສີສັດທັມມະໄຕໂລກ ຢູ່ທາງຕາເວັນຕົກ (ຄືວັດຈັນທຸກວັນນີ້).

ຢູ່ຕໍ່ມາ ມີຊາຍຄົນນຶ່ງຊື່ວ່າ ເຊຣົມນາ ເປັນຊາວນະຄອນ (ຂະເມນ) ເປັນຄົນມີວິຊາອາຄົມດີ ເຊຣົມນາໄດ້ໄປຊັກຊວນເກັຽກອນພຣະຍາສຸຣະເທບ ໑ ຈ່າຄອງຊ້າງ ໑ ທ້າວຊຽງໃຫມ່ນ້ອງຊາຍຂອງແມ່ພຣະລ້ານຊ້າງ ໑ ພາກັນຄິດການກະບົດຈະລັກເອົາພຣະລ້ານຊ້າງໜີໄປນະຄອນອະຍຸທຍາ ພຣະຍາແສນເມືອງຮູ້ຣະຫັດແລະຈັບໄດ້ຈຶ່ງໃຫ້ປະຫານຊີວິດເສັຽທັງໝົດ ແຕ່ນັ້ນມາບ້ານເມືອງກໍຢູ່ສຸກສວັດດີ.

## ສົມເດັດພຣະໄຊຍະເຊດຖາທິຣາດຕີນະຄອນຊຽງໃຫມ່

ເຖິງປີ ຄ.ສ.໑໕໔໑ (ຈຸລສັກຣາດ ໙໐໓) ສົມເດັດພຣະໄຊຍະເຊດຖາທິຣາຊເຈົ້າໄດ້ແຕ່ງໃຫ້ເສນາມົນຕີໄປບອກທາງນະຄອນຊຽງໃຫມ່ວ່າ ພຣະອົງຈະບໍ່ໄດ້ສະເດັດກັບຄືນມາ ສ່ວນຣາຊການບ້ານເມືອງນັ້ນ ຂໍມອບໃຫ້ພຣະນາງເຈົ້າຈິຣະປະພາເປັນຜູ້ເບິ່ງແຍງຝ່າຍເສນາມົນຕີຜູ້ໃຫຍ່ຂອງເມືອງຊຽງໃຫມ່ໄດ້ຊາບ ດັ່ງນັ້ນ ກໍເກີດວິວາດຍາດແຍ່ງກັນຈະເປັນໃຫຍ່ ຈົນໄດ້ຣົບກັນຂຶ້ນທາງເມືອງ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າໄດ້ທົງຊາບຈຶ່ງພຣະຣາຊໂອງການສັ່ງໃຫ້ພຣະຍາເມືອງແພ້ຜູ້ເປັນພຣະຍາສາມລ້ານກັບພຣະຍານະຄອນລ້ານຊ້າງແລະພຣະຍາທົ້ວວຽງ ຍົກກຳລັງຂຶ້ນໄປຈັດການກໍສງົບໄປ ຄັນມາເຖິງປີ ຄ.ສ.໑໕໔໓ (ຈຸລສັກຣາດ ໙໐໔) ພວກເສນາມົນຕີນະຄອນຊຽງໃຫມ່ ໄດ້ພ້ອມກັນໄປເຊີນເອົາເຈົ້າ ເມກຸຕິ ຜູ້ເປັນ

ເຊື້ອແນວຂອງພຣະເຈົ້າເມັງຣາຍ ເຊິ່ງເວລານັ້ນຍັງທົງຜນວດຢູ່ໃຫ້ລາເພດມາອະພິເສກເປັນເຈົ້າແຜ່ນດິນ ສົມເດັດພຣະໄຊຍະເຊດຖາທິຣາດ ທົງຊາບດັ່ງນັ້ນກໍທົງພຣະພິໂຣດເປັນອັນມາກ ໂດຍພຣະອົງຖືວ່າ ເມືອງຊຽງໃຫມ່ເປັນຂອງພຣະອົງຢູ່ ດັ່ງນັ້ນ ຄັນເຖິງປີ ຄ.ສ.໑໕໕໕ (ຈຸລສັກຣາດ ໙໑໗) ພຣະອົງຈຶ່ງໄດ້ຍົກພົລໂຍທາຂຶ້ນໄປຕີນະຄອນຊຽງໃຫມ່ ແລະທົງມອບໃຫ້ພຣະຍານະຄອນຢູ່ຮັກສາເມືອງກອງທັບຫລວງຂຶ້ນໄປເຖິງນ້ຳທາ ພຣະອົງຈຶ່ງມີພຣະຣາຊອາຄຍາໃຫ້ພຣະຍາຂາວດອກຫມາກ ຍົກພົນໄປຕັ້ງຢູ່ດອນທາດສ້ອຍ ໃຫ້ພຣະຍາຍົດລືກຽນ (ພາຍລູນມາໄດ້ເປັນພຣະຍາແສນສຸຣິນ) ຍົກພົນໄປຕັ້ງຢູ່ບ້ານດ່ານຝ່າຍພຣະເຈົ້າເມກຸຕິເຈົ້ານະຄອນຊຽງໃຫມ່ ຈຶ່ງແຕ່ງໃຫ້ພຣະຍາໄຊຍະເສນກັບແສນນ້ອຍ ເກນພົນເມືອງຝາງ ເມືອງຊຽງຣາຍແລະຊຽງແສນ ຍົກອອກມາຕັ້ງຮັບຢູ່ເມືອງຜາໃດ ພຣະຍາໄຊຍະເສນຂີ່ຊ້າງຂວັນເມືອງງອຍຈົນຜ່ານມາທາງດ່ານ ໄດ້ຈວບກັບພຣະຍາຍົດລືກຽນ ພຣະຍາຍົດລືກຽນຂີ່ຊ້າງກຳແພງຈັກເຂົ້າຈົນ ຖືກຊ້າງຂວັນເມືອງງອຍທາວລົ້ມລົງນ້ຳຂອງ ພຣະຍາຍົດລືກຽນ ຈຶ່ງຟັນຖືກພຣະຍາໄຊຍະເສນຕາຍກັບຫົວຊ້າງ ກອງທັບຂອງພຣະຍາໄຊຍະເສນກໍແຕກຫນີໄປ ຝ່າຍແສນນ້ອຍເຫັນດັ່ງນັ້ນ ຈຶ່ງອວ່າຍພົນຫນີໄປຢູ່ໃນເມືອງຊຽງແສນ.

ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ກໍຍົກທັບຫລວງຂຶ້ນໄປຕັ້ງຢູ່ເມືອງທຶ່ນ ແລ້ວມີພຣະຣາຊອາຄຍາສັ່ງໃຫ້ພຣະຍາຈັນທະບຸຣີສີສັດທັມມະໄຕໂລກກັບພຣະຍາແສນລຸງ ນຳໄປຕີແສນນ້ອຍທີ່ເມືອງຊຽງແສນໃຫ້ໄດ້ ໃນເວລານັ້ນ ພຣະຍາທັກຂິນມີຄວາມຄຽດແຄ້ນໃຫ້ພຣະຍາຈັນທະບູຣີຢູ່ ຈຶ່ງຫາເຫດທູນສັບສໍ່ພຣະໄຊຍະເຊດຖາທິຣາດເຈົ້າວ່າ ພຣະຍາຈັນທະບຸຣີເປັນໃຈກະບົດເຂົ້າກັບແສນນ້ອຍ ແລ້ວພຣະຍາທັກຂິນຈຶ່ງທຳອຸບາຍປຶກສາກັບພຣະຍາຈັນທະບຸຣີວ່າ ການເສິກຄາວນີ້ຫນັກຢູ່ ເຫັນຈະຕີເອົານະຄອນຊຽງໃຫມ່ບໍ່ໄດ້ ຂໍເຊີນພຣະເປັນເຈົ້າໃຫ້ເລີກທັບກັບຄືນກ່ອນ ພຣະຍາຈັນທະບຸຣີຫລົງເຊື່ອກໍເຂົ້າທູນພຣະໄຊຍະເຊດຖາທິຣາດເຈົ້າຕາມທີ່ໄດ້ປຶກສາກັບພຣະຍາທັກຂິນ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າກໍທົງພຣະພິໂຣດ ຈຶ່ງມີພຣະຣາຊອາຄຍາສັ່ງໃຫ້ຕຳຫລວດຫລວງກຸມເອົາພຣະຍາຈັນທະບຸຣີໄປຂ້າເສັຽ ແລະເວລານັ້ນພຣະຍາແສນລຸງກໍປ່ວຍຫລາຍຈຶ່ງທູນລາລ່ອງລົງມານະຄອນຊຽງທອງ ພໍມາເຖິງພຣະນະຄອນກໍເຖິງແກ່ອະນິຈກັມ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ຈຶ່ງທົງຕັ້ງໃຫ້ພຣະຍາເມືອງກາງເປັນແມ່ທັບຍົກໄປຕີຊຽງແສນໄດ້ ຕົວແສນນ້ອຍຫນີໄປເມືອງຕອງອູ (ຫົງສາວະດີ) ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າຈຶ່ງສະເດັດຂຶ້ນໄປສະຖິດຢູ່ນະຄອນຊຽງແສນ ຕັ້ງນະຄອນຊຽງແສນເປັນຣາຊທານີ ທົງບຳຣຸງຊ້າງມ້າຣີພົນຢູ່ທີ່ນັ້ນເຖິງ ໙ ເດືອນ(໑) ເພື່ອຈະຕີນະຄອນຊຽງໃຫມ່ຄືນມາໃຫ້ໄດ້.

ຝ່າຍແສນນ້ອຍທີ່ຫນີໄປນັ້ນ ໄດ້ໄປເຊີນເຈົ້າຟ້າຫົງສາວະດີບຸເຣງນອງ (ຫລືມັງທາຖຸຣາດ) ຍົກທັບມາຕີເອົານະຄອນຊຽງໃຫມ່ໄດ້ແລ້ວເຈົ້າຟ້າຫົງສາວະດີຈຶ່ງມີພຣະຣາຊສານໃຫ້ນ້ອຍເຈັຽຖືມາຖວາຍພຣະໄຊຍະເຊດຖາທິຣາດເຈົ້າຢູ່ເມືອງຊຽງແສນ ໃຈຄວາມໃນພຣະຣາຊສານນັ້ນວ່າ "ເມືອງຊຽງໃຫມ່ເປັນເມືອງ

---

(໑) ບາງສະບັບວ່າໄດ້ ໙ ປີ ບາງສບັບວ່າໄດ້ ໓ ປີ.

ຈູນເຮົາ ເຮົາກໍໄດ້ຮູ້ໄດ້ແຈ້ງ ແຕ່ພໍ່ເຈົ້າໃຊ້ໝື່ນກວານກັບນາຍປະທຽບວິຊຸມ ໃຫ້ມາບອກເລົ່າຮອດເມືອງອັ້ງວະພຸມ ພຣະເນກູຕິ ທັງແສນນ້ອຍເຂົ້າໄດ້ໂຄບຊິງເອົາເມືອງຊຽງໃຫມ ບັດນີ້ເຮົາຜູ້ພໍ່ກໍມາເອົາພຣະເນກູຕິແລະແສນນ້ອຍໄດ້ແລ້ວ ບັດນີ້ເມືອງຊຽງໃຫມ່ນີ້ລູກເຮົາຈັກມາເອົາ ເຮົາຜູ້ພໍ່ຈັກມອບເວນໃຫ້".

ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າໄດ້ຊົງຊາບພຣະຣາຊສານດັ່ງນັ້ນແລ້ວ ຈຶ່ງແຕ່ງໃຫ້ແສນແຂກເອົາຊ້າງໄຕພົບໄປຖວາຍພຣະເຈົ້າມັນທາຕຸຣາດທີ່ເມືອງຊຽງໃຫມພ້ອມກັບມີພຣະຣາຊສານໄປວ່າ "ເມືອງຊຽງໃຫມ່ນີ້ຫາກແມ່ນເມືອງເຮົາຜູ້ລູກແທ້ ພໍ່ເຮົາຕາຍເຮົາໄດ້ເມືອບວດຕົນຕົວແລະສ້າງມະຫາທາດທັງມະຫາວິຫານ ໃຫ້ທານຖົມມະນາບຸນຄຸນພໍ່ເຮົາ ເຮົາຈຶ່ງຝາກບ້ານຝາກເມືອງ ໄວ້ດອມພຣະສົງຄະເຈົ້າແລະເສນາທັງມວນ ເຂົາບໍ່ຢູ່ໃນສັດຈະອັນເຮົາຕັ້ງໄວ້ ລວດເອົາພຣະເນກູຕິມາຕັ້ງແທນ ບັດນີ້ພໍ່ເຮົາມາໄດ້ເມືອງຊຽງໃຫມແລ້ວ ເຮົາຂໍຖວາຍມອບໄວ້ແກ່ພໍ່ເຮົາເຖີ້ນ ເຮົາຈັກລ່ອງເມືອເມືອງລ້ານຊ້າງດັ່ງເກົ່າແລ".

ພຣະເຈົ້າມັນທາຕຸຣາດໄດ້ຮັບພຣະຣາຊສານນີ້ແລ້ວ ຈຶ່ງໃຫ້ນ້ອຍມັງເຈັຽກັບຄືນມານຳແສນແຂກອີກບອກວ່າໃຫ້ເຊີນພຣະໄຊຍະເຊດຖາທິຣາດເຈົ້າສະເດັດໄປເອົານະຄອນຊຽງໃຫມ່ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າຊົງຊາບວ່າ ພຣະເຈົ້າຫົງສາວະດີຈະຫຼອກລວງຈັບເອົາພຣະອົງ ພຣະອົງຈຶ່ງໃຫ້ຈັບເອົານ້ອຍມັງເຈັຽໄວ້ ແລ້ວກໍເລີກທັບກັບຄືນມານະຄອນຊຽງທອງ.

ຝ່າຍພຣະເຈົ້າມັນທາຕຸຣາດພຣະເຈົ້າແຜ່ນດິນຫົງສາວະດີໄດ້ຊາບດັ່ງນັ້ນ ກໍແຕ່ງໃຫ້ອິນເນເປັນແມ່ທັບຍົກພົນຕິດຕາມມາຕີເອົານ້ອຍມັງເຈັຽຄືນ ກອງທະຫານພະມ້ານຳມາທັນຢູ່ແດນແດນເມືອງ ກໍຍົກກຳລັງເຂົ້າຕີກອງລະວັງຫລັງ ຈັບໄດ້ພຣະຍາກາງສີວິໄຊ ໑...ແສນຊ້າງທາວ ໑ ແສນໄຊຍະໂຊດ ໑ ກັບນ້ອຍມັງເຈັຽຜູ້ເປັນຣາຊທູດນັ້ນຄືນໄປ.

## ຕັ້ງນະຄອນວຽງຈັນເປັນຣາຊທານີ

ເຖິງປີຈຸລສັກຣາດ ໙໒໒(໑) (ຄ.ສ.໑໕໖໐) ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າຊົງພິຈາຣະນາເຫັນວ່າ ນະຄອນຊຽງທອງເປັນທີ່ຄັບແຄບບໍ່ກວ້າງຂວາງ ແລະອີກປະການນຶ່ງ ກໍຢູ່ໃນທາງເດີນຂອງພະມ້າເຊິ່ງກຳລັງເປັນສັດຕູຢູ່ກັບນະຄອນຊຽງທອງ ທັງພິຈາຣະນາເຫັນວ່າ ເມືອງວຽງຈັນເປັນນະຄອນອັນໃຫຍ່ມີບອນທຳມາຫາກິນກວ້າງຂວາງ ອຸດົມດ້ວຍເຂົ້າປາອາຫານ ສົມຄວນຈະຕັ້ງເປັນພຣະມະຫານະຄອນໄດ້ ທົງຈິນຕະນາແລ້ວກໍຊົງປຶກສາຫາລືນຳເສນາມຸນຕີທັງຫລາຍ ພວກເສນາມຸນຕີທັງຫລາຍກໍເຫັນດີນຳ ດັ່ງນັ້ນ ພຣະອົງຈຶ່ງຊົງມອບເວນນະຄອນຊຽງທອງໃຫ້ພຣະສົງຄະເຈົ້າຢູ່ເຝົ້າຮັກສາພ້ອມດ້ວຍພຣະບາງເຈົ້າ ສ່ວນພຣະອົງໄດ້ເຊີນເອົາພຣະແກ້ວມໍຣະກົດແລະພຣະແຊກຄຳກັບພຣະຣາຊສົມບັດທັງມວນ ແລ້ວກໍຍົກຈະຕຸຣົງຄະເສນາໂຍທາຫານລົງມາຢູ່ນະຄອນວຽງຈັນ ຈຶ່ງຂນານນາມນະຄອນວຽງຈັນນີ້ວ່າ ພຣະນະຄອນຈັນທະບູຣີສີສັດຕະນາຄະມະຫຸດອຸດມະຣາຊທານີ ໃນປີກົດສັນ (ປີວອກ) ຈຸລສັກຣາດໄດ້ ໙໒໒ ສ່ວນພຣະນະຄອນຊຽງທອງນັ້ນ

(໑) ໃນຕຳນານພຣະແກ້ວວ່າ ປີຈຸລສັກຣາດ ໙໖໒.

ຈຶ່ງເອີ້ນວ່ານະຄອນຫລວງພຣະບາງ ແຕ່ກາລະ ນັ້ນມາ ໂດຍວ່າພຣະບາງເຈົ້າຍັງສະຖິດຢູ່ທີ່ນັ້ນ...

ແລ້ວພຣະອົງກໍໄດ້ສ້າງພຣະມະຫາປາສາດຣາຊວັງຫລວງຂຶ້ນໃຫມ່ພ້ອມທັງຕໍາພຣະແກ້ວພຣະແຊກຄໍາ ຢ່າງວິຈິດພິສດານຍິ່ງນັກ.

ໃນເວລານັ້ນ ພຣະຍາຄໍາຄອນ ເຈົ້າເມືອງພວນຊຽງຂວາງ ໄດ້ນໍາເອົາຊ້າງຕົວນຶ່ງຊື່ວ່າ ຂວັນຫຼວງ ມາຖວາຍແລ້ວໄດ້ທູນຂໍເອົາຄົວໄທພວນອັນຢູ່ວຽງຈັນ ຄືນໄປຍັງເມືອງພວນ.

<u>ສົມເດັດພຣະໄຊຍະເຊດຖາທິຣາດ ເຈົ້າຂໍນາງເທບກະສັດຕີ</u>

ເຖິງປີຈຸລສັກຣາດ ໙໒໔ (ຄ.ສ.໑໕໖໒)(໑) ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າໄດ້ຫັງຊາບຂ່າວ. ວ່າ ນາງເທບກະສັດຕີອັນເປັນພຣະຣາຊທິດາຂອງພຣະມະຫາຈັກກະພັດ ພຣະເຈົ້າແຜ່ນດິນກຸງສີອະຍຸທຍາມີ ພຣະສະຣີຣະໂສພາງາມເລີດ ທັງເປັນຫນໍ່ແນວຂອງພຣະຍາຜູ້ກ້າຫານ ພຣະອົງຄິດໃຄ່ໄດ້ເປັນເອກອັຄມະ- ເຫສີ ຈຶ່ງແຕ່ງພຣະຣາຊສານລົງໄປຂໍເອົາ ໃຈຄວາມ ພຣະຣາຊສານນັ້ນວ່າ "ຂ້າພຣະອົງຜູ້ຜ່ານພິພົບກຸງສີ ສັຕນາຄະນະຫຸດ ຂໍຖວາຍອະພິວາດວັນທະນາມາຍັງສົມເດັດພຣະປິຕຸຣາທິຣາດຜູ້ຜ່ານພິພົບກຸງເທບທະວາຣາ ວະດີສີອະຍຸທຍາມະຫາດິລົກພົບນົພຣັຕນະຣາຊທານີບຸຣີຣົມ ອຸດົມດ້ວຍພຣະຣາຊມະຫາສະຖານມະໂຫາຣານຍິ່ງ ເປັນນິ່ງນຸງກຸດດ້ວຍສເວດກຸນຊອນຊາດຕົວປະເສີດສີເມືອງ ຂ້າພຣະອົງຍັງໄປມີເອກອັຄຣາຊກັລຍານີທີ່ ຈະສືບສີສຸຣິຍະວົງໃນກຸງສີສັຕນາຄະນະຫຸດຕໍ່ໄປຂ້າພຣະອົງຂໍພຣະຣາຊທານພຣະຣາຊທິດາອັນທົງພຣະນາມ ພຣະເທບກະສັດຕີ ໄປເປັນປິ່ນສີສຸຣາງຄະນິກອນກັລຍາໃນມະຫານະຄະເຣດປາຈິນທິດ ເປັນທາງພຣະຣາຊ ສັມພັນທະມິດໄມຕີ ສູວັນນະປະຖະພີແຜ່ນດຽວກັນຊົ່ວກັລປາວະສານ".

ສົມເດັດພຣະມະຫາຈັກກະພັດ ພຣະເຈົ້າແຜ່ນດິນອະຍຸທຍາໄດ້ຮັບພຣະຣາຊສານນັ້ນແລ້ວ ຈຶ່ງໃຫ້ທ້າວ ພຣະຍານູຂະມຸນຕີທັງຫຼາຍມາປຶກສາກັນ ເຫັນວ່າກຸງສີອະຍຸທຍາ ກັບ ກຸງທົງສາວະດີ ເປັນຂ້າເສີກກັນຊອກ ຊ້ຳ ປະດູດຈະດັ່ງວັນນະໂຣກຢູ່ໃນທ້ອງ ຈະຮັກສາປຽວຢາເປັນອັນຍາກ ແລະພຣະເຈົ້າກຸງສີສັຕນາຄະນະ ຫຸດ ກໍເປັນເຈົ້າກຸງກະສັດອັນໃຫຍ່ ໄດ້ມີພຣະຣາຊສານມາແລ້ວ ຄວນທີ່ຈະພຣະຣາຊທານໃຫ້ ຈະໄດ້ເປັນທາງ ພຣະຣາຊສັມພັນທະມິດໄມຕີ ຖ້າມີການສົງຄາມພາຍຫນ້າ ຈະໄດ້ເປັນກໍາລັງມະຫາຍຸທການ ສົມເດັດພຣະ ມະຫາຈັກພັດທົງເຫັນດີນໍາ ຈຶ່ງມີພຣະຣາຊສານຕອບຄືນມາໃຫ້ແຕ່ງທູດໄປຮັບເອົາ.

ຝ່າຍສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ຈຶ່ງແຕ່ງໃຫ້ຣາຊທູດກັບບ່າວໄພ່ ໕໐໐ ຄົນພ້ອມດ້ວຍ ເຖົ້າແກ່ລົງໄປເຖິງກຸງສີອະຍຸທຍາແລ້ວ ພໍດີພຣະນາງເທບກະສັດຕີເກີດອາພາດຫນັກມາບໍ່ໄດ້ ສົມເດັດພຣະ ມະຫາຈັກກະພັດຜູ້ບິດາ ທົງຈິນຕະນາວ່າ ຖ້າຈະຕອບພຣະຣາຊສານຄືນມາວ່ານາງເທບກະສັດຕີອາພາດກໍ ຢ້ານພຣະເຈົ້າກຸງສີສັຕນາຄະນະຫຸດ ບໍ່ເຊື່ອພຣະທັຍ ຈະຫາວ່າເຣົານັ້ນເຈຣະຈາເປັນສອງຈະເສັຽຄອງພຣະ ຣາຊໄມຕີ ດັ່ງນັ້ນ ພຣະອົງຈຶ່ງຍົກພຣະນາງແກ້ວຟ້າໃຫ້ມາແທນ ພ້ອມດ້ວຍເຄື່ອງຣາຊູປະໂພກສໍາລັບເອກ ອັຄມະເຫສີ ແລະນາງສນົມບໍຣິວານ ໕໐໐ ຄົນ ຂ້າຊາຍ ໕໐໐ ຄົນ ພວກເຖົ້າແກ່ຈຶ່ງແຫ່ແຫນພຣະນາງ ແກ້ວຍອດຟ້າຂຶ້ນມາ ຝ່າຍສົມເດັດພຣະໄຊຍະເຊດຖາທິຣາດເຈົ້າຄັນທົງຊາບວ່າບໍ່ແມ່ນພຣະນາງເທບກະສັດຕີກໍ

ເສັຽພຣະທັຍ ຈຶ່ງມີພຣະຣາຊອາດຍາວ່າ "ເຮົາປະສົງຂໍພຣະນາງເທບກະສັດຕີ ເຊິ່ງເປັນພຣະຣາຊທິດາ ຂອງພຣະນາງສຸຣິໂຍໄທ ອັນເສັຽພຣະຊົນແທນພຣະຣາຊສາມີກັບຄໍຊ້າງ ເປັນສະກຸລວົງກະຕັນຍູອັນປະເສີດ' ຄັນມີພຣະຣາຊອາດຍາດັ່ງນັ້ນແລ້ວ ຈຶ່ງຫົງແຕ່ງໃຫ້ພຣະຍາແສນພຣະຍານະຄອນ, ພຣະຍາທິບມຸນຕີ ເປັນຣາຊ ທູດໄປສົ່ງພຣະນາງແກ້ວຟ້າ ແລະ ພຣະຣາຊສານກັບເຄື່ອງຣາຊບັນນາການໄປຖວາຍພຣະມະຫາຈັກກະພັດ ອີກ ໃນພຣະຣາຊສານນັ້ນວ່າ "ເດີມພຣະອົງພຣະຣາຊທານ ນາງເທບກະສັດຕີໃຫ້ ກິດຕິສັບອັນນີ້ກໍຊາບທົ່ວ ໄປໃນນິຄົມຊົນບົດຂອບຂັນທະສີມາກຸງສີສັດຕະນາຄະນະຫຸດ ຖ້ວນແລ້ວ ເຖິງແມ່ນວ່າ ພຣະນາງແກ້ວຟ້າ ຈະມີ ສີສັນວັນນະໂສພາງາມກວ່າພຣະນາງເທບກະສັດຕີຮ້ອຍທໍ່ພັນທີກໍຕາມ ກໍບໍ່ລົບລ້າງກິດຕິສັບພຣະນາງເທບກະສັດ ຕີ ເສັຽໄດ້ ກໍເປັນທີ່ອັປຍົດອັບອາຍມາກຍິ່ງຫນັກຫນາ ຂ້າພຣະອົງຈຶ່ງຂໍສົ່ງພຣະນາງແກ້ວຟ້າຄືນມາ ຂໍພຣະ ອົງຈົ່ງພຣະຣາຊທານພຣະນາງເທບກະສັດຕີແກ່ຂ້າກູດຈະດັ່ງທົງອະນຸຍາດໄປແຕ່ກ່ອນ" ສົມເດັດພຣະມະຫາ ຈັກກະພັດໄດ້ຊາບພຣະຣາຊສານນັ້ນແລ້ວ ມີຄວາມລົ້ກອາຍພຣະທັຍເປັນອັນມາກ ພໍພຣະນາງເທບກະສັດຕີ ສວ່າງຫາຍແລ້ວ ພຣະອົງຈຶ່ງແຕ່ງໃຫ້ພຣະຍາແມນ ກັບບ່າວໄພ່ ໑໐໐໐ ຄົນມາສົ່ງພຣະນາງເທບກະສັດຕີ.

------==== 000 ====------

## ພະມ້າຕີວຽງຈັນຄັ້ງທີ ໑

-----== 0 ==----

ເຖິງປີຈຸລສັກຣາດ ໙໒໕ (ຄ.ສ.໑໕໖໓) ຝ່າຍສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ດັ່ງສົ່ງເຖົ້າແກ່ແລະເສນາມຸນຕີໄປຮັບເອົາພຣະນາງເທບກະສັດຕີແລ້ວ ສ່ວນພຣະອົງກໍຍົກຣິພົນໂຍທາໄປຄອຍຮັບພຣະນາງເຈົ້າຢູ່ເມືອງໜອງຫານແລະທຳການສລອງພຣະທາດເມືອງໜອງຫານດ້ວຍ ແລ້ວຊົງພຣະຣາຊອາດຍາໃຫ້ພຣະມະຫາອຸປຣາຊາຢູ່ຮັກສາເມືອງ ແລະໃນເວລານັ້ນ ຝ່າຍແສນນ້ອຍກັບພຣະຍາສາມລ້ານເມືອງຊຽງໃໝ່ ໄດ້ເອົາໃຈອອກຈາກພຣະເຈົ້າທົ່ງສາວະດີ ໆ ຈຶ່ງແຕ່ງໃຫ້ ອິນເນ ເປັນແມ່ທັບລົງມາຈັບເອົາແສນນ້ອຍແລະພຣະຍາສາມລ້ານ ຕົວແສນນ້ອຍໜີໄປຢູ່ເມືອງຊຽງແຂງ ສ່ວນພຣະຍາສາມລ້ານໄດ້ພາຄອບຄົວແລະບ່າວໄພ່ເຂົ້າມາເພິ່ງເມືອງລ້ານຊ້າງ ອິນເນ ແມ່ທັບພະມ້າ ຈຶ່ງໄດ້ຍົກພົນຕິດຕາມມາຕີເມືອງລ້ານຊ້າງວຽງຈັນ ຝ່າຍພຣະໄຊຍະເຊດຖາທິຣາດເຈົ້າ ດັ່ນໄດ້ຊາບຂ່າວວ່າ ພະມ້າຍົກທັບມາຕີພຣະນະຄອນ ກໍຟ້າວເລີກທັບກັບຄືນມາ ແຕ່ເວລານັ້ນພະມ້າເຂົ້າເມືອງໄດ້ແລ້ວ ພະມ້າຈຶ່ງຈັບເອົາເຈົ້ານາງຄຳໄຂ ໑ ເຈົ້ານາງແທ່ນຄຳ ໑ ພຣະຍານະຄອນ ໑ ພ້ອມທັງເຈົ້າມະຫາອຸປຣາດໜີໄປເມືອງພະມ້າໃນມື້ເດືອນ ໘ ອອກໃໝ່ ໓ ຄ່ຳ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ໄດ້ມີພຣະຣາຊອາດຍາໃຫ້ພຣະຍາຊາຍແຂນທັກນຳຕີກອງທັບພະມ້າຈົນເຖິງເມືອງນ່ານ ຈັບໄດ້ຊ້າງຂອງພວກພະມ້າ ໒ ຕົວ ພຣະອົງຈຶ່ງຊົງພຣະກະຣຸນາຕັ້ງພຣະຍາຊາຍແຂນທັກໃຫ້ເປັນແສນເມືອງ ແລະໃຫ້ແສນຊ້າງທ່າວ ເປັນພຣະຍານະຄອນ ດັ່ນສະເດັດເຂົ້າໄປເຖິງພຣະນະຄອນແລ້ວ ຈຶ່ງມີພຣະຣາຊອາດຍາໃຫ້ຈັບເອົາພຣະຍາຜ້າຂາວເຈົ້າເມືອງພວນ ແລະແສນໝື່ນທັງຫລາຍ ທັງພຣະຍາພູມໃຕ້ ມາປະຫານຊີວິດໝົດ ໂດຍຊົງພຣະພິໂຣດວ່າ ພຣະຍາຜ້າຂາວແລະແສນໝື່ນທັງຫຼາຍບໍ່ພ້ອມກັນຮັກສາເມືອງ ປ່ອຍໃຫ້ພະມ້າມາຕີເອົາເມືອງ ແລະຈັບເອົາພຣະມະຫາອຸປຣາດໄປໄດ້.

### ຊົງສ້າງທາດຫລວງ

ເຖິງປີ ຄ.ສ.໑໕໖໖ (ຈຸລສັກຣາດ ໙໒໘) ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າໄດ້ຊົງສ້າງພຣະທາດຫລວງຂຶ້ນໃນສວນອຸທິຍານດ້ານຕາເວັນອອກແຫ່ງພຣະນະຄອນ ໂດຍກໍ່ກວມເຈດີເກົ່າລູກນຶ່ງ ອັນມີຢູ່ໃນທີ່ນັ້ນ(໑) * ລົງແຮກກໍ່ຣິກມື້ເດືອນອ້າຍເພັງ ຈຸລສັກຣາດ ໙໒໘ (ຄ.ສ.໑໕໖໖) ເມື່ອສ້າງເສັດບໍຣິບວນແລ້ວຈຶ່ງຂນານນາມພຣະທາດນີ້ວ່າ "ພຣະທາດເຈດີໂລກະຈຸລາມະນີ" ແລ້ວໄດ້ຊົງອຸທິດທີ່ດິນໄຮ່ນາ ແລະຂ້າດິນໄວ້ໃຫ້ອຸປຖາກພຣະມະຫາທາດເປັນອັນມາກ ແລະພ້ອມກັບສ້າງພຣະມະຫາທາດນີ້ ພຣະອົງໄດ້ຊົງສ້າງວັດສຳຄັນອື່ນອີກຫລາຍວັດ ຄື : ວັດປ່າຣືສີສັງຫອນ (໑) ສ້າງອຸໂມງໂລ່ມທາດພຣະອໍຣະທັນທີ່–

---

(໑)* ຕາມໜັງສືອຸຣັງຄະທາດວ່າ ເຈດີເກົ່ານັ້ນແມ່ນພຣະຍາອະໂສກຣາດໄດ້ສ້າງໄວ້ກ່ອນ ຄ.ສ.໓໐໗

(໑) ປ່າຣືສີສັງຫອນ ເຂົ້າໃຈວ່າແມ່ນແຖວບ້ານດົງສີສັງວອນນີ້ເອງ

ປ່າມະຫາພຸທວົງແຫ່ງນຶ່ງ (໒) ສ້າງວັດປ່າກັນທອງແຫ່ງນຶ່ງ ທີ່ໜອງຍາງຄຳແຫ່ງນຶ່ງ ແລ້ວສະເດັດໄປສ້າງພຣະເຈດີໂລ່ມທາດຫົວເນົາຢູ່ພູເຂົາລວງ (໓) ແລະຊົງສ້າງວັດຂຶ້ນທີ່ໂພນໜອງກົກນັ້ນແຫ່ງນຶ່ງດ້ວຍ (໔) ຄັນສ້າງພຣະທາດແລະອາຣາມໃນແຂວງວຽງຈັນເສັດແລ້ວ ພຣະອົງໄດ້ສະເດັດລົງໄປເມືອງມະຣຸກຂະນະຄອນ ຄືເມືອງທ່າແຂກເກົ່າທຸກວັນນີ້ ຈຶ່ງໄດ້ຊົງກໍ່ພຣະເຈດີກວມພຣະທາດສີໂຄຕະບູນຂຶ້ນອີກ (໕) ສຳເຣັດແລ້ວຈຶ່ງສະເດັດໄປນະມັສການພຣະທາດພະນົມ ແລະຊົງພຣະກະຣຸນາໃຫ້ພວກຊ່າງທຳການປະຕິສັງຂອນສ້ອມແປງພຣະທາດພະນົມຂຶ້ນໃໝ່ອີກ ບໍຣະບວນແລ້ວຈຶ່ງສະເດັດກັບຄືນມາພຣະນະຄອນ.

ໃນສມັຍຂອງສົມເດັດພຣະໄຊຍະເຊດຖາທິຣາດເຈົ້ານີ້ ພຣະພຸທສາສນາໃນປະເທດລາວມີຄວາມຈະເຣີນກວ້າງຂວາງເປັນອັນມາກ ໃນພຣະນະຄອນເຕັມໄປດ້ວຍວັດວາອາຣາມແລະທາດເຈດີທີ່ປະດັບປະດາຢ່າງວິຈິດພິສດານ (໖) ນອກຈາກການສ້າງແປງພຣະນະຄອນແລະວັດວາອາຣາມແລ້ວ ພຣະອົງຍັງມີພຣະຣາຊສັດທາຫລໍ່ພຣະພຸທຮູບອົງສຳຄັນ ໆ ຂຶ້ນເປັນອັນມາກ ມີພຣະອົງຕື້, ພຣະສຸກ, ພຣະເສີມ, ພຣະໃສ (໗) ເປັນຕົ້ນ.

---

(໒) ປ່າມະຫາພຸທວົງ ແມ່ນວັດມະຫາພຸທວົງສາໂສກປ່າຫລວງທຸກວັນນີ້
(໓) ທາດຫົວເນົາ ເຂົ້າໃຈວ່າແມ່ນທາດຫລວງນີ້ເອງແຕ່ລາງທ່ານວ່າແມ່ນທາດບັງພວນ ຢູ່ໃນເຂດບ້ານຫ້ວຍບັງພວນແຂວງຈັງຫວັດໜອງຄາຍ
(໔) ວັດໂພນໜອງກົກ ຢູ່ໃກ້ທາດບັງພວນນັ້ນເອງ
(໕) ທາດສີໂຄຕະບູນ ແມ່ນທາດໂພ່ນຢູ່ໃນແຂວງທ່າແຂກ
(໖) ຕາມຈົດໝາຍເຫດຂອງນາຍແກມເຟີຣ ຄົນເຢັຣະມັນ ເຊິ່ງໄດ້ເຂົ້າມາໃນປະເທດໄທແລະປະເທດລາວໃນສມັຍນັ້ນກ່າວໄວ້ວ່າ ໃນພຣະນະຄອນວຽງຈັນມີວັດຢູ່ ໑໒໐ ວັດ
(໗) ພຣະເສີມເວລານີ້ປະດິສຖານຢູ່ວັດປະທຸມວະນາຣາມໃນກຸງເທບ ໆ ພຣະໃສ ຢູ່ວັດໂພໄຊ ເມືອງໜອງຄາຍ ສ່ວນພຣະສຸກ ວ່າຈົມນ້ຳຢູ່ທ່າບ້ານເວີນສຸກ ໃນເວລາໄທຈະເອົາລົງໄປກຸງເທບ

## ສະເດັດໄປຕີເມືອງພິສນຸໂລກຄັ້ງທີ ໑

--------- ໐ ---------

ຝ່າຍພຣະນະຄອນສີອະຍຸທຍາ ຄັ້ງນັ້ນ ສົມເດັດພຣະມະຫາຈັກກະພັດ ພຣະເຈົ້າແຜ່ນດິນຜູ້ເປັນພຣະຣາຊບິດາຂອງນາງເທບກະສັດຕີໄດ້ສະເດັດອອກບວດພຣະມະຫິນທະຣາຊາ ຣາຊໂອຣົດໄດ້ເປັນພຣະເຈົ້າແຜ່ນດິນ ພຣະມະຫິນທະຣາຊາມີຄວາມຄຽດແຄ້ນໃຫ້ພຣະມະຫາທັມມະຣາຊາ(໑) ເຈົ້າເມືອງພິສນຸໂລກວ່າເຈົ້າເມືອງພິສນຸໂລກເອົາໃຈຝັກໄຝ່ຕໍ່ພຣະເຈົ້າຫົງສາວະດີ ພຣະມະຫິນທະຣາຊາຈຶ່ງມີພຣະຣາຊສານລັບມາຖວາຍພຣະໄຊຍະເຊດຖາທິຣາດເຈົ້າວ່າ: ໃຫ້ຍົກໄປຕີເອົາເມືອງພິສນຸໂລກ ສົມເດັດພຣະໄຊຍະເຊດຖາທິຣາຊເຈົ້າໄດ້ຊົງຊາບຣາຊສານນັ້ນແລ້ວກໍດີພຣະທັຍ ຈຶ່ງມີພຣະຣາຊອາດຍາໃຫ້ພຣະຍາຈັນກອງນາງ ໑ ພຣະຍາຂາວດອກຫມາກ ໑ ພຣະຍາຣາຊວັດ ໑ ພຣະຍາຍົດລືກຽນ ໑ ເກນທັບໄດ້ພົນແສນນຶ່ງ ຊ້າງ ໑.000 ຕົວ ຍົກໄປຕີເອົາເມືອງຂອມ

ສ່ວນພຣະອົງເກນພົນໄດ້ ໘໓໐.000 ຄົນ ກັບຊ້າງ ໘.໕໐໐ ຕົວ ຍົກລົງໄປເມືອງພິສນຸໂລກ ສະເດັດພຣະຣາຊດຳເນີນຍົກທັບຫລວງລົງໄປທາງເມືອງນະຄອນໄທ ເຖິງເມືອງພິສນຸໂລກໃນເດືອນຍີ່ ແຮມ ໑໓ ຄ່ຳ ປີຈຸລສັກຣາດ ໗໘໗ (ຄ.ສ.໑໔໒໕) ປະທັບຕັ້ງຄ້າຍຢູ່ຕຳບົນໂພຣຽງໄກຈາກປະຕູເມືອງພິສນຸໂລກ ປະມານ ໘ ກິໂລແມັດ ໕໐໐ ທັບພຣະຍາແສນສຸຣິນຕັ້ງຢູ່ບ້ານເຕົ່າໄຫ ທັບພຣະຍາມືໄຟ ຕັ້ງຢູ່ວັດເຂົາພານ ທັບພຣະຍານະຄອນຕັ້ງຢູ່ບ້ານ ສະແກວ ທັບພຣະຍາມືເຫລັກຕັ້ງຢູ່ບ້ານບາງສະແກ ຣວມເປັນ ໕ ທັບ.

ກ່ອນທັບລາວຍັງບໍ່ທັນໄດ້ຍົກໄປເຖິງເມືອງພິສນຸໂລກນັ້ນພຣະມະຫາທັມມະຣາຊາເຈົ້າເມືອງພິສນຸໂລກບໍ່ໄດ້ຊາບກົນອຸບາຍຂອງພຣະມະຫິນທະຣາຊາ ຄັນໄດ້ຊາບວ່າ ກອງທັບລ້ານຊ້າງຈະຍົກລົງໄປເອົາເມືອງ ຈຶ່ງສົ່ງຂ່າວໄປຫາພຣະມະຫິນທະຣາຊາໃຫ້ຍົກທະຫານຂຶ້ນມາຊ່ອຍ ພຣະມະຫິນທະຣາຊາ ຈຶ່ງສົ່ງພຣະຍາສີຫາຣາດເດໂຊກັບພຣະທ້າຍນ້ຳຂຶ້ນມາກ່ອນ ແລ້ວສັ່ງເປັນຄວາມລັບວ່າ ຖ້າກອງທັບລ້ານຊ້າງເຂົ້າເມືອງໄດ້ແລ້ວ ໃຫ້ກຸມຈັບເອົາພຣະມະຫາທັມມະຣາຊາໄວ້ ພຣະຍາສີຫາຣາດມາເຖິງເມືອງພິສນຸໂລກ ເລີຍບອກຄວາມລັບອັນນີ້ແກ່ພຣະມະຫາທັມມະຣາຊາ ດັ່ງນັ້ນ ພຣະມະຫາທັມມະຣາຊາ ຈຶ່ງຟ້າວແຕ່ງຣາຊທູດໄປຂໍກອງທັບພະມ່າມາຊ່ອຍ.

ຝ່າຍພຣະມະຫິນທະຣາຊາ ຄັນໄດ້ຊາບວ່າ ກອງທັບກຸງສີສັດຕະນາຄະນະຫຸດ ລົງມາໃກ້ເມືອງພິສນຸໂລກແລ້ວ ຈຶ່ງຍົກກອງທັບເຮືອຂຶ້ນມາຕາມແມ່ນ້ຳ ແລ້ວມີຫນັງສືບອກເຂົ້າໄປໃນເມືອງວ່າຈະມາຊ່ອຍປ້ອງກັນເມືອງ ພຣະມະຫາທັມມະຣາຊາ ໄດ້ຊາບກົນກ່ອນແລ້ວ ຈຶ່ງມີຫນັງສືອອກມາຫ້າມບໍ່ໃຫ້ພຣະມະຫິນທະຣາຊາຍົກເຂົ້າໄປໃນເມືອງ.

ຄາວນັ້ນ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ຕັ້ງຄ້າຍອ້ອມເມືອງພິສນຸໂລກໄວ້ແລ້ວ ຈຶ່ງຣະດົມທະຫານໃຫ້ເຂົ້າໄປຕີເອົາເມືອງ ພວກຊາວເມືອງໄດ້ທຳການຕໍ່ສູ້ປ້ອງກັນເປັນສາມາດສາດປືນແລະແຫລມຫລາວລົງໃສ່ທະຫານລາວເປັນອັນມາກ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ສເດັດຂີ່ຄໍຊ້າງເຂົ້າໄປຢືນ

ຢູ່ຂ້າງພຣະວິຫານມີພຣະຣາຊໂອງການໃຫ້ທະຫານພູນດິນຂຶ້ນບັງຕົວ ພວກຊາວເມືອງຍິງປືນມາກໍບໍ່ຖືກຕ້ອງ ທະຫານລາວຈຶ່ງຂ້າມເຂົ້າໄປຂຸດກຳແພງເມືອງເກືອບຈະໄດ້ຢູ່ແລ້ວ ພໍດີພຣະເຈົ້າກຸງສາວະດີແຕ່ງໃຫ້ພຣະຍາເສືອຫານກັບພຣະຍາພູກາມ ເປັນແມ່ທັບຄຸມທະຫານ ໑໐.໐໐໐ ຄົນລົງມາຊ່ອຍທັນ ທັບພຣະຍາເສືອຫານແລະພຣະຍາພູກາມ ຕີຝ່າຄ້າຍຂອງພຣະຍາມີຫລັກເຂົ້າໄປຊ່ອຍຊາວເມືອງພິສນຸໂລກໄດ້ ພວກຊາວເມືອງຈຶ່ງມີກຳລັງແຂງແຮງຂຶ້ນ ສ່ວນກອງທັບເຮືອຂອງພຣະມະຫິນທະຣາຊານັ້ນ ກໍຖືກທະຫານເມືອງພິສນຸໂລກເອົາໄປເຜົາ ຈຶ່ງແຕກຖອຍຄືນໄປ.

ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າຕັ້ງລ້ອມເມືອງຢູ່ໄດ້ ໘໐ ວັນ ເມື່ອເຫັນວ່າ ຈະຕີເອົາເມືອງພິສນຸໂລກບໍ່ໄດ້ ຈຶ່ງມີພຣະຣາຊອາດຍາໃຫ້ເລີກທັບກັບຄືນມາທາງບ້ານມຸ່ງດອນຊຸມພູ ເວລາຖອຍມານັ້ນພຣະອົງຫົງຈິນຕະນາວ່າ ຣາຍດີພະມ້າຄົງຈະຍົກນຳມາ ພຣະອົງຈຶ່ງຕັດສັ່ງໃຫ້ພຣະຍາແສນສຸຣິນ ພຣະຍາເພັດ ພຣະຍາປາກ ພຣະຍາສູຣະເສນ ລີ້ຢູ່ທາງຫລັງ ມາເຖິງບ້ານຕຳບົນວາຣີເປັນທາງແຄບ ພຣະຍາແສນສຸຣິນຈຶ່ງໃຫ້ທະຫານລັດລີ້ຢູ່ສອງຂ້າງທາງ ຕົວພຣະຍາແສນສຸຣິນກັບທະຫານກອງນຶ່ງຂີ່ມ້າລໍ້ມາຊ້າ ໆ ຝ່າຍພຣະຍາພູກາມກັບພຣະຍາເສືອຫານ ເຫັນກອງທັບລາວເລີກກັບຄືນກໍມີໃຈເຫີກເຫີມ ຈຶ່ງຍົກທະຫານອອກນຳຕີແລະມາທັນກອງທະຫານລາວຢູ່ຕຳບົນວາຣີ ພຣະຍາເສືອຫານເຫັນພຣະຍາສຸຣິນມີທະຫານໜ້ອຍ ກໍຍົກທະຫານເຂົ້າໄລ່ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າເຫັນໄດ້ໂອກາດກໍບັງຄັບໃຫ້ທະຫານອອກຕີຕ້ານໄວ້ທັນໃດນັ້ນ ພວກທະຫານລາວທີ່ລີ້ຢູ່ສອງຂ້າງທາງ ກໍຍົກອອກຕີຂນາບ ພວກພະມ້າບໍ່ຮູ້ຕົວ ກໍພາກັນແຕກກະຈັດກະຈາຍ ກອງທະຫານລາວໄດ້ຂ້າຟັນພວກພະມ້າລົ້ມຕາຍລົງໃນຄາວນັ້ນເປັນອັນມາກ ແມ່ທັບພະມ້າຕາຍ ໙ ຄົນ ບາດເຈັບ ໘ ຄົນ ເສນາຜູ້ໃຫຍ່ເມືອງພິສນຸໂລກຕາຍ ໑໙ ຄົນຈັບໄດ້ຫລານພຣະເຈົ້າກຸງສາວະດີຄົນນຶ່ງ ໄດ້ຊ້າງ ໙໔ ຕົວ ແລະທີ່ຕາຍເອົາແຕ່ງາ ໘໔ ຕົວ ສາດຕາອາວຸດກໍຫລວງຫລາຍ ທັບພະມ້າເສັຽຊ້າງມ້າ ເສັຽຄົນ ແລເຄື່ອງອາວຸດໃນຄາວນັ້ນເປັນອັນມາກຈຶ່ງພາກັນແຕກໜີຄືນໄປເມືອງກຸງສາວະດີ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ກໍພາຣີພົນໂຍທາກັບມາພຣະນະຄອນ ຝ່າຍພຣະຍາຈັນກອງນາງ ທີ່ຍົກທັບໄປຕີເອົາເມືອງເຂມນັ້ນ ຈັບໄດ້ແສນເມືອງເຂມຜູ້ນຶ່ງ ໄດ້ຊ້າງ
໘໐ ຕົວແລະມ້າ ໘໐໐ ຕົວ ພ້ອມດ້ວຍເຂົ້າຂອງເງິນຄຳເປັນອັນມາກ ກັບໄດ້ພຣະຍານາງເຂມຜູ້ນຶ່ງ ຊື່ວ່ານາງຄຳ ກໍນຳມາຖວາຍສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ທີ່ນະຄອນວຽງຈັນ.

## ສເດັດໄປຕີເມືອງພິສນຸໂລກຄັ້ງທີ ໘

-----== 0 ==-----

ເຖິງປີ ຄ.ສ.໑໕໖໙ (ຈຸລສັກຣາດ ໙໓໑) ພຣະເຈົ້າແຜ່ນດິນພະມ້າໄດ້ຍົກທັບມາຕີສີອະຍຸທຍາອີກ ພຣະມະຫິນທະຣາຊາ ພຣະເຈົ້າແຜ່ນດິນອະຍຸທຍາ ຈຶ່ງຕັດສັ່ງໃຫ້ພຣະຍາຣາມ ຜູ້ເປັນເສນາບໍດີແຕ່ງສຸພະອັກສອນມາເຖິງເສນາບໍດີ ກຸງສີສັດຕະນາຄະນະຫຸດ ໃຈຄວາມໃນສຸພະອັກສອນນັ້ນວ່າ

"ສຸພະອັກສອນບໍ່ວອນສະຖາພົນ ວິມົລເຊດຖະຄຸນາມັນ ວິກະສິຕະວິຈິດ ຄັມພີຣະອັດຊາໄສ ໃນທ່າມອັຄມະຫາເສນາບໍດີນທຣນໍຣິນທະຣາມາດ ອັນສວາມິປະວາດ ບາດມູລິກາກອນ ບໍ່ວອນຍຸຄະນະເຣນຸມາດ ໃນພຣະບາດສົມເດັດບໍຣົມນາດ ບໍຣົມບໍພິດ ພຣະພຸທເຈົ້າຢູ່ຫົວ ນະກຸງເທບ ທະວາຣະວະດີສີອະຍຸທຍາມະຫາດິລົກພົບນົພຣັຕນະຣາຊທານີບູຣີຣົມ ຊຸດົມພຣະຣາຊມະຫາສະຖານມິທູຣະຈິດສນິດສເນຫາ ມາຍັງເສນາບໍດີກຸງສີສັຕນາຄະນະຫຸດ ດ້ວຍບັດນີ້ ກຸງພຣະມະຄອນສີອະຍຸທຍາ ມີຣາຊຸຕັສກອນ ຄືພຣະເຈົ້າຫົງສາວະດີປະກອບດ້ວຍໂລພະເຈຕນາ ທາທີຣີໂອດຕັບປະມີໄດ້ ຍົກກອງທັບລົງມາກະທຳປະໄສທາການຍ່ຳຍີພຣະມະຄອນສີອະຍຸທຍາ ສະມະນະພາມມະນາຈານໄພ່ຟ້າປະຊາຣາສດອນໄດ້ຮັບຄວາມເດືອດຮ້ອນແລະກຸງເທບພຣະມະຫານະຄອນສີອະຍຸທຍາ ກໍເປັນເຂື່ອນເພັດ ເຂື່ອນອັນແກ່ກຸງສີສັດຕະນາຄະນະຫຸດ ຖ້າພຣະມະຄອນສີອະຍຸທຍາເສັຽແກ່ກຸງຫົງສາວະດີແລ້ວ ເຫັນເສິກຫົງສາວະດີຈະຕິດເຖິງກຸງສີສັຕນາຄະນະຫຸດດ້ວຍ ເຊີນສະເດັດພຣະເຈົ້າກຸງສີສັຕນາຄະນະຫຸດ ຍົກພະຍຸຫະໂຍທາທັບລົງມາຊ່ວຍຣົມະຍຸດປາບປາມຂ້າເສິກໃຫ້ປາໄຊປາສຈາກໄປ ແລ້ວຈະໄດ້ຊ່ວຍກັນດຳຣິຕອບແທນແກ່ແຄ້ນພຣະເຈົ້າຫົງສາວະດີ".

ຄັນຂຽນສຸພະອັກສອນແລ້ວ ຈຶ່ງແຕ່ງໃຫ້ຂຸນຣາຊເສນາກັບຂຸນມະຫາວິໄຊ ພ້ອມດ້ວຍບ່າວໄພ່ ໔໐ ຄົນຖືຂັນມາ ຝ່າຍເສນາບໍດີໄດ້ຮັບສຸພະອັກສອນນັ້ນແລ້ວ ກໍພາຂຸນຣາຊເສນາ ແລະຂຸນມະຫາວິໄຊ ຂຶ້ນເຝົ້າສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ໆ ໄດ້ຫົງຊາບດັ່ງນັ້ນ ກໍຫົງພຣະພິໂຣດຕັດວ່າ ພຣະເຈົ້າຫົງສາວະດີບໍ່ຕັ້ງຢູ່ໃນຂັດຕິຍະຣາຊທັມມະປະເພນີ ປະພຶດເປັນພານທຸຈຣິດ ມີໃຈກຳເຣີບຍົກກອງທັບມາຍ່ຳຍີມະຄອນສີອະຍຸທຍາອີກ ເຮົາຈຳຕ້ອງຍົກໄປຕີເປັນທັບຂນາບເບື້ອງຫນ້າເຈົ້າຫົງສາວະດີ ຈະເປັນປະການໃດ ອີກປະການນຶ່ງທາງພຣະຣາຊໄມຕີກຸງສີອະຍຸທຍາກໍຈະຖາວອນວັທນາສືບໄປ ຕັດແລ້ວກໍມີພຣະຣາຊໂອງການໃຫ້ເກນທັບຈັດກຳລັງພົນໄດ້ ໔໐.໐໐໐ ຄົນ ຊ້າງ ໓໐໐ ໂຕ ມ້າ ໓.໐໐໐ ໂຕ ຄັນເຖິງວັນເສົາ ແຮມ ໔ ຄ່ຳ ເດືອນ ໓ ໄດ້ສຸພະວາຣະດິຖີມະຫາມຸງຄຸນຣືກອັນປະເສີດ ກໍສເດັດຂຶ້ນຊ້າງຕົ້ນພ້ອມດ້ວຍແສນທ້າວພຣະຍາແລະພົນພີຣີຍະໂຍທາຕາມແຫ່ແຫນໄປຈົນເຖິງເມືອງພຣະວາມ ຝ່າຍຊາວເມືອງນະຄອນໄທ ຈຶ່ງແຕ່ງມ້າໃຊ້ລົງໄປບອກພຣະມະຫາທັມມະຣາຊາ ເຈົ້າເມືອງພິສນຸໂລກ ໆ ກໍເຂົ້າໄປເຝົ້າພຣະເຈົ້າຫົງສາວະດີ ທີ່ຕັ້ງທັບລ້ອມກຸງສີອະຍຸທຍາຢູ່ໃຫ້ຫົງຊາບ ເວລານັ້ນພຣະເຈົ້າຫົງສາວະດີ ລໍ້ຈັບເຈົ້າພຣະຍາຣາມເສນາບໍດີກຸງສີອະຍຸທຍາຜູ້ແຕ່ງຫຸດແລະສຸພະອັກສອນມາຂໍກອງທັບວຽງຈັນໄວ້ໄດ້ແລ້ວ ພຣະເຈົ້າຫົງສາວະດີ ຈຶ່ງບັງຄັບໃຫ້ພຣະຍາຣາມແຕ່ງໜັງສືສະບັບນຶ່ງມາຕົວະສົມເດັດພຣະໄຊຍະເຊດຖາທິຣາດ ໃຈຄວາມໃນໜັງສືນັ້ນວ່າ: "ບັດນີ້ກອງທັບຂອງ ພຣະເຈົ້າຫົງສາວະດີກຳລັງອັດສົນດ້ວຍສະບຽງອາຫານໄພ່ພົນໄດ້ຮັບຄວາມລຳບາກຫລາຍ ຮອນຈະເລີກທັບໄປແລ້ວ ຂໍໃຫ້ສົມເດັດພຣະເຈົ້າລ້ານຊ້າງຟ້າວຍົກລົງມາຕີຂນາບທາງເມືອງສະຣະບູຣີໂດຍດ່ວນ" ດັ່ງນີ້ ຄັນແຕ່ງໜັງສືສົ່ງມາແລ້ວ ພຣະເຈົ້າຫົງສາວະດີ ຈຶ່ງແຕ່ງໃຫ້ພຣະມະຫາອຸປຣາຊາ ຍົກພົນພະມ້າມາຄອຍລັດຢູ່ຮອນພູທາງເໜືອເມືອງສະຣະບູຣີ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າບໍ່ຊາບກົນອຸບາຍກໍຫລົງເຊື່ອ ຈຶ່ງມີພຣະຣາຊອາດຍາໃຫ້ພຣະຍາຈັນທະວົງນາງຍົກພົນ ໓໐.໐໐໐ ຄົນລົງໄປ

ທາງເມືອງລົບບຸຣີກ່ອນ.

ກອງທັບຂອງພຣະຍາຈັນກອງນາງຍົກໄປເຖິງເມືອງລົບບຸຣີແລ້ວ ກໍຈວບກັບກອງທັບເຈົ້າຟ້າເມືອງຕອງອູ ພຣະຍາຈັນກອງນາງຍົກພົນເຂົ້າຕີ ໒ ວັນ ໒ ຄືນ ໄລ່ກອງທັບພະມ້າໄປຮອດເມືອງມະເລີງ ເຈົ້າເມືອງຕອງອູຕາຍກັບຄໍຊ້າງ ກອງທັບພະມ້າກໍແຕກ ພຣະຍາຈັນກອງນາງຈັບໄດ້ຊ້າງ, ມ້າ, ຜູ້ຄົນເປັນອັນມາກ ຈຶ່ງຍົກເອົາມາຖວາຍສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ທີ່ເມືອງພຣະງາມ (໑).

ຝ່າຍພຣະຍານະຄອນ ເຫັນພຣະຍາຈັນກອງນາງ ຜາບແພ້ພວກພະມ້າ ດັ່ງນັ້ນ ຈຶ່ງກາບທູນສົມເດັດພຣະໄຊຍະເຊດຖາທິຣາດເຈົ້າວ່າ ເມື່ອເຮົາໄດ້ໄຊຊະນະດັ່ງນີ້ ຄວນຈະຟ້າວຍົກທັບຫລວງລົງໄປຕີພຣະເຈົ້າຫົງສາວະດີ ທີ່ກຸງສີອະຍຸທຍາ ກໍເຫັນຈະໄດ້ໄຊຊະນະດ້ວຍງ່າຍ ພຣະຍາແສນສຸຣິນໄດ້ຍິນດັ່ງນັ້ນ ຈຶ່ງຄັດຄ້ານວ່າ ພຣະເຈົ້າຫົງສາວະດີອົງນີ້ ຫົງສລາດຫລັກແຫລມໃນກົນເສິກເປັນອັນມາກຈະລົງໄປຕີເອົາໂລດເຫັນຈະບໍ່ໄດ້ ເຮົາຄວນຕັ້ງຫມັ້ນຢູ່ໃນທີ່ນີ້ກ່ອນ ເມື່ອໃດພຣະເຈົ້າຫົງສາວະດີເລີກທັບຖອຍຄືນໄປ ເຮົາຈຶ່ງຄວນຍົກອອກຕີຂນາບຫລັງ ກໍເຫັນຈະໄດ້ໄຊຊະນະໂດຍແທ້ ພຣະຍານະຄອນບໍ່ຟັງຄວາມເຫັນຂອງພຣະຍາແສນສຸຣິນ ກ່າວວ່າ "ອ້າຍພຣະຍາຢູ່ຟັງດູກ່ອນ ເພື່ອພໍ່ລູກຈັກເຂົ້າຈົນລົບເອົາ" ສົມເດັດພຣະໄຊເຊດຖາທິຣາດເຈົ້າກໍຫົງເຫັນດີຕາມພຣະຍານະຄອນ ດັ່ງນັ້ນ ພຣະຍານະຄອນ ກັບ ພຣະຍາເພັດ ພໍ່ລູກຈຶ່ງຍົກພົນລົງໄປທາງເທພຈັນ ຂ້າມນ້ຳປາສັກຈະອອກທົ່ງອະຍຸທຍາກໍຈວບກັບກອງທັບຂອງພຣະມະຫາອຸປຣາດກໍຍົກພົນອອກຕີທັບພຣະຍານະຄອນກໍແຕກຄືນມາເຖິງທັບຫລວງ ກອງທັບພະມ້າກໍຕິດຕາມໄລ່ຂຶ້ນມາ ຝ່າຍພຣະຍາແສນສຸຣິນ ພຣະຍາຈັນກອງນາງ ພຣະຍາພົນເທບ ພຣະຍາເມືອງຊ້າຍ ພຣະຍາແກ່ນທ້າວ ພຣະຍາສີນະຄອນໂລກ ຈຶ່ງດາພົນອອກຕ້ານທານໄວ້ເພື່ອໃຫ້ສົມເດັດພຣະເຈົ້າມະຫາຊີວິດຖອຍພົນຄືນໄດ້ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ຖອຍພົນຄືນມາທາງນ້ຳປາສັກ ສ່ວນພຣະຍາແສນສຸຣິນນັ້ນຢູ່ຫນູນຫລັງຄອຍຕຸ້ມຫອມເອົາໄພ່ພົນມາ ເສິກຄາວນີ້ເສັຽໄພ່ພົນເປັນອັນມາກ.

## ທັບພະມ້າຕີວຽງຈັນຄັ້ງທີ ໒

ເຖິງປີມະເມັຽ ຈຸລສັກຣາດ ໙໓໒(໒) (ຄ.ສ.໑໕໗໐) ສົມເດັດພຣະເຈົ້າຫົງສາວະດີ ຄັນຕີເອົານະຄອນສີອະຍຸທຍາໄດ້ແລ້ວ ກໍຍົກພົນພະມ້າ ແລະໄທມາເລວວຽງຈັນອີກ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ໄດ້ຫົງຊາບຂ່າວວ່າ ເສິກເມືອງຫົງສາວະດີຈະຍົກມາ ຈຶ່ງມີພຣະຣາຊອາດຍາປຶກສາການເສິກກັບ-

---

(໑) ເມືອງພຣະງາມ ຢູ່ເຫນືອເມືອງລົບບຸຣີຂຶ້ນມາ

(໒) ໃນຕຳນານເມືອງໂຍນົກວ່າ ແມ່ນຈຸລສັກຣາດ ໙໓໐.

ພຣະຍາແສນສຸຣິນ ຜູ້ເປັນແສນເມືອງ ພຣະຍາແສນສຸຣິນກາບທູນວ່າ ພຣະເຈົ້າຕິງສາວະດີອົງນີ້ ຕິງສລາດໃນການເສິກສົງຄາມເປັນອັນມາກທັງພຣະປັນຍາກໍຫລັກແຫລມ ຈຳຈະຕ້ອງເປັນກົນອຸບາຍ ຈຶ່ງຈະໄດ້ໄຊຊະນະ ຂ້າພະບາດເຫັນວ່າ ຄວນຈະອົພຍົບຄອບຄົວພົລເມືອງຂ້າມໄປຢູ່ຝັ່ງໃນດ້ານໃຕ້ໃຫ້ເຂົ້າລີ້ຊ່ອນຢູ່ໃນປ່າຫມົດສ່ວນຄອບຄົວທ້າວພຣະຍາທັງຫລາຍນັ້ນ ເອົາໄປໄວ້ວຽງສຸຣິນ (໓) ຖ້າພຣະເຈົ້າຕິງສາວະດີຍົກເຂົ້າວຽງຈັນຈະໄດ້ເອົາວຽງຈັນເປັນຂວງສນາມ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ກໍຕິງເຫັນດີຕາມແລ້ວພຣະຍາແສນສຸຣິນກໍໃຫ້ຈັດການຕາມດັ່ງຄິດໄວ້ທຸກປະການ.

ຄັນຖ່າຍເທຄອບຄົວອອກຈາກວຽງຫມົດແລ້ວ ພຣະຍາແສນສຸຣິນ ຈຶ່ງແຕ່ງໃຫ້ພຣະຍາຫານແກ້ວ ພຣະຍາຫານຜາບ ພຣະຍາທັມມະຄຸນ ເປັນກອງຫລອນ ຄຸມທະຫານຢູ່ຕາມປ່ານອກພຣະນະຄອນ ພໍກອງທັບພຣະເຈົ້າຕິງສາວະດີຍົກເຂົ້າມາໃກ້ ພຣະຍານະຄອນ ກໍທຳອຸບາຍເຫມືອນດັ່ງພ່າຍເລີກຍ້າຍຄອບຄົວລົງໄປທາງປາກງື່ມ ສົມເດັດພຣະເຈົ້າຕິງສາວະດີເຫັນດັ່ງນັ້ນກໍເຂົ້າພຣະໄທວ່າ ທັບເມືອງລ້ານຊ້າງພ່າຍຫນີ ຈຶ່ງຍົກໄປນຳແລະເຂົ້າຕີ ເອົາແຕ່ເມືອງທ່າບໍ່ ລົງໄປຈົນເຖິງວຽງຄຸກ, ຫນອງຄາຍ ແລ້ວເກນທະຫານໃຫ້ທຳຂົວ ຂ້າມນ້ຳຂອງ ບ່ອນໃຕ້ດອນສັງຄີ ຍົກພົນໂຍທາຂ້າມມາຕັ້ງຢູ່ແຄມປາກງື່ມດ້ານເຫນືອ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າໄດ້ຊາບດັ່ງນັ້ນຈຶ່ງຖອຍພົນລົງໄປຕັ້ງຢູ່ຫນອງຫານນ້ອຍ.

ພວກພະມ້າທີ່ໄປຕັ້ງຢູ່ແຄມປາກງື່ມນັ້ນ ຄັນບໍ່ເຫັນກອງ ທະຫານລາວຍົກອອກມາຕີ ກໍພາກັນເລີກຖອຍຄືນມາເອົາວຽງຈັນ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ຈຶ່ງຍົກທັບກັບມາຕັ້ງຢູ່ແຄມປາກງື່ມດ້ານໃຕ້ ແລ້ວແຕ່ງກອງຫລອນອອກລັດຕີພະມ້າ ພະມ້າຈຶ່ງຕ່າວຄືນໄປຕີວຽງປາກງື່ມອີກ ໄດ້ຣົບກັນຢູ່ ໓ ວັນ ວຽງປາກງື່ມກໍແຕກພຣະໄຊຍະເຊດຖາທິຣາດເຈົ້າຈຶ່ງຖອຍຣີພົນໄປຢູ່ວຽງສຸຣິນ.

ສ່ວນພະມ້າເມື່ອຕີວຽງປາກງື່ມໄດ້ແລ້ວ ກໍບໍ່ສາມາດຈະຕັ້ງຢູ່ໄດ້ ເນື່ອງດ້ວຍເປັນຣະດູຝົນ ໄພ່ພົນເກີດຄວາມເຈັບໄຂ້ລົ້ມຕາຍລົງເປັນອັນມາກ ພຣະເຈົ້າຕິງສາວະດີ ຈຶ່ງໃຫ້ຖອຍທັບຄືນມາຕັ້ງຢູ່ໃນນະຄອນວຽງຈັນອີກ.

ຝ່າຍພຣະຍາຫານແກ້ວ ພຣະຍາຫານຜາບ ພຣະຍາທັມມະຄຸນ ທີ່ຄຸມທັບເປັນກອງຫລອນນັ້ນ ກໍພາທະຫານອອກສະກັດລັດຕີພວກທະຫານພະມ້າ ທີ່ອອກໄປຫາວຫາສະບຽງອາຫານ ບໍ່ໃຫ້ສົ່ງສະບຽງອາຫານເຂົ້າມາລ້ຽງກັນໃນພຣະນະຄອນໄດ້ ກອງທະຫານພະມ້າ ກໍໄດ້ຮັບຄວາມທຸກຍາກລຳບາກອຶດອາຫານແລະເກີດເຈັບໄຂ້ລົ້ມຕາຍລົງເປັນອັນມາກ ດັ່ງນັ້ນ ພຣະເຈົ້າຕິງສາວະດີຈຶ່ງໃຫ້ເລີກທັບກັບຄືນໄປ ສ່ວນພຣະຍາແສນສຸຣິນໄດ້ຫາງທະຫານໄວ້ຄອຍຖ້າຢູ່ແລ້ວຄັນເຫັນພະມ້າຖອຍອອກຈາກພຣະນະຄອນ ກໍໄດ້ຍົກທະຫານໄປຕີໄປບ້ານອະໂນສົມ(໔) ຈັບໄດ້ຊ້າງຂອງພະມ້າຮ້ອຍປາຍ ໄດ້ງາຊ້າງຕາຍ ໖.໓໐໐ ກິ່ງ ໄດ້ຊະເລີຍພະມ້າມານ,ເມັງ,ຍວນ,ລື້,ຂຶນໄທເມືອງຄອງ,ເມືອງຍາງ ແລະເມືອງອະຍທຸຍາ ໓໐.໐໐໐ ຄົນ ສ່ວນທີ່ລົ້ມຕາຍນັ້ນມີຫລາຍເຫລືອລົ້ນພົ້ນປະມານ ເມື່ອພະມ້າເລີກໄປແລ້ວ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ກໍສເດັດຄືນມາສເວີຍຣາດໃນນະຄອນວຽງຈັນດັ່ງເກົ່າ.

---

(໓) ວຽງສຸຣິນ ເຂົ້າໃຈວ່າ ແມ່ນຫນອງຄູວຽງ ອັນຢູ່ໃນເຂດຕາແສງບ້ານນາຊອນໃຕ

(໔) ເຂົ້າໃຈວ່າ ແມ່ນປາກໂສມ.

## ສເດັດໄປຕີເມືອງອົງການ (໑)

----== ໐ ==----

ໃນຄາວນັ້ນພຣະຍານະຄອນຢູ່ເມືອງນະຄອນກັບພຣະສັງຄະຣາດວັດມັດຊິມະອາຣາມຕົນເກົ່າ ທີ່ຖືກຖອດອອກແຕ່ກ່ອນນັ້ນພາກັນຄິດການເປັນກະບົດ ພຣະຍານະຄອນຈະເປັນເຈົ້າແຜ່ນດິນ ພຣະສັງຄະຣາດຕົນເກົ່າຈະເປັນພຣະມະຫາຣາຊຄຣູເຈົ້າ ທັງສອງຈຶ່ງແຕ່ງກົນອຸບາຍໃຫ້ຂ່າວມາເຖິງສົມເດັດພຣະໄຊຍະເຊດຖາທິຣາດເຈົ້າວ່າ " ພຣະຍາເມືອງອົງການຕາຍເສັຽແລ້ວ ແລະມີພຣະຣາຊບຸດຕີຢູ່ ໒ ຕົນຄື ນາງເທບກາຍາ ໑ ນາງຊຸ່ມພອນ ໑ ນາງທັງສອງນັ້ນມັກໃຄ່ໃຈປະສົງຈະມາເປັນບາດບໍຣິຈາແຫ່ງສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ" ຈຶ່ງແຕ່ງຣາຊສານໃຫ້ພຣະພິກຊຸ ໒ ຕົນ, ຄົນຄະຫັດ ໑໐ ຄົນຖືຂຶ້ນມາຖວາຍສົມເດັດພຣະໄຊຍະເຊດຖາທິຣາດເຈົ້າພໍມາເຖິງເມືອງສາຍ(໒) ເຈົ້າເມືອງສາຍບໍ່ໃຫ້ພວກທູດນັ້ນຂຶ້ນມາ ພຣະພິກຊຸ ໒ ຕົນນັ້ນຈຶ່ງລັກໜີມາຖວາຍຕໍ່ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າໂດຍກົນອຸບາຍ.

ຝ່າຍສົມເດັດພຣະໄຊຍະເຊດຖາທິຣາຊເຈົ້າ ໄດ້ຮັບສານຈາກພຣະພິກຊຸ ໒ ຕົນ ອັນພຣະຍານະຄອນແຕ່ງອຸບາຍໃຫ້ມານັ້ນ ກໍເຂົ້າພຣະໄທເຊື່ອແນ່ວ່າເປັນຈິງ ຈຶ່ງແຕ່ງໃຫ້ພຣະຍາໂສມພະມິດ ໑ ພຣະຍາຈັນ ໑ ທ້າວເຄ ໑ ພັນຄົນໃຊ້ ໑ ເປັນທູດຖືຣາຊສານ ໄປເມືອງອົງການ ແລະໃຫ້ຂຸນຫລວງອຸປການເປັນນາຍທາງພວກຄນະທູດໄປເຖິງເມືອງອົງການ ແລະພຣະຍາເມືອງອົງການໄດ້ຊາບ ດັ່ງນັ້ນ ກໍພິໂຣດໂກດແຄ້ນເປັນອັນມາກ ຈຶ່ງຂັບໄລ່ທູດລາວໜີຈາກເມືອງບໍ່ໃຫ້ເຂົ້າເຝົ້າ ພຣະຍາໂສມພະມິດພາໝູ່ກອງຂຶ້ນມາເຖິງເມືອງນະຄອນ ຈຶ່ງເຂົ້າໄປຫາພຣະຍານະຄອນ ແລເລົ່າອາການນັ້ນໃຫ້ຟັງທຸກປະການ ພຣະຍານະຄອນທຳອາການເໝືອນດັ່ງຄຽດແທນ ພຣະເຈົ້າແຜ່ນດິນ ຈຶ່ງໃຫ້ພຣະຍາໂສມພະມິດຂຶ້ນມາທູນພຣະໄຊຍະເຊດຖາທິຣາດເຈົ້າວ່າ ໃຫ້ໄປຮົບເອົາເມືອງອົງການ ຕົວພຣະຍານະຄອນເອງຂໍອັນອາສາສົມເດັດພຣະໄຊຍະເຊດຖາທິຣາດເຈົ້າໄດ້ທັງຊາບດັ່ງນັ້ນ ກໍຫລົງເຊື່ອ.

ຄັນເຖິງປີຈຸລສັກຣາດ ໙໓໔ (ຄ.ສ.໑໕໗໒) ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ຈຶ່ງໃຫ້ເກນພົນໂຍທາລົງໄປຕີເອົາເມືອງອົງການ ເມື່ອໄປເຖິງເຂດແດນເມືອງອົງການແລ້ວ ພຣະຍານະຄອນກໍທຳອຸບາຍ ພາກອງທັບສົມເດັດພຣະໄຊຍະເຊດຖາທິຣາດເຈົ້າເຂົ້າໄປໃນຣະຫວ່າງກອງທະຫານຂອງຕົນທີ່ໄດ້ຕັ້ງ

---

(໑) ເມືອງອົງການນັ້ນຕາມຕຳນານທັງຫລາຍສັນນິດຖານວ່າ ແມ່ນແຂວງອັດຕະປືທຸກວັນນີ້, ແຕ່ຂ້າພະເຈົ້າເຫັນວ່າແມ່ນເມືອງອັງກໍ ເພາະຄຳວ່າອົງການກັບອັງກໍ ມີສຽງໃກ້ກັນແລະຄ້າຍຄືກັນດ້ວຍແລະເຫັນວ່າແມ່ນອັງກໍຣທົມ ເພາະເວລານັ້ນອັງກໍ ທົມເປັນເມືອງຂອງຂເມນ.

(໒) ເມືອງສາຍເຫັນຈະແມ່ນບ້ານດອນສາຍ ທີ່ຢູ່ໃນເຂດອຳເພີໜອງຫານ ຈັງຫວັດອຸດອນ ເພາະບ້ານນີ້ເປັນບ້ານເກົ່າແກ່ມີນານພາກົດມາແຕ່ບູຮານທຸກວັນນີ້ມີເຮືອນຣາສດອນຢູ່ຫລາຍກວ່າ໑໐໐໐ຫຼັງ ບໍ່ດັ່ງນັ້ນເຫັນເຫັນຈະແມ່ນບ້ານດອນສາຍໃນແຂວງສາຣະວັນ.

ຊ່ອນຢູ່ໃນປ່າ ກອງທະຫານພຣະຍານະຄອນອອກລັດຕີ ກອງທະຫານຂອງພຣະໄຊຍະເຊດຖາທິຣາດເຈົ້າບໍ່ທັນຮູ້ຕົວກໍແຕກກະຈັດກະຈາຍ ພຣະຍານະຄອນທຳອຸບາຍພາສົມເດັດພຣະໄຊຍະເຊດຖາທິຣາດເຈົ້າຂ້າມນ້ຳຂອງໜີໄປຝາກໃນ ແລ້ວເລີຍພາໄປເສັຽທີ່ໃດບໍ່ຮູ້(໑) ສ່ວນພຣະຍາແສນສຸຣິນແລະພຣະຍາຈັນກອງນາງກໍພາທະຫານແຕກໜີຄືນມາວຽງຈັນ ການເສິກຄາວນີ້ເສັຽໄພ່ພົນລາວເປັນອັນມາກ.

ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າເກີດປີກາບສງ້າ (ປີມະເມັຽ) ຈຸລສັກຣາດ ໘໙໖ (ຄ.ສ. ໑໕໔໓) ໄດ້ສເວີຍຣາຊສົມບັດເປັນພຣະມະຫາກະສັດຢູ່ ໒໔ ປີກໍສເດັດສູຣະຄົດເສັຽ ທີ່ແດນເມືອງອັງການ ເມື່ອພຣະຊົນໄດ້ ໓໘ ປີ ພຣະອົງມີພຣະຣາຊໂອຣົດອົງນຶ່ງ ປະສູດຈາກພຣະມະເຫສີຜູ້ທິດາຂອງພຣະຍາແສນສຸຣິນມີນາມວ່າພຣະໜໍ່ເມືອງ ເວລານັ້ນມີພຣະຊົນໄດ້ ໔ ປີ.

## ໑໑. ຣັຊການພຣະສຸມັງຄະລະໄອຍະໂກໂພທິສັດ ພຣະຍາ ແສນສຸຣິນທະລືໄຊ

--------==== O ========

### ຄັ້ງທີ ໑

-O-

ພຣະສຸມັງຄະລະໄອຍະໂກໂພທິສັດ ນາມເດີມຊື່ ຈັນ ເປັນບຸດຂອງກວານບ້ານ ໆ ໜອງຄາຍ (ຈັງຫວັດໜອງຄາຍທຸກວັນນີ້) ເກີດປີຈຸລສັກຣາດ ໘໗໓ (ຄ.ສ.໑໕໑໑) ທີ່ບ້ານໜອງຄາຍ ເມື່ອຍັງນ້ອຍໄດ້ຂຶ້ນໄປຮ່ຳຮຽນວິຊາຄວາມຮູ້ຢູ່ນະຄອນຊຽງທອງ ເປັນສິດຂອງພຣະສັງຄະຣາດສີຈັນໂທ ຕົນເປັນພຣະມະຫາຣາຊຄຣູຂອງສົມເດັດພຣະໂພທິສາຣະຣາດເຈົ້າ ເມື່ອສິກແລ້ວກໍໄດ້ທຳຣາຊການຢູ່ໃນນະຄອນຊຽງທອງ (ຫລວງພຣະບາງ) ດ້ວຍຄວາມສລຽວສລາດເປັນພິເສດ ຈານຈັນ ຈຶ່ງໄດ້ເລື່ອນຍົດຂຶ້ນມາໂດຍລຳດັບ ຈົນໄດ້ຮັບຕຳແໜ່ງເປັນພຣະຍາຍົດລືກຽນ ໃນສມັຍຂອງສົມເດັດພຣະໂພທິສາຣະຣາດ ແລ້ວສົມເດັດພຣະໂພທິສາຣະຣາດເຈົ້າທົງພຣະຣາຊອາດຍາແຕ່ງໃຫ້ພຣະຍາຍົດລືກຽນລົງມາເປັນເຈົ້າເມືອງຢູ່ເມືອງປາກຫ້ວຍຫຼວງ (ຄືບ້ານຫ້ວຍຫລວງ ໃນເຂດອຳເພີໂພນພິໄສ ຈັງຫວັດໜອງຄາຍທຸກວັນນີ້) ອັນເປັນແຂວງເດີມຂອງທ່ານ.

ໃນປີຈຸລສັກຣາດ ໙໑໖ (ຄ.ສ.໑໕໔໔) ພຣະຍາຍົດລືກຽນໄດ້ເປັນກຳລັງສຳຄັນຂອງສົມເດັດພຣະໄຊຍະເຊດຖາທິຣາດ ໃນຄາວຂຶ້ນໄປຕີເມືອງຊຽງແສນ ຈຶ່ງໄດ້ເລື່ອນຍົດຂຶ້ນເປັນພຣະຍາແສນສຸຣິນທະລືໄຊ ຕໍ່ຈາກນັ້ນມາກໍໄດ້ເປັນກຳລັງໃຫ້ຊ່ອຍເຫລືອສົມເດັດພຣະໄຊຍະເຊດຖາທິຣາດເຈົ້າໃນການສ້າງນະຄອນວຽງຈັນ ທາດຫລວງ ແລະງານພຣະຣາຊສົງຄາມທຸກແຫ່ງ ຕລອດຣັຊການຂອງສົມເດັດພຣະໄຊຍະເຊດຖາທິຣາດ

---

(໑) ໃນຕຳນານທັງຫລາຍກ່າວເຖິງການສິ້ນພຣະຊົນຂອງພຣະເຈົ້າໄຊຍະເຊດຖາທິຣາດ ດັ່ງດຽວກັນໝົດ ແຕ່ຂ້າພະເຈົ້າສັນນິດຖານວ່າ ແມ່ນພຣະຍານະຄອນນັ້ນເອງເປັນຜູ້ສັງຫານພຣະອົງ.

ແລະໄດ້ຖວາຍທິດາຂອງຕົນໃຫ້ເປັນນາງສນົມເອກຂອງພຣະໄຊຍະເຊດຖາທິຣາດດ້ວຍ ດັ່ງນັ້ນເມື່ອສົມເດັດພຣະໄຊຍະເຊດຖາທິຣາດສເດັດສູ່ຣະຄົດແລ້ວ ພຣະຍາແສນສຸຣິນທະລືໄຊ ຈຶ່ງໄດ້ເປັນຜູ້ສຳເຣັດຣາຊການປົກຄອງປະເທດແທນ ຍ້ອນວ່າເວລານັ້ນ ພຣະໜໍ່ເມືອງ ຜູ້ເປັນພຣະຣາຊໂອຣົດຂອງສົມເດັດພຣະໄຊຍະເຊດຖາທິຣາດເຈົ້າເຊິ່ງປະສູດຈາກທິດາຂອງພຣະຍາແສນສຸຣິນນັ້ນຍັງນ້ອຍຢູ່.

ຄາວນັ້ນ ພຣະຍາຈັນທະສີທະຣາດ(໑) ເຊິ່ງເປັນເສນາບໍດີຜູ້ໃຫຍ່ຄົນນຶ່ງ ມີຄວາມປະສົງຈະທຳການຣາຊາພິເສກພຣະໜໍ່ເມືອງຂຶ້ນເປັນພຣະເຈົ້າແຜ່ນດິນຕາມຣາຊປະເພນີ ພຣະຍາແສນສຸຣິນ ບໍ່ຍອມທັງສອງພຣະຍາຈຶ່ງເກີດວິວາດກັນຂຶ້ນ ຈົນເກືອບຈະໄດ້ຣົບເລວກັນ ພຣະສົງຄະເຈົ້າທັງຫລາຍເຫັນດັ່ງນັ້ນກໍພາກັນເຂົ້າໄປຫ້າມບໍ່ໃຫ້ພຣະຍາທັງສອງຣົບເລວກັນ ເຫດການຈຶ່ງສງົບມາໄດ້ ໙ ເດືອນພາຍລຸນເກີດວິວາດກັນອີກ ພຣະສົງຄະເຈົ້າທັງຫລາຍຫ້າມບໍ່ຟັງ ຈຶ່ງໄດ້ເກີດຣົບເລວກັນຂຶ້ນ ພຣະຍາແສນສຸຣິນທະລືໄຊ ໄດ້ແຕ່ງໃຫ້ແສນມຸນທຽນຂີ່ຊ້າງອອກຣົບກັບພຣະຍາຈັນ ແສນມຸນທຽນຟັນພຣະຍາຈັນຕາຍກັບຫົວຊ້າງ ແຕ່ນັ້ນເສນາມຸນຕີທັງຫລາຍກໍພາກັນຍ່ານພຣະຍາແສນສຸຣິນ ໆ ຈຶ່ງໄດ້ປະກາດຕົວຂຶ້ນເປັນພຣະເຈົ້າແຜ່ນດິນໃນປີ ຄ.ສ.໑໕໗໒ (ຈຸລສັກຣາດ ໙໓໔) ນັ້ນເອງ ຖວາຍພຣະນາມວ່າພຣະສຸມັງຄະລະໂອຍະໂກໂພທິສັດ ແຕ່ຄົນທັງຫລາຍເອີ້ນວ່າພຣະເຈົ້າປູ່ຫລານ ເພາະທ່ານເປັນປູ່ຂອງພຣະໜໍ່ເມືອງ ເວລາຂຶ້ນສເວີຍຣາດນັ້ນ ທ່ານອາຍຸໄດ້ ໙໔ ປີ.

## ພະມ້າຕີວຽງຈັນຄັ້ງທີ ໓

---=== O ===---

ເມື່ອພຣະສຸມັງຄະລະໂອຍະໂກໂພທິສັດ ເປັນເຈົ້າແຜ່ນດິນນັ້ນ ຫົວເມືອງທັງຫລາຍທີ່ເຄີຍຂຶ້ນສ່ວຍກັບນະຄອນວຽງຈັນກໍພາກັນກະດ້າງຂັດແຂງບໍ່ຍອມມາອ່ອນນ້ອມ ເສນາຂ້າຣາຊການທັງຫລາຍກໍບໍ່ສູ້ເຕັມໃຈດ້ວຍເຫັນວ່າພຣະສຸມັງຄະລະນີ້ບໍ່ແມ່ນເຊື້ອໜໍ່ແນວກະສັດດັ່ງນັ້ນປະຊາຊົນພົລເມືອງໃນເຂດແຂວງນະຄອນວຽງຈັນ ຈຶ່ງພາກັນອົພຍົບ ຍ້າຍຄົວໜີຈາກເມືອງລົງໄປຢູ່ທາງໃຕ້ເປັນອັນມາກ ນັບເປັນຄັ້ງທີ ໓ ທີ່ພວກລາວໄດ້ຫລັ່ງໄຫລເຂົ້າໄປແຊກແຊງຢູ່ໃນດິນແດນຈາມແລະດິນແດນຂແມນ ນັບແຕ່ແຂວງຈັງຫວັດຮ້ອຍເອັດລົງໄປເຖິງແຂວງຈຳປາສັກ.

ພຣະສຸມັງຄະລະໂອຍະໂກ ຄອງຣາຊສົມບັດມາໄດ້ ໒ ປີຄື: ເຖິງປີ ຄ.ສ.໑໕໗໔ (ຈຸລສັກຣາດ ໙໓໖) (໒)*ພຣະເຈົ້າແຜ່ນດິນເມືອງຫົງສາວະດີປະເທດພະມ້າ ໄດ້ຍົກຣີພົນໂຍທາລົງມາຕີວຽງຈັນອີກ. ພຣະສຸມັງຄະລະໂອຍະໂກ ໄດ້ທຳການປ້ອງກັນພຣະນະຄອນແລະທຳການຕໍ່ສູ້ຢ່າງແຂງແຮງ ແຕ່ເນື່ອງຈາກເວລານັ້ນປະຊາຣາສດອນທັງຫລາຍໄດ້ຮັບຄວາມລຳບາກຍາກແຄ້ນແລະອື່ນໆນາງ ການຣົບເລວກັນພໍແຮງ

---

(໑) ພຣະຍາຈັນກອງນາງ ກໍເອີ້ນ ເພາະຢູ່ບ້ານກອງນາງ.

(໒) ໃນຕຳນານໂຍນົກວ່າ ຈຸລສັກຣາດ ໙໓໔ (ຄ.ສ.໑໕໗໒)

ແລ້ວຈຶ່ງໄດ້ພາກັນອົພຍົບ ຫລົບຫນີບໍ່ສູ້ຈົນຄືແຕ່ກ່ອນ, ທັງຣາຊຄອນທັງຫລາຍກໍບໍ່ມີຄວາມພໍໃຈໃນພຣະສຸມັງຄະລະໄອຍະໂກຢູ່ແລ້ວ ເຫດນັ້ນ ພະມ້າຈຶ່ງເຂົ້າຕີວຽງຈັນໄດ້ ແລ້ວຈັບເອົາພຣະສຸມັງຄະລະໄອຍະໂກກັບພຣະຫນໍ່ເນື້ອງຫນີໄປປະເທດພະມ້າ ແຕ່ນັ້ນມາ, ປະເທດລາວເຮົາ ກໍໄດ້ຕົກເປັນເມືອງສ່ວຍຂອງພະມ້າຢູ່ຄາວນຶ່ງ.

## ໑໒.ຣັຊການພຣະມະຫາ ອຸປຣາຊາ ວໍຣະວັງໂສ

--------=== ໐ ===--------

ເຖິງປີ ຄ.ສ.໑໕໗໔ (ຈຸລສັກຣາດ ໙໓໖) ພຣະເຈົ້າແຜ່ນດິນເມືອງຫົງສາວະດີ ຈຶ່ງແຕ່ງໃຫ້ພຣະມະຫາອຸປຣາຊາວໍຣະວັງໂສ (ພຣະອະນຸຊາຂອງສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ) ທີ່ພະມ້າຈັບໄປໄວ້ເມືອງພະມ້າແຕ່ກ່ອນພຸ້ນ ຄືນມາເປັນພຣະເຈົ້າແຜ່ນດິນປະເທດລ້ານຊ້າງວຽງຈັນ.

ພຣະມະຫາອຸປຣາຊາ ວໍຣະວັງໂສ ສເວີຍຣາຊສົມບັດໄດ້ ໔ ປີ ຄືເຖິງ ຄ.ສ.໑໕໗໘ (ຈຸລສັກຣາດ ໙໔໑) ໃນຄາວນັ້ນ ມີຄົນຜູ້ນຶ່ງຢູ່ໃນແຂວງອັດຕະປື ເປັນຄົນມີວິຊາອາຄົມ ຄົນຜູ້ນັ້ນໄດ້ອວດອ້າງຕົນວ່າ ຕົນເປັນພຣະໄຊຍະເຊດຖາທິຣາດເຈົ້າ ທີ່ສູນຫາຍໄປແຕ່ກ່ອນນັ້ນ ບັດນີ້ຈະຄືນມາສເວີຍວຽງຈັນ ຄົນທັງຫລາຍກໍພາກັນຫລົງເຊື່ອ ຊາຍຜູ້ນັ້ນເກັ້ຽກ່ອມຈັກຊວນເອົາພວກຂ້າສ່ວຍຊາວເມືອງໂສກເມືອງຊຽງ ໄດ້ແລ້ວກໍຍົກພົນຂຶ້ນມາຕັ້ງຢູ່ແຂວງອັດຕະປື ແລະ ຕີເຂົ້າມາເຖິງເມືອງຫມັ້ນ ເມືອງຄຳທອງ ໄດ້ຫມົດທຸກເມືອງ.

ຝ່າຍພຣະມະຫາອຸປຣາຊາວໍຣະວັງໂສ ເຈົ້າແຜ່ນດິນວຽງຈັນໄດ້ຊາບເຫດການດັ່ງນັ້ນ ຈຶ່ງທົງພຣະຣາຊອາດຍາແຕ່ງໃຫ້ພຣະຍາຊຽງໃຕ້ ໑ ພຣະຍາຊຽງເຫນືອ ໑ ພຣະຍານະຄອນ ໑ ຍົກທັບລົງໄປຕີພວກຂ້າສ່ວຍກະບົດ ກອງທັບຂອງພຣະຍາທັງສາມສູ້ພວກກະບົດບໍ່ໄດ້ ກໍແຕກຖອຍຄືນມາ ພວກກະບົດເຫັນໄດ້ທີກໍຕີຫຼັ້ນມາເຖິງເມືອງວຽງຄຸກ ແລ້ວເລີຍຍົກລ່ວງມາເຖິງວຽງຈັນ ພຣະມະຫາອຸປຣາຊາວໍຣະວັງໂສ ເຫັນຈະປ້ອງກັນເມືອງໄວ້ບໍ່ໄດ້ ຈຶ່ງພາເອົາພຣະມະເຫສີພຣະຣາຊທິດາ ໒ ຄົນ ແລະບໍຣິວານລົງຂີ່ເຮືອຫນີຂຶ້ນໄປເພິ່ງເມືອງຫົງສາວະດີ ພໍໄປເຖິງແກ້ງບ່ອນນຶ່ງເຮືອເລີຍລົ້ມ ພຣະມະຫາອຸປຣາຊາແລະພຣະມະເຫສີທັງພຣະຣາຊທິດາກໍຈົມນ້ຳຕາຍຫມົດສ້ຽງ ກອງທັບພວກກະບົດເຂົ້າຍຶດເອົາວຽງຈັນໄດ້ ກໍເຂົ້າຕັ້ງຢູ່ໃນພຣະນະຄອນວຽງຈັນ.

### - ຣັຊການພຣະສຸມັງຄະລະໄອຍະໂກໂພທິສັດ

### ຄັ້ງທີ ໒

ຝ່າຍພຣະເຈົ້າແຜ່ນດິນເມືອງຫົງສາວະດີ ຄັນໄດ້ຊາບຂ່າວວ່າ ປະເທດລາວເກີດການກະບົດເສັ້ຽເມືອງໃຫ້ແກ່ພວກຂ້າສ່ວຍອັດຕະປື ຈຶ່ງທົງແຕ່ງໃຫ້ອິນແຊະນັນກູ ຜູ້ເປັນມະຫາອຸປຣາຊາ ປະເທດພະມ້າຍົກທັບລົງມາຜາບພວກກະບົດ ອິນແຊະນັນກູ ມະຫາອຸປຣາຊາ ຍົກທັບລົງມາເຖິງວຽງຈັນ ເຂົ້າລ້ອມຈັບເອົາຫົວຫນ້າກະບົດໄດ້ ກໍສົ່ງຂຶ້ນໄປເມືອງຫົງສາວະດີ ພຣະເຈົ້າຫົງສາວະດີຈຶ່ງທົງພຣະຣາຊອາດຍາແຕ່ງໃຫ້

ພຣະສຸມັງຄະລະໄອຍະໂກໂພທິສັດ ລົງມາເປັນພຣະເຈົ້າແຜ່ນດິນອີກໃນປີ ຄ.ສ.໑໕໘໐ (ຈຸລສັກຣາດ ໙໔໒).

ພຣະສຸມັງຄະລະໄອຍະໂກໂພທິສັດ ສເວີຍຣາດມາໄດ້ ໒ ປີຄືເຖິງປີ ຄ.ສ.໑໕໘໒ (ຈຸລສັກຣາດ ໙໔໔) ກໍສ້ຽງພຣະຊົນ ຮອມອາຍຸໄດ້ ໗໔ ປີ.

## ໑໓. ຣັຊການພຣະຍານະຄອນນ້ອຍ

-----=== O ===-----

ເມື່ອພຣະສຸມັງຄະລະໄອຍະໂກໂພທິສັດສ້ຽງພຣະຊົນແລ້ວເສນາມຸນຕີທັງຫລາຍ ຈຶ່ງຊຸບພິເສກພຣະຍານະຄອນນ້ອຍ ບຸດພຣະສຸມັງຄະລະໄອຍະໂກໂພທິສັດ ຂຶ້ນເປັນເຈົ້າແຜ່ນດິນ ພຣະຍານະຄອນນ້ອຍ ເປັນເຈົ້າແຜ່ນດິນຢູ່ບໍ່ເຖິງປີ ພວກຊາວເມືອງທັງຫລາຍບໍ່ນິຍົມ ໂດຍເຫັນວ່າ ບໍ່ແມ່ນເຊື້ອໜໍ່ແນວກະສັດແທ້ ຈຶ່ງພ້ອມກັນຈັບສົ່ງຂຶ້ນໄປໄວ້ໃນເມືອງຫົງສາວະດີ ແຕ່ນັ້ນມາ ປະເທດລາວກໍຂາດກະສັດບໍ່ມີເຈົ້າແຜ່ນດິນຢູ່ເຖິງ ໗ ປີຄືຈົນເຖິງປີ ຄ.ສ.໑໕໙໐ (ຈຸລສັກຣາດ ໙໕໒).

## ໑໔. ຣັຊການພຣະໜໍ່ເມືອງ

----== O ==----

ຄັນເຖິງປີ ຄ.ສ.໑໕໙໑ (ຈຸລສັກຣາດ ໙໕໓) ພວກເສນາອາມາດແລະພຣະສັງຄະເຈົ້າທັງຫລາຍຈຶ່ງພ້ອມກັນຂຶ້ນໄປຂໍເອົາພຣະໜໍ່ເມືອງ ພຣະຣາຊໂອຣົດຂອງພຣະໄຊຍະເຊດຖາທິຣາດເຈົ້າທີ່ພະມ້າຈັບໄປແຕ່ກ່ອນນັ້ນຄືນມາເປັນເຈົ້າແຜ່ນດິນ (ແມ່ ພຣະໜໍ່ເມືອງແມ່ນລູກສາວພຣະຍາແສນສຸຣິນ).

ພຣະໜໍ່ເມືອງສເດັດອອກຈາກນະຄອນຫົງສາວະດີ ເດືອນ ໖ ອອກໃໝ່ ໑໐ ຄ່ຳ ວັນພຸດ ມາເຖິງນະຄອນວຽງຈັນເມື່ອເດືອນ ໗ ອອກໃໝ່ ໔ ຄ່ຳປີ ຄ.ສ.໑໕໙໑ (ຈຸລສັກຣາດ ໙໕໓) ເຖິງເດືອນ ໘ ອອກໃໝ່ ໙ ຄ່ຳ ຈຶ່ງໄດ້ທຳພິທີຣາຊາພິເສກຂຶ້ນສເວີຍຣາຊສົມບັດເວລານັ້ນພຣະອົງມີພຣະຊົນໄດ້ ໒໐ ປີ.

ເມື່ອພຣະໜໍ່ເມືອງຂຶ້ນສເວີຍຣາດແລ້ວ ປະເທດບ້ານເມືອງກໍຢູ່ສຸກເສີມເຕີມຄອງ ບັນດາຫົວເມືອງທັງຫລາຍທີ່ຂັດແຂງຢູ່ນັ້ນ ກໍພາກັນມາອ່ອນນ້ອມຖວາຍຣາຊບັນນາການຕາມເດີມ(໑) ພຣະໜໍ່ເມືອງຂຶ້ນສເວີຍຣາດມາໄດ້ ໗ ປີ ກໍສເດັດສຸຣະຄົດ ຮອມພຣະຊົນໄດ້ ໒໗ ປີ ພຣະອົງບໍ່ມີພຣະຣາຊໂອຣົດຈະສືບແທນເມືອງ.

---

(໑) ໃນຕຳນານທາດໂພ່ນແລະຕຳນານພຣະແຊກຄຳກ່າວວ່າ ພຣະໜໍ່ເມືອງເປັນຜູ້ສ້າງພຣະທາດສີສອງຣັກເມືອງດ່ານຊ້າຍ ແລະເປັນຜູ້ໃຫ້ກໍ່ກຳແພງເມືອງວຽງຈັນ.

## ໑໕.ຣັຊການພຣະວໍຣະວົງສາທັມມິກະຣາດ

------=== ໐ ===------

ເຖິງປີ ຄ.ສ.໑໕໗໘ (ຈຸລສັກຣາດ ໙໔໐) ພຣະຫນໍ່ເມືອງສເດັດສູຣະຄົດແລ້ວ ພວກເສນາອາມາດທັງຫລາຍເຫັນດີພ້ອມກັນຈະເຊີນເອົາພຣະວໍຣະວົງສາ ໂອຣົດຂອງນາສາວພຣະຫນໍ່ເມືອງ(໑) ຂຶ້ນເປັນເຈົ້າແຜ່ນດິນ ຈຶ່ງພາກັນຂຶ້ນໄປທູນຂໍຕໍ່ພຣະເຈົ້າຫົງສາວະດີ ໆ ຈຶ່ງມີພຣະຣາຊອາດຍາວ່າ ພຣະວໍຣະວົງສາຍັງນ້ອຍຢູ່ ມີພຣະຊົນພຽງ ໑໖ ປີ ຈະບໍ່ສາມາດຄຸ້ມຄອງປະເທດບ້ານເມືອງໄດ້ ຈຶ່ງແຕ່ງໃຫ້ບິດາຂອງພຣະວໍຣະວົງສາ (໒) ເຊິ່ງຄົນທັງຫລາຍເອີ້ນວ່າ ພຣະວໍຣະປິຕາ ເປັນຜູ້ສຳເຣັດຣາຊການແຜ່ນດິນ.

ໃນລະຫວ່າງນີ້ທາງປະເທດພະມ້າກຳລັງເກີດຄວາມຫຍຸ້ງຍາກ ເນື່ອງຈາກເມື່ອພຣະເຈົ້າບຸເຣງນອງສເດັດສູຣະຄົດແລ້ວ ອະແຊະນາມກະຍະ ຫລື ພຣະເຈົ້ານັນທະບຸເຣງນອງ ຣາຊໂອຣົດໄດ້ຂຶ້ນສເວີຍຣາດ ພຣະເຈົ້ານັນທະບຸເຣງນອງ ເປັນຜູ້ບໍ່ມີຄວາມສາມາດ ດັ່ງນັ້ນ ພຣະນະເຣສວນ ເຈົ້ານະຄອນສີອະຍຸທຍາທີ່ຂຶ້ນຢູ່ກັບປະເທດພະມ້າມາແຕ່ກ່ອນນັ້ນ ຈຶ່ງໄດ້ປະກາດຕົນເປັນອິສຣະແລ້ວຍົກກອງທັບຂຶ້ນໄປຕີເຖິງເມືອງຫົງສາວະດີ.

ໃນເວລານັ້ນພວກຄອບຄົວລາວທີ່ພະມ້າກວາດເອົາໄປແຕ່ກ່ອນນັ້ນ ເຫັນເປັນໂອກາດດີ ກໍພາກັນອົພຍົບຄືນມາ ຝ່າຍພຣະເຈົ້າແຜ່ນດິນເມືອງຊຽງໃຫມ່ເຊິ່ງເວລານັ້ນຂຶ້ນຢູ່ໃຕ້ຄວາມປົກຄອງຂອງພະມ້າດັ່ງດຽວກັນ ໄດ້ຍົກທັບອອກມາລັກຕີເອົາຄອບຄົວລາວ ເພື່ອສົ່ງໄປປະເທດພະມ້າ ພຣະວໍຣະປິຕາໄດ້ຊາບດັ່ງນັ້ນ ຈຶ່ງແຕ່ງກອງທັບຂຶ້ນໄປຮັບເອົາຄອບຄົວລາວກັບຄືນມາ ກອງທັບລາວຈຶ່ງໄດ້ເຂົ້າຕີເອົາເມືອງພະເຢົາ, ເມືອງເຊີງ, ເມືອງລໍ, ເມືອງຊຽງແສນ, ເມືອງທາງ, ເມືອງຊຽງຣາຍ ໄດ້ຫມົດແລ້ວ ກໍຍົກເຂົ້າລ້ອມເມືອງຊຽງໃຫມ່ໄວ້ ແຕ່ຍັງເຂົ້າຕີເອົາເມືອງບໍ່ທັນໄດ້ ພໍດີທາງກອງທັບຂາດສະບຽງອາຫານລົງ ແລະໄພ່ພົນໂຍທາກໍເຈັບໄຂ້ລົ້ມຕາຍລົງເປັນອັນມາກ ພວກແມ່ທັບນາຍກອງ ຈຶ່ງໄດ້ເລີກທັບກັບຄືນ ເມື່ອມາເຖິງພຣະນະຄອນ ພຣະວໍຣະປິຕາ ມີຄວາມໂກດໃຫ້ພວກແມ່ທັບວ່າ ບໍ່ຕີເອົາເມືອງຊຽງໃຫມ່ໃຫ້ໄດ້ ຈຶ່ງບໍ່ຍອມໃຫ້ກອງທັບເຂົ້າເມືອງ ແລະຈະໃຫ້ປະຫານຊີວິດພວກແມ່ທັບນາຍກອງໃຫ້ຫມົດ ພວກແມ່ທັບນາຍກອງຈຶ່ງພ້ອມກັນເຊີນເອົາພຣະວໍຣະວົງສາຜູ້ບຸດຫນີໄປຕັ້ງທັບຢູ່ສນາມພະລານໄຊແລ້ວຍົກເຂົ້າມາຕີເອົາພຣະນະຄອນ ສອງພໍ່ລູກຣົບເລວກັນ ຢູ່ເຖິງ ໔ ເດືອນ ໄພ່ພົນລົ້ມຕາຍລົງເປັນອັນມາກ ທັງສອງຝ່າຍທັງເວລານັ້ນກໍເກີດຄວາມອຶດຢາກຍາກແຄນດວຍ ພຣະສົງຄະເຈົ້າທັງຫລາຍ ຈຶ່ງພ້ອມກັນອອກໄປຖວາຍພຣະພອນ ໃຫ້ສອງພໍ່ລູກຄືນດີຫາກັນ ພວກພຣະສົງຄະເຈົ້າໄປຊຸມນຸມກັນຢູ່ດອນຈັນ ພຣະວໍຣະວົງສາ ຈຶ່ງເຂົ້າມາຂໍຂະມາບິດາຊອງຫນ້າພຣະສົງ ແລ້ວ

---

(໑) ນາສາວພຣະຫນໍ່ເມືອງ ແມ່ນເຈົ້ານາງຄຳໄຂ ໆ ເປັນນ້ອງຫລ້າຂອງພຣະໄຊຍະເຊດຖາທິຣາດ.

(໒) ບິດາຂອງພຣະວໍຣະວົງສາ ຄົງຈະບໍ່ແມ່ນເຈົ້າ ທີ່ຄົນທັງຫລາຍເອີ້ນວ່າ ພຣະວໍຣະປິຕານັ້ນ ເພາະເປັນບິດາຂອງພຣະວໍຣະວົງສາ.

ພຣະວໍຣະປິຕາກໍມອບເວນຣາຊສົມບັດໃຫ້ແກ່ພຣະວໍຣະວົງສາ ສ່ວນຕົນໄດ້ພາເອົາຄອບຄົວໜີລົງໄປຢູ່ເມືອງນະຄອນພະນົມ ໃນປີ ຄ.ສ.໑໖໐໗ (ຈຸລສັກກາດ ໙໖໙)(໑)

## - ພຣະວໍຣະວົງສາປະກາດອິສຣະພາບ -

ສ່ວນພຣະວໍຣະວົງສາ ເມື່ອສເວີຍຣາຊສົມບັດແລ້ວ ກໍປະກາດຕົນເປັນອິສຣະ ບໍ່ຍອມເປັນເມືອງຂຶ້ນຂອງປະເທດພະມ້າຕໍ່ໄປ. ເມື່ອບໍຣະບວນແລ້ວເສນາອາມາດທັງຫລາຍຈຶ່ງພ້ອມກັນທຳພິທີປຣາບດາພິເສກຖວາຍພຣະນາມວ່າ ພຣະວໍຣະວົງສາທັມມິກະຣາດເຈົ້າຣວມເວລາທີ່ປະເທດລາວຕົກຢູ່ໃຕ້ຄວາມປົກຄອງຂອງພະມ້າເຖິງ ໘໔ ປີ ແຕ່ນັ້ນມາປະເທດບ້ານເມືອງກໍຢູ່ສຸກກະເສີມ ບໍ່ມີເສິກຫລອນມາເປັນເວລາຫລາຍປີ.

ສົມເດັດພຣະວໍຣະວົງສາທັມມິກະຣາດ ມີພຣະຣາຊໂອຣົດ ທີ່ພາກົດນາມຢູ່ ໒ ອົງຄື ພຣະຊຸປະຍຸວະຣາດ ໑ ພຣະໜ່ອມແກ້ວ ໑.

ຄັນເຖິງປີ ຄ.ສ.໑໖໘໑ (ຈຸລສັກກາດ ໙໘໓)ສົມເດັດພຣະວໍຣະວົງສາທັມມິກະຣາດເຈົ້າໄດ້ພາພຣະມະເຫສີແລະພຣະຣາຊໂອຣົດຂຶ້ນເມືອ ນະມັສການພຣະບາງທີ່ນະຄອນຫລວງພຣະບາງ ເວລານັ້ນມີຜູ້ທູນສັບສໍ່ສົມເດັດພຣະຣາຊບິດາວ່າ ພຣະຊຸປະຍຸວະຣາດ ຈະຍາດຊີງເອົາຣາຊສົມບັດ ພຣະຣາຊບິດາຈຶ່ງມີພຣະຣາຊອາດຍາ ໃຫ້ຈັບພຣະຣາຊໂອຣົດໄປປະຫານຊີວິດ ຝ່າຍພຣະຊຸປະຍຸວະຣາດ ຮູ້ຕົວຈຶ່ງໄດ້ພາພົວອົນຂອງຕົນລັກໜີລົງມາ ພຣະຣາຊບິດາຈຶ່ງແຕ່ງໃຫ້ໜ່ອມໄຊ ຍົກກອງທະຫານລົງມານຳຈັບ ໜ່ອມໄຊ ມາທັນຢູ່ບ້ານຂວງ ຈຶ່ງໄດ້ເກີດຣົບກັນຂຶ້ນ ບ່າວໄພ່ທາງໜ່ອມໄຊລົ້ມຕາຍລົງເປັນອັນມາກພວກທ້າວພຣະຍາແຂວງພວນເສັຽຄົນສຳຄັນໄປ ໔ ຄົນ.

ພຣະຊຸປະຍຸວະຣາດຈຶ່ງພ່າຍໜີລົງມາ ແລ້ວເຂົ້າຕັ້ງທັບຢູ່ ວັດນ້ຳໂມງ ກ່ອມໄຊພາໄພ່ພົນນຳມາຕິຣອດວັດນ້ຳໂມງ ແຕ່ເຂົ້າບໍ່ໄດ້, ດ້ວຍພຣະຊຸປະຍຸວະຣາດໄດ້ອັດປະຕູກຳແພງວັດໄວ້ ໜ່ອມໄຊຈຶ່ງໃຫ້ພົນຂອງຕົນມ້າງກຳແພງວັດດ້ານປາກນ້ຳເສັຽໝົດ ພຣະຊຸປະຍຸວະຣາດຈຶ່ງພ່າຍໜີໄປຕັ້ງຢູ່ວຽງຄຸກ ທາງໃນວຽງເວລານັ້ນກໍມີຄົນລັກເອົາໄຟຈູດເມືອງຂຶ້ນ.

ຝ່າຍສົມເດັດພຣະຣາຊບິດາເຫັນບ່າວໄພ່ໄປຫາໄດ້ແລ້ວ ກໍຍົກລົງມາຈາກຫລວງພຣະບາງນຳເຣືອພຣະຊຸປະຍຸວະຣາດ ກອງທັບຂອງພຣະຣາຊບິດາໄດ້ຕັ້ງຢູ່ບ້ານທ່າແຂກ(໒) ໃນເວລານັ້ນ ພວກເສນາບໍດີຜູ້ໃຫຍ່ ແລະ ທ້າວພຣະຍາທັງຫລາຍໄດ້ເຂົ້າຫາພຣະຊຸປະຍຸວະຣາດໝົດ ພຣະຣາຊບິດາເສັຽພຣະທັຍ ຈຶ່ງ

---

(໑) ໃນຕຳນານສະບັບນຶ່ງວ່າ ພຣະວໍຣະປິຕາ ໜີໄປຢູ່ເມືອງນຣກ(ປາກຈັນ)ແລ້ວເລີຍໄປຊຽງຫວາງແລະໄປເຖິງແກ່ກັມຢູ່ທີ່ນັ້ນເມື່ອ ຄ.ສ.໑໖໐໔ (ຈຸລສັກກາດ ໙໖໖) ແຕ່ໃນຈົດໝາຍເຫດໜຶ່ງວ່າພຣະວໍຣະປິຕາໄປເສີກວຽງຄຸກໃນປີຈຸລສັກກາດ ໙໖໔ ປີ ໙໖໕ ພຣະວໍຣະປິຕາອອກບວດ.

(໒) ບ້ານທ່າແຂກ ຢູ່ເໜືອບ້ານຈາຍຟອງດຽວນີ້.

ໄດ້ຖອຍຄືນມາຕັ້ງຢູ່ພະລານໄຊ ຢາຄນ້ຳໝາຍເວນໄວ້ແກ່ລູກ ແລ້ວກໍພາເອົາມະເຫສີແລະໜໍ່ອນໄຊກັບພຣະຍາອະນຸຊິດ ທັງໝົ່ນລູກຫ້າວທັງຫລາຍໜີໄປທາງບ້ານຈຽງແດງ ພຣະອຸປະຍຸວະຣາດໄດ້ແຕ່ງໃຫ້ພຣະຍາວຽງນຳໄປທັນຢູ່ໃນທີ່ນັ້ນ ພຣະຍາວຽງກໍປະຫານຊີວິດພຣະວໍຣະວົງສາທັມມິກະຣາດພ້ອມດ້ວຍຄອບຄົວເສັ້ງໝົດ ທີ່ບ້ານຈຽງແດງນັ້ນເອງ.

## ໑໖. ຣັຊການພຣະອຸປະຍຸວະຣາດ

ເຖິງປີ ຄ.ສ.໑໖໓໓ (ຈູລສັກຣາດ ໖໘໔) ເສນາອາມາດທັງຫລາຍຈຶ່ງພ້ອມກັນອະພິເສກພຣະອຸປະຍຸວະຣາດຂຶ້ນສເວີຍຣາຊສົມບັດພຣະອຸປະຍຸວະຣາດສເວີຍເມືອງຢູ່ໄດ້ ໒ ເດືອນກໍສິ້ນພຣະຊົນຣວມພຣະຊົນໄດ້ ໓໔ ປີ.

## ໑໗. ຣັຊການພຣະບັນດິດໂພທິສານ

ເມື່ອພຣະອຸປະຍຸວະຣາດສິ້ນພຣະຊົນແລ້ວ ເສນາອາມາດທັງຫລາຍຈຶ່ງພ້ອມກັນໄປເຊີນເອົາພຣະຍາມະຫາມານ(໑) ເຊິ່ງເວລານັ້ນເປັນເຈົ້າຄອງນະຄອນຢູ່ທີ່ເມືອງສີໂຄດຕະບອງມາເປັນເຈົ້າແຜ່ນດິນ ຖວາຍພຣະນາມວ່າ ພຣະບັນດິດໂພທິສາຣະຣາດ ເວລານັ້ນພຣະອົງມີພຣະຊົນໄດ້ ໗໑ ປີ ພຣະບັນດິດໂພທິສາຣະຣາດສເວີຍຣາດມາໄດ້ ໓ ປີຄືເຖິງປີຈູລສັກຣາດ ໖໘໖ (ຄ.ສ.໑໖໓໔) ພຣະຍາວຽງຄິດການເປັນກະບົດຈູດເຜົາຫໍສນາມຫລວງເສັ້ຽ ພຣະອົງຈຶ່ງສ້າງໂຮງໃຫມ່ຂຶ້ນທີ່ເດີມພະລານໄຊ ພຣະບັນດິດໂພທິສານ ນີ້ພາກົດວ່າ ເປັນຜູ້ມີຄວາມຮູ້ໃນພາສາບາລີ ແລະ ອັກຂຣະສາດ ຫລາຍ ຊຶ່ງລະຍະເວລາພຣະອົງສເວີຍຣາຊສົມບັດພຽງ ໔ ປີ ພຣະອົງກໍຍັງໄດ້ທົງສ້າງວັດ ແລະ ປະຕິສັງຂອນສ້ອມແປງວັດເກົ່າຂຶ້ນອີກຫລາຍວັດເຊັ່ນວັດສຸວັນນະເຈດີເປັນຕົ້ນ. ພຣະບັນດິດໂພທິສາຣະຣາດສເວີຍຣາດຢູ່ ໔ ປີກໍສິ້ນພຣະຊົນໃນປີ ຄ.ສ.໑໖໓໗ (ຈູລສັກຣາດ ໖໘໖) ເດືອນ ໔ ຂຶ້ນ ໔ ຄ່ຳ ຍາມກອງແລງ.

## ໑໘. ຣັຊການພຣະໝ່ອມແກ້ວ

ເມື່ອພຣະບັນດິດໂພທິສາຣະຣາດສະເດັດສູຣະຄົດແລ້ວ ເສນາອາມາດຣາຊປຸໂຣຫິດທັງຫລາຍຈຶ່ງພ້ອມກັນອຸບພິເສກ ເຈົ້າໝ່ອມແກ້ວ ຣາຊໂອຣົດອົງທີ ໓ ຂອງສົມເດັດພຣະວໍຣະວົງສາທັມມິກະຣາດ ຂຶ້ນເປັນພຣະເຈົ້າແຜ່ນດິນໃນປີ ຄ.ສ.໑໖໓໗ ນັ້ນເອງຖວາຍພຣະນາມວ່າ ພຣະໝ່ອມແກ້ວ ຯ ມີພຣະຣາຊໂອຣົດ ໓ ອົງຄືເຈົ້າຕ່ອນຄຳ ໑ ເຈົ້າວິໄຊ ໑ ເຈົ້າຕ່ອນຄຳ ໄດ້ຮັບຕຳແໜ່ງເປັນອຸປະຍຸວະຣາດ.

---

(໑) ຕຳນານທາດໂພນເອີ້ນວ່າ ພຣະຍາແສນຫລວງນະຄອນ ຕຳນານທາດພະນົມເອີ້ນວ່າ ພຣະເຈົ້ານະຄອນພລວງພິຊິດທີສທິດຣາຊຫານີສີໂຄດຕະບູນຫລວງ ນາມເດີມຊື່ເຈົ້າອົງຫລໍ່ ຈະເປັນໂອຣົດຂອງໃຜບໍ່ຊາບ.

ໃນລະຫວ່າງນີ້ເຫດການບ້ານເມືອງກໍຍັງບໍ່ສງົບ ເນື່ອງຈາກຍັງມີການຍາດຊີງສົມບັດກັນຢູ່ ເຈົ້ານາຍທັງຫລາຍ ຕ່າງຄົນກໍກວາດຕ້ອນເອົາບ່າວໄພ່ໃພ່ພົນ ແລ້ວກໍທຳການຣົບຣາຂ້າຟັນກັນລົ້ມຕາຍລົງເປັນອັນມາກ ດັ່ງນັ້ນ ໄພ່ຟ້າປະຊາຊົນຈຶ່ງພາກັນແຕກໜີຈາກແຂວງວຽງຈັນ ລົງໄປຢູ່ທາງຝັ່ງຂວາແມ່ນ້ຳຂອງ ເປັນອັນມາກໂດຍລຳດັບມາ ພຣະໜໍ່ອມແກ້ວ ສເວີຍຣາຊສົມບັດມາໄດ້ຈັກປີບໍ່ພາກົດກໍສະເດັດສູຣະຄົດ.

## ໑໙. ຣັຊການພຣະເຈົ້າຕ່ອນຄຳ

ເມື່ອພຣະເຈົ້າໜໍ່ອມແກ້ວສະເດັດສູຣະຄົດແລ້ວ ເຈົ້າຕ່ອນຄຳພຣະຣາຊໂອຣົດກໍໄດ້ສືບຣາຊສົມບັດແທນ ພຣະເຈົ້າຕ່ອນຄຳ ມີພຣະຣາຊໂອຣົດ ໓ ອົງຄື ເຈົ້າຊຸມພູ ໑ ເຈົ້າບຸນຊູ ໑ ເຈົ້າສຸຣິຍະກຸມມານ ໑ ສ່ວນເຈົ້າວິໄຊ ພຣະອະນຸຊາຂອງພຣະເຈົ້າຕ່ອນຄຳນັ້ນມີໂອຣົດ ໒ ອົງຄືເຈົ້າປູ່ ແລະ ເຈົ້າສອຍ.

## ໒໐. ຣັຊການສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ

ພຣະເຈົ້າຕ່ອນຄຳສເວີຍຣາດມາໄດ້ຈັກປີບໍ່ແຈ້ງ ແຕ່ວ່າເມື່ອພຣະເຈົ້າຕ່ອນຄຳສະເດັດສູຣະຄົດແລ້ວບ້ານເມືອງກໍເກີດອົລຫົນວຸ້ນວາຍອີກ ເນື່ອງຈາກຍາຕິກາວົງສາ ເຈົ້ານາຍທັງຫລາຍບໍ່ຖືກຕ້ອງຄອງກັນ ເວລານັ້ນພວກຍາດພີ່ນ້ອງຝັກຝ່າຍເຈົ້າສຸຣິຍະກຸມມານມີຫລາຍ ພວກພີ່ນ້ອງຈຶ່ງພ້ອມກັນຍົກຣາຊສົມບັດຖວາຍເຈົ້າສຸຣິຍະກຸມມານ ແລະອຸປພິເສກເຈົ້າສຸຣິຍະກຸມມານຂຶ້ນເປັນເຈົ້າແຜ່ນດິນໃນປີ ຄ.ສ. ໑໗໓໓ (ຈຸລສັກຣາດ ໙໙໔) ເມື່ອພຣະຊົນຂອງພຣະອົງໄດ້ ໒໔ ປີ ຖວາຍພຣະນາມວ່າ ສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ.

ເມື່ອໄດ້ຂຶ້ນສເວີຍສົມບັດເປັນເຈົ້າແຜ່ນດິນແລ້ວ ກໍໄດ້ໄລ່ພີ່ຊາຍທັງສອງແລະຍາດພີ່ນ້ອງຜູ້ຈະເປັນສັດຕູ ໜີຈາກເມືອງໝົດຄື:

໑. ເຈົ້າຊຸມພູກັບພຣະຊາຍາ ແລະແສນທິບນາບົວໜີໄປຢູ່ເມືອງເວ້ ປະເທດແກວ ເຈົ້າຊຸມພູມີໂອຣົດອົງນຶ່ງນາມວ່າ ພຣະໄຊອົງເວ້ ຕໍ່ມາເມື່ອເຈົ້າຊຸມພູສິ້ນພຣະຊົນແລ້ວ ພຣະຊາຍານັ້ນມາໄດ້ກັບແສນທິບນາບົວ ແລະໄດ້ລູກອີກຜູ້ນຶ່ງຊື່ວ່າ ທ້າວລອງ ຫລື ນອງ.

໒. ເຈົ້າບຸນຊູ ພີ່ຊາຍຄົນທີ ໒ ໜີໄປບວດຢູ່ພູຫໍ່ພູໂຮງ.

໓. ເຈົ້າປູ່ ໂອຣົດຂອງເຈົ້າວິໄຊ ພາຄອບຄົວໜີໄປຢູ່ເມືອງຊຽງຄານ.

໔. ເຈົ້າສອຍ ນ້ອງເຈົ້າປູ່ ໜີໄປຢູ່ສະພື.

ເມື່ອສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ ທົງຈັດການພາບສັດຕູພາຍໃນໄດ້ໝົດແລ້ວ ພຣະອົງກໍທົງບໍຣິຫານປະເທດໃຫ້ເຂົ້າສູ່ສະພາບປົກກະຕິ ເນື່ອງຈາກບໍ່ມີຂ້າເສິກພາຍໃນມາວຸ້ນວາຍ ແລະ ບໍ່ມີຂ້າເສິກພາຍນອກມາບຽດບຽນ ພຣະອົງຈຶ່ງມີໂອກາດຈັດການໃຫ້ປະເທດໄດ້ຮັບຄວາມຈະເຣີນກວ້າງຂວາງຂຶ້ນເປັນ

ອັນມາກ ຄື: ໃນທາງສາສນາ ພຣະອົງໄດ້ທົງສົ່ງເສີມການສຶກສາພຣະປະຣິຍັດຕິທັມໃຫ້ຈະເຣີນກວ້າງຂວາງທີ່ສຸດ ຈົນມີນັກປາດສາມາດແຕ່ງຄັມພີດີກາ ແລະ ວັນນະຄະດີລາວຂຶ້ນໃນສມັຍນັ້ນເປັນອັນມາກ ເປັນຕົ້ນວ່າ ໜັງສືສິນໄຊປູ່ສອນຫລານ,ຫລານສອນປູ່, ແລະໜັງສື ອຸບົດອື່ນ ໆ ອີກມາກຫລາຍໃນຝ່າຍອານາປະຊາຣາສດອນ ພຣະອົງກໍໄດ້ທົງສົ່ງເສີມໃຫ້ໄດ້ຮັບຄວາມຢູ່ເຢັນເປັນສຸກທົ່ວເຖິງກັນ ໂດຍທີ່ພຣະອົງເປັນຜູ້ທົງສະຖິດຢູ່ໃນຄວາມຍຸຕິທັມທີ່ສຸດ ແຕ່ພຣະຣາຊບຸດຂອງພຣະອົງເອງ ກໍຍັງທົງຮັບສັ່ງໃຫ້ປະຫານຊີວິດເສັຽ ໃນເມື່ອພຣະຣາຊບຸດນັ້ນໄປຂົ່ມເຫັງບຸຣຸດບຣຸນຣາສດອນ ໃນທາງຕ່າງປະເທດ ພຣະອົງໄດ້ທຳການຕ້ອນຮັບແລະຕິດຕໍ່ກັບຊາວຕ່າງປະເທດເປັນຢ່າງດີ ຕົວຢ່າງໃນປີ ຄ.ສ.໑໖໔໑ ພຣະອົງໄດ້ທຳການຮັບຕ້ອນທູດການຄ້າຊາວຮໍລັນດາຊື່ວັນວັສທ໊ອຟທີ່ໄດ້ເຂົ້າມາເຖິງນະຄອນວຽງຈັນຢູ່ເດີນທາດຫລວງ ໃນເວລາເຮັດບຸນນະມັສການພຣະທາດຫລວງ; ເຣົາອາສັຍບັນທຶກຂອງທູດວັນວຸສທ໊ອຟນັ້ນເອງ ຈຶ່ງໄດ້ຮູ້ຈັກສະພາບຂອງນະຄອນວຽງຈັນ ແລະຣາຊອານາເຂດຂອງອານາຈັກລ້ານຊ້າງໃນສມັຍຂອງສົມເດັດພຣະເຈົ້າສຸຣິຍະວົງສາທັມມິກຣາຊ (ຄ.ສ. ໑໖໔໑).

ບັນທຶກຂອງທູດວັນວຸສທ໊ອຟນັ້ນແມ່ນທ່ານໂປລເລວີ ອະດີດຜູ້ອຳນວຍການໂຮງຮຽນຝຣັ່ງເສດພາກຕາເວັນອອກໄກ ເປັນຜູ້ຮຽບຮຽງຂຶ້ນຈາກສະບັບເດີມທີ່ທ່ານວັນວຸສທ໊ອຟບັນທຶກໄວ້ເປັນພາສາຝຣັ່ງເສດແລ້ວທ່ານຄຳເພົາພອນແກວ ອະທິບໍດີກົມປະຖົມສຶກສາເປັນຜູ້ແປອອກເປັນພາສາລາວ ໃນຄາວສັນນາປວັດສາດລາວຄັ້ງວັນທີ່ ໒໔ ກັນຍາ ໑໙໗໑ ມີຂໍ້ຄວາມດັ່ງຕໍ່ໄປນີ້:

**໑. ການເດີນທາງຂອງທ່ານວັນວຸສທອບ**

ການເດີນທາງຂອງທ່ານວັນວຸສທອບ ( Van Wusthoff ) (໑໖໔໑-໑໖໔໘) ໃນທ້າຍສັຕວັດທີ ໑໖ ພວກຣາສດອນຊາວຮໍລັນດາ ( Hollandais ) ທະວີບເອີຣົບ ໄດ້ນຳຮອຍຂອງຣາສດອນ ປອກຕຸແກ ( Portugais ) ແລະແອດຊະປາຍອນ ( Espagnols) ເພື່ອຈະຊອກທາຕລາດຂາຍຍານ. ພວກຮໍລັນດາ ໄດ້ມາເຖິງໝູ່ເກາະອິນດູເນຊີ ແລ້ວກໍສົ່ງຂອງສິນຄ້າ ຄື ຍານ ໄປປະເທດເດີມຂອງເຂົາ. ເມື່ອເວລາໄດ້ຕັ້ງທີ່ໝັ້ນຂອງເຂົາເຈົ້າຢູ່ໃນປະເທດອິນດູເນຊີ ໂດຍຖືເອົາເມືອງບັດຕາເວັຽ (Batavia) ເປັນເມືອງຫຼວງ ພວກຮໍຣັນດາໄດ້ທ່ຽວຄົ້ນຄວ້າຫາຍານ ຕລອດເຖິງປະເທດອິນດູຈີນ ໃນປະເທດນີ້ ເຂົາຕັ້ງຫ້າງຄ້າຂອງເຂົາຢູ່ທີ່ປະເທດຕັງແກງ ປະເທດອານາມ ແລະ ປະເທດຂເມນ. ໃນປະເທດຂເມນນັ້ນເອງເປັນຕົ້ນວ່າ ຢູ່ເມືອງຣະແວກ (Lovek) ຊຶ່ງໃນເວລານັ້ນ ເປັນນະຄອນຫຼວງຂອງຂເມນ ບໍຣິສັດສິນຄ້າຮໍລັນດາ ໄດ້ຕັ້ງຮ້ານສິນຄ້າ ນັບແຕ່ ໑໖໑໖ ເປັນຕົ້ນມາ ໂດຍປະກອບພໍ່ຄ້າ ແລະຜູ້ຕັ້ນພໍ່ຄ້າຫຼາຍ ໆ ຄົນການຕັ້ງຮ້ານຄ້າຂາຍຂອງພວກນີ້ ກໍໄດ້ຜ່ານອຸປສັກຫຸ້ງຍາກຫຼາຍປະການ ເປັນຕົ້ນວ່າ ໃນລະຫວ່າງ ໑໐ ປີຕໍ່ມາພາຍຫລັງ.

ກ່ອນກິຕສັງກຣາດ ໑໖໔໑ ພໍ່ຄ້າລາວບາງຄົນ ໄດ້ໄປຂາຍຄັ່ງຍານຂອງເຂົາ ໄປຮອດເມືອງ <u>ບັດຕາເວັຽ</u> ( Batavia) ໂດຍໄປນຳເຮືອສະເພົາຂອງທ່ານອາແບນຕາສມານ ( Abel Tasman) ພໍ່ຄ້າລາວເຫຼົ່ານັ້ນ ໄດ້ຮອງຂໍນຳທ່ານຜູ້ວ່າຣາຊການຮໍລັນດາ ເພື່ອສົ່ງທູດການຄ້າ ໄປ ຕິດຕໍ່ປະເທດຂອງເຂົາ ຄວາມຂໍນັ້ນ ກໍໄດ້ຮັບພົນສຸດທ້າຍ ຄາດວ່າຄືຊິຢູ່ໃຕ້ຄວາມແນບນຳຂອງຫົວຫນ້າການຄ້າຮໍລັນດາທີ່ເມືອງລະແວກ ( Lovek) ນັ້ນເອງ.

ຜູ້ວ່າຣາຊການຮໍລັນດາທີ່ປະເທດອິນດູເນຊີເວລານັ້ນ ແມ່ນທ່ານນາຍພົນ <u>ອັງຕວນວັນດີ ເອແມນ</u> ( Antoine Van Diemen ) ເຊິ່ງເປັນຜູ້ສ້າງເມືອງບັດຕາເວັຽ ( Batavia ) ໃຫ້ເປັນເມືອງຫຼວງ ແລະຊຶ່ງໄດ້ຍາດແຍ່ງເອົາແຫຼມມະລາຍູຈາກພວກປອກຕຸແກໃນຄິດສັງກຣາດ ໑໖໔໑. <u>ທ່ານວັນດີເອແມນ</u> ບໍ່ເປັນພຽງແຕ່ຜູ້ບາກບັ່ນຊັກຊວນອອນເອົາຊາວຮໍລັນດາເຂົ້າຮ່ວມທັງຫລາຍ ເພື່ອໃຫ້ໄດ້ຮັບປໂຍດສິນຄ້າໃນປະເທດເຫຼົ່ານັ້ນ ແຕ່ຍັງໄດ້ເປັນຜູ້ຊັກຊວນໃຫ້ ນາຍສະເພົາ ອາແບລ ຕາສມານ ( Abel Tasman) ໃຫ້ໄປຊອກຫາປະເທດຕ່າງ ໆ ສະນັ້ນ ທ່ານຈຶ່ງໄດ້ໄປພົບພໍ້ປະເທດນູແວນເຊລັງ ປະເທດຕັດສມານ ແລະປະເທດອົສຕຣາລີ ອີກ. ເນື່ອງຈາກການຊັກຊວນອອນໃຈນີ້ເອງ ຄວາມຮ້ອງຂໍຂອງພໍ່ຄ້າລາວຈຶ່ງໄດ້ຄວາມຮັບຕ້ອນເປັນຢ່າງດີ ຈາກ <u>ນາຍພົນວັນດີເອແມນ</u> ( Van Diemen ) ທ່ານນາຍພົນຈຶ່ງໄດ້ຮັດຫນັງສືໄປກາບບັງຄົມທູນພຣະເຈົ້າແຜ່ນດິນລາວ ໂດຍໄດ້ແຕ່ງໃຫ້ທ່ານວັນວຸສທອບ ເປັນຜູ້ຖືຫນັງສືໄປເພື່ອສືບສວນເຖິງການຕິດຕໍ່ທາງການຄ້າຂາຍກັບອານາຈັກລາວ <u>ທ່ານວັນວຸສທອບ</u> ໄດ້ຈາກກຸງລະແວກ ( Lovek ) ໃນວັນທີ່ ໒໐ ຈຸຍເຢ ໑໖໔໑ ເພື່ອຈັກຂຶ້ນມາວຽງຈັນ. ມີພັກພວກມາດ້ວຍກັນຄື ຜູ້ຮອງຂອງ <u>ທ່ານວັນວຸສທອບ</u> ໒ ຄົນ ຊາງແຖຫນວດຜູ້ ໑, ຄົນຄົວກິນ ໒ ຄົນ ລ້ວນແຕ່ເປັນຊາວຮໍລັນດາທັງຫມົດ ມີພໍ່ຄ້າລາວຜູ້ ໑ ຊື່ <u>ກວານເມືອງທິບ</u> ( Kwan Monthip ) ພວກຮໍລັນດາມີນາຍພາສາຜູ້ ໑ ຊື່ວ່າ <u>ອິນສີລານັງ</u> ( Intsie Lannangh ) ເຮືອສິນຄ້າຂອງຊາວຮໍລັນດາທີ່ຂົນມານີ້ ມີແຜ່ນແພ ແລະເຄື່ອງສິນຄ້າຕ່າງໆຫຼາຍຢ່າງ ມີຣາຄາທັງຫມົດພໍດີ ໖໖໐໑ຟຣໍແຣງກັບ ໑໐ ( Florins et 10 ), ໃນນີ້ຍັງມີເຄື່ອງບັນນາການສົ່ງມາຖວາຍພຣະເຈົ້າແຜ່ນດິນລາວອີກດ້ວຍ.

ປວັດການເດີນທາງທີ່ໄດ້ກ່າວມານີ້ ພວກເຮົາ (ຫມາຍເຖິງຝຣັ່ງເສດ) ຮູ້ຈັກໃນລະຫວ່າງໃຫມ່ ໆ ນີ້ແຕ່ກໍ່ພຽງແຕ່ຫົວຂໍ້ສັງເຂບຫຼື ໆ ແຕ່ບາງທີກໍບໍ່ຖືກຕ້ອງຕາມປວັດທີ່ກ່າວແທ້.

ປວັດການເດີນທາງກ່ຽວກັບລາວແທ້ນັ້ນ ໄດ້ມີຮຽນບັດສົມທົບເຂົ້າໄວ້ໃນເອກສານລັບຂອງຣັຖບານຮໍລັນດາ, ຈົນເຖິງ ໒໓ ປີຕໍ່ມາ ຫຼັງຈາກທ່ານວັນວຸສທອບມາປະເທດລາວ ຈຶ່ງມີຊາວຮໍລັນດາຢູ່ຜູ້ ໑ ຊື່ວ່າ ກັດສະຕີລົນ ( Casteleyn ) ທີ່ເມືອງຫາດແລມ ( Harlem ) ໄດ້ພິມອອກເຜີຍແຜ່ໃນກິຕສັງກຣາດ ໑໖໖໙ ພ້ອມດ້ວຍປວັດຕ່າງ ໆ ກ່ຽວກັບປະເທດຂແມນ ການບັນຍາຍກ່ຽວກັບການເດີນທາງຂອງທ່ານວັນວຸສທອບໄດ້ຊີແຈງໄວ້ໃນປຶ້ມສະບັບ ໑ ເຊິ່ງມີຫົວຂໍ້ວ່າ <u>ການເດີນທາງລະຍະໄກໃນອານາຈັກຂແມນ ແລະລາວ</u>

ຂອງພວກຮໍລັນດາ ແລະ ສິ່ງທີ່ເປັນມາໃນປະເທດເຫຼົ່ານັ້ນ ຈົນເຖົ້າຮອດກິດສັງກຣາດ ໑໖໔໔ (Le Voya-ge lointain aux Royaumes du Cambodge et du Laos par les Neerlandais et de qui s'y est passé jusqu'en 1644) ປຶ້ມພາສາຮໍລັນດາສະບັບນີ້ ນັກປາດຝຣັ່ງເສດ ຜູ້ໜຶ່ງຊື່ວ່າ ຟຣັ່ງຊິດການີເຍ ( Francis Garnier ) ໄດ້ແປອອກເປັນພາສາຝຣັ່ງເສດໃນກິດສັງກຣາດ ໑໘໗໘. ເຖິງເຈັ່ນນັ້ນກໍດີ ມັນຍັງມີສ່ວນຂາດຕົກບົກພ່ອງຫຼາຍຢ່າງຢູ່ ກ່ຽວກັບເອກສານຕ່າງ ໆ ຂອງບໍຣິສັດການຄ້າຂອງພວກຮໍລັນດາ ກ່ຽວກັບອິນເດັຽຕາເວັນອອກໄກ ເອກສານເຫຼົ່ານັ້ນ ຖືກພິມໃນພາສາຮໍລັນດາ ໃນກິດສັງກຣາດ ໑໙໑໗ ດ້ວຍຄວາມຊັກຊວນຂອງສະມາຄົມນັກປາດຝຣັ່ງເສດຕາເວັນອອກໄກ ( Ecole Français d'Extreme Orient ) ໃນປີ ໑໙໐໘ ທ່ານມູນເລີ ( Dr.P.N.Muller ທີ່ຜ່ານມາຣາໂມຍໄດ້ຮັບຄວາມຊັກຊວນຕື່ມອີກຈາກທ່ານໂກລດເດີ້ເອີແຊນ ( Claude Eugene Maitre ) ເຊິ່ງຄະນະນັ້ນເປັນຜູ້ອຳນວຍການສະມາຄົມນັກປາດທີ່ກ່ຽວເພື່ອພິມເອກສານ ຈາກພາສາຮໍລັນດາ ເປັນພາສາຝຣັ່ງເສດ ກ່ຽວກັບປະເທດອິນດູຈີນເນື່ອງຈາກການຕົກລົງທີ່ເວົ້າມານີ້ ທ່ານດອກເຕີມູນເລີ (Muller ) ຈຶ່ງໄດ້ແຕ່ງປຶ້ມສະບັບ ໑ ກ່ຽວກັບລາວແລະຂະເມນ ຊຶ່ງບໍຣິສັດລິນຈໍແຕງແວກຊິນຈີງ (Sté Linschoten-Verceniging) ຊຶ່ງເປັນຜູ້ພິມອອກເອກສານອື່ນ ໆ ກ່ຽວກັບປະເທດອັງນາມ ແລະ ຕັງແກງບໍ່ໄດ້ພິມອອກຊ້ຳ ໄດ້ແດ່ແຕ່ຫົວຂໍ້ສຳຄັນກ່ຽວກັບສອງປະເທດນີ້ໄດ້ພິມອອກເປັນພາສາຝຣັ່ງເສດ ຢູ່ໃນໜັງສືພິມສະມາຄົມນັກປາດຝຣັ່ງຕາວັນອອກໄກເຫຼັ້ມ ນັ້ນ. ດ້ວຍນັກປາດຮໍລັນດາຢູ່ ໑ ຊື່ວ່າ ທ່ານບຶກ ( W.J. Buvh. ).

ສະມາຄົມນັກປາດຝຣັ່ງເສດໄດ້ສຳເນົາເອົາທຸກ ໆ ເອກສານທີ່ກ່າວໄວ້ເທິງນີ້ ອັນທີ່ພິມໄດ້ອອກໄວ້ເຜີຍແຜ່ແລ້ວກໍມີ ອັນບໍ່ໄດ້ພິມກໍມີເໝືອນກັນ, ຖ້າເຮົາຈະປຽບທຽບສະບັບເດີມຂອງປວັດການເດີນທາງຂອງທ່ານວັນວຸສທອບກ່ຽວກັບລາວ ຊຶ່ງທ່ານຟຣັ່ງຊິກການີເຍ ເປັນຜູ້ພິມມາເຜີຍແຜ່ນັ້ນ ຂ້າພະເຈົ້າເຫັນວ່າເປັນການສົມຄວນອີກຫຼາຍຢ່າງ ເພື່ອຈະໃຫ້ປະຊາຊົນໄດ້ຮັບຊາບ ຄວາມແປໃນພາສາຝຣັ່ງເຖິງປວັດທີ່ກ່ຽວ, ການແປປວັດເດີນທາງຂອງທ່ານວັນວຸສທອບ ຊຶ່ງທ່ານໄດ້ໝາຍບອກທຸກສິ່ງທີ່ທ່ານເຫັນວ່າມີຄຸນຄ່າສູງທີ່ສຸດ. ເພື່ອຄວາມຮູ້ຂອງຜູ້ອ່ານເຖິງປວັດສາດ ດີກວ່າປຶ້ມຂອງທ່ານກັດສະຕາລິນ (Casteleyn ). ຊຶ່ງຂຽນແຕ່ພຽງຫຍໍ້ ໆ ສັ້ນ ໆ ແລະຈອກເອົາຄວາມມ່ວນທູນມາໃຫ້ຜູ້ອ່ານຮູ້ຊື່ ໆ. ດັ່ງນີ້ພວກເຮົາຈຶ່ງຕົກລົງແປປວັດອັນໃໝ່ອີກ ເປັນພາສາຝຣັ່ງເສດຕາມຫົວຂໍ້ທີ່ຈະວ່າຕໍ່ໄປນີ້ ພາໃຫ້ທ່ານໄດ້ຮູ້ຈັກອານາຈັກລາວໃນສມັຍນັ້ນ.

ເມື່ອເວລາໄດ້ຜ່ານເມືອງພນົມເປັນໄປແລ້ວ, ຊຶ່ງເວລານັ້ນ, ເປັນພຽງບ້ານນ້ອຍ ໆ ບ້ານນຶ່ງເຮືອຜໍ້ຄ້າລາວຮໍລັນດາໄປຮອດເມືອງສາມບາບູ ( Sambabour) ຊຶ່ງເປັນກຽງເກົ່າຂອງກຳພູຊາ ຢູ່ໃກ້ກັບສົມບໍ້ ( Sambor ) ດຽວນີ້ຢູ່ຝັ່ງນ້ຳຂອງຊຶ່ງພວກຮໍລັນດາ ເອີ້ນວ່າ ນ້ຳ "ເຊ" ຂອງລາວ (Riviere du Laos ).

ທີ່ເມືອງສາມບາບູ ພວກພໍ່ຄ້າໄດ້ປ່ຽນເຮືອເພື່ອຈະຜ່ານຄວາມຫຍຸ້ງຍາກຂອງແກ້ງ ກ່ອນຈະໄປຮອດແກ້ງ ພວກພໍ່ຄ້າລາວຮໍລັນດາໄດ້ຢຸດພັກທີ່ບ້ານບັດຈອງ ( Bactjong ou Bachong )ຊຶ່ງເປັນບ້ານມີວັດບູຮານເກົ່າຂະເມນຢູ່ແປະກັບຊຽງແຕງໃໝ່ ໆ.

ທ່ານວັນວຸສທອບໄດ້ຂຽນໄວ້ວ່າ:

"ວັນທີ ໑໗ ອາຊຸດ ລົມພັດມາຈາກທິດໃຕ້ສ່ຽງຕາວັນຕົກ ຝົນຕົກເປັນຄັ້ງ ໆ ແລະໜາວດ້ວຍ ໃນຕອນບ່າຍເວລາ ໑ ໂມງພວກຂ້າພະເຈົ້າໄດ້ໄປຮອດເມືອງບັດຈອງ ແລະພາກັນນອນຄ້າງຄືນຢູ່ທີ່ນັ້ນ, ຢູ່ທີ່ວັດໂບຮານເຮັດດ້ວຍຫີນ ທີ່ຊຳລຸດພັງເຊ. ໃນວັດນັ້ນພວກຄົນລາວເອົາດອກໄມ້ ແລະ ທູບທຽນໄປບູຊາຮູບຫີນ ໔ ຮູບເມື່ອ ໔໐ ປີກ່ອນ ບັນດາເຈົ້າແຜ່ນດິນຂະເມນໄດ້ຕັ້ງພຣະຣາຊວັງຢູ່ທີ່ນີ້ ແຕ່ວ່າຍອນການລົບກວນຈາກລາວ, ໃນສມັຍນັ້ນເພີ່ນຈຶ່ງໄດ້ຍ້າຍພຣະຣາຊວັງຈາກທີ່ນີ້ໄປ. ເວລານີ້ກູງເກົ່າກໍມີແຕ່ໄມ້, ເຄືອໄມ້ຫຸ້ມໝົດ ຕໍ່ໄປບັນດາພຣະເຈົ້າແຜ່ນດິນ ໄປຕັ້ງພຣະຣາຊວັງຢູ່ລະແວກ ( Lovek ) ເວລານີ້ກໍຍັງເປັນກູງທີ່ປະທັບຂອງພຣະເຈົ້າແຜ່ນດິນຂະເມນຢູ່".

## ຄຳຖແລງຂອງນັກປາດ,ຜູ້ຮຽບຮຽງ

ຄຳວ່າ "ເມື່ອ ໔໐ ປີກ່ອນ" ນັ້ນ ຄົງແມ່ນການແຜ່ພາຍອຳນາດເຈົ້າແຜ່ນດິນລາວຂັ້ນສຸດທ້າຍໃນປວັດສາດລາວ ບັນດາເຈົ້າຊີວິດວຽງຈັນ ຫຼືລ້ານຊ້າງ ເມື່ອເວລາຍາດແບ່ງດິນຈຳປາສັກ, ອັດຕະປື ຫຼືສາຣະວັນ ຈາກມືຂອງຂະເມນໄດ້ແລ້ວ ຄົງເສັຽກຳລັງວັງຊາ ຫລືອິດທິພົນລົງ ເນື່ອງຈາກເສິກການເມືອງຍາດພຣະທີ່ນັ່ງກັນ ແລະສົງຄາມພະມ້າ ແລະ ໄທ. ເຫດການທີ່ໄດ້ກ່າວມານີ້ເປັນຕົ້ນເຫດໃນການຢຸດສະງັກຂອງກຳລັງແລະຄວາມເຂັ້ມແຂງຂອງອານາຈັກລ້ານຊ້າງ.

ເມື່ອກາຍເມືອງຊຽງແຕງຂຶ້ນໄປແລ້ວ ພວກພໍ່ຄ້າລາວ ແລະ ຮໍລັນດາ ກໍໄດ້ພົບກັບຄວາມຫຍຸ້ງຍາກໃນການເດີນທາງນັ້ນອີກ ເປັນຕົ້ນກ່ຽວກັບຜ່ານຫລີ່ຜີ ທ່ານວັນວຸສທອບໄດ້ບັນທຶກໄວ້ວ່າ "ມີຫີກຄອນດ້ວຍກັນຊຶ່ງເປັນບ່ອນນ້ຳເຈາະພູເຂົາລົງຊຶ່ງສ້າງໃຫ້ມີດອນຢູ່ກາງນ້ຳເປັນດອນກົ້ນລ້າ ໆ ກ່ອນຈະມາເຖິງຫລີ່ຜີ ສຽງນ້ຳໄຫລພັດໂງ່ນຫີນໄດ້ຍິນຮອດໄກກວ່າເຄິ່ງໄມ (ລະຍະຂອງຮໍລັນດາ) ນ້ຳຢາດໂງ່ນຫີນພາໃຫ້ເກີດສຽງດັງສນັ່ນສັ່ນສະເທືອນຢ່າງພິລຶກ ເຊັ່ນດຽວກັນກັບມະຫາສມຸດບວກຟອງຟາດນ້ຳໃສ່ໂງ່ນຫີນແຄມທະເລ ພວກຂ້າພະເຈົ້າຈຳເປັນຕ້ອງໄດ້ຂົນຂອງຈາກເຮືອອີກ ແລ້ວຫາບຫາມຂົນສິນຄ້າຂຶ້ນໄປທາງເໜືອປະມານ ໔໖໐໐ ບາດຍ່າງໃນລະຫວ່າງກາງທາງນີ້ເຫັນມີໄມ້ແປ້ນຕິດໃສ່ກົກໄມ້ໃຫຍ່ຕົ້ນນຶ່ງ ບອກເປັນພາສາລາວແລະພາສາຂະເມນວ່າທີ່ນີ້ເປັນແດນດິນລາວຈູກັນກັບຂະເມນ".

ສາມສັດວັດທີ່ຜ່ານມາຫຼັງຈາກວັນວູສທອບກາຍໄປເຂດນັ້ນແດນລາວກັບຂະເມນກໍຍັງເປັນຂອງເກົ່າຢູ່. ເມື່ອຂອງສິນຄ້າໄດ້ຖືກຂົນຂຶ້ນໄປເໜືອແກ້ງຫລີ່ຜີແລ້ວ ພວກໂດຍສານກໍພາກັນມາລາກແກດ້ວງເຮືອຂຶ້ນຫລີ່ຜີ

ອີກ ຂຶ້ນນຳຮ່ອນແປະເກາະຈະດຳ ຊຶ່ງຮຽກວ່າຮູຈະດຳ ຊຶ່ງຢູ່ແປະຄອນພະເພັງ ການຜ່ານຫລີ່ຜີ[໑໐]ກິນເວລາ ໑໘ ວັນ ແລະເມື່ອເວລາພວກນີ້ມາເຖິງເມືອງເກົ່າຈຳປາສັກກໍກິນເວລາທັງຫມົດເກືອບ ໘ ເດືອນ ນັບແຕ່ຈາກພະນົມເປັນມາທ່ານວັນວຸສທອບກ່າວວ່າເປັນທາງກວຽນຈາກຈຳປາສັກທາອົງເກີ ( Honker ) ຄຳວ່າອົງເກີນ[໑໑] ຄົງແມ່ນອົງກໍວັດ ຊຶ່ງເປັນກຸງຂອງພຣະເຈົ້າແຜ່ນດິນຂເມນສມັຍບູຮານໃນເມື່ອ ສັຕວັດທີ່ ໑໗ ພໍ່ຄ້າຮໍລັນດາຜູ້ນຶ່ງໄດ້ກ່າວວ່າ "ອົງກໍເປັນເຄຫະສະຖານພິລຶກໃຫຍ່ ແລະ ງາມ ຊຶ່ງພວກອັດສະປາຍອນ ແລະພວກປອກຕູແກ ຮຽກວ່າກຸງໂຣມ".

ເມື່ອພໍ່ຄ້າລາວຮໍລັນດາກາຍປາສັກຂຶ້ນໄປແລ້ວ ພວກຣາສດອນລາວຕ້ອນຮັບທ່ານວັນວຸສທອບເປັນຢ່າງດີ ແລະທ່ານວັນວຸສທອບເອງກໍໄດ້ປະຈົບປະແຈງຕ້ອນຮັບເຂົາເຈົ້າເປັນຢ່າງດີ ແລະບາງທີນັ້ນກໍໄດ້ຢາຍຂອງຂວັນໃຫ້ແກ່ເຂົາເຈົ້າອີກ ພວກພໍ່ຄ້າລາວຮໍລັນດາ ຈຳຕ້ອງໄດ້ຜ່ານຄວາມຫຍຸ້ງຍາກອີກໃນການເດີນທາງເພາະຈຳເປັນໄດ້ໃຊ້ເວລາ ໑໔ ມື້ ເພື່ອຈະຂຶ້ນແກ່ງເຂັມມະລາດ ໃນທີ່ນັ້ນລະຍະມີ ໑໗໔ ກິໂລແມດ ໄດ້ມີການລາກດຶງເຮືອຂຶ້ນແກ່ງຫລາຍຄັ້ງ ແລະຂົນເຄື່ອງຂຶ້ນເຮືອເຂົ້າອອກຫລາຍຄັ້ງ ຕໍ່ນັ້ນໄປລຳນ້ຳຂອງເປັນພື້ນພູມລະອຽດດີ ແລະ ການເດີນທາງກໍສະດວກ.

ທີ່ທາດພະນົມພວກຮໍລັນດາ ໄດ້ໄປໄຫວ້ພຣະສົງໃຫຍ່ອົງນຶ່ງ ຊຶ່ງເປັນຜູ້ ປົກຄອງທ້ອງຖິ່ນນັ້ນ ແລະໄດ້ເອົາແວ່ນແຍງຄົນພຣະສົງນັ້ນອັນນຶ່ງ ທ່ານວັນວຸສທອບເພິ່ນໄດ້ບັນຣະຍາຍໄວ້ໃນຫນັງສືເພິ່ນວ່າ "ພວກເຮົາບໍ່ມີຄວາມຈຳເປັນຈະໄປເຄີນຂອງສິ່ງນັ້ນໃຫ້ເພິ່ນດອກ ແຕ່ວ່າໃນເມື່ອເຮົາມາຢູ່ໃນປະເທດນີ້ແລ້ວ ເຮົາຕ້ອງສະແດງຕົວວ່າເຮົາຕ້ອງນັບຖືຮີດຄອງປະເພນີ[໑໒]" ສະເພາະທາດພະນົມທ່ານວັນວຸສທອບບໍ່ໄດ້ກ່າວຫຍັງຈັກຢ່າງໃນບັນທຶກການເດີນທາງຂອງເພິ່ນ.

ໃນວັນຕໍ່ໄປ ທ່ານວັນວຸສທອບໄດ້ບັນທຶກໄວ້ວ່າ "ໃນຕອນຄ່ຳພາຍໃຕ້ແສງສວ່າງຂອງເດືອນ ທ່ານວັນວຸສທອບໄດ້ມາຮອດເມືອງລະຄອນຊຶ່ງຄົນທັງຫລາຍເວົ້າວ່າ ເປັນເມືອງໃຫຍ່ແລະມີຊື່ສຽງດັງໄກ ເມືອງລະຄອນໃຫຍ່ກວ່າເມືອງພະນົມເປັນ ໒ ເທົ່າ" ເມືອງລະຄອນເປັນທີ່ຢູ່ຂອງກະສັດອົງນຶ່ງ ຊຶ່ງພາໃຫ້ມີຊື່ສຽງກວ້າງຂວາງ ຢູ່ວຽງຈັນຊຶ່ງພວກຮໍລັນດາກັບພັກພວກຈະໄດ້ພົບພໍ້ທີ່ວຽງຈັນໃນຄັ້ງຫນ້າ, ທີ່ລະຄອນໃນເວລານັ້ນກຳລັງເຮັດບຸນ ຊຶ່ງກົງກັບຣະດູໃບໄມ້ລົ່ນຢູ່ປະເທດຕາງແກ ແລະພວກຮໍລັນດາກໍໄດ້ຖືກເຊີນໄປທ່ຽວບຸນດ້ວຍ.

ທ່ານວັນວຸສທອບໄດ້ບັນຍາຍໄວ້ວ່າ : "ບໍ່ຈຳເປັນຈຳເລົ່າເຣື່ອງບຸນນີ້ໂດຍລະອຽດ ພວກເຮົາໄດ້ໄປຟັງເທດທີ່ວັດ ຕ່າງ ໆ ໄປເວລາກາງຄືນມາເຖິງແລ້ວ ພວກເຮົາໄດ້ເຫັນບັ້ງໄຟດອກຢ່າງສວຍງາມ. ວິທີເຮັດບຸນກໍແມ່ນວິທີດຽວກັນ ທີ່ເຮັດຢູ່ປະເທດຂເມນ ຕໍ່ນັ້ນໄປພວກເຮົາກໍໄດ້ພາກັນໄປທ່ຽວໃນກາງເມືອງໃຕ້ຄວາມສວ່າງແຈ້ງຂອງເດືອນ ພວກເຮົາທ່ຽວລຳບາກຍາກທີ່ສຸດ ເພາະວ່າບ່ອນໃດກໍມີແຕ່ຄົນ ເປັນກຸ່ມເປັນຫມູ່ຕັ້ນຄະໂຍງຄະເຍງບໍ່ເປັນຫນ້າຢາກເບິ່ງ" ເຖິງວ່າ ເປັນພໍ່ຄ້າຊື່ສັດໃນຕົວເອງກໍດີ ທ່ານວັນວຸສທອບໄດ້ກ່າວໄວ້ອີກວ່າ "ເມືອງລະຄອນນີ້ເປັນເມືອງຂອງມະນຸດໃນໂລກ ຊຶ່ງຕົກຢູ່ໃນສະພາບບູຮານທີ່ຕລາດທອງຄຳ

ມີມາກມາຍ ແລະລາຄາກໍຖືກດ້ວຍ" ໃນບັນທຶກການເດີນທາງຂອງ ທ່ານວັນວຸສທອບ ກ່ຽວກັບເມືອງລະຄອນ ມີເລື່ອງນຶ່ງເປັນທີ່ໜ້າສັງເກດ ຄືວ່າທ່ານວັນວຸສທອບໄດ້ບັນທຶກໄວ້ວ່າ" ມີທາງເສັ້ນນຶ່ງ ທີ່ຈາກຝັ່ງແມ່ນ້ຳຂອງ ໄປຫາປະເທດອານາມ ຊຶ່ງມີລະຍະເດີນທາງ ໖໖ ວັນ, ດັກແນ່ວ່າຄົງຈະແມ່ນຖນົນຊຶ່ງພວກຊາວຈີນໄດ້ຂຽນບອກໄວ້ວ່າໃນສັຕວັດທີ ໗ ມີທາງເສັ້ນນຶ່ງຈາກເມືອງວິນມາຫາຣາຊອານາຈັກວັນຕັນ ( Wentan: Vientiane ) ຊຶ່ງຢູ່ຕິດກັບຊາຍແດນກັບປະເທດຂເມນດຽວນີ້ ຕາມທ່ານວັນວຸສທອບໄດ້ບັນທຶກໄວ້ນັ້ນວ່າ ພໍ່ຄ້າແກວເໜືອມາຂາຍໃໝ່ໃຫ້ຣາສດອນອານາຈັກລາວ ປີລະສາມເທື່ອ ແລະຊື້ແພນຜ້າ ເຂົາກວາງ ແລະ ນໍແຣດ ຄືນເມືອປະເທດຂອງເຂົາ ເພາະສິ່ງເຫຼົ່ານີ້ເປັນຢາສຳຄັນສຳລັບຊາວແກວເໜືອແລະຈີນ. ທ່ານວັນວຸສທອບເດີນທາງຕາມນ້ຳຂອງເລື້ອຍໄປ ໂດຍບໍ່ມີຄວາມລຳບາກ ເພາະແກ່ງຮອນບໍ່ມີ ແລະ ຂຶ້ນມາຮອດວຽງຈັນຢ່າງບໍ່ໃຊ້ເວລານານປານໃດ.

ທີ່ເມືອງລຸກ ເສນາອາມາດຂອງເຈົ້າຊີວິດວຽງຈັນລົງມາ ພົບພວກເຂົາຢູ່ທີ່ນັ້ນ ຊຶ່ງບໍ່ຫ່າງຈາກວຽງຈັນປານໃດ. ພວກເພິ່ນພິຈາຣະນາ ແລະຕວດດູເນື້ອຄວາມຂອງສານຊຶ່ງທ່ານຜູ້ວ່າຣາຊການຮໍລັນດາທີ່ອິນດູເນຊີມານັ້ນ, ການຕວດນີ້ເຮັດໄປຕາມຂນົບປະເພນີທາງຣາຊການອານາຈັກລາວໃນສມັຍນັ້ນ. ເຣື່ອງກວດສານ ທ່ານວັນວຸສທອບບໍ່ຍອມໃຫ້ກວດເດັດຂາດ ເພາະທ່ານບໍ່ຢາກໃຫ້ໜັງສືອອກຈາກມືຂອງເພິ່ນ ແລະທ່ານຕ້ອງການຖວາຍສານດ້ວຍຕົນເອງ ເມື່ອເປັນເຊັ່ນນີ້, ທ່ານວັນວຸສທອບ ພ້ອມດ້ວຍຊາວຮໍລັນດາກໍຖືກເຊີນເຂົ້າເຮືອພະທີ່ນັ່ງ ຊຶ່ງມີພວງທໍ່ຜາສາດຢູ່ກາງແລະຟ້ອນລຳດ້ວຍ, ມີສີພາຍດ້ວຍກັນ ໔໐ ຄົນ ມີອີກຂນາດດຽວກັນກັບເຮືອພະທີ່ນັ່ງນັ້ນຫຼາຍລຳທີ່ເດີນຕາມມາ ເພື່ອໃຫ້ກຽດສ່ວນເຮືອຂອງພໍ່ຄ້າລາວແລະຮໍລັນດານັ້ນຢູ່ຕາມຫລັງ ພວກຮໍລັນດາໄດ້ພາກັນພັກຢູ່ສາລາແຫ່ງນຶ່ງທີ່ເພິ່ນຈັດຮັບຕ້ອນເຂົາເຈົ້າ.

ຄວາມຍາກທີ່ເກີດຂຶ້ນລະຫວ່າງທ່ານວັນວຸສທອບແລະອາດຍາສິດຣາຊວັງ ບໍ່ມີພຽງແຕ່ເຣື່ອງສານເທົ່ານັ້ນ ຍັງມີອີກເຣື່ອງນຶ່ງ ຊຶ່ງເປັນເຣື່ອງສຳຄັນອີກໄດ້ເກີດຂຶ້ນຄືວ່າຫລັງຈາກເສນາອາມາດໄດ້ພິຈາຣະນາເຫັນວ່າເຄື່ອງຕ້ອນບັນນາການ ທີ່ພນະທ່ານວັນດີອາແມນສົ່ງມາຂາຍບັງຄົມທູນນັ້ນບໍ່ພຽງພໍ ແລະກໍມີການເຈຣະຈາຂໍເພີ່ມແລະຂໍຫຼຸດລົງທັງສອງຝ່າຍ ໄດ້ມີຕໍ່ກັນຢ່າງຍືດຍາວໂດຍບໍ່ຄຳນຶງເຖິງຄວາມ ສົກປົກ ຂອງການຂໍເພີ່ມ ຊຶ່ງເສນາອາມາດລາວຈະຕ້ອງໄດ້ຮັບພູດນຳສ່ວນນຶ່ງ ໃນເຄື່ອງບັນນາການນັ້ນ, ອານາຈັກລາວໃນສມັຍນັ້ນຄົງບໍ່ຕ່ຳແຕ່ມຕໍ່ພວກຮໍລັນດາໃນເຣື່ອງຖແລງແປງວາດ ແລະໃນເຣື່ອງຫາຜົນລາຍໄດ້ ກ່ຽວເຣື່ອງນີ້ບັນທຶກຂອງທ່ານວັນວຸສທອບໄດ້ລົງໄວ້ນັບໄດ້ຫຼາຍໜ້າກະດາດ ເຣື່ອງເພີ່ມເຄື່ອງບັນນາການນີ້ກໍຕົກລົງກັນໄດ້ໃນພົນທີ່ສຸດໃນເມື່ອທ່ານວັນວຸສທອບໄດ້ເອົາກ້ອງສ່ອງ ( Longue-vue ) ທຳດ້ວຍເງິນ ແລະແພນແພຫຼາຍໄມ້ເພີ່ມຂຶ້ນອີກ ຊຶ່ງເປັນລາຄາທັງໝົດ ໖໐໐ ສະຕາແອັນ ໘ ( 600,8 stael ) ພວກຮໍລັນດາໄດ້ດີກວ່າບໍ່ແມ່ນໜ້ອຍ ຫລັງຈາກເພີ່ມເຄື່ອງບັນນາການນີ້ແລ້ວ. ດ້ວຍອຳນາດເຈົ້ານາຍຜູ້ໃຫຍ່ຂອງພຣະບາດສົມເດັດພຣະເຈົ້າພູ່ຢູ່ຫົວ. ແຕ່ວັນນັ້ນມາ ພໍ່ຄ້າຮໍລັນດາຈຶ່ງໄດ້ຂາຍສິນຄ້າເຂົ້າໝົດ ແລະໄດ້ຊື້ເອົາຄັ່ງເອົາ

ຍາມເອົາອົ້ນເຂົ້າເຕັມເຮືອຂອງສິນຄ້າເຫຼົ່ານີ້ ແມ່ນອານາຈັກລາວເປັນຜູ້ຜລິດພົນໄດ້ຫຼາຍແລະຈຳໜ່າຍຂາຍ ໃນສມັຍນັ້ນ ໃນຈຳພວກຫລາຍກວ່າໝູ່ໃນໂລກ.

ທ່ານວັນວຸສທອບແລະພັກພວກມາເຖິງວຽງຈັນ ໃນໂອກາດບຸນເດືອນ ໑໘ ທີ່ທາດຫລວງເຈົ້າແຜ່ນດິນລາວໄດ້ຮັບຕ້ອນທ່ານວັນວຸສທອບທີ່ທາດຫລວງ.

ທ່ານວັນວຸສທອບໄດ້ບັນທຶກໄວ້ວ່າ "ຕອນເຊົ້າວັນທີ ໑໗ ໃນວອນ ພຣະຣາຊວັງສົ່ງຊ້າງມາຫລາຍຕົວເພື່ອຈະຮັບຕ້ອນເອົາສານຂອງທ່ານ ນາຍພົນດີອາແມນ ສານນັ້ນເອົາໃສ່ໃນຊຸບຄຳຫລັງຊ້າງໂຕທີ່ ໑ ທີ່ຍ່າງໄປກ່ອນໝູ່ ພວກຂ້າພະເຈົ້າຂີ່ຊ້າງຄົນລະໂຕ ພວກຂ້າພະເຈົ້າໄດ້ກາຍໄປຕໍ່ໜ້າພຣະຣາຊວັງ ທັງສອງຟາກຂ້າງທາງມີທະຫານຢືນເປັນແຖວແລ້ວ ພວກຂ້າພະເຈົ້າມາທາງເບື້ອງຫລັງຂອງພຣະຣາຊວັງ ຢູ່ເທິງຫລັງຊ້າງເຮົາເຫັນເມືອງຊຶ່ງມີກຳແພງອ້ອມສູງ ປະມານເຄິ່ງຕົວຄົນ ທີ່ກຳລັງຂີ່ຫລັງຊ້າງ. ເມື່ອຫລຽວເບິ່ງຈາກຫລັງຊ້າງລຽບຕີນກຳແພງນັ້ນມີຄອງໃຫຍ່ ຊຶ່ງເຕັມໄປດ້ວຍນ້ຳບໍ່ສອາດ ທັງມີຕົ້ນຫຍ້າເກີດເຕັມທົ່ວບໍຣິເວນນັ້ນ. ຈາກກຳແພງໄປປະມານ ໑ ສ່ວນ ໔ ຂອງໄມ ພວກໝູ່ເຮົາໄປເຖິງບ່ອນທີ່ພຣະບາດສົມເດັດພຣະເຈົ້າມະຫາຊີວິດ ຈະໄດ້ຊົງກະຣຸນາຮັບສານ. ພວກເຮົາໄດ້ລົງຈາກຫລັງຊ້າງ ໄດ້ເຂົ້າໄປໃນທີ່ພັກຊຶ່ງໄດ້ຈັດແປງໄວ້ຕ້ອນຮັບພວກຂ້າພະເຈົ້າ ເພື່ອຈະລໍຖ້າໃຫ້ເພິ່ນຮຽກເຂົ້າເຝົ້າ ອ້ອມຜາມຂອງພວກຂ້າພະເຈົ້ານັ້ນ ບັນດາພວກເສນາອາມາດກໍມີຜາມຂອງພວກເພິ່ນຄືກັນ ແລະມີບ່ອນສຳລັບທະຫານ, ສຳລັບຊ້າງແລະມ້າ ມີສຽງຄຶກຄື້ນແລະໄປ ໆ ມາ ໆ ສັບສົນກັນຫລຽບໄດ້ວ່າແມ່ນກອງທັບຂອງພຣະເຈົ້າ ອໍລັງເຊີ ( Prince D'orange ). ພວກຂ້າພະເຈົ້າລໍຖ້າຊົ່ວໂມງ ໑ ແລ້ວ ເຈົ້າຊີວິດກໍສະເດັດມາສະຖິດຢູ່ເທິງຫລັງຊ້າງເຜືອກ ກາຍມາຕໍ່ໜ້າຜາມຂອງຂ້າພະເຈົ້າ ພວກຂ້າພະເຈົ້າກໍເຮັດຄືພວກອື່ນໄດ້ນັ່ງຄຸເຂົ່າລົງປິ່ນໜ້າໄປທາງແຫ່ກະບວນ ພຣະອົງຊົງປາກົດຍັງໜຸ່ມ ໆ ອາຍຸອາດພຽງ ໘໓ ປີເທົ່ານັ້ນ. ຕໍ່ໜ້າຊ້າງເຜືອກມີທະຫານ ໓໐໐ ຄົນ ຖືປືນຍ່າງກ່ອນ ຫລັງຊ້າງເຜືອກມີຊ້າງອີກຫລາຍໂຕ ບັນທຸກທະຫານ ຖັດໄປນັ້ນອີກມີພວກດົນຕຣີ ຖັດນັ້ນອີກມີທະຫານ ໘໐໐໐ ຄົນ ຖັດທະຫານນັ້ນອີກມີຊ້າງ ໑໗ ໂຕ ມີມະເຫສີ ໔ ອົງ ຂີ່ມາດ້ວຍ ເມື່ອເວລາກະບວນແຫ່ກາຍໄປແລ້ວ ພວກຂ້າພະເຈົ້າກັບຄືນມາຫາທີ່ພັກຂອງຂ້າພະເຈົ້າບໍ່ນານທໍ່ໃດພຣະຣາຊວັງໄດ້ສົ່ງພາພານໃຫຍ່ມາ ໒ ອັນ ມາໃຫ້ ໃນນັ້ນມີເຄື່ອງກິນແລະອາຫານທີ່ແຕ່ງແລ້ວ.

ເວລາຕອນບ່າຍ ໔ ໂມງ ພວກຂ້າພະເຈົ້າຖືກເຊີນໄປເຂົ້າເຝົ້າພຣະເຈົ້າມະຫາຊີວິດ. ພວກຂ້າພະເຈົ້າໄປຂາບທູນເຈົ້າຊີວິດໂດຍກາຍໄປສນາມໃຫຍ່ອັນນຶ່ງ ມີກຳແພງຫີນອ້ອມແລະມີປ່ອງ ເພື່ອເປັນບ່ອນຍິງປືນໃຫຍ່. ກາງສນາມນັ້ນມີທາດໃຫຍ່ອັນນຶ່ງ ທັງສູງດ້ວຍຢູ່ເທິງຈອມໂອບຄຳແລະມີລາຍດ້ວຍ ຕາມເພິ່ນເວົ້າວ່າຄຳນັ້ນໜັກໄດ້ ໓ ຫາບ ຄົນລາວທຸກຄົນເຂົ້າຫາທີ່ນີ້ ມີທູບທຽນບູຊາທາດ ເມື່ອພວກຂ້າພະເຈົ້າເຂົ້ານັ່ງຢູ່ທີ່ນັ້ນປະມານນ້ອຍນຶ່ງ ກໍເຫັນຄົນເອົາເຄື່ອງຕ້ອນບັນນາການຂອງພວກຂ້າພະເຈົ້າເຂົ້າມາ ແຕ່ເຂົ້ານຳປະຕູທາງອື່ນ ບໍ່ແມ່ນທາງທີ່ຂ້າພະເຈົ້າມາ ເຄື່ອງບັນນາການນັ້ນໄດ້ເອົາວາງໄວ້ ຕໍ່ໜ້າສົມເດັດພຣະເຈົ້າ ປະມານ ໑໗ ບາດຍາວ ຢູ່ເທິງສາດຢ່າງບໍ່ມີຫຍັງປົກ, ຕໍ່ໄປພວກຂ້າພະເຈົ້າໄດ້ຮັບທູບທຽນເໝືອນດັ່ງ

ເຕວີຍາ (ຈຸ້ນ ພະຍາ) ທີລກລຳ ( Thevinia Lanckan ) ໄດ້ເຕືອນໃຫ້ພວກຂ້າພະເຈົ້າຊາບແລ້ວວ່າ ການຂາບທູນພຣະເຈົ້າແຜ່ນດິນ ຕ້ອງໄດ້ຖື ທູບທຽນ ພວກຂ້າພະເຈົ້າໄດ້ຍ່າງຮອບຫາດໂດຍຖືທຽນດ້ວຍສອງມືແນບເຂົ້າກັນ ພວກຂ້າພະເຈົ້າໄດ້ໄປຕໍ່ໜ້າພຣະເຈົ້າແຜ່ນດິນ ຊຶ່ງມີທະຫານ ແລະມີເຈົ້ານາຍຜູ້ໃຫຍ່ນຳໃນສົມນ້ອຍອັນນຶ່ງ ພວກຂ້າພະເຈົ້ານັ່ງຄຸເຂົ່າຢູ່ເບື້ອງຫລັງເຄື່ອງຕ້ອນຮັບບັນນາການນັ້ນ ພວກ ຂ້າພະເຈົ້າໄດ້ຂາບບັງຄົມໂດຍເອົາໜ້າຜາກກົ້ມລົງແທບດິນ ໓ ເທື່ອ ຖັດນັ້ນສານຂອງນາຍພົນກໍໄດ້ຖືກອ່ານໂດຍພິທີໃຫ້ກຽດສົມກັບກຽດຕິຍົດຂອງທ່ານນາຍພົນ ຕໍ່ໄປມະຫາດເລັກໄດ້ມາຮັບເອົາທຽນຈາກມືຂ້າພະເຈົ້າ ຕໍ່ນັ້ນພວກຂ້າພະເຈົ້າກໍໄດ້ຫຍັບເຂົ້າໄປຕື່ມອີກປະມານ ໓-໔ ບາດຍ່າງ ແລ້ວຫັ້ນພວກຂ້າພະເຈົ້າກໍໄດ້ນັ່ງຄຸເຂົ່າອີກແຕ່ພຣະເຈົ້າຢູ່ຫົວໄດ້ຈຳໃຫ້ພວກຂ້າພະເຈົ້າໄດ້ຫຍັບເຂົ້າໄປໃກ້ ໆ ອີກ ພວກຂ້າພະເຈົ້າກໍໄດ້ຫຍັບເຂົ້າຈົນແປະຣາຊສຳນັກຂອງພຣະອົງ ເມື່ອເວລາພວກຂ້າພະເຈົ້າໄດ້ຫຍັບເຂົ້າໄປໃກ້ ໆ ແລ້ວ ພວກຂ້າພະເຈົ້າໄດ້ຖວາຍບັງຄົມເອົາຫົວກົ້ມລົງດິນອີກ ຢູ່ໃນລະຍະ ໗-໘ ບາດຍ່າງ ແລ້ວພຣະອົງຊົງກະຣຸນາຖາມໂດຍໃຫ້ອາດຍາສິດ<u>ເຕວີຍາ</u>(ຈຸ້ນພຣະຍາ) ເປັນຜູ້ແປໃຫ້ວ່າ ໆທ່ານຈອມພົນສະບາຍດີ ຫລື ແລ້ວວ່າພຣະອົງຊົງດີພຣະທັຍເປັນອັນມາກ ໃນອັນທີ່ພວກຂ້າພະເຈົ້າມາຢ້ຽມຢາມຂາບບັງຄົມທູນນີ້ເຖິງແມ່ນວ່າປະເທດຂອງທ່ານນາຍພົນຢູ່ໄກພຣະນະຄອນວຽງຈັນເຊັ່ນນັ້ນກໍຕາມ ພຣະອົງຊົງກະຣຸນາໂຜດບອກໃຫ້ຊາບວ່າ ພຣະອົງຊົງປະສົງແຕ່ງຣາຊທູດໄປຂອບໃຈນຳທ່ານຈອມພົນ ເພື່ອຂໍໃຫ້ທ່ານຈອມພົນກະຣຸນາຂຽນໜັງສືຂາບຖວາຍດີ ເພື່ອຂໍໃຫ້ພວກທ່ານຈອມພົນຕິດຕໍ່ໄມຕຣີກັບປະເທດລ້ານຊ້າງ ພຣະອົງຊົງຈະພໍພຣະທັຍຕ້ອນຮັບທູດຂອງທ່ານຈອມພົນຈະມາໃນສະຖານທູດການຄ້າ ຫລືສະຖານໃດກໍດີ ກໍຍິນດີຕ້ອນຮັບ" ພວກຂ້າພະເຈົ້າໄດ້ສະແດງຄວາມຂອບໃຈຢ່າງລົ້ນເຫລືອຂອງພວກຂ້າພະເຈົ້າຖວາຍພຣະອົງໂດຍກ່າວວ່າ "ທ່ານຈອມພົນຈະດີໃຈທີ່ສຸດ ເມື່ອໄດ້ຊາບຂ່າວການຕ້ອນຮັບຂອງພວກຂ້າພະເຈົ້າຈາກພຣະອົງ ທ່ານຈະດີໃຈທີ່ສຸດທີ່ຈະຈັດການຕິດຕໍ່ສົມພັນທະໄມຕຣີ" ຕໍ່ນັ້ນໄປ <u>ເຕວີຍາ</u> ກໍໄດ້ບອກພວກຂ້າພະເຈົ້າວ່າ "ພຣະອົງເຈົ້າຊົງອະນຸຍາດໃຫ້ພວກທ່ານລາໄປໄດ້ ແລະພຣະອົງໄດ້ຊົງເພີ່ມ ຂໍໃຫ້ພວກທ່ານນຳຄວາມໂຄຣົບໄປຍັງທ່ານຈອມພົນພ້ອມດ້ວຍຄວາມອວຍພອນ ອາຍຸ ວັນໂນສຸຂັງ ພະລັງ ອາຍຸຍືນຍາວ ສຸກກາຍສະບາຍໃຈໃຫ້ມີເດຊານຸພາບ ແລະຊະນະພາບແພ້ ຂ້າເສິກສັດຕູເພີ່ມທະວີຂຶ້ນເຖີດ".

ຕອນພວກຂ້າພະເຈົ້າກາບບັງຄົມທູນລາ ພຣະອົງຊົງພຣະກະຣຸນາໂຜດພຣະຣາຊທານເຄື່ອງຕ້ອນໃຫ້ພວກຂ້າພະເຈົ້າທຸກຄົນແລ້ວ ເຊີນພວກຂ້າພະເຈົ້າໄປຊົມການແຂ່ງຂັນຫລາຍປະເພດ ຕີມວຍ ຟັນດາບ ແທງຫອກ.

ຫລັງຈາກການແຂ່ງຂັນທຸກ ໆ ເຣື່ອງ ທຸກ ໆ ຜູ້ແຂ່ງຂັນກໍໄດ້ຮັບລາງວັນເປັນແຜ່ນແພ ເມື່ອເວລາຕາເວັນຕົກມະຫາດເລັກເອົາສາດມາປູໃນສນາມແລ້ວ ເອົາຕະກຽວມາໄຕ້ ມີນາງນັກສນົມ ໔ ນາງ ມີແຕ່ຜູ້ໜຸ່ມ ໆ ນ້ອຍ ໆ (ຄືງຈະແມ່ນນາງລະຄອນ) ນຸ່ງເຄື່ອງແປກປລາດອອກມາຟ້ອນເປັນເວລາ ໑ ຊົ່ວໂມງ

ແລ້ວທຸກຄົນກໍໄດ້ຮັບຄ່າລາງວັນເປັນຜ້າບ່ຽງຜູ້ລະສອງພືນ ສີຂາວ ແລະ ເຫຼືອງ ຕໍ່ນັ້ນໄປມີຜູ້ຍິງຜູ້ນຶ່ງອອກມາຟ້ອນອີກ ມີຫາງນົກຍູງຢູ່ປາຍມື ທ້າຍສຸດມີການຈູດບັ້ງໄຟ ພວກຂ້າພະເຈົ້າໄດ້ຂາບບັງຄົມທູນລາ ແລະພວກຂ້າພະເຈົ້າໄດ້ກັບມາທີ່ພັກກັບທ່ານ ເຕວີຍາ ຕາຫອມ (ພະຍາຕາຫອມ) ພວກຂ້າພະເຈົ້າໄດ້ນອນຢູ່ທີ່ພັກທີ່ສຸນາມເຊັ່ນດຽວກັນກັບເຈົ້ານາຍຜູ້ໃຫຍ່ ແລະພຣະເຈົ້າແຜ່ນດິນ ທ່ານເຕວີຍາ ໄດ້ບອກໃຫ້ພວກຂ້າພະເຈົ້າວ່າດົນນານມາແລ້ວ ພຣະເຈົ້າມະຫາຊີວິດບໍ່ໄດ້ຕ້ອນຮັບທູດຢ່າງໃຫ້ກຽດເປັນພິເສດແບບນີ້ ພຣະອົງບໍ່ເຄີຍຊົງກະຣຸນາໂຜດໃຫ້ທູດຕ່າງປະເທດເຂົ້າໃກ້ສຳນັກຂອງພຣະອົງດັ່ງທີ່ໄດ້ເຮັດຕໍ່ທ່ານວັນວຸສທອບນີ້.

ສາມສີ່ວັນຫລັງຈາກພຣະບາດສົມເດັດພຣະເຈົ້າໄດ້ຮັບຕ້ອນຢ່າງມີກຽດ, ພວກຮໍລັນດາໄດ້ໄປເບິ່ງບຸນໄຫຼເຮືອໄຟທີ່ນຳຂອງ ທ່ານວັນວຸສທອບໄດ້ກ່າວວ່າ ພຣະບາດສົມເດັດພຣະເຈົ້າກໍໄດ້ສະເດັດມາເໝືອນກັນ ໂດຍສະຖິດຢູ່ເທິງສະຫລຽງຄຳ ພວກຂ້າພະເຈົ້າໄດ້ໄປນັ່ງຢູ່ໃນຜາມໄຊ ໃກ້ ໆ ກັບຜາມໄຊຂອງພຣະເຈົ້າແຜ່ນດິນ ບໍ່ນານທ່າໃດບຸນນັ້ນກໍເຣີ່ມຕັ້ງຕົ້ນຂຶ້ນຢູ່ກາງນ້ຳຂອງເພິ່ນໄດ້ຄາດຫ້າງອັນນຶ່ງ ມີສີ່ເສົາເຮັດດ້ວຍໄມ້ໄຜ່ຜູກຕິດ ໆ ກັນ ສູງທີ່ກັນກັບເສົາກຳປັ່ນຢູ່ກາງທະເລ ຜູ້ຊາຍ ໔ ຄົນໂດດລົງນ້ຳຕາມ ໆ ກັນພ້ອມຫລົກໃຫ້ຄົນຫົວອີກ, ອັນທີ່ພາໃຫ້ປວງຊົນຊື່ນອົກຊື່ນໃຈທີ່ສຸດນັ້ນ ພວກ ໔ ຄົນທີ່ໂຕນນ້ຳນັ້ນອາດຈະໄດ້ຮັບຄວາມເຈັບອັນຕະຣາຍຢ່າງໃດຢ່າງນຶ່ງກໍເປັນໄດ້.

ເມື່ອເວລາຄ່ຳມືດເຂົ້າແລ້ວ ເຮືອໄຟ ໘໐໐ ລຳລ່ອງມາຕາມນ້ຳຂອງປະດັບດ້ວຍແສງໄຟຮຸ່ງ ນອກນັ້ນມີເຮືອໄຟອີກ ມີ ໙ ລຳ ເຮັດເປັນຮູບທາດ ໔ ລ້ຽນເຕັມໄປດ້ວຍແສງໄຟອີກ ທັງໝົດເປັນໜ້າເບິ່ງໜ້າດູແປກປລາດຫລຸບໄດ້ວ່ານ້ຳຂອງຖືກໄຟໄໝ້ ເມື່ອເວລາເຮືອໄຟກາຍໄປໝົດແລ້ວ ຊຶ່ງນານປະມານເຄິ່ງຊົ່ວໂມງພວກໝູ່ເຮົາກໍກັບຄືນມາເຮືອນ ພຣະບາດສົມເດັດພຣະເຈົ້າແລະຂຸນນາງກໍກັບເມືອເຊັ່ນດຽວກັນ.

ເມື່ອເວລາບຸນເລີກເສັດສັບແລ້ວ ສິນຄ້າພວກຮໍລັນດາເປັນຕົ້ນ ຄື ແຜ່ນແພ, ກະຈົກ, ແຫວນ, ແວ່ນ ກໍຖືກຊື້ຂາຍຈົນໝົດ ທ່ານວັນວຸສທອບ ແລະພັກພວກຢາກຈະກັບຄືນ ແຕ່ກໍຍາກທີ່ສຸດ ມີແຕ່ທ່ານວັນວຸສທອບກັບຄືນຄົນດຽວປະລູກນ້ອງໄວ້ເພື່ອເກັບເງິນຄ່າສິນຄ້າ ທ່ານວັນວຸສທອບໄດ້ກ່າວວ່າ ພວກທີ່ລໍຖ້າເກັບເງິນນີ້ ກໍບໍ່ມີວຽກຫຍັງໃນລະຫວ່າງ ໖ ເດືອນຂ້າງໜ້າ ມີແຕ່ຊອກຫາກິນແລະນອນເໝືອນກັບຄຸນແມ່ໃນວັດ,ຖືກິຣິຍາດີ ບໍ່ເຮັດຄວາມເສັຽຫາຍທັຽງ ໃນເຣື່ອງການມາຂອງທ່ານວັນວຸສທອບທີ່ນະຄອນວຽງຈັນທ່ານໄດ້ກ່າວເຖິງເຣື່ອງການຄ້າຂາຍພິເສດອີກ.

ກ່ຽວເຣື່ອງນີ້ທ່ານວັນວຸສທອບໄດ້ອອກຄວາມເຫັນວ່າ ການຕັ້ງຮ້ານສິນຄ້າຂອງພວກຮໍລັນດາທີ່ວຽງຈັນ ຖ້າຈະໄດ້ຜົນດີກໍແຕ່ວ່າຄວາມຍາດແຍ່ງກັບພໍ່ຄ້າໄທ ພໍ່ຄ້າພະມ້າ ແລະ ພໍ່ຄ້າແກວຕັງແກງ ຊຶ່ງເຄີຍມາຄ້າຂາຍຢູ່ເມືອງນີ້ແຕ່ນານແລ້ວ ໃນເຣື່ອງການຂາຍຍານ ແລະ ຄັ່ງ ພວກຊາວລາວແລກປ່ຽນຢ່າງແພງກັບຂອງຕ່າງປະເທດໂດຍຮູ້ດີວ່າສິນຄ້າລາວສູງ ພວກພໍ່ຄ້າຕ່າງປະເທດທີ່ກ່າວມານີ້ ມາທາງດິນເປັນຕົ້ນວ່າຜ່ານເມືອງໄທ. ທ່ານວັນວຸສທອບໄດ້ຄາດຄະເນວ່າ ຖ້າເຮົາມາຕັ້ງຮ້ານສິນຄ້າຢູ່ວຽງຈັນແລ້ວ ເຮົາສາມາດແຂ່ງ

ຢືນໄດ້ໃນເມື່ອເຮົາມີຫລັກການຄ້າໝັ້ນແກ່ນທີ່ຂະເໝນ.

ເນື່ອງຈາກການສັງເກດໃນການຄ້າຂາຍທີ່ວ່າມານີ້ ທ່ານວັນວຸສທອບໄດ້ກ່າວເຖິງພູມີສາດຂອງລາວ ທ່ານໄດ້ບອກວ່າມີເຂດແດນຕິດກັບໄທ, ພະມ້າ, ຈີນ ຕັງແກງ, ອານາມ ນອກນັ້ນທາງດ້ານການເມືອງ ໄດ້ກ່າວໄວ້ ເໝືອນກັນ ວ່າບໍ່ໄດ້ມີສາຍສັມພັນທະໄມຕຣີດີກັບປະເທດໃກ້ຄຽງ ແລະຕອນສຸດທ້າຍທ່ານໄດ້ກ່າວເຖິງກະຊວງທະບວງກົມລາວ ແລະຂ້າຣາຊການຊັ້ນຜູ້ໃຫຍ່ທີ່ເປັນຫົວໜ້າອີກ. ແຕ່ໃນຈຳພວກບັນດາຜູ້ໃຫຍ່ທີ່ກ່າວນັ້ນ ມີແຕ່ພຣະບາດສົມເດັດພຣະເຈົ້າສຸຣິຍະວົງສາເທົ່ານັ້ນທີ່ເຮົາພໍຮູ້ຈັກໄດ້ໂດຍຄັກແນ່ຕາມພົງສາວະດານລາວ. ໃນສມັຍການຢ້ຽມຢາມຂອງທ່ານວັນວຸສທອບນັ້ນ, ເຈົ້າສຸຣິຍະວົງສາມີອາຍຸ ໒໕ ປີ ແຕ່ທ່ານວັນວຸສທອບໄດ້ບອກໄວ້ວ່າພຣະອົງມີອາຍຸ ໒໓ ປີ ພຣະອົງເປັນເຈົ້າຊີວິດອົງສຸດທ້າຍທີ່ເຂັ້ມແຂງທີ່ໄດ້ປົກຄອງທົ່ວໝົດໃນລ້ານຊ້າງພ້ອມທັງວຽງຈັນ ແລະຫລວງພຣະບາງອີກດ້ວຍ.

ຕາມພົງສາວະດານລາວ ພຣະອົງໄດ້ຂຶ້ນສເວີຍຣາດແຕ່ ໑໖໓໗ ເຖິງ ໑໖໙໔ ໃນລະຫວ່າງ ໕໗ ປີ ແຕ່ພຣະອົງບໍ່ຄ່ອຍປາກົດຕົວໃຫ້ຝູງປະຊາກອນໄດ້ເຫັນເລື້ອຍ ໆ. ມີຜູ້ໃຫຍ່ສຳຄັນ ໓ ທ່ານ ຊຶ່ງບໍ່ແມ່ນເຊື້ອເຈົ້າໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ຊ່ວຍໃນການປົກຄອງບ່າວໄພຣາສດອນ ຕາງພະເນດພະກັນພຣະອົງ. ສິ່ງທີ່ເປັນໜ້າສະດຸດໃຈຂອງຊາວຮໍລັນດາ ອັນນຶ່ງອີກແມ່ນຄວາມຈະເຣີນແລະສຳຄັນ ທີ່ສຸດຂອງພຣະພຸທສາສນາໃນສມັຍນັ້ນ ທ່ານວັນວຸສທອບໄດ້ກ່າວວ່າ ບັນດາພຣະສົງໃນສມັຍນັ້ນ ທ່ານບອກວ່າ "ມີຫລາຍກວ່າທະຫານໃນກອງທັບຂອງພຣະເຈົ້າແຜ່ນດິນເຢັຽຣະມັນຊ້ຳ ພຣະສົງເຫລົ່ານັ້ນສອນໃຫ້ຣາສດອນວ່າ ພຣະຜູ້ເປັນເຈົ້າຂອງພວກເຂົາມາແຕ່ເທິງຟ້າ ແລະຮູບພາບທີ່ເຂົາເຫັນນັ້ນກໍໄດ້ຮັດຕາມທີ່ຜູ້ກໍ່ສ້າງທີ່ໄດ້ເຫັນດ້ວຍຕາຕົນເອງ. ພວກພຣະສົງເຫລົ່າເພິ່ງພໍໃຈຫລາຍກັບຮູບເຫລົ່ານັ້ນ ທັງໄດ້ເວົ້າວ່າ ພຣະຜູ້ເປັນເຈົ້າຂອງເຮົາມີຄວາມສັກສິດຫລາຍກວ່າພຣະຜູ້ເປັນເຈົ້າຂອງປະເທດໄທ, ຂອງປະເທດຂະເໝນ ແລະປະເທດອື່ນ ໆ ແລະໄດ້ກ່າວອີກວ່າ ວັດວາອາຣາມຂອງເຂົາເຈົ້າໃຫຍ່ແລະງາມກວ່າປະເທດອື່ນ ໆ, ວ່າການສຶກສາເລົ່າຮຽນມີຄວາມສຳຄັນກວ່າປະເທດອື່ນ ໆ ດ້ວຍເຫດນີ້ທຸກ ໆ ປີມີພຣະສົງມາຈາກປະເທດຂະເໝນ ແລະ ໄທ ຊຶ່ງມາຢູ່ສຶກສາຢູ່ໄດ້ ໑໐ ປີ ຫລື ໑໒ ປີກ່ອນຈະໄດ້ສຳເຣັດໃນການຮຽນວິຊາໃດວິຊານຶ່ງ.

ສິ່ງທີ່ກ່າວໃນຂ້າງເທິງນັ້ນມີຄວາມຈິງ ເພາະວ່າຄຸນພໍ່ມາຣີນີ (Pere de Marini ) ສາສນາກຣິຕຕຽນທີ່ໄດ້ຜ່ານມາວຽງຈັນສມັຍນັ້ນ ກໍໄດ້ຢືນຢັນເຖິງຄວາມສຳຄັນຂອງພຸທສາສນາເໝືອນກັນ ແຕ່ສະເພາະຕົວຂອງທ່ານວັນວຸສທອບ ທ່ານໄດ້ເຊື່ອໃນແງ່ທີ່ວ່າ ການຮຽນໃນພຣະພຸທສາສນາທີ່ວຽງຈັນມີການເສີຣີສະດວກຫລາຍກວ່າຄວາມສຳຄັນຂອງພຣະພຸທສາສນາຫລາຍກວ່າແຫ່ງອື່ນ.

ວັນທີ ໒໐ ເດຊາມ ໑໖໔໑ ທ່ານວັນວຸສທອບໄດ້ຈາກວຽງຈັນໄປປະເທດຂະເໝນ ການກັບຄືນນີ້ລຳບາກເຕັມທີ ເພາະເປັນຣະດູນ້ຳແຫ້ງ ນອກນັ້ນຍັງມີຂ່າວເລົ່າລືຈະມີສົງຄາມຂະເໝນແລະລາວ ຊຶ່ງໄດ້ສົ່ງທະຫານມາປະຈຳຊາຍແດນ ມີທະຫານກັກແລະກວດ ທ່ານວັນວຸສທອບສອງເທື່ອ ແຕ່ເທື່ອໃດກໍມີສືບສວນດົນນານ

ທ້າຍສຸດຊາວເຮືອລາວທີ່ໄປສົ່ງທ່ານວັນວຸສທອບກໍໄດ້ໄປແກ້ບະໃຫ້ທ່ານຢູ່ທີ່ວັດໂບຣານ ທີ່ວັດບາຈ໋ອງ ຢູ່ຊຽງຕຽງໃນວັນທີ່ ໑໑ ອາວິນ ໑໖໔໒ ທ່ານວັນວຸສທອບກໍໄດ້ໄປເຖິງທີ່ບໍຣິສັດຮ້ານຄ້າຂອງເຜີ້ນທີ່ເມືອງໂລແວກ ( Lovek ) ຕາມເດີມຢ່າງປອດພັຍ.

ຜູ້ຮອງຂອງທ່ານວັນວຸສທອບ ໒ ຄົນຊຶ່ງຍັງຢູ່ວຽງຈັນກໍໄດ້ຖືບັນທຶກປະຈໍາວັນເຊັ່ນດຽວກັນ ແຕ່ວ່າການບັນທຶກປະຈໍາວັນນັ້ນ ບໍ່ມີຣາຄາສູງທໍຂອງທ່ານວັນວຸສທອບ ແຕ່ເຖິງຢ່າງໃດກໍດີ ເຮົາຮູ້ສຶກວ່າບັນທຶກບາງຕອນກໍສໍາຄັນຢູ່. ຄືວ່າການຂາດສັມພັນທະໄມຕຣີລະຫວ່າງລາວແລະຕັງແກງ ການບັນທຶກເຖິງບຸນປີໃຫມ່ທີ່ວຽງຈັນ ແລະການບັນທຶກຊຶ່ງພຣະຣາຊບັນລັງລາວໄດ້ຕ້ອນຮັບຖານະວັງຮະແວງຢ່າງບໍ່ໄວ້ເນື້ອເຊື່ອໃຈຣາຊທູດໄທ ແລະສຸດທ້າຍມີການບັນທຶກຂອງການມາວຽງຈັນຂອງຄຸນພໍ່ກຣິສຕອນປອກຕູຍແກ ໒ ຄົນ ຜູ້ທີ່ ໑ ຄືແມ່ນຄຸນພໍ່ ເດີເລີເຣັຽ( Père de Leria ) ຊຶ່ງໄດ້ມອບບັນທຶກນັ້ນໃຫ້ຄຸນພໍ່ມາຣິນີ ( Père de Marini ) ບັນທຶກນັ້ນມີເນື້ອຄວາມດັ່ງນີ້ "ຄຸນພໍ່ທັງສອງອົງນັ້ນໄດ້ເອົາຫມາຂາວນ້ອຍສອງຕົວມາຖວາຍພຣະເຈົ້າແຜ່ນດິນລາວກະຕ່າຍຕົວນຶ່ງ ແລະ ເຄື່ອງຕ່າງ ໆອື່ນ ໆ ອີກ" ແຕ່ວ່າການວາງທ່າທີໃນການຢ້ຽມຢາມວຽງຈັນຂອງພວກຄຸນພໍ່ສອງທ່ານນີ້ ບໍ່ມີຄ່າສູງເທົ່າພວກຮໍລັນດາທີ່ຂຽນວ່າ "ພວກຄຸນພໍ່ນອນຢູ່ທີ່ເຮືອຂອງເຂົາເຈົ້າເອງຊື່ ໆ ແລະບໍ່ຮູ້ຈັກວ່າເວລາໃດສົມເດັດພຣະເຈົ້າຈະຊົງກະຣຸນາຮັບໃຫ້ເຂົ້າເຝົ້າພຣະອົງໄດ້". ໃນເດືອນອາອຸດ ໑໖໔໒ ນ້ຳຂອງຂຶ້ນເຕັມຝັ່ງ ຊາວຮໍລັນດາເດີນທາງກັບຄືນເມືອດ້ວຍເຮືອຊຶ່ງບັນທຸກສິນຄ້າລາວພ້ອມດ້ວຍພຣະຣາຊສານ ແລະເຄື່ອງບັນນາການສໍາລັບທ່ານຈອມພົນດີອາແມນ ທີ່ເມືອງປັດຕະວີອາ ( Batavia ) ພຣະບາດສົມເດັດພຣະເຈົ້າບໍ່ສາມາດສົ່ງຣາຊທູດໄປນໍາເທື່ອ ເພາະວ່າເວລານັ້ນສັມພັນລະຫວ່າງລາວກັບຂເມນກໍາລັງຕຶງຄຽດ. ການລ່ອງນ້ຳຂອງບໍ່ມີຄວາມຫຍຸ້ງຍາກແລະການບັນທຶກການເດີນທາງຂອງທ່ານຜູ້ຮອງຂອງທ່ານວັນວຸສທອບບໍ່ໄດ້ໃຫ້ຄວາມກະຈ່າງແຈ້ງຫລັງຕື່ມກ່ຽວກັບພູມປະເທດລາວ.

ວັນທີ ໖ ອັກໂຕບ ໑໖໔໒ ເຮືອສິນຄ້າຈໍາພວກນັ້ນກໍຜ່ານເມືອງບັດຈອງລົງໄປຊຶ່ງເປັນເຂດໃຕ້ສຸດຂອງປະເທດລາວ. ວັນທີ່ ໒໔ ອັກໂຕບ ກໍໄປເຖິງລະແວກ.

ຫລັງຈາກການມາທີ່ປະເທດລາວຂອງພໍ່ຄ້າຊາວຮໍລັນດາໃນສມັຍນັ້ນ ຕໍ່ມາອີກຮອດ ໒໐໐ ກວ່າປີກໍບໍ່ມີຊາວຢູໂຣບໃດ ໆ ມາອີກ ແລະຊາວຮໍລັນດາກໍບໍ່ໄດ້ມາອີກເຊັ່ນດຽວກັນ; ສິ່ງສໍາຄັນກໍຄືແຜນທີ່ຂອງຊາວຮໍລັນດາຂີດຂຽນໄວ້ນັ້ນ, ບໍ່ເຄີຍເຫັນນັກແຕ້ມແຜນທີ່ຊາວຕາວັນຕົກຜູ້ໃດສົນໃຈອີກ. ອາດຈະເປັນດ້ວຍວ່າປະເທດລາວມີພົລເມືອງຫນ້ອຍ ແລະການເຂົ້າມາຫາກໍເປັນການລໍາບາກ ເພາະບໍ່ມີທີ່ນທາງໃກ້ທະເລ, ບໍ່ເປັນຈຸດສໍາຄັນແກ່ຊາວພໍ່ຄ້າຢູໂຣບ ພວກນັ້ນຕິດຕໍ່ແຕ່ປະເທດທີ່ຢູ່ແຄມທະເລ ຊຶ່ງເອົາໄດ້ຜົນໄມ້ຂາຍ ຕໍ່ມາອີກ ຄືໃນປີ ໑໘໖໗ ເທົ່ານັ້ນ ຈຶ່ງມີການມາຂອງຄນະພວກຝຣັ່ງເສດ ຊຶ່ງມີທ່ານດູດາ ເດີລາເກຣ ແລະ ຝຣັ່ງຊົວກາກເຍ ( Doudart de Lagree et Français Garnier ) ເປັນຜູ້ນໍາພາໄດ້ຂຶ້ນມາຕາມລໍານ້ຳແມ່ນ້ຳຂອງການມາຂອງພວກນັ້ນກາຍວຽງຈັນຕລອດເຖິງເມືອງຫລວງພຣະບາງອີກ.

໒./ <u>ການເດີນທາງຂອງຄຸນພໍ່ມາຣີນີ ( Pere de Marini )</u> ປຶ້ມຂອງຄຸນພໍ່ມາຣີນີຊຶ່ງແປເປັນພາສາຝຣັ່ງ ໃນປີ ໑໖໖໖ ຊຶ່ງມີຊື່ວ່າພົງສາວະດານໃໝ່ ແລະແປກຂອງອານາຈັກຕັງແກງ ແລະອານາຈັກລາວ " Histoire Nouve.le et Curieuse des Royaume du Tonkin et du Laos "

ຊຶ່ງໄດ້ມາເຜີຍແຜ່ເປັນພາສາອີຕາລີ ໃນປີ ໑໖໖໖ ຜູ້ແຕ່ງປຶ້ມສະບັບນີ້ແມ່ນຄົນອີຕາລີ ເກີດຢູ່ເມືອງແຊນ ( Genes ) ທີ່ໄດ້ເຖິງແກ່ກັມທີ່ມາກາວ ( Macao )(ປະເທດຈີນ) ຣວມອາຍຸໄດ້ ໗໔ ປີ. ກ່ອນອື່ນປຶ້ມຫົວນີ້ເປັນຕົ້ນຕໍທີ່ກ່ຽວກັບອານາຈັກລາວ ແລະເປັນປຶ້ມທີ່ມີປໂຍດມາກທີ່ສຸດ ເພາະໄດ້ໃຫ້ຄວາມກະຈ່າງແຈ້ງຂອງປະເທດລາວໃນຄາວນັ້ນຢ່າງດີ. ເຖິງແມ່ນວ່າຜູ້ແຕ່ງປຶ້ມຫົວນີ້ ບໍ່ໄດ້ບອກໄວ້ວ່າ ເພິ່ນເອົາເຣື່ອງມາຈາກໃສແຕ່ເຮົາຄິດວ່າໃນເມື່ອບໍ່ມີຄົນຊາວຕ່າງປະເທດຜ່ານມາໃນອານາຈັກລາວໃນສມັຍນັ້ນເຣື່ອງເຫລົ່ານັ້ນຄົງເອົາມາຈາກຄຸນພໍ່<u>ເດີເລີເຣັຽ</u>( Pere de Leria ) ເພາະວ່າຄຸນພໍ່ຜູ້ນີ້ໄດ້ມາໃນອານາຈັກລາວຕັ້ງແຕ່ ໑໖໔໒ ເຖິງ ໑໖໔໗ ຄຸນພໍ່ນີ້ໄດ້ພັກຢູ່ທີ່ວຽງຈັນດົນນານ ແຕ່ປາກົດວ່າຄວາມບໍ່ນິຍົມຊົມຊອບຈາກພຣະສົງອົງຄະເຈົ້າທັງຫລາຍພາໃຫ້ການພັກຢູ່ທີ່ວຽງຈັນຂອງລາວເປັນການຍາກ. ການແປເປັນພາສາຝຣັ່ງເສດຂອງປຶ້ມເພິ່ນນີ້ໄດ້ແປແຕ່ສະເພາະເນື້ອຄວາມ ຂອງປຶ້ມອັນທີ່ມີສິ່ງທີ່ກ່ຽວກັບພົງສາວະດານ ແລະພູມີສາດຂອງປະເທດເຫລົ່ານັ້ນ ບໍ່ເວົ້າເຖິງການຂຍາຍເຜີຍແຜ່ສາສນາກຣິສຕຽນ ໃນເຂດເຊັຽຕາເວັນອອກໄກໃນສມັຍນັ້ນ ສິ່ງທີ່ທ່ານຈະເຫັນຕໍ່ໄປນີ້ແມ່ນຕອນທີ່ກ່ຽວກັບການເປັນຢູ່ກັບອານາຈັກລາວ.

## <u>ກ່ຽວກັບຄວາມຮູ້ສຶກແປກ ໆ ໃໝ່ ໆ ກ່ຽວກັບພຣະຣາຊອານາຈັກລາວ</u>

### (ຄວາມຍິ່ງໃຫຍ່, ຄວາມມັ່ງຄັ່ງສົມບູນ ແລະ ກຳລັງທະຫານ)

ໃນຈຳພວກອານາຈັກທີ່ເຂັ້ມແຂງທັງຫລາຍ ຂອງປະເທດອາເຊັຽຕາວັນອອກມີປະເທດນຶ່ງ ຊຶ່ງບໍ່ມີໃຜຮູ້ຈັກແລະເລົ່າສູ່ກັນຟັງ ທີ່ປະເທດເອີໂຣບ ປະເທດນັ້ນເຂົາເອີ້ນກັນວ່າ ປະເທດລາວ ຫລືຄວາມນຶ່ງວ່າອານາຈັກລານຢຽງ ( Royaumes des Langiens ) (ແມ່ນອານາຈັກລ້ານຊ້າງພວກເຮົາດຽວນີ້) ປະເທດນີ້ຢູ່ໄກທະເລປະມານ ໖໐໐ ໄມ ແຕ່ທິດເໜືອຫາທິດໃຕ້ ແຕ່ ໑໔ ດີກີ ເຖິງ ໒໒ ດີກີ ເຊິ່ງຄືວ່າປະເທດນີ້ຢູ່ໃນແຜນທີ່ໂລກ ບ່ອນຈຸດ ໘ ດີກີ ດີກີເຊິ່ງຂອງລາຕີຈູດ (Latitude ) ແລະປະເທດນີ້ຢູ່ໃນລະຍະ ໔໐໐ ໄມ ຂອງເສັ້ນໂດຍໃຫ້ຖືວ່າ ດີກີ ໑ ມີ ໖໐ ໄມ ໃນດ້ານລົງຈີຈູດ (Longitude ) ບໍ່ໄດ້ຄາດຄະເນໄວ້ວ່າມີກວ້າງທີ່ໃດ ເພາະວ່າປະເທດນີ້ມີພູເຂົາສູງອ້ອມຫຼາກດ້ານ ຂນາດຕາດິນມີແຕ່ ໑໔໐ ໄມ ແມ່ນປະເທດມີທົ່ງຮາບພຽງປະກອບດ້ວຍດິນດີ ແລະສິ່ງທັມຊາດນາ ໆ ປະການທີ່ເປັນປໂຍດແກ່ຊີວິດສິ່ງເຫລົ່ານີ້ເກີດກັນຂຶ້ນຢ່າງສົມບູນພູນສຸກ.

ນອກຈາກພູເຂົາທີ່ເປັນຮົ້ວອ້ອມປະເທດເພື່ອປ້ອງກັນຕໍ່ສັດຕູ ຕ່າງປະເທດ ພູເຂົາແລະປ່າດົງພົງໄພຊຶ່ງມີໄມ້ຫລາຍຊນິດຊຶ່ງຊາວພົລເມືອງຂາຍອອກໃຫ້ປະເທດໃກ້ຄຽງ ປ່າໄມ້ນັ້ນ ໆ ກໍເຮັດໃຫ້ທົ່ງນາແລະສວນ

ມີຝຸ່ນດີສຳລັບພືນປູກ ປ່າໄມ້ທັງຫລາຍເຫຼົ່ານັ້ນລ້ວນແຕ່ມີລຳໄມ້ໃຫຍ່ສູງ ໆ ຢູ່ຕາມຕີນພູ ເປັນພູທັງໝົດເປັນຮົ້ວອ້ອມແຜ່ນດິນຂອງລາວ ເມື່ອເບິ່ງລຶກ ໆ ແລ້ວກໍປະກົດວ່າ ຕົ້ນໄມ້ນັ້ນຖືກມະນຸດປູກໂດຍສະເພາະ ເພື່ອເປັນກຳແພງອ້ອມປະເທດ ແລະເປັນເນື້ອນູນ ເພື່ອດູດດຶງຕ້ານຢັ້ນບໍ່ໃຫ້ນ້ຳຝົນທີ່ຕົກຈາກພູເຂົາຢ່າງຮ້າຍແຮງອັນທີ່ຈະນຳຄວາມເສັຽຫາຍມາສູ່ພືລປູກຂອງຣາສດອນ ຖ້າບໍ່ມີປ່າໄມ້ດົງໃຫຍ່ຂອງພູເຂົາເຫລົ່ານັ້ນທີ່ຫ້າມປາມການນ້ຳຖ້ວມ ແລະກໍອາດຈະບໍ່ມີການເກັບກ່ຽວເຂົ້າຢ່າງງອກງາມ ເພາະວ່າຣະດູຮ້ອນກໍຮ້ອນຫລາຍ, ແຕ່ເມື່ອຣະດູຝົນມາເຖິງແລ້ວ ພວກຣາສດອນກໍຕັ້ງໂຕ່ງນ້ຳໄວ້ຕາມຄວາມຕ້ອງການຂອງໃຜລາວ ເມື່ອເວລາຝົນຕົກມາກຫລາຍນ້ຳນັ້ນກໍບໍ່ຢູ່ບ່ອນເກົ່າ ທີ່ໄດ້ພາໃຫ້ເປັນບວກເປັນໜອງ ແຕ່ກໍໄຫລລົງຕະຄອງຮ່ອງນ້ຳໄປຫານ້ຳຫ້ວຍ ນ້ຳເຊ ທີ່ໄຫຼໃສ່ນ້ຳຂອງ ຊຶ່ງຣາສດອນຂຸດແບ່ງອອກເປັນຕະຄອງຮ່ອງນ້ຳຊ່ວຍພໍເດີນທາງເຮືອໄດ້ເພື່ອປໂຍດຂອງການປູກຝັງ.

## ນ້ຳຂອງ

ແມ່ນ້ຳໃຫຍ່ແມ່ນີ້ ຊຶ່ງນັກແຕ່ງແຜນທີ່ສມັຍເກົ່າ ຫລືໃໝ່ທີ່ຍັງບອກບ່ອນບໍ່ຖືກຕ້ອງລຶກແນ່ນັ້ນໄດ້ອອກບໍ່ມາຈາກໜອງອັນນຶ່ງ ເລິກ ໆ ຢູ່ໃນແຂວງຢູ່ ນານໃກ້ກັນກັບແດນຈີນ ນ້ຳນີ້ເມື່ອໄດ້ໄຫລອອກຈາກແຂວງນຶ່ງຂອງຈີນແລ້ວ ກໍໄຫລຜ່ານມາຕາມຮ່ອມພູເຂົາແຄບ ໆ ເມື່ອກາຍພູແລ້ວເວລາຮອດທົ່ງດິນພຽງ ນ້ຳນີ້ກໍຂຍາຍອອກ ໂດຍຜ່ານໄປຫລາຍຫົວເມືອງ ຊຶ່ງພາໃຫ້ຣາສດອນໄດ້ອາບໄດ້ໃຊ້ ໂດຍບໍ່ຮັບຄວາມສຶກປີກຫຍັງເລີຍຈາກພວກນີ້. ນ້ຳຂອງໄດ້ຮັບແມ່ນ້ຳນ້ອຍຫລາຍແມ່ຕາມສາຍທາງທີ່ມັນຜ່ານໄປ ໃນເວລາກາຍໄປໄດ້ ໔ມີ ດີກີໄກຈາກຂົ້ວນໂລກເບື້ອງເໜືອ ແລະເວລາກາຍຈາກດິນລາວໄປແລ້ວນ້ຳຂອງກໍຮັບກຳປັ່ນໄດ້ ມັນຍັງແບ່ງຂອກເປັນ ໔ ແຫ່ງອີກ ຄື ແຫ່ງນຶ່ງໄປປະເທດ ເປກູ (ພະມ້າ) ເບື້ອງຕາວັນຕົກ ເພື່ອຈະຕົກໃສ່ອ່າວບັງກາລີ ( Golfe du Bengala )(໑) ແຫ່ງ ໑ ໄດ້ຜ່ານລົງທາງໃຕ້ໃນລະຫວ່າງຕີນພູ ພາໃຫ້ມີແກ້ງແລະໃຫ້ມີນ້ຳຕົກຕາດ ນ້ຳຂອງແຕ່ເໜືອຕລອດໃຕ້ ໄດ້ແບ່ງປັນດິນລາວໃຫ້ເປັນ ໔ ແຄວນໃຫຍ່ງບໍ່ແຕກຝັ່ງຈັກເທື່ອ ເພາະວ່າແຄມຂອງສູງ ນ້ຳນັ້ນກໍບໍ່ຂຶ້ນເຖິງ ໆ ແມ່ນຍາມນ້ຳມາກຫລາຍກໍຕາມ.

(...) ນ້ຳຫ້ວຍຫລາຍສາຍເຕັມດ້ວຍນ້ຳຝົນ ເມື່ອຮອດຣະດູຝົນທີ່ເຣີ່ມແຕ່ເດືອນ ໖ ໄປ ບາງທີນ້ຳນີ້ກໍເກີດມາຈາກນ້ຳກ້ອນ ທີ່ເປື່ອຍຢູ່ພູທີເບດ ນ້ຳຂອງກໍມາກຫລາຍລະຫວ່າງເດືອນເສັດຕາມໄປຫາເດືອນຊຽງວິເຢ ເຖິງເຊັ່ນນັ້ນກໍດີ ການທ່ອງທ່ຽວທາງເຮືອແພມາວ່າກໍບໍ່ມີຍາມຂາດລະຍະໄດ້.

ພວກທີ່ເອົາເຮືອຂຶ້ນເມືອທາງເໜືອ ຊຶ່ງປ້ານກັບກຳລັງນ້ຳ, ມີຄວາມລຳບາກຍາກແຄ້ນເຫລືອທີ່ສຸດ ເພາະວ່ານອກຈາກຈະໄດ້ລາກແກ່ດຶງເຮືອແລ້ວ ຍັງໄດ້ຕາກແດດອັນແຮງກ້າ ເໝືອນດັ່ງໄຟເຜົາ ເຖິງດັ່ງນັ້ນກໍດີ ເຂົາກໍຖືກັນວ່າ ຄວາມຫຍຸ້ງຍາກອັນນັ້ນບໍ່ພາໃຫ້ເຂົາທໍ້ຖອຍຫລືເປັນສິ່ງຂັດຂວາງໃນການທ່ອງທ່ຽວຂອງເຂົາເຈົ້າເລີຍ ພວກເຮົາເຫັນວ່າມີຄວາມລຳບາກທີ່ສຸດໃນການເດີນຕາມລຳນ້ຳອັນຮ້າຍກາດຂອງລຳ

---

(໑) ບ່ອນນີ້ຜູ້ນິພົນໄດ້ຄິດຜິດ ເພາະແມ່ນ້ຳຂອງບໍ່ໄດ້ຕົກປະເທດພະມ້າຈັກບ່ອນ.

ແມ່ນ້ຳຂອງນີ້ ແຕ່ວ່າເມື່ອເຫັນວ່າແມ່ນ້ຳຂອງໄຫລແຮງ ພວກຊາວເຮືອແພຈະລະເລີງໃຈກໍບໍ່ໄດ້ ເພາະວ່າ ຂນາດເຮືອທີ່ເຮົາປະລອງຕາມລຳພັງນັ້ນ, ບໍ່ແມ່ນແຕ່ພໍພຽງໄຫລໄວເທົ່ານັ້ນ ແຕ່ມັນເປັນເໝືອນລູກໜ້າທີ່ເຮົາຍິງໄປນັ້ນ ຖ້າພິດພັ້ງໄປເມື່ອໃດແລ້ວ ເຮືອນັ້ນກໍຈົມລົງພົ້ນໝົດທັງຄົນ ແລະ ສິ່ງຂອງອີກດ້ວຍ ໂດຍບໍ່ຫວັງວ່າຈະເອົາຊີວິດຄືນເອງລອດໄດ້ ຊ້າງກໍເຊັ່ນດຽວກັນ ດັ່ງນັ້ນ ຈຳຕ້ອງຍອມຕໍ່ກຳລັງອັນແຮງຂອງນ້ຳນີ້ ເມື່ອເວລາເຮົາໄປຮອດເຂດແດນທີ່ແບ່ງສອງອານາຈັກ (ລາວແລະຂເມນ) ເຮົາຈຳເປັນຕ້ອງເອົາສິນຄ້າອອກຈາກເຮືອນ້າງເບາະເຮືອອອກແລ້ວເອົາເຄື່ອງໃສ່ກຽນແກ່ໄປ ໃນລະຍະທາງປະມານ ໓ ໄມ ແລ້ວກໍຫວິດບ່ອນຍາກ, ແຕ່ວ່າພວກເຮືອຍັງຈະໄດ້ດຶງແລະປ່ອຍເຮືອເປົ່ານັ້ນຄ່ອຍ ໆ ລົງຕາມແກ່ງ ແລະ ຕາມຮ່ອນນ້ຳອັນກັນດານອີກ. ແຕ່ຕີນແກ່ງໄປຮອດທ່າ ກຳປັ່ນຕ້ອງໃຊ້ເວລາຣະຫວ່າງ ໑໐ ວັນ.

## ໂຄງການທີ່ສເນີຕໍ່ພຣະເຈົ້າແຜ່ນດິນ

(...) ມີຄຸນພໍ່ຜູ້ນຶ່ງ ໄດ້ສເນີໂຄງການຕໍ່ພຣະເຈົ້າແຜ່ນດິນກ່ຽວເຣື່ອງການອັດນ້ຳໃນບ່ອນຮ່ອນແກ່ງໃຫ້ເປັນຕອນ ໆ ໄປ ເພື່ອຈະຕອນນ້ຳ ແລະ ເປ່ງໃຫ້ສເມີກັນ ເພື່ອໃຫ້ການທ່ອງທ່ຽວສະດວກ ແຕ່ພຣະບາດສົມເດັດພຣະເຈົ້າຊົງກະຣຸນາເຫັນວ່າ ຈິງຢູ່ວ່າຈະໄດ້ຜົນໃນການຄ້າຂາຍໃສ່ແຜ່ນດິນ ແຕ່ວ່າພຣະອົງຊົງເປັນຫ່ວງໃນຄວາມສງົບສຸກຂອງພຣະຣາຊອານາຈັກ ໃນດ້ານການເມືອງແລະການທະຫານ ເພາະວ່າແກ່ງເຫລົ່ານັ້ນກໍເປັນກຳແພງຕໍ່ຕ້ານສັດຕຣູ ຄັນວ່າຖ້າເຮົາຫາກເຮັດໃຫ້ໄປມາສະດວກດີແລ້ວ ກໍຄືກັນກັບເອົາຂໍກະແຈເມືອງປ່ອນໃຫ້ສັດຕູ ເພາະວ່າຖ້າເຂົາຢາກມາຣົບກວນຢ່າງໃດເຂົາກໍມາໄດ້ງ່າຍ.

## ວ່າດ້ວຍເຂົ້າ

(...) ເຂົ້າຊຶ່ງປູກຢູ່ໃນປະເທດນີ້ ແມ່ນງາມຫາບ່ອນຈະປຽບທຽບບໍ່ໄດ້ ມີຣົດແລະມີກິ່ນຫອມພິເສດ ບໍ່ແມ່ນມີແຕ່ເຂົ້າ, ເຄື່ອງຂອງອື່ນ ໆ ກໍງາມໄປຕາມ ໆ ກັນ ມີບ່ອນນຶ່ງທີ່ເຂົາປູກເຂົ້າຫອມ ຄືແມ່ນທ້ອງຖິ່ນທີ່ຢູ່ພາກຕາວັນອອກຂອງພຣະຣາຊອານາຈັກ ແລະ ເຂົາຄາດຄະເນວ່າໃນຈຳພວກປະເທດຕ່າງ ໆ ໃນຕາເວັນອອກໄກມີແຕ່ບ່ອນດຽວນີ້ທີ່ຈະມີເຂົ້າຫອມແບບນີ້ (...)

## ວ່າດ້ວຍປາ

(...)ນ້ຳຂອງແລະນ້ຳນ້ອຍທີ່ຕົກໃສ່ນ້ຳຂອງ ມີປາຢ່າງມາກມາຍແລະຫລາຍ ໆ ຊນິດແລະບາງຊນິດກໍໃຫຍ່ທີ່ສຸດ ໔ ຄົນຫາປາຊຶ່ງເຫັນວ່າກ້າວລົ້ນທີ່ສຸດກໍຍັງຈະຫາມບໍ່ໄດ້. ການຕຶກປານ້ອຍກໍມີແຕ່ເປັນຣະດູ ແລະຣາຄາປາກໍຖືກ ໆ ປາໜັກຮ້ອຍລີວຕໍ່ເງິນລີວນຶ່ງເທົ່ານັ້ນ (ເງິນອີຕາລີ) ພວກຣາສດອນເອົາເກືອ

ເອີ້ນເຮັດປາແດກປາເຄັມປາຢ້າງ ຄືບ້ານເຮົາເຮັດປາອັງຈືວ, ປາຮາຮັງເຄັມນັ້ນເພື່ອປະກອບເປັນອາຫານຂອງເຂົາເຈົ້າ. ຢູ່ທີ່ນີ້ອາກາດກໍ່ບໍ່ຮ້ອນເຮັ່ງເທົ່າໃດ ພໍປານກາງ, ຍັງຢາກວ່າເຢັນກວ່າຢູ່ປະເທດຕົງແກງ ແກວເໜືອອີກຈ້າ ຈຶ່ງພາໃຫ້ຄົນທັງຫລາຍມີສຸຂພາບດີ (...)

## ພຣະນະຄອນວຽງຈັນແລະພຣະຣາຊວັງ

ເມື່ອງສຳຄັນຊຶ່ງພຣະບາດສົມເດັດພຣະເຈົ້າສະຖິດຢູ່ຕາມປົກຕິນັ້ນ ຢູ່ກາງພຣະຣາຊອານາຈັກປະມານ ໑໘ ດີກຣີ ຈາກຂວັ້ນໂລກ ພຣະນະຄອນນັ້ນຮຽກວ່າລານຊ້າງ ( Langione ) ຂ້າງນຶ່ງມີກຳແພງສູງອ້ອມ ແລະ ຕະຄອງໃຫຍ່ເລິກອອກ ຂ້າງນຶ່ງມີນ້ຳຂອງຕົນອັນທີ່ເປັນບ່ອນກຳບັງສັດຕູໄດ້ດີ ພຣະຣາຊວັງຊຶ່ງກໍ່ສ້າງຢ່າງມີລະບຽບແລະມີລຽນອັນເໝາະສົມນັ້ນງາມເຕັມທີ. ຢູ່ໄກ ໆ ເຮົາກໍມອງເຫັນຍອດມັນມີຄວາມຈິງຢູ່ວ່າພຣະຣາຊວັງນີ້ກວ້າງທີ່ສຸດ ແລະຄັນວ່າເຮົາບໍ່ສັງເກດຄັກ ກໍຈະນັບວ່າເປັນເມືອງນຶ່ງກໍໄດ້ ເພາະວ່າຄົນຢູ່ໃນນັ້ນມີມາກມາຍຫລາຍລົ້ນ ຫ້ອງບັນທົມຂອງພຣະບາດສົມເດັດພຣະເຈົ້າ ມີປະຕູອັນຄວັດເປັນລວດລາຍງາມທີ່ສຸດ ນອກນັ້ນກໍ່ມີຫລາຍຫ້ອງອີກງາມເກືອບເທົ່າໆ ກັນ, ແລະກໍມີອີກຫ້ອງນຶ່ງໃຫຍ່ກວ້າງ ໄມ້ຊຶ່ງໃຊ້ປຸກພຣະຣາຊວັງນີ້ເປັນໄມ້ທີ່ແໜ້ນແກ່ນດີ ທັງນອກແລະທັງໃນຂອງຝາມີລວດລາຍງາມທີ່ສຸດ ແລະຝອກຄຳອັນທີ່ພາໃຫ້ຮູ້ສຶກວ່າ ເອົາແຜ່ນຄຳແທ້ ໆ ໄປປະດັບໃສ່ ນອກຈາກນັ້ນເມື່ອເຮົາເຂົ້າໄປໃນເດີ່ນພຣະຣາຊວັງຊຶ່ງກວ້າງຂວາງຫລາຍ ມີເຮືອນປຸກລຽນກັນເປັນແຖວ ໆ ສຳລັບພວກເສນາແລະນາຍທະຫານ.

ຖ້າຈະໃຫ້ຂ້າພະເຈົ້າບັນຣະຍາຍທຸກສິ່ງທຸກຢ່າງຊຶ່ງປະກອບພຣະຣາຊວັງນີ້ ດັ່ງຄຸນຄ່າສູງຂອງພຣະຣາຊວັງ, ຫ້ອງນອນທັງຫລາຍ, ສວນອາດຊຸທິຍານທັງຫລາຍແລະອີກຫລາຍສິ່ງຫລາຍຢ່າງກ່ຽວກັບພຣະຣາຊວັງ, ຂ້າພະເຈົ້າຄົງຈະຕ້ອງຂຽນປຶ້ມຫົວໃຫຍ່ຫຼັ້ມ ໑ ອີກຕ່າງຫາກ.

## ບ້ານເຮືອນ

ເຄຫະສະຖານຂອງເຈົ້າໃຫຍ່ນາຍໂຕ (Seigneurs ) ແລະຂອງພວກເສດຖີນັ້ນສູງ ແລະງາມທີ່ສຸດ ເຮັດດ້ວຍໄມ້ ມີຮູບຄວັດລາຍໃສ່ຫລາຍຫລືໜ້ອຍຕາມພາຫານະເຈົ້າຂອງ ແລະຂ້າພະເຈົ້າຂໍເວົ້າຕາມຄວາມຈິງອີກວ່າ ສວນພວກໄພ່ນ້ອຍຣາສດອນບໍ່ໄດ້ຢູ່ເຮືອນງາມດັ່ງນັ້ນເລີຍເປັນເຮືອນສູງ ແຕ່ເບິ່ງແລ້ວເໝືອນຮ້ານມຸງຫຍ້າ ຫລື ຕູບກໍວ່າໄດ້ ມີແຕ່ພຣະສົງອົງຄະເຈົ້າ ຊຶ່ງໄດ້ຢູ່ດີແດ່ ເພາະວ່າພວກນັ້ນມີອຳນາດປຸກວັດດ້ວຍດິນຈີ່ ແລະດ້ວຍຫີນ.

---

ໄນ ໑ ມີ ໑໘໔໘, (ນ້ຳໜັກລິວນຶ່ງເຄິ່ງກິໂລ)

## ພົລເມືອງ

ເນື່ອງຈາກດິນດີແລະສິ່ງທີ່ເປັນປໂຍດແກ່ຊີວິດກໍມີມາກມາຍຢ່າງອຸດົມສົມບູນ ພົລເມືອງຂອງພຣະຣາຊອານາຈັກກໍມີຫລາຍເຕັມທີ ຕາມສຳມະໂນຄົວທີ່ເພີ່ມເອົາໃນເວລານັ້ນ ມີຊາຍສະກັນທັນຫາວຖືອາວຸດຣັບໃຊ້ໃນກອງທັບໄດ້ນັ້ນ <u>ມີຫ້າແສນ</u> ຄົນນອກຈາກຜູ້ເຖົ້າຜູ້ແກ່ຊຶ່ງມີມາກມາຍແຕ່ຍັງແຂງແຮງຢູ່ ມີຮອດຜູ້ເຖົ້າຮອດຮ້ອຍປີກໍຍັງສາມາດນັບເຂົ້າໃນຊາຍສະກັນໄດ້ ຖ້າຕ້ອງການເວລາຈຳເປັນປ້ອງກັນປະເທດ. ຂ້າພະເຈົ້າຂໍເວົ້າຕາມຄວາມຈິງອີກວ່າ ພົລເມືອງປະເທດນີ້ມັກຄວາມສງົບແລະບໍ່ມີຄວາມຊຳນິຊຳນານໃນການໃຊ້ອາວຸດ ເຣື່ອງນີ້ອາດວ່າມາຈາກຄວາມແນ່ໃຈຂອງເຂົາເຈົ້າ ເພາະພູມປະເທດຂອງເຂົາເຕັມໄປດ້ວຍພູຜາປ່າເລິກ, ໂສກເຫວຊຶ່ງອ້ອມຮອບໄວ້ທຸກດ້ານ ເພື່ອຕ້ານທານສັດຕຣູອີກ, ເຂົາມີຄວາມຊ່ຽວຊານໃນການແຕ່ງຢາເບື່ອ ພໍແຕ່ຖິ້ມໃສ່ຕາມລຳນ້ຳພຽງເລັກນ້ອຍຢາພິດນັ້ນກໍສາມາດທຳລາຍສັດຕຣູໄດ້.(...)

## ຮີດຄອງປະເພນີ ແລະ ວັທນະທັມຂອງລາວ

ພົລເມືອງມີຂນົບທັມນຽມອັນດີເນື່ອງມາຈາກທັມມະຊາດປະກອບໃຫ້ມາແຕ່ເດີມ. ເຂົາເຈົ້າເປັນຄົນເວົ້ານົວຫົວມ່ວນ, ສອນງ່າຍ, ສລາດ ແລະ ປົກຕິແລ້ວມັກຄວາມສງົບແລະມັກພັກຜ່ອນ ເຂົາເຈົ້າປະພຶດຕົວຕໍ່ຊາວຕ່າງປະເທດຢ່າງລະມ່ອມລະໄມເປັນຢ່າງດີ ມີຄວາມຊື່ສັດສຸຈຣິດບໍ່ມັກສໍ້ໂກງກ່ຽວກັບຊັບສົມບັດ ຫລື ສິ່ງໃດກໍຕາມຊຶ່ງໄດ້ຈາກຊາວຕ່າງປະເທດ ເຄື່ອງຂອງຜູ້ອື່ນເມື່ອເຂົາເກັບໄດ້ແລະເມື່ອເຈົ້າຂອງເດີນມາທັກທວງຮຽກຮ້ອງຂໍຄືນເຂົາກໍສົ່ງໃຫ້ໂດຍດີໂດຍບໍ່ຄິດເອົາຄ່າຮັກສາແຕ່ຢ່າງໃດ ພໍແຕ່ໄດ້ຮັບຄວາມຂອບອົກຂອບໃຈເທົ່ານັ້ນກໍເປັນພໍເຂົາຖືວ່ານ້ຳໃຈອັນດີມີຄຸນຄ່າຫລາຍກວ່າສົມບັດອື່ນ ໆ.

## ພຣະເຈົ້າແຜ່ນດິນ ແລະຣັຖບານພຣະຣາຊອານາຈັກ

ເຈົ້າຊີວິດມີອຳນາດເດັດຂາດເໜືອກົດໝາຍ ບໍ່ຮັບຮູ້ຜູ້ອື່ນວ່າສູງກວ່າພຣະອົງ ພຣະອົງມີສິດເດັດຂາດໃນການປົກຄອງພົລເມືອງແລະໃນດ້ານສາສນາ ດິນແລະນ້ຳເປັນຂອງພຣະອົງຜູ້ດຽວ ພຣະອົງຈະຍົກເທທອດໃຫ້ໃຜກໍສຸດແລ້ວ ແລະພຣະອົງເປັນເຈົ້າກັມມະສິດໝົດທຸກອັນ ໃນສິ່ງທີ່ເກີດມາຈາກຣາສດອນ ບໍ່ມີໃຜຈະສືບມູນກັນໄດ້ຈະເຮັດສັນທະໃຫ້ກັນບໍ່ໄດ້ ໄດ້ຍິນເພິ່ນເວົ້າວ່າ ຊັບສົມບັດຊຶ່ງເຊື້ອສາຍກະສັດແລະເຊື້ອເຈົ້າແນວນາຍຫາມາໄດ້ໃນຊີວິດດ້ວຍການຊຸຫລີຫາດ້ວຍປັນຍານັ້ນ ຈະເທທອດເປັນມູນໃຫ້ແກ່ລູກກໍບໍ່ໄດ້(໑) ຕຳແໜ່ງການເງິນຂອງຄັງແລະສັກດີນາຂຶ້ນກັບພຣະບາດສົມເດັດພຣະເຈົ້າທັງໝົດ ພຣະອົງເອງ

---

(໑) ເຂົ້າໃຈຜິດເວົ້າບໍ່ຖືກ.

ເປັນຜູ້ແຈກຢາຍໜີ້ຄາມພຣະທັຍຂອງພຣະອົງ ແລະບາງທີພຣະອົງກໍເອົາຄືນເຖິງເວລາກ່ຽວກັບຜູ້ທີ່ເຖິງແກ່ກັນ ເມື່ອໃນຄອບຄົວນຶ່ງ ໆ ມີພໍ່ແມ່ຕາຍໄປລູກໄດ້ຮັບແຕ່ເຄື່ອງເຮືອນຂອງຊານເທົ່ານັ້ນ ເຈົ້ານາຍຂ້າຣາຊການເຖິງແກ່ກັນໄປ ລູກສືບໄດ້ແຕ່ເຄື່ອງເຮືອນຂອງຊານເທົ່ານັ້ນ ອັນອື່ນເຮືອນມີຣະດົກອັນມີຄູນຄ່າສູງ ດິນ ໄຮ່ ດິນນາ ຄຳ ເງິນສົດ ແລະອາວຸດຍຸດທະພັນຈຶ່ງເປັນຂອງເຂົ້າເຈົ້ານັ້ນ ໃຜຈະເອົາກໍບໍ່ໄດ້ ໃຜ ໆ ຈະເປັນເຈົ້າກັມມະສິດຕອນດິນທໍ່ໄປມີກໍບໍ່ໄດ້ ເພິ່ນພຽງແຕ່ອະນຸຍາດໃຫ້ພຣະສົງອົງຄະເຈົ້າມີສິດເປັນເຈົ້າຂອງທີ່ດິນທີ່ເພິ່ນຢູ່ເອງປະຈຸບັນເທົ່ານັ້ນ. ທາງຝ່າຍເຈົ້ານາຍ ພຣະເຈົ້າແຜ່ນດິນກໍປັນດິນໃຫ້ຕາມເຫມາະສົມ ພວກນີ້ເມື່ອໄດ້ຮັບສິດປໂຍດເນື້ອດິນແລ້ວກໍໃຫ້ຣາສດອນພົລເມືອງຢູ່ ພວກຣາສດອນທີ່ຢູ່ນັ້ນໄດ້ເອົາຜົນປໂຍດດ້ວຍການເກັບກ່ຽວເປັນລະຍະເທື່ອລະ ໘ ປີ ໖ ປີ ຕົ້ນແບ່ງເຄິ່ງໃຫ້ຂ້າຣາຊການຜູ້ໄດ້ຮັບສິດປໂຍດປີຖ້ວນ ໖ ໃຫ້ພຣະທີ່ນັ່ງ, ວິທີການຢູ່ກິນແລະການປະພຶດຂອງຣາສດອນ ຈຶ່ງກັນແລະກັນໄດ້ເປັນໄປໃນທຳນອງອັນລະຫນ່ອມລະໄມ້ທີ່ສຸດ ການພິດຖຽງແລະການຄຽດຊັງຕໍ່ກັນແລະກັນປາກົດວ່າບໍ່ມີເລີຍ ຄູນພໍ່ສາສນາກຣິສຕຽນຫລາຍທ່ານໄດ້ມາຢູ່ນຳ ພວກປວງຊົນຊາວລາວໄດ້ຫລາຍປີມາແລ້ວ ບໍ່ປາກົດວ່າພວກນີ້ໄດ້ຮູ້ໄດ້ເຫັນໄດ້ຍິນວ່າພວກລາວຜິດກັນຫລືວ່າບໍ່ຖືກຕ້ອງປອງດອງກັນ ຂ້າພະເຈົ້າຂໍເວົ້າຕາມຄວາມຈິງວ່າ ນອກຈາກພວກຣາສດອນລາວພົລເມືອງລາວ ມັກຢູ່ໃນຄວາມສງົບ ຍັງມີກົດຫມາຍພື້ນເມືອງອີກ ຊຶ່ງລົດເຄິ່ງທີ່ສູດຖ້າຜິດກົດຫມາຍແລ້ວກໍເອົາກັນໄປໄຫມເອົາເງິນກັນໂລດ, ບໍ່ແມ່ນແຕ່ສະເພາະແຕ່ພວກຄົນທີ່ຄຽດແຄ້ນຣາຍຄ່າຕໍ່ຜູ້ອື່ນເທົ່ານັ້ນ ແຕ່ພວກທີ່ສະແດງຕົນຕໍ່ປວງຊົນໃຫ້ຮູ້ສຶກວ່າມີຄວາມຫມິ່ນປມາດຕໍ່ບຸກຄະລະຜູ້ໃດຜູ້ນຶ່ງ ຫລືສະແດງວ່າຕົນຜູ້ດີດ້ວຍຄວາມອວດອ້າງ ກໍຍັງປັບໃຫມເຫມືອນກັນ ເມື່ອມີເຣື່ອງເຊັ່ນນີ້ແລ້ວ ພວກກະທຳຜິດຍິນຍອມໄປເສັຽຄ່າປັບໃຫມໂລດໂດຍບໍ່ຕ້ອງການຂຶ້ນໂຮງສານ.

ສັກດີນາອັນສຳຄັນແລະສູງສຸດມີ ໒ ຕຳແຫນ່ງ ຕຳແຫນ່ງທີ່ນຶ່ງ ແມ່ນຕຳແຫນ່ງຂອງມະຫາອຸປຮາດ (ຫລືຮອງພຣະເຈົ້າແຜ່ນດິນ) ( Vice-Roi General ) ຊຶ່ງມີຫນ້າທີ່ກຳກັບການປົກຄອງແຜ່ນດິນຊ່ວຍເຈົ້າຊີວິດໃນທຸກເວລາ ແລະໃນທຸກດ້ານ. ມະຫາອຸປຮາດນີ້ ມີສິດຮຽກເສນາມາປະຊຸມ ເມື່ອເຈົ້າຊີວິດເຖິງສວັນນະຄົດ ມະຫາອຸປຮາດເປັນຜູ້ວ່າຫນ້າທີ່ການແທນພຣະເຈົ້າແຜ່ນດິນ ຈົນກວ່າມີການຣາຊາພິເສກພຣະເຈົ້າແຜ່ນດິນອົງໃຫມ່ຂຶ້ນສເວີຍຣາດແທນ ໃນສະຖານນີ້ເສນາອາມາດທຸກຄົນຕ້ອງຟັງຄວາມເພິ່ນ ນອກຈາກເຈົ້າມະຫາອຸປຮາດແລ້ວຍັງມີ ໔ ອຸປຮາດ ( Vice-Roi ) ອີກທີ່ປົກຄອງຢູ່ ໔ ເຂດ ໃນທົ່ວພຣະຣາຊອານາຈັກ. ຜູ້ໃດກໍມີສິດເທົ່າກັນ ແຕ່ອຸປຮາດທັງ ໔ ນີ້ ກໍບໍ່ໄປຢູ່ເຂດໃຜມັນດອກ ເພິ່ນພາກັນເຕົ້າໂຮມຢູ່ໃນພຣະນະຄອນ ເພື່ອເປັນທີ່ປຶກສາໃຫ້ພຣະບາດສົມເດັດພຣະເຈົ້າເພື່ອປະກອບຂຶ້ນເຫມືອນຄນະຣັຖບານ ສ່ວນການກຳກັບການປົກຄອງແຕ່ລະເຂດແຫ້ ໆ ນັ້ນ ແຕ່ລະອຸປຮາດກໍສົ່ງແຕ່ຢູ່ຮອງໄປປົກຄອງ ຊຶ່ງມີສິດປົກຄອງຝ່າຍພົລເຮືອນແລະຝ່າຍທະຫານອີກ.

ເຂດຕ່າງ ໆ ເຫລົ່ານີ້ມີກອງທະຫານຮັກສາ ເຂດ ມີນາຍທະຫານຣົດແລະນາຍທະຫານມ້າ ຊຶ່ງມີນາຍທະຫານຂອງກອງທັບເປັນຜູ້ບັງຄັບບັນຊາ ແລະຊຶ່ງຂຶ້ນກັບອຸປຮາດຂອງເຂດໂດຍກົງ ຊຶ່ງເປັນຜູ້ມີສິດໃນເຂດນັ້ນຕໍ່ໝູກ ໆກອງທະຫານ ແລະຂຶ້ນຕໍ່ໃສ່ພຣະບາດສົມເດັດພຣະເຈົ້າຢູ່ຫົວໂດຍກົງອີກ ພົນທະຫານທັງໝົດຢູ່ກິນຍອມປະຊາຊົນແຂວງໃພລາວ ໂດຍບໍ່ກ່ຽວເຖິງພຣະຄົງມະຫາສົມບັດພຣະເຈົ້າແຜ່ນດິນ ເຖິງເຊັ່ນນັ້ນກໍດີພົນທະຫານຍິນຍອມຮັບໃຊ້ພົນສ່ວນໃຫຍ່ຂອງພຣະຣາຊອານາຈັກ ໂດຍບໍ່ຄິດຢາກທັກທວງເອົາປໂຍດຕົນ.

ອຸປຮາດອົງປົກຄອງເຂດໃດກໍ່ມີທຸກສິ່ງທຸກຢ່າງເປັນການໃຫ້ກຽດສັກດີນາຂອງເພິ່ນ, ມີທະຫານປະຈຳເພື່ອປົກປັກຮັກສາເພິ່ນເປັນສ່ວນຕົວ, ສ່ວນພຣະຣາຊວັງ, ເມື່ອມີທະຫານແລະກຽດອັນສູງຂອງແຕ່ລະອຸປຮາດແລ້ວ ກໍນັບວ່າການສງ່າຣາສີໄດ້ເພີ່ມຂຶ້ນອີກ. ໃນພຣະຣາຊວັງມີເສນາອາມາດຢ່າງຫລວງຫລາຍຊຶ່ງພວກນີ້ຮັບໃຊ້ຢູ່ໃນພຣະຣາຊວັງ ລໍຖ້າຕຳແໜ່ງເປົ່າຫວ່າງກໍມີ ເພື່ອຈະຂໍຮັບປໂຍດຈາກພຣະບາດສົມເດັດພຣະເຈົ້າ ການຊົງປະທານສິດປໂຍດນີ້ ຕາມປົກຕິ ທາງພຣະຣາຊວັງອາສັຍກຳນົດປີການແລະຄວາມກ້າຫານສລຽວສລາດຂອງຜູ້ຮ້ອງຂໍຮັບສິດປໂຍດນັ້ນ ແຕ່ໂດຍມາກແລ້ວຄວາມຮັກໃຄ່ແລະພໍພຣະທັຍຂອງພຣະເຈົ້າແຜ່ນດິນນັ້ນມີຄຸນຄ່າສູງກວ່າສິ່ງອື່ນ ໆ ແຕ່ຜູ້ແຂ່ງຂັນຮັບສິດປໂຍດນັ້ນ ຈະຊຳນານຊ່ຽວຊານປານໃດກໍຕາມ ຄັນຖ້າບໍ່ໄດ້ຮັບຄວາມຮັກໃຄ່ຈາກພຣະທັຍຂອງພຣະເຈົ້າແຜ່ນດິນແລ້ວກໍນັບວ່າຍາກ. ເຣື່ອງນີ້ບໍ່ມີແຕ່ໃນລາວດອກ ຢູ່ແຫ່ງອື່ນກໍເຊັ່ນດຽວກັນ. ນອກຈາກມະຫາອາມາດແລະອາມາດຊັ້ນຜູ້ໃຫຍ່ນີ້ແລ້ວ ຍັງມີຂ້າຣາຊການອີກຫລາຍຈຳພວກ ຊຶ່ງໃຜກໍ່ມີໜ້າທີ່ຕ່າງ ໆ ກັນເພື່ອຈະບໍ່ໃຫ້ຫລົງກັນວ່າໃຜເປັນໃຜ ແລະສັກດີນາໃດຕໍ່ຊັ້ນໃດນັ້ນ ໃຫ້ເບິ່ງຮູບເງິນຫລືຄຳຊຶ່ງເປັນຮູບຂນາດຕ່າງ ໆ ກັນ ຊຶ່ງມະຫາດເລັກຖືໄປນຳຫລັງເພິ່ນເມື່ອເວລາຖືກວັນຊຸມນຸມຊົນ ຮູບເຫລົ່ານັ້ນຊຶ່ງມີລັກສນະໃຫຍ່ນ້ອຍຕ່າງ ໆ ກັນ ພາໃຫ້ສັງເກດສັກດີນາເປັນຂັ້ນ ໆ ໃຫຍ່ນ້ອຍແຕ່ລະບຸກຄົນ ມະຫາອາມາດອົງທີ ໑ ຫລືຜູ້ເປັນຮອງພຣະເຈົ້າແຜ່ນດິນ ມີສິດປໂຍດແລະສັກດີນາຫລາຍກວ່າຜູ້ອື່ນ ເມື່ອມີການແຫ່ກະບວນອັນທີ່ປະກອບກັບຊ້າງ, ມ້າ ມະຫາອາມາດຜູ້ນັ້ນມີສິດຂຶ້ນສະຖິດເທິງຫລັງຊ້າງຊຶ່ງຖືກປະດັບດ້ວຍເຄື່ອງເອ້ອັນງາມ ການແຫ່ກະບວນດ້ວຍຊ້າງນີ້ກໍບໍ່ມີເລື້ອຍດອກ ເຈົ້າມະຫາອາມາດຈະໃຊ້ສິດຂີ່ເທິງຫລັງຊ້າງເລື້ອຍກໍ່ບໍ່ໄດ້ ບາງທີມີກະບວນແຫ່ໂດຍທາງຍາວເຈົ້າມະຫາອາມາດໄດ້ສະຖິດຂຶ້ນເທິງສະຫລຽງອັນມີລວດລາຍງາມດີປະດັບດ້ວຍແຜ່ນແພເງິນ ແພຄຳມີມະຫາດເລັກຊຶ່ງນຸ່ງເຄື່ອງແບບງາມທີ່ສຸດຕາມໄປ ອາມາດຜູ້ອື່ນແລະຂ້າຣາຊການທຸກຊັ້ນທຸກວັຍໄດ້ຍ່າງທາງຕີນໝົດ ທັງບໍ່ມີຮູບຄຳຫລືເງິນຕິດຕາມໄປດ້ວຍ ເວັ້ນເສັຽແຕ່ຮູບນັ້ນຫາກແມ່ນຂນາດນ້ອຍແລະປົກປິດໄດ້.

ບັດນີ້ເຮົາຈະກ່າວເຖິງພຣະເຈົ້າແຜ່ນດິນເອງ, ອາດຈະບໍ່ມີພຣະເຈົ້າແຜ່ນດິນອົງໃດ ໃນໂລກຫາກຈະຍິ່ງໃຫຍ່ແລະແຂງແຮງກວ່າພຣະອົງ, ມີແຕ່ພຣະເຈົ້າແຜ່ນດິນປະເທດຈີນເທົ່ານັ້ນ ແຕ່ປານນັ້ນພຣະອົງກໍຍັງບໍ່ກົວປານເພິ່ນ ແຕ່ຖ້າມີເຣື່ອງເກີດຂຶ້ນກໍຄາດໄດ້ວ່າ ພຣະອົງກໍຍັງຈະຕໍ່ຕ້ານໄດ້, ເມື່ອມີບັນຫາຕ່າງໆ

ພຣະອົງບໍ່ໄດ້ຕັດສິນຊີ້ຂາດໂດຍພຣະອົງຜູ້ດຽວຈັກເທື່ອ ຈຳຕ້ອງມີໃຫ້ເສນາຄົນນຶ່ງ ເປັນຜູ້ຕາງໜ້າເພື່ອຕິດຕໍ່ກັບຜູ້ທີ່ເກີດພາໃຫ້ມີບັນຫານັ້ນ ທັງນີ້ກໍເພື່ອຈະໄດ້ຮັບສັກກາຣະບູຊາຈາກປວງຊົນ.

ພຣະອົງບໍ່ສູ້ສະເດັດອອກມານອກພຣະຣາຊວັງໄປສູ່ສາຍຕາໄພ່ນອຍຣາສດອນ ເພາະປະສົງຢາກໃຫ້ຣາສດອນນັບຖືຄືພຣະເຈົ້າຫລາຍກວ່າເປັນມະນຸດສາມັນຕາມທັມມະດາ (ພວກເຈົ້າຊີວິດສຍາມ ແລະ ຂເມນກໍປະຕິບັດດັ່ງດຽວກັນ ໃນສມັຍນັ້ນ).

ສົມເດັດພຣະເຈົ້າຈີງຈະເຣີມສິດພິເສດຫລາຍຢ່າງສະເພາະພຣະອົງເອງ ຊຶ່ງຫມາຍເຖິງຄວາມກ້ວາງຂວາງຂອງອຳນາດຂອງພຣະອົງ ສິດນັ້ນຄືມີເຈົ້າຊຶ່ງປົກຄອງຫົວເມືອງຕ່າງ ໆ ກໍຂຶ້ນນຳພຣະອົງ ແລະບັນດາເຈົ້າໃນຣາຊວັງຂອງພຣະອົງເອງ ກໍພ້ອມພຽງກັນສະເດັດເຂົ້າມາສະແດງຄວາມໂຄຣົບນັບຖືພຣະຢູ່ເປັນເນື່ອງນິດ ແລະນັບຖືວ່າພຣະອົງເປັນກະສັດໃຫຍ່ ເຫນືອເກົ້າເຫນືອຂມ່ອມຂອງຫມົດທຸກຄົນ ພ້ອມທັງນຳກາຍບັງຄົມທູນຖວາຍເຄື່ອງບັນນາການຕ່າງ ໆ ສິ່ງທີ່ກ່າວມານີ້ບໍ່ແມ່ນລັກສນະອັນຕ່ຳ ໆ ສາມັນ ຕາມທັມມະດານັ້ນຊີ້ບອກຄວາມສຳຄັນ ແລະອຳນາດຂອງພຣະເຈົ້າແຜ່ນດິນ ເຈົ້າຊີວິດຈີງຮັບທູດຕ່າງປະເທດໃນພຣະທີ່ນັ່ງອັນກ້ວາງຂອງພຣະອົງ : ພຣະອົງສະຖິດຢູ່ເທິງພຣະຣາຊບັນລັງສູງ ຊົງປະດັບເຄື່ອງກຽດຕິຍົດແລະສະແດງຕອບຄວາມໂຄຣົບຂອງທູດເຫລົ່ານັ້ນ ໂດຍຜ່ານໄປທາງຣາຊການທູດຂອງພຣະອົງ ສິ່ງທີ່ພຣະອົງຖືເປັນຄຸນສົມບັດພິເສດ ແມ່ນຄວາມຕອງການຢາກຢູ່ເປັນເອກຣາດເສຣີໂດຍຊົງບໍ່ຮັບຮູ້ໃຜຫມົດ ຈະຢູ່ເຫນືອພຣະອົງໄດ້ ຕົວຢ່າງຄື ເຈົ້າຊີວິດປະເທດສຍາມ ເຈົ້າຊີວິດຕັງແກງ ແລະເຈົ້າຊີວິດຕ່າງ ໆຫລາຍປະເທດອີກ ຊຶ່ງຮັ່ງມີແລະມີເດຊານຸພາບຫລາຍກໍຍັງຈຳເປັນຂຶ້ນກັບພຣະເຈົ້າ ແຜ່ນດິນຈີນຢູ່ ຂ້າພະເຈົ້າຂໍເວົ້າຕາມຈິງວ່າ ນັກປວັດສາດໃຫຍ່ໆ ໄດ້ປັນປັນວ່າ ເຈົ້າຊີວິດລາວໄດ້ຂຶ້ນກັບເຈົ້າຊີວິດຕັງແກງ ໄດ້ຖວາຍເຄື່ອງບັນນາການໃຫ້ທຸກ ໆ ປີ. ເຣື່ອງນີ້ຂ້າພະເຈົ້າຍັງຢາກມີຂໍ້ສົງສັຍຢູ່. ອາດຈະແມ່ນໃນສມັຍກ່ອນ ໆ ນັ້ນອາດມີແທ້ ເພາະເຈົ້າຊີວິດລາວ, ພະມ້າ, ສຍາມ ແລະ ຕັງແກງ ກໍຍັງຈຳເປັນໄດ້ຮັບຮູ້ເຈົ້າມະຫາຈັກພັດຈີນເປັນເຈົ້າຊີວິດຂອງຕົນເປັນເວລາດົນນານແລ້ວ.

ພວກນັກປວັດສາດເຫລົ່ານັ້ນຍັງໄດ້ຂຽນໄວ້ວ່າ ແຕ່ໃນປາງກ່ອນເຈົ້າຊີວິດລາວໄດ້ຖວາຍເຄື່ອງບັນນາການແກ່ພຣະເຈົ້າແຜ່ນດິນຈີນ ເຊັ່ນດຽວກັນກັບພຣະເຈົ້າແຜ່ນດິນໄທ ແລະພະມ້າ ແລະຕັງແກງ ຊຶ່ງຮັບຮູ້ເດຊານຸພາບຂອງພຣະເຈົ້າແຜ່ນດິນຈີນ ແຕ່ວ່າໃນປັດຈຸບັນນີ້ເມື່ອພຣະເຈົ້າແຜ່ນດິນລາວ ໄດ້ຊົງເຫັນວ່າປ່າໄມ້ພູເຂົາຫ້ວຍຮອງແລະເຫວເປັນກຳແພງທີ່ດີເພື່ອປ້ອງກັນທີ່ດີຂອງພຣະຣາຊອານາຈັກແລ້ວ ກໍເລີຍບໍ່ຍອມຂຶ້ນກັບໃຜຫມົດກຳລັງຄົນທີ່ຫ້າວຫັນຂອງລາວເອງ ພ້ອມດ້ວຍຄວາມຊ່ວຍເຫລືອຂອງເຜົ່າຣາສດອນຕາມພູເຂົາພວກລາວສາມາດຕ້ານທານສັດຕູໄດ້ແລະຢູ່ກິນໃນອິສຣະໂດຍເສຣີ ຊຶ່ງເຂົາຕ້ອງການໄດ້ແລ້ວແລະຊຶ່ງເຂົາມີຢູ່ໃນເວລານີ້. ຕົວຢ່າງໃນປີ ຄ.ສ.໑໖໔໑ ພຣະອົງໄດ້ທຳການຕ້ອນຮັບພວກຣາຊທູດແລະສາສນາທູດຊາວໂຮລອງຢູ່ທີ່ເດີນທາດຫລວງ.

ໃນປີ ຄ.ສ.໑໕໖໐ ພຣະອົງໄດ້ສົ່ງທູດໄປຈະເຣີນທາງພຣະຣາຊໄມຕີ ກັບ ພຣະເຈົ້າກຸງສີອະຍຸທຍາ ແລະໄດ້ທຳສ້າງພຣະເຈດີສີສອງຮັກ ໄວ້ທີ່ເມືອງດ່ານຊ້າຍ ເພື່ອເປັນຫລັກເຂດແດນລະຫວ່າງປະເທດລາວ ກັບປະເທດໄທ.

ໃນການສ້າງພຣະເຈດີສີສອງຮັກອັນເປັນຫລັກໝາຍເຂດແດນແລະຄວາມສຳພັນທະໄມຕີລະຫວ່າງ ປະເທດທັງສອງນີ້ ທາງກຸງສີສັດຕະນາຄະນະຫຸດ ໄດ້ແຕ່ງໃຫ້ ພຣະມະຫາອຳມາດ ຊື່ ອົງຈັນທະປະສິດທິ ຣາດພັກດີ ແລະໝື່ນຊຸປະລີ ເປັນປະທານພ້ອມດ້ວຍພຣະສົງເຈົ້າຣາຊາຄະນະອີກຫລາຍຕົນຄື: ພຣະອຸປະລີເຖຣະ ໑ ພຣະອະຣິຍະກັສປະ ໑ ພຣະມະຫາທັມມະເສນາບໍດີ ໑ ພຣະພຸທວິລາສມະຫາເຖຣະ ໑ ພຣະສັດທັມມະຣັງສີມະຫາເຖຣະ ໑ ພຣະວິຣິຍາທິກະມຸນີ ໑ ຝ່າຍກຸງສີອະຍຸທຍາ ໄດ້ແຕ່ງໃຫ້ພຣະຍາພິນເທບ ນາຍົກ ເປັນປະທານ ພ້ອມດ້ວຍພຣະສົງ-ເຈົ້າຣາຊາຄະນະ ຄື ພຣະຄຣູບໍຣົມຈະຣິຍາ ໑ ພຣະອະຣິຍະມຸນີ ໑ ພຣະສີລະວິສຸດທິຊຸຕມະ ໑ ພຣະຄຣູສຸເມທາຈານ ໑ ພຣະມະຫາສັດທັມມາຖຸລະ ໑ ພຣະມະຫາພົມມະສານ ໑ ພຣະມະຫາຣາຊມຸນີ ໑ ນອກຈາກນີ້ກໍມີພຣະສົງບໍຣິວານອີກຝ່າຍລະ ໓໐ ຕົນ ມະຫາອຳມາດແລະພຣະສົງທັງສອງປະເທດມາປະຊຸມກັນຢູ່ທີ່ພຣະທາດເຈດີສີສອງຮັກ ຂອດພັທສີມາວັດພຣະທາດສີສອງຮັກໃຫ້ເປັນເອກ໌ສີມາອັນດຽວກັນ ແລ້ວອ່ານພຣະຣາຊໂອງການຄຳສັດຍາທິຖານຂອງພຣະມະຫາກະສັດທັງສອງ ປະເທດວ່າດັ່ງນີ້:

"ສົມເດັດພຣະມະຫາກະສັດເຈົ້າ ຝ່າຍກຸງສີສັດຕະນາກ ສົມເດັດພຣະມະຫາກະສັດເຈົ້າ ຝ່າຍກຸງສີອະຍຸທຍາມະຫາດິລົກ ຈຶ່ງມີພຣະຣາຊອົງສາຈາກັບ ນາງອັຄ ມະເຫສີເທວີທັງສອງຝ່າຍ ໃຫ້ເປັນພຣະຣາຊໄມຕີໂດຍບໍຣົມປະເພນີ ເພື່ອຈະສືບເຊື້ອສຸຣິວົງ ແລະຍາຕິວົງສຳພັນທຸມິດຕະຊຸສາຣົມມະນະເພື່ອຈັກໃຫ້ເປັນບໍຣົມສຸກສວັສດີເປັນປໂຍດແກ່ສົມມະພານມະນາຈານເຈົ້າຊາວປະຊາຣາສດອນທັງຫລາຍຕາບຕໍ່ເທົ້າຖວນກັບນັ້ນເປັນເຄົ້າເປັນປະທານ ສາຣະຄະດີໃນມະຫາປະຖະພີຄີຣີຕະໃນຣອມຫ້ວຍຣາວເຂົາຣະກະວະສີຣະວຣ(໑) ຂໍຈົ່ງເປັນເອກະສີມາມຸ່ນທົ່ນອັນດຽວກັນໃຫ້ກຽງກົມງາມມົ່ນທົ່ນເທົ້າຮອດພົງພັນລູກເຕົ້າຫລານເຫລັນ ຢ່າໄດ້ຊິງຊວງລວງແດນແຜນທຽາຢ່າໄດ້ກະທຳໂລບລຽວແກ່ກັນ ຈົນສ້ຽງພຣະອາທິດຕົກລົງສູ່ເໜືອແຜ່ນດິນອັນນີ້ເຖິງ".

ເມື່ອອ່ານພຣະຣາຊໂອງການນີ້ແລ້ວ ພຣະສົງຄະເຈົ້າທັງສອງຝ່າຍແລະມະຫາອຳມາດກໍຢາດນ້ຳພຣະພິພັດສັດຈາລົງສູ່ມະຫາປະຖະພີ ໃຫ້ເປັນສັກຂີພຍານ ພຣະທາດສີສອງຮັກນີ້ ໄດ້ລົງມືສ້າງແຕ່ປີ ໑໕໖໐ ຈົນເຖິງປີ ໑໕໖໓ ຈຶ່ງແລ້ວບໍຣະບວນ ແລະເຂດແດນແຫ່ງປະເທດທັງສອງວ່າ ແຕກແຕ່ພຣະທາດນີ້ໄປເຖິງນ້ຳນ່ານແລະຂອງໄກທ່ີກັນ ຈຶ່ງເອົາພຣະທາດນີ້ເປັນຫລັກເຂດແດນປະເທດ.

---

(໑) ຣະກະວະສີຣະວຣ ໝາຍຄວາມວ່າຢ່າງໃດບໍ່ຊາບ.

ສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ ມີພຣະຣາຊບຸດແລະພຣະຣາຊທິດາປະສູດຈາກເອກອັຄມະເຫສີ ມີ ອົງຄື ເຈົ້າຣາຊບຸດ ໑ ເຈົ້ານາງກຸມມາຣີ ໑ ເຈົ້ານາງສຸມັງຄະລາ ໑.

ໃນສມັຍນັ້ນພວກຫໍ້ໄດ້ລົງມາຕີເອົາເມືອງຊຽງຮຸ່ງ ເຈົ້າອິນທະກຸມມານ ຜູ້ຄອງເມືອງຊຽງຮຸ່ງ ຈຶ່ງພານ້ອງສາວຊື່ ນາງຈັນທະກຸມມາຣີ ໜີລົງມາເພິ່ງພຣະບໍຣົມໂພທິສົມພານພຣະເຈົ້າສຸຣິຍະວົງສາທັມມິກະຣາດ ທີ່ນະຄອນວຽງຈັນ ເຈົ້າຣາຊບຸດ ຈຶ່ງໄດ້ອະພິເສກກັບນາງຈັນທະກຸມມາຣີ ນ້ອງສາວຂອງເຈົ້າອິນທະກຸມມານ ແລະໄດ້ບຸດ ໒ ຄົນຄື ເຈົ້າກິ່ງກິສຣາດ ໑ ເຈົ້າອິນທະໂສມ ໑ ສ່ວນເຈົ້າອິນທະກຸມມານ ເຈົ້ານະຄອນຊຽງຮຸ່ງນັ້ນ ມາໄດ້ກັບນາງກໍ່າ ຈຶ່ງໄດ້ບຸດຄົນນຶ່ງຊື່ວ່າ ເຈົ້າໜ່ອມນ້ອຍ ຫລື ເຈົ້າອົງນອຍ ພາຍລຸນມາຄົນທັງຫລາຍຮ້ອງວ່າ ເຈົ້າອົງນົກ.

ຕໍ່ມາເຈົ້າຣາຊບຸດ ພຣະຣາຊໂອຣົດຂອງພຣະເຈົ້າສຸຣິຍະວົງສາທັມມິກະຣາດ ໄດ້ໄປທຳມິດສາຈານກັບພະຣິຍາຂອງທາວໂກ ຜູ້ເປັນມະຫາດເລັກຂອງພຣະຣາຊບິດາ ທ້າວໂກໄດ້ຖວາຍດີກາຟ້ອງເຈົ້າຣາຊບຸດ ສົມເດັດພຣະຣາຊບິດາໄດ້ສືບສວນເບິ່ງ ເຫັນເປັນຄວາມຈິງແລ້ວ ກໍໃຫ້ເອົາພຣະຣາຊບຸດໄປປະຫານເສັຽທີ່ພາລາງ ບໍ່ໃຫ້ຄົນອື່ນທັງຫລາຍຖືເອົາເປັນແບບຢ່າງຕໍ່ໄປ.

ສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ ສເວີຍຣາຊສົມບັດມາເຖິງປີ ຄ.ສ.໑໖໙໐ (ຈຸລສັກຣາດ ໑໐໕໒)(໑) ກໍສະເດັດສູຣະຄົດ ຮວມພຣະຊົນໄດ້ ໗໒ ປີ ຢູ່ໃນຣາຊສົມບັດມານເຖິງ ໕໗ ປີ ບໍ່ມີຣາຊໂອຣົດສືບແທນເມືອງ.

---

(໑) ບາງສະບັບວ່າ ຈຸລສັກຣາດ ໑໐໕໗.

## ບົດທີ ໖

-x-

## ປະເທດລາວແບ່ງເປັນ ໓ ອານາຈັກ

-------=== O ===-------

ເມື່ອສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ ສະເດັດສູຣະຄົດແລ້ວ ຕໍ່ມາອີກ ໘ ປີຄືເຖິງປີ ຄ.ສ.໑໖໙໘ ປະເທດລາວທີ່ກວ້າງໃຫຍ່ໄພສານ ກໍໄດ້ແບ່ງແຍກກັນອອກເປັນ ໓ ອານາຈັກ ຄື: ອານາຈັກລ້ານຊ້າງຫລວງພຣະບາງ ໑ ອານາຈັກລ້ານຊ້າງວຽງຈັນ ໑ ອານາຈັກນະຄອນຈຳປາສັກ ໑ ດ້ວຍເຫດດັ່ງຈະກ່າວຕໍ່ໄປນີ້:

### ໑. ອານາຈັກລ້ານຊ້າງວຽງຈັນ

### (໑)ຣັຊການພຣະເຈົ້າອົງຫລໍ່

----== O =====

ເມື່ອສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດສູຣະຄົດແລ້ວ ບໍ່ມີຣາຊໂອຣົດຈະສືບແທນເມືອງ ມີແຕ່ພຣະຣາຊນັດດາ ໒ ອົງນ້ອຍ ໆ ຄື ເຈົ້າກິ່ງກິສກຸມານ ແລະ ເຈົ້າອິນທະໂສມ ເວລານັ້ນພຣະຍາເມືອງຈັນເຊິ່ງເປັນເສນາບໍດີຜູ້ໃຫຍ່ ໄດ້ຍາດຊີງເອົາຣາຊສົມບັດຂຶ້ນເປັນເຈົ້າແຜ່ນດິນໃນປີ ຄ.ສ.໑໖໙໐ (ຈຸລສັກຣາດ ໑໐໕໒) ນັ້ນເອງ ພຣະຍາເມືອງຈັນຈະຮັບເອົານາງເຈົ້າສຸມັງຄະລາພຣະຣາຊທິດຂອງສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດເປັນພະຣິຍາຂອງຕົນ ເຈົ້າສຸມັງຄະລານັ້ນເປັນແມ່ໝ້າຍ ມີຣາຊບຸດຢູ່ ອົງນຶ່ງນາມວ່າ ເຈົ້າອົງຫລໍ່ ແລະເວລານັ້ນກໍກຳລັງທົ່ງຄັນຢູ່ອີກ(໑) ເຫດນັ້ນ ນາງຈຶ່ງບໍ່ຍອມເປັນພະຣິຍາຂອງພຣະຍາເມືອງຈັນ ພຣະຍາເມືອງຈັນມີຄວາມຄຽດແຄນ ຄິດຈະກຳຈັດເອົາເຈົ້າອົງຫລໍ່ແລະເຈົ້ານາງສຸມັງຄະລາເສັຽ ເສນາອາມາດໝູ່ນຶ່ງທີ່ເປັນຝັກຝ່າຍຂອງເຈົ້າຫລໍ່ ຈຶ່ງລັກເອົາເຈົ້າອົງຫລໍ່ໜີໄປຢູ່ເມືອງພານພູຊົນ(໒) ສ່ວນເຈົ້ານາງສຸມັງຄະລາ ໄດ້ໜີໄປເພິ່ງຢູ່ນຳຍາດພີ່ນ້ອງຂອງພຣະຄຣູຍອດແກວ ວັດໂພນສະເມັກ ໃນເດືອນ ໓ ແຮມ ໖ ຄ່ຳ ປີຈຸລສັກຣາດ ໑໐໕໒ ນັ້ນເອງ.

ຝ່າຍພຣະຍາເມືອງຈັນເຫັນຄົນນັບຖືພຣະຄຣູຍອດແກວຫລາຍກໍຄິດຈະກຳຈັດພຣະຄຣູຍອດແກ້ວເສັຽ ໃຫ້ໝົດສ້ຽນໝາມສັດຕູ ທ່ານພຣະຄຣູຮູ້ກ່ອນ ຈຶ່ງໄດ້ພາອອກຕົນຍາດໂຍມຂອງຕົນປະມານ ໓໐໐໐ ຄົນ ພ້ອມດ້ວຍນາງສຸມັງຄະລາ ໜີຈາກວຽງຈັນລ່ອງລົງໄປຕາມ ນ້ຳຂອງ ໄປເຖິງບ້ານງິ້ວພັນລຳສົມສນຸກກໍພາຍາດໂຍມຂຶ້ນພັກເຊົາຢູ່ທີ່ນັ້ນ ສ່ວນພຣະນາງເຈົ້າສຸມັງຄະລານັ້ນໄດ້ໄປລີ້ຊ່ອນຢູ່ທີ່ພູສະງົ້ຕຳຄຳແລ້ວເລີຍປະສູດໂອຣົດຢູ່ທີ່ນັ້ນອົງນຶ່ງຂນານນາມວ່າ ເຈົ້າໜໍ່ກະສັດ.

---

(໑) ສາມີຂອງພຣະນາງສຸມັງຄະລາ ຈະແມ່ນໃຜບໍ່ຊາບ ແລະຄົງຖືກຂ້າຕາຍໃນເວລາພຣະຍາເມືອງຈັນຍາດຊີງເອົາຣາຊສົມບັດ. (໒) ເມືອງພານພູຊົນຢູ່ໃນເຂດອຳເພີບ້ານຜືຈັງຫວັດອຸດອນທານີທຸກວັນນີ້.

ຝ່າຍພຣະຍາເມືອງຈັນຄອງເມືອງມາໄດ້ ໖ ເດືອນກໍຖືກພັກພວກຂອງເຈົ້າອົງຫລໍ່ ຍົກທັບມາຕີກອງທະຫານຂອງເຈົ້າອົງຫລໍ່ຈັບພຣະຍາເມືອງຈັນໄດ້ ກໍຂ້າເສັຽ ແລ້ວອຸບພິເສກເຈົ້າອົງຫລໍ່ ຂຶ້ນເປັນເຈົ້າແຜ່ນດິນ ເຈົ້າອົງຫລໍ່ສເວີຍຣາດມາໄດ້ ໕ ປີກໍຖືກເຈົ້ານັນທະຣາດຈັບປະຫານຊີວິດເສັຽ.

## (໒)ຣັຊການເຈົ້ານັນທະຣາດ

ຝ່າຍເຈົ້ານັນທະຣາດຜູ້ເປັນໂອຣົດຂອງເຈົ້າປຸ ທີ່ຫນີໄປຢູ່ເມືອງນະຄອນແຕ່ກ່ອນນັ້ນ ຄັນໄດ້ຊາບຂ່າວການວຸ້ນວາຍດັ່ງນັ້ນ ກໍຍົກທັບຂຶ້ນມາຕີວຽງຈັນ ຈັບເຈົ້າອົງຫລໍ່ໄດ້ ກໍຂ້າເສັຽ ແລ້ວຂຶ້ນເປັນເຈົ້າແຜ່ນດິນໃນປີ ຄ.ສ.໑໖໙໕ ເຈົ້ານັນທະຣາດຄອງເມືອງມາໄດ້ ໓ ປີ ຄືເຖິງປີ ຄ.ສ. ໑໖໙໘ ກໍຖືກເຈົ້າໄຊອົງເວ້ຈັບໄດ້ແລະປະຫານຊີວິດເສັຽ.

## (໓)ຣັຊການພຣະໄຊອົງເວ້ (ພຣະໄຊຍະເຊດຖາທິຣາດທີ ໒)

ຝ່າຍເຈົ້າໄຊອົງເວ້ (ໂອຣົດຂອງທ້າວຊົມພູ) ທີ່ຢູ່ເມືອງເວ້ປະເທດແກວ ຄັນໄດ້ຊາບຂ່າວວ່າ ປະເທດບ້ານເມືອງຂອງຕົນເກີດອົລຫົນວຸ້ນວາຍ ກໍພາສມັກພັກພວກຍົກຂຶ້ນມາຕີເອົາວຽງຈັນ ຈັບພຣະເຈົ້ານັນທະຣາດຂ້າເສັຽ ແລ້ວກໍຂຶ້ນສເວີຍຣາຊສົມບັດເປັນເຈົ້າແຜ່ນດິນໃນປີ ຄ.ສ.໑໖໙໘ ນັ້ນເອງ ເສນາອາມາດທັງຫລາຍຖວາຍພຣະນາມວ່າ ພຣະໄຊຍະເຊດຖາທິຣາດທີ ໒ ແລ້ວພຣະອົງຈຶ່ງຕັ້ງທ້າວລອງ ອະນຸຊາຂອງພຣະອົງໃຫເປັນເຈົ້າມະຫາອຸປະຣາດຂຶ້ນໄປຄອງນະຄອນຫລວງພຣະບາງ.

ເຖິງປີ ຄ.ສ.໑໗໐໕ (ຈຸລສັກຣາດ ໑໐໖໗) ສົມເດັດພຣະໄຊຍະເຊດຖາທິຣາດທີ ໒ ໄດ້ມີພຣະຣາຊອາດຍາເຊີນເອົາພຣະບາງລົງມາໄວ້ນະຄອນວຽງຈັນ ເຊີນພຣະບາງອອກຈາກວັດ ວິຊຸນມະຫາສະຖານເມື່ອວັນພະຫັດ ຍາມໃກ້ທ່ຽງ ເດືອນ ໓ ເພັງ ໃສ່ເຮືອລ່ອງລົງມາເຖິງນະຄອນວຽງຈັນ ເມື່ອເດືອນ ໕ ແຮມ ໕ ຄ່ຳ ວັນອັງຄານ ຍາມກອງງາຍ ແລ້ວອາຣາທນາພຣະບາງເຈົ້າໄປສະຖິດໄວ້ ວັດປ່າສັກຫລວງ.

ໃນເວລາພຣະໄຊຍະເຊດຖາທິຣາດທີ ໒ ຂຶ້ນສເວີຍຣາດນັ້ນເຈົ້າກິງກິສຣາດ ກັບ ເຈົ້າອິນທະໂສມ ແລະ ເຈົ້າອົງຄຳ ຫລານພຣະເຈົ້າສຸຣິຍະວົງສາທັມມິກະຣາດ ຢ້ານພຣະໄຊຍະເຊດຖາທິຣາດຈະທຳຣ້າຍແກ່ຕົນ ຈຶ່ງພາເອົາພົນເສນາຂອງຕົນຫນີໄປຢູ່ເມືອງພົງ ສ່ວນເຈົ້າອິນທະໂສມນັ້ນໄດ້ຫນີໄປຢູ່ເມືອງແພ່.

ເຖິງປີ ຄ.ສ.໑໗໐໖ (ຈຸລສັກຣາດ ໑໐໖໘) ເຈົ້າກິ່ງກິສຣາດ ກັບເຈົ້າອົງຄຳ ທີ່ຢູ່ເມືອງພົງ ໄດ້ຍົກກອງທະຫານລົງມາຕີເອົານະຄອນຫລວງພຣະບາງ ທ້າວລອງຈັດການປ້ອງກັນເມືອງໄວ້ບໍ່ໄດ້ກໍແຕກຫນີລົງມາວຽງຈັນ ສ່ວນເຈົ້າກິ່ງກິສຣາດ ແລະ ເຈົ້າອົງຄຳຄັນໄດ້ຫລວງພຣະບາງແລ້ວກໍຍົກກຳລັງລົງມາຕີວຽງຈັນ ສົມເດັດພຣະໄຊຍະເຊດຖາທິຣາດທີ ໒ ເຫັນວ່າຈະຕ້ານທານກອງທະຫານຂອງຊາວຫລວງພຣະບາງໄວ້ບໍ່ໄດ້ ຈຶ່ງແຕ່ງຣາຊສານໃຫ້ຣາຊທູດ ຖືລົງໄປຖວາຍພຣະເພທະຣາຊາເຈົ້າແຜ່ນດິນກຸງສີອະຍຸທຍາ ໃຫ້ຍົກທະຫານລົງມາຊອຍ.

ເຖິງປີ ຄ.ສ.໑໗໐໗ (ຈຸລສັກຣາດ ໑໐໖໙) ພຣະເພທະຣາຊາ ເຈົ້າແຜ່ນດິນອະຍຸທຍາ ໄດ້ຍົກທັບຂຶ້ນມາເລົ້າໂລມກະສັດທັງສອງນະຄອນໃຫ້ຖືກຕ້ອງຄອງກັນ ເມື່ອຖືກຕ້ອງຄອງກັນແລ້ວ ກະສັດທັງສອງນະຄອນຈຶ່ງໄດ້ຕົກລົງແບ່ງປັນເຂດແດນເມືອງກັນ ຄື ຕັ້ງແຕ່ປາກນ້ຳເຫືອງຂຶ້ນໄປໃຫ້ເປັນເຂດແດນນະຄອນຫລວງພຣະບາງ ໃຕ້ນ້ຳເຫືອງລົງມາໃຫ້ເປັນເຂດແດນນະຄອນວຽງຈັນ ແຕ່ນັ້ນມາປະເທດລາວຈຶ່ງໄດ້ແບ່ງແຍກເປັນສອງຣາຊອານາຈັກກ່ອນ ຄື ອານາຈັກລ້ານຊ້າງຫລວງພຣະບາງ ແລະ ອານາຈັກລ້ານຊ້າງວຽງຈັນ (ຄັນຕໍ່ມາເຖິງປີ ຄ.ສ.໑໗໑໓ (ຈຸລສັກຣາດ ໑໐໗໕) ທາງນະຄອນຈຳປາສັກ ກໍໄດ້ແຍກອອກເປັນອານາຈັກນຶ່ງຕ່າງຫາກດັ່ງຈະກ່າວຕໍ່ໄປໃນບັ້ນທີ່ກ່າວດ້ວຍອານາຈັກຈຳປາສັກ).

ສົມເດັດພຣະໄຊຍະເຊດຖາທິຣາດທີ ໔ ຄອງເມືອງມາເຖິງປີ ຄ.ສ.໑໗໐໙ (ຈຸລສັກຣາດ ໑໐໗໑) ພຣະບໍຣົມຣາຊາຜູ້ເປັນເຈົ້າເມືອງນະຄອນ ໄດ້ທຳການຂັດແຂງບໍ່ມາອ່ອນນ້ອມ ແລ້ວພຣະບໍຣົມຣາຊາໄດ້ຍົກທັບຂຶ້ນມາຕີເຂດແດນວຽງຈັນ ຈົນເຖິງເມືອງວຽງຄຸກ ແລະ ເມືອງຊາຍຟອງ ແຕ່ຖືກກອງທະຫານຊາວວຽງຈັນ ຕີແຕກຖອຍຄືນໄປ ຕໍ່ມາເຖິງປີ ຄ.ສ.໑໗໑໕ ພຣະບໍຣົມຣາຊາຕາຍພຣະໄຊຍະເຊດຖາທິຣາດອົງເວ ຈຶ່ງໄດ້ນະຄອນພະນົມ ແລ້ວຕັ້ງທ້າວຄຳສິງ ລູກເຂີຍຂອງພຣະບໍຣົມຣາຊາ ໃຫ້ເປັນເຈົ້າເມືອງແທນສ່ວນທ້າວກູ່ແກ້ວ ລູກຊາຍຂອງພຣະບໍຣົມຣາຊານັ້ນ ໄດ້ໜີລົງໄປຢູ່ນະຄອນຈຳປາສັກ.

ສົມເດັດພຣະໄຊຍະເຊດຖາທິຣາດທີ ໔ ສເວີຍຣາຊສົມບັດມາເຖິງປີ ຄ.ສ.໑໗໓໐ (ຈຸລສັກຣາດ ໑໐໙໒) ກໍສະເດັດສູຣະຄົດໄປ.

## (໔) ຣັຊການພຣະເຈົ້າສີຣິບຸນຍະສານ

ເດືອນ ໖ ເພັງ ປີຈໍ ຈຸລສັກຣາດໄດ້ ໑໐໙໒ (ຄ.ສ.໑໗໓໐) ເສນາອາມາດຣາຊນຸນຕີທັງຫລາຍໃນພຣະນະຄອນວຽງຈັນຈຶ່ງພ້ອມກັນຊຸບພິເສກເຈົ້າອົງບຸນ ພຣະຣາຊໂອຣົດຂອງພຣະໄຊຍະເຊດຖາທິຣາດທີ ໔ ຂຶ້ນເປັນເຈົ້າແຜ່ນດິນໃນນະຄອນວຽງຈັນຖວາຍພຣະນາມວ່າ ພຣະມະຫາບຸນຍະໄຊຍະເຊດຖາທິຣາດແຕ່ຄົນທັງຫລາຍເອີ້ນວ່າ ພຣະເຈົ້າສີຣິບຸນຍະສານ ແລ້ວທຳຊຸປຣາຊພິເສກເຈົ້າຄວງໜ້າ ພຣະອະນຸຊາຂຶ້ນເປັນເຈົ້າອຸປຣາດ.

### ພຣະບໍຣົມຣາຊາກູ່ແກ້ວເປັນກະບົດ

ຝ່າຍທ້າວກູ່ແກ້ວ ບຸດພຣະບໍຣົມຣາຊາ ເຈົ້າເມືອງນະຄອນທີ່ໜີໄປຢູ່ຈຳປາສັກນັ້ນ ຄັນໄດ້ຊາບວ່າອ້າຍເຂີຍຂອງຕົນໄດ້ເປັນເຈົ້າເມືອງ ກໍມີຄວາມເສັຽໃຈ ຈຶ່ງຂຶ້ນມາທາງນ້ຳເຊບັ້ງໄຟ ທ່ຽວຊັກຊວນເອົາພົລເມືອງ ເມືອງເຊກະຕາກ, ເຊກະບອງ, ເມືອງວັງ, ຊຽງຮົ່ມ, ຜາບັງ, ຄຳເກີດ, ຄຳມ່ວນ, ເຂົ້າເປັນພັກພວກໄດ້ຫລາຍແລ້ວ ກໍຕັ້ງຂັດແຂງຢູ່ ທ້າວຄຳສິງ ເຈົ້າເມືອງນະຄອນຜູ້ເປັນອ້າຍເຂີຍກໍບໍ່ສາມາດກຳຣາບພ່າບແພ້ໄດ້ ດັ່ງນັ້ນ ທ້າວຄຳສິງ ຈຶ່ງແຕ່ງໃຫ້ທ້າວມະຫາໄຊເປັນທູດເອົາຊ້າງພາຍ ໔ ຕົວນໍແຣດ ໔ ໜ່ວຍ ແລະເງິນ ໔໐ ແທ່ງ ລົງໄປຖວາຍເຈົ້າພາພູຊຸມ ປະເທດແກວ ເພື່ອຂໍເອົາທະຫານ



ພຣະເຈົ້າສີຣິບຸນຍະສານ

ແກວມາຊ່ອຍພາບທ້າວກູ່ແກ້ວ ແລ້ວທ້າວມະຫາໄຊກໍລາກັບມາກ່ອນ ຝ່າຍພຣະເຈົ້າແຜ່ນດິນແກວ ເມືອງພູຊ ກໍຈັດແຈງແຕ່ງໃຫ້ທະຫານແກວ ໒.໐໐໐ ຄົນຂຶ້ນມາຊ່ອຍ ພໍມາເຖິງເມືອງຄຳເກີດ ທ້າວກູ່ແກ້ວຈຶ່ງໃຫ້ຂ້າຣາຊການຜູ້ນຶ່ງ ກັບບ່າວໄພ່ ໑໐໐ ຄົນ ເອົາຊ້າງພາຍຕົວ ໑ ໄປຕ້ອນຮັບ ແລ້ວຕົວະທະຫານແກວວ່າພວກຕົນເປັນບ່າວຂອງທ້າວມະຫາໄຊໆໃຫ້ມາຮັບຕ້ອນ ຂ້າຣາຊການຜູ້ນັ້ນກໍພາທະຫານແກວເຂົ້າຫາທ້າວກູ່ແກ້ວ ທ້າວກູ່ແກ້ວໄດ້ທະຫານແກວ ໒.໐໐໐ ຄົນແລະລາວ ໓.໐໐໐ ຄົນເປັນກຳລັງແລ້ວກໍຍົກມາຕີເມືອງນະຄອນ (ທ່າແຂກເກົ່າ) ທ້າວຄຳສິງ ເຈົ້າເມືອງນະຄອນສູ້ບໍ່ໄດ້ ຈຶ່ງຂ້າມໄປຕັ້ງຢູ່ດົງເຊກາ ທາງທິດຕາເວັນຕົກເມືອງ ແລ້ວແຕ່ງມ້າໃຊ້ຂຶ້ນມາທູນພຣະເຈົ້າສີຣິບຸນຍະສານ ໃນປີ ຈຸລສັກຣາດ ໑໑໘໖ (ຄ.ສ.໑໘໒໔) ຍົກລົງໄປຕີແກວທີ່ເມືອງນະຄອນ ພວກແກວໄດ້ທຳແພໄມ້ເຮັ້ຽເປັນຂົວຂ້າມນ້ຳຂອງມາຮົບລາວທາງຝາກໃນ ພຣະຍາຊຽງສາແຕ່ງທະຫານລາວເອົາເຮືອຂ້າມ ໄປລັດຢູ່ທາງໃຕ້ຫາດກອງ ໑ ເມື່ອພວກແກວກຳລັງໄຕ່ຂົວຂ້າມມານັ້ນທະຫານລາວກໍລົງໄປຕັດເຊືອກແພທາງສົ້ນຝັ່ງໃນ ແພກໍຂາດໄຫລລົງໄປເປີຫາດ ກອງທະຫານລາວຈຶ່ງຫຸ້ມຂ້າຟັນພວກແກວຕາຍຢູ່ກັບຫາດນັ້ນເກືອບໝົດ (ຫາດນັ້ນຈຶ່ງໄດ້ເອີ້ນວ່າ ຫາດແກວກອງມາຈົນເຖິງທຸກວັນນີ້) ພວກແກວທີ່ເຫລືອຕາຍກໍແຕກໜີໝົດ ສ່ວນທ້າວກູ່ແກ້ວນັ້ນ ພຣະຍາຊຽງສາຈັບໄດ້ ຈຶ່ງເອົາມາຕັ້ງໃຫ້ເປັນເຈົ້າເມືອງນະຄອນແລ້ວພຣະຍາຊຽງສາກໍພາເອົາທ້າວຄຳສິງກັບຄອບຄົວແລະບ່າວໄພ່ຊາວເມືອງນະຄອນ ໓.໔໐໐ ຄົນຂຶ້ນມາວຽງຈັນ ເຫດການທາງໃຕ້ກໍສງົບແຕ່ນັ້ນມາ.

## ພຣະວໍຣະຣາດກະບົດ

ຕໍ່ມາເຖິງປີ ຄ.ສ.໑໘໒໖ (ຈຸລສັກຣາດ ໑໑໘໘) ພຣະວໍຣະຣາດວົງສາ ເຊິ່ງເປັນເສນາບໍດີຜູ້ໃຫຍ່ຢູ່ໃນນະຄອນວຽງຈັນ ບໍ່ພໍໃຈກັບພຣະເຈົ້າສີຣິບຸນຍະສານ ດ້ວຍສາເຫດອັນໃດບໍ່ແຈ້ງ ຈຶ່ງໄດ້ອົພຍົບຄອບຄົວແລະບ່າວໄພ່ຂອງຕົນໜີຈາກວຽງຈັນລົງໄປຕັ້ງຢູ່ໜອງບົວລຸມພູ (ຄືອຳເພີໜອງບົວລຳພູໃນເຂດຈັງຫວັດອຸດອນທຸກວັນນີ້) ຕັ້ງບ້ານໜອງບົວນັ້ນຂຶ້ນເປັນເມືອງ ເອີ້ນວ່າ ເມືອງເຂື່ອນຂັນກາບແກວໜອງບົວບານ ແລ້ວພຣະວໍຣະຣາດກໍປະກາດຕົວເປັນອິສຣະບໍ່ຂຶ້ນກັບວຽງຈັນຝ່າຍສົມເດັດພຣະເຈົ້າສີຣິບຸນຍະສານກໍພຍາຍາມກຳຈັດຢູ່ເຖິງສອງປີຍັງບໍ່ເປັນການສຳເຣັດໄດ້ ພຣະເຈົ້າສີຣິບຸນຍະສານຈຶ່ງແຕ່ງໃຫ້ຄົນໃຊ້ລົງໄປເຊີນພຣະຍານະຄອນຣາຊສີມາ ເຈົ້າເມືອງນະຄອນຣາຊສີມາ ຂຶ້ນມາຊ່ອຍພາບພຣະວໍຣະຣາດ.

ເມືອງໜອງບົວລຸມພູ ຖືກກອງທະຫານເມືອງນະຄອນຣາຊສີມາ ແລະວຽງຈັນຕີຂນາບ ພຣະວໍຣະຣາດຈຶ່ງພາຄອບຄົວໜີລົງໄປຕັ້ງຢູ່ບ້ານດອນ ມົດແດງ ແຂວງອຸບົນທຸກວັນນີ້ ແລ້ວເຂົ້າໄປສມັກຢູ່ໃຕ້ຄວາມປົກຄອງຂອງພຣະເຈົ້າໄຊຍະກຸມມານ ເຈົ້ານະຄອນຈຳປາສັກ.

ພຣະເຈົ້າບຸນຍະສານ ຈັດການພາບພຣະວໍຣະຣາດລົງໄດ້ໃນປີ ຄ.ສ.໑໘໒໘ (ຈຸລສັກຣາດ ໑໑໙໐ ດ້ວຍອາສັຍກຳລັງຂອງພຣະຍານະຄອນຣາຊສີມາ ແລະ ສົງຄາມລະຫວ່າງພຣະວໍຣະຣາດກັບວຽງຈັນຄາວນັ້ນ ພຣະເຈົ້າບຸນຍະສານ ທົງເອີ້ນວ່າ ເປັນເສິກຂ້າກະບົດ.

ເຖິງປີ ຄ.ສ.໑໗໗໐ (ຈຸລສັກຣາດ ໑໑໓໒)(໑) ພຣະເຈົ້າບຸນຍະສານທົງເຫັນວ່າ ພຣະເຈົ້າຕາກສິນ ພຣະເຈົ້າແຜ່ນດິນປະເທດໄທ ມີອານຸພາບແຂງແຮງຂຶ້ນ ສາມາດທຳການຕໍ່ສູ້ຂັບໄລ່ພວກພະມ້າໃຫ້ແຕກໜີໄປໄດ້ຫລາຍຄັ້ງຫລາຍທີ ພຣະອົງຄຶດຈະຜູກສັມພັນທະໄມຕີກັບປະເທດໄທໄວ້ ຈຶ່ງໄດ້ແຕ່ງໃຫ້ຣາຊທູດ ໒ ຄົນ ຄື ພຣະຍາໄຊທຣົງຍົດທິສບຸຣີ ກັບ ພຣະຍາສີຣັຕນາທິເດດ ເຊີນພຣະຣາຊສານໄປຖວາຍພຣະເຈົ້າຕາກສິນ ໃນວັນຈັນ ເດືອນຍີ່ອອກໃຫມ່ ໑໔ ຄ່ຳ ພ.ສ.໒໓໑໓ (ຄ.ສ.໑໗໗໐) ດັ່ງມີສຳເນົາພຣະຣາຊສານຕໍ່ໄປນີ້:

## ສຳເນົາພຣະຣາຊສານເຈົ້າແຜ່ນດິນວຽງຈັນ

### ຄັ້ງທີ ໑

--o--

ພຣະຣາຊສານສາຂິນທະສີຂະຣະ ວໍຣະຊົມພູພຶກ ສາທຶກນົນທິລບຸພພິດ ວິສິຕະວິຣະຈິຕະປະພາຫາ ນັນຕະມະຫັນຕະຄຸນວິບຸນມະນຸນຍະສຸນທຣ ສຸອັຕຖະປະຣະມັຕຖະ ອັຕຖະທິຕະກະຣະນັຕຖະ ທັສນາກາຣສານສູນໄສໄຍຍະທັມມາ ຄຳພີຣະໂຊຕິນທະຣະສຳພາຣາຕີເຣກອະເນກອະນັນມະຫັນຕະມະໂຫລາຣ ພິສານພິສິດພິພິທຣັຕນະຣາໄຊຍະປະຕິມັນທິຕະພິຈິຕຣວິໂຣໂຊຕິມັນທະຈັນທະຈຣ ວໍຣະຣັກສະອັຄຄະປະຣະມາສາຣສິທທິທິຕະທັມມ໌ໄມຕີ ໃນພຣະບາດສົມເດັດບໍຣົມບໍພິຕພຣະມະຫາບຸນໄຊຍະເຊດຖາຈັກກະພັຕພູມິນທຣທັມມິກະຣາຊາທິຣາດ ພຣະເຈົ້າກຸງສີສັຕນາຄະນະຫຸດ ອຸຕມະຣາຊທານີ-ບູຣີຣົມບໍຣົມມະນາດບໍຣົມບໍພິດ ຈິນຕນາສຸພາສິຕສັຕຍາບິຕຍະທັມ໌ໄມຕີສີຣິສພິຈນຸຕມະສະມາຄົມ ສົມເດັດພຣະມະຫາເອກາທຸສຣຸທອິສວນມະຫາກະສັດຕາທິຣາດບໍຣົມມະນາດບໍພິດ ພຣະມະຫານະຄອນທະວາຣາວະດີສຣີອະຍຸທຍາ ມະຫາດິລົກພົບນົພຣັຕນະຣາຊທານີບູຣີຣົມຍ໌ ສ່ວນດັ່ງຊຸໄພຍະມະຫານະຄອນບໍວອນຣາຊທານີ ສີສຸທາກ ຫາກເປັນສຸພັນປັຕຕິເຣກເອກສັມທະອັນຍະມັນຍັງເຊິ່ງກັນ ແຕ່ພຣະມະຫາກະສັຕຕາທິຣາດ ແຕ່ໃນການເມື່ອກ່ອນສືບ ໆ ມາ ດັ່ງກຸງສຣີອະຍຸທຍາເກີດເປັນແຕ່ເວຣກັມມ໌ ບ້ານເມືອງຈຶ່ງຂາດເສັຽທາງພຣະຣາຊໄມຕີ ດັ່ງຂ້າກະບົດໃນຂອບຂັນທະສີມາກຸງສີສັຕນາຄະນະຫຸດ ກໍເກີດຂັດສົນຊອກທາງມິໄດ້ຂາດ ເຖິງເມື່ອເຈົ້າພຣະນະຄອນຣາຊສີມາ ກໍໄດ້ເຂົ້າຈົດຊ່ວຍທຳການເອົາຣາຊ ພ້ອມກັນຟາດຕີເສັຽຍັງຂ້າກະບົດຝູງນັ້ນ ກໍຈຶ່ງປະຣາໄຊຍ໌ໄປຍັ້ງຕັ້ງຢູ່ດອນມົດແດງ ດັ່ງພຣະຣາຊໄມຕີຈຶ່ງເປັນອັນຫວະຫວາງ ຈຶ່ງແຈ້ງວ່າ ພຣະມະຫາກະສັດຕາທິຣາດ ຍັງຕັ້ງຢູ່ໄດຍະທະວໍຣະພຸທສາສນາແລະຣັສດາປະຊາຣາສດອນ ຂ້າໄພ່ດັ່ງນັ້ນຈຶ່ງໄດ້ທົງພຣະຣາຊຈິນດາປຣາໂມທເຖິງທຳນອງຄອງຣາຊປະເພນີບໍ່ໃຫ້ຂາດຣາຊໄມຕີ ຈຶ່ງໄດ້ເປສິຕາຣາຊທູດ ພຣະຍາໄຊທຣົງຍົດທິສບຸຣີ ພຣະຍາສີສັຕນາທິເດດໄມຕີຈຳທູນພຣະສຸພັນນະບັດຣັຕນະຣາຊສາຣ ແລະເຄື່ອງມຸງຄຸນຣາຊບັນນາກາຣ ມາວັທນະສວັສດາສົມເດັດພຣະມະຫາກະສັຕຣາທິຣາຊເຈົ້າໃນຣາຊທານີບູຣີຣົມ ເພື່ອໃຫ້ຂອດພັນທະມິຕສນິທສເນຫາ ເຊິ່ງພຣະມະຫາກະສັຕຣາທິຣາຊສືບ ໆ ມາກິຈຣາຊການກຸງເທພມະຫານະຄຣຫາກເກີດມີເຍື່ອງໃດ ກຸງສີສັຕນາຄະນະຫຸດ ກໍບໍ່ປະວາງ ປະການນຶ່ງ ດັ່ງເຈົ້າພຣະຍານະຄຣຣາຊສີມາ ອັນໄດ້ພາຂ້າໄພ່ເຂົ້າມາຊ່ວຍເອົາຣາຊການນັ້ນ ຫາກແລ້ວຣາຊ

ການໃນກຸງສີສັດຕະນາຄະນະຫຸດ ແລະ ກຸງເທພມະຫານະຄຣ ຈະເປັນເອກສັນທະຈິດສນິທສເນຫາ ເຊິ່ງພຣະມະຫາກະສັດຣາທິຣາຊເຈົ້າແຕ່ໃນການເມື່ອກ່ອນ ໃຫ້ວໍຣະພຸທສາສນາ ຊຸໄພຍະມະຫານະຄຣຈັກໄຊຕນາ ຍາວະປັນຈະວັສສະສະຫັສ ຈະໄດ້ສຸຂາສະມານຸສຸຂມັ້ນໄວ້ໃນທີ່ປັນຍາພຣະເຈົ້າກຸງເທພມະຫານະຄຣບໍວຣທະວາຣາວະດີສີອະຍຸທຍາມະຫາດິລົກພົບນົພຣັຕນະຣາຊທານີບຸຣີຣົມ ຈຶ່ງທຸກປະການ.

ສະເດັດສະຫັດກະຣາຄະໄນຍສຸໄສຣາຊທັຕ ມານູສັນຕິ ສັງກຣາຊ ຮ້ອຍສາມສິບສອງຕົວ ເດືອນຍີ່ ຂຶ້ນສິບຫ້າຄ່ຳ ວັນຈັນ.

## ສຳເນົາສຸພະອັກສອນຂອງເສນາບໍດີກຸງສີສັດຕະນາຄະນະຫຸດ
## ກຳກັບພຣະຣາຊສານ ຄັ້ງທີ ໑

ກຸງສີສັດຕະນາຄະນະຫຸດ ສຣີສຸວຣຕັຕຍາວະຈະນິຍະປິຍາມະນາປາພີສີຖະມາຖຸພິສາລພິສຸທທາພິຣົມ ພົມສຸຈຣິຕ ທິຕທັຕຖະສັຊນາກາຣສຸຈຖະທັສນັຕຖະສັນຕາໄນຍໄພນໍຣະວິຣະທິຕາໃນອັຄຄະມະຫາເສນາບໍດີ ສຣີສຸຊົນສັປປຸຣຸສ ຊຸຕິສາມິປະວາສບາທມູລິກາກຣບໍວຣຣັຕນາມາຕແຫ່ງພຣະບາທບໍຣົມມະນາຖ ບໍຣົມບໍພິຕຣ໌ ພຣະພຸທເຈົ້າຢູ່ຫົວ ໃນກຸງມະຫານະຄຣ ບໍວຣສຣີສັຕນາຄະນະຫຸດວິສຸທທິຣັຕນະຣາຊທານີບຸຣີຣົມມີມະຫຸຣະຈິຕ ສທິສເນຫາ ມາເຖິງອັຄຄະມະຫາເສນາບໍດີສຣີສຸຣະຊາຕ ອັນເປັນບາທມູລິກາກຣບໍວຣຣັຕນາມາຕຍ໌ ແຫ່ງພຣະບາທສົມເດັດເອກາທສຣຸທອິສວຣບໍຣົມມະນາຖ ບໍຣົມບໍພິຕຣພຣະພຸທເຈົ້າຢູ່ຫົວໃນກຸງເທພມະຫານະຄຣ ບໍວຣທະວາຣາວະດີສຣີອະຍຸທຍາມະຫາດິລົກພົບນົພຣັຕນ໌ຣາຊທານີບຸຣີຣົມ ດ້ວຍວຸທິສວັສດີສຣ ດັ່ງພຣະບໍວຣພຸທສາສນາປະຊານາຣາສດຣ ສັຕຕນິກຣນັຄຣວາສີ ໃນກຸງມະຫານະຄຣ ບໍວຣສຣີສັຕນາຄະນະຫຸຕວິສຸທທິຣັຕນະຣາຊທານີບຸຣີຣົມ ກໍຍັງສວັສດີວິເສສ ດ້ວຍພຣະເຊພຣະຣັຕນະໄຕຣຍະຄຸນບຸນຍະສຳພາຣາທະນະບາຣະມີສີລາ ພຣະບາທສົມເດັດບໍຣົມມະນາຖ ບໍຣົມບໍພິຕຣ໌ ພຣະພຸທເຈົ້າຢູ່ຫົວທຸກສິ່ງທຸກປະການ ດັ່ງພຣະມະຫາມະຄຣບໍວຣຣາຊທານີທັງສອງຫາກເປັນກະດານທອງທິພຍ໌ອັນດຽວກັນ ແຕ່ພຣະມະຫາກະສັດຣາທິຣາຊເຈົ້າທັງສອງກຸງຫາກໄດ້ສົມພັນທະສັຈປະຕິຍານເອົາພຣະສຣີຣັຕນະໄຕຣສະຫະທາຕເຈຕິຍະສະຖານເປັນສັກຂີມະຍານເທົ້າຫ້າພັນພຣະວັສສາເປັນປີຍະເສດ ແຕ່ໃນອະດີຕະກາລເມື່ອກ່ອນ ດັ່ງກຸງເທພມະຫານະຄຣກໍຫາກເປັນແຕ່ເວຣານຸເວຣ ກໍຈຶ່ງເປັນຈຸລາຈົນກຸລາຫົນແກ່ອະນາປະຊາຣາສດຣຂາຂອບຂັນທະເສນາກຸງສຣີສັຕນາຄະນະຫຸຕ ກໍເປັນຂາກະບົດຂັດສົນຈອງຫາງ ເປັນນິຣັນຕຣະມິໄດ້ຂາດ ໃນປີສັກຣາຊຮ້ອຍສາມສິບເອັດຕົວ ຈຶ່ງໃຫ້ຊຸປຣາຊສົງຄາມ ມີອັກສຣໄປເຖິງ ເຈົ້ານະຄຣຣາຊສີມາ ແລະ ກຣົມກາຣທັງປວງເຂົ້າມາທຳຣາຊການຊວຍ ຂອຍທັງຫລາຍອັຄຄະມະຫາເສນາພ້ອມກັນກະທຳຟາຄຕີເສັຽຍັງຂາກະບົດຟູງນັ້ນ ທັບຣາໄຊພ່າຍແພ້ແຕກໄປຕັ້ງຢູ່ດອນມົດແດງ ຈຶ່ງຫວະຫວ່າງຈອງຫາງ ຈຶ່ງໄດ້ຮູ້ແຈ້ງສົມເດັດພຣະບໍຣົມມະນາຖບໍຣົມບໍພິຕຣ໌ພຣະເຈົ້າຢູ່ຫົວ ທົງທິສພິຕຣ໌ຣາຊທັມເປັນອັນຍິ່ງ ຈຶ່ງປະໄຕທະເລີກຍົກຍໍຣະພຸທສາສນາອະນາປະຊາຣາສດຣໄດ້ຢູ່ເຢັນເປັນສຸຂປົກຕິດັ່ງເກົ່າ ວ່າດັ່ງນີ້ ສົມເດັດພຣະບໍຣົມມະນາຖບໍຣົມບໍພິຕຣ໌ ພຣະພຸທເຈົ້າຢູ່

ຫົວໃນກຸງສຣີສັຕນາຄະນະຫຸດກໍຫົງພຣະໂສມະນັສພິຣົມຍ໌ໃນພຣະຣາຊທຳຣະໄທເປັນອັນຍິ່ງຫນັກຫນາ ຈຶ່ງຫົງ
ພຣະຣາຊຈິນດາພິຣົມເຖິງທັມນອງຄອງພຣະຣາຊປະເພນີບໍ່ໃຫ້ຂາດຣາຊໄມຕີ ໃນສົມເດັດພຣະບໍຣົມມະນາຖ
ບໍຣົມບໍພິຕຣ໌ພຣະພຸທເຈົ້າຢູ່ຫົວກຸງເທພພຣະມະຫານະຄຣເປັນອັນຍິ່ງ ຈຶ່ງເປສນັຕພຣະຍາໄຊທົງຍົດທິສບຸຣີ
ພຣະຍາສີສັຕນາທິເດດໄມຕີ ທູນຈຳນຳພຣະສຸພັນນະບັຕຣັຕນະຣາຊສານ ແລະເຄື່ອງສູພະນົງຄົລຣາຊບັນນາ
ການ ມາວັທນະສວັສດາ ພຣະບາທສົມເດັດພຣະບໍຣົມມະນາຖບໍຣົມບໍພິຕຣ໌ພຣະພຸທເຈົ້າຢູ່ຫົວ ໃນກຸງເທພມະ
ຫານະຄຣບໍວຣທະວາຣາວະດີສຣີອະຍຸທຍາ ເພື່ອຂອດທາງພຣະຣາຊໄມຕີສືບ ໆ ໄປພາຍໜ້າກັບພຣະວັສສາ
ເປັນປີຍະເສດ ສົມເດັດພຣະເຈົ້າຢູ່ຫົວ ຈຶ່ງທົງພຣະກະຣຸນາໃສ່ຫົວຂ້ານ້ອຍທັງຫລາຍອັຄຄະມະຫາເສນາ
ແຕ່ງພຣະຍາສຸທຈິຕຣນົງຄົລທາວແກວ ເພລາ ນຳສຸພະອັກສຣມາຮອດມາເຖິງອັຄຄະມະຫາເສນາທີ່ບໍດີໃນ
ກຸງເທພມະຫານະຄຣ ໂດຍທັມນອງຄອງຣາຊປະເພນີໃຫ້ເປັນເອກສັນທະສະມັຄຄາກັລຍານະມິຕອັນນຶ່ງອັນ
ດຽວກັນ ຜີແລກຸງສີສັຕນາຄະນະຫຸດຫາກເກີດມີເຫດການ ກໍຢ່າໃຫ້ອັຄຄະມະຫາເສນາທີ່ບໍດີປະວາງ ເຫດ
ການຫາກເກີດມີໃນກຸງເທພມະຫານະຄຣດັ່ງນັ້ນຂ້ອຍທັງຫລາຍກໍບໍ່ວາງປະການນຶ່ງ ເຈົ້າພຣະຍານະຄຣຣາຊ
ສີມາແລະກຣົມການຂໍໄວ້ໃຫ້ຊ່ວຍທຳຣາຊການກ່ອນ ແລດັ່ງຂ້າໄທນອນອັນເຂົ້າມາທຳຣາຊການຢູ່ໃນມຸຄຄະ
ຕາແສງແຫ່ງກຸງສີສັຕນາຄະນະຫຸດນັ້ນ ຣາຊການຫາກສັມຣິທທີແລ້ວບໍຣະບວນເມື່ອໃດ ຂ້ອຍທັງຫລາຍອັຄຄະ
ມະຫາເສນາບໍດີກໍຈະພ້ອມກັນໃຫ້ເມືອໃສ່ບ້ານເມືອງ ເລີກຍົກຍໍວໍຣະພຸທສາສນາ ປະຊາຣາສດຣ ຂ້າຂອບ
ຂັນທະເສມານົມທົລກຸງເທພມະຫານະຄຣປົກຕິດັ່ງບູຣານຣາຊປະເວນີ ແລດັ່ງຫລວງວັງໄພ່ລາວນ່ວງຫວານ
ຜີສືບຄົວນັ້ນ ຂໍກັບອັຄຄະມະຫາເສນາບໍດີໄວ້ເປັນຜູ້ໃຊ້ທ່ອງທ່ຽວໄປມາຈຳເຣີນທາງພຣະຣາຊໄມຕີໃຫ້ເປັນ
ເຊື່ອບ້ານສາຍເມືອງສັນໃດ ພຣະພຸທເຈົ້າຢູ່ຫົວທັງສອງພຣະອົງຈະທົງພຣະຣາຊກັລຍານະມິຕຣ໌ສນິທສເນຫາ
ສະຖິດສະຖຽນຄຽນຄາ ຢ່າໃຫ້ເປັນຈະລາຈີໄລໄປມາ ເພື່ອໃຫ້ອຸໄພຍະຣັຕຖະຣາຊທານີທັງສອງກ້ຳຄ້ຳໂຊຕ
ນາວໍຣະພຸທສາສນາສມນະພຣາມມະນາຈາຣຍ໌ປະຊາຣາສດອນສັຕວະນິກຣນັຕດຣວາສີຈະໄດ້ຢູ່ເຢັນເປັນສຸກ
ຂາພິຣົມຍ໌ໃຊ້ໄວ້ໃນຍານະວິສຸທິຊຸດົມປັນຍາອັຄຄະມະຫາເສນາທີ່ບໍດີທັງປວງໃນກຸງເທພມະຫານະຄຣບໍວຣທະ
ວາຣາວະດີສຣີອະຍຸທຍາ ຈຶ່ງທຸກປະການ.

ສຸພັນນະບັດຫນັກຮ້ອຍເບັ້ຽ ອຸບສຸພັນນະບັຕຫນັກ ໗ ບາທ ສວິນຫມາກຣູຫນັກ ໔ ບາທ ສູວັນຄຳ
ຫນັກສາມຮ້ອຍ ງາຊ້າງສອງຄູ່ ສາດວຽນສອງຜືນ ເປັນເຄື່ອງສູພະມົງຄົລຣາຊບັນນາ ຄ່າສອງຫລັມຫນັກສອງ
ຮ້ອຍ ເປັນບັນນາການອັຄຄະມະຫາເສນາສຸພະອັກສຣ.

ຝ່າຍພຣະເຈົ້າຕາກສິນ ພຣະເຈົ້າແຜ່ນດິນປະເທດໄທ ເມື່ອໄດ້ຮັບພຣະຣາຊສານນັ້ນແລ້ວ ກໍທົງມີ
ພຣະຣາຊສານຕອບຄືນມາ ໃນວັນອັງຄານ ເດືອນ ໗ ຂຶ້ນ ໖ ຄ່ຳ ພ.ສ.໒໓໑໔ (ຈ.ສ.໑໑໓໓) ດັ່ງມີສຳ
ເນົາພຣະຣາຊສານຕໍ່ໄປນີ້:

## ສຳເນົາພຣະຣາຊສານພຣະເຈົ້າຕາກສິນ

## ສົ່ງທີ ໑

—o—

"ພຣະຣາຊສາຣສຣີສດີຣັກສະສັກດິສຸນທຣບໍວຣມົງຄົລສະກົລໂລເກສບໍວະເຣສຂັຕຕິຍະສະສຣີຣັກສະໄມຕຣີ ໃນສົມເດັດພຣະພຸທເຈົ້າກຸງເທພມະຫານະຄຣບໍວຣທະວາຣາວະດີສຣີອະຍຸທຍາມະຫາດີລົກພົບນົພຣັຕນະຣາຊທານີບຸຣີຣົມຍ໌ ມີປະຕິວາກຍະພຣະຣາຊສາຣເປສິຕາກາຣ ໃຊ້ໃຫ້ພຣະສຸນທຣໄມຕຣີຣາຊທູດ ຫລວງພົກດີວາຈາອຸປທູດ ຂຸນພິຈນາພິມົລ ຕຣີທູດ ຈຳທູນພຣະສຸພັນນະບັຕຣັຕນະຣາຊສາຣ ນຳເຄື່ອງມົງຄົລຣາຊບັນນາກາຣ ມາຈຳເຣີນພຣະຣາຊສັຕຍານຸສັຕຍ໌ ແຕ່ສົມເດັດພຣະເຈົ້າກຸງສຣີສັຕນາຄະນະຫຸຕວິສຸທທິຣັຕນະຣາຊທານີບຸຣີຣົມຍ໌ ດ້ວຍພຣະເຈົ້າກຸງສີສັຕນາຄະນະຫຸຕ ໃຊ້ໃຫ້ພຣະຍາໄຊທຣົງຍົດທົສບຸຣີ ເປັນຣາຊທູດ ພຣະຍາສຣີສັຕນາທິເດດໄມຕຣີຈຳທູນພຣະສຸພັນນະບັຕຣັຕນະຣາຊສາຣ ແລະເຄື່ອງມົງຄົລຣາຊບັນນາກາຣ ມາຈຳເຣີນພຣະຣາຊສັຕຍານຸສັຕຍະພາບ ພຣະສົມພັນທະມິຕຣໄມຕຣີຕາມບູຣານຣາຊປະເພນີນັ້ນ ຄັນແຈ້ງໃນອັຕຖະລັກສນະນັ້ນ ກໍມີພຣະຣາຊກະມົລຫະຣິໄທໃສສຸດຊຸດົມໂສມະນັສສາກາຣຍິນດີເປັນອັນຍິ່ງຫນັກຫນາ ຄວນທີ່ຈະເປັນອັຄຄະມິຕຣສົນທະວະແຕ່ທີ່ວ່າ ສົມເດັດພຣະເຈົ້າກຸງສຣີສັຕນາຄະນະຫຸຕ ປະກອບດ້ວຍຂັຕຕິຍະວົງທຣົງພິພົບອັນສູງໃຫຍ່ ແລະອັນກຸງເທພມະຫານະຄຣສຣີອະຍຸທຍາທຸກວັນນີ້ກໍອັບປາງຢູ່ ຈະຂໍໃຫ້ພຣະເຈົ້າກຸງສຣີສັຕນາຄະນະຫຸຕຊ່ວຍທຳນຸບຳຣຸງໃຫ້ເປັນສຣີສຸວັນນະປະຖະພີດຽວຈຳເຣີນພຣະວົຣະວົງສ໌ສືບໄປເຖິງມາດວ່າ ຈະມີປັຈຈາມິຕຍ໌ຂ້າເສິກມາປະກາຣໃດໃນກຸງສຣີອະຍຸທຍາກໍຈະເກງພຣະເດຊານຸພາບກຸງສີສັຕນາຄະນະຫຸຕ ເພາະພຣະເຊ ປົກເພື່ອເຈືອໄປ ແລະຊຶ່ງປັຈຈາມິຕຣ໌ຂ້າສຶກມາບຽດບຽນກຣຸງສຣີສັຕນາຄະນະຫຸຕນັ້ນ ກໍຈະເປັນພາຣະທຸຣະແຫ່ງກຣຸງສຣີອະຍຸທຍາ ແລະຊຶ່ງຂ້າສຶກໄປຕັ້ງຢູ່ດອນມົດແດງ ແລະຈະຂໍໃຫ້ເຈົ້າພຣະຍານະຄຣຣາຊສີມາໄວ້ຊ່ວຍຣາຊກາຣນັ້ນ ກໍແລ້ວແຕ່ພຣະຣາຊດຳຣິສົມເດັດພຣະເຈົ້າກຣຸງສຣີສັຕນາຄະນະຫຸຕເຖີດ ແຕ່ທະວ່າ ຖ້າເຫັນຈະໄດ້ຖ່າຍດຽວຈຶ່ງໃຫ້ກະທຳກາຣ ຖ້າເຫັນຈະໄດ້ສ່ວນນຶ່ງສອງສ່ວນ ຈະເສັຽແຕ່ລ່ວນນຶ່ງ ກໍຢ່າໄດ້ກະທຳ ໄວ້ພາຣະກຣຸງສຣີອະຍຸທຍາຈະໄດ້ກະທຳສືບໄປ ອັນນຶ່ງ ຊຶ່ງຣາສກາຣບ້ານເມືອງກຣຸງສຣີອະຍຸທຍາ ທຸກວັນນີ້ ເດີມມີຫນັງສືຂອງ ລິປູ້ຕາທົ່ງ ອັຄຄະມະຫາເສນາບໍດີສົມເດັດພຣະເຈົ້າກຣຸງຕາສົງ (ຈຽງ) ຜູ້ໃຫຍ່ນະເມືອງກຣຸງຈີນ ເຂົ້າມາເຖິງກຣຸງສຣີອະຍຸທຍາວ່າ ໃຫ້ທຳແຜນທີ່ຫາທາງຊຶ່ງຈະໄປກຣຸງອັງວະນັ້ນສົ່ງອອກໄປແລະມີເນື້ອຄວາມວ່າ ພະມ້າຍົກກອງທັບມາຣົບເມືອງສຣີສວນ (ສູຣີຈວນ) ເມືອງຫວຍຫລຳ ປາຍແດນກຣຸງຈີນ ຈີນຣົບພຸ່ງພະມ້າແຕກໄປ ຝ່າຍກອງທັບຈີນຍົກໄປຕິດແວ່ນແຄ້ວນກຣຸງອັງວະຢູ່ແລ້ວຈະຂໍໃຫ້ກອງທັບຈີນມາຂ້ນນະກຣຸງສຣີອະຍຸທຍາອີກທາງນຶ່ງນັ້ນ ໄດ້ມີຫນັງສືອອກໄປແຕ່ກ່ອນວ່າ ຂັດສົນດ້ວຍເຂົ້າປລາອາຫາຣແລະບັດນີ້ພະມ້າມາທຳແກ່ເມືອງຖລາງເມືອງກາມບູຣີເມືອງສີສວັສເມືອງຊຸໄທທານີ ເມືອງສວັນຄະໂລກ ເມືອງພິໄຊ ປາກໃຕ້ຝ່າຍເຫນືອ ຕາວັນຕົກຕາວັນອອກຊ່ວງຂ້ນແກ່ກຣຸງສຣີອະຍຸທຍາ ກອງທັບທົ່ວເມືອງຕີກອງທັບພະມ້າແຕກເລີກໄປ ຝ່າຍກຸງສຣີອະຍຸທຍາຍັງມີໄດ້

ຈິດຝີມືດູຄວາມຄິດປະການໃດຫາມິໄດ້ ຈຶ່ງສະເດັດພຣະຣາຊດຳເນີນຍົກກອງທັບຂຶ້ນໄປຈົດຝີມືດູຄວາມຄິດພະມ້າເມືອງຊຽງໃໝ່ ບັດນີ້ເຫັນແຈ້ງຢູ່ແລ້ວ ພໍທຳການຕອບແທນແກ່ກຣຸງອັງວະໄດ້ຖ່າຍດຽວ ແລະບັດນີ້ເຂົ້າປລາອາຫານພໍມີຢູ່ແລ້ວ ແລະຈະໃຫ້ມີສຸພະອັກສອນອອກໄປເຖິງ ລີປູຕ້າທັ່ງອັຄຄະມະຫາເສນາບໍດີ ໃຫ້ນຳເອົາກາຍບັງຄົມທູນແກ່ສົມເດັດພຣະເຈົ້າຕາກສິ້ງ ຜູ້ໃຫຍ່ນະກຣຸງຈີນ ໃຫ້ຍົກກອງທັບມາຂຶ້ນ ນະ ກຣຸງສຣີອະຍຸທຍາ ກຣຸງສຣີອະຍຸທຍາກໍຈະເກນກອງທັບຍົກໄປກະທຳແກ່ກຣຸງອັງວະ ແຕ່ວ່າບັດນີ້ອັດສົນດ້ວຍມ້າ ໄດ້ມີສຸພະອັກສອນເປັນຫລາຍປະການແລ້ວ ປະການໃດກຣຸງສຣີອະຍຸທຍາ ກັບກຣຸງສຣີສັຕນາຄະນະຫຸດ ຈະວັທນາການຈຳເຣີນເປັນມະຫາມິຕຣ໌ສນິດສເນຫາສືບໄປ ກໍໄວ້ໃນພຣະປຣີຊາຍານສົມເດັດພຣະເຈົ້າກຣຸງສຣີສັຕນາຄະນະຫຸດ ຈະມີພຣະຣາຊດຳຣິໃຫ້ຊອບທຸກປະການ.

ພຣະຣາຊສານສນິທທິ ເປສິຕະພາວະພູມະວານ ວິສາຂະມາສກາລ ປັກຂະທຸຕິຍະດິຖີ ຄະຍຸລະສັກຣາຊ ພັນສາມຮ້ອຍສາມສິບສາມສັກສະສັງວັດສະຣະ ຕຣີນີສະກະ ສີຣສວັສດີ ທີຄາຍຸສົມ".

## ສຳເນົາສຸພະອັກສອນເສນາບໍດີກຣຸງເທພກຳກັບພຣະຣາຊສານ
## ຄັ້ງທີ ໑

-o-

ສຣີສວັສດີ ສຸພະອັກສອນວະສິຖພິພິທຮັຕນະອັຕຖະທັມມ໌ ຣັສສິກອະທິກະທິໂຣຕມະໂຊຕຍະສົມປະຈັນອະນັນຕະຄຸນຄະນາຫານ ສັງຄາມະວິຊິດ ສິທທິສຸມທຣບໍວຣທັມມ໌ໄມຕຣີອົນມີໃນອັຄຄະມະຫາເສນາທິບໍດີສຣີສຸຣະພົງສ໌ຈະຕຸຣົງຄະນິກຣບໍວຣປຣິນາຍົກຣັຕນາມາຕຍ໌ ອັນເປັນສະນິປະວາສໃນບາທມູລແຫ່ງພຣະສສີສົນເຜົດສົມເດັດບໍຣົມທັມມິກະຣາຊາທິຣາຊ ພຣະເຈົ້າຣາມາທິບໍດີບໍຣົມຈັກກະພັຕສຣບໍວຣຣາຊທິບໍດີນທຣທຣິຕທຣິນທຣາດາທິບໍດີສະວິບູລຍະຄຸນຣຸຈິຕຣ໌ ຣິທທິຣາເມສວຣບໍຣົມທັມມິກະຣາຊເດໂຊໄຊຍະພົມເທພາດິເທພ ຕຣີພູວະນາທິເບສໂລກເຊດຖະ ວິສຸທທະມະກຸດະປະເທສຄະຕາມະຫາພຸທທາງກູຣບໍຣົມມະນາຖບໍຣົມບໍພິຕຣ໌ພຣະພຸທເຈົ້າກຸງເທພມະຫານະຄອນ ໆລໆ ມີມະຣິທູຕປຣາໂມທຈິຕຣ໌ສນິທສເນຫາສົນທະວະສະທະປະຕິວາກຍະ ມາເຖິງອັຄຄະມະຫາເສນາທິບໍດີແຫ່ງພຣະເຈົ້າກຸງສຣີສັຕນາຄະນະຫຸຕວິສຸທທິຣັຕນະຣາຊທານີບູຣີຣົມຍ໌ ດ້ວຍພຣະຍາສຸທຈິຕຣ໌ນິງຄົລ ແລະທ້າວແກ້ວ ເພລາ ຖືສຸພະອັກສອນແລະເຄື່ອງຄາຣະວະບັນນາການມາຈຳເຣີນທາງພຣະຣາຊໄມຕຣີແລະໄມຕຣີນັ້ນ ຄົນໄດ້ແຈ້ງໃນລັກສນະສຸພະອັກສອນນັ້ນແລ້ວ ຈຶ່ງນຳເອົາກິຈຈານຸກິຈທັງນີ້ ປຶກສາດ້ວຍເສນາພຣຶຕທາມາຕຍ໌ຣາຊກວີມົນຕຣີມຸຂລູກຂຸນທັງປວງ ປຶກສາພ້ອມກັນວ່າ: ແຕ່ໃນການກ່ອນ ກຸງສຣີອະຍຸທຍາ ກັບກຸງສີສັຕນາຄະນະຫຸດ ເປັນແຜ່ນສຸວັນນະປະຖະພີດຽວ ເຄີຍໄດ້ໄປມາຈຳເຣີນທາງພຣະຣາຊໄມຕຣີແລະໄມຕຣີຕໍ່ກັນມິໄດ້ຂາດ ແລະຄົນຢູ່ຕໍ່ມາ ເປັນເວຣານຸເວຣແຕ່ງກຸງສີອະຍຸທຍາ ແລະກຸງສີສັຕນາຄະນະຫຸດ ໃຫ້ບັງເກີດມີປັຈຈາມິຕຣ໌ຂ້າສຶກມາບຽດບຽນທັງສອງຝ່າຍ ຈຶ່ງຂາດທາງພຣະຣາຊໄມຕຣີແລະຣາຊ

ປະຈວບມີດຸຈດັ່ງນີ້ມີສຸພະອັກສຣອັຄຄະມະຫາເສນາທິບໍດີ ກຣຸງສຣີສັຕນາຄະນະຫຸດລົງແລ ຄັ້ງນີ້ໃນພຣະບາທສົມ
ເດັດພຣະເຈົ້າຢູ່ຫົວທຣົງພຣະຣາຊອຸສາຫະສະເດັດໄປປຣາບອະຣິນຣາຊສັດຕຣູທົ່ວເມືອງໃຫຍ່ນ້ອຍແວ່ນແຄວ້ນ
ແດນກຣຸງເທພມະຫານະຄຣນັ້ນ ກໍປລົງພຣະໄທທຳນຸບຳຣຸງເພື່ອຈະໃຫ້ກະທຳຕາມຄຣະວງບຸຣະຣາຊປະເພນີ
ຊຶ່ງມີມາແຕ່ກ່ອນ ແລະເດຊເດຊານຸພາບບາຣະມີເພື່ອຈະໃຫ້ປະຈັກແກ່ໄພ່ຟ້າປະຊາກຣ ຍົກໄປປຣາບປຣາມ
ອະຣິຣາຊສັດຕຣູທົ່ວເມືອງໃຫຍ່ນ້ອຍແວ່ນແຄວ້ນແດນກຣຸງເທພມະຫານະຄຣະນັ້ນ ກໍໄດ້ໂດຍສະດວກງ່າຍຢູ່ສິ້ນ
ແລ້ວ ແລະບັດນີ້ມີສຸພະອັກສຣອັຄຄະມະຫາເສນາທິບໍດີນະກຣຸງສຣີສັຕນາຄະນະຫຸດລົງມາຈຳເຣີນທາງພຣະ
ຣາຊໄມຕຣີ ແລະໄມຕຣີນັ້ນຄວນໃຫ້ຮັບເປັນການໄມຕຣີສືບໄປຕາມບຸຣະພຣະຣາຊປະເພນີ ຊຶ່ງມີມາແຕ່ໃນ
ກາລກ່ອນ ແລະສືບຖູກົດໝາຍຢ່າງທັມນຽມກຣຸງສຣີອະຍຸທຍາ ກັບກຣຸງສຣີສັຕນາຄະນະຫຸດຊຶ່ງເປັນທາງ
ພຣະຣາຊໄມຕຣີ ແລະໄມຕຣີກັນແຕ່ກ່ອນນັ້ນໄດ້ເນື້ອຄວາມວ່າ ສົມເດັດພຣະເຈົ້າກຣຸງສຣີອະຍຸທຍາແລະ
ກຣຸງສຣີສັຕນາຄະນະຫຸດແຕ່ກ່ອນສອງຝ່າຍຟ້າຍ່ອມຈຳເຣີນທາງພຣະຣາຊສຣີສວັສເປັນສຸວັນນະປະຖາພີດຽວ
ສືບພຣະຣາຊວົງສາກັນມາ ແລະດັ່ງນີ້ຂໍໃຫ້ມີພຣະຣາຊສາຣແລະສຸພະອັກສຣຂຶ້ນໄປວ່າກ່າວຕາມບຸຣາຊປະເພ
ນີຊຶ່ງມີມາແຕ່ໃນກາລກ່ອນນັ້ນ ຈະໄດ້ເປັນພຣະຣາຊສຣີສວັສໃນກຣຸງສຣີອະຍຸທຍາປຣະດຸຈດັ່ງພລອຍພຣະມະ
ຫາເພັຊຣັຕນະ ອັນສະຖິດຢູ່ນະເຣືອນພຣະທັມມະຣົງຊົມພູນຸຊທັມມະຊາຕຊາຕຣີ ຖ້າແລອັຄຄະມະຫາເສນາ
ທິບໍດີຜູ້ໃຫຍ່ຜູ້ນ້ອຍ ນະກຣຸງສຣີສັຕນາຄະນະຫຸດ ເຫັນດ້ວຍດຸຈດັ່ງເສນາພຣຶດທາມາຕຍ໌ ນະກຣຸງສຣີອະຍຸທ
ຍາປຣຶກສານັ້ນແລ້ວ ກໍໃຫ້ຊ່ວຍທຳນຸບຳຣຸງນຳຂຶ້ນກຣາບບັງຄົມທູນສົມເດັດພຣະເຈົ້າກຣຸງສຣີສັຕນາຄະນະຫຸດ
ຈະຂໍພຣະຣາຊບຸຕຕຣີມາເສກໄວ້ໃນທີ່ອັຄຄະມະເຫສີ ນະກຣຸງສຣີອະຍຸທຍາ ສອງຝ່າຍຟ້າຈະໄດ້ພຶ່ງພຣະ
ເດຊເດຊານຸພາບພຣະບາຣະມີເປັນທີ່ພຶ່ງພຳນັກແກ່ເສນາພຣຶດທາມາຕຍ໌ແລະອານາປະຊາຣາສດຣດຸຈດັ່ງສະ
ສັຕແກ້ວ ແຫ່ງຫາວມະຫາພຣົມອັນກາງກັ້ນຮົ່ມເຢັນໄປທົ່ວທິສານຸທິສ ຈຶ່ງນຳເອົາຄຳລູກຂຸນປຣຶກສານັ້ນ ຂຶ້ນ
ກຣາບບັງຄົມທູນພຣະກະຣຸນາແດ່ພຣະບາທສົມເດັດບໍຣົມບໍພິຕຣ໌ພຣະພຸທເຈົ້າຢູ່ຫົວຜູ້ທຣົງພຣະຄຸນອັນປະເສີດ
ທຣົງພຣະກະຣຸນາດຳຣັສເໜືອເກລ້າສັ່ງວ່າ ໃຫ້ທຳຕາມປຣຶກສາ ແລະໃຫ້ແຕ່ງຣາຊທູດ ອຸປທູດ ຕຣີທູດ
ຈຳທູນພຣະຣາຊສາຣ ແລະ ສຸພະອັກສຣແລະເຄື່ອງມົງຄົລຣາຊບັນນາການ ຂຶ້ນມາໃຫ້ແຈ້ງຈິງທຸກປະການ
ແລະບັດນີ້ແຕ່ງພຣະສຸນທຣໄມຕຣີຣາຊທູດ ຫລວງພັກດີວາຈາ ອຸປທູດຂຸນພິຈນາພິມົນຕຣີທູດ ຈຳທູນພຣະຣາຊ
ສາຣຂຶ້ນມາຈຳເຣີນທາງພຣະຣາຊໄມຕຣີຕາມປະເພນີຊຶ່ງມີມາແຕ່ກາລກ່ອນຕາມຊຶ່ງລູກຂຸນປຣຶກສາກັນນັ້ນ
ພຣະບາທສົມເດັດພຣະພຸທເຈົ້າຢູ່ຫົວ ຜູ້ທຣົງຄຸນອັນປະເສີດ ໄດ້ມີພຣະຣາຊສາຣຂຶ້ນມາແຈ້ງຢູ່ທຸກປະການ
ແລ້ວ ແລະຂໍຊຶ່ງວ່າ ຂໍຫລວງອັງແລະໄທນອນລາວນ່ວງຫວານ ໔໐ ຄົວ ໄວ້ເປັນຄົນໃຊ້ສອນໄປມາຈຳເຣີນ
ທາງພຣະຣາຊສັມພັນທະໄມຕຣີ ເນື້ອຄວາມຂໍ້ນັ້ນຄວຣ ໄມ່ໄດ້ນຳຂຶ້ນກຣາບບັງຄົມທູນພຣະກະຣຸນາແດ່ພຣະ
ບາທສົມເດັດພຣະພຸທເຈົ້າຢູ່ຫົວຫາມິໄດ້ ຖ້າແລອັຄຄະມະຫາເສນາທິບໍດີກຣຸງສຣີສັຕນາຄະນະຫຸດທຳນຸບຳ
ຣຸງກຣຸງທັງສອງຝ່າຍຟ້າໄດ້ເປັນບໍຣົມກັລຍານມິຕຣ໌ສນິທສເນຫາດຸຈດັ່ງກາລກ່ອນແລ້ວ ຖຶງຈະເອົາຫລວງອັງ

ແລະລາວມ່ວງຫລວງຈຶ່ງຂໍໄວ້ນັ້ນກໍໄດ້ຢູ່ ອະນຶ່ງຣາຊການບ້ານເມືອງກຸງອະຍຸທຍາທຸກວັນນີ້ ຈະໄດ້ຄຶດອ່ານ ການສົງຄຣາມຕອບແທນ ແກ່ກຣຸງອັງວະເປັນການໃຫຍ່ ແລະຈະຕ້ອງການມາໃຊ້ສອຍນັ້ນ ໕໐໐ ມ້າ ໃຫ້ ອັຄຄະມະຫາເສນາທິບໍດີກຣຸງສຣີສັຕນາຄະນະຫຸຕຊ່ວຍທະນຸບຳຣຸງ ຈັດມ້າສົ່ງລົງມາໃຫ້ຕາມຈຶ່ງຕ້ອງການນັ້ນ ຈະເປັນຣາຄາປະການໃດໃຫ້ຊ່ວຍທົດລອງ ຈຶ່ງຈະເບີກເງິນນະພຣະຄລັງສົ່ງຂຶ້ນມາໃຫ້ຄືນຕາມຈຶ່ງທົດລອງ ນັ້ນແລ ແຕ່ກ່ອນກຣຸງສຣີສັຕນາຄະນະຫຸຕກັບກຣຸງສຣີອະຍຸທຍາ ຍັງມິໄດ້ເປັນພັນທະມິຕຣ໌ ແລະບັດນີ້ກຣຸງທັງ ສອງ ໄດ້ເປັນພັນທະມິຕຣ໌ສນິທສເນຫາ ຈຳເຣີນພຣະຣາຊສັຕຍານຸສັຕຍ໌ຕໍ່ກັນຢູ່ແລ້ວ ມາຕແມ່ນກຣຸງສຣີອະ ຍຸທຍາຈະມີກິຈຣາຊການມະຣົງສົງຄຣາມປະການໃດ ໃຫ້ເປັນພາຣະທຸຣະແຫ່ງອັຄຄະມະຫາເສນາທິບໍດີ ມະ ກຣຸງສຣີສັຕນາຄະນະຫຸຕ ຫາແລກຣຸງສຣີສັຕນາຄະນະຫຸຕຈະມີ ກິຈການມະຣົງສົງຄຣາມປະການໃດ ກໍຈະ ເປັນພາຣະທຸຣະແຫ່ງກຣຸງສຣີອະຍຸທຍາ ແລະເມືອງທັງສອງຝ່າຍຟ້າໄດ້ເປັນທິພກັລຍານະມິຕຣ໌ ສນິທສເນ ຫາຕໍ່ກັນດຸຈນຶ່ງແຕ່ກ່ອນຢູ່ແລ້ວ ຖ້າຈະມີການມະຣົງສົງຄຣາມປະການໃດໃຫ້ຊ່ວຍກັນ ຢ່າໄດ້ລະວາງກັນເສັຽ ຕາມບູຣານຣາຊປະເພນີ ຊຶ່ງມີມາແຕ່ໃນກາລກ່ອນ.

ເຄື່ອງມົງຄົລຣາຊບັນນາການ ໃຫ້ຂຶ້ນມາຖວາຍພຣະເຈົ້າກຣຸງສຣີສັຕນາຄະນະຫຸຕ: ພຣະວິສູຕພັນ ຫລືອງຣະໃບປົກທອງຍີ່ປຸ່ນເຄືອຕົ້ນໄມ້ພັນນຶ່ງ ອານມ້າພັນດຳລາຍທອງ ເຄື່ອງຕະກູທອງພູ່ແດງຈານງຣິສຳ ຣັບນຶ່ງ ແພຣກະບວນພັນມວງພູດທອງຕາຕັກກະແຕນ ມ້ວນນຶ່ງແພຣກະບວນພັນແດງດອກພູດຕານມ້ວນນຶ່ງ ປິ່ນສົ້ນແຟດຢ່າງຍີ່ປຸ່ນອັງນຶ່ງ ທາສົ່ງເປັນເຄື່ອງຣາຊບັນນາການສົມເດັດພຣະພຸທເຈົ້າຢູ່ຫົວສົ່ງສົ່ງຂອງໃຫ້ ມານອກເຄື່ອງຣາຊບັນນາການໃນນີ້: ແພຣພັນນ້ຳເງິນໄຫມກົ່ງໄມ້ສອງມ້ວນ ແພຣພັນດຳລາຍທອງສອງ ມ້ວນ ຜ້າຂາວມ່ານສານສອງຕາ ຜ້ານຳກົງລາຍສອງສີຕ່າງກັນ ເກົ້າພັບ ຜ້ານຳກົງຂາວແປດພັບ ແພຣຈີນ ສີຕ່າງກັນແປດພັບ ຜ້ານຳກົງດອກດຳແປດພັບ ຈຽນລາຍສອງພັນຫລືອງຣູບໄກ່ຟ້າພັນນຶ່ງ ຊານເບັນຍະຣົງ ສາມຢ່າງສີ່ສິບໃບ ຖ້ວຍເບັນຍະຣົງກລີບບົວສອງຢ່າງສີ່ສິບໃບ ຊ່າງພາຍພັງສິບຊ່າງ ເບັ້ຽຄິດເປັນເງິນທາ ຊັ່ງ ແລະຊຶ່ງເສນາບໍດີໃຫ້ທອງສອງຮ້ອຍລົງໄປຖຶງເຮົາສອງຫລັນນັ້ນ ເຮົາໄດ້ຈັດໃຫ້ຜ້າຂາວຕາແລະແພຣ ຂຶ້ນມາແກ່ເສນາບໍດີໃນນີ້: ແພຣພັນແດງພູດລາຍກົ່ງໄມ້ສອງມ້ວນ ແພຣພັນແດງພູດໄຫມຫລືອງລາຍກົ່ງໄມ້ ມ້ວນນຶ່ງ ແພຣລີນລາຍສີຕ່າງກັນສາມພັບ ຜ້າຂາວຍາວສາມສິບແຂນ ລົງປັກເປັນສອງຕຣາ ແລະເບັ້ຽຊຶ່ງ ໃຫ້ຂຶ້ນມານັ້ນ ຊ່າງທີ່ສົ່ງລົງໄປນັ້ນນ້ອຍ ໃຫ້ຂຶ້ນມາໄວ້ແກ່ພຣະຍານະຄຣໄຊສຣີເມືອງບົວຊຸມໃຫ້ເສນາບໍດີ ແຕ່ງຊ່າງ ແລະ ຄົນລົງມາຮັບເອົາເບັ້ຽຕໍ່ພຣະຍານະຄຣໄຊສຣີເມືອງບົວຊຸມ ນັ້ນເຖີດ ສຸພະອັກສຣມາ ມະ ວັນ ໓ ໗ ໖ ຄ່ຳຈຸລສັກຣາຊ ໑໑໖໖ ປີເຖາະ ຕຣີນິສົກ.
໔

# ພະມ້າກູ້ວກ່ອນພຣະເຈົ້າສິຣິບຸນຍະສານ

ເມື່ອສົມເດັດພຣະເຈົ້າສິຣິບຸນຍະສານໄດ້ທົງຮັບພຣະຣາຊສານຂອງພຣະເຈົ້າແຜ່ນດິນໄທຕອບຄືນມາດັ່ງນີ້ ກໍຍັງບໍ່ໄດ້ທົງຈັດການຢ່າງໃດ ຕໍ່ມາໄດ້ສອງປີຄືເຖິງປີ ຄ.ສ. ໑໗໗໑(໑) ພຣະເຈົ້າສຸຣິຍະວົງສາເຈົ້າແຜ່ນດິນເມືອງຫລວງພຣະບາງ ໄດ້ຍົກກອງທັບລົງມາຕີວຽງຈັນ ຕັ້ງລ້ອມເມືອງໄວ້ສອງເດືອນ ພຣະເຈົ້າສິຣິບຸນຍະສານ ບໍ່ສາມາດຈະຕີກອງທັບຂອງພຣະເຈົ້າສຸຣິຍະວົງສາ ໃຫ້ແຕກຖອຍໄປໄດ້ ຈຶ່ງແຕ່ງທູດໄປຂໍເອົາກຳລັງພະມ້າທີ່ຢູ່ເມືອງຊຽງໃຫມ່ໃຫ້ມາຊ່ອຍ ໂປ່ສຸພະລາ ແມ່ທັບພະມ້າທີ່ຢູ່ເມືອງຊຽງໃຫມ່ ຈຶ່ງຍົກທັບລົງມາຕີເມືອງຫລວງພຣະບາງ ພຣະເຈົ້າສຸຣິຍະວົງ ໄດ້ຊາບເຫດການດັ່ງນັ້ນ ຈຶ່ງຖອຍທັບກັບຄືນເມືອງຫລວງພຣະບາງ ແລະ ໄດ້ເຂົ້າອ່ອນຍອມຕໍ່ກອງທັບພະມ້າ ເວລານັ້ນພວກພະມ້າກຳລັງຊອກທາຊ່ອງທາງຈະປາບປາມພວກໄທຢູ່ ຈຶ່ງບໍ່ທຳອັນຕະລາຍແກ່ພຣະເຈົ້າສຸຣິຍະວົງ ກັບກັບວກ່ອນເອົາເຂົ້າເປັນພັກພວກ ແລ້ວກໍເລີຍຍົກທັບລົງມາວຽງຈັນ ພຣະເຈົ້າສິຣິບຸນຍະສານທົງເຫັນວ່າ ພຣະມ້າຍັງມີກຳລັງແຂງແຮງຢູ່ ແລະຢ້ານວ່າ ໄທບໍ່ສາມາດຕໍ່ສູ້ພະມ້າໄດ້ ຈຶ່ງໄດ້ຍອມຮັບເຂົ້າເປັນໄມຕີກັບພະມ້າອີກ ແຕ່ພະມ້າຍັງບໍ່ເຊື່ອໃຈແທ້ ສະນັ້ນ ໂປ່ສຸພະລາ ແມ່ທັບພະມ້າ ຈຶ່ງໄດ້ບັງຄັບເອົາພະຣາຊບຸດພຣະຣາຊບິດາ ຂອງພຣະເຈົ້າສິຣິບຸນຍະສານ ແລະ ຂ້າຣາຊການຜູ້ໃຫຍ່ຫລາຍຄົນໄປໄວ້ເມືອງພະມ້າເພື່ອເປັນປະກັນ(໒).

ຕໍ່ມາເຖິງປີ ຄ.ສ. ໑໗໗໔ (ຈູລສັກຣາດ ໑໑໓໖) ໂປ່ສຸພະລາ ແມ່ທັບພະມ້າ ທີ່ຕັ້ງຢູ່ເມືອງຊຽງໃຫມ່ ໄດ້ມີຈົດຫມາຍລັບໃຫ້ ໂປ່ມະຍຸງວນ ກັບທະຫານ ๓໐໐ ຄົນ ຖືລົງມາຫາພຣະເຈົ້າສິຣິບຸນຍະສານ ໃນຫນັງສືນັ້ນບອກວ່າ ໃຫ້ພຣະເຈົ້າສິຣິບຸນຍະສານຍົກທັບລົງໄປເມືອງທົນບຸຣີ ປະເທດໄທ ໂດຍໃຫ້ລົງໄປທາງເມືອງນະຄອນຣາຊສີມາສ່ວນພຣະມ້າຈະເຂົ້າຕີທາງເມືອງຕາກ ແລະບ້ານຣະແຫງ ພຣະເຈົ້າສິຣິບຸນຍະສານໄດ້ຮັບຈົດຫມາຍຂອງພະມ້ານັ້ນແລ້ວ ກໍບໍ່ທົງປະຕິບັດຕາມເປັນແຕ່ຄິດອຸບາຍໃຫ້ພວກພະມ້າກັບຄືນໄປ ແຕ່ຄວາມລັບລະຫວ່າງພະມ້າກັບພຣະເຈົ້າສິຣິບຸນຍະສານ ໄດ້ດັ່ງໄປເຖິງພຣະເຈົ້າຕາກສິນພຣະເຈົ້າແຜ່ນດິນໄທ ໂດຍອາສັຍພຣະເຈົ້າສຸຣິຍະວົງ ຫລວງພຣະບາງ ເປັນຜູ້ບອກທາງນຶ່ງ ແລະ ໄທຈັບໄດ້ພວກພະມ້າທີ່ມາສົ່ງຫນັງສືນັ້ນອີກ ດັ່ງນັ້ນ ພຣະເຈົ້າຕາກສິນຈຶ່ງໃຫ້ເສນາບໍດີຂຽນຫນັງສືມາຕໍ່ວ່າພຣະເຈົ້າສິຣິບຸນຍະສານ ໂດຍໃຫ້ພຣະຍາຫລວງ ເມືອງແສນເປັນຜູ້ຖືມາໃນປີ ຄ.ສ. ໑໗໗໔ ນັ້ນເອງ ດັ່ງມີສຳເນົາຕໍ່ໄປນີ້:

---

(໑) ໃນຈົດຫມາຍເຫດຫໍຣັ້ວຽງຈັນວ່າປີ ຄ.ສ. ໑໗໗໐ (ຈຸລສັກຣາດ ໑໑໓໒).

(໒) ໃນຈົດຫມາຍເຫດຫໍຣັ້ວຽງຈັນວ່າ ພຣະເຈົ້າສິຣິບຸນຍະສານ ສົ່ງພຣະຣາຊໂອຣົດ ແລະ ພຣະຣາຊທິດາໄປປະເທດພະມ້າ ປີຈຸລສັກຣາດ ໑໑໓໒ (ຄ.ສ. ໑໗໗໐).

**ສຳເນົາສຸພະອັກສອນເສນາບໍດີປະເທດໄທມາເຖິງເສນາບໍດີ**

**ວຽງຈັນ**

**ສົ້ງທີ ໔**

-o-

ສຸພະອັກສອນ ບໍວອນນິງຄົລ ວິມົນພົນພົຈນາສຸພາສິຕ ສຸຕິຕະນິກອນບໍວອນຣັຕນະກະຖາປະຣະມາພິຈາໄສຍ ໃນອັຄຄະມະຫາເສນາທິບໍດີນທຣ໌ມະຣິນທຣາມາຕຣ໌ ອັນເປັນສະນິປະວາສບໍວອນບາທມູລິກາກອນບໍວອນຣັຕນາ ມາຕຍ໌ ແຕ່ງພຣະບາທສົມເດັດພຣະເອກາທິສຣິສອີສວອນບໍຣົມມະນາຖບໍຣົມບໍພິຕຣ໌ພຣະພຸທທິເຈົ້າຢູ່ຫົວ ມະ ກຣຸງເທພມະຫານະຄອນບໍວອນທະວາຣາວະດີສຣີອະຍຸທຍາມະຫາດິລົກພົບນົພຣັຕນະຣາຊທານີບຸຣີຣົມຍ໌ອຸດົມພຣະ ຣາຊນະຫາສະຖານ ມີໄສມະນັສມາແຕ່ອັກຄະມະຫາເສນາທິບໍດີ ກຣຸງສຣີສັຕນາຄະນະຫຸຕວິສຸທທິຣັຕນະຣາຊ ທານີບູຣີຣົມຍ໌.

ດ້ວຍມີພຣະບໍຣົມຣາຊໂອງການມາຣພຣະບັນທູຣສຸຣະສີຫະນາຖດຳຣັສເຫນືອເກົ້າ ໆວ່ງ ສົ່ງວ່າພະ ມ້າຍົກພົລມາທຳຮ້າຍທາງເມືອງຕາກ ບ້ານຣະແຫງ ແຂວງເມືອງກຳແພງເພັຊ ຝ່າຍເຫນືອທາງນຶ່ງມາ ທາງ ລັນເຕ ທ່າດິນແດງ ແຂວງເມືອງການບຸຣີ ເມືອງສຣີສວັສຝ່າຍຕາວັນຕົກທາງນຶ່ງ ແຕ່ພຣະເດຊເດ ຊາແຜ່ໄປພະຈົນ ລາວມອນ ໄມ່ເປັນອັນຕຣາຍ ໄດ້ຂ້າຟັນພະມ້າລົ້ມຕາຍຍັບເຍີນສິ້ນ ຝ່າຍມອນ ລາວ ພາເອົາເຮືອຣົບໄລ່ເອົາຊ້າງມ້າເຄື່ອງສັພພະຍຸທ ເຂົ້າມາໃຫ້ທູນເກົ້າຖວາຍ ຂໍເປັນຂ້າຂອບຂັນທະສີມາ ກໍມີບ້າງ ທີ່ພາຄອບຄົວອົບພະຍົບເຂົ້າສູ່ພຣະບໍຣົມໂພທິສົມພາຣຢູ່ໃນແດນຂ້າງນີ້ ກໍມີບ້າງທີ່ຕ່າງຕ້ານຕໍ່ຕີຣົບ ພະມ້າເຂົ້າໄປກໍມີບ້າງ ອັນພຣະເດຊເດຊານຸພາບແຜ່ໄປເຖິງ ມອນ ລາວແລ້ວ ແລ້ວພຣະຍາຈ່າບ້ານ ພຣະ ຍາລຳພູນແລະລາວແວ່ນແຄວ້ນແດນເມືອງຊຽງໃຫມ່ ເມືອງລຳພູນ ກໍສວາມິພັກ ຂ້າພະມ້າເສັຽ ຂໍເປັນຂ້າ ຂອບຂັນທະເສມາພຣະບາທສົມເດັດພຣະພຸທທິເຈົ້າຢູ່ຫົວສິ້ນ ຍັງແຕ່ໂປ່ສຸພະລາ ແມ່ກອງທັບ ກັບໂປ່ມະຍູ ງວນເຈົ້າເມືອງຊຽງໃຫມ່ນັ້ນ ພຣະບາທສົມເດັດພຣະພຸທທິເຈົ້າຢູ່ຫົວກໍຈະສະເດັດຂຶ້ນໄປສັງຫາຣເສັຽໃຫ້ ສິ້ນ ໃຫ້ອັຄຄະມະຫາເສນາທິບໍດີ ແລະ ເສນາບໍດີທູນພຣະເຈົ້າກຣຸງສຣີສັຕນາຄະນະຫຸຕໃຫ້ຄອຍຟັງຂ່າວ ເອົາອັນພຣະເດຊາເດຊານຸພາບທຸກວັນນີ້ປະກອບດ້ວຍວິທຍາຄຸນ ແລະ ປັນຍາຄຸນ ອຸເບກຂາຄຸນ ປະດຸຈ ນຶ່ງທຣົງຈັກແກ້ວພຣະຂັນແກ້ວຂ້າມເສັຽຊຶ່ງຫ້າວພຣະຍາມະຫາກະສັຕຣ໌ໃນສາກົລຈົມພູທະວີບ ສາອະໄຣແກ່ ກຣຸງຣັຕນະບຸຣະອັງວະ ປະກາຣໃດທີ່ໃຫຽກວ່າກຣຸງຣັຕນະບຸຣະອັງວະກໍດີກີຈິງພຣະໄທແລ້ວ ເຫັນໄມ່ພົ້ນ ເງື້ອມພຣະຫັຕຖ໌ ບັດນີ້ຫມາຍພຣະໄທຂຶ້ນໄປເອົາກຣຸງຣັຕນະບຸຣະອັງວະມາໃຊ້ເປັນຂ້າ ແຕ່ກຣຸງສສີສັຕນາ ຄະນະຫຸຕ ເປັນກັລຍານະມິຕຣ໌ສນິທສເນຫາກັບກຣຸງເທພມາແຕ່ກ່ອນແລ້ວລະຄອງປະເພນີເສັຽ ເປັນໃຈ ໄປດ້ວຍພະມ້າກຣຸງອັງວະນັ້ນ ພຣະບາທສົມເດັດພຣະພຸທທິເຈົ້າຢູ່ຫົວ ຍັງໄປ່ເສັຽຄອງທາງຣາຊປະເພນີ ກ່ອນ ຈຶ່ງໃຫ້ສົ່ງລາວກຣຸງສຣີສັຕນາຄະນະຫຸຕຊຶ່ງພະມ້າເອົາໄປຜູກມັດຈຳຈອງ ຂຶ້ນມາໃຫ້ອັຄຄະມະຫາເສ ນາທິບໍດີ ແລະ ເສນາບໍດີທູນຖວາຍພຣະເຈົ້າກຣຸງສຣີສັຕນາຄະນະຫຸຕໃຫ້ເຮັ່ງເປັນໃຈໄປດ້ວຍກຣຸງອັງວະ

ຈຶ່ງເກນກອງທັບໄປຊ່ວຍໄປ່ສຸພະລາ ໄປ່ມະຍຸງວນ ນະເໝືອງຊຽງໃໝ່ ຝ່າຍສົມເດັດພຣະພຸທທິເຈົ້າຢູ່ຫົວ ຈະຂຶ້ນໄປຕີ ປະກາຣນຶ່ງເຣັ່ງຕັດທ່າທາງຂົນເຂົ້າປລາສພຽງອາຫາຣ ຢ່າໃຫ້ກອງທັບໄທໄປຖືງກຣຸງສຣີສັຕ ນາຄະນະຫຸຕ ປະກາຣນຶ່ງຈຶ່ງໂອບອ້ອມເອົາໄທຂ້າຂອບຂັນທະເສມາກຣຸງເທພໄວ້ ຈະໄດ້ກັນກຣຸງສຣີສັຕນາ ຄະນະຫຸຕ ເຫັນຈະສຸງເຣືອງເປັນໃຫຍ່ ເພາະເປັນໃຈໄປດ້ວຍພະມ້າແທ້ ຢ່າໃຫ້ໄພ່ເມືອງລາວເປັນສຸກໄດ້ ແຕ່ໄພ່ເມືອງລາວເຂົ້າໄປສູ່ພຣະບໍຣົມໂພທິສົມພາຣປະມານໝື່ນນຶ່ງແລ້ວ ບັດນີ້ໄດ້ສົ່ງພຣະຍາຫລວງເມືອງ ແສນ ພຣະຍາຫານອາສາ ພຣະຍາຈັນທອງ ພຣະຍາໂຄຕພຣະຍາບຸຕຕະໂຄຕ ແວງບ່າວບຸຣະພາ ທັບໜູ່ ຕຣຽມທາ ກັບໄພ່ຊາຍ ໖໑ ຄົນ ຍິງ ໓ ຄົນເປັນ ໖໔ ຄົນ ຂຶ້ນມາໃຫ້ອັຄຄະມະຫາເສນາທິບໍດີ ແລະ ເສນາ ບໍດີ ທູນຖວາຍແຕ່ພຣະເຈົ້າກຣຸງສຣີສັຕນາຄະນະຫຸຕຕາມຣັບສັ່ງ.

ສຸພະອັກສອນມາ ນະວັນ ໖ ຯ ໑ ຄ່ຳ ຈຸລສັກຣາດ ໑໑໖໖ ປີມະເມັຽ ສໍສົກ ໃຫ້ພຣະຍາຫລວງ ເມືອງແສນຖືໄປລ້ານຊ້າງ.

ຝ່າຍສົມເດັດພຣະເຈົ້າສີຣິບຸນຍະສາຣ ເມື່ອໄດ້ຊາບຂໍ້ຄວາມ ທີ່ເສນາບໍດີປະເທດໄທຕ່ວ່າມາຢ່າງ ເຈັບແສບດັ່ງນັ້ນ ກໍໄດ້ມີພຣະຣາຊສາຣ ຕອບຄືນໄປໃນປີນັ້ນເອງ ດັ່ງມີສຳເນົາຕໍ່ໄປນີ້:

ສຳເນົາພຣະຣາຊສາຣຂອງພຣະເຈົ້າສີຣິບຸນຍະສານ

ດັ່ງທີ ໔

-o-

ພຣະຣາຊສາຣ ສາຂົນທະ ສີກະຣະປະວະຣະຊຸມພູພົກສະ ອະຄິກະມັນຖິຕະ ບຸພພິຕາວິກະສິຕະວິ ໂຣຈະນະ ໂຊຕິມະຫັນຕະມະຫາຣະນັນຕະຄຸນ ວິບຸລມະນຸນຍະສຸຣປວຣສຸຂະວັທນະ ທິຕະນິຈຈະກາຣະນໍຣະ ທັຕປັສນາກາຣະສາຣສຸຫັມຄາພີຣະໂຊຕິວຣສຳພາຣາດີເຣກ ອະເນກອະນັນມະຫັນຕະມະໂຫລາຣພິສາຣວະ ຊິຣະປະຕິມັນທິຕະພິຈິຕຣຈັນທະວະຣະລັກຂະປະຣະມາສາຣສິທທິຕະທັມໄມຕຣີ ໃນສົມເດັດພຣະບໍຣົມຍໍບໍພິຕຣ ພຣະເຈົ້າກຣຸງສຣີສັຕນາຄະນະຫຸຕວິສຸທທິຣັຕນະຣາຊທານີບຸຣີຣົມຍ໌ບໍຣົມນາຖບໍພິຕຣ ກິຈນາສຸພາວິຕະສັຕມິຕຣ ທັມໄມຕຣີສະຣີປະຈານຸຕມະສັມນາຄົມສົມເດັດພຣະມະຫາເອກາທິສຣິສວິສວຣບໍຣົມນາຖບໍຣົມບໍພິຕຣພຣະມະ ຫານະຄຣບໍວຣທະວາຣາວະດີສຣີອະຍຸທຍາ ມະຫາດິລົກພົບນົພຣັຕນະຣາຊທານີບຸຣີຣົມຍ໌ ອຸດົມສານີສຣີສຸພົນ ນະຣັຕນະ ພຣະເຈົ້າປຣາສາທທອງ ເຈົ້າໄຊມະຫານັງຄລະຣັຕນະວິສຸທທິເສຕະກຸນໄຊບໍພິຕຣ ສະຖິຕໃນ ພຣະບໍຣົມມະຫາສະຖານ ອັນມະຫາປະເສີຖ ໃນສັກຣາຊ ໑໑໖໔ ຕົວນັ້ນ ກໍຈຶ່ງໄດ້ສົນທະນາ ໃນພຣະຣາຊ ທີຣະໄທເຖີງທັມນອງຄອງພຣະຣາຊໄມຕຣີ ແຕ່ງກຣຸງເທພແຕ່ໃນກາລເມື່ອກ່ອນ ກໍຫາກໄດ້ເປັນພັນທະມິຕຣ ສນິທສເນຫາ ບໍ່ໄດ້ຂາດຍັງຣາຊປະເພນີ ຈຶ່ງໄດ້ເປສິຕາຣາຊທູຕ ຈຳທູນສຸພັນນະບັຕຣັຕນະຣາຊສາຣ ແລະ ມັງຄລະບັນນາກາຣວັທນາກຣຸງເທພ ເພື່ອໃນໃຫ້ຂາດເສັຽຍັງຣາຊປະເພນີ ປະກາຣນຶ່ງດັ່ງເຈົ້າພຣະຍານະ ຄຣຣາຊສີມາ ກໍຍັງຈຳເຣີນທາງພຣະຣາຊໄມຕຣີບໍ່ໄດ້ຂາດແທ້ ມາຈົນເຖີງສັກຣາຊ ໑໑໖໔ ຕົວນັ້ນ ໄປ່ສຸ ພະລາ ຖືມະຫັນຕະໂຍທາມາຂົ່ມເຫັງກຣຸງສຣີສັຕນາຄະນະຫຸຕ ກໍເປັນໂທສະມັສທຸກຂາແກ່ປະຊາກຣ ຂົ່ມເຫັງ

ເອົາພຣະຣາຊບຸຕທັງເສນາອາມາຕຍ໌ໄປກຣຸງຣັຕນະບຸຣະອັງວະກໍຄ້າງຄາຢູ່ ໄປ່ສູ່ພະລາກໍບໍ່ຍົກຖອຍໜີໄປຈາກ
ກຣຸງສຣີສັຕນາຄະນະຫຸຕໄປຕັ້ງຢູ່ຊຽງໃໝ່ ຈຶ່ງແຕ່ງໃຫ້ໄປ່ມາວ່າ ໄປ່ສູ່ພະລາຈະຍົກໄປ ເອົາກຣຸງເທພ
ໃຫ້ກຣຸງສຣີສັຕນາຄະນະຫຸຕເອົາກຳລັງເຂົ້າມາທາງເມືອງນະຄຣຣາຊສີມາ ວ່າດັ່ງນີ້ ກໍຈຶ່ງໄດ້ຣຳເພິງເຖິງ
ທັມນອງຄອງພຣາຊປະເພນີແຕ່ງພຣະມະຫາກະສັຕຣາທິຣາຊເຈົ້າແຕ່ກາລເມື່ອກ່ອນສືບມາ ດັ່ງກຣຸງສຣີອະ
ຍຸທຍາ ແລະ ກຣຸງສຣີສັຕນາຄະນະຫຸຕສອງກຣຸງບໍ່ຫ່ອນເປັນເວຣານຸເວຣແກ່ກັນ ຈຶ່ງຂັດສິນເສັຽບໍ່ເອົາຖ້ອຍ
ຄຳຝຸ່ງນັ້ນຈຶ່ງໄດ້ບອກເສນາອາມາດຍ໌ ສີສຸພະອັກສຣໄປເຖິງເຈົ້າພຣະຍານະຄຣຣາຊສີມາ ເລົ່າກິຈຈານຸກິຈ
ທຸກປະການ ຢູ່ມາສັກຣາຊ ໑໑໓໖ ຕົວ ສົມເດັດພຣະເຈົ້າກຣຸງສຣີອະຍຸທຍາຈຶ່ງມີເມຕຕາກະຣຸນາ ເຖິງ
ທັມນອງຄອງຣາຊປະເພນີແຕ່ງກຣຸງສຣີສັຕນາຄະນະຫຸຕ ທຮົງພຣະກະຣຸນາຕັສເໜືອເກົ້າ ໆລໆ ເຈົ້າພຣະ
ຍານະຄຣຣາຊສີມາ ຈຶ່ງແຕ່ງກຣົມການມີສຸພະອັກສຣ ສົ່ງພຣະຍາຫລວງເມືອງແສນມາເຖິງກຣຸງສຣີສັຕນາ
ຄະນະຫຸຕ ນະ ເດືອນຍີ່ ແຮມ ໘ ຄ່ຳ ນັ້ນ ໄດ້ແຈ້ງຍັງວັຈນະຄະດີອັນມີໃນສຸພະອັກສຣທຸກປະການ ຈຶ່ງມີ
ໂສມະນັສປຣາໂມທໂຊຕນາການເຖິງທານບາຣະມີພຣະເຈົ້າກຣຸງສຣີອະຍຸທຍາຍິ່ງໜັກໜາຈຶ່ງທຮົງພຣະກະ
ຣຸນາໂຜດເກົ້າອັຄຄະມະຫາເສນາພອນຣັບອະຣິຍະສັງຄະຣາຊຄູ ແຕ່ງແປງສືບໄວ້ຍັງທາງພຣະຣາຊໄມຕຣີ
ເພື່ອມິໃຫ້ຂາດເສັຽຍັງຣາຊປະເພນີ ເຫດວ່າສອງກຣຸງຫາກໄດ້ວັທນາປະຣຳປະຣາສືບ ໆ ມາ ຈຶ່ງໄດ້ປ
ສິຕາພຣະຍາສຸທາຣາຊາ ຈາບ້ານປັນຍາມົງຄົລ ພຣະຍາມະຫາອຳມາຕຍ໌ສຸນທຣໄມຕຣີ ຈຳທູນພຣະສຸພັນນະ
ບັຕຣັຕນະຣາຊສາຣມົງຄົລບັນນາການວັທນາສວັສດີສົມເດັດພຣະເຈົ້າໃນກຣຸງເທພ ໆລໆ ເພື່ອຊູໄພຣັຕຖະ
ຈະໃຫ້ເປັນສຸພັນນະປັຕເອກະອັນຍະມັນຍະສືບ ໆ ໄປ ປະການນຶ່ງດັ່ງຂ້າໄພ່ກຣຸງເທພອັນພ່າຍມາເຖິງກຣຸງ
ສຣີສັຕນາຄະນະຫຸຕນັ້ນ ກໍບໍ່ໄດ້ປ່ອງກັນເຂົາໄວ້ ແຕ່ກ່ອນເຈົ້າພຣະຍານະຄຣຣາຊສີມາຈະຄືນມາສ້າງບ້ານ
ເມືອງກໍໄດ້ບອກປ່າວຮ້ອງເຂົາຄືນໄປ ທັງປ່ວງວ່າດັ່ງນີ້ ຝູງເຂົາມິຢາກໄປ ເຂົາຈຶ່ງລັບລີ້ຢູ່ ຝູງເຂົາສມັກ
ໄປກໍມີຢູ່ມາກຫລາຍ ກໍໃຫ້ຄືນໄປ ເຈົ້າພຣະຍາ ນະຄຣຣາຊສີມາ ຄືນໄປເຖິງບ້ານເມືອງແລ້ວ ຈຶ່ງໃຫ້ກຣົມ
ການມາຂໍເອົາ ກໍໄດ້ບອກປ່າວຮ້ອງກະເກນເອົາໄປ ທີຫລັງຊ້ຳໃຊ້ມາ ກໍໄດ້ບອກປ່າວຮ້ອງທົ່ວບ້ານທົ່ວເມືອງ
ສົ່ງໃຫ້ກໍມາກຫລາຍ ອັນຍັງຄ້າງຢູ່ບັດນີ້ແຕ່ຝູງທຸກຍາກອຶດຢາກ ເຂົາກໍລີ້ລັບຢູ່ຂົນຂວາຍລ້ຽງຊີວິຕອິນຊີແຫ່ງ
ເຂົາ ກໍມິໄດ້ກົດໝາຍຈຳນວນໄວ້ ປະການນຶ່ງເມື່ອໃດ ຣາຊບຸຕ ຣາຊນັດດາ ແລະ ເສນາອາມາດຍ໌ອັນ
ໄປຄ້າງຄາຢູ່ກຣຸງຣັຕນະບຸຣະອັງວະ ນັ້ນ ຫາກຄືນມາເຖິງບ້ານເມືອງເມື່ອໃດ ກໍຈະບອກເສນາອາມາຕຍ໌
ພ້ອມກັນແຕ່ງການນຳເຄື່ອງມົງຄົລຣາຊພິເສກສົມເດັດພຣະເຈົ້າກຣຸງເທພ ເພື່ອໃຫ້ໝັ້ນຄົງ ໑໘໐ ພຣະວັສ
ສາ ໃຫ້ຊຳຣະປຣາບປຣາມທົ່ວໄປໃນສາກົລຊົມພູທະວີບທັງປວງ ອະນຶ່ງ ດັ່ງຂ້າໄພ່ຈະໄດ້ຈັດທ້ອນໂຮມໄວ້
ຈະໃຫ້ພ້ອມກັນບັດນັ້ນ ປາການນຶ່ງດັ່ງພຣະຣາຊບຸຕພຣະຣາຊນັດດາເສນາອາມາຕຍ໌ຝູງຄ້າງຄາຢູ່ກຣຸງຣັຕນະ
ບຸຣະອັງວະນັ້ນ ຫາກຍັງດົນຈຣມາເຖິງບໍຣົມໂພທິສົມພາຣກຣຸງເທພເມື່ອໃດ ຂໍໃຫ້ມີເມຕຕາກະຣຸນາທຸກປະ
ການ ອະນຶ່ງຂ້າໄພ່ກຣຸງສຣີສັຕນາຄະນະຫຸຕ ອັນໄດ້ກົວມ່ານເມັງພ່າຍເຂົ້າມາເພິ່ງໂພທິສົມພາຣກຣຸງເທພ

ນົມຂໍໃຫ້ເຂົ້າຄືນມາສ້າງແປງທີ່ບ້ານເກົ່າເມືອງຫລັງ ຂໍໃຫ້ສືບຕໍ່ຍັງທາງພຣະຣາຊໄມຕຣີຢ່າໃຫ້ຂາດໄປ ປະກາຣໃດສອງກຣຸງຈະວັທນາພັນທຸກມິຕຣ໌ສນິທສເນຫາ ຍາວະປັນຈະ ສະທັສສະພະວະສາ ປັຈຈາຣັຕວັທ ນະສຸຂານຸສຸຂ ໃສ່ໄວ້ໃນຣາຊປັນຍາສົມເດັດພຣະບໍຣົມບໍພິຕຣ໌ ພຣະເຈົ້າກຣຸງເທພທຸກປະກາຣເສັຣັຈ ຢ່າໃຫ້ ຈັງ ຈະຖາສະວະນະບໍຣົມຣາຊາ ພົຈນະມານຸສາສະນະທີສັກຣາຊ ໑໑໓໕ ຕົວ ເດືອນສີ່ແຮມ ໕ ຄ່ຳ ວັນ ພຸດ ປີມະເມັຽ ສໍສົກ.

## ສຳເນົາສຸພະອັກສຣເສນາບໍດີກຣຸງສຣີສັຕນາຄະນະຫຸຕ
## ມີກຳກັບພຣະຣາຊສານ
## ຄັ້ງທີ ໒
-o-

ສຣີສຸວຣສັຕຍະວະຈະນິຍະ ປີຍະມະນາປາພິສີຖພິສາຣ ພິສຸທາພິຣົມຍ໌ ພຣົມສຸຈຣິຕທີຕຖະ ສຸຂຸມາພາ ຣຸສູຈິຕຖະທັສນັຕຖະ ສຳນັຄຄະຄາໄມໄພພິຣະທີຕາ ໃນອັຄຄະມະຫາເສນາທິບໍດີ ສຣີສຸຂຸມະສັປປຸຣຸສຊຸຕິສາ ມີປະວາສບາທມູລ ແຕ່ງພຣະບາທສົມເດັດພຣະບໍຣົມນາຖບໍຣົມບໍພິຕຣ໌ ພຣະເຈົ້າຢູ່ຫົວໃນກຣຸງພຣະມະຫານະ ຄຣບໍວຣສຣີສັຕນາຄະນະຫຸຕວິສຸທທິຣັຕນະຣາຊທານີບຸຣີຣົມຍ໌ອຸດົມສວາມີ ມີມະຫູຣະຈິຕສນິທສເນຫາ ມາເຖິງ ອັຄຄະມະຫາເສນາທິບໍດີສຣີສຸຂຸມະຊາຕ ອັນເປັນບາທມູລິກາກຣບໍວຣຣັຕນາມາຕຍ໌ ແຕ່ງພຣະບາທສົມເດັດ ເອກາທິສຣີສຣີສວຣບໍຣົມນາຖບໍຣົມບໍພິຕຣ໌ພຣະພຸທທິເຈົ້າຢູ່ຫົວໃນກຣຸງເທພມະຫານະຄຣບໍວຣທະວາຣາວະດີ ສຣີອະຍຸທຍາມະຫາດິລົກພົບນົພຣັຕນະຣາຊທານີບຸຣີຣົມຍ໌ ດ້ວຍວຸທິສຣີສວັສດີ ບັດນີ້ມີຣາຊຈິນດາເຖິງທຳນອງ ຄອງບູຣານກະສັຕຣາທິຣາຊເຈົ້າທັງຫລາຍເມື່ອກອນ ຜອນຄອງຣາຊປະເພນີສຣີວັຣກັລຍາໄມຕຣີ ໃນປີສັກ ຣາຊ ໑໓໒(໑) ຕົວນັ້ນ ສົມເດັດພຣະເຈົ້າໃນກຣຸງມະຫານະຄຣບໍວຣສຣີສັຕນາຄະນະຫຸຕ ກໍທຣົງພຣະ ຣາຊຈິນດາພຣະຣາຊທີ່ຣະໄທໃນທາງພຣະຣາຊໄມຕຣີເປັນອັນຍິ່ງ ຈຶ່ງທຣົງພຣະຣາຊກະຣຸນາຕຣັສໃສ່ເກົ້າ ພຣະຍາໄຊຈົງບົສທີສບຸຣີ ພຣະຍາສຣີສັຕນາທິເດຊ ຈຳທູນພຣະສຸພັນນະບັຕຣ໌ຣັຕນະຣາຊສາຣ ແລະມົງຄົລ ບັນນາກາຣມາວັທນະສົມເດັດພຣະພຸທເຈົ້າຢູ່ຫົວ ໃນກຣຸງເທພມະຫານະຄຣ ກໍໄດ້ແຈ້ງ ຍັງກິຈຣາຊກາຣທາງ ພຣະຣາຊໄມຕຣີພຣະມະຫາກະສັຕຣາທິຣາຊເຈົ້າທັງສອງກຣຸງ ເຈົ້າພຣະຍານະຄຣຣາຊສີມາກໍຈຳເຣີນສືບ ຣາຊປະເພນີມາມິໄດ້ຂາດ ໃນປີສັກຣາຊ ໑໓໔(໒) ຕົວນັ້ນໃນກຣຸງສຣີສັຕນາຄະນະຫຸຕ ໄປ່ສຸພະລາກໍຍົກ ຣິພົລພະຫົລໂຍທານາມາກຫລາຍ ເປັນຄອງຂຶ້ນຕ່ຽງບ້ານເມືອງດັ່ງຂາໄພ່ກໍຢູ່ເປັນບັ້ນເປັນທ່ອນ ມ່ານ ກໍຍົກ ກອງທັບໄປຂຶ້ນຕ່ຽງບ້ານນອກເມືອງມາ ໄພ່ນ້ອຍຂອຍເມືອງກໍເປັນໂທມະນັສອົດສູທະນາ ພຸະພຸທສາສນາຈະ ເປັນຈຸລວິຈຸລໄປດ້ວຍມ່ານທັງຫລາຍກາກມາມ້າງລິດເສັຽແລວ ຈະທາຍເວຣານຸເວຣແຕ່ງອານາປະຊາຣາສ

---

(໑) ສັກຣາຊ ໑໓໒ ໝາຍຄວາມວ່າ ຈຸລສັກຣາຊ ໑໑໓໒ (໒) ສັກຣາຊ ໑໓໔ ໝາຍຄວາມວ່າ ຈຸລສັກຣາຊ ໑໑໓໔.

ກ່ອນ ວ່າດັ່ງນີ້ສົມເດັດພຣະເຈົ້າຢູ່ຫົວ ຈຶ່ງໄດ້ແຕ່ງຍັງເຈົ້າຣາຊບຸຕຣຸຕມະໂອຣົສ ແລະ ຣາຊນັດດາເສນາ
ອາມາຕຍ໌ຂຶ້ນໄປແຕ່ງແປງເຖິງກຣຸງອັງວະດັ່ງພຣະຍາຫລວງເມືອງແສນ ມ່ານກໍນຳມາເຖິງເມືອງຊຽງໃຫມ່
ແລ້ວສົມເດັດພຣະເຈົ້າກຣຸງສຣີສັຕນາຄະນະຫຸຕ ໃຫ້ຕັ້ງກອດຄິວເຂົ້າມາຢູ່ໃນກຣຸງສຣີສັຕນາຄະນະຫຸຕ ເພື່ອ
ດັ່ງນັ້ນ ຢູ່ມາສັກຣາຊ ໑໓໖ ຕົວ ເດືອນ ໘ ຂຶ້ນ ໙ ຄ່ຳ ໄປສູ່ພະລາແຕງມານ ໓໐໐ ຄົນ ນຳຫນັງສືແຕ່
ກຣຸງອັງວະມາເຖິງວ່າ ໃຫ້ມະຫາກະສັຕເມືອງຈັກທະບຸຣີ ແຕ່ງເສນາອາມາຕຍ໌ຍົກຣີພົລກຳລັງເຂົ້າມາຕີ
ທາງເມືອງນະຄຣຣາຊສີມາກອງທັບຫລວງຈະຍົກເຂົ້າມາທາງເມືອງຕາກບ້ານຣະແຫງ ຈຶ່ງໃຫ້ໄປພ້ອມກັນ
ທີ່ກຣຸງສຣີອະຍຸທຍາ ວ່າດັ່ງນີ້ ພຣະເຈົ້າກຣຸງສຣີສັຕນາຄະນະຫຸຕຫຣົງພຣະຣາຊຈິນດາເຖິງທຳນອງຄອງບູ
ຣານຣາຊປະເພນີດັ່ງຊຸໄພຍະຣັຕຖະຣາຊທານີຫາກເປັນກະດານທອງທິພຍ໌ ອັນດຽວກັນແກ່ພຣະມະຫາກະສັຕ
ຣາທິຣາຊເຈົ້າເມື່ອກ່ອນ ຫາກໄດ້ກະທຳມິຕຣ໌ພັນທະໃຫ້ສັຈຈະປະຕິຍານເອົາພຣະສຣີຣັຕນະໄຕຣຍ໌ເປັນທີ່ຕັ້ງ
ຍັງພຣະມະຫາທາຕເຈດີເປັນສັກຂີພະຍານເຕົ້າຫ້າພັນພະວະສາເປັນປະຣິເສທອັຕຕິການນັ້ນແລ ບັດນີ້ຈະ
ໃຫ້ເປັນວິວາທວາທາຣົບຕີກັນ ບໍ່ສົມບໍ່ຄວຣ ຈຶ່ງລະປະເສັຽຍັງຖ້ອຍຄຳອັນນັ້ນ ຈຶ່ງສົ່ງໄປດ້ວຍດີ ເອົາໄດ້
ຄວາມຈິບຫາຍກໍຣະຫາຍຫາຍໄປ ດັ່ງພຣະຍາຫລວງເມືອງແສນ ຈຶ່ງພາທ້າວເພັຽບ່າວໄພ່ເຂົ້າໄປເຖິງບາທ
ມູລິກາກຣແຕ່ງສົມເດັດພຣະພຸທເຈົ້າກຣຸງເທພມະຫານະຄຣຫຣົງພຣະຣາຊຈິນດາເຖິງທຳນອງຄອງຣາຊປະ
ເພນີເປັນອັນຍິ່ງ ຈຶ່ງຫຣົງພຣະກະຣຸນາຕຣັສເຫນືອເກົ້າໃຫ້ເຈົ້າພຣະຍານະຄຣຣາຊສີມາແຕ່ງການສົ່ງພຣະຍາ
ຫລວງເມືອງແສນ ເຂົ້າມາເຖິງກຣຸງສຣີສັຕນາຄະນະຫຸຕດ້ວຍວຸທທິສວັສດີ ກໍໄດ້ພ້ອມກັນຈົມຊື່ນຍິນດີຕ້ອນຮັບ
ຕາມຣີຕຕາມຄອງທຸກເບື້ອງທຸກປະການຈຶ່ງພ້ອມກັນຂຶ້ນກາບທູນພຣະເຈົ້າກຣຸງສຣີສັຕນາຄະນະຫຸຕໄດ້ແຈງໃນ
ສູ່ພະອັກສຣນັ້ນແລວ ຫຣົງພຣະໂສມະນັສປິຕິປາໂມທໃນຄອງຣາຊໄມຕຣີສົມເດັດພຣະເຈົ້າກຣຸງເທພມະຫານະ
ຄຣເປັນອັນຍິ່ງຫນັກຫນາ ຈຶ່ງຫຣົງພຣະກະຣຸນາຕຣັສໃສ່ເກົ້າ ໃຫ້ພຣະຍາສີສຸທາຣາຊາ ຈ່າບ້ານປັນຍານົງ
ຄົລ ພຣະຍາມະຫາອຳມາຕຍ໌ສຸນທຣໄມຕຣີ ຈຳທູນພຣະສຸພັນນະບັຕຣັຕນະຣາຊສາຣ ແລະ ເຄື່ອງສູ່ພະນົງ
ຄົລຣາຊບັນນາການມາຈຳເຣີນສົມເດັດພຣະພຸທເຈົ້າຢູ່ຫົວກຣຸງເທພມະຫານະຄຣ ຈຶ່ງແຕ່ງໃຫ້ພຣະຍາສູປັດ
ນົງຄົລ ພຣະຍາສຸພັນທະມິຕຣ໌ໄມຕຣີ ທ້າວຕົງ ນຳສະມະນະສາຣມາສົມປະຕາສະມາຄົມສົມເດັດອັຄຄະວຣະ
ຣາຊຄູເຈົ້າທັງປວງ ແລະສູ່ພະອັກສຣມາວູທທີເຖິງອັຄຄະມະຫາເສນາທີບໍດີ ໃນກຣຸງເທພ ຯລຯ ປະການ
ນຶ່ງ ດັ່ງຂ້າໄພ່ກຣຸງເທພໄດ້ພ່າຍຫນີໄປເພິ່ງກຣຸງສຣີສັຕນາຄະນະຫຸຕນັ້ນ ເມື່ອເຈົ້າພຣະຍານະຄຣຣາຊສີມາ
ຈະກັບຄືນມາບ້ານເມືອງນັ້ນ ກໍຈັດເອົາຄອບຄົວມາມາກຫລາຍຢູ່ ພາຍຫລັງມາເຈົ້າພຣະຍານະຄຣຣາຊສີມາ
ໄດ້ແຕ່ງໃຫ້ກຣົມການເຂົ້າມາຂໍເອົາ ກໍໄດ້ພ້ອມກັນປ່າວຮ້ອງທຸກບ້ານທຸກເມືອງ ໄດ້ເກັບສົ່ງໃຫ້ເອົາມາ ບັດ
ນີ້ກໍຍັງແຕ່ຝູງອຶດຢາກຊານເຊັນເລັນຊອນຢູ່ ບໍ່ໄດ້ກຳຫນົດກົດຫມາຍໄວ້ ບັດນີ້ສົມເດັດພຣະເຈົ້າກຣຸງສຣີສັຕ
ນາຄະນະຫຸຕ ກໍຍັງຄອຍຖ້າຣາຊບຸຕຣາຊນັດດາຊຶ່ງຄ້າງຄາຢູ່ກຣຸງອັງວະນັ້ນ ຖ້າໄດ້ຄືນມາເຖິງບ້ານເຖິງ
ເມືອງດ້ວຍບຸນແກ້ວສາມປະການເມື່ອໃດ ພຣະເຈົ້າກຣຸງສຣີສັຕນາຄະນະຫຸຕບໍ່ໃຫ້ຂາດເສັຽຍັງທາງພຣະ

ຣາຊໄມຕຣີຈະໄດ້ແຕ່ງແປງຍັງເສນາອາມາຕຍ໌ຣາຊໂອຣົສ ນຳສຸພັນນະບັຕຣັຕນະຣາຊສາຣເຄື່ອງມົງຄົລ ຣາຊບັນນາກາຣພ້ອມກັບອັຄຄະມະຫາເສນາທິບໍດີສຣີສຸຣະຊາຕອະຕິເຣກມົງຄົລສົມເດັດພຣະເຈົ້າກຣຸງເທພ ຊູ້ໃຫ້ຫຣົງທີພອາຍຸຍືນ ໑໘໐ ພະວະສາ ໃຫ້ລືຊາປຣາກົດໄປໃນສະກົລຊົມພູທະວີປທັງຫວງ ດັ່ງໄພຟຸງຍັງຄ້າງຄາຢູ່ມາກນ້ອຍເທົ່າໃດ ໃຫ້ໂອບອ້ອມພ້ອມມູລບັດນັ້ນ ປະກາຣນຶ່ງ ດັ່ງພຣະຣາຊບຸຕພຣະຣາຊນັດດາ ແລະເສນາອາມາຕຍ໌ຍັງຄ້າງຢູ່ກຣຸງອັງວະນັ້ນດັ້ນຈຣມາເຖິງກຣຸງເທພເພິ່ງພຣະບໍຣົມໂພທິສົມພາຣ ຂໍໃຫ້ອັຄຄະມະຫາເສນາທິບໍດີ ຜູ້ໃຫຍ່ມີຄວາມເມຕຕາທຸກເມື່ອທຸກປະກາຣ ອັນນຶ່ງ ດັ່ງໄພຟ້າຂ້າແຜ່ນດິນກຣຸງສຣີສັຕນາຄະນະຫຸຕ ອັນກົວ່ານເມືອງພ່າຍແຕກເຂົ້າໄປເພິ່ງພຣະບໍຣົມໂພທິສົມພາຣພຣະເຈົ້າກຣຸງເທພ ຂໍໃຫ້ຄືນໄປບ້ານເກົ່າເມືອງຫລັງທຳມາຫາກິນສືບທາງພຣະຣາຊໄມຕຣີໄວ້ຕາມບູຣານຣາຊປະເພນີຢ່າໃຫ້ຂາດ ປະກາຣໃດພຣະເຈົ້າທັງສອງພຣະອົງ ຈະຫຣົງພຣະກັລຍານະມິຕສ໌ສະຖິຕສຖຽນຣຈຽຣກາລໃນບໍວຣພຸທສາສນາສະມະນະພຣາມມະນາປະຊາຣາສດຣສັຕວະນິກຣອັນຢູ່ໃນເມືອງທັງສອງກຣຸງຈະໄດ້ຢູ່ເປັນສຸຂ ໄວໃນປັນຍາອັຄຄະມະຫາເສນາທິບໍດີກຣຸງເທພທຸກຢ່າງທຸກປະກາຣ.

ເຄື່ອງບັນນາກາຣ ງາຊ້າງ ໔ ກິ່ງ ສາດ ໘ ພືນ ພຣະສຸພັນນະບັຕຫນັກຄຳ ໑໐໐ ເບັ້ຽ ວ່າຫນັກ ໓! ພະອົບສຸພັນນະບັຕຫນັກຄຳ ໑ ! ໓ ຫມາກຣຸດສວິງຫນັກຄຳ ໑ ! ໑ ສູ້ວັນຄຳຣັກຫນັກຄຳ ໓ ຣອຍ ວ່າຫນັກ ກ ! ໘ ທອງຄຳ ໘ ຫລົ້ນຫນັກ ໘ ຣອຍວ່າຫນັກ ໔! ມາວັຫນະນຳສຸພະອັກສຣ ມາເຖິງທ່ານອັຄຄະມະຫາເສນາທິບໍດີ ສັກຣາຊ ໑໑໓໖ ຕົວ ເດືອນ ໔ ແຣມ ໓ ຄ່ຳວັນພຸດ ປີມະເມັຽ ສໍສົກ.

ພ້ອມກັນນີ້ພຣະຍາຫລວງເມືອງແສນ ຜູ້ທີ່ແຕກພະມ້າຫນີມາ ແລະ ພຣະເຈົ້າແຜ່ນດິນໄທໄດ້ຊ່ວຍເຫລືອສົ່ງຂຶ້ນມາເຖິງວຽງຈັນນັ້ນກໍໄດ້ມີສຸພະອັກສຣໄປເຖິງອັຄຄະມະຫາເສນາທິບໍດີປະເທສໄທເປັນສ່ວນຕົວ ແລະສົມເດັດພຣະສັງຄະຣາຊວຽງຈັນ ທີ່ສະຖິຕຢູ່ວັດກາງກໍໄດ້ມີສະມະນະສາຣໄປເຖິງພຣະສັງຄະຣາຊກຣຸງເທພ ຕິດຕໍ່ເປັນທາງໄມຕຣີເຫມືອນກັນ ດັ່ງມີສຳເນົາຕໍ່ໄປນີ້:

## ສຳເນົາສຸພະອັກສຣຂອງພຣະຍາຫລວງເມືອງແສນ

ສຸພະອັກສຣບໍວຣສຸຈຣິຕສມນີຫມຽງຄຸລອະຕຸລສເນຫາປຣະມາພິຊຊາໄສຍ໌ ໃນພຣະຍາເມືອງແສນຣາຊທານີບຸຣີຣົມອຸດົມສົມພັທລືສັກອັຄຄະມະຫາເສນາທິບໍດີ ນີມະທຸຣະຈິຕສນິທສເນຫາ ມາເຖິງອັຄຄະມະຫາເສນາທິບໍດີສຣີສຸຣະຊາຕບາທມູລິກາກຣບໍວຣຣັຕນາມາຕຍ໌ ໃນກຣຸງເທພມະຫານະຄຣບໍວຣທະວາຣາວະດີສຣີອະຍຸທຍາມະຫາດິລົກພົບນົພຣັຕນະຣາຊທານີບຸຣີຣົມ ດ້ວຍວຸທທິສວັສດີ ແຕ່ອະຕີທຸຣະມາກຫລາຍ ບໍຣົມໂພທິສົມພາຣລົ້ນເກົ້າເລື່ອມມຽງ ໄດ້ມາລຸເຖິງນະຄຣບ້ານເມືອງກໍໄດ້ກາບທູນສົມເດັດພຣະເຈົ້າຢູ່ຫົວ ໃຫ້ຮູ້ແຈ້ງຍັງກິຈການທຸກເບື້ອງທຸກປະກາຣ ສົມເດັດພຣະເຈົ້າຢູ່ຫົວ ກໍຫຣົງໂສມະນັສປຣາໂມທໂຊຕນາກາຣ ໃນສົມເດັດພຣະເຈົ້າຢູ່ຫົວເປັນອັນຍິ່ງຫນັກຫນາ ຈຶ່ງຫຣົງພຣະກະຣຸນາໂປຣດເກົ້າແຕ່ງຕັ້ງຣາຊທູຕ ອຸປທູຕ ຕຣີທູຕ

ຈັດວາທູດ ກຳກັບທູນພຣະສຸພັນນະບັຕຣັຕນະຣາຊະສາຣມຸງຄຸລຣາຊບັນນາການ ແລະ ສະມະນະສາຣ ສຸພະອັກສຣເປັນທີ່ບໍຣະບວນແລ້ວຈະໄດ້ຍົກຍ້າຍແລະກຣົມການຈະນຳສຸພະອັກສຣເຂົ້າມາເຖິງກໍໄດ້ຕ້ອນຮັບຕາມຣິດຕາມຄອງ ແລ້ວຈຶ່ງພ້ອມກັນແຈ້ງໃນສຸພະອັກສຣໂປຣດຂົ້ນມາວາ ດັ່ງພະມ້າອັນລົງມາຢູ່ໃນກຣຸງສຣີສັຕນາຄະນະຫຸຕນັ້ນ ໃຫ້ພູກມັດຈຳຈອງລົງມາທູນຖວາຍສົມເດັດພຣະພຸທເຈົ້າຢູ່ຫົວນັ້ນ ດັ່ງພະມ້າ ແລະ ຈະແຕກມາແຕ່ຊຽງໃຫມ່ນັ້ນຫາມິໄດ້ ດັ່ງພະມ້າໄປ່ສຸພະລາ ໄດ້ແຕ່ງມາຂໍກຳລັງນັ້ນກໍໄດ້ສົ່ງໃຫ້ຂຶ້ນໄປເຖິງເມືອງພະມ້າເມືອງນະຄຣກໍໄດ້ສະກັດລັດຂ້າຟັນເສັຽ ຈະໄດ້ຄືນມາເຖິງກຣຸງສຣີສັຕນາຄະນະຫຸຕນັ້ນຫາມິໄດ້ ປະການນຶ່ງດັ່ງວ່າ ຄອບຄົວຂ້າໄພ່ສົມເດັດພຣະເຈົ້າຢູ່ຫົວກຣຸງເທພ ອັນໄດ້ອົບພະຍົບຄອບຄົວເຂົ້າມາຢູ່ໃນກຣຸງສຣີສັຕນາຄະນະຫຸຕ ມີມາກນ້ອຍເທົ່າໃດມິໄດ້ປ້ອງປັກໄວ້ ມີມາໃນທ້ອງສຸພັນນະບັຕ ແລະ ສຸພະອັກສຣທຸກປະການຂໍໃຫ້ອັຄຄະມະຫາເສນາທິບໍດີຜູ້ໃຫຍ່ທັງປວງ ຂຶ້ນກາບບັງຄົມທູນສົມເດັດພຣະເຈົ້າຢູ່ຫົວ ຕາມມີມາໃນທ້ອງພຣະຣາຊສາຣທຸກສິ່ງທຸກປະການສັກຣາຊ ໓໖ ຕົວ ເດືອນ ໔ ແຣມ ໖ ຄ່ຳ ວັນ ໔.

ສຸພະອັກສຣຈາຣໃສ່ໃບລານເປັນອັກສຣລາວ ໃສ່ຖົງແພແດງປິດຕຣາຄັ່ງປະຈຳປາກຖົງເປັນຣູບບົວຫ້າກີບ.

---

## ສຳເນົາສະມະນະສານຂອງພຣະສັງຄະຣາຊວຽງຈັນ<br>ມີໄປເຖິງ ພຣະສັງຄະຣາຊກຣຸງເທບ

-----=== O ===-----

ສະມະນະສາຣສູຣພັຕຄອັຄຄະຕຸລາລະລັຕຕະສາທຣປະວຣຈິນຕານັຕຕະປະຣະມັຕຖະຄຳພີໄຣຍ໌ໄສຍ໌ນັນຕະລາພູຊຸດົມປະຣົມໂພພັຄອາຈາຣິຍະຄຸນບຸນຍະເຂຕຣ໌ໂລກເຊຕຖາທິຄົມພຣົມໄຕມາໃນຊະໄທໄພຣະທິຕະວິຣະຊິຕອະນິຕສຳມີວີຕັນຕຣາຍະຊິຕມວຣໄທຍະໄທຍະໄຕຍະສຣີຕີພະວັຄອັຄກຸຕລະວຣທິພໂພຊັນຍາ ສຸມະຄຸຕມະສົມ ມາຄົມປະຣະໄນຍະຕະຍະວະໄທຍະຊຸລຍະທະຍະທິຍາຊາສູຕສົມເດັດອັຄຄະວຣຣາຊຄູມະຫາວິນາຍະກະທະປະວະຣະຊິໂນລືຊາຕສາສນະໄທຍັນຍານຸຕຣະທຣທັມມາກະຖິກະມຸນີກວີບໍພິຕຣ໌ ສະຖິຕໃນຣາຊຣາມາທິປະຕິກາງກຣຸງຈັນທະບຸຣີຣາຊທານີ ມີສົມເດັດອັຄຄະວໍຣະຣາຊຄູມະຫາວັນຣາມາທິປະຕິ ເປັນປະທານແລະສົມເດັດພຣະຣາຊ ຄູສັງຄະສັມມຸຕິສຣນັຄນາຄົນທະຊິນບຸຕຣ໌-ພະຫຸສູຕສາສນາຍົກທັງຫລາຍໃນກຣຸງມະຫານະຄຣບໍວຣສຣີສັຕນາຄະນະຫຸຕວິສຸທທິຣັຕນະຣາຊທານີມີພຣົມວິຫາຣວຣທັມມານະກະອະຍານຸຕຣວຣະວະນິຕະ ມາເຖິງ ສົມເດັດພຣະສັງຄະຣາຊຣາຊາທິບໍດີສຣີສັງຄະປະຣິນາຍົກດີລົກຣັຕນະມະຫາສວາມີສຣີວິມົລທັມມ໌ວິສຸທພຸທໂຄສາຈາຣິຍະບໍພິຕຣ໌ ສະຖິຕໃນພຣະສຣີຣັຕນາບາງວ້າອາຣາມາຣາຊະມາທິບໍດີກາງກຣຸງຊຸຖຽງຄະໄຕຣຣັຕນະຣາຊທານີ ແລະສັງຄະມະຫານາຍຄະທິບໍດີຕຣີປີຕະກະທຣຈາຣິຍະທັງຫລາຍ ໃນກຣຸງມະຫານະຄຣປວຣທະວາຣາວະດີສຣີອະຍຸທຍາມະຫາດິລົກພົບນົພຣັຕນະຣາຊທານີບຸຣີຣົມຍ໌ດ້ວຍພຣະມະຫາວິສຸທ

ມະກຸຣະດະສະມະນະສາຣ ແລະ ສະມະນະມັງຄົລປັນນະການ ມີຈີວຣໂກໄສຍະຈີວຣກະປາສຣິເອກະຍຸຄົລ ປັກຂິຕະ ສະມຸຕຕະນັນເຕສະຫະທະວິຕັຕຕິກະປະຈັຕຖາຣະນະເອກະຍຸຄົລ ມະວັນນະສັມປັຕຕາພິຣົມຍ໌ ສົມເດັດອັຄຄະຣະພຣະ ສຣີສັງຄະຣາຊຣາຊາທິ ບໍດີສຣີສັງຄະປະຣິນາຍະກະຣັຕນະມະຫາສວາມີສຣີວິມົລທັມມ໌ວິສຸທທະໂຄສາຈາຣິຍະພຸທອົງຄະອາຣິຍະວົງສະວະກະດຸລຍາທິຄຸນ ຄະຄະນັນຕະສະທັມມ໌ໄຕຣໂລກຍະນາຖາ ສາທຸທະໄທທະໂຍລຸມະພະ ທຸພິທຣະປະຣະມາຈາຣິຍະບໍພິຕຣ໌ສະຖິຕໃນພຣະສຣີຣັຕນະບາງວ້າອາຣາມາທິບໍດີ ແຕ່ອະຕິທູຣະຖານະອາຄົມສັມປັຕຕາສົມເດັດພຣະສຣີສັງຄະຣາຊາທິປະຕິ ສຣີສັງຄະປະຣິນາຍົກ ອັນເຕເທວະມະຫານະຄຣປວຣະທະວາຣາວະດີສຣີອະຍຸທຍາ ໃຫ້ຊາຈັນນູ້າຍະປະວຸຕິກາຣວຣະພຸທສາສນາປະພຶຈນັນໂຕ ຈັນທະບຸຣີສຣີສັຕນາຄະນະຫຸຕ ວິສຸທທິວິຣຸລທິທະສິທວິເສສ ດ້ວຍເດຊພຣະຣັຕນະໄຕຣຍະຄຸນ ອັພພິສຸນທຣວຣະວຸທິທັນທະສິຕະກະຖາ ສັນຕາສິນຸກູສລາ ອາຈາຣິຍາສີສສານຸສິສສັມຕະຕິປະໄພຍະໃນຍະໄພຍະວິຣະທິຕະສມິທສຸຂສວັສດີ ນິຖິປະນະກາລສມັຍໂຍວາສັມມາຄົມ ສັມະຕາສະພຣົມມະຈາຣີພຣະສຣີສັງຄະມະມະຫາອະເປສິທູຕາ ຈຶ່ງເປສະນານັຄຄະຣະນາຍະກະບໍຣິນາຍະກະອາຄັມມະສັມປັຕຕາ ສົມເດັດພຣະສຣີສັງຄະຣາຊາທິບໍດີ ສຣີສັງຄະປະຣິນາຍະກະ ອັນເຕເທວະມະຫານະຄຣທະວາຣາວະດີສຣີອະຍຸທຍາ ໃຫ້ຊານຈັນຍາ ຊູ່ເບື້ອງຊູ່ປະການ ສິ່ງປະການໃດນິຕທັມມ໌ ຕັນຕິປີຕຸປີຕາວະມະຫາກະສັຕຣ໌ຂັຕຕິຍະອຸໄພທັງສອງ ຈັກເປັນທັມທາຕິທັມທະຕຣະແລະໃຫ້ຊະໄນຍະມະຫານະຄຣຣາຊທານີເທນະປະຕະເລກຂະເອຄັມມະທະຍະ ແລໃຫ້ສະມະນະພຣາມມະນະປະຊະຣັຖສັຕນິກຣຈະໄປມາໃນຍະນິຣະທຸກຂະສຸຂາໂຣຄະຍະນະຣະສວັຕຍະຍິ່ງກວ່າໂບຣານມະຫາກະສັຕຣາທິຣາຊ ແລະ ໃຫ້ພຣະຣັຕນະໄຕຣສາສນາສາຣິກທາຕເຈຕິຍະສຣີມະຫາໂພທິວິສຸທປະຕິມາວິໂຣຈໂຊຕນາຍາວະປັນຈະສວັສສະສະຫັສສະ ປະຣິເສທການນັ້ນ ໃສ່ໄວ້ໃນຄຳພີຣະຊຸຕມະວະຊີຣະປັນຍານໃນຍະສົມເດັດພຣະສຣີສັງຄະປະຣິນາຍະກະ ຕິລະກະຣັຕນະມະຫາສວາມີສຣີວິມົລທັມມ໌ວິສຸທພຸທໂຄສາຈາຣິຍະອະຣິຍະວົງສະວະຣາດຸລຍາທິຄຸນຄະນັນຕະມະຫັນຕະສະທັມມະໄຕຣໂລກຍະນາຖາ ສາທຸທູທະຍະໂຍລຸມພະທຸກທັພຫຣະປະຣະມາຈາຣິຍະບໍພິຕຣ໌ສະຖິຕໃນພຣະສຣີຣັຕນະບາງວ້າ-ຣາມຣາຊ-ຄນະກາງກຣຸງຊຽງຄະສັງນິປະວຣະຣັຕນະຣາຊທານີ ແລະ ສັງຄະມະຫາຄະນະທິປະຕິ ຕິປີຕະກະທຣາຈາຣິຍະທັງຫລາຍ ໃນກຣຸງມະຫານະຄຣປວຣທະວາຣາວະດີສຣີອະຍຸທຍາມະຫາດິລົກພົບນົພຣັຕນະຣາຊທານີບຸຣີຣົມຍ໌ ຈຶ່ງທູກປະການ ຈຸລສັຕຕິງສາທິກະສັກຣາຊ ພະຄຸນະມາສກາລາສັຕດິຖີ ພຸທຣັສນັກຂັຕຕະ.

ໃນການຕອບພຣະຣາຊາສຣຄັ້ງນີ້ ສົມເດັດພຣະເຈົ້າສີຣິບຸນຍະສາຣ ທຣົງແຕ່ງໃຫ້ພຣະຍາສຣີສຸທາຣາຊາ ຈ່າບ້ານປັນຍານົງຄົລ ກັບພຣະຍາມະຫາອຳມາຜັຍສຸນທຣໄມຕຣີ ເປັນຣາຊທູຕຈຳທູນພຣະຣາຊສາຣ ແລະໃຫ້ພຣະຍາສຸວັນນະປັຕຖະມົງຄົລ ກັບພຣະຍາສຸພັນທະນິຕໄມຕຣີ ເປັນຜູ່ເຊີນສຸພະອັກສຣ ແລະ ສະມະນະສາຣຄນະທູຕເຫລົ່ານີ້ ອອກຈາກວຽງຈັນ ເດືອນ ໔ ແຮມ ໖ ຄ່ຳ ວັນພຸດ ຄ.ສ.໑໗໗໔ (ພ.ສ.໒໓໑໗) ເຖິງກຣຸງເທພແລະໄດ້ເຂົ້າຖວາຍພຣະຣາຊສາຣ ໃນວັນຈັນ ເດືອນ ໖ ແຮມ ໑໔ ຄ່ຳ ຄ.ສ.໑໗໗໖

(ພ.ສ.໒໓໑໗).

ຝ່າຍພຣະເຈົ້າຕາກສິນ ພຣະເຈົ້າແຜ່ນດິນໄທ ໄດ້ຕອບພຣະຣາຊສາຣຄືນມາ ໃນເດືອນ ໗ ອອກໃຫມ່ຄ່ຳ ໑ ວັນອັງຄານ ປີດຽວກັນນີ້ ດັ່ງມີສຳເນົາຕໍ່ໄປນີ້:

### ສຳເນົາພຣະຣາຊສານຂອງພຣະເຈົ້າແຜ່ນດິນກຣຸງເທບ
### ຄັ້ງທີ ໔.

-o-

ພຣະຣາຊສາຣສຸນທຣ ໃນນະຄຣສຣີອະຍຸທຍາ ປະຕິວາກຍະເປສິຕາກຸ່ຣພຣະຣາຊສາຣ ມາແຕ່ອິສວຣພາພນົງກຸຕພຣະນະຄຣສຣີສັຕນາຄະນະຫຸຕ ດ້ວຍພຣະຍາສຸນທຣຣາຊາຈ່າບ້ານປັນຍາມົງຄົລພຣະຍາມະຫາອຳມາຕຍ໌ສຸນທຣໄມຕຣີ ຈຳທູນພຣະສຸພັນນະບັຕຣ໌ຣັຕນະຣາຊສາຣ ເຄື່ອງສຸພະມົງຄົລຣາຊບັນນາການລົງມາກໍໄດ້ທັສນາເສັດສິ້ນທຸກປະການ ຄັນແຈ້ງຂໍ້ກິຈການແລ້ວ ຈຶ່ງສືບພະມ່າແມ່ກອງທັບ ຊຶ່ງຈັບມາໄດ້ຄັ້ງນີ້ ໃຫ້ການແຈ້ງຂໍ້ຄວາມຊຸຍຣະທັສແລ້ວ ກໍໂທມະນັສຂັດແຄ້ນກະມົນຣາຊຫຶຣະໄທເປັນໃຫຍ່ຫລວງວ່າຕ້ອງອຶ່ນເຕືອງເສັຽຣາຊບຸຕຣ໌ຣາຊນັດດາໄປໄມ່ລ້ຽງດູອົດສູແລ້ວ ມີຫນຳຊ້ຳໃຫ້ສົ່ງບັນນາການດອກໄມ້ເງິນອິກເລົ່າຖ້າມິໃຊ່ພຣະເຈົ້ານະຄຣສຣີສັຕນາຄະນະຫຸຕ ກໍຈະສູເສັຽພຣະຊົນທີ່ໃຫ້ນຈະທົນທານມາໄດ້ຖຶງພຽງນີ້ຄວຣທີ່ສເວີຍພຣະສຸຂົລທາຣາຢູ່ແລ້ວ ແຕ່ທະວ່າ ຄັ້ງນີ້ນະຄຣສຣີອະຍຸທຍາຂໍອັນອາສາ ໃຫ້ແຕ່ພຣະເຈົ້າກຣຸງສຣີສັຕນາຄະນະຫຸຕ ບຳຣຸງມາ ໂດຍຣາຊຊັບ ຊ່າງມາ ຣີພົລບ້າງ ຝ່າຍນະຄຣສຣີອະຍຸທຍາກັບກຣຸງກຳພູຊາທິບໍດີ ຂໍຣັບປະກັນຕີເອົາກຣຸງຣັຕນະບຸຣະອັງວະເຊີນເອົາພຣະຣາຊບຸຕຣ໌ພຣະຣາຊນັດດາສົ່ງໄປຖວາຍ ຖ້າພຣະເຈົ້ານະຄຣສຣີສັຕນາຄະນະຫຸຕເຫັນ ທາຊນະພະມ້າໄມ່ກົວໄພແປດພຣະນະຄຣ ກໍເຣັ່ງສົ່ງກິຈຈານຸກິຈໄປໃຫ້ກຣຸງອັງວະຍົກລົງມາປະຈົນກັນຈະໄດ້ທັສນາທັງສອງຝ່າຍ ຊຶ່ງຝ່າຍພຣະອົງຫຣົງພິພົນເປັນຫລັກ ອິສວຣພາພມະກຸຕພຣະນະຄຣສຣີສັຕນາຄະນະຫຸຕ ສຸດບຸຣະພະທິສແລ້ວຈະມານົ່ງທໍຣະມາຣຢູ່ ຈະມີກູ້ພຣະນະຄຣຄືນກໍດູອັສຈັນຍ໌ ອັນຝ່າຍນະຄຣສຣີອະຍຸທຍາຫາເວືອດວົດໄມ່ ຈະຕ້ານຕໍ່ທຳໄປກວ່າຈະໄດ້ກຣຸງອັງວະຂໍພະອົງຈົງຮູ້ຊຶ່ງພຣະຣາຊຫຶຣະໄທ ປະການນຶ່ງ ຊຶ່ງຫຣົງພຣະກະຣຸນາການຍະພາພມາເປັນຄຣອງທາງບູຣານຣາຊປະເວນີ ນັ້ນຊຶ່ນຊົມໂສມະນັສຍິນດີ ຈະໄດ້ວິກິຈສາກັງຂາຣາຄີໃນອົງອິສວຣພາພມະກຸຕພຣະນະຄຣສຣີສັຕນາຄະນະຫຸຕປະການໃດປະການນຶ່ງຫາມິໄດ້ຂໍໃຫ້ຢູ່ໃນດຳຣິພຣະຜູ້ພົງສ໌ແກ່ນບູຣານກະສັຕຣ໌ຈົງທຸກປະການ ແຕ່ສົງໄສວ່າ ຖ້າໄມ່ຫຣົງພຣະກະຣຸນາຊ່ວຍກັນລ້າງພະມ້າ ໃຫ້ພຣະນະຄຣສຣີອະຍຸທຍາພົ້ນຈາກທາດມາເປັນໄທກ່ອນ ແລະຈະພາພຣະນະຄຣສຣີອະຍຸທຍາໄປເປັນເຂີຍທາສກຣຸງອັງວະ ດັ່ງລືກໍມີເຕັມຣາຊຫຶຣະໄທ ປະການໃດຈະຊອບຈະຄວຣ ກໍຂໍໃຫ້ຢູ່ໃນດຳຣິຣາຊປັນຍາພຣະເຈົ້ານະຄຣສຣີສັຕນາຄະນະຫຸຕຈົງທຸກປະການ ພຣະຣາຊສາຣ ນິພັນທະສົມຣິທທິເປສິຕາພາວະການ ບໍຣິເສທຕະຈຸລສັກຣາຊ ສັຕຕະດຶງສະຕາທິກະສະຫັສສະ ອັຊຊະສັງວັຈສະຣະ ເຊຕຖະມາສສຸກຂະ ປັກຂະປາຕິປົທທຣີດິຜູ້ມະວາຣ ພູມິປາລນັກຂັຕ

ຕະຣິກສ໌ ສວັສດີ.

## ສຳເນົາສຸພະອັກສຣເສນາບໍດີ ກຣຸງເທບ
## ຄັ້ງທີ ໓

ສຸພະອັກສຣບໍວຣມະຫານົງຄົລວິມົລກະຖາ ໃນອັຄຄະມະຫາເສນາທິບໍດີນທຣນຣິນທຣມາຕຣ໌ ຜູ້ບາທມູລິກາກຣ ເອກາທິສຣິສ ບໍພິຕຣ໌ພຣະພຸທທິເຈົ້າຢູ່ຫົວ ນະ ກຣຸງສຣີອະຍຸທຍາຊຶ່ງຊົມໂສມະນັສມາແຕ່ອັຄຄະມະຫາເສນາທິບໍດີ ນະ ກຣຸງສຣີສັຕນາຄະນະຫຸຕດ້ວຍພຣະຍາສຣີສຸທາຣາຊາ ຈາບ້ານປັນຍານົງຄົງ ພຣະຍາມະຫາອຳມາຕຍ໌ສຸນທຣໄມຕຣີ ພຣະຍາສຸວັນນະປັຕຖະນົງຄົລ ພຣະຍາສຸພັນທະມິຕຣ໌ໄມຕຣີ ທ້າວຕັງ ຈຳທູນພຣະສຸພັນນະບັຕຣ໌ສຸວັນນະຣາຊສາຣເຄື່ອງສຸພະນົງຄົລຣາຊບັນນາກາຣ ແລະເຊີນສະມະນະສາຣຖືສຸພະອັກສຣລົງມາຈຳເຣີນທາງພຣະຣາຊໄມຕຣີໂດຍບູຣະນະພຣະຣາຊປະເພນີ ພ້ອມກັນມາຖືງກຣຸງເທພມະຫານຄຣ ນະ ວັນຈັນ ເດືອນ ຜ ແຣມ ໑໔ ຄ່ຳ ປີອະແມ ສັປຕະສົກ ນັ້ນ ກໍໄດ້ຊວຍທຳນຸບຳຣຸງເຊີນສະມະນະສາຣໄປຖວາຍແກ່ສົມເດັດພຣະສັງຄະຣາຊາຄນະ ໆ ເຂົ້າມາຖວາຍພຣະພຣຕາມສະມະນະກິຈແລ້ວໄດ້ນຳພຣະຍາສຣີສຸທຣາຊາຈາບ້ານປັນຍານົງຄົລ ພຣະຍາມະຫາອຳມາຕຍ໌ສຸນທຣໄມຕຣີພຣະຍາສຸວັນນະປັຕຖະນົງຄົລ ພຣະຍາສຸພັນທະມິຕຍ໌ໄມຕຣີ ທ້າວຕັງ ເຂົ້າທູນລະອອງທູລີພຣະບາທເຝົ້າທູນເບີກຖວາຍພຣະສຸພັນນະບັຕຣ໌ສຸວັນນະຣາຊສາຣ ເຄື່ອງສຸພະນົງຄົລຣາຊບັນນາກາຣແລວ ແລ້ວອ່ານສຸພະອັກສຣກາທູນພະກະຣຸນາຖວາຍ ຄັນແຈ້ງຊຶ່ງລັກສນະພຣະຣາຊສາຣແລ້ວທຣົງພຣະກະຣຸນາໃຫ້ສືບພະມາແມ່ກອງທັບຊຶ່ງຈັບມາໄດ້ຄັ້ງນີ້ ໃຫ້ກາຣກາບທູນພຣະກະຣຸນາຕໍ່ໜ້າທູຕານຸທູຕ ເປັນການຄຸຍຣະຫັສກໍໂທມະນັສຂັດແຄ້ນພຣະຣາຊຫືຣະໄທໃຫ້ພຣະສຸນທຣະໄມຕຣີຣາຊທູຕຫລວງພັກດີວາຈາ ອຸປທູຕ ຂຸນພົຈນາພິມົລ ຕຣີທູຕ ຈຳທູນພຣະສຸພັນນະບັຕຣ໌ສຸວັນນະຣັຕນະຣາຊສາຣ ແລະເຄື່ອງສຸພະນົງຄົລຣາຊບັນນາກາຣຂຶ້ນໄປຖວາຍແຕ່ພຣະເຈົ້າກຣຸງສຣີສັຕນາຄະນະຫຸຕ ໃຫ້ອັຄຄະມະຫາເສນາທິບໍດີພາເຂົ້າບັງຄົມທູນຖວາຍແຈ້ງຣາຊກິຈ ຈົງທຸກປະກາຣ ປະການນຶ່ງຊຶ່ງເຣື່ອງຣາວສຸພະອັກສຣນັ້ນ ທຣົງພະກະຣຸນາວ່າປາງກ່ອນພະມ້າຍັງໄມ່ຍ່ຳຍີນະຄຣສຣີອະຍຸທຍາ ກັບນະຄຣສຣີສັຕນາຄະນະຫຸຕ ຄັ້ງນັ້ນ ເປັນເອກຣວມພຣຶກສາຜົລປັຕຖະພີດົລດັ່ງສຸວັນນະຣັຊຕະແກມແກ້ວງາມເປັນອັນນຶ່ງອັນດຽວກັນ ຝ່າຍອົງຜູ້ເປັນປິ່ນປົກນົງກຸຕພຣະນຄຣຖາວຣປະດຸຈດັ່ງບໍຣົມມະຈັກຣະພັຕຣາທິຣາຊຝ່າຍມາຖບໍຣິຈາມະເຕສີ ກໍກອບດ້ວຍແກ້ວແຫວນແສນສັຕພິຣັຕນະຣາຊຊັບທັງປວງປະດຸຈນຶ່ງອຸດຣກາໂຣຣາຊກັລຍານາສມັຄສະໂມສຣຄຣອງທິສທັງສີ່ເໜືອງນຶ່ງມີສເວຕຣ໌ສັຕຕ໌ກາງກັ້ນ ກອບດ້ວຍຈະຕຸຣົງຄະໂຍທາຊຸມເປັນໄປທົ່ວທິສານຸທິສ ຄັນໃກ້ຖືງເຂັນກໍເປັນໄປ ຈົນເສັຽພຣະນະຄຣສຣີອະຍຸທຍາ ສິ້ນພຣະວົງສາ ຍັງແຕ່ອິສວຣພາພົງກຸຕພຣະນະຄຣສຣີສັຕນາຄະນະຫຸຕ ກໍທຣົງພິຫທິພາພກາຣາຊໂອຣົສທີ່ຈະເປັນປິ່ນພຣະນະຄຣສືບໄປໄນ ຫາກພຣະອົງທຣົງທິສທັນກອບດ້ວຍວິຣິຍະເປັນອັນດີ ຈຶ່ງເສັຽແຕ່ຣາຊບຸຕຣ໌ຣາຊນັດດາໄປກຣຸງຣັຕບຸຣະອັງວະໂດຍຂົ້ນເຕງ ຂັດແຄ້ນພຣະຣາຊຫະຣິໄທນັກ ສົ່ງພຣະສຸພັນນະບັຕຣ໌ສຸວັນນະຣັຕນະຣາຊສາຣ

ແລະເຄື່ອງມົງຄົລຣາຊບັນນາການລົງມາ ທັງນີ້ເພື່ອຈະໃຫ້ເຊີນພຣະຣາຊບຸຕ໌ພຣະຣາຊນັດດານະກຣຸງຣັຕນະບຸຣະອັງວະ ສົ່ງໄປກຣຸງສຣີສັຕນາຄະນະຫຸຕນັ້ນ ຄວຣເຮົາຍິນດີຈະໄດ້ຂໍຣີພົລ ຊ້າງ ມ້າ ພຣະເຈົ້ານະຄຣສຣີສັຕນາຄະນະຫຸຕມາເປັນກຳລັງທຳສົງຄຣາມຕໍ່ກຣຸງຣັຕນະບຸຣະອັງວະສືບໄປ ເໝືອນໄດ້ກົ້ງພຣະນະຄຣແລ້ວ ຊອບເຮົາກຳໜົດໄປໃຫ້ຂ້າຂອບຂັນທະເສມາ ທຳນາຫາສະບຽງອາຫານໄດ້ແລ້ວເມື່ອຂນະໃດ ຄວຣເຮົາຍົກພົລຂຶ້ນໄປເຊີນສະເດັດພຣະຣາຊບຸຕຣ໌ພຣະຣາຊນັດດາ ຫາຄວາມຊອບຖວາຍໄປແກ່ພຣະເຈົ້າກຣຸງສຣີສັຕນາຄະນະຫຸຕຈຶ່ງຄວນ ອັນນຶ່ງພຣະນະຄຣແຫ່ງເຮົາອັບປາງ ທັງທີ່ຣະມານພຣະກາຍເໝືອນຫວ້າຍຫ້ອງຊະເລຫລວງ ຊຸສາຫະຫລຽບ ແລະ ຄອງຣາຊປະເພນີກໍຫລຸດລັບຫາມີສິ່ງຊຶ່ງຈະມຸ່ງໝາຍໄມ່ ບັດນີ້ເທພຍຸດາບຸພພະກຸສົນຫລັງຫາກດົນພຣະໄທພຣະເຈົ້າກຣຸງສຣີສັຕນາຄະນະຫຸຕ ທຣົງເມຕາກາຣຸນຍະພາພຄືນມາເປັນຄຣອງທາງຣາຊປະເພນີ ດັ່ງນີ້ ກໍເປັນມະຫັສຈັນຍ໌ໃຫຍ່ຫລວງ ເໝືອນພຣະສຸເມຣຸຣາຊອ່ອນນ້ອມລົງມາຫາຈອມປວກອັນນ້ອຍ ກໍຊ້ຳນັ້ນຖຸງເຂົ້າທີ່ ຈະໄດ້ກຣຸງຣັຕນະບຸຣະອັງວະເປັນແທ້ອັນຈຶ່ງພຣະນະຄຣຈະໄດ້ສມັຄສະໂມສຣເປັນສຸວັນນະຣັຊຸຕະປັຕຖະພີດຽວສືບພຣະຣາຊວົງສ໌ນັ້ນ ຄວຣເຮືອປຣົງຫຸຣະໄວ້ພຣະເຈົ້າກຣຸງສຣີສັຕນາຄະນະຫຸຕອັນສູງໃຫຍ່ຝ່າຍອັຄຄະມະຫາເສນາ ແລະ ເສນາພຣຶທທາມາຕຍ໌ຣາຊຄູປະໂຣຫິຕນຸກຂະລູກຂຸນຣາຊນິກຸລ ພຣະວົງກຣຸງກຳພູຊາທິບໍດີ ອຳມາຕຍ໌ ແຂກ ຝຣັ່ງ ມອນ ລາວ ຈີນ ພະມ້າ ຂເມນ ຈະເຫັນປະການໃດນັ້ນ ມຸກຂະມຸນຕຣີລູກຂຸນທັງປວງປຣຶກສາກາບທູນພຣະກະຣຸນາວ່າ ປະເທດໃດຝ່າຍພົງສ໌ເຈົ້າພຣະນະຄຣກຣຸງອັງວະທຸກວັນນີ້ ກໍຍ່ຳຍີຍັບເຍີນເສັດສິ້ນຣາຊການທັງນານກໍສູນຍັງແຕ່ອິສວຣພາພມົງກຸຕພຣະນະຄຣສຣີສັຕນາຄະນະຫຸຕພຣະອົງເປັນພົງແກ່ນກະສັຕຣ໌ແລ້ວກໍເປັນປະເພນີທີ່ຈະໄດ້ສືບພຣະວົງສາທິຣາຊ ຈະລະໃຫ້ຣາຊບຸຕຣ໌ຣາຊນັດດາໄປແປກບິນກັນ ດັ່ງນີ້ດູມິຄວຣ ຂໍພຣະເຈົ້າຢູ່ຫົວທຳການອາສາຂຶ້ນໄປເຊີນພຣະຣາຊບຸຕຣ໌ຣາຊນັດດາຫາຄວາມຊອບຖວາຍໄປ ປະນຶ່ງຈະໄດ້ຍ່ຳຍີເສັຽຊື່ ອາສັ້ງ ແລະ ອາທັມໂດຍພຣະຣິທ ແລະ ພຣະເດຊໄວ້ກຣີສດານຸພາພ ໄປກົລບ່ະວະສານ ອີກປະການນຶ່ງຈະໄດ້ສ້າງກຣຸງທົງສາວະດີ ຍົກຍອດພຣະເຈດີລະເກີ່ງກໍ່ສ້າງກຸສົລຕາມພຸທທັມນາຍ ປະການນຶ່ງຝ່າຍອົງອິສວຣພາພມົງກຸຕພຣະນະຄຣສຣີສັຕນາຄະນະຫຸຕ ກໍຈະໄດ້ດີພຣະໄທໃຫ້ຣີພົລຊ້າງມ້າຣາຊຊັບມາເປັນກຳລັງທຳການສົງຄາມສຳເຣັດຣາຊການມາຣາຊາພິເສກເມື່ອຂນະໃດ ຝ່າຍພຣະອົງເປັນພົງແກ່ນບູຮານກະສັຕຣ໌ ກໍຈະໄດ້ອວຍພຣະພຣໃຫ້ຖາວຣວັທນາການຈຳເຣີນຍິສຍິ່ງພຣະຊົນສຸກສືບໄປ ຂໍພຣະຣາຊທານໃຫ້ຈັດເຄື່ອງມົງຄົລຣາຊບັນນາການຖວາຍໄປໃຫ້ໝັ້ນຄົງ ໄວ້ດັ່ງພຣະເຈດີຍະສະຖານສຳເຣັດຣາຊການແລ້ວ ຂໍທຣົງພຣະກະຣຸນາ ພຣະເຈົ້ານະຄຣສຣີສັຕນາຄະນະຫຸຕ ຢ່າໃຫ້ທ້າວພຣະຍາມະຫາກະສັຕຣ໌ອື່ນໄປຍ່ຳຍີແປກປົນ ຂໍເດຊະນັ້ນທຣົງພຣະກະຣຸນາໂປຣດເກົ້າໂປຣດກະໝ່ອມ ເຫັນດ້ວຍໃຫ້ທຳຕາມປຶກສາ ຈຶ່ງແຕ່ງໃຫ້ພຣະສຸນທຣໄມຕຣີຣາຊທູຕຫລວງພັກດີວາຈາ ອຸປທູຕ ຂຸນພົຈນາພິມົລຕຣີທູຕຈຳທູນພຣະສຸພັນນະຣັຕນະຣາຊສາຣ ແລະຄຸມເຄື່ອງມົງຄົລຣາຊບັນນາການ ມາຖວາຍແກ່ພຣະເຈົ້າກຣຸງສຣີສັຕນາຄະນະຫຸຕ:

ພຣະແສງປືນຍາວ ໘ ອີງ

ແພຣໂມດພື້ນເງິນລາຍກິ່ງໄມ້ທັບນຶ່ງຍາວ ໑໘

໑

໐

ແພຣໂມດພື້ນຂາວລາຍທອງພັບນຶ່ງຍາວ ໗

໑

໐

ຜ້າລື້ວທອງປັຕລາ ໘ ຜືນ

ຜ້າພື້ນຂາວໜ້າເຈັຽຣະບາດນົກແກ້ວຫລຽວຫລັງ ໑ ຜືນ

ຜ້າຂາວບາງເນື້ອດີໜ້າທອງ ໘ ຜືນ

ແພຣດາໄຣ ໘ ພັບ

ສລອງພຣະບາທຢ່າງເທສເຊີງງອນຄູ່ ໑

ແລະເຄື່ອງພຣະຣາຊທານແກ່ອັຄຄະມະຫາເສນາທິບໍດີນັ້ນ:

ແພຣພື້ນມ່ວງໃໝ່ແກມທອງ ມ້ວນ ໑

ແພຣພື້ນນ້ຳເງິນລາຍທອງ " ໑

ແພຣພື້ນມ່ວງລາຍທອງ " ໑

ແພຣພື້ນມ່ວງກິ່ງໄມ້ແກມທອງ " ໑

ແລ້ວພຣະຣາຊທານມາແກ່ພຣະຍາຫລວງເມືອງແສນ ແພຣກ້ານແຍ່ງລາຍທອງ ມ້ວນນຶ່ງ ເພື່ອໃຫ້ສອງຝ່າຍຝ້າຫມັ້ນຄົງເປັນສຸວັນນະຣັຊຕະແກມແກ້ວຊຸ່ງໂຣຈໂຊຕນາ ດັ່ງພຣະມະຫາສເວຕຣ໌ສັຕຕ໌ກາງກັ້ນສອງ ພຣະມະຄຣໄປກັລປາວະສາຣ ແລະໃຫ້ອັຄຄະມະຫາເສນາທິບໍດີຊ່ວຍທຳນຸບຳຣຸງພາຫູຕານຸທູຕເຂົ້າກາບບັງຄົມທູນຖວາຍພຣະສຸພັນນະບັຕຣ໌ສຸວັນນຣັຕນະຣາຊສາຣ ແລະ ເຄື່ອງມົງຄົລຣາຊບັນນາການແຕ່ສົມເດັດພຣະເຈົ້າກຣຸງສຣີສັຕນາຄະນະຫຸຕ ແຈ້ງຣາຊກິຈຈິງທຸກປະການສຸພະອັກສຣມາ ມະ ວັນອັງຄາຣ ເດືອນ ໗ ຂຶ້ນຄ່ຳ ໑ ຈຸລສັກຣາຊ ໑໒໕໗ ປີມະແມ ສັປຕະສົກ.

ສຸພະອັກສຣ ຫຣົງແຕ່ງ ນາຍເດຊ ອາລັກສນ໌ ຂຽນເປັນອັກສຣໄທ ໑໑໗ ບັນທັດເປັນກະດາດໜັງ ໒ ແຜ່ນ ຊຸນສາຣປະເສີດ ນາຍບຸນຈັນ ອາລັກສນ໌ ທ່ານສົ່ງມາ ມະ ວັນ ໔ ໌ ໗ ຄ່ຳປີມະແມ ສັປຕະສົກ ພຣະຄລັງໃນຊ້າຍໄດ້ຈັດກະດາດຫນັງສຳຣັບຂຽນສຸພະອັກສຣສຳເນົາ ພຣະຄລັງວິເສດ ໄດ້ຈັດລອງງາໃສ່ຖົງແພຣພື້ນດຳພຸດທອງ ແບນຣະໃບແພຣແດງ ໃສ່ພານດຳມະລໍ່ສອງຊັ້ນ ໃສ່ຖົງແພພື້ນດຳພຸດທອງ ແບນຣະໃນແພຣແດງ ໃສ່ສຳເນົາສຸພຣະອັກສຣ ປິດຕຣາພຣະຣາຊສີໃຫຍ່ປຣະຈຳຕົ່ ໗ ດວງ ໑ ຕຣາພຣະຣາຊສີ

ໃຫ້ປຣະຈຳຕົ່ ກ ດວງ ໑ ຕຣາພຣະຣາຊສີນ້ອຍປຣະຈຳຕົ່ງປຣະຈຳປາກຖົງທັງສອງຈັ້ນ ນາຍເພັງລ່າມ ຂຽນສຸພະອັກສຣເປັນອັກສຣລາວ ໑໗ ບັນທັດ ເປັນກະດາດ ມີ ແຜ່ນດຶ່ງ ປິດຕຣາມ້າຫລວງຣາຊນິກູລປຣະຈຳຕົ່ນົພສີກ.

ວັນ ໔ ໆ ກ ຂ້າຫລວງຜູ່ຈຳທູນພຣະຣາຊສາຣ ໄດ້ເຊີນສຸພະອັກສຣໄປຈາກເມືອງທືນ.

## ສຳເນົາສະມະນະສານພຣະສັງຄະຣາຊກຣຸງເທບ
## ມີມາເຖິງ
## ພຣະສັງຄະຣາຊກຣຸງສຣີສັຕນາຄະນະຫຸຕ

-----=== ໐ ===-----

ສະມະນະສາຣສຸນທຣບໍວຣວະຈະນະ ອັຕຖະທັມມະຣະສີກະອະທິກະສີລສາຣາທິໄຕຣຊໄພໂລກະທິຕຍະພິທະສົມບັຕຕີສັງສິຊະນັສພັສນານິກຣອະນຣນຣິສຈຖຸພິທບໍຣະບັພພະສັຕວະສາສນັສປຣະໂຍຊນ໌ໂຊຕນາ ຍາວະປັນຈະສະທັສສະປະຣິເສທເຈຕນານຸທິສສຸພາສິຕບຣະສາທ ໃນສົມເດັດພຣະສັງຄະຣາຊທິບໍດີສຣີສັງຄະປະຣິນາຍົກຕຣີປີດົກທຣາຈາຣຍ໌ຍານຄັມພີຣະທັມມັຕຖາພິສໄນຍະອະທິປະໄຕຍຄນານິກຣອຣສົງສະຖິຕຍ໌ທຸຣະຫຣາຄຸນອະດຸລຍະເຕຣັສທູ ດົງຄະວັຕຖະສິກະຂັຕຍະສັນຕຸດຖີ ວິສຸທທະສະເລຂະອັປປີຈສະວິວິທຄຸນຄຸນາທານສະຖິຕຍ໌ຖາວຣຣັນຍາຄາມາວະດີສຣີສະກົລຄະນາຣາມຣັຕຖະວັທນະດີເຣກເອກນິສຣ ໃນບໍວຣມະຫາທາຕອາຣາມຫລວງ ມະກຣຸງເທພມະຫານະຄຣບໍວຣທະວາຣະວະດີສຣີອະຍຸທຍາມະຫາດິລົກພົບນົພຣັຕນະຣາຊທານີບຸຣີຣົມຍ໌ ມີມະໂນນຸສຣະໂສມະນັສສາປຣະຕີສະມະນະສາຣມາຍັງສົມເດັດພຣະສັງຄະຣາຊາທິບໍດີ ດ້ວຍສົມເດັດພຣະສັງຄະຣາຊາທິບໍດີ ນະ ກຣຸງສຣີສັຕນາຄະນະຫຸຕ ມີສະມະນະສາຣສະມະນະບັນນາກາຣອຸທິສມາເປັນເຣື່ອງຣາວບອກປຣະພຶຕເຫຕແຫ່ງວຣະພຸທສາສນາ ເປັນສີລວັຕຕາດີເຣກເອກຈັຊວາລຍ໌ວັທນະ ຍັງສະຖິຕສົມບູຣນ໌ຢູ່ໃນກຣຸງສຣີສັຕນາຄະນະຫຸຕ ແລະໃຫ້ຊ່ວຍຖວາຍພຣະພຣທີບາຍ ທຳນຸບຳຣຸງພຣະຣາຊສຸນທຣ ບໍວຣທັມມິຕນົງຄົລມູລົມທີສືບບູຣານຣາຊປະເພນີ ໃຫ້ຈຳເຣີນງານໃນທະໄວຍະວຣຣັຕນະຣາຊທານີ ເປັນສຣີສຸກສວັສດິພິພັທນະໃນພຣະພຸທສາສນາສະມະນາປະຊາກຣທັງສອງຝ່າຍຟ້າ ຄັນໄດ້ທັສນາສາຣ ກໍໂສມະນັສຈົງນຳເຣື່ອງສະມະນະສາຣສະມະນະບັນນາກາຣເຂົ້າມາຖວາຍພຣະພຣທີບາຍ ແດ່ສົມເດັດພຣະມະຫາກະສັຕຣາທິຣາຊເຈົ້າ ນະ ກຣຸງເທພມະຫານະຄຣ ໄດ້ທຣົງຟັງສະມະນະສາຣ ກໍທຣົງພຣະມະໂນພິຣົມຍ໌ເບີກບານວິມຸລປຣາໂມທໂມທະນາຍິ່ງນັກ ຈຶ່ງທຣົງພຣະກະຣຸນາໂປຣດເກົ້າດຳຣັສພຣະຣາຊບໍຣິຫາຣໃນທ່າມກາງສົງຣາຊາຄນະທັງປວງວ່າ ແຕ່ກ່ອນຍັງມິໄດ້ມີສະມະນະສາຣມາ ໄດ້ແຈ້ງຂ່າວວ່າ ພະມ້າຫມູ່ຮ້າຍອາທັມຄຸນພວກພົລມາທຳປຣາໄສຍທາງກາຣອື່ນເຫງບຽດບຽນກຣຸງສຣີສັຕນາຄະນະຫຸຕນັ້ນ ນ້ອຍກະມີລທະຣິໄທນັກອັດແຄ້ນດຸຈນັ້ງພະມ້າມາທຳແກ່ອາຕມາ ແລະຍາຕອັນເປັນທີ່ຮັກແຫ່ງໂຍມແດດຳຣິມຣ໌ວາຍ ດ້ວຍຫາທາງທີ່ຈະທຳນຸກບຳຣຸງກຣຸງສຣີສັຕນາຄະນະຫຸຕ ແລະວຣພຸທສາສນາ ກໍມິໄດ້ຫ່ວງທີ ບັດນີ້ມີສະມະນະສາຣມາເຖິງ

ພຣະຜູ້ເປັນເຈົ້າທັງຫລາຍເປັນທູຣະສົງຢ່າຫຣົງປຣາຣົພເລີຍໂຍມກໍໄດ້ຖວາຍຊີວິຕອຸທິສຕໍ່ພຣະຣັຕນະໄຕຣຍ໌ຈະຊົ່ວດີປະການໃດກໍແຈ້ງຢູ່ທຸກປະການ ຂໍພຣະຜູ້ເປັນເຈົ້າເອົາສະມະນະສາຣນີ້ປຶກສາພຣະສັງຄະຣາຊາຄະນະພ້ອມກັນຕາມສະມະນະກິຈ ແລ້ວຕອບໄປ ຈຶ່ງຖວາຍພຣະພຣລາ ນຳສະມະນະສາຣມາອ່ານປຶກສາໃນທ່າມກລາງພຣະສັງຄະຣາຊາຄະນະ ອະທິກາຣອັນດັບຝ່າຍຄັນຖາທູຣະ ວິປັສນາທູຣະທັງປວງ ໆ ປຶກສາວ່າພຣະສັງຄະຣາຊາທິບໍດີກຣຸງສຣີສັຕນາຄນະຫຸຕ ສົ່ງສະມະນະສາຣເຣື່ອງລັກສນະຄວາມ ທັງນີ້ຕ້ອງດ້ວຍພຣະຣາຊອາການປຣົມນິບັຕສົມເດັດພຣະມະຫາກະສັຕຣາທິຣາຊເຈົ້າກຣຸງເທພມະຫານະຄຣ ອັນຫຣົງພຣະຣາຊອຸສາຫະກະຣຸນາຍານບຳຣຸງພຣະພຸທສາສນາດັດແປງສັຕໂລກທັງປວງໃຫ້ຕັ້ງຢູ່ໃນຄອງທັມອັນດີ ແລະ ຝ່າຍຄະນະສົງທັງປວງ ອັນຣັກສາພຣະພຸທສາສນາ ອັນຢູ່ໃນແວ່ນແຄວ້ນກຣຸງເທພພຣະມະຫານະຄຣ ກໍຫຣົງພຣະກະຣຸນາສັ່ງສອນໃຫ້ເລົ່າຣຽນພຣະປະຕິໂມກຂະສັງວຣຂຶ້ນປາກຂຶ້ນໃຈທັງພຣະບາລີເນື້ອຄວາມ ໃຫ້ປະຕິບັຕຕາມພຣະວິນັຍສັງວະໂຣວາທ ແລ້ວຊ້ຳປຣະສາທສັ່ງສອນດ້ວຍພຣະທັມ ອັນເປັນໃຈພຣະໄຕປິດົກທັງ ໓ ຄືໃຫ້ຕັ້ງຢູ່ໃນທັມ ໔ ປະການຄື: ອາຍບາບ ກົວບາບ ກຽດບາບ ໜ່າຍບາບພຣະຣາຊາຄະນະທັງປວງໄດ້ຣັບພຣະຣາຊທານພຣະຣາຊໂອວາທມາປຣົມນິບັຕຕາມກໍເປັນສຸກສວັສດີ ສົມບູນດ້ວຍສີລະສາຣສະມະນະປະຕິວັທນະໃນພຣະສາສນາພຣະກະຣຸນາຄຸນມີແກ່ພຣະສະມະນະສົງທັງປວງ ນະກຣຸງເທພມະຫານະຄຣຫາທີ່ສຸດມິໄດ້ຝ່າຍຄາຣະວາສຣາຊບັພພະສັຕເລົ່າ ຜູ້ໃດມິໄດ້ຕັ້ງຢູ່ໃນສັຈທັມ ທຳໃຫ້ແຜ່ນດິນຈຸລາຈົລ ຫຣົງພຣະກະຣຸນາດັດແປງສັ່ງສອນທໍຣະມານໃຫ້ຢູ່ໃນສັຈສຸຈຣິຕທັມບູຣານຣາຊປະເພນີ ມີອາການປຣົມນິບັຕນັ້ນທ່ຽງຕຣົງຈະຕຸຣັສປະດຸຈນຶ່ງ ດິນນ້ຳ ເພີງ ລົມ ທາຕທັງ ໔ ອັນເປັນຄຸນປະໂຍຊນ໌ແກ່ບຸຄຄົລຜູ້ຣັກສາດີ ເປັນໂທສແກ່ບຸຄຄົລຜູ້ມິຣູ້ຣັກສາ ຄວນຈະເອົາພຣະອາການກິຣິຍາອັນເປັນອັສຈັນວິເສສກວາບໍຣົມກະສັຕຣາທິຣາຊ ແນ່ນອນໝັ້ນຄົງສະນີ້ເປັນປະຕິສະມະນະສາຣທັມບັນນາການຕອບໄປຖວາຍແກ່ສົມເດັດພຣະສັງຄະຣາຊາທິບໍດີ ແລະສັງຄະມະຫານາຄຣາຊາຄະນະ ນະກຣຸງສຣີສັຕນາຄະນະຫຸຕຜູ້ມີປຣີຊາຍານຄົມພີຣະພາບ ໃຫ້ພິຈາຣະນາພຣະອາການສົມເດັດພຣະມະຫາກະສັຕຣາທິຣາຊເຈົ້ານະກຣຸງເທພມະຫານະຄຣຊຶ່ງເປັນປຣົມນິບັຕຕາມຣາໂຊວາທຣາຊອານາຈັກຣັກສາສະມະນະພຣາມມະນາຈາຣຍ໌ ເສນາພຣຶຕທາມາຕຍ໌ ຣາສດຣ ສະນີ້ຍັງຈະຕ້ອງຕາມພຸທໂທວາທແລະຈະຄວຣ ສົມເດັດພຣະເຈົ້າກຣຸງສຣີສັຕນາຄະນະຫຸຕ ຈະຜູກພຣະຣາຊສັມພັນທະກັລຍານະມິຕຣ໌ມີປຣະໂຍຊນ໌ ອິທະໂລກະຍະ ແລຫລີ ເມື່ອວິຈາຣເຫັນວ່າ ຕ້ອງຕາມພຣະພຸທຊິໂນວາທແລ້ວກໍເຣັ່ງບຳຣຸງສົມເດັດພຣະມະຫາກະສັຕຣາທິຣາຊນະ ກຣຸງສຣີສັຕນາຄະນະຫຸຕໃຫ້ຕັ້ງຢູ່ໃນຣາຊທັມສຸຈຣິຕຜູກພຣະຣາຊສັມພັນທະມິຕຣ໌ໃຫ້ໝັ້ນຄົງຢ່າໃຫ້ແພຣ່ງພຣາຍ ເປັນອັນນຶ່ງອັນດຽວລ້ວຍພຣະອານຸພາພສອງບໍຣົມກະສັຕຣ໌ຕັ້ງຢູ່ໃນຣາຊທັມສຸຈຣິຕອັນຊື່ຕຣົງ ຝາກພຣະຊົນ ພຣະຊີພ ແກ່ກັນທັງສອງຝ່າຍຟ້າ ກໍຈະມີກຳລັງພຣະສຸຈຣິຕພາຍໃນ ກຳລັງພຣະປັນຍາ ກຳລັງພົລທະຫາຣ ກຳລັງພຣະຣາຊຊັບມາກຂຶ້ນ ອາຈປ້ອງກັນໝູ່ປັຈຈາມິຕຣ໌ ດ້ວຍອຸໄພຣັຖຣາຊທານີທັງສອງເປັນທອງທິພຍ໌ ປະຕິເຣກເອກຈິຕຣ໌ ເອກສັນທ໌ ອັນຍະມັນຍະຊີວິຕນິສສິຕະນິສໄສຍ໌ຊົນໄນຍ

ໜັ້ນໃນບໍຣິມກັລຍານະມິຕຣ໌ ສນິທສເນຫາໄປຈະເນັຽຣະໄພ ເນັຽຣະໂສກ ສະມະນະພຣາມມະນາຂັດຕິຍະ ວົງສານຸວົງສ໌ ເສນາທີບໍດີເສຕຖີວານິຊນະຣາກຣປະຊາຊົນໃນເນທະນີດົລທັງສອງຝ່າຍ ຈະມີສຸຂປະໂຍຊນ໌ ໄຊຍໂຍຕນາໃນບໍວຣພຸທສາສນາຖວນກຳໜົດ ໔໐໐໐ ຈຶ່ງມີພຣະພຸທດີກາສັ່ງໃຫ້ພຣະຄູປລັດລີກຂິດຄຳ ສົງຄ໌ ປຣຶກສາເປັນອັກສຣສະມະນະສາຣ ສົ່ງຕອບມາປຣະກາຣນຶ່ງ ຊຶ່ງສົມເດັດພຣະສັງຄະຣາຊາກຣຸງສຣີສັຕນາ ຄະນະຫຸຕຖວາຍຈີວຣສາດົກກັບປາສິກະພັຕໂກໄສຍະພັຕ ມິໄດ້ຕັດເປັນຂັນທ໌ຕາມວິນັຍທຸຕິຍະບັນຍັຕນັ້ນ ຄຣອງ ຈະເປັນອາບັຕ ຈຶ່ງບູຊາໄວ້ເປັນພຸທບູຊາ ຈົງໂມທະນາເອົາສ່ວນກຸສົລ ແລະດີຖວາຍສະມະນະບັນນາກາຣ ຜ້າຈີວຣກັບປາສິກະພັຕຕັດເປັນຂັນທ໌ຕາມວິນັຍທຸຕິຍະບັນຍັຕໄຕຣຈັຕປຣະຄົດ ແພຣສອງສາຍ ຮັດປຣະຄົດ ບວນໃໝຄາດເອວສາຍ ໑ ອັງວະແພຣ ໑ ສັນຖັດພຸດທອງ ໑ ຜ້າຂາວຕຣາງຊຸທະກັງ ໑ ຜ້າຂາວເຊັດ ມື ໑ ຖວາຍມາເປັນຢ່າງ ໃຫ້ພຣະສັງຄະຣາຊາທີບໍດີຄຣອງ ແລ້ວວ່າ ກລ່າວພຣະສົງທັງປວງ ໃຫ້ທຣົງຈີວ ຣຕັດເປັນຂັນທ໌ດຸຈຢ່າງສິ່ງມາຖວາຍນີ້ ຈຶ່ງຕ້ອງພຣະວິນັຍທຸຕິຍະບັນຍັຕ ຈຶ່ງໄດ້ຊື່ວ່າທຳນຸກບຳຣຸງວຣພຸທສາ ສນາໃນກຣຸງສຣີສັຕນາຄະນະຫຸຕເປັນແທ້ໄດ ພະຄຣອບແກ້ວຖາດທອງຂາວຣອງ ໑ ອົງ ແກ້ວຄູ່ ໑ ໝອນ ກຳມະຍີ່ພຸດທອງ ໑ ພຣົມລຽນຈຽນລາຍ ໑ ເສື່ອອ່ອນ ໑ ຕະນາວ ໑ ຣົ່ມແດງກຣອງຄັນຍາວຄູ່ ໑ ຣອງ ເທົ້າໜ້າພັບຫຸ້ມສັກຣາດຍູ່ ໑ ຣອງເທົ້າໜ້າພັບເລວຄູ່ ໑ ຄົນໂທດີບຸກຊຳຣະ ໑ ໝໍ້ດີບຸກຣອງມູຕ ໑ ຍ່າມສັກຣາດແດງ ໑ ກີບແວ່ນຟ້າຕະບະຣອງ ໑ ປຣະກາໃດສົມເດັດພຣະມະຫາກະສັຕຣາທິຣາຊເຈົ້າທັງ ສອງພຣະນະຄຣຣາຊທານີຈະມີພຣະຣາຊວຣທັມມິຕຣ໌ສນິທສເນຫາສະຖິຕໝັ້ນມິໄດ້ຈຸລາຈົລໃນພູມມິນທົລອາ ນາຈັກຣ໌ທັງສອງຣາຊທານີໃຫ້ວັທນາວຣພຸທສາສນາສືບໄປກໍໄວ້ໃນຄັມພີຣະຍານນຸບາຍແຫ່ງພຣະສັງຄະຣາຊາ ທີບໍດີ ນະ ກຣຸງສຣີສັຕນາຄະນະຫຸຕ ຈົງທຸກປຣະການ.

ສະມະນະສາຣສຣີທທິ ໃນບໍຣິເສທຕະບູລ ສັກຣາຊ ໑໑໓໗ ອັຊຊະສັງວັຈສຣະ ເຊຕຖະສຸຂປັກຂ໌ ດິຖີພູມະວາຣ ພູມິບາລຣົກສ໌ບໍຣິບູຣນ໌.

ຝ່າຍສົມເດັດພຣະເຈົ້າສີຣິບຸນຍະສາຣ ເມື່ອໄດ້ຮັບພຣະຣາຊສາຣຂອງພຣະເຈົ້າຕາກສິນ ເຈົ້າແຜ່ນ ດິນປະເທດໄທຄັ້ງທີ ໑ ນີ້ແລ້ວ ກໍທຣົງແຕ່ງໃຫ້ພຣະຍາສຣີສຸທາຣາຊາຈາບານປັນຍານົງຄົລພຣະຍາມະຫາ ອຳມາຕສຸນທຣໄມຕຣີ ແລະ ທ້າວຕັງ ເປັນທູຕ ຖືສຸພະອັກສຣຕອບຄືນໄປອີກເປັນຄັ້ງທີ່ ໒ ຂໍ້ຄວາມສຳຄັນ ໃນສຸພະອັກສຣຄັ້ງທີ່ ໒ ນີ້ມີຢູ່ ໓ ຂໍ້ຄື: ໑.ພຣະເຈົ້າສີຣິບຸນຍະສາຣ ຈະພຣະຣາຊທານພຣະຣາຊທິດາ ພຣະນາມວ່າ ນາງແກ້ວຍອດຟ້າກັລຍານີ ສຣີກະສັຕຣ໌ (ນາງຂຽວຄ່ອມ) ໃຫ້ແກ່ພຣະເຈົ້າຕາກສິນ ແຕ່ໃຫ້ ທາງກຣຸງເທພແຕ່ງຄົນຂຶ້ນມາຮັບເອົາ ໒.ທາງກຣຸງສຣີສັຕນາຄະນະຫຸຕໄດ້ຈັດເຂົ້າໄວ້ໃຫ້ ໔໐໐ ກຽນໃຫ້ ທາງກຣຸງເທພຂຶ້ນໄປຂົນເອົາເອງ. ໓. ທາງກຣຸງສຣີສັຕນາຄະນະຫຸຕ ບໍ່ມີປືນພຽງພໍຮັກສາບ້ານເມືອງ ຂໍໃຫ້ທາງກຣຸງເທພສົ່ງປືນຂຶ້ນໄປໃຫ້ ໒໐໐໐ ກະບອກ (ສຳເນົາສຸພະອັກສຣຄັ້ງທີ ໒ ນີ້ຫາຕົ້ນສະບັບບໍ່ເຫັນ)

ຄນະທູຕລາວຄັ້ງທີ ໒ ລົງໄປເຖິງກຣຸງເທພ ເມື່ອເດືອນ ໑໐ ແຮມ ໕ ຄ່ຳປີມະແມ ຄ.ສ.໑໗໗໕

(ຈຸລສັກຣາຊ ໑໑໓໗) ພຣະເຈົ້າຕາກສິນ ຈຶ່ງທຣົງສັ່ງໃຫ້ອັຄຄະມະຫາເສນາທິບໍດີ ຕອບສຸພະອັກສຣຄັ້ງທີ ໓ ຄືນມາ ດັ່ງມີສຳເນົາຕໍ່ໄປນີ້:

## ສຳເນົາສຸພະອັກສຣຂອງເສນາບໍດີກຣຸງເທບຕອບຄືນມາ
## ຄັ້ງທີ ໔

ສຸພະອັກສຣບໍວຣກະຖາ ອັຄຄະມະຫາເສນາທິບໍດີນທຣນະຣິນທຣາມາຕຍ໌ ຜູ້ບາທເອກາທິສຣິສບໍພິຕຣ໌ ສຣີອະຍຸທຍານະຄຣ ມີມະໂນໄມຍ ມາແຕ່ອັຄຄະມະຫາເສນາທິບໍດີ ນະ ກຣຸງສຣີສັຕນາຄະນະຫຸຕດ້ວຍພຣະຍາສຣີສຸທາຣາຊາຈ່າບ້ານປັນຍານົງຄົລ ພຣະຍາມະຫາອຳມາຕຍ໌ສຸນທຣໄມຕຣີ ທ້າວຕັງ ຖືສຸພະອັກສຣລົງໄປຈຳເຣີນທາງພຣະຣາຊໄມຕຣີ ໂດຍບູຣະນະຣາຊປະເພນີ ຖືງກຣຸງເທພ ນະ ວັນ ໘ ເດືອນ ໑໐ ແຮມ ໖ ຄ່ຳ ປີມະແມ ສັພສົກ ໄດ້ໃຫ້ເຈົ້າພນັກງານຮັບສຸພະອັກສຣແປລໄດ້ເນື້ອຄວາມວ່າ ພຣະເຈົ້າກຣຸງສຣີສັຕນາຄະນະຫຸຕ ໂທມະນັສດ້ວຍພຣະຣາຊບຸຕຣ໌ພຣະຣາຊນັພພາ ອັນຄ້າງຄາຢູ່ໃນກຣຸງອັງວະ ພຣະເຈົ້າກຣຸງສຣີສັຕນາຄະນະຫຸຕມິໄດ້ເສັງຄຣອງຣາຊປະເພນີແຫ່ງພຣະມະຫາກະສັຕ ມາວັທນະສົມເດັດພຣະເຈົ້າຢູ່ຫົວກຣຸງເທພບໍວຣທະວາຣາວະດີສຣີອະຍຸທຍາ ເພື່ອໃຫ້ຊູໄພຣັຕຖາທັງສອງເປັນເອກສູ່ວັນນະປັຕລືຊາປຣາກົດທົ່ວໄປໃນສາກົລຊົມພູທະວີບທັງປວງ ໃຫ້ອັຄຄະມະຫາເສນາທິບໍດີກຣຸງເທພຈັດແຈ້ງຂຶ້ນໄປແຫ່ແຫນພຣະຍອດແກ້ວກັລຍານີສຣີກະສັຕລົງມາໃນເດືອນຍີ່ປຣະການນຶ່ງພຣະເຈົ້າກຣຸງສຣີສັຕນາຄະນະຫຸຕໄດ້ຈັດເຂົ້າໄດ້ວໃນພຣະຄຣັງໄດ້ ໔໐໐ ກວຽນໃຫ້ແຕ່ງຊ່າງໂຄກະບື້ນໄປລາກເຂັນເອົາ ແລະສຸພະອັກສຣນັ້ນແລ້ວ ຈຶ່ງນຳເຣື່ອງພຣະຣາຊກິຈຈານຸກິຈ ແລະຍາສຣີສຸທາຣາຊາຈ່າບ້ານປັນຍານົງຄົລ ພຣະຍາມະຫາອຳມາຕຍ໌ສຸນທຣໄມຕຣີທ້າວຕັງ ຂຶ້ນກາບບັງຄົມທູນພຣະກະຣຸນາພຣະບາທສົມເດັດພຣະເຈົ້າຢູ່ຫົວຄັ້ນດຳຣັສຊາບໃຕ້ລະອອງແລ້ວ ກໍ່ຊື່ນຊົມໂສມະນັສສາກາຣຍິນດີ ມີພຣະຣາຊໂອງການມາຣພຣະບັນທູຣວ່າ ຖ້າພຣະເຈົ້າກຣຸງສຣີສັຕນາຄະນະຫຸຕ ແລະ ເຈົ້າເສນາພຣຶຕຫາມາຕຍ໌ ພິໂຣທກຣຸງອັງວະຮ່ວມສູກຮ່ວມທຸກຂ໌ ເປັນໃຈດ້ວຍກັນ ຂະເມນເຂມຂາພະມ້າ ຈະໄດ້ໃກ້ຣິພົລຜູ້ສັນທັດປືນ ໆ ຄາບສີລາ ສີ່ພັນ ຫ້າພັນ ຂຶ້ນໄປຝຶກປືນຊາວກຣຸງສຣີສັຕນາຄະນະຫຸຕ ປ້ອງກັນພຣະນະຄຣ ປຣະການນຶ່ງພຣະຣາຊວົງສ໌ອົງໃດ ໄມ່ສັນທັດກາຣນະຣົງສົງຄຣາມ ຈະໄດ້ຊ່ວຍບຳຣຸງເພື່ອຈະໃຫ້ສືບຣາຊວົງສາຕໍ່ໄປ ປຣະການນຶ່ງ ໂດຍສະເດັດໄປໄດ້ກຣຸງອັງວະ ພົບຣິພົລຄຣອບຄົວກຣຸງໃດ ຈະໄດ້ໃຫ້ຄືນພຣະນະຄຣກຣຸງນັ້ນ ປຣະການນຶ່ງ ຈະໄດ້ໃຫ້ເສນາຂ້າທູລລະອອງສອງຝ່າຍຝ້າຖືນຳພຣະພິພັທນ໌ສັຈຈາສເນຫາສນິທເປັນພັນທະມິຕຣ໌ແກ່ກັນ ແລະຊ່ວງກິຈກາຣນະຣົງສົງຄຣາມຄິດອ່ານປູ້ຣິກສາບຳຣຸງຣິພົລຊ້າງມ້າ ກຳຫນົດຂ້າຂອບຂັນທະເສມາເສຣັດ ໄດ້ມີພຣະຣາຊສາຣສຸພະອັກສຣຂຶ້ນໄປແຈ້ງແຕ່ກ່ອນແລ້ວ ຖ້າກຣຸງອັງວະໄມ່ຍົກຣິພົລລົງມາຝ່າຍກຣຸງສຣີອະຍຸທຍາຈະໄດ້ຍົກພົລຂຶ້ນໄປຕີ ກາຣສົງຄາມຕິດພັນກັນຢູ່ ຄັ້ນຈະເຊີນສະເດັດຮັບພຣະຍອດແກ້ວກັລຍານີສຣີກະສັດ ລົງມາໄວ້ພຣະນະຄຣກໍ່ຈະເປັນຫວງຫລັງພະວາພະວັງ ຖ້າເຈົ້າເສນາບໍດີປລົງໃຈຮ່ວມສຸກທຸກຂ໌ພຣະນະຄຣສຣີອະຍຸທຍາ ເພື່ອຈະມາ

ລ້າງພະມ້າດ້ວຍກັນເປັນແມ່ນໝັ້ນ ຫາຜູ່ໃດຈະປ້ອງກັນພຣະຍອດແກ້ວກັລຍານີສຣີກະສັດໄມ່ ກລົວຈະມີເຫດໄພພາຍຫລັງ ຖ້າຈະເຊີນພຣະຍອດແກ້ວກັລຍານີສຣີກະສັດລົງມານະຄຣສຣີອະຍຸທຍາ ຈະໄດ້ແຕ່ງການຮັບສູ້ຖ້າເປັນປຣະການດັ່ງນີ້ ກໍຈະມີສຸພະອັກສຣລົງມາ ເພື່ອພິຈາຣະນາດູຂໍ້ຄວາມໃນລັກສນະສຸພະອັກສຣນັ້ນຫາຄິດອ່ານຈຸດໝູມມາໂດຍການສົງຄາມໄມ່ ຍົກເນື້ອຄວາມມາແຕ່ວ່າ ພຣະເຈົ້າກຣຸງອັງວະຈະລົງມາສູ່ພຣະບໍຣົມໂພທິສົມພານຈິງງົດໄວ້ ເນື້ອຄວາມອັ້ນເປັນສັພເພສັດຕາໄມ່ໝັ້ນທ່ຽງ ແຈ້ງໄປໃນສຸພະອັກສຣແຕ່ກ່ອນແລ້ວ ແຕ່ຝ່າຍກຣຸງສຣີສັຕນາຄະນະຫຸດຫຼີບຍົກເອົາມາບອກລົງມາດັ່ງນີ້ ກໍໄມ່ຮູ້ທີ່ຈະເຈຣະຈາ ຫລືວ່າ ພຣະເຈົ້າກຣຸງສຣີສັຕນາຄະນະຫຸດ ກໍຈະເປັນໄພແກ່ພຣະຣາຊບຸດພຣະຣາຊມັດດາຈາກກຣຸງອັງວະນັ້ນກຣຸງສຣີອະຍຸທຍາຂໍຮັບປະກັນແກ້ໄຂໄປໂດຍວິທຍາຄົມ ໄມ່ໃຫ້ເປັນເຫດການເລີຍ ຖ້າກຣຸງສຣີສັຕນາຄະນະຫຸດໄມ່ເຊື່ອ ຈົ່ງຍຸຍົງຂຶ້ນໄປໃຫ້ພຣະເຈົ້າກຣຸງອັງວະເຣັ່ງຍົກລົງມາ ຝ່າຍກຣຸງສຣີອະຍຸທຍາຈະພິຄາດໃຫ້ກລ້ວຍຢູ່ໃນກລາງສມຣພູມ ອີກປຣະການນຶ່ງ ຈະຈັບເປັນໃຫ້ໂລກເຫັນທົ່ວຈຶ່ງດີປຣະການໃດ ກຣຸງສຣີສັຕນາຄະນະຫຸດ ຈະໄດ້ທັສນາທັງສອງຝ່າຍ ແລະຊຶ່ງກຣຸງສຣີອະຍຸທຍາ ຈະແຕ່ງຊ້າງມ້າແລະຄົນຂຶ້ນໄປຍົນເຂົ້າຂອງລົງມານັ້ນ ການສຶກນີ້ອັດສົນຢູ່ແລ້ວ ຖ້າກຣຸງສຣີສັຕນາຄະນະຫຸດ ຈະເຫັນແກ່ທາງໄມຕຣີຈະເອົາໃຫ້ກໍຕາມອັດສົນຢູ່ແລ້ວກໍແລ້ວໄປເຖີດ. ສຸພະອັກສຣມາ ນະ ວັນ ໒ ເດືອນ ໑໐ ແຮມ ໑໐ ຄ່ຳ ຈຸລສັກຣາຊ ໑໑໒໓ ປີມະແມ ສັພສົກ.

---

## ສົງຄາມລະຫວ່າງລາວ ກັບ ໄທ

ການຕິດຕໍ່ທາງພຣະຣາຊໄມຕຣີລະຫວ່າງປະເທດລາວ ກັບປະເທດໄທ ໃນສມັຍຂອງພຣະເຈົ້າສິຣິບຸນຍະສານນີ້ ໄດ້ຕັ້ງແຮກຕິດຕໍ່ກັນມາ ແຕ່ປີ ຄ.ສ.໑໗໗໕ ຈົນເຖິງ ຄ.ສ.໑໗໗໙ ຮວມເວລາ ໔ ປີ ແຕ່ນັ້ນມາກໍເລີຍບໍ່ມີການຕິດຕໍ່ກັນອີກ ມູນເຫດທີ່ພາໃຫ້ຂາດທາງພຣະຣາຊໄມຕີກັນນັ້ນ ເນື່ອງມາຈາກພຣະເຈົ້າສິຣິບຸນຍະສານບໍ່ໄດ້ປົງພຣະໄທຍຮ່ວມມືກັບປະເທດໄທຢ່າງຄັກແນ່ເພື່ອຕໍ່ສູ້ພະມ້າ ແລະເນື່ອງຈາກທາງເມືອງຫລວງພຣະບາງໄດ້ໄປສັບສໍ່ໄທວ່າ ພຣະເຈົ້າສິຣິບຸນຍະສານເປັນໃຈກັບພວກພະມ້າ ດ້ວຍເຫດນີ້ພວກໄທຈຶ່ງບໍ່ເຊື່ອໃຈລາວວຽງຈັນ ແລະພວກລາວເອງກໍບໍ່ເຊື່ອໃຈໄທ ຕັ້ງແຕ່ນັ້ນມາ ອັນນີ້ເອງເປັນຕົ້ນເຫດພາໃຫ້ປະເທດໄທຍົກທັບມາຕີປະເທດລາວໃນພາຍຫລັງຄື:

ເມື່ອພຣະວໍຣະຣາດຖືກກອງທັບວຽງຈັນຕີແຕກຈາກເມືອງໜອງບົວລຸ່ມພູ ແລະໜີໄປຕັ້ງຢູ່ບ້ານດອນມົດແດງ ແຂວງເມືອງອຸບົນນັ້ນ ພຣະວໍຣະຣາດ ໄດ້ເຂົ້າໄປສມັກຢູ່ໃຕ້ອຳນາດຂອງເຈົ້າໄຊຍະກຸມມານ ເຈົ້ານະຄອນຈຳປາສັກ ຄັນເຖິງປີ ຄ.ສ.໑໗໗໐ ພຣະເຈົ້າສິຣິບຸນຍະສານ ໄດ້ແຕ່ງໃຫ້ພຣະຍາອັຄຣາດ ຍົກກອງທັບລົງໄປຕີພຣະວໍຣະຣາດ ຝ່າຍເຈົ້າໄຊຍະກຸມມານເມືອງຈຳປາສັກ ຈຶ່ງແຕ່ງໃຫ້ພຣະຍາ ພົມຊຽງສາເອົາກອງທັບຂຶ້ນມາຕ້ານທານໄວ້ແລ້ວມີໜັງສືຂຶ້ນມາເຖິງພຣະເຈົ້າສິຣິບຸນຍະສານ ທູນຂໍໂທດພຣະວໍຣະຣາດໄວ້ ພຣະເຈົ້າສິຣິບຸນຍະສານຈຶ່ງມີຄຳສັ່ງໃຫ້ພຣະຍາອັຄຣາດ ຍົກທັບກັບຄືນວຽງຈັນ ຕໍ່ມາເຖິງປີ ຄ.ສ.໑໗໗໗ ພຣະວໍຣະຣາດຜິດໃຈກັບເຈົ້າໄຊຍະກຸມມານ ຈຶ່ງກັບຄືນມາຕັ້ງຢູ່ບ້ານດອນມົດແດງຂອງເກົ່າ ແລ້ວແຕ່ງໃຫ້ລູກຊາຍຊື່ ທ້າວກ່ຳ ນຳເອົາເຄື່ອງມຸງຄຸນບັນນາການລົງໄປຂໍຂຶ້ນກັບປະເທດໄທ ພ້ອມກັນນີ້ພຣະວໍຣະຣາດໄດ້ຟ້ອງຕໍ່ໄທວ່າພຣະເຈົ້າສິຣິບຸນຍະສານເປັນໃຈກັບພວກພະມ້າ ພໍດີໃນປີ ຄ.ສ.໑໗໗໗ ນີ້ເອງ ຝ່າຍເຈົ້າສິຣິບຸນຍະສານໄດ້ຊາບຂ່າວວ່າ ພຣະວໍຣະຣາດຜິດໃຈກັບເຈົ້າໄຊຍະກຸມມານແລ້ວແຕກໜີໄປຕັ້ງຢູ່ບ້ານດອນມົດແດງ ຈຶ່ງແຕ່ງໃຫ້ພຣະຍາສຸໂພເອົາກອງທັບລົງໄປຕີ ພຣະວໍຣະຣາດສູ້ບໍ່ໄດ້ແຕກຖອຍໄປຕັ້ງຢູ່ວຽງດອນກອງ ແລ້ວແຕ່ງຄົນໄປຂໍກຳລັງນຳເຈົ້າໄຊຍະກຸມມານ ໆ ບໍ່ຍອມໃຫ້ ພຣະຍາສຸໂພຈຶ່ງນຳໄປຕີພຣະວໍຣະຣາດເຖິງວຽງດອນກອງ ຈັບພຣະວໍຣະຣາດໄດ້ກໍຂ້າເສັຽ ທ້າວກ່ຳບຸດພຣະວໍຣະຣາດກັບພັກພວກຫລົບໜີໄດ້ ຈຶ່ງແຕ່ງໜັງສືໃຫ້ຄົນຖືລົງໄປເຖິງນະຄອນຣາຊສີມາໃຫ້ບອກລົງໄປເຖິງກຸງເທບ ຂໍເອົາກອງທັບໄທຂຶ້ນມາຊ່ອຍ.

ຝ່າຍພຣະເຈົ້າຕາກສິນ ພຣະເຈົ້າແຜ່ນດິນໄທ ຊຶ່ງມີຄວາມກິນແໜງແຄງໃຈໃຫ້ພຣະເຈົ້າສິຣິບຸນຍະສານຢູ່ແຕ່ກ່ອນແລ້ວ ພໍໄດ້ຊາບຂ່າວຈາກໜັງສືຂອງທ້າວກ່ຳ ກໍພິໂຣດ ໃຫ້ພຣະເຈົ້າສິຣິບຸນຍະສານເປັນອັນມາກ ຈຶ່ງແຕ່ງໃຫ້ ເຈົ້າພຣະຍາມະຫາກະສັດສຶກ (ພາຍລຸນມາໄດ້ເປັນເຈົ້າແຜ່ນດິນປະເທດໄທອົງທີ ໑ ໃນຣາຊວົງຈັກກຣີຕໍ່ມາຈົນທຸກວັນນີ້) ເປັນແມ່ທັບຍົກພົນມາທາງບົກ ສົມທົບກັບກຳລັງຫົວເມືອງຝ່າຍຕາເວັນອອກ ມີພົນ ໔໐.໐໐໐ ຄົນເສດ ແລະໃຫ້ເຈົ້າພຣະຍາສຸຣະສີ (ນ້ອງຊາຍຂອງພຣະຍາມະຫາກະສັດສຶກ)

ຍົກທັບເຮືອມາເມືອງຂເມນ ເກນພົລເມືອງຂເມນໄດ້ ໑໐.໐໐໐ ຄົນຕໍ່ເຮືອຮົບໃຫ້ແລ້ວຍົກຂຶ້ນມາຕາມຮູແມ່ນ້ຳຂອງໃນປີ ຄ.ສ.໑໗໗໘ ສ່ວນກອງທັບຂອງພຣະຍາມະຫາກະສັດສຶກ ຍົກມາທາງເມືອງ ນະຄອນຣາຊສີມາ ກາຍມາທາງເມືອງສຸຣິນ ເມືອງສີສະເກດ ແລະມາໂຮມກັນກັບກອງທັບເຮືອທີ່ແດນເມືອງຈຳປາສັກ ກອງທັບໄທທັງສອງກໍເຂົ້າຕີເອົາເມືອງຈຳປາສັກໄດ້ໂດຍງ່າຍ ເຈົ້າໄຊຍະກຸມມານເຈົ້ານະຄອນຈຳປາສັກ ບໍ່ກ້າຕໍ່ສູ້ໄດ້ໜີໄປລີ້ຢູ່ດອນໄຊ ແມ່ທັບໄທໃຫ້ທະຫານໄປນຳຈັບເອົາມາໄດ້ ເຈົ້າໄຊຍະກຸມມານຈຶ່ງຂໍຍອມເປັນເມືອງຂຶ້ນກັບປະເທດໄທແຕ່ນັ້ນມາ.

ຝ່າຍພຣະຍາສຸໂພ ແມ່ທັບຂອງພຣະເຈົ້າສິຣິບຸນຍະສານ ທີ່ຕັ້ງຢູ່ດອນກອງ ແຂວງຈຳປາສັກ ລັນໄດ້ຊາບວ່າ ກອງທັບໄທຍົກມາເປັນອັນມາກ ເຫັນຈະສູ້ບໍ່ໄດ້ ຈຶ່ງຖອຍກັບຄືນມາວຽງຈັນ ກາບທູນເຫດການໃຫ້ພຣະເຈົ້າສິຣິບຸນຍະສານຊາບທຸກປະການ ພຣະເຈົ້າສິຣິບຸນຍະສານຈຶ່ງຈັດແຈງປ້ອງກັນພຣະນະຄອນແລະແຕ່ງກອງທັບອອກໄປຕັ້ງຮັບຢູ່ເມືອງພານພ້າວ ເມືອງພະໂຄ ເມືອງຄຸກ ເມືອງໜອງຄາຍ ຈົນເຖິງເມືອງນະຄອນພະນົມ ກອງທັບໄທຍົກມາຕີເມືອງນະຄອນພະນົມແຕກ ພຣະບໍຣົມຣາຊາ (ກຸ່ມກັວ) ເຈົ້າເມືອງນະຄອນພະນົມ ຍົກຄອບຄົວໄປຕັ້ງຄ້າຍຢູ່ບ້ານດອນໜູໄດ້ ໔ ເດືອນ ເລີຍເຖິງແກ່ກັມຢູ່ທີ່ນັ້ນ ແລ້ວກອງທັບໄທກໍຍົກຂຶ້ນມາເຖິງເມືອງໜອງຄາຍ ເຂົ້າຕີເອົາເມືອງໜອງຄາຍໄດ້ ເມື່ອໄດ້ເມືອງໜອງຄາຍແລ້ວ ກໍຍົກຂຶ້ນມາຕັ້ງລ້ອມເມືອງພະໂຄ ແລະ ວຽງຄຸກໄວ້ ພວກຊາວເມືອງພະໂຄ ແລະ ວຽງຄຸກໄດ້ທຳການຕໍ່ສູ້ ແລະ ປ້ອງກັນຢ່າງແຂງແຮງ ກອງທັບໄທເຂົ້າຕີເອົາເມືອງບໍ່ໄດ້ ເວລານັ້ນແມ່ທັບໄທ ຈຶ່ງທຳກົນອຸບາຍຈັບເອົາຣາສດອນເມືອງໜອງຄາຍເປັນອັນມາກມາຕັດຄໍເອົາແຕ່ຫົວໃສ່ໃນເຮືອໃຫ້ເຕັມແລ້ວ ໃຫ້ແມ່ຍິງຊາວເມືອງໜອງຄາຍພາຍເຮືອຂຶ້ນມາຮ້ອງຂາຍຢູ່ລຽບທ່າເມືອງພະໂຄ ເມືອງວຽງຄຸກ ພວກຊາວເມືອງໄດ້ເຫັນດັ່ງນັ້ນ ກໍມີໃຈສະທ້ານຢ້ານກົວ ກອງທັບໄທຈຶ່ງເຂົ້າຕີເອົາເມືອງພະໂຄ ແລະ ເມືອງວຽງຄຸກໄດ້ແລ້ວຍົກຂຶ້ນມາຕັ້ງລ້ອມເມືອງພັນພ້າວ ກອງທະຫານເມືອງພັນພ້າວ ໄດ້ທຳການຕໍ່ສູ້ປ້ອງກັນເມືອງໄວ້ຢ່າງແຂງແຮງ ກອງທັບໄທຍັງບໍ່ສາມາດເຂົ້າຕີເອົາເມືອງໄດ້ ເປັນແຕ່ຕັ້ງລ້ອມເມືອງໄວ້ ຈົນເຖິງປີ ຄ.ສ. ໑໗໗໙.

ໃນເວລານັ້ນ ຝ່າຍພຣະເຈົ້າສຸຣິຍະວົງ ເຈົ້າແຜ່ນດິນຫລວງພຣະບາງໄດ້ຊາບຂ່າວວ່າ ກອງທັບໄທຂຶ້ນມາຕີວຽງຈັນ ກໍດີໃຈເພາະພຣະເຈົ້າສຸຣິຍະວົງ ມີຄວາມຄຽດແຄ້ນໃຫ້ພຣະເຈົ້າສິຣິບຸນຍະສານວ່າ ນຳກອງທັບພະມ່າມາຕີເມືອງຫລວງພຣະບາງ ພຣະເຈົ້າສຸຣິຍະວົງຈຶ່ງມີພຣະຣາຊສານລົງໄປບອກພຣະເຈົ້າແຜ່ນດິນໄທຂໍອາສາເຂົ້າຕີວຽງຈັນທາງດ້ານເໜືອ ແລ້ວພຣະເຈົ້າສຸຣິຍະວົງກໍເອົາທະຫານ ໓.໐໐໐ ຄົນລົງມາຕັ້ງລ້ອມວຽງຈັນໄວ້ທາງດ້ານຫລັງ ພຣະເຈົ້າສິຣິບຸນຍະສານເຫັນເສິກຂນາບທັງທາງໜ້າ ແລະ ທາງຫລັງ ເຫລືອກຳລັງ ຈຶ່ງໃຫ້ປະເມືອງພັນພ້າວ ແລ້ວຂ້າມມາໂຮມກັນຢູ່ວຽງຈັນ ກອງທັບໄທຈຶ່ງເຂົ້າເມືອງພັນພ້າວໄດ້ ແລ້ວຍົກຂ້າມແມ່ນ້ຳຂອງມາຕັ້ງຄ້າຍຢູ່ທາງຕາເວັນອອກວຽງຈັນ ພຣະເຈົ້າສິຣິບຸນຍະສານຈຶ່ງ

ແຕ່ງໃຫ້ ເຈົ້ານັນທະເສນ ຣາຊໂອຣົດ ເປັນແມ່ທັບຄຸມທະຫານອອກຈາກເມືອງໄປຕີຄ້າຍທະຫານໄທ ເຈົ້ານັນທະເສນ ຂີ້ຊ້າງພາຍຄຳ ສູ້ຫຶກສອກສາມນ້ອ ຕັ້ງແຕ່ຣົບກັນມາໄດ້ ໔ ເດືອນເສດ ກອງທັບໄທຍັງບໍ່ສາມາດເຂົ້າຕີເມືອງໄດ້ ແຕ່ພຣະເຈົ້າສີຣິບຸນຍະສານເຫັນວ່າ ຈະສູ້ໄປບໍ່ໄຫວ ຈຶ່ງພາເອົາເຈົ້າອິນ, ເຈົ້າພົມ ຣາຊໂອຣົດ ແລະ ຄົນສນິດລັກລົງເຮືອລ່ອງໜີໄປເມືອງຄຳເກີດໃນເວລາກາງຄືນ ຝ່າຍເຈົ້ານັນທະເສນໄດ້ຊາບວ່າ ພຣະຣາຊບິດາລັກໜີແລ້ວກໍເສັຽພຣະທັຍ ຈຶ່ງຕົກລົງໃຈເປີດປະຕູເມືອງຍອມໃຫ້ກອງທັບໄທເຂົ້າເມືອງໄດ້ ໃນວັນຈັນ ເດືອນ ໑໐ ແຮມ ມໍ ຄ່ຳ ປີກຸນ ຈຸລສັກຣາດ ໑໑໔໑ (ຄ.ສ.໑໗໗໙) ເມື່ອກອງທັບໄທເຂົ້າເມືອງໄດ້ແລ້ວ ກໍຈັບເອົາເຈົ້ານັນທະເສນຣາຊໂອຣົດເຈົ້າອຸປຣາດວງໜ້າ ແລະ ພຣະນາງແກ້ວຍອດຟ້າກັລຍານີສຣີກະສັຕຣີພຣະຣາຊທິດາຂອງພຣະເຈົ້າສີຣິບຸນຍະສານ ຕລອດຈົນພຣະບໍຣົມມະວົງສານຸວົງ ເສນາຂ້າຣາຊການຜູ້ໃຫຍ່ ສາວສນົມນອກໃນ ທັງປວງໄວ້ໝົດ ແລ້ວກໍກວດເກັບເອົາຊັບສິນເງິນຄຳເຂົ້າຂອງອັນມີໃນທ້ອງພຣະຄລັງຫລວງ ແລະຕາມຫໍໂຮງບ້ານເຮືອນຂອງຂ້າຣາຊການໝົດທຸກແຫ່ງ ຕລອດເຄື່ອງສັພສາດ ຕຣາອາວຸດປືນໃຫຍ່ ປືນນ້ອຍເປັນອັນມາກ ແລະ ພຣະແກ້ວມໍຣະກົດ ພຣະບາງ ເມື່ອກວດເກັບເອົາໝົດແລ້ວ ຈຶ່ງໄດ້ຂົນຂ້າມໄປໄວ້ເມືອງພົນພ້າວ ພ້ອມດ້ວຍຄອບຄົວຊາວເມືອງວຽງຈັນທັງມວນ ແລ້ວແມ່ທັບໄທຈຶ່ງໃຫ້ສ້າງຫໍພຣະແກ້ວຂຶ້ນໄວ້ທີ່ເມືອງພົນພ້າວເປັນການຊົ່ວຄາວ ແລະພ້ອມກັບຕີວຽງຈັນໄດ້ນີ້ ແມ່ທັບໄທກໍໄດ້ບັງຄັບໃຫ້ເຈົ້າສຸຣິຍະວົງ ເຈົ້ານະຄອນຫລວງພຣະບາງ ຍອມເປັນເມືອງຂຶ້ນຂອງປະເທດໄທດັ່ງດຽວກັນ.

ເຖິງເດືອນຍີ່ ແມ່ທັບໄທຈຶ່ງແຕ່ງໃຫ້ພຣະຍາສຸໂພເປັນຜູ້ຮັກສາພຣະນະຄອນວຽງຈັນ ແລ້ວແມ່ທັບໄທກໍກວດເອົາຄອບຄົວລາວວຽງຈັນ ກັບທັງພຣະຣາຊບຸດພຣະຣາຊທິດາວົງສານຸວົງ ຂຸນນາງທ້າວພຣະຍາ ພໍ່ຄ້າຄະຫົບໍດີ ເສດຖີ ຕລອດຊັບສົມບັດເຂົ້າຂອງຊ້າງມ້າ ພຣະແກ້ວ ພຣະບາງ ລົງໄປບາງກອກ ເດືອນຍີ່ແຮມໄປເຖິງເມືອງສະລະບຸຣີ ແລ້ວແມ່ທັບໄທ ຈຶ່ງໃຫ້ຄອບຄົວລາວຫລາຍໝື່ນຄົວ ຕັ້ງບ້ານເຮືອນຢູ່ທີ່ນັ້ນ ເອົາລົງໄປໄວ້ບາງກອກກໍແຕ່ຈຳເພາະທີ່ເປັນເຊື້ອກະສັດ ແລະຂ້າຣາຊການຜູ້ໃຫຍ່ເທົ່ານັ້ນ.

ພຣະຣາຊອານາຈັກລາວທັງ ມໍ ອານາຈັກ ຄື ນະຄອນຈຳປາສັກຂອງເຈົ້າໄຊຍະກຸມມານ ໑ ນະຄອນວຽງຈັນ ຂອງເຈົ້າສີຣິບຸນຍະສານ ໑ ນະຄອນຫລວງພຣະບາງຂອງເຈົ້າສຸຣິຍະວົງ ໑ ໄດ້ເສັຽຄວາມເປັນເອກຣາດໃຫ້ແກ່ປະເທດໄທລົງພ້ອມກັນ ໃນປີ ຄ.ສ.໑໗໗໙ ດ້ວຍຄວາມບໍ່ຖືກຕ້ອງຄ່ອງກັນ ດ້ວຍຄວາມຄຶດບັງບຽດຄຽດແຄ້ນໃຫ້ແກ່ກັນ ໂຮມຄວາມວ່າ ປະຊາຊົນລາວໄດ້ອົພຍົບ ລົງມາຕັ້ງຫລັກຖານເປັນບ້ານເມືອງຢູ່ເລາະລຽບແມ່ນ້ຳຂອງປົກຄອງກັນເອງຕໍ່ມາແຕ່ຄັ້ງຂຸນລໍ ເມື່ອ ຄ.ສ.໗໔໗ ຈົນເຖິງສມັຍຂອງພຣະຍາສີຣິບຸນຍະສານ ເສັຽເອກຣາດໃຫ້ແກ່ປະເທດໄທໃນປີ ຄ.ສ.໑໗໗໙ ນີ້ ຮວມເວລານານເຖິງ ພັນປີເສດ.



ພຣະເຈົ້າ ກິງກິສຣາດ

## ໔. ອານາຈັກລ້ານຊ້າງຫລວງພຣະບາງ

### (໑) ຣັຊການຂອງພຣະເຈົ້າກິງກິສຣາດ

ພຣະນະຄອນລ້ານຊ້າງຫລວງພຣະບາງ ໄດ້ແຍກເປັນເອກຣາດນຶ່ງຕ່າງຫາກຈາກນະຄອນວຽງຈັນ ໃນປີ ຄ.ສ.໑໗໐໗ ໃນສມັຍຂອງພຣະໄຊຍະເສດຖາທິຣາດທີ່ ໒ (ພຣະເຈົ້າໄຊອົງເວ້) ຂຶ້ນຄອງວຽງຈັນ ໂດຍສາເຫດດັ່ງຕໍ່ໄປນີ້:

ໃນເວລາພຣະໄຊຍະເສດຖາທິຣາດທີ່ ໒ ໄດ້ຂຶ້ນຄອງຣາດສົມບັດໃນນະຄອນວຽງຈັນ ນັ້ນພຣະອົງໄດ້ແຕ່ງຕັ້ງໃຫ້ທ້າວລຣງພຣະອະນຸຊາ ເປັນອຸບຣາດຂຶ້ນໄປຄອງເມືອງຫລວງພຣະບາງເວລານັ້ນ ເຈົ້າກິງກິສຣາດ ເຈົ້າອິນທະໂສມ ແລະເຈົ້າອົງຄຳ ຢ້ານພຣະໄຊຍະເສດຖາທິຣາດຈະທຳອັນຕະຣາຍຈຶ່ງພາກັນລັກໜີຂຶ້ນ ໄປຢູ່ເມືອງພົງ ສ່ວນເຈົ້າອິນທະໂສມ ໜີໄປຢູ່ເມືອງແພ່ ຕໍ່ມາເຈົ້າກິງກິສຣາດ ກັບ ເຈົ້າອົງຄຳ ຍົກກອງທັບກຳລັງເມືອງພົງລົງມາຕີນະຄອນຫລວງພຣະບາງ ທ້າວລອງ ຜູ້ຄອງເມືອງຫລວງພຣະບາງສູ້ບໍ່ໄດ້ຈຶ່ງໄດ້ອົພຍົບ ລົງມາວຽງຈັນ ແລະໄດ້ເຊີນເອົາພຣະບາງລົງມານຳໃນຄາວນັ້ນດ້ວຍ.

ຝ່າຍເຈົ້າກິງກິສຣາດ ແລະ ເຈົ້າອົງຄຳ ເມື່ອຕີເມືອງຫລວງພຣະບາງໄດ້ແລ້ວ ກໍຍົກທັບເລີຍລົງມາຕີວຽງຈັນ ໄດ້ຕັ້ງຄ້າຍລ້ອມວຽງໄວ້ ເຈົ້າໄຊຍະເຊດຖາທິຣາດທີ ໒ ເຈົ້ານະຄອນວຽງຈັນ ເຫັນຈະສູ້ກອງທັບຂອງເຈົ້າກິງກິສຣາດບໍ່ໄດ້ ຈຶ່ງແຕ່ງຣາຊທູດຖືພຣະຣາຊສານລົງໄປຖວາຍພຣະເພທະຣາຊາ ພຣະເຈົ້າແຜ່ນດິນກຸງສີອະຍຸທຍາ ຂໍໃຫ້ຍົກກຳລັງມາຊ່ອຍ ພຣະເພທະຣາຊາ ຈຶ່ງຂຶ້ນມາໂອບໂລມພຣະກະສັດທັງສອງບໍ່ໃຫ້ຣົບເລວກັນ ແລະໃຫ້ແບ່ງປັນເຂດແດນກັນໃນປີ ຄ.ສ.໑໗໐໗ ຄື: ແຕ່ຟາກແມ່ນ້ຳເຫືອງຂຶ້ນໄປໃຫ້ເປັນເຂດແດນອານາຈັກຫລວງພຣະບາງ ແຕ່ໄຕ່ນ້ຳເຫືອງລົງມາ ໃຫ້ເປັນເຂດແດນອານາຈັກວຽງຈັນ ແຕ່ນັ້ນມາວຽງຈັນກັບຫລວງພຣະບາງຈຶ່ງແຍກເປັນຄົນລະເອກຣາດບໍ່ຍອມຂຶ້ນແກ່ກັນ ແລ້ວພຣະກິງກິສຣາດກໍສເວີຍຣາຊສົມບັດຢູ່ນະຄອນຫລວງພຣະບາງ ຕໍ່ມາຈົນເຖິງ ຄ.ສ.໑໗໑໓ ຈຶ່ງສະເດັດສູ່ຣະຄົດພຣະເຈົ້າກິງກິສຣາດມີພຣະຣາຊທິດາ ໒ ອົງຣາຊບຸດ ໑ ອົງ ຄື: ເຈົ້າແໜ່ນສາວ ໑ ເຈົ້າແໜ່ນຄຳ ໑ ພຣະໂອຣົດ ຊື່ເຈົ້າອົງຄຣາດ.

### (໒) ຣັຊການສົມເດັດພຣະບໍຣົມຂັດຕິຍະວົງສາ

### (ເຈົ້າອົງຄຳ)

ເມື່ອພຣະເຈົ້າກິງກິສຣາດສະເດັດສູ່ຣະຄົດແລ້ວ ເຈົ້າອົງຄຳກໍໄດ້ສເວີຍຣາດແທນທັງພຣະນາມວ່າສົມເດັດພຣະບໍຣົມຂັດຕິຍະວົງສາ ຕໍ່ມາເຈົ້າອິນທະໂສມ ຜູ້ໜີໄປຢູ່ເມືອງແພ່ໄດ້ໄປຂໍກຳລັງເມືອງຫລ້າເມືອງພົງ ລົງມາຕີນະຄອນຫລວງພຣະບາງ ສົມເດັດພຣະບໍຣົມຂັດຕິຍະວົງສາ ເຫັນວ່າ ເປັນພີ່ນ້ອງກັນແລະໄດ້ໜີຣ້ອນມານຳກັນບໍ່ຢາກໃຫ້ເກີດຄວາມວິວາດ ຈຶ່ງແຕ່ງໃຫ້ອຳມາດອອກໄປເຊີນເອົາມາປົກຄອງ

ບ້ານເມືອງຊ່ວຍກັນ ເຈົ້າອິນທະໂສມກໍຍິນດີເຂົ້າມາຊ່ອຍຣາຊການຢູ່ໃນນະຄອນຫລວງພຣະບາງ.

## (໓) ຣັຊການເຈົ້າອິນທະໂສມ

ສົມເດັດພຣະບໍຣົມຂັດຕິຍະວົງສາ ສເວີຍຣາຊສົມບັດມາໄດ້ ໑໐ ປີ ຄື: ເຖິງປີ ຄ.ສ.໑໗໘໓ ເຈົ້າອິນທະໂສມ ກັບ ພຣະຍາເມືອງຊາຍ ຄິດກັນເປັນກະບົດ ອັດປະຕູເມືອງ ການພຣະບໍຣົມຂັດຕິຍະວົງສາໃນເວລາອອກໄປຕໍ່ນົກ ພຣະບໍຣົມຂັດຕິຍະວົງສາເຂົ້າເມືອງບໍ່ໄດ້ ແລະຮູ້ວ່າ ເຈົ້າອິນທະໂສມຍາດເອົາຣາຊສົມບັດແລ້ວຈຶ່ງຫນີໄປອາສັຍຢູ່ເມືອງຊຽງໃຫມ່ ຝ່າຍເຈົ້າອິນທະໂສມກໍເລີຍປະກາດຕົວຂຶ້ນເປັນເຈົ້າແຜ່ນດິນໃນປີນັ້ນເອງ ເຈົ້າອິນທະໂສມຄອງເມືອງມາໄດ້ ໘໙ ປີ ມີພຣະຣາຊໂອຣົດ ແລະ ທິດາຣວມທັງຫມົດ ໑໔ ຄົນ ເປັນຊາຍ ໙ ຄົນ ຍິງ ໕ ຄົນ. ຊາຍ ໙ ຄົນນັ້ນຄື: ເຈົ້າໂຊຕິກະ ໑ ເຈົ້າອະນຸຣຸທະ ໑ ເຈົ້າມາກ ໑ ເຈົ້ານາຣະທະ ໑ ເຈົ້າຊຸຖວົງ ໑ ເຈົ້າອົງເອກ ໑ ເຈົ້າສູຣິຍະວົງ ໑ ເຈົ້າສູຣະວົງ ໑ ເຈົ້າອິນທະພົມ ໑ ທິດາ ໕ ຄົນນັ້ນຄື: ເຈົ້ານາງແກ້ວຣັຕນາພຸ້ມພູ ໑ ເຈົ້າສີຄຳກອງ ໑ ເຈົ້ານາງສຸຊາດາ ໑ ເຈົ້ານາງສຸທັມມາ ໑ ເຈົ້ານາງມາດ ໑ ເຈົ້ານາງແວນແກ້ວ ໑.

ເຈົ້າອິນທະໂສມຄອງຣາຊສົມບັດມາເຖິງ ຄ.ສ.໑໗໔໕ ກໍສິ້ນພຣະຊົນ.

## (໔) ຣັຊການເຈົ້າໂຊຕິກະ

ເຈົ້າອິນທະໂສມສິ້ນພຣະຊົນແລ້ວ ເສນາອາມາດຈຶ່ງເຊີນເອົາເຈົ້າອິນທະພົມໂອຣົດຄົນທີ ໙ ຂຶ້ນເປັນເຈົ້າແຜ່ນດິນ ເຈົ້າອິນທະພົມຄອງເມືອງຢູ່ ໓ ເດືອນ ກໍມອບເວນຣາຊສົມບັດໃຫ້ເຈົ້າໂຊຕິກະ ຜູ້ເປັນພີ່ຊາຍໃຫຍ່ ເຈົ້າໂຊຕິກະຄອງເມືອງມາໄດ້ ໘໘ ປີ ຄ.ສ.໑໗໗໑ ເຈົ້າສູຣິຍະວົງ ນ້ອງຊາຍຄົນທີ ໕ ຂອງເຈົ້າໂຊຕິກະ ໄດ້ຈັກຊວນເອົາທະຫານພະມ້າຢູ່ເມືອງຊຽງໃຫມ່ຍົກລົງມາຕີເມືອງຫລວງພຣະບາງ ເຈົ້າໂຊຕິກະ ຜູ້ພີ່ຊາຍ ຈຶ່ງຈຳເປັນໄດ້ຍົກຣາຊສົມບັດໃຫ້ແກ່ເຈົ້າສູຣິຍະວົງ ໆ ກໍໄດ້ຂຶ້ນເປັນເຈົ້າແຜ່ນດິນຕໍ່ມາ.

## (໕) ຣັຊການພຣະເຈົ້າສູຣິຍະວົງ

ເຈົ້າສູຣິຍະວົງໄດ້ຂຶ້ນສເວີຍຣາຊສົມບັດເປັນເຈົ້າແຜ່ນດິນແລ້ວໄດ້ປີ ໑ ຄືເຖິງປີ ຄ.ສ.໑໗໗໘ ກໍໄດ້ຍົກທັບລົງມາຕີວຽງຈັນ ເພື່ອແກ້ແຄ້ນຄວາມຂົມຂຽດ ອັນມີມາແຕ່ກ່ອນ ເຈົ້າສູຣິຍະວົງໄດ້ຕັ້ງຄ້າຍລ້ອມວຽງຈັນຢູ່ເຖິງສອງເດືອນຍັງເຂົ້າຕີ ເອົາເມືອງບໍ່ໄດ້ ຝ່າຍພຣະເຈົ້າສິຣິບຸນຍະສານ ເຈົ້າແຜ່ນດິນວຽງຈັນຈຶ່ງແຕ່ງທູດໃຫ້ໄປຂໍເອົາກອງທະຫານພະມ້າໃຫ້ມາຊ່ອຍ ກອງທະຫານພະມ້າຍົກລົງມາຕີນະຄອນຫລວງພຣະບາງ ພຣະເຈົ້າສູຣິຍະວົງ ຈຳເປັນໄດ້ເລີກທັບກັບຄືນເມືອເຈຣະຈາກັບພະມ້າ ໂດຍຍອມຂໍສົ່ງສ່ວຍດອກໄມ້ເງິນ ຄຳ ຕາມທັມນຽມໂບຮານກະສັດ ຕໍ່ມາພຣະເຈົ້າສູຣິຍະວົງເຫັນວ່າພະມ້າກັບໄທເກີດສົງຄາມຕິດພັນ

ກັນຢູ່ ຈຶ່ງເອົາໃຈອອກຈາກພະມ້າ ຄັນມາເຖິງປີ ຄ.ສ.໑໗໗໘ ເມື່ອກອງທັບໄທຍົກຂຶ້ນມາຕີວຽງຈັນ ເຈົ້າສຸຣິຍະວົງເຫັນເປັນໂອກາດດີທີ່ຈະໄດ້ແກ້ແຄ້ນຊາວວຽງຈັນ ຈຶ່ງມີຫນັງສືລັບໄປເຖິງພຣະເຈົ້າແຜ່ນດິນປະເທດໄທ ຂໍຮ່ວມມືຕີວຽງຈັນ ທາງດ້ານຫລັງ ເຖິງປີ ຄ.ສ໑໗໗໙ ເຈົ້າສຸຣິຍະວົງ ໄດ້ເກນທະຫານຊາວເມືອງຫລວງພຣະບາງ ໓໐໐໐ ຄົນ ສົ່ງມາຕີວຽງຈັນຊ່ອຍໄທແຕ່ວ່າເມືອງວຽງຈັນເສັຽເອກຣາດແລ້ວ ແມ່ທັບໄທກໍເລີຍບັງຄັບໃຫ້ເຈົ້າສຸຣິຍະວົງຍອມເປັນເມືອງຂຶ້ນຂອງປະເທດໄທດັ່ງດຽວກັນໃນປີ ຄ.ສ.໑໗໗໙ ນັ້ນເອງ ໂຮມຄວາມວ່າ ອານາຈັກລານຊ້າງຫລວງພຣະບາງ ທີ່ໄດ້ແຍກເປັນເອກຣາດສ່ວນນຶ່ງຂຶ້ນໃນປີ ຄ.ສ.໑໗໐໗ ກໍໄດ້ສູນເສັຽຄວາມເປັນເອກຣາດລົງໃນປີ ຄ.ສ.໑໗໗໙ ພ້ອມກັບວຽງຈັນ ຣວມເວລາທີ່ນະຄອນຫລວງພຣະບາງເປັນອິສຣະພາບ ຢູ່ພຽງ ໗໒ ປີມີກະສັດສືບຣາຊສົມບັດເປັນເອກຣາດມາພຽງ ໕ ອົງ.

--------=== ໐ ===------

## ນີ. ອານາຈັກນະຄອນຈຳປາສັກ

### (໑) ພຣະເຈົ້າສ້ອຍສຣີສົມຸທພຸທທາງກູນ

ເມືອງນະຄອນຈຳປາສັກນີ້ ແຕ່ດັ້ງເດີມເປັນເມືອງຂອງພວກຈາມ ເອີ້ນຊື່ວ່າ ເມືອງຈຳປານະຄອນ ກະສັດຜູ້ຄອງເມືອງນີ້ແຕ່ດັ້ງເດີມແມ່ນ ທ້າວຄັຊນາມ ຕໍ່ມາແມ່ນພຣະຍາກາມະທາ ເມື່ອພຣະຍາກາມທາສິ້ນພຣະຊົນແລ້ວ ບໍ່ມີກະສັດສືບແທນເມືອງ ຈຶ່ງມີເຈົ້າຂເມນອົງນຶ່ງຍົກຣິພົນໂຍທາຂຶ້ນມາຕັ້ງຢູ່ເມືອງຈຳປານະຄອນແລ້ວພຽນຊື່ເມືອງວ່າ ນະຄອນກາລະຈຳປາກະນາຄະບຸຣີ ເຈົ້ານະຄອນກາລະຈຳປານາຄະບຸຣີ ມີໂອຣົດອົງນຶ່ງນາມວ່າ ເຈົ້າສຸທັສນະຣາຊາເມື່ອບິດາສິ້ນພຣະຊົນແລ້ວກໍໄດ້ຄອງເມືອງຕໍ່ມາຈົນເຖິງປີ ຄ.ສ.໑໖໓໘ ຈຶ່ງສິ້ນພຣະຊົນ ເມື່ອເຈົ້າສຸທັສນະຣາຊາສິ້ນພຣະຊົນແລ້ວ ບໍ່ມີໂອຣົດຈະສືບແທນເມືອງ ເຖິງປີ ຄ.ສ.໑໖໓໙ ພວກຊາວເມືອງຈຶ່ງເຊີນຊາຍຜູ້ນຶ່ງ ຂຶ້ນເປັນເຈົ້າເມືອງຊາຍຜູ້ນັ້ນມີລູກສາວຜູ້ນຶ່ງ ຊື່ວ່າ ນາງເພົາ ເມື່ອບິດາຕາຍແລ້ວ ນາງເພົາ ກໍໄດ້ປົກຄອງເມືອງຕໍ່ມາເຖິງປີ ຄ.ສ.໑໖໔໑ ເວລານັ້ນ ທ້າວປາງຄຳ ຢູ່ເມືອງຫນອງບົວລຸ່ມພູ (ຜູ້ແຕ່ງຫນັງສືສິນໄຊ ໃນສມັຍຂອງພຣະເຈົ້າສຸຣິຍະວົງສາທັມມິກະຣາດ) ລົງໄປຄອງຊ້າງທາງເມືອງຈຳປາສັກ ໄດ້ໄປລອບລັກສມັກສັງວາດກັບນາງເພົາ ຈົນໄດ້ລູກສາວຜູ້ນຶ່ງຊື່ວ່າ ນາງແພງ ແລ້ວທ້າວປາງຄຳ ກໍຫນີຄືນມາເມືອງຫນອງບົວລຸ່ມພູ ເມື່ອນາງເພົາ ຜູ້ແມ່ຕາຍແລ້ວ ນາງແພງກໍໄດ້ຄອງເມືອງແທນ.

ຢູ່ມາເຖິງປີ ຄ.ສ.໑໖໙໐ ເມື່ອພຣະເຈົ້າສຸຣິຍະວົງສາທັມມິກະຣາດ ເຈົ້າແຜ່ນດິນວຽງຈັນ ສະເດັດສູຣະຄົດແລ້ວ ເຈົ້າພຣະຍາເມືອງຈັນ ຍາດຊິງເອົາຣາຊສົມບັດ ຂຶ້ນເປັນພຣະເຈົ້າແຜ່ນດິນແລ້ວພຣະຍາເມືອງຈັນ ຈະຮັບເອົານາງສຸມັງຄະລາພຣະຣາຊທິດາຂອງເຈົ້າສຸຣິຍະວົງສາ ມາເປັນພະຣິຍາຂອງຕົນ ແຕ່ນາງບໍ່ຍອມຈຶ່ງໄດ້ລັກຫນີໄປຢູ່ນຳອອກຕົນຍາດໂຍມຂອງພຣະຄູຍອດແກ້ວ ວັດໂພນສະເມັກ ເວລານັ້ນ ນາງກຳລັງທົງຄັບຢູ່ ທ່ານພຣະຄູຍອດແກ້ວຈຶ່ງສົ່ງນາງໄປໄວ້ພູສະງໍ້ຫໍຄຳ ນາງເລີຍປະສູດຣາຊໂອຣົດຢູ່ທີ່ນັ້ນ ຈຶ່ງຂະນານນາມວ່າ ເຈົ້າຫນໍ່ກະສັດ ຝ່າຍພຣະຍາເມືອງຈັນ ເຫັນຜູ້ຄົນນັບຖືພຣະຄູຍອດແກ້ວຫລາຍ ຈຶ່ງຄິດຈະກຳຈັດ

ເສັຽ ທ່ານພຣະຄູໄດ້ຊາບເຫດອັນນັ້ນ ຈຶ່ງພາຍາດໂຍມປະມານ ໓.໐໐໐ ຄົວເສດ ຍົກໜີຈາກແຂວງວຽງຈັນລົງໄປຕັ້ງຢູ່ບ້ານງິ້ວພັນລຳໂສມສນຸກ ແຂວງເມືອງນະຄອນພະນົມ ແລ້ວໃຫ້ຄົນມາເຊີນເອົານາງນາງດາເຈົ້າໜໍ່ກະສັດໄປຢູ່ທີ່ນັ້ນກ່ອນ ສ່ວນທ່ານພຣະຄູ ໄດ້ພາເອົາຍາດໂຍມອົພຍົບ ລົງໄປຢູ່ແດນເມືອງນະຄອນຈຳປາສັກ ນາງແພງ ເຈົ້າເມືອງນະຄອນຈຳປາສັກເຫັນຄົນນິຍົມນັບຖືທ່ານພຣະຄູຫລາຍ ຈຶ່ງມານິມົນໃຫ້ເຂົ້າໄປຢູ່ວັດໃນເມືອງ ແລ້ວມອບຣາຊການບ້ານເມືອງໃຫ້ທ່ານພຣະຄູປົກຄອງວ່າກ່າວ ທ່ານພຣະຄູເຫັນວ່າ ຕົນເປັນສະມະນະ ຈະວ່າກ່າວຣາຊການບ້ານເມືອງກໍຈະຜິດຄອງວິນັຍ ຄັນຢູ່ມາເຖິງປີ ຄ.ສ.໑໗໑໔ ທ່ານພຣະຄູຈຶ່ງໃຫ້ຈານແກ້ວ ຈານສຽງ ກັບບ່າວໄພ່ ຂຶ້ນມາເຊີນເອົາເຈົ້າໜໍ່ກະສັດ ທີ່ຢູ່ບ້ານງິ້ວພັນລຳໂສມສນຸກກັບພຣະນາງດາລົງໄປເມືອງຈຳປາສັກ ແລ້ວທ່ານພຣະຄູພ້ອມດ້ວຍ ນາງແພງ ແລະ ເສນາອາມາດ ຈຶ່ງພ້ອມກັນທຳຣາຊາພິເສກເຈົ້າໜໍ່ກະສັດຂຶ້ນເປັນເຈົ້າແຜ່ນດິນຖວາຍພຣະນາມວ່າ ເຈົ້າສ້ອຍສຣີສມຸທພຸດທາງກູນ ແລ້ວຜຽນນາມເມືອງວ່າ ນະຄອນຈຳປານາຄະບຸຣີສຣີ.

ພຣະເຈົ້າສ້ອຍສຣີສມຸທພຸດທາງກູນ ໄດ້ສເວີຍຣາຊສົມບັດແລ້ວ ກໍທຣົງແຕ່ງຕັ້ງຕຳແໜ່ງ ເສນາຂ້າຣາຊການເປັນກົມເປັນກອງໃຫ້ຄົບຖ້ວນຕາມແບບຢ່າງບູຮານກະສັດໃນນະຄອນວຽງຈັນ ແລ້ວຈຶ່ງຕັ້ງດອນໂຂງຂຶ້ນເປັນເມືອງໃຫ້ຈານຫວດ ໄປເປັນເຈົ້າເມືອງໂຂງ ໑ ໃຫ້ທ້າວສຸດ ເປັນພຣະໄຊຍະເຊດຖາ ເຈົ້າເມືອງຊຽງແຕງ ໑ ໃຫ້ຈານສຽງ ໄປເປັນເຈົ້າເມືອງສຣີນະຄອນເຕົາ ໑ (ຢູ່ໃນແຂວງເມືອງສີສະເກດ) ໃຫ້ຈານແກ້ວໄປເປັນເຈົ້າເມືອງທົ່ງ ໑ (ຄືອຳເພີສຸວັນນະພູມຢູ່ໃນແຂວງຈັງຫວັດຮ້ອຍເອັດ) ໃຫ້ທ້າວຈັນທະສຸຣິຍະວົງໄປເປັນເຈົ້າເມືອງຕະໂປນ ໑ ໃຫ້ນາຍໝັ້ນ ຂ້າຫລວງເດີມຂອງນາງແພງ ເປັນຫລວງເອກຮັກສາແລ້ວຂຶ້ນມາຕັ້ງບ້ານໂພນເປັນເມືອງໝັ້ນ ໑ (ຄືເມືອງສາຣະວັນທຸກວັນນີ້) ໃຫ້ທ້າວພົມເປັນຣາຊບຸດໂຄດ ໄປຕັ້ງບ້ານແກ້ງອາເຣີນ ເປັນເມືອງຄຳທອງໃຫຽ່ ໑ ໃຫ້ຈານໂສມ ໄປຕັ້ງບ້ານອັດຕະປື ເປັນເມືອງອັດຕະປື ໑ ໃຫ້ທ້າວຫລວງບູດພຣະລະວຸນ ເປັນຂຸນໜັກເຖົ້າ ເຈົ້າເມືອງໂຂງຈຽງ ໑.

ພຣະເຈົ້າສ້ອຍສຣີສມຸທພຸດທາງກູນຄອງເມືອງມາເຖິງ ຄ.ສ.໑໗໓໗ ກໍສິ້ນພຣະຊົນ ພຣະອົງມີຣາຊໂອຣົດ ໓ ອົງຄື: ເຈົ້າໄຊຍະກຸມມານ ໑ ເຈົ້າທັມມະເທໂວ ໑ ເຈົ້າສຸຣິໂຍ ໑ ເມື່ອພຣະເຈົ້າສ້ອຍສຣີສມຸທພຸດທາງກູນສິ້ນພຣະຊົນແລ້ວ ເສນາອາມາດຈຶ່ງອະພິເສກເຈົ້າໄຊຍະກຸມມານຂຶ້ນເປັນເຈົ້າແຜ່ນດິນ ເຈົ້າໄຊຍະກຸມມານຈຶ່ງຕັ້ງເຈົ້າທັມມະເທໂວ ເປັນມະຫາອຸປຣາດ.

## (໘) ຣັຊການພຣະໄຊຍະກຸມານ

ເຈົ້າໄຊຍະກຸມານ ຄອງເມືອງມາເຖິງ ຄ.ສ.໑໗໗໘ ກໍຖືກກອງທັບໄທຂຶ້ນມາຕີເອົາເມືອງໄດ້ ອານາຈັກນະຄອນຈຳປາສັກຈຶ່ງຕົກເປັນເມືອງຂຶ້ນຂອງປະເທດໄທຕັ້ງແຕ່ນັ້ນມາ ເຈົ້າໄຊຍະກຸມານ ຖືກແມ່ທັບໄທຄຸມຕົວລົງໄປກຸງເທບ ໃນປີ ຄ.ສ.໑໗໗໘ ເຖິງປີ ຄ.ສ.໑໗໘໐ ຈຶ່ງໄດ້ກັບຄືນມານະຄອນຈຳປາສັກ.

ອານາຈັກນະຄອນຈຳປາສັກໄດ້ຕັ້ງເປັນເອກຣາດຂຶ້ນໃນປີ ຄ.ສ. ໑໗໑໓ ໄດ້ສູນເສັຽເອກຣາດໃນປີ ຄ.ສ. ໑໗໗໘ ຮວມເວລານະຄອນຈຳປາສັກເປັນເອກຣາດຢູ່ໄດ້ພຽງ ໖໕ ປີ ມີກະສັດດຳຣົງອິສຣະພາບຢູ່ພຽງ ສອງເຄື່ອງໝົນ.




(ຈາກປຶ້ມ "ພົງສາວະດານລາວ" ໂດຍ ທ້າວບຸນ ອ່ອນພົມ ໜ້າທີ ໒໔)

## ບົດທີ ໗

## <u>ປະເທດລາວພາຍຫລັງເສັຽເອກຣາດແລ້ວ</u>

### ອານາຈັກລານຊ້າງວຽງຈັນ

-----== ໐ ==-----

ປະເທດລາວທີ່ໄດ້ແບ່ງແຍກກັນອອກເປັນ ໓ ອານາຈັກ ຕັ້ງແຕ່ປີ ຄ.ສ.໑໗໐໗ ໄດ້ສູນເສັຽຄວາມເປັນເອກຣາດໃຫ້ແກ່ປະເທດໄທລົງພ້ອມກັນໃນປີ ຄ.ສ.໑໗໗໙ ແຕ່ຍັງມີກະສັດໄດ້ຄອງຣາຊສົມບັດໃນຖານເປັນເຈົ້າປະເທດສະຣາດສືບຕໍ່ກັນມາທັງ ໓ ອານາຈັກຈຳເພາະອານາຈັກວຽງຈັນ ຊຶ່ງມີອານາເຂດກວ້າງໃຫຍ່ໄພສານກວ່າໝູ່ນັ້ນ ໄດ້ມີກະສັດສືບຕໍ່ລົງມາດັ່ງນີ້:

### ໑. <u>ຣັຊການພຣະເຈົ້ານັນທະເສນ</u>

ສົມເດັດພຣະເຈົ້າສິຣິບຸນຍະສານ ກະສັດແຫ່ງນະຄອນວຽງຈັນອົງສຸດທ້າຍ ໄດ້ເສັຽເມືອງໃຫ້ແກ່ປະເທດໄທ ພຣະອົງມີຣາຊໂອຣົດ ແລະ ຣາຊທິດາທີ່ປາກົດນາມຢູ່ ໔ ອົງຄື: ເຈົ້ານັນທະເສນ ໑ ເຈົ້າອິນທະວົງ ໑ ເຈົ້າອະນຸວົງ ໑ ເຈົ້າພົມວົງ ໑ ກັບນາງແກ້ວຍອດຟ້າກັລຍານີ ໑ ເມື່ອກອງທັບໄທເຂົ້າຕີເອົາວຽງຈັນໄດ້ແລ້ວສົມເດັດພຣະເຈົ້າສິຣິບຸນຍະສານ ໄດ້ພາເອົາເຈົ້າອິນທະວົງ ແລະ ເຈົ້າພົມວົງ ລັກໜີໄປຢູ່ເມືອງຄຳເກີດ ແມ່ທັບໄທໄດ້ຄວບຄຸມເອົາເຈົ້ານັນທະເສນ ແລະເຈົ້າອະນຸວົງ ກັບນາງແກ້ວຍອດຟ້າກັລຍານີ ລົງໄປກຸງເທບ ເມື່ອກອງທັບໄທຖອຍໜີໄປແລ້ວ ເຖິງເດືອນອ້າຍ (ຄ.ສ.໑໗໘໐) ສົມເດັດພຣະເຈົ້າສິຣິບຸນຍະສານ ຈຶ່ງກັບຄືນມາວຽງຈັນ ແລະຂຶ້ນຄອງເມືອງຕໍ່ມາອີກປີດຽວກໍ່ສິ້ນພຣະຊົນ ເຖິງປີ ຄ.ສ.໑໗໘໑ ພຣະເຈົ້າແຜ່ນດິນໄທຈຶ່ງສົ່ງເຈົ້ານັນທະເສນຂຶ້ນມາເປັນເຈົ້າແຜ່ນດິນວຽງຈັນ ເຈົ້ານັນທະເສນໄດ້ຂຶ້ນຄອງນະຄອນວຽງຈັນໃນວັນປະຫັດ ເດືອນອ້າຍ ອອກໃໝ່ ໑໔ ຄ່ຳ ຄ.ສ.໑໗໘໑ (ພ.ສ.໒໓໒໔) ທັງພຣະນາມວ່າ ພຣະເຈົ້ານັນທະເສນພົງມະລາວ ແລ້ວພຣະອົງຈຶ່ງຕັ້ງເຈົ້າອິນທະວົງໃຫ້ເປັນມະຫາອຸປຮາດ ສ່ວນເຈົ້າ ພົມວົງ ແລະເຈົ້າອະນຸວົງນັ້ນສົ່ງລົງໄປໄວ້ກຸງເທບ ໃນເວລາພຣະເຈົ້ານັນທະເສນກັບຄືນມາວຽງຈັນຄັ້ງນີ້ ພຣະອົງໄດ້ຂໍເອົາພຣະບາງຄືນມານຳ ແລະໃນປີດຽວກັນນີ້ ພຣະເຈົ້າແຜ່ນດິນໄທກໍໄດ້ສົ່ງເຈົ້າໄຊຍະກຸມານ ຄືນມາເປັນເຈົ້ານະຄອນຈຳປາສັກ ແລະໃຫ້ເຈົ້າສຸຣິຍະວົງຄືນມາເປັນເຈົ້ານະຄອນຫລວງພຣະບາງດັ່ງເກົ່າ.

ເຖິງປີ ຄ.ສ.໑໗໘໗ ພຣະເຈົ້ານັນທະເສນໄດ້ຍົກທັບຂຶ້ນໄປຕີເມືອງຊຽງຂວາງໂດຍສາເຫດມີວ່າ ຄັ້ງນັ້ນເຈົ້າໄກເຊີນເປັນເຈົ້າແຜ່ນດິນປະເທດແກວຕັງແກງ ປະທັບຢູ່ເມືອງແງອານ ໄດ້ແຕ່ງກຳລັງທະຫານແກວມາຄວບຄຸມເອົາເມືອງຊຽງຂວາງ ເຈົ້າຊຸມພູ ເຈົ້າເມືອງຊຽງຂວາງ ກໍຍິນຍອມສົ່ງບັນນາການໃຫ້ແກ່ແກວ ພຣະເຈົ້ານັນທະເສນຈຶ່ງຍົກທັບໄປຕີຊຽງຂວາງ ແລະຈັບເຈົ້າຊຸມພູໄດ້ຄຸມຕົວລົງມາວຽງຈັນ ເຈົ້າໄກເຊີນ ຈຶ່ງແຕ່ງໃຫ້ອົງຈຽງຍາ ອົງຈຽງວຽນເປັນແມ່ທັບຄຸມທະຫານແກວ ໓.໐໐໐ ຄົນກັບຊາວເມືອງຊຽງ

ຂວາງ ອີກ ໓.໐໐໐ ຄົນ ລົງມາຕີນະຄອນວຽງຈັນໃນປີ ຄ.ສ.໑໗໘໘ ພຣະເຈົ້ານັນທະເສນ ເຫັນວ່າຈະເປັນການສົງຄາມໃຫຍ່ ຈຶ່ງຍອມສົ່ງເຈົ້າຊຸມພູຄືນໄປຄອງເມືອງຊຽງຂວາງຕາມຄຳຂໍຂອງແມ່ທັບແກວ ແຕ່ໃຫ້ເຈົ້າຊຸມພູສົ່ງສ່ວຍໃຫ້ວຽງຈັນເຄິ່ງນຶ່ງດັ່ງດຽວກັບສົ່ງໃຫ້ແກວ ແລ້ວກອງທັບແກວກໍເລີກຄືນໄປ.

ເຖິງປີ ຄ.ສ.໑໗໘໙ ພຣະເຈົ້ານັນທະເສນຂໍຍົກທັບໄປຕີນະຄອນຫລວງພຣະບາງໂດຍອ້າງສາເຫດວ່າ ພຣະເຈົ້ານະຄອນຫລວງພຣະບາງ ໄດ້ສົມຄົບກັບພວກພະມ້າ ແລະພວກເຈົ້າຊຽງຮຸ້ງເປັນກະບົດຕໍ່ປະເທດໄທ ພຣະເຈົ້າແຜ່ນດິນໄທກໍອະນຸຍາດ ພຣະເຈົ້ານັນທະເສນໄດ້ຕັ້ງຄ້າຍລ້ອມເມືອງໄວ້ ແລະ ໄດ້ສູ້ຮົບກັນຢູ່ເຖິງ ໑໔ ວັນ ຈຶ່ງເຂົ້າເມືອງໄດ້ ແລ້ວຈັບເຈົ້າອະນຸຣຸດທະເຈົ້ານະຄອນຫລວງພຣະບາງ ເຈົ້າອຸປຣາດເຈົ້າມັນທາຕຸຣາດ ແລະຄອບຄົວທັງໝົດສົ່ງໄປກຸງເທບ ພວກເຈົ້າອະນຸຣຸດທະ ຖືກກັກຢູ່ກຸງເທບເຖິງ ໔ ປີ ໃນປີດຽວກັນນີ້ ເຈົ້າແຜ່ນດິນປະເທດໄທໄດ້ເກນເອົາຣາສດອນທົ່ວເມືອງລາວຫລາຍໝື່ນຄົນລົງໄປຂຸດຄອງໃນບາງກອກ ພວກຣາສດອນທີ່ຖືກເກນໄປນັ້ນ ໄດ້ຮັບຄວາມບອບບຂົ່ນເທັງແສນສາຫັດ ແລະ ລົ້ມຕາຍດ້ວຍໂຣກອະຫິວາເກືອບໝົດ.

ເຖິງປີ ຄ.ສ.໑໗໙໓ ເຈົ້າອະນຸຣຸດທະ ຈຶ່ງໄດ້ຄືນມານະຄອນຫລວງພຣະບາງ ເຈົ້າອະນຸຣຸດທະກັບຄືນມາຄອງເມືອງອີກປີດຽວ ພໍເຖິງປີ ຄ.ສ.໑໗໙໔ ກໍຈັດການຟ້ອງເຈົ້ານັນທະເສນເຈົ້າແຜ່ນດິນວຽງຈັນວ່າ ສົມຄົບກັບພຣະບໍຣົມຣາຊາ ເຈົ້າເມືອງນະຄອນພະນົມທຳການຕິດຕໍ່ກັບແກວຈະເປັນກະບົດ ພຣະເຈົ້າແຜ່ນດິນໄທຈຶ່ງສັ່ງໃຫ້ເຈົ້ານັນທະເສນກັບພຣະບໍຣົມຣາຊາລົງໄປກຸງເທບ ແລະຕໍ່ສູ້ແກ້ຄະດີຢູ່ເຖິງ ໒ ປີ ກໍສິ້ນພຣະຊົນຢູ່ໃນກຸງເທບນັ້ນເອງ.

## ໒. ຣັຊການເຈົ້າອິນທະວົງ

ເຖິງປີ ຄ.ສ.໑໗໙໔ ເຈົ້າອິນທະວົງ ອະນຸຊາຂອງເຈົ້ານັນທະເສນ ໄດ້ຂຶ້ນເປັນເຈົ້າແຜ່ນດິນວຽງຈັນ ແລ້ວໄດ້ຕັ້ງເຈົ້າອະນຸວົງຜູ້ນ້ອງໃຫ້ເປັນອຸປຣາດ ໃນປີໄດ້ຂຶ້ນຄອງເມືອງນັ້ນ ເຈົ້າອິນທະວົງໄດ້ຍົກທັບຂຶ້ນໄປຕີເມືອງແຖງເທື່ອນຶ່ງ ຕໍ່ມາໃນປີ ຄ.ສ.໑໗໙໘ ແລະ ໑໗໙໙ ໄດ້ໂຜດໃຫ້ເຈົ້າອະນຸວົງເປັນແມ່ທັບໄປຮົບພະມ້າຊ່ວຍໄທ ແລະປີ ຄ.ສ.໑໘໐໓ ກໍໄດ້ໃຫ້ເຈົ້າອະນຸວົງໄປຮົບພະມ້າຢູ່ເມືອງຊຽງແສນ ພຣະເຈົ້າອິນທະວົງຄອງຣາຊສົມບັດມາເຖິງ ຄ.ສ.໑໘໐໓ ກໍສິ້ນພຣະຊົນ ເມື່ອເດືອນ ໓ ຂຶ້ນ ໗ ຄ່ຳວັນສຸກ ຈຸລສັກຣາດ ໑໑໖໕ ພຣະອົງມີຣາຊທິດາອົງນຶ່ງໄດ້ເປັນເຈົ້າຈອມໃນພຣະເຈົ້າແຜ່ນດິນໄທຣັຊການທີ ໑ ແລະໄດ້ຣາຊທິດາອົງນຶ່ງຮັບຍົດ ເປັນເຈົ້າຟ້າ ພຣະນາມວ່າ ເຈົ້າຟ້າກຸນທົນທິພຍະວະດີ.

## ໓. ຣັຊການພຣະເຈົ້າອະນຸວົງ

ເມື່ອເຈົ້າອິນທະວົງສິ້ນພຣະຊົນແລ້ວ ເຈົ້າອະນຸວົງກໍໄດ້ຂຶ້ນຄອງຣາຊສົມບັດແທນ ໃນປີ ຄ.ສ.໑໘໐໔

ນັ້ນເອງ ສົມເດັດພຣະເຈົ້າອະນຸວົງ (ຫລືໃນສີລາເລກວັດສີສະເກດວຽງຈັນຮຽກວ່າ ສົມເດັດພຣະໄຊຍະເຊດຖາທິຣາດທີ ໓ ນັ້ນ) ພຣະອົງເປັນກະສັດຜູ້ກ້າຫານ ເຄີຍໄດ້ເຂົ້າສົງຄາມສູ້ຮົບຂ້າເສິກສັດຕູມາຫລາຍເທື່ອ ຄືເມື່ອພຣະອົງຍັງດຳຣົງຕຳແໜ່ງເປັນອຸປຮາດຢູ່ນັ້ນ ໄດ້ຍົກກອງທັບຊາວວຽງຈັນ ຈຳນວນທະຫານ ໔໐.໐໐໐ ຄົນ ໄປຮົບພະມ້າທາງເມືອງຊຽງໃໝ່ ໃນປີ ຄ.ສ.໑໗໙໘ ແລະ ໑໗໙໙ ໃນປີ ຄ.ສ.໑໘໐໒ ໄດ້ຍົກໄປຕີເມືອງຊຽງໃໝ່ອີກ ແລ້ວເລີຍໄປຕີເມືອງຊຽງແສນໄດ້ໃນປີ ຄ.ສ.໑໘໐໔ ກັບຈາກຣາຊການສົງຄາມເມືອງຊຽງແສນ ຈິ່ງໄດ້ຂຶ້ນຄອງຣາຊສົມບັດເປັນພຣະເຈົ້າແຜ່ນດິນໃນນະຄອນວຽງຈັນ.

ເມື່ອພຣະອົງໄດ້ຂຶ້ນຄອງເມືອງແລ້ວ ກໍໄດ້ພະຍາຍາມທຳການຟື້ນຟູປະເທດລາວໃຫ້ຈະເຣີນທຸກຢ່າງ ຄື:

ໃນປີ ຄ.ສ.໑໘໐໗ ໄດ້ທຳ ສ້າງພຣະຣາຊວັງຂຶ້ນໃນພຣະນະຄອນວຽງຈັນ.

ໃນປີ ຄ.ສ.໑໘໐໘ ໄດ້ສະເດັດໄປສລອງຂົວຢູ່ທາດພະນົມ.

ໃນປີ ຄ.ສ.໑໘໐໘ ໄດ້ສ້າງວັດສີບຸນເຮືອງຂຶ້ນທີ່ໜອງຄາຍ.

ໃນປີ ຄ.ສ.໑໘໑໒ ໄປສລອງວັດທາດພະນົມກັບມາແລ້ວໄດ້ຈັດການສ້າງຂົວຂ້າມແມ່ນ້ຳຂອງຢູ່ທ່າວັດຊ້າງເຜືອກ ບ້ານສີຊຽງໃໝ່ທຸກວັນນີ້.

ໃນປີ ຄ.ສ.໑໘໑໖ ໄດ້ທຳບຸນສລອງຫໍພຣະແກ້ວແລະຫໍໄຕ .

ໃນປີ ຄ.ສ.໑໘໑໒ ໄດ້ສະເດັດໄປປາບກະບົດອ້າຍສາເກັດໂງ້ງ ເມືອງຈຳປາສັກ.

ເຖິງປີ ຄ.ສ.໑໘໒໑ ພຣະອົງຈິ່ງຂໍຕັ້ງເຈົ້າຣາຊບຸດໂຍ້ພຣະຣາຊບຸດຂອງພຣະອົງໃຫ້ເປັນເຈົ້ານະຄອນຈຳປາສັກແທນເຈົ້າໜານ້ອຍທີ່ໄປສິ້ນພຣະຊົນຢູ່ກຸງເທບ ແລະຕັ້ງເຈົ້າຄຳປ້ອມ (ຜູ້ຫລານ) ໃຫ້ເປັນອຸປຮາດ ເຈົ້າຣາຊບຸດໂຍ້ ເມື່ອໄດ້ເປັນເຈົ້ານະຄອນຈະປາສັກແລ້ວ ກໍໄດ້ລົງມືສ້າງແປງບ້ານເມືອງ ຄື: ໄດ້ສ້າງກຳແພງເມືອງຈຳປາສັກ ໄດ້ຂຸດຄູອ້ອມເມືອງ ແລະສ້າງກຳແພງວັງຂຶ້ນໃໝ່ນອກຈາກນັ້ນ ກໍໄດ້ສ້າງຫໍພຣະແກ້ວຂຶ້ນ ໃຫ້ເປັນທີ່ຖືນ້ຳ ແລະໄດ້ປ່ຽນວິທີເກັບສ່ວຍຈາກຣາສດອນໃໝ່ ທັງໄດ້ສ້າງເມືອງຄົມເກິ່ງ ໃຫ້ເປັນປ້ອມສຳລັບປ້ອງກັນສັດຕູເປັນຕົ້ນ.

ສ່ວນສົມເດັດພຣະເຈົ້າອະນຸວົງນັ້ນ ເນື່ອງຈາກພຣະອົງເປັນແມ່ທັບຜູ້ກ້າຫານ ເຄີຍໄດ້ທຳການສົງຄາມຊ່ວຍເຫລືອປະເທດໄທມາຫລາຍຕັ້ງ ດັ່ງນັ້ນພຣະເຈົ້າແຜ່ນດິນໄທອົງທີ ໒ ຊົງນິນາມວ່າ ພຣະພຸທເລີດຫລ້ານະພາໄລ ຈິ່ງທົງຮັກແພງສນິດສນົມກວ່າກະສັດອື່ນ ໆ ບັນດາທີ່ເປັນປະເທດສະຣາດຂອງໄທໃນເວລານັ້ນ ຕົວຢ່າງໃນປີ ຄ.ສ.໑໘໒໐ ພຣະເຈົ້າແຜ່ນດິນໄທໄດ້ສ້າງສະຂຶ້ນໃນພຣະຣາຊວັງເປັນທີ່ສນຸກສຳຣານ ທົງຄຶດຮອດສົມເດັດພຣະເຈົ້າອະນຸວົງ ຢາກໃຫ້ທົງສຳຣານດັ່ງດຽວກັນ ຈິ່ງທົງສັ່ງໃຫ້ເຈົ້າພຣະຍາຈັກກີຂຽນແຜນທີ່ ສະນັ້ນ ສົ່ງຂຶ້ນມາຖວາຍພຣະເຈົ້າອະນຸວົງພ້ອມດ້ວຍສຳເນົາຈົດໝາຍດັ່ງຕໍ່ໄປນີ້ :

# ສຳເນົາຈົດໝາຍເຈົ້າພຣະຍາຈັກກຣີ

## ມາເຖິງເຈົ້າອະນຸ

ໜັງສືເຈົ້າພຣະຍາຈັກກຣີ ມາເຖິງເຈົ້າອະນຸວຽງຈັນ ດ້ວຍທຣົງພຣະກະຣຸນາ ຕັດ ເໜືອເກົ້າສັ່ງວ່າ ໃຫ້ຂຸດສະ ແລະ ປຸກພຣະທີ່ນັ່ງທຳເກງໃນພຣະຣາຊວັງເປັນທີ່ທົງ ປຣະພາດສະບາຍພຣະທັຍ ແລະ ເຊີ່ງເຈົ້າວຽງຈັນ ໄດ້ລົງໄປຊ່ວຍທຳການຂຸດສະຄັ້ງກ່ອນເຫັນຍັງຄັບແຄບຢູ່ ບັດນີ້ໄດ້ຂຍາຍກຳແພງພຣະຣາຊວັງດ້ານໃຕ້ອອກໄປອີກ ຈຶ່ງໄດ້ຂຸດສະປະຈົບສະເກົ່າຕໍ່ລົງໄປ ໃຫ້ຍາວ ແລະ ກວ້າງ ຮັງວັດໄດ້ ໓ ເສັ້ນ ໔ ວາ ກວ້າງ ໒ ເສັ້ນ ໗ ວາ ທຣົງພຣະດຳຣິທຽບທີ່ເປັນເກາະໃຫຍ່ ເກາະເລັກ ລົງເຂື່ອນປູອິດ ທຳພຣະທີ່ນັ່ງເກງຈີນ ແລະ ຕຶກຢ່າງຝຣັ່ງຂຶ້ນອີກເປັນອັນມາກ ຫວ່າງເກງ ຫວ່າງຕຶກ ນັ້ນໄດ້ປູກຕົ້ນໄມ້ມີດອກມີຜົນເອນຊາຍອອກໄປດ້ານຂອບສະຣິ່ມແສງແດດ ໃຫ້ເອົາສີລາແທ່ງໃຫຍ່ ເລັກ ມາທຳເປັນພໍ ເປັນແຫລມແລະຫາດ ປິດບັງຮິເຂື່ອນເສັຽສິ້ນ ໃນທ້ອງສະນັ້ນປູກດ້ວຍອິດໃຫຍ່ໃຫ້ນ້ຳໄຫລສະອາດ ປູກບົວຫລວງ ບົວເຜື່ອນ ທີ່ຊາຍແຫລມ ຊາຍຫາດທຸກແຫ່ງແລວລຽງປາສາຣະພັນ ເວລາເຊົ້າເວລາເປັນສະເດັດອອກພຣະທີ່ນັ່ງເກງ ໂປຣຍເຂົ້າຕອກບ້າງ ສະເດັດພຣະແທ່ນສີລາໃຕ້ຮົ່ມໄມ້ບ້າງ ທຣົງໂປຣຍເຂົ້າຕອກພຣະຣາຊທານ ປາ ທັງປວງທອດພຣະເນດນົກໂນຣີສັດຕວາແຂກເຕົ້າກະຕົ້ວຊຶ່ງແຂວນໄວ້ທີ່ກິ່ງໄມ້ ນົກເປັດນ້ຳ ນົກແຄບແຄລອຍເລ່ນນ້ຳຢູ່ ອັນນົກນອກກວ່ານີ້ກໍລຽງປ່ອຍ ລຽງແຂວນວຽງໃນສວນເປັນຫລາຍຊາດ ແລະຊຶ່ງທຣົງພຣະຣາຊດຳຣິສ້າງພຣະທີ່ນັ່ງເກງ ຂຸດສະໄວ້ໃນພຣະຣາຊວັງທັງນີ້ ເພື່ອຈະໄດ້ໃຫ້ພຣະວົງສານຸວົງຝ່າຍໃນປະພາດເລ່ນ ດ້ວຍມິໄດ້ໄປເຫັນພູເຂົາແລະທ່ານ້ຳແຫ່ງໃດ ແລະຈະໄດ້ດູສະຕິປັນຍາຂ້າຣາຊການຊຶ່ງເປັນຊ່າງຂ້າງຈະໄດ້ຝີມື ຊ່າງຈຳຫລັກ ຊ່າງຂຽນ ຊ່າງປັ້ນ ຊ່າງປູນ ຊ່າງຢາດໄມ້ ຊ່າງຕົ້ນໄມ້ ໄທຈີນ ໃຫ້ເປັນກຽດຕິຍົດປາກົດໃນແຜ່ນດິນ ແລ້ວກໍເປັນຣາຊກຸສົນຢ່າງນຶ່ງ ຄັນຖິງເທສກາລພົນໄມ້ຊຸກຊຸມກໍທຣົງພຣະຣາຊສັດທາ ໃຫ້ອາຣາທນາພຣະຣາຊາຄະນະເຂົ້າໄປຮັບພຣະຣາຊທານສັນໃນພຣະທີ່ນັ່ງເກງຕາມຂອບສະ ພຣະຣາຊາຄນະຮັບປະທານສັນປີຍະຈັງຫັນໄດ້ມາກກວ່າສັນທີ່ອື່ນ ເພາະໄດ້ດູຝີມືຊ່າງທີ່ທຳໄວ້ນັ້ນແລະໂປຣດໃຫ້ພຣະເຈົ້າລູກເທີຫລານເທີ ແລະ ຂ້າຣາຊການຜູ້ໃຫຍ່ຜູ້ນ້ອຍທີ່ສນິດ ໆ ເຂົ້າພາຍເຮືອທ່ຽວໄປຊົມເລ່ນພຣະຣາຊທານລຽງດູດັ່ງນີ້ເນືອງ ໆ ຖ້າເທສການຕຸດສົງການເຂົ້າວັດສາ ສາຣທະ ອອກວັດສາວັນວິສາຂະບູຊາ ເພັນເດືອນ ໑໑ ເດືອນ ໑໒ ກໍທຣົງພຣະຣາຊສັດທາ ໃຫ້ເຊີນພຣະພຸທຮູບແກ້ວພລຶກແລະພຣະບໍຣົມມະສາຣີຣິກະທາດ ໄປສະຖິດໄວ້ໃນທີ່ນັ່ງເກງຄົງຄາສວັນ ກະທຳສົມໂພດ ພ້ອມດ້ວຍພຣະບໍຣົມ-ວົງສານຸວົງຝ່າຍໃນພັນຣະຍາ ຂ້າທູນລະອອງ ຜູ້ໃຫຍ່ ຜູ້ນ້ອຍ ເຂົ້າໄປຮ້ອງສັກກະຣະວາດອກສ້ອຍມະໄຫຣີເພັງຄົ້ງຫອມ ນອມທະແຍ  ສົພການມະຫໍຣະສົບຕ່າງ ໆ ໃຫ້ແຕ່ງເກງຕັ້ງເຄື່ອງແກ້ວ ແຂວນໂຄມແກ້ວໂຄມແພຣຫລາຍຢ່າງຕາມບູຊາພຣະບໍຣົມທາດ ຄັ້ງລະສາມຄືນບ້າງ ສີ່ຄືນບ້າງ ແລະເມື່ອເພັນເດືອນ ໑໒ ປີຖາະ ເອກສົກນີ້ ພຣະຍານະຄອນລຳປາງພຣະຍານ່ານ ລົງໄປເຝົ້າລະອອງ ນະ ກຸງເທບ  ກໍໂປຣດ

ໃຫ້ພາບຸດພະຣິຍາເຂົ້າໄປຊົມພຣະທີ່ນັ່ງເກົ່າຊຶ່ງຕົກແຕ່ງ ແລະ ການມະຫໍຣະສົບສົມໂພດສົ້ນທຸກຄົນ ຖ້າເທສການແຕ່ງເກົ່ງ ແລະ ລ້ຽງດູຂ້າຫຼວງລະອອງຄັ້ງໃດ ກໍມີພຣະຣາຊຫຣະທັຍຄິດເຖິງເຈົ້າວຽງຈັນທຸກຄັ້ງ ດ້ວຍມີໄດ້ລົງໄປເຫັນ ຈຶ່ງໂປຣດໃຫ້ຖ່າຍຢ່າງແຜນທີ່ສະເກົ່ງເກົ່າໃໝ່ພຣະຣາຊທານຂຶ້ນມາໃຫ້ເຈົ້າວຽງຈັນດູພໍເປັນສຳເນົາພລາງຖ້າເຈົ້າວຽງຈັນຫວ່າງຣາຊການເມືອງເມື່ອໃດ ຈະລົງໄປເຝົ້າຫຼວງລະອອງທີ່ກຸງເທບ ກໍໃຫ້ພາບຸດພະຣິຍາມະໂຫຣີລະຄອນ ກັບໃຫ້ທາພາຍ ແລະ ນັກເຂົາຄາຣົມລົງໄປດ້ວຍ ຈະໄດ້ເລ່ນຕາມສະບາຍໃຈ ອັນເຮືອສຳລັບພາຍເລ່ນແລະກົງໄມ້ທີ່ໜ້າແຂວນນັກນັ້ນ ມີຢູ່ເປັນອັນມາກ.

ໜັງສືມາ ນະ ວັນ ໖ ເດືອນ ໒ ຂຶ້ນຄ່ຳ ໑ ຈຸລສັກຣາດ ໑໑໗໑ ປີ ເຖາະ ເອກສົກ ວັນສຸກ ເດືອນຍີ່ ຂຶ້ນຄ່ຳ ໑ ໄດ້ສົ່ງຕຣາມໃຫ້ເຈົ້າຣາຊບຸດ ແຕ່ງໃຫ້ທ້າວເພັຽຖືຂຶ້ນໄປສົ່ງໃຫ້ເພັຽເມືອງກາງແລວ.

ໃນປີ ຄ.ສ.໑໘໒໔ (ຈຸລສັກຣາດ ໑໑໘໖) ພຣະອົງໄດ້ສ້າງວັດແສນຊຶ່ງຮຽກວ່າ ວັດສະຕະສະຫັດສາຣາມ ຄືວັດສີສະເກດດຽວນີ້ ແລະໄດ້ທຳບຸນສລອງເປັນການໃຫຍ່.

ໃນປີ ຄ.ສ.໑໘໒໔ (ຈຸລສັກຣາດ ໑໑໘໗) ເດືອນ ໔ ຂຶ້ນ ໓ ຄ່ຳ ເກີດອາເພດລົມພັດທີ່ພຣະບາງຫັກ ເມື່ອເດືອນ ໖ ຂຶ້ນຄ່ຳ ໑ ລົມພັດໂຮງຫລວງເພ ແລະເດືອນ ໘ ຂຶ້ນ ໑໔ ຄ່ຳ ເກີດແຜ່ນດິນໄຫວ ໃນປີນັ້ນເອງ ພຣິະເຈົ້າແຜ່ນດິນໄທອົງທີ ໒ ທີ່ຮັກແພງກັບພຣະເຈົ້າອະນຸ ສະເດັດສຸຣະຄົດ ອົງທີ ໓ ພຣະນາມວ່າ ພຣະນັ່ງເກົ້າຂຶ້ນສເວີຍຣາຊແທນ ເນື່ອງໃນງານປົງສົບນີ້ສົມເດັດພຣະເຈົ້າອະນຸໄດ້ລົງໄປກຸງເທບ ແລະໄດ້ພາບ່າວໄພ່ ແລະ ເສນາຂ້າຣາຊການລົງໄປນຳເປັນອັນມາກ ເມື່ອແລ້ວງານປົງສົບແລ້ວ ພຣະເຈົ້າແຜ່ນດິນໄທໄດ້ບັງຄັບໃຫ້ຄົນລາວທີ່ລົງໄປນຳພຣະເຈົ້າອະນຸ ໃຫ້ໄປຕັດຕົ້ນຕານ ເມືອງສຸພັນບຸຣີ ແກ່ລົງໄປໄວ້ເມືອງສມຸດປາການເປັນອັນມາກ ພໍໃກ້ຣະດູຝົນ ພຣະເຈົ້າອະນຸກໍລາກັບຄືນມາ ແລະເມື່ອຈະມານັ້ນພຣະອົງໄດ້ຂໍເອົາ:

ພວກລະຄອນຜູ້ຍິງທີ່ຢູ່ໃນວັງ ໑
ເຈົ້າຍິງ ດວງຄຳ ຊຶ່ງເປັນເຈົ້າລາວ ໑
ຄອບຄົວລາວທີ່ຢູ່ເມືອງສະຣະບຸຣີ ໑

ເພື່ອພາເອົາຂຶ້ນມາວຽງຈັນ ແຕ່ພຣະເຈົ້າແຜ່ນດິນໄທບໍ່ໂຜດປະທານໃຫ້ຈັກຢ່າງ ພຣະອົງຈຶ່ງມີຄວາມຕ່ຳຕ້ອຍພຣະໄທຕັ້ງແຕ່ນັ້ນມາ.

ສົມເດັດພຣະເຈົ້າອະນຸວົງ ມີພຣະຣາຊບຸດ ແລະ ພຣະຣາຊທິດາທີ່ພາກົດນາມຢູ່ຫລາຍອົງ ຄື:

໑)-ເຈົ້າສຸດທິສານ (ໂປ້)
໒)-ເຈົ້າຣາຊວົງ (ເຫງົ້າ)
໓)-ເຈົ້າຣາຊບຸດ (ໂຍ້)
໔)-ເຈົ້າຕ້ໍ
໕)-ເຈົ້າບັນ
໖)-ເຈົ້າດວງຈັນ
໗)-ເຈົ້າຄຳແພງ
໘)-ເຈົ້າໜູຈິນ
໙)-ເຈົ້າປານ
໑໐)-ເຈົ້າສຸວັນນະຈັກ

໑໑)-ເຈົ້ານາງຄຳວັນ
໑໒)-ເຈົ້ານາງຊຽງຄຳ
໑໓)-ເຈົ້າໄຊຍະສານ
໑໔)-ເຈົ້າເສືອ
໑໕)-ເຈົ້າເຫມັ້ນ
໑໖)-ເຈົ້າຊ້າງ
໑໗)-ເຈົ້າອິ່ງຄຳ
໑໘)-ເຈົ້າຂັດຕິຍະ
໑໙)-ເຈົ້າພຸທຊາດ
໒໐)-ເຈົ້າດິສະພົງ.

## ພຣະເຈົ້າອະນຸທຳການກູ້ອິສຣະພາບ

ຄັນເຖິງປີ ຄ.ສ.໑໘໒໖ ເວລາພຣະເຈົ້າອະນຸສະເດັດກັບຈາກປະເທດໄທແລ້ວ ພຣະອົງໄດ້ເຊີນເຈົ້ານາຍບໍຣິມວົງສານຸວົງແລະຂ້າຣາຊການຜູ້ໃຫຍ່ມາປຶກສາ ເພື່ອທຳການກູ້ອິສຣະພາບ ໃຫ້ພົ້ນຈາກຄວາມເປັນທາດ ພຣະບໍຣິມວົງສານຸວົງ ແລະ ຂ້າຣາຊການຜູ້ໃຫຍ່ທີ່ເຂົ້າປຶກສານັ້ນມີ:

໑)-ເຈົ້າມະຫາອຸປຣາດ (ຕິດສະ)
໒)-ເຈົ້າສຸດທິສານ (ໂປ້)
໓)-ເຈົ້າຣາຊວົງ (ເຫງົ້າ)
໔)-ເຈົ້າຣາຊບຸດ (ໂຍ)
໕)-ພຣະຍາເມືອງຈັນ
໖)-ພຣະຍາເມືອງແສນ
໗)-ພຣະຍາເມືອງກາງ
໘)-ພຣະຍາເມືອງຊ້າຍ
໙)-ປລັດເມືອງແສນ
໑໐)-ປລັດເມືອງຈັນ
໑໑)-ເພັຍຊານົນ ກົມພຣະສັສດີ

ພຣະຣາຊອານາຈັກວຽງຈັນໃນຄັ້ງນັ້ນ ມີຫົວເມືອງຂຶ້ນຢູ່ ໗໙ ຫົວເມືອງ. ສົມເດັດພຣະເຈົ້າອະນຸຕັດປຶກສາວ່າ ເວລານີ້ໃນກຸງເທບມີແຕ່ເຈົ້ານາຍຫນຸ່ມນ້ອຍ ຂຸນນາງຜູ້ໃຫຍ່ກໍມີຫນ້ອຍ ຝີມືທັບຈັບເສິກອ່ອນແອ ບໍ່ແຂງແຮງເຫມືອນແຕ່ກ່ອນ ທັງເຈົ້າເມືອງນະຄອນຣາຊສີມາກໍບໍ່ຢູ່ ຫົວເມືອງຕາມທາງບໍ່ມີບ່ອນຂັດຂວາງ ປະການນຶ່ງພວກອັງກິດກໍກຳລັງເຂົ້າມາກີດກວນຢູ່ທາງພາກໃຕ້ ຖ້າເຮົາຍົກທັບໄປຕີເອົາກຸງເທບໃນເວລານີ້ກໍເຫັນຈະໄດ້ ເຈົ້າອຸປຣາດຕິດສະ(໑)ທູນຄັດຄ້ານວ່າກຸງເທບເປັນເມືອງໃຫຍ່ ເຖິງແມ່ນວ່າເຮົາຕີໄດ້ແລ້ວ

---

(໑)ເຈົ້າອຸປຣາດຕິດສະ ເປັນນ້ອງຂອງພຣະເຈົ້າອະນຸ ແຕ່ຄົນລະແມ່ ແລະບໍ່ເຫັນດີນຳພຣະເຈົ້າອະນຸໃນການລົງໄປຕີກຸງເທບ.

ກໍເຫັນຈະຕັ້ງຢູ່ບໍ່ໄດ້ ເພາະຣາສດອນຈະໂຮມກັນເຂົ້າເປັນກະບົດ ພວກເຮົາຈະໄດ້ຮັບຄວາມລຳບາກເໝືອນນອນຢູ່ເທິງຂວາກເທິງໜາມ ພຣະເຈົ້າອະນຸຈຶ່ງຕັດຕອບວ່າ ຖ້າເຮົາຮັກສາໄວ້ບໍ່ໄດ້ ເຮົາກໍຈະກວາດເອົາແຕ່ຄອບຄົວລາວຂຶ້ນມາໄວ້ວຽງຈັນແລ້ວຈັດການປ້ອງກັນຮັກສາດ່ານຊ່ອງແຄບທາງພູເຂົາໄວ້ ພວກໄທຄົງບໍ່ສາມາດຂຶ້ນມາຕີພວກເຮົາໄດ້ ເພາະທາງໄກກັນດານຫລາຍ ການຈະສົ່ງສະບຽງອາຫານກັນກໍລຳບາກ ເຫັນທີ່ເຮົາຈະໄດ້ຊັຍຊະນະເປັນແນ່ນອນ.

ເມື່ອຕັດປຶກສາກັນແລ້ວ ພຣະເຈົ້າອະນຸກໍໃຫ້ເຈົ້າອຸປຣາດຕິດສະ ເປັນແມ່ທັບຍົກພົນລົງໄປທາງເມືອງກາລະສິນ ເມືອງຮ້ອຍເອັດ ເມືອງສຸວັນນະພູມ ເມືອງຂອນແກ່ນ ເມືອງຊົນບົດ ໃຫ້ເຈົ້າຣາຊບຸດ (ໂຍ້) ຍົກພົນເມືອງຈຳປາສັກ ລົງມາທາງເມືອງເຂມະຣາດ ເມືອງອຸບົນ ເມືອງຍະໂສທອນ ເມືອງສີສະເກດ ເມືອງເດດອຸດົມ ໃຫ້ກວາດຄົວຫົວເມືອງເຫລົ່ານັ້ນຂຶ້ນມາໄວ້ວຽງຈັນ ແລ້ວຍົກທັບລົງໄປທັບກັນຢູ່ເມືອງຣາຊສີມາ ພ້ອມກັນນັ້ນສົ່ງເດັດພຣະເຈົ້າອະນຸໄດ້ແຕ່ງພຣະຣາຊສານ ແລະ ເຄື່ອງມຸງຄຸນບັນນາການໃຫ້ນັກພູມິນກັບຂ້າຣາຊການ ໔໐ ຄົນຖືຂຶ້ນໄປຖວາຍພຣະເຈົ້າມັນທາຕຸຣາດເຈົ້ານະຄອນຫລວງພຣະບາງ ທັງຊັກຊວນກຽວກ່ອມໃຫ້ຮ່ວມມືກັນທຳການກູ້ຊາດ ແລະ ໃຫ້ລືມຄວາມເກົ່າຄວາມຫລັງນັ້ນເສັຽ ພຣະເຈົ້າມັນທາຕຸຣາດກໍສະແດງອາການເໝືອນຈັກຮ່ວມມື ແຕ່ພໍນັກພູມິນກັບບ່າວໄພ່ກັບມາແລ້ວ ພຣະເຈົ້າມັນທາຕຸຣາດກໍແຕ່ງໃຫ້ເຈົ້າສຸຂະເສີມພຣະຣາຊໂອຣົດຜູ້ກົກລົງໄປກຸງເທບ ທູນເຫດການທີ່ພຣະເຈົ້າອະນຸຈະຍົກກອງທັບລົງໄປຕີກຸງເທບໃຫ້ພຣະເຈົ້າແຜ່ນດິນໄທຊາບ ດ້ວຍເຫດນີ້ທາງໄທຈຶ່ງໄດ້ຮູ້ຕົວ ແລະ ຈັດການປ້ອງກັນເມືອງທັນ ບໍ່ທໍ່ແຕ່ນັ້ນ ເຈົ້າມັນທາຕຸຣາດ ຍັງໄດ້ຈັດແຈງກອງທັບໄວ້ຈຳນວນ ໔.໐໐໐ ຄົນ ສຳລັບຖ້າຊ່ວຍເຫລືອກອງທັບໄທດ້ວຍ.

ໃນເວລາພຣະເຈົ້າອະນຸກຳລັງຈັດແຈ່ງແຕ່ງກອງທັບຢູ່ນັ້ນກໍເກີດອາເພດວິປຣິດ ຫລາຍຢ່າງຫລາຍປະການ ດ້ວຍເຫດຊາຕາບ້ານເມືອງຈະຫລົ້ມຈົມ ຄື: ໃນເດືອນ ໖ (ຄ.ສ.໑໘໒໖) ເກີດລົມພາຍຸໃຫຽ່ພັດຍອດຊໍ່ຟ້າປາສາດ ແລະ ຫໍພຣະແກ້ວພັງທະລາຍລົງ, ຫໍໂຮງພຣະມະເຫສັກ ໔ ຫລັງ ບ້ານເຮືອນຣາສດອນຫັກມຸ່ນໄປ ໔໐ ຫລັງ ເຖິງເດືອນ ໑໑ ອອກໃໝ່ ໑໔ ຄ່ຳເກີດແຜ່ນດິນໄຫວແຜ່ນດິນໃນກຳແພງເມືອງດ້ານຕາເວັນອອກຍະອອກຍາວ ໘ ວາ ກວ້າງສອກປາຍ ແລະເລິກ ໘໐ ວາປາຍ.

---

## ພຣະເຈົ້າອະນຸຍົກທັບຈາກວຽງຈັນ

ເມື່ອຕົກແຕ່ງກອງທັບພ້ອມແລ້ວ ສົມເດັດພຣະເຈົ້າອະນຸ ກໍຍົກທັບຫລວງອອກຈາກວຽງຈັນຂ້າມຂອງ ໄປຕັ້ງຢູ່ບ້ານພັນພ້າວ ແອບເຝິກຊ້າງມ້າຣີພົນຢູ່ທີ່ນັ້ນ ຄັນເຖິງເດືອນຍີ່ແຮມ ປີຈໍ (ຄ.ສ.໑໘໒໗) ຈຶ່ງໃຫ້ ເຈົ້າຣາຊວົງເປັນແມ່ທັບໜ້າ ຄຸມທະຫານ ໓.໐໐໐ ຄົນ ຍົກລົງໄປກ່ອນ ເດືອນ ໓ ແຮມ ໓ ຄ່ຳ ເຈົ້າ ຣາຊວົງຍົກທັບໄປເຖິງເມືອງນະຄອນຣາຊສີມາ ແລ້ວໄປຂໍເບີກເຂົ້າຫລວງນຳພຣະຍາຍົກກະບັດ ເຈົ້າກົມ ສາງເຂົ້າເມືອງນະຄອນຣາຊສີມາ ໂດຍຕົວະວ່າສົມເດັດພຣະເຈົ້າຢູ່ຫົວກຸງເທບໃຫ້ເກນກອງທັບລົງໄປຮົບອັງ ກຣິດ ພຣະຍາຍົກກະບັດກໍເຊື່ອ ເບີກເຂົ້າໃຫ້ເຈົ້າຣາຊວົງຕາມປະສົງແລ້ວເຈົ້າຣາຊວົງຈຶ່ງໃຫ້ພຣະຍາເມືອງ ຂວາ ກັບ ພຣະຍາຊຽງໃຕ້ຍົກລົງໄປເມືອງສະຣະບຸຣີ ສ່ວນເຈົ້າຣາຊວົງຍົກຕາມຫລັງລົງໄປ ຕັ້ງທັບຢູ່ບ້ານ ຂອນຂວ້າງ ເຖິງເດືອນສາມແຮມ ໖ ຄ່ຳ (ວັນທີ ໒໐ ເຟວຣີເຢ ໑໘໒໗) ພຣະຍາເມືອງຂວາ ໄດ້ພາ ເອົາພຣະຍາສຸຣະຣາຊວົງເຈົ້າເມືອງສະຣະບຸຣີ ກັບ ຫລວງພົນກອງຄຳ ກອງຊຽງ ກອງສົງຂຶ້ນມາເຝົ້າເຈົ້າ ຣາຊວົງຢູ່ບ້ານຂອນຂວ້າງ ເຈົ້າຣາຊວົງສັ່ງວ່າດຽວນີ້ພວກອັງກຣິດຈະຍົກເຂົ້າມາຕີກຸງເທບ ໃຫ້ກວາດຄົວ ລາວເມືອງສະຣະບຸຣີຂຶ້ນໄປຢູ່ວຽງຈັນຈຶ່ງຈະພົ້ນໄພ ພວກນາຍກອງ ນາຍໝວດ ເມືອງສະຣະບຸຣີ ກໍຈັດການ ຕາມຮັບສັ່ງ.

ຝ່າຍສົມເດັດພຣະເຈົ້າອະນຸ ກັບ ເຈົ້າສຸດທິສານ ຄັນໄດ້ສຸພະຣົກດີແລ້ວ ກໍຍົກທັບລົງໄປຕາມຫລັງ ເຈົ້າຣາຊວົງໄປເຖິງເມືອງນະຄອນຣາຊສີມາໃນວັນເດືອນ ໓ ແຮມ ໕ ຄ່ຳ (ວັນທີ ໑໗ ເຟວຣີເຢ ໑໘໒໗) ໄດ້ຢຸດຕັ້ງຄ້າຍຢູ່ບຶງທະເລ ທາງຕາເວັນອອກເມືອງນະຄອນຣາຊສີມາຮວມ ໗ ຄ້າຍມີພົນປະມານ ໓໐.໐໐໐ ຄົນ ເວລານັ້ນ ເຈົ້າພຣະຍານະຄອນຣາຊສີມາຜູ້ເປັນເຈົ້າເມືອງບໍ່ຢູ່ ອອກໄປເມືອງຄູຂັນ ເພື່ອປາບປາມ ພວກຂເມນເມືອງຄູຂັນ ສົມເດັດພຣະເຈົ້າອະນຸ ຈຶ່ງເຂົ້າຍຶດເອົາເມືອງນະຄອນຣາຊສີມາໄດ້ໂດຍງ່າຍແລ້ວ ຕັດສັ່ງໃຫ້ພຣະຍາພົມຍົກກະບັດເມືອງນະຄອນຣາຊສີມາ ກວາດເອົາຄົວເມືອງນະຄອນຣາຊສີມາຂຶ້ນໄປວຽງ ຈັນໃຫ້ໝົດສິ້ນ ໃນເວລາ ໔ ວັນ ພຣະຍາພົມຍົກກະບັດກໍປະຕິບັດຕາມ.

## ເຈົ້າອຸປຣາດຕິດສະກະບົດຕໍ່ເຈົ້າອະນຸ

ຝ່າຍເຈົ້າອຸປຣາດຕິດສະຍົກທັບລົງໄປເຖິງເມືອງສຸວັນນະພູມ ໄດ້ພົບກັບພຣະສຸຣິຍະພັກດີ (ປ້ອມ) ຂ້າຫລວງໄທທີ່ຂຶ້ນມາສັກເລກພົລເມືອງຢູ່ຍະໂສທອນ ເຈົ້າອຸປຣາດຕິດສະຈຶ່ງເປີດເຜີຍຄວາມລັບໃຫ້ພຣະຍາ ສຸຣິຍະພັກດີຊາບວ່າ ພຣະເຈົ້າອະນຸຈະຍົກທັບລົງໄປຕີກຸງເທບ ຕົນເອງບໍ່ເຫັນດີນຳ ແຕ່ຂັດພຣະຣາຊອາດຍາ ບໍ່ໄດ້ ຂໍໃຫ້ພຣະສຸຣິຍະພັກດີ ລົງໄປກາບທູນໃຫ້ພຣະເຈົ້າແຜ່ນດິນກຸງເທບຊາບດ້ວຍການທີ່ເຈົ້າອຸປຣາດຄິດດັ່ງ ນັ້ນ ກໍດ້ວຍຫວັງວ່າຈະໄດ້ເປັນເຈົ້ານະຄອນວຽງຈັນໃນພາຍຫລັງ ແລ້ວເຈົ້າອຸປຣາດກໍອອກຫນັງສືເດີນທາງ ໃຫ້ພຣະສຸຣິຍະພັກດີວ່າ ພຣະສຸຣິຍະພັກດີເປັນຄົນບໍຣິສຸດຍອມສວາມິພັກແລ້ວ ຈະເດີນທາງລົງໄປຮັບເອົາຄອບ

ຄົວຂຶ້ນມາວຽງຈັນ ພຣະສຸຣິຍະພັກດີລົງໄປເຖິງເມືອງນະຄອນຣາຊສີມາ ກໍເຂົ້າໄປເຝົ້າພຣະເຈົ້າອະນຸຖວາຍໜັງສືນັ້ນໃຫ້ທອດພຣະເນດ ພຣະເຈົ້າອະນຸກໍຫລົງເຊື່ອ ຈຶ່ງປ່ອຍພຣະສຸຣິຍະພັກດີໄປ ພ້ອມກັບສັ່ງວ່າ ເມື່ອລົງໄປເຖິງກຸງເທບແລ້ວ ໃຫ້ກາບທູນພຣະເຈົ້າແຜ່ນດິນດ້ວຍວ່າ ເຮົາບໍ່ໄດ້ເປັນກະບົດດອກ ແຕ່ພວກຄອບຄົວເມືອງນະຄອນຣາຊສີມາ ແລະ ເມືອງສະຣະບຸຣີ ເຂົາຮ້ອງທຸກວ່າ ເຈົ້າເມືອງກິນການອິ່ມຕົວບຽດບຽນ ໄດ້ຮັບຄວາມລຳບາກ ຈະສມັກຂຶ້ນໄປຢູ່ວຽງຈັນ ຈຶ່ງໄດ້ຍົກກອງທັບລົງມາຮັບເອົາ ສ່ວນພຣະອະນຸຊິດພິທັກນ້ອງຂອງເຈົ້າພຣະຍາອະໄພພູທອນ ນັ້ນ ເປັນຄົນຮັກແພງກັນກັບເຮົາ ເຮົາຈະຂໍເອົາໄວ້ໃນກອງທັບ ແລ້ວພຣະສຸຣິຍະພັກດີ ກໍຟ້າວເດີນທາງລົງໄປເຖິງດົງພຣະຍາໄຟ ພົບກອງທັບເຈົ້າຣາຊວົງກຳລັງກວາດຄົວເມືອງສະຣະບຸຣີຂຶ້ນມາມີຄົວໄທ ໑໐ ຄົວ ຄົວຈັກ ໘໐ ຄົວແລະຄົນລາວ ໑໐,໐໐໐ ຄົນພຣະສຸຣິຍະພັກດີ ກໍເຂົ້າເຝົ້າເຈົ້າຣາຊວົງຖວາຍໜັງສືນັ້ນໃຫ້ເບິ່ງເຈົ້າຣາຊວົງຈະຈັບພຣະສຸຣິຍະພັກດີໄວ້ ແຕ່ພຣະຍາຊຽງໃຕ້ກັບທາວພຣະຍາຜູ້ໃຫຍ່ທັງຫລາຍຄັດຄ້ານວ່າ ພຣະບິດາປ່ອຍໃຫ້ມາແລ້ວເຮົາຈະຈັບໄວ້ເປັນການເກີນພຣະອານາດ ພຣະອົງຈະຄິດຢ່າງໃດກໍບໍ່ຮູ້ ຈຶ່ງປ່ອຍພຣະສຸຣິຍະພັກດີໄປ.

ຝ່າຍພຣະຍາປລັດເມືອງນະຄອນຣາຊສີມາ ເຊິ່ງເປັນຜົວຂອງນາງໂມ້ ອອກໄປເມືອງຊຸອົນ ນຳເຈົ້າພຣະຍານະຄອນຣາຊສີມາ ຄັນໄດ້ຊາບຂ່າວວ່າ ພຣະເຈົ້າອະນຸກວາດເອົາຄົວເມືອງນະຄອນຣາຊສີມາໝົດແລ້ວ ກໍຟ້າວກັບຄືນມາ ແລະ ເຂົ້າເຝົ້າເຈົ້າອະນຸວ່າຈະຂໍຕາມສະເດັດໄປຢູ່ວຽງຈັນດ້ວຍ ພຣະເຈົ້າອະນຸກໍຫົງເຊື່ອ ແລ້ວໃຫ້ພຣະຍາປລັດ ກັບ ພຣະຍາພົມຍົກກະບັດ ຊາວເມືອງນະຄອນຣາຊສີມາ ເປັນຜູ້ຄວບຄຸມຄົວອົບພະຍົບ ພໍມາເຖິງທົ່ງສຳຣິດ ກໍຕັ້ງພັກຄອບຄົວຢູ່ທີ່ນັ້ນ ພຣະຍາປລັດກັບນາງໂມ້ ແລະພຣະຍາພົມຍົກກະບັດ ພ້ອມກັນຄິດອຸບາຍລຽງເຫລົ້າພວກທະຫານລາວ ແລະ ຕຳຣວດຜູ້ຄຸມ ເມື່ອພວກທະຫານລາວ ແລະ ຕຳຣວດມົວເມົານອນຫລັບ ກໍພາກັນອາຟັນພວກຕຳຣວດຕາຍເກືອບໝົດ ພວກເຂົາເກັບອາວຸດຂອງລາວໄດ້ແລ້ວ ກໍຕັ້ງຄ້າຍຂຶ້ນທີ່ທົ່ງສຳຣິດນັ້ນເອງ ສ່ວນພວກຕຳຣວດທີ່ເຫລືອຕາຍ ຈຶ່ງຂີ່ມ້າລົງໄປທູນເຈົ້າອະນຸ ເຈົ້າອະນຸໃຫ້ຕຳຣວດ ໔໐ ຄົນຂຶ້ນມາສືບເບິ່ງ ພວກຄົວເມືອງນະຄອນຣາຊສີມາ ກໍຫຸ້ມຍິງຕຳຣວດ ໔໐ ຄົນນັ້ນຕາຍອີກ ພຣະເຈົ້າອະນຸໄດ້ຫົງຊາບດັ່ງນັ້ນ ຈຶ່ງສັ່ງໃຫ້ເຈົ້າສຸດທິສານ ເຈົ້າປານ ເຈົ້າກ່ຳພ້າ ຄຸມທະຫານ ໓໐໐໐ ຄົນຂຶ້ນມາຕີຄົວເມືອງນະຄອນຣາຊສີມາ ພວກຄົວຕໍ່ສູ້ຢ່າງແຂງແຮງ ເຈົ້າສຸດທິສານເຂົ້າໃຈວ່າ ແມ່ນກອງທັບຂອງພຣະຍານະຄອນຣາຊສີມາຂຶ້ນມາຊ່ອຍພວກຄົວ ກໍເລີຍຖອຍທັບຄືນໄປທູນພຣະຣາຊບິດາ.

## ສົມເດັດພຣະເຈົ້າອະນຸຖອຍທັບ

ໃນເວລານັ້ນ ເຈົ້າຣາຊວົງໄດ້ກວາດຄົວເມືອງສະຣະບຸຣີຂຶ້ນມາເຖິງເມືອງໂຄຣາດ ຈຶ່ງເຂົ້າໄປເຝົ້າພຣະບິດາ ພໍດີເວລານັ້ນຊາບຂ່າວວ່າ ທາງກຸງເທບຈະຍົກກອງທັບໃຫຍ່ຂຶ້ນມາປາບ ຈຶ່ງປຶກສາກັນວ່າ ຖ້າຈະຕັ້ງທັບຮັບຢູ່ເມືອງນະຄອນຣາຊສີມາ ກໍຢ້ານຖືກຕີຂນາບ ຖ້າຖອຍຂຶ້ນໄປຕັ້ງຮັບຢູ່ເມືອງໜອງບົວລຳພູ

ເຫັນຈະດີ ປຶກສາພ້ອມກັນດັ່ງນີ້ແລ້ວ ພຣະເຈົ້າອະນຸກໍຖອຍທັບຄືນມາ ຕັ້ງຢູ່ເມືອງຫນອງບົວລຸ່ມພູ ປະຄອບຄົວເມືອງນະຄອນຣາຊສີມາໃຫ້ກັບຄືນໄປ  ສ່ວນເຈົ້າຣາຊວົງໃຫ້ຍົກຂຶ້ນໄປທາງເມືອງຫລົ່ມ.

ສິນເດັດພຣະເຈົ້າອະນຸຖອຍທັບຄືນມາຕັ້ງຢູ່ເມືອງຫນອງບົວລຸ່ມພູ ໃນເດືອນ ໔ ແຮມ ໑໑ ຄ່ຳ (ວັນທີ ໒໓ ມາກສ໌ ໑໘໒໗) ແລວໄດ້ຕັ້ງຄ່າຍຢູ່ພູເຂົາສານບອນທາງແຍກຄ່າຍ ໑ ໃຫ້ພຣະຍາສຸໂພກັບຊານົມ ເປັນນາຍທັບຮັກສາຄ່າຍ ພ້ອມດ້ວຍທະຫານ ໒໐,໐໐໐ ຄົນ ໃຫ້ພຣະຍານະຣິນ ຕັ້ງຄ້າຍຢູ່ຫນອງບົວຄ່າຍ ໑ ມີທະຫານ ໓໐໐໐ ຄົນ ໃຫ້ພຣະຍາຊຽງສາຕັ້ງຄ້າຍຢູ່ສົມົມ ໃຫ້ກອງຄຳຕັ້ງຄ້າຍຢູ່ຊອງງົວແຕກ ສ່ວນເຈົ້າອຸປຣາດຕິດສະຕັ້ງຢູ່ເມືອງສຸວັນນພູມ.

## ກອງທັບໄທຍົກມາຕໍ່ສູ້

ຝ່າຍພຣະເຈົ້າແຜ່ນດິນປະເທດໄທ ຄັນເຈົ້າຣາຊວົງລົງໄປກວາດເອົາຄົວເມືອງສະຣະບຸຣີຫມົດແລ້ວ ຈຶ່ງໄດ້ຊາບວ່າ ກອງທັບລາວຈະຍົກລົງໄປຕີກຸງເທບຈາກພຣະສຸຣິຍະພັກດີ ກໍຕົກພຣະທັຍ ຈຶ່ງຮັບສັ່ງໃຫ້ຈັດການປ້ອງກັນພຣະນະຄອນເປັນສາມາດ ໃຫ້ຕັ້ງຄ້າຍ ລ້ອມພຣະ  ນະຄອນໄວ້ ແຕ່ທົ່ງງົວລຳພອງ (ຫົວລຳໂພງ) ໄປຈົນເຖິງທົ່ງບາງກະປິ ແລ້ວໃຫ້ເກນຫົວເມືອງຝ່າຍໃຕ້ຝ່າຍເຫນືອເຂົ້າມາໂຮມຄັນເຖິງເດືອນ ໔ ອອກໃຫມ່ ໓ ຄ່ຳ (ວັນທີ ໓ ມາກ  ໑໘໒໗) ຈຶ່ງໃຫ້ກົມພຣະຣາຊວັງບໍວອນສະຖານມົງຄົນເປັນແມ່ທັບຍົກຂຶ້ນມາທາງເມືອງສະຣະບຸຣີ ຕັ້ງທັບຢູ່ທ່າເຮືອເຂົາພຣະພຸທບາດ ຄອຍຖ້າທັບຫົວເມືອງຕ່າງ ໆ ມາພ້ອມກັນ ເມື່ອທັບມາພ້ອມກັນແລ້ວ ກົມພຣະຣາຊວັງບໍວອນແມ່ທັບໃຫຽ່ ຈຶ່ງແຕ່ງໃຫ້ພຣະຍາຈ່າແສນຍາກອນ ພຣະຍາກະລາໂຫມ ຣາຊເສນາ ພຣະຍາວິໄຊຍະຣິນທະຣາ ພຣະຍານະຣົງວິໄຊ ເປັນແມ່ທັບຫນ້າທີ ໑ ກົມຫມື່ນນະເຣດໂຍທິນ ກົມຫມື່ນເສນີບໍຣິຮັກເປັນທັບຫນ້າທີ ໒ ກົມຫມື່ນເສນີເທບເປັນກອງກາງ ກົມມື່ນນະຣານຸຊິດກັບກົມຫມື່ນສວັດວິໄຊ ເປັນປີກຊ້າຍປີກຂວາ ກົມຫມື່ນຣາມອິສເຣດກົມຫມື່ນທິເບດບໍວອນ ເປັນຍົກກະບັດຈະເຣທັບ ກົມຫມື່ນເທບພົນພັກດີເປັນກຽກກາຍ ພຣະນະເຣນທອນຣາຊາ ເປັນແມ່ທັບຫລັງຍົກຂຶ້ນມາທາງດົງພຣະຍາໄຟ ເພື່ອເຂົ້າຕີທັບພຣະເຈົ້າອະນຸ.

ໃຫ້ພຣະຍາມະຫາໂຍທາ ຄຸມກອງທັບມອນຂຶ້ນມາທາງດົງພຣະຍາກາງທັບ ໑ ໃຫ້ພຣະຍາອະໄພພູທອນ ຄຸມທະຫານກຸງເທບ ໔໐໐໐ ຄົນ ຂຶ້ນມາທາງເມືອງເພັຊບູນທັບ ໑ ໃຫ້ພຣະຍາເພັດພິໄຊກັບ ພຣະຍາໄກໂກສາ ຄຸມທະຫານຫົວເມືອງຝ່າຍເຫນືອ ໓໐໐໐ ຄົນຂຶ້ນມາທາງເມືອງພິສນຸໂລກທັບ ໑ ເພື່ອເຂົ້າຕີທັບເຈົ້າຣາຊວົງ ທີ່ຕັ້ງຢູ່ເມືອງຫລົ່ມ ໃຫ້ພຣະຍາຣາຊນິກູລ ພຣະຍາຣາມກຳແຫງ ພຣະຍາຣອງເມືອງ ພຣະຍາຈັນທະບຸຣີ ຍົກທັບມາທາງເມືອງພະຕະບອງຂຶ້ນມາທາງເມືອງສຸຣິນທັບ ໑ ແລະໃຫ້ຂຶ້ນມາທາງເມືອງປາຈີນເມືອງປະຈັນຕະຄາມອີກ ໔ ທັບ ຄືທັບພຣະຍາຣາຊສຸພາວະດີ ໑ ທັບເຈົ້າພຣະຍາພຣະຄັງ ໑ ທັບກົມຫມື່ນພິຊິດພູເບນ ໑ ທັບກົມຫມື່ນສຸຣິນທະຣະຮັກ  ໑ ເພື່ອເຂົ້າຕີທັບຂອງເຈົ້າອຸປຣາດທີ່ຕັ້ງຢູ່ເມືອງສຸວັນນະພູມ.

ເຖິງເດືອນ ໔ ແຮມ (ຄ.ສ.໑໘໒໗) ກອງທັບຫລວງຂອງໄທ ຍົກມາເຖິງເມືອງນະຄອນຣາຊສີມາ ແລ້ວກົມພຣະຣາຊວັງບໍວອນແມ່ທັບໃຫຍ່ຂອງໄທຈຶ່ງແຕ່ງໃຫ້ພຣະຍາຣາຊສຸພາວະດີເອົາທະຫານ ໖໐໐໐ ຄົນ ຍົກຂຶ້ນມາທາງເມືອງຈຳປາສັກ ຜ່ານມາເຖິງເມືອງພິມາຍ (ຢູ່ໃນເຂດຈັງຫວັດນະຄອນຣາຊສີມາ) ກໍພົບກອງທັບຂອງເຈົ້າໂຖງກອງທັບຂອງເຈົ້າໂຖງໄດ້ອອກຕໍ່ສູ້ກັບກອງທັບພຣະຍາຣາຊສຸພາວະດີຫລາຍວັນ ເຫັນວ່າມີທະຫານໄທຫລາຍກວ່າ ກໍປະຄ່າຍແຕກຖອຍຄືນມາເມືອງສຸວັນນະພູມຫາທັບເຈົ້າອຸປຣາດ ພຣະຍາຣາຊສຸພາວະດີຈຶ່ງຍົກມາຕັ້ງຢູ່ເມືອງຂອນແກ່ນ ແລ້ວມີໜັງສືໄປຫາເຈົ້າອຸປຣາດ ວ່າ : "ເມື່ອເຈົ້າອຸປຣາດລົງໄປກຸງເທບແຕ່ກ່ອນເຄີຍເວົ້າວ່າ ເຈົ້າອະນຸຈະເປັນກະບົດນັ້ນ ບັດນີ້ສົມຈິງແລ້ວ ຂໍໃຫ້ເຈົ້າອຸປຣາດໄປຕິວຽງຈັນໃຫ້ໄດ້ ທັບຫລວງຈະຂຶ້ນໄປໂດຍສະດວກ ແລະ ເຮົາຈະຍົກໜູນເຈົ້າອຸປຣາດໄປ" ຄັນເຈົ້າອຸປຣາດໄດ້ຮັບໜັງສືນັ້ນແລ້ວ ກໍສົ່ງມາຖວາຍເຈົ້າອະນຸ ທີ່ຕັ້ງຄ່າຍຢູ່ພູເຂົາສານເມືອງໜອງບົວລຸ່ມພູ ພຣະເຈົ້າອະນຸໄດ້ຮັບໜັງສືນັ້ນແລ້ວ ກໍມີພຣະທັຍສົງສັຍເປັນອັນມາກ ການທີ່ພຣະຍາຣາຊສຸພາວະດີ ມີໜັງສືມາເຖິງເຈົ້າອຸປຣາດນັ້ນ ຈະເປັນກົນອຸບາຍ ໃຫ້ເຈົ້າອະນຸສົງສັຍເຈົ້າອຸປຣາດ ຫລືຈະໄດ້ເວົ້າກັນໄວ້ເປັນຄວາມລັບຈິງ ກໍບໍ່ແຈ້ງຕາມເຫດຜົນພາຍຫລັງເຂົ້າໃຈວ່າ ໄດ້ເວົ້າກັນໄວ້ຈິງແຕ່ເຈົ້າອຸປຣາດເຫັນວ່າ ຈະອຳໄວ້ບໍ່ໄດ້ ຈຶ່ງສົ່ງມາຖວາຍ ໃຫ້ເຫັນວ່າ ໄທຍຸຍົງໃຫ້ແຕກກັນ.

ຝ່າຍເຈົ້າອຸປຣາດ ຄັນໄດ້ສົ່ງໜັງສືນັ້ນມາຖວາຍພຣະເຈົ້າອະນຸແລ້ວ ກໍຖອຍທັບມາຕັ້ງຢູ່ເມືອງໜອງຫານ ກອງທັບພຣະຍາຣາຊສຸພາວະດີ ຍົກນຳຂຶ້ນມາເຖິງເມືອງຍະໂສທອນ ກອງທັບເຈົ້າເມືອງຍະໂສທອນໄດ້ອອກຮົບຕໍ່ສູ້ເປັນສາມາດ ສູ້ກອງທັບໄທບໍ່ໄດ້ກໍແຕກ.

## ກອງທັບໄທຕີຄ້າຍເມືອງໜອງບົວລຸ່ມພູ

ກອງທັບຫລວງຂອງໄທ ແຕ່ງໃຫ້ພຣະຍາແສນຍາກອນ ໑ ພຣະຍາກະລາໂຫມຣາຊເສນາ ໑ ພຣະຍາວິໄຊຍະບຸຣິນທະຣາ ໑ ພຣະຍານະຣົງຄະວິໄຊ ໑ ກັບໝ່ອມເຈົ້າຂຸນເນນ ໑ ຄຸມຄົນໂທດເປັນກອງໂຈນ ຮວມຄົນ ໘໔໐໐ ຄົນ ໃຫ້ເປັນທັບໜ້າຍົກຂຶ້ນມາ ຕີຄ້າຍເມືອງໜອງບົວລຸ່ມພູ ກອງທັບໄທ ທັງ ໕ ທັບໄດ້ຍົກເຂົ້າມາຕີຄ່າຍຂອງພຣະຍານະຣິນ ແຕ່ວັນອັງຄານ ເດືອນ ໖ ອອກໃໝ່ ໖ ຄ່ຳ (ວັນທີ ໑ ແມ ໑໘໒໗) ພຣະຍານະຣິນແມ່ທັບລາວໄດ້ຕໍ່ສູ້ຢ່າງແຂງແຮງ ແລະໄດ້ຂ້າຟັນພວກທະຫານໄທລົ້ມຕາຍລົງເປັນອັນມາກ ນາຍທັບຜູ້ໃຫຍ່ຂອງໄທຜູ້ນຶ່ງ ຊື່ ພຣະຍາກຽດ ຖືກພຣະຍານະຣິນຟັນຕາຍໃນສນາມຮົບ ແຕ່ເນື່ອງຈາກທະຫານໄທມີກຳລັງຫລາຍກວ່າ ແລະ ໜູນກັນມາບໍ່ຂາດ ເຖິງວັນສຸກ ເດືອນ ໖ ຂຶ້ນ ໙ ຄ່ຳ (ວັນທີ ໔ ແມ ໑໘໒໗) ຄ່າຍຂອງພຣະນະຣິນເລີຍແຕກ ທະຫານໄທຈັບພຣະຍານະຣິນໄດ້ ສົ່ງໄປໃຫ້ກົມພຣະຣາຊວັງບໍວອນເຈົ້າແມ່ທັບໃຫຍ່ກົມພຣະຣາຊວັງບໍວອນ ເຫັນຝີມືພຣະຍານະຣິນແຂງແຮງຈຶ່ງຖາມວ່າຈະຍອມອ່ອນນ້ອມຫລືບໍ່ ຖ້າຍອມອ່ອນນ້ອມຈະລ້ຽງໄວ້ ພຣະຍານະຣິນບໍ່ຍອມອ່ອນນ້ອມ ບອກວ່າເປັນຊາດທະຫານ ຖ້າເສັຽທີແລ້ວຕ້ອງຕາຍ ເຈົ້າແມ່ທັບໄທຈຶ່ງໃຫ້ເອົາຊ້າງແທງເສັຽ ເມື່ອກອງທັບໄທຕີໄດ້ຄ່າຍຂອງພຣະຍານະ

ຄືນແລ້ວ ກໍຍົກອອກມາຕັ້ງຢູ່ທົ່ງສົ້ມປ່ອຍໄກຈາກຊ່ອງເຂົ້າສານປະມານ ໑໐ ກິໂລແມັດ.

ກອງທັບໄທອີກ ໓ ກອງ ຄື: ກອງເຈົ້າພຣະຍາອະໄພພູທອນ ໑ ກອງພຣະຍາເພັດພິໄຊ ໑ ກອງພຣະຍາໂກໂກສາ ໑ ຍົກອອກມາຕີກອງທັບເຈົ້າຣາຊວົງທີ່ເມືອງຫລົ່ມ ເຈົ້າຣາຊວົງຕໍ່ສູ້ປ້ອງກັນຢູ່ຫລາຍວັນ ເຫັນຈະປ້ອງກັນໄວ້ບໍ່ໄດ້ ຈຶ່ງຖອຍລົງມາຫາພຣະບິດາຢູ່ທີ່ຊ່ອງເຂົ້າສານ ແຂວງເມືອງຫນອງບົວລຸ່ມພູ ຝ່າຍພຣະເຈົ້າອະນຸເມື່ອໄດ້ຊາບວ່າ ຄ່າຍຂອງພຣະຍານະຄິນເສັຽໃຫ້ແກ່ໄທແລ້ວ ກໍແຕ່ງໃຫ້ພຣະຍາສຸໂພ ພຣະຍາຊານົນ ຢູ່ຮັກສາຄ່າຍ ສ່ວນພຣະອົງກັບເຈົ້າຣາຊວົງ ເຈົ້າສຸດທິສານ ຟ້າວຖອຍກັບຄືນມາວຽງຈັນ ເພື່ອຈັດການປ້ອງກັນພຣະນະຄອນ.

## ກອງທັບໄທຖືກຕີຂນາບ

ຝ່າຍພຣະຍາສຸໂພ ພຣະຍາຊານົນ ເມື່ອໄດ້ຊາບວ່າ ກອງທັບໄທຕີຄ່າຍຂອງພຣະຍານະຄິນແຕກແລ້ວຍົກມາຕັ້ງຢູ່ທົ່ງສົ້ມປ່ອຍ ຈຶ່ງມີຫນັງສືໄປຫາພຣະຍາຊຽງສາ ພຣະຍາກອງຄຳ ໃຫ້ຍົກມາຕີຄ່າຍທົ່ງສົ້ມປ່ອຍ ຄັນນັດກັນພ້ອມແລ້ວ ກອງທັບລາວທັງ ໓ ກອງກໍຍົກມາລ້ອມກອງທັບໄທທັງ ໓ ດ້ານ ພວກໄທຍົກອອກມາຕໍ່ສູ້ ກໍຖືກທະຫານລາວຕີແຕກຖອຍເຂົ້າໄປໃນຄ່າຍ ແຕ່ນັ້ນມາໄທກໍບໍ່ກ້າ ອອກມາຮົບກາງເດີ່ນໄດ້ ກອງທັບລາວຈຶ່ງຕັ້ງລ້ອມໄວ້ເຖິງ ໗ ວັນ ພວກທະຫານໄທອຶດອາຫານລົ້ມຕາຍລົງເປັນອັນມາກ ຄ່າຍໄທທີ່ທົ່ງສົ້ມປ່ອຍເກືອບຈະແຕກຢູ່ແລ້ວ ພໍດີເວລານັ້ນກອງທັບໄທອີກກອງນຶ່ງ ແມ່ທັບຊື່ ກົມຫມື່ນນະເຣດໂຍທີ ຍົກອອກມາຊ່ວຍ ກໍຖືກກອງທັບລາວ ລ້ອມໄວ້ໄດ້ອີກ ກອງທັບໄທອີກກອງນຶ່ງ ແມ່ທັບຊື່ ກົມຫມື່ນເສນີບໍຣິຮັກຍົກອອກໄປທັນໄດ້ເຂົ້າຕີກອງທັບລາວທາງດ້ານຫລັງ ກອງທັບລາວຈຶ່ງໄດ້ຕ່າວຫນ້າມາສູ້ກັບກອງທັບຂອງກົມຫມື່ນເສນີບໍຣິຮັກ ດັ່ງນັ້ນ ພວກທະຫານໄທທີ່ຢູ່ໃນຄ່າຍ ຈຶ່ງຕີແຫກອອກໄດ້ ເຖິງວັນອາທິດ ເດືອນ ໖ ແຮມ ໓ ຄ່ຳ (ວັນທີ ໑໓ ແມ) ກອງທັບລາວທີ່ຕັ້ງລ້ອມທັບໄທໄວ້ນັ້ນ ກໍແຕກແຍກໄປຄົນລະທາງ ກອງທັບຂອງພຣະຍາຊຽງສາຈຶ່ງຖອຍມາຕັ້ງຢູ່ບ້ານໂພນຊຽງຫວາງ ແຄມຫ້ວຍຫລວງແຂວງເມືອງໂພນພິໄສ.

## ກອງທັບໄທເຂົ້າທຳລາຍເມືອງວຽງຈັນ

ເມື່ອກອງທັບລາວທີ່ຕັ້ງຢູ່ຊ່ອງພູເຂົ້າສານຖອຍຫນີຫມົດແລ້ວກອງທັບໄທຈຶ່ງຍົກຂ້າມພູລົງມາ ຝ່າຍພຣະເຈົ້າອະນຸ ຄັນໄດ້ຊາບວ່າ ຄ່າຍພູເຂົ້າສານເສັຽແລ້ວ ກໍພາພຣະຣາຊໂອຣົດພຣະຣາຊທິດາ ແລະ ພຣະມະເຫສີຂີ່ເຮືອລ່ອງໄປຂຶ້ນເມືອງມະຫາໄຊກອງແກ້ວ ແລ້ວກໍທິ້ງຄຳເນີນໄປພັກເຊົາຢູ່ເມືອງແງ່ອານ ໃນປະເທດແກວ ພ້ອມດ້ວຍພຣະຣາຊວົງສານຸວົງ ຄື: ເຈົ້າຣາຊວົງ ເຈົ້າສຸດທິສານ ເຈົ້າໄຊຍະສານ ເຈົ້າເສືອ ເຈົ້າເຖື່ອນ ເຈົ້າເຫມັນ ເຈົ້າຊ້າງ ເຈົ້າອິ່ງຄຳ ເຈົ້າຂັດຕິຍະ ເຈົ້າພູທຊາດ ເຈົ້າດິດສະພົງ ເຈົ້າ[illegible] ເຈົ້າຫນູຈິນ ເຈົ້າສຸພັນ ກັບບຸດເຈົ້າອຸປຣາດຊື່ ເຈົ້າເອບ ເຈົ້າປານ ເຈົ້າສຸພົມ ເຈົ້າອົງ ແລະມານດາຂອງເຈົ້າອຸປຣາດດ້ວຍ.

ສົມເດັດພຣະເຈົ້າອະນຸສະເດັດໜີໄປແລ້ວໄດ້ ໔ ວັນ ກອງທັບໄທຈຶ່ງຍົກມາເຖິງເມືອງພັນພ້າວ ກົມໝື່ນນະເຣດໂຍທີ ກົມໝື່ນເສນີບໍຣິຣັກ ແມ່ທັບໄທ ຈຶ່ງພາທະຫານຂ້າມມາວຽງຈັນ ເຂົ້າກວາດເກັບເອົາສິ່ງຂອງໃນພຣະຣາຊວັງແລະຕາມບ້ານເມືອງໝົດແລ້ວ ກໍໃຫ້ທະຫານຕັດຕົ້ນໄມ້ທີ່ມີໝາກຜົນຖິ້ມໝົດ ແລ້ວໃຫ້ເອົາໄຟເຜົາເມືອງທັງເກນໃຫ້ພົລເມືອງລາວທີ່ຍັງເຫລືອຢູ່ນັ້ນ ໃຫ້ຊ່ອຍກັນມ້າງເພກຳແພງເມືອງຈົນໝົດກ້ຽງ ພຣະນະຄອນວຽງຈັນອັນເປັນພຣະນະຄອນສວຍງາມມາແຕ່ບູຮານຫລາຍຮ້ອຍປີ ຈຶ່ງມີເຫລືອແຕ່ເທົ່າກັບຖານຕັ້ງແຕ່ນັ້ນມາ.

## ເຈົ້າອຸປຣາດຕິດສະ ເຂົ້າຫາແມ່ທັບໄທ

ຝ່າຍເຈົ້າອຸປຣາດຕິດສະທີ່ຖອຍມາຈາກເມືອງສຸວັນນະພູມ ແລະ ມາຕັ້ງທັບຢູ່ເມືອງໜອງຫານນັ້ນ ຄັນໄດ້ຊາບວ່າ ພຣະເຈົ້າອະນຸສະເດັດໜີໄປແລ້ວ ແລະກອງທັບໄທເຂົ້າຍຶດວຽງຈັນໄດ້ ກໍຟ້າວພາທະຫານຂຶ້ນມາຫາແມ່ທັບໃຫຍ່ຂອງໄທເມືອງພັນພ້າວ ແມ່ທັບໄທບັງຄັບໃຫ້ເຈົ້າອຸປຣາດຕິດສະ ຖືນ້ຳພຣະພິພັດສັດຈາ ແລ້ວກໍໃຫ້ໄປຫາກວາດຕ້ອນເອົາຄອບຄົວລາວມາໂຮມໄວ້.

ສ່ວນກອງທັບຫົວເມືອງຝ່າຍເໜືອທີ່ຍົກມາຊ່ອຍໄທ ຄື: ເມືອງຫລວງພຣະບາງ ເມືອງນ່ານ ເມືອງແພ່ ເມືອງຊຽງໃໝ່ ແລະ ເມືອງລຳປາງ ເຊິ່ງມີຈຳນວນພົນທັງໝົດເຖິງ ໘໐.໐໐໐ ຄົນ ນັ້ນ ກໍໄດ້ຍົກມາໂຮມກັນຢູ່ເມືອງພັນພ້າວ.

---

ຣາຍງານແມ່ທັບໃຫຍ່ຂອງໄທ

ເຣື່ອງ

## ຕີນະຄອນວຽງຈັນ

ກົມພຣະຣາຊວັງບໍວອນສະຖານມົງຄົນແມ່ທັບໃຫຍ່ຂອງໄທ ເມື່ອໄດ້ນະຄອນວຽງຈັນຄັ້ງນີ້ແລ້ວ ຈຶ່ງຂຽນຣາຍງານທູນພຣະເຈົ້າແຜ່ນດິນວ່າ:

"ຣາຊການເຊິ່ງຂຶ້ນມາຕີວຽງຈັນຄັ້ງນີ້ ຄັນມາຖິງໄດ້ເມືອງວຽງຈັນແລ້ວ ພິເຄຣາະດູການທີ່ເປັນທີ່ທາງເຊິ່ງມັນຈະຮັບຮອງກຳລັງໄພ່ພົລແລະຈັດແຈງບ້ານເມືອງໄວ້ ເສັຽປຣຽບມັນມາກ ມັກໄດ້ປຣຽບມັນຢູ່ ໘ ຢ່າງ ແຕ່ຄົນເຊິ່ງຈະທຳໃຫ້ໄດ້ໃຈມັນນ້ອຍຕົວຢ່າງນຶ່ງກັບ ມັນໄມ່ໄປເຜົາສະບຽງຣາຍທາງເສັຽຢ່າງນຶ່ງ ເມື່ອນາຍທັບນາຍກອງທະແກ້ວ ທະຫານຝ່າຍເຮົາເລົ່າ ກໍໄດ້ທຳການສລອງພຣະເດຊພຣະຄຸນຢູ່ແລ້ວ.

ແຕ່ທະວ່າ ຫາໄດ້ດ້ວຍຝີມືທະແກ້ວທະຫານໄມ່ ໄດ້ດ້ວຍພຣະບາຣະມີສົມເດັດພຣະເຈົ້າຢູ່ຫົວ ຖ້າຣາຊການຮັບໄວ້ທຳຕໍ່ປີໜ້າແລ້ວຈະລຳບາກຍາກຍິ່ງນັກ.

ຝ່າຍທັບພູງຄຳ ໔ ຫົວເມືອງ ແລະ ຫົວເມືອງຫລວງພຣະບາງນັ້ນ ຖ້າທັບຫລວງໄມ່ໄດ້ວຽງຈັນ ກໍຫາມີຜູ້ໃດຖຶງເມືອງວຽງຈັນໄມ່ ແຕ່ຈະຄອຍເກັບຄອບຄົວຊາວມາຢູ່ຣິມເຂດແດນ ຄອຍທີ່ໄຫວພົບເປັນເງື່ອນ ແຕ່ບັດນີ້ໃຊ້ສອຍໄດ້ເປັນປົກຕິ ຕ້ອງຊູບາງປລອບບາງ ແຕ່ຍັງດູນ້ຳໃຈທັງ ໖ ຫົວເມືອງຫລວງພຣະບາງ ອ່ອນນັກເມືອງຊຽງໃຫມ່ ລຳພູນ ສອງເມືອງນີ້ ກໍສຸດເມືອງລະຄອນ ເມືອງແພ່ນັ້ນ ຕາມທັມນຽມ ແຕ່ເມືອງນ່ານນັ້ນການເດີນໄຫວ້ຢູ່ ພຣະຍາລະຄອນຄົນນີ້ ອັທຍາໄສມາກ ສົມຄວນທີ່ຈະໂປຣດເກລ້າໂປຣດກະຫມ່ອມຊຸບລ້ຽງ ເຫັນເປັນຣາຊການໄດ້ຍືດຍາວ ແລະຈົດຫມາຍຂໍຣາຊການດຳຣິ ຈຶ່ງໂປຣດເກລ້າໂປຣດກະຫມ່ອມໃຫ້ພຣະຍາວາຣິຊະຍະວາຣີ ຂຶ້ນມານະຄາຍນ້ອງສອງກອນນັ້ນ ຈະໄດ້ຢ່າງພຣະຣາຊດຳຣິບ້າງຈະມີໄດ້ບ້າງ ການຊຶ່ງຈະຈັດບ້ານເມືອງຄັ້ງນີ້ປຽນປົນຍາເຫັນທີ່ເປັນທີ່ຍາກເປັນລົ້ນເກລ້າກລົ້ນກະຫມ່ອມຢູ່ແລ້ວ ຈະຕີເມືອງວຽງຈັນຖວາຍສັກສອງເມືອງ ສາມເມືອງ ເຫັນຈະງ່າຍກວ່າຈັດນີ້ ຈະຕ້ອງຜ່ອນປຣົນໄປຕາມ ຕີບ້ານເມືອງຄອບຄົວ ໄດ້ສັກເທົ່າໃດ ໆ ກໍໄມ່ມີກຳໄຣທຳກັບບ້ານເມືອງໄພ່ພົນຂອງເຮົາເອງທັງນັ້ນ ແຕ່ຈະຄິດຖ່າຍເອົາຄົນລົງໄປຖ່ວງໄວ້ ນະຫົວເມືອງໄກກຸງເທບ ແລະກຸງເທບມະຫານະຄອນ ໃຫ້ຈົງມາກ ຝ່າຍຫົວເມືອງລາວເມືອງຂເມນ ປ່າດົງເລົ່າເຈົ້າເມືອງ ແລະ ບຸດຫລານທ້າວເພັຽຜູ້ໃຫຍ່ທັງປວງ ລົ້ມຕາຍ ຂາດເຊື້ອສາຍເສັຽເປັນອັນມາກ ໄພ່ພົລເມືອງຈະໄດ້ດັ່ງນີ້ບ້າງ ກວ່າດັ່ງບ້າງ ໄມ່ຖຶງດັ່ງບ້າງ ຈະໃຊ້ໄປມາຖຶງກັນຣະຍະທາງໄກລ ກວ່າຈະໄດ້ຮູ້ຣາຊການຊ້ານັກ ເທສກາລກໍເປັນຣະດູຝົນ ຈະເດີນໄປມາຫາກັນກໍໄມ່ໄດ້ໄດ້ ແລ້ວໄດ້ມີຕຣາຈົດຫມາຍບັງຄັບທອດທຸຣະລົງໄປໃຫ້ພຣະຍາຣາຊສຸພາວະດີ ປະຈຳຢູ່ແຣມປີ ຈັດແຈງເມືອງຈຳປາສັກ ແລະເມືອງລາວ ເມືອງຂເມນ ປ່າດົງ ທາງເມືອງຫລົ່ມສັກ ເມືອງຫລົ່ມເລີຍເລົ່າ ຈະໃຫ້ພຣະຍາເພັຊພິໄຊ ພຣະຍາສົມບັດທິບາລເປັນຜູ້ໄປຈັດ ຈະໃຫ້ກລັບໄປໃນຣະດູຝົນ ຄວາມໄຂ້ມາກແຕ່ເຫັນຈະຫາເປັນໄດ້ໄມ່ ຕໍ່ລົງແລ້ງຈຶ່ງຄ່ອຍຈັດກໍພໍຈະໄດ້ ແລະຣາຊການນະເມືອງວຽງຈັນ ເມື່ອອ້າຍອະນຸຫນີຈາກເມືອງວຽງຈັນ ວັນດຽວກັນກັບກອງຫນ້າຕີຄ້າຍບ້ານສົ້ມປ່ອຍແຕກ ກວ່າກອງທັບຈະຂຶ້ນໄປຖຶງເມືອງວຽງຈັນ ຣະຍະທາງຖຶງ ໔ ວັນ ຫນີທາງໄດ້ຖນັດ ໄດ້ເມືອງວຽງຈັນແຕ່ເປົ່ອກເມືອງ ຄອບຄົວກໍອົບພະຍົບໄປຈົນສິ້ນ.

ບັດນີ້ ຄອບຄົວກໍຍັງປະປົນກັນຢູ່ກັບຄົວເມືອງນະຄອນຣາຊສີມ ເມືອງສະຣະບຸຣີ ເມືອງຫລົ່ມສັກ ເມືອງລາວ ເມືອງຂເມນຝ່າຍຕາເວັນອອກ ການຊຶ່ງຈະທຳໃຫ້ແລ້ວໂດຍເຮົວຫາໄດ້ໄມ່ ຖ້າກອງທັບກຣຽໄປຕາມຄອບຄົວນ້ອຍກວ່າ ກໍຕໍ່ສູ້ ຖ້າໄປມາກ ຫນີເສັຽບ້າງ ຄົວຊຶ່ງນາຍທັບນາຍກອງໄດ້ມາ ໘໐໐-໙໐໐ ຄົນ ຈະເລືອກເອົາສະກັນແຕ່ສັກ ໖ ຄົນ ໑໐ ຄົນ ກໍໄມ່ໃຄ່ຈະໄດ້ ຖ້າພູງດຳໄປເກັ້ຽກອມ ຖຶງໄປນ້ອຍໄດ້ຄອບຄົວມາມາກ ດ້ວຍເປັນລາວເຫມືອນກັນ ຄົວຫາສູ້ຮົບໄມ່ ໄດ້ສະກັນກໍມາກ ຄົນຈະຄິດໃຫ້ຕັ້ງເມືອງວຽງຈັນໄວ້ເກັ້ຽກອມ ກໍຫາມີຜູ້ໃດຢູ່ຮັກສາໄມ່ ຈະໃຫ້ແຕ່ກຳລັງເມືອງຫລວງພຣະບາງຢູ່ຮັກສາແລະເກັ້ຽກອມຄົວ ກໍຍັງໄມ່ໄດ້ຕົວອ້າຍອະນຸ ອ້າຍປາສັກ ອ້າຍຣາຊວົງ ອ້າຍສຸດທິສານ ອ້າຍໂຖງ ເຫັນເມືອງຫລວງພຣະບາງຈະທຳເມືອງດຽວຫາໄດ້ໄມ່ ຈຶ່ງໄດ້ທຳລາຍເມືອງວຽງຈັນເສັຽໃຫ້ສິ້ນອາລັຍ ຄອບຄົວເມືອງວຽງຈັນກໍຫລົບ

ໜີໄປທາງເມືອງລະຄອນ ເມືອງຊຽງໃໝ່ ເມືອງລຳພູນ ເມືອງແພ່ ເມືອງນ່ານ ເມືອງຫລວງພຣະບາງ ເປັນອັນມາກ ໄປຖືງເມືອງແລ້ວກໍມີມາກ ຄັນຈະຊຳຣະເອົາຄອບຄົວຄືນ ກໍຈະຕ້ອງກົດຂີ່ກັນຖືງໜັກຈຶ່ງຈະໄດ້ ຝ່າຍຫົວເມືອງເລົ່າກໍຈະຊ້ຳຊອກເສັຽໃຈ ແຕ່ຄິດດູເຫັນວ່າ ປະມານຄົນເມືອງວຽງຈັນ ແລະ ເມືອງຂຶ້ນກັບເມືອງວຽງຈັນສະກົນປະມານ ໔໐໐໐໐ ຄົນເສດ ຖ້າບ້ານເມືອງເປັນປົກຕິ ຈະເກນທັບລົງໄປກຣຸງຈະໄດ້ແຕ່ພຽງ ໙໐໐໐-໘໐໐໐ ຄົນເສດ ກຳລັງກອງທັບໄທຈະທຳເອົາຄົວ ແລະ ສະກົນໃຫ້ໄດ້ ໑໐,໐໐໐ ຄົນ ຈົນເດືອນ ໔ ກໍໄມ່ສຳເຣັດ ຖືງວ່າຈະທຳໄດ້ໃນລະຫວ່າງນີ້ ເມືອງນະຄອນຣາຊສີມາກໍຈະຍັບມາກ ແລະ ອັດດ້ວຍສະບຽງອາຫານ ທັງມິໄດ້ທຳໄຮ່ທຳນາ ຈະເດີນຄົວລົງໄປໃຫ້ສົ້ນໃນຣະດູຝົນກໍໄມ່ໄດ້ ຈະຢູ່ແຮມປີຈົນຣະດູແລ້ງ ເຂົ້າຣາຍທາງກໍຈະໝົດ ແຕ່ກອງທັບຈະຣັບພຣະຣາຊທານລົງໄປກໍໄມ່ພໍ ທັງຫົວເມືອງກໍຈະເຫັນກຳລັງທັບກຣຸງເສັຽສິ້ນ ກອງທັບໄທເຮົາເຫັນໃຈກັນດັ່ງນີ້ ຣັກໄຄ່ຂ້າງເຮົາໜັກໜາ ກັບກູງ ແລະ ຫົວເມືອງກໍປ່ອຍເຈັບອົດຢາກມາຕາມທາງ ແຕ່ຈະຄິດສລອງພຣະເດດພຣະຄຸນເອົາສະກົນເມືອງວຽງຈັນ ລົງໄປໄວ້ກຣຸງເທພພຣະມະຫານະຄອນໃຫ້ໄດ້ ສັກ ໑໐,໐໐໐ ຕິດໄປຂ້າງເມືອງປ່າດົງ ແລະ ທາງເມືອງຫລົ່ມສັກ ເໝືອນນົ້ງຝາກໄວ້ ຈະໄດ້ຄິດເອົາຕ່າງຫາກນອກຈາກ ໑໐,໐໐໐ ຈຶ່ງຕ້ອງຄິດກົດຫົວເມືອງ ໖ ເມືອງ ວ່າມາໄມ່ທັນທັບຫລວງຕີເມືອງວຽງຈັນຕາມກຳໜົດຢູ່ໃນຣະຫວ່າງທັບມີໂທສ ພຣະຍານະຄອນລຳປາງ ພຣະອຸປຣາດ ຊຽງໃໝ່ ອຸປຣາຊລຳພູນ ພຣະຍານ່ານ ຫົວເມືອງແພ່ ອຸປຣາດເມືອງຫລວງພຣະບາງ ຈະທຳເຣື່ອງຣາວສາຣະພາບຖວາຍ ຂໍພຣະຣາຊທານທຳການສລອງພຣະເດດພຣະຄຸນແກ້ຕົວ ຈະຕິດຕາມຕົວ ອ້າຍອະນຸ ອ້າຍປ່າສັກ ອ້າຍຣາຊວົງ ອ້າຍສຸດທິສານ ອ້າຍໂຖງ ກັບບຸດພັນຣະຍາຍາຕິພີ່ນ້ອງທູນເກົ້າທູນກະໝ່ອມ ຖົງມາດວ່າຈະມິໄດ້ຕົວ ກໍໄມ່ໃຫ້ກລັບມາຕັ້ງເປັນສຽນໜາມໃນແຜ່ນດິນຂຶ້ນໄດ້ແລ້ວຈະກວາດຄອບຄົວທູນເກົ້າທູນກະໝ່ອມຖວາຍໃຫ້ໄດ້ສະກົນ ໑໐,໐໐໐ ທັງຄອບຄົວເປັນຄົນ ໔໐,໐໐໐ ຂໍແຕ່ກອງທັບ ຂ້າຣາຊການກຣຸງໄວ້ສັກ ໑,໐໐໐ ຫລື ໕໐໐ ຄົນ ນາຍຢູ່ດ້ວຍສັກ ໔ ນາຍພໍຈະໄດ້ຕັດສິນວ່າກ່າວຢ່າໃຫ້ຫົວເມືອງວິວາດກັນ ແຕ່ທັບພຣະຍານະຄອນລຳປາງ ພຣະຍາອຸປຣາດເມືອງຊຽງໃໝ່ ພຣະຍາອຸປຣາດເມືອງລຳພູນ ພຣະຍານ່ານ ຫົວເມືອງແພ່ອຸປຣາດເມືອງຫລວງພຣະບາງ ນາຍໄພ່ ໑໔໐໑໑ ຄົນຈະຢູ່ແຮມປີ ຈັດຄອບຄົວເມືອງວຽງຈັນກວ່າຈະເສັດ ຂໍໃຫ້ທັບຫລວງສະເດັດກລັບລົງໄປກຣຸງເທພພຣະມະຫານະຄອນ ຈະສົ່ງຄອບຄົວໃຫ້ທັນທັບຫລວງສັກສ່ວນນຶ່ງ ຈະຄ້າງໄວ້ສົ່ງຕໍ່ຣະດູແລ້ງ - ສອງສວນ ແລະຊຶ່ງຈະສະເດັດຍົກທັບຫລວງຂຶ້ນມາທັງພຣະຍາຕີວົງສານຸວົງ ກັບນາຍທັບນາຍກອງທັງປວງ ຕັ້ງໃຈທຳການສລອງພຣະເດດພຣະຄຸນດັ່ງນີ້ຈະຄິດຄ້າງປີມິໄດ້ຄິດແຕ່ເໜື່ອຍຍາກ ແຕ່ຄົວທີ່ນາຍທັບນາຍກອງໄດ້ແລ້ວ ແລະຄົວ ໖ ຫົວເມືອງ ຈະສົ່ງເດີນລົງໄປ ສົ່ງສະບຽງອາຫາຣຕາມຣາຍທາງ ກໍພານຈະຫວຸດຫວິດ ຂໍພຣະຣາຊທານໃຫ້ມີຂ້າຫລວງຂຶ້ນມາຊ່ວຍ ເຈົ້າພຣະຍາພົນເທບຖ່າຍສະບຽງກາຫາຣຂຶ້ນມາຣັບຄົວພຽງເມືອງບົວຊູມໄຊບາດານ ຖ້າຣາຊການຕີອ້າຍພຣະຍາຊຽງສາ ແລະຕີເມືອງສະກົນນະຄອນ ເປັນປະການໃດ ໄວ້ໃຈໄດ້ຄວນທັບຫລວງຈະກລັບໄດ້ ກໍຈະສະເດັດຈາກເມືອງວຽງຈັນ ລົງມາເຝົ້າລະອອງທູລີພຣະບາດ ນະເດືອນ ໙ ກລາງເດືອນ ສະເດັດແຮມຢູ່ນະວຽງຈັນເຫັນການໄກລ

ພຣະເຈົ້ານ້ອງຍາເທີກົມຫມື່ນສຸຣິນທະຣະຣັກ ພຣະເຈົ້ານ້ອງຍາເທີກົມຫມື່ນຣັກສະຣິນມະເຣດ ຢູ່ນະກຣຸງເທັນ ການໃກລ້ ໃຫ້ກຣາບທູນພຣະກະຣຸນາໃຫ້ຊາບໃຕ້ຝ່າລະອອງທຸລີພຣະບາດ ອາການຊຶ່ງທຳຄັ້ງນີ້ຄົງຈະໄມ່ໃຫ້ເສັຍ ຣາຊການ ເມື່ອລົງໄປເຝົ້າລະອອງທຸລີພຣະບາດ ຈຶ່ງຈະກຣາບທູນພຣະກະຣຸນາຂໍຣາຊການໃຫ້ຊາບທຸກປະການ ແລະຣວບຄອບຄົວກັບສິ່ງຂອງຊຶ່ງໄດ້ໃນເມືອງວຽງຈັນ ໃນບອກ ແລະ ທາງວາວມີລົງມາຄັ້ງນີ້ ຈະເອົາເປັນ ແນ່ຍັງມິໄດ້ ເປັນການປະມານ ຍັງໃຫ້ຊຳຣະສືບສາວເກັບຣວບຣວມຕໍ່ໄປອີກຢູ່ ຖາຈະໄດ້ຄອບຄົວ ແລະສິ່ງ ຂອງມາກນ້ອຍເທົ່າໃດ ກໍຈະສົ່ງລົງມາທູນເກລ້າທູນກະຫມ່ອມຖວາຍໃຫ້ສິ້ນເຊີງ ໄມ່ແບ່ງໄດ້ ເປັນຂອງໃນ ພຣະຣາຊວັງຫລວງ ພຣະຣາຊວັງບໍວອນສະຖານມົງຄົນຖ້າສະເດັດລົງມາຖືງກຣຸງເທບພຣະມະຫານະຄອນ ຈຶ່ງຈະກຣາບທູນພຣະກະຣຸນາຂໍຮັບພຣະຣາຊທານບ້າງແລ້ວແຕ່ຈະຊົງ ພຣະກະຣຸນາໂປຣດເກລ້າໂປຣດກະ ຫມ່ອມ.

ອັນນຶ່ງ ຊ້າງຊຶ່ງບັນທຸກດິນດຳ ໃຫ້ນາຍສັກ ມະຫາດເລັກກັບ ຈະຫມື່ນທິພເສນາ ຄຸມລົງມາ ໑໑໐ ຊ້າງນັ້ນ ເປັນຊ້າງໄມ່ສູ້ງາມ ທູນເກລ້າທູນກະຫມ່ອມຖວາຍສົ່ງມາທັງດິນທັງຊ້າງກ່ອນ ໃຫ້ພຣະເຈົ້ານ້ອງຍາ ເທີກົມຫມື່ນຣັກສະຣິນມະເຣດ ຮັບເອົາຊ້າງແລະດິນປືນປີໄວ້ ຄັ້ງນີ້ຈະພາຊ້າງລົງມາທູນເກລ້າທູນກະຫມ່ອມ ຖວາຍໃຊ້ຣາຊການສຳຣັບແຜ່ນດິນໃຫ້ໄດ້ ໘໐໐໐ ຊ້າງ ແຕ່ນານັ້ນຍັງໄດ້ນ້ອຍນັກຈະຫາດີງາມລົງມາທູນເກລ້າ ທູນກະຫມ່ອມຖວາຍຍັງໄມ່ໄດ້ ຍັງຈະຫາຕໍ່ໄປອີກຢູ່ ຈະບອກກຳຫນົດມາກ ແລະ ນ້ອຍຍັງມິໄດ້ ປີນໃຫຽເມືອ ວຽງຈັນຈະບັນທຸກຊ້າງລົງໄປກໍມິໄດ້ ຈະຊຸກເປັນຣະດູຝົນ ຣຸບຣາງຈະຫາງາມກໍໄມ່ໄດ້ຄາຍກັບທຽນພັນສາ ຂໍ ພຣະຣາຊທານເອົາທອງລົງໄປຈະຫລໍໃຊ້ທູນເກລ້າທູນກະຫມ່ອມຖວາຍນະກຣຸງເທພມະຫານະຄອນໃຫມ່, ກຳ ຫນົດຈະເດີນຄົວຕັ້ງແຕ່ ນາຍສັກ ນາຍເວນມະຫາດເລັກເດີນລົງມາແລ້ວ ຈະຈັດໃຫ້ເດີນເນືອງ ໆ ກັນລົງ ມາ ແລະນາຍທັບນາຍກອງຂອງເຮົາຄັ້ງນີ້ທີ່ດີກໍມີບ້າງແຕ່ນ້ອຍ ແມ່ນຈະເອົາໂທດຕາມອາດຍາສຶກກໍເປືອງນັກ ແລະໄດ້ຫມາຍຣາຊການເຫລັ້ມນີ້ໃຫ້ພຣະເຈົ້ານ້ອງຍາເທີທັງສອງພຣະອົງ ທູນເກລ້າທູນກະຫມ່ອມຖວາຍທີ່ ລັບໃຫ້ຊົງຊາບໃຕ້ຝ່າລະອອງທຸລີພຣະບາດ ຄວນມິຄວນຂໍພຣະຣາຊທານໂທດ.

ອະນຶ່ງພຣະພຸທຣູບສຳຣັບເມືອງວຽງຈັນ ພຣະບາງຫາຍໄປວ່າຂ້າພຣະພາເອົາໄປຝັງເສັຽ ສືບຍັງ ຫາໄດ້ໄມ່ ໄດ້ແຕ່ພຣະເສີມ ພຣະໃສ ພຣະສຸກ ພຣະແຊກຄຳ ພຣະແກ່ນຈັນ ພຣະສັງນ້ຳ ພຣະເງິນຫລໍ່ ພຣະ ເງິນບຸ ຣວມ ໗ ພຣະອົງ ແຕ່ຈະເອົາກຣຸງເທບພຣະມະຫານະຄອນໄດ້ແຕ່ພຣະແຊກຄຳອົງນຶ່ງ ໄດ້ພຣະບໍຣິມ ສາຣີຣິກະທາດບັນຈຸພຣະແຊກຄຳ ໑໐໐ ພຣະອົງ ກັບໄດ້ພຣະເຈົ້າສົມພົນສົມໍຫນ້າຕັກ ໘໐ ນິ້ວພຣະອົງນຶ່ງ ພຣະນາກສວາດ ຫນ້າຕັກ ໑໐ ນິ້ວ ພຣະອົງນຶ່ງຫນັກ ໑໗ ຊັ່ງ ພຣະນາກສວາດ ຫນ້າຕັກ ໖ ນິ້ວພຣະອົງນຶ່ງ ຫນັກ ໓ ຊັ່ງ ໑໐ ຕຳລຶງ ພຣະນາຄປົກສີລາກະບີຫນ້າຕັກ ໕ ນິ້ວພຣະອົງນຶ່ງ ແຕ່ພຣະນາກສວາດ ໘ ອົງນັ້ນ ເທັນຈະແກະເອົາດີໄດ້ ຈະຕ້ອງແກ້ມາກຢູ່ ແລະພຣະພຸທຣູບຈະຈັດສົ່ງໄປກຣຸງເທບພຣະມະຫານະຄອນໄມ່ໄດ້ ນັ້ນ ໄດ້ໃຫ້ກໍພຣະຈະດີ ມະຄາຍຫລວງເມືອງພົນພາວຫນືອວັດຊຽງສົມເດັດພຣະພຸດທິເຈົ້າຫລວງ ໃນພຣະບໍ ຣິມມະໂກດ ຈຶ່ງສ້າງໄວ້ ເມື່ອສະເດັດອົບມາຕີວຽງຈັນຄັ້ງກ່ອນ ຖານກວາງ ໕ ວາ ສູງ ໖ ວາ ໘ ສອກ

ຈະບັນຈຸພຣະພຸທຮູບໄວ້ເປັນທີ່ສັກກາຣະບູຊາອີກຈຶ່ງຈະກໍ່ພຣະເຈດີນັ້ນ ເກນໄພ່ພົນໃນກອງທັບສເມີກັນຄົນລະ ໔ ແຜ່ນ ແລ້ວຈະເອົາຣຶກພຣະນາມວ່າ "ພຣະເຈດີປຣາບວຽງ" ແລະຄວາມຊົ່ວອາຍອະນຸ ໄວ້ໃນແຜ່ນສີລາ ໃຫ້ປຣາກົດຢູ່ຊົ່ວຟ້າ ແລະ ດິນຢ່າໃຫ້ຫົວເມືອງທັງປວງດູຢັ່ງຢ່າງຕໍ່ໄປ.

ຄັນຣາຍງານລົງມາແລ້ວ ກໍໃຫ້ທຳພຣະເຈດີ ແລ້ວຈຶ່ງເຊີນພຣະເສີມ ຊຶ່ງຢູ່ວັດຍອດເຂົາແກ້ວ ມາບັນຈຸໄວ້ໃນພຣະເຈດີປຣາບວຽງນັ້ນ.

## ກອງທັບພຣະຍາຊຽງສາຕໍ່ສູ້

ໃນຄັ້ງນັ້ນ ຝ່າຍພຣະຍາຊຽງສາ ທີ່ຕັ້ງກອງທັບຢູ່ບ້ານໂພນຊຽງຫວາງ ຍັງບໍ່ທັນໄດ້ເຂົ້າອ່ອນຍອມຫາໄທ ເຈົ້າແມ່ທັບໄທ ຈຶ່ງແຕ່ງໃຫ້ພຣະຍາໄກໂກສາ ຍົກກຳລັງລົງໄປຕີທັບພຣະຍາຊຽງສາ ພຣະຍາຊຽງສາໄດ້ຕໍ່ສູ້ ແລະ ຕີກອງທັບໄທແຕກກະຈາຍ ທະຫານໄທລົ້ມຕາຍລົງເປັນອັນມາກ ແລະຕົວພຣະຍາໄກໂກສາຫລົບຫນີໄດ້ ແລ້ວກັບມາຣາຍງານຕໍ່ແມ່ທັບໃຫຍ່ ແມ່ທັບໃຫຍ່ຈຶ່ງຖອດພຣະຍາໄກໂກສາອອກຈາກຕຳແຫນ່ງ ແລະລົງໂທດຂ້ຽນແລ້ວເອົາຂັງຄຸກໄວ້ ເຈົ້າແມ່ທັບໃຫຍ່ຂອງໄທຈຶ່ງແຕ່ງໃຫ້ພຣະຍາເພັດພິໄຊ ພຣະຍາກະເສດ ພຣະຍາອັຄຄາເຣືອງເດດ ເປັນແມ່ທັບຄຸມທະຫານໄປຕີຄ້າຍພຣະຍາຊຽງສາ ຝ່າຍພຣະຍາກອງຄຳແມ່ທັບລາວ ທີ່ຕັ້ງຄ້າຍຢູ່ເມືອງເພັງ (ອຳເພີເພັງ ຈັງຫວັດອຸດອນ) ໄດ້ຊາບຈຶ່ງຍົກມາຊ່ອຍພຣະຍາຊຽງສາ ແລະຕີຂນາບເຂົ້າໄປທາງດ້ານຫລັງ ພວກທະຫານໄທລົ້ມຕາຍລົງເປັນອັນມາກ ຈວນຈະແຕກຢູ່ແລ້ວ ພໍດີພຣະຍາກອງຄຳຖືກປືນຂາເສິກຕາຍ ພວກທະຫານລາວກອງທັບຂອງພຣະຍາກອງຄຳເລີຍຖອຍພຣະຍາຊຽງສາຈຶ່ງຍົກຫນີໄປຕັ້ງຄ້າຍຢູ່ຫ້ວຍຫລວງ ແຂວງເມືອງໂພນພິໄສ ພວກທະຫານໄທກໍຍົກນຳໄປ ແລະ ໄດ້ຕໍ່ສູ້ຣົບກັນເປັນສາມາດ ນາຍທະຫານຂຸນຜູ້ໃຫຍ່ ຊື່ ອິນທະເດດຖືກປືນຕາຍ ຝ່າຍພຣະຍາຊຽງສາ ເຫັນວ່າກຳລັງພົນຂອງຕົນມີຫນ້ອຍ ຈຶ່ງຖອຍລົງໄປຕາມຣິມແມ່ນ້ຳຂອງ.

## ເຈົ້າຮຸຍເມືອງຈຳປາສັກເຂົ້າຫາໄທ

ຝ່າຍພຣະຍາຣາຊສຸພາວະດີ ແມ່ທັບໄທທີ່ຍົກມາຕັ້ງຄ້າຍຢູ່ເມືອງຍະໂສທອນນັ້ນ ກຳລັງຈະຍົກໄປຕີເມືອງຈຳປາສັກ ເວລານັ້ນ ເຈົ້າຣາຊບຸຕໂຍ້ ເຈົ້ານະຄອນຈຳປາສັກ ໄດ້ຍົກທັບໄປຕັ້ງຄ້າຍຢູ່ເມືອງສີສະເກດ ພໍໄດ້ຊາບວ່າກອງທັບໄດ້ຍົກມາເຖິງເມືອງຍະໂສທອນແລ້ວ ກໍຖອຍຄືນມາຕັ້ງຮັບຢູ່ເມືອງອຸບົນ ເຈົ້າຣາຊບຸຕໂຍ້ຈຶ່ງແຕ່ງໃຫ້ ເຈົ້າປານ ກັບ ເຈົ້າສຸວັນ ຄຸມທະຫານກອງນຶ່ງມາຕັ້ງຄ້າຍຮັບຢູ່ທາງຕາເວັນອອກເມືອງຍະໂສທອນ ເຈົ້າປານຕັ້ງຄ້າຍຍັງບໍ່ແລ້ວ ກໍຖືກກອງທັບໄທເຂົ້າຕີແຕກ ແລ້ວກອງທັບໄທກໍຍົກນຳໄປເຖິງເມືອງອຸບົນ ພໍດີພວກຊາວເມືອງອຸບົນກໍ່ການວຸ້ນວາຍຂຶ້ນ ເຈົ້າຣາຊບຸຕເຫັນວ່າຈະປ້ອງກັນເມືອງອຸບົນໄວ້ບໍ່ໄດ້ ຈຶ່ງປະຄ້າຍເມືອງອຸບົນຫນີໄປເມືອງຈຳປາສັກ.

ຝ່າຍເຈົ້າຣຸຍ (ບຸດເຈົ້າໂອ ຫລານເຈົ້າທັມມະເທໂວ) ທີ່ຢູ່ເມືອງຈຳປາສັກ ຄັນໄດ້ຊາບຂ່າວກອງທັບໄທຕີຄ່າຍເມືອງອຸບົນແຕກແລ້ວ ກໍ່ບົວະເຍົ້າຣາສດອນໃນເມືອງຈຳປາສັກໃຫ້ກໍ່ການຈະລາຈົນເອົາໄຟເຜົາເມືອງຂຶ້ນ ແລະຈັດພັກພວກຂອງຕົນໃຫ້ຮັກສາປັກຕູເມືອງໄວ້ ເຈົ້າຣາຊບຸດແລະເຈົ້າປານ ເຈົ້າສູວັນ ຈະເຂົ້າໄປໃນເມືອງບໍ່ໄດ້ ຈຶ່ງພາທະຫານຄົນສນິດປະມານ ໔໐ ຄົນ ຂີ່ເຮືອຂ້າມນ້ຳຂອງໄປຢູ່ທາງຕາເວັນອອກ ເຈົ້າຣຸຍກໍໄຂປັກຕູເມືອງ ຮັບເອົາກອງທະຫານໄທເຂົ້າໄປ ແລ້ວເຈົ້າຣຸຍກໍແຕ່ງກອງທະຫານນຳຈັບເອົາເຈົ້າຣາຊບຸດ ເຈົ້າປານແລະເຈົ້າສູວັນ ມາໃຫ້ແກ່ພຣະຍາຣາຊສຸພາວະດີ ແມ່ທັບໄທ ແລ້ວແມ່ທັບໄທຈຶ່ງຍົກຂຶ້ນມາເຖິງເມືອງນະຄອນພະນົມ.

## ແມ່ທັບແກວມີຫນັງສືມາເຖິງພຣະຍາຣາຊສຸພາວະດີ

ເວລານັ້ນແມ່ທັບຫນ້າຂອງແກວ ຊື່ ສັຕຄຸນຕຽນຍິນ ໄດ້ມີຫນັງສືສະບັບນຶ່ງມາເຖິງພຣະຍາຣາຊສຸພາວະດີ ແມ່ທັບໄທທີ່ຕັ້ງຢູ່ເມືອງນະຄອນພະນົມ ໃຈຄວາມໃນຫນັງສືນັ້ນວ່າ ເມືອງວຽງຈັນກັບເມືອງກຸງເທບມະຫານະຄອນ ເປັນເມືອງໄມຕີສນິດ ປຽບດັ່ງຮົ່ມສີບກັບແຂວ ບໍ່ມີເຫດອັນໃດ ເຫດໃດຈຶ່ງຍົກທັບຂຶ້ນມາທຳລາຍເຜົາເມືອງວຽງຈັນເສັຽ ໃຫ້ໄພ່ບ້ານພົລເມືອງແຕກຕື່ນໄປ ແລະເມືອງວຽງຈັນກໍເປັນແດນກຸງວຽດນາມ ບັດນີ້ແມ່ທັບໃຫຍ່ (ຊື່ອົງກິນເຫລືອກ) ໃຊ້ໃຫ້ຂ້າພະເຈົ້າຄຸມກອງທັບຍົກມາ ໘໐,໐໐໐ ຄົນເສດ ມາຕັ້ງຢູ່ ເມືອງຕາມດອງ ຈຶ່ງມີຫນັງສືມາໃຫ້ແຈ້ງ ໃຫ້ທ່ານຍົກກອງທັບໄປຢູ່ແດນຂອງທ່ານ ແລະທ່ານກວາດເອົາຄອບຄົວແດນແກວໄປທີ່ໃດ ຂໍໃຫ້ສົ່ງຄືນມາແດນແກວ ທາງໄມຕີຈະໄດ້ຮອບຄອບຍືນຍາວສເນີໄປ ຖ້າທ່ານບໍ່ຟັງ ຂ້າພະເຈົ້າກໍບໍ່ລະ ຖ້າອົງກິນເຫລືອກ ແມ່ທັບໃຫຍ່ຍົກມາເຖິງແລ້ວ ກໍຈະບໍ່ຟັງກັນ ແຕ່ຫຽາຕົນນຶ່ງກໍຈະບໍ່ໃຫ້ເຫລືອໄວ້ ບອກມາດັ່ງນີ້ເປັນຄວາມສັດຈິງ ໃຫ້ທຳຕາມຄຳສັ່ງຂອງຂ້າພະເຈົ້າ.

## ພຣະຍາຊຽງສາເຂົ້າຫາພຣະຍາຣາຊສຸພາວະດີ

ພຣະຍາຣາຊສຸພາວະດີ ແມ່ທັບໄທ ໄດ້ຮັບຫນັງສືແກວນັ້ນແລ້ວ ກໍບໍ່ຕອບ ຟ້າວຍົກທັບຂຶ້ນມາເມືອງພັນພ້າວ ມາເຖິງກາງທາງໄດ້ພົບກອງທັບຂອງພຣະຍາຊຽງສາ ພຣະຍາຊຽງສາໄດ້ເຄີຍຮູ້ຈັກກັນມາແຕ່ກ່ອນ ທັງໄດ້ຊາບວ່າກອງທັບຝ່າຍຕົນແຕກຫມົດທຸກດ້ານແລ້ວ ຈຶ່ງພາທະຫານເຂົ້າໄປອ່ອນຍອມພຣະຍາຣາຊສຸພາວະດີ ພຣະຍາຣາຊສຸພາວະດີຈຶ່ງພາຂຶ້ນມາຫາແມ່ທັບໃຫຍ່ຢູ່ເມືອງພັນພ້າວ ແມ່ທັບໃຫຍ່ຂອງໄທ ກໍໃຫ້ພຣະຍາຊຽງສາທຳຣາຊການຢູ່ໃນກອງທັບ ຂອງພຣະຍາຣາຊສຸພາວະດີຕໍ່ໄປ ສ່ວນເຈົ້າຣາຊບຸດໂຍ້ ເຈົ້າປານ ແລະເຈົ້າສູວັນ ນັ້ນ ແມ່ທັບໄທໃຫ້ທະຫານຄຸມຕົວລົງໄປກຸງເທບກ່ອນ ແຕ່ພຣະຍາຣາຊສຸພາວະດີກັບພຣະຍາຊຽງສາ ໃຫ້ຢູ່ກວາດເອົາຄອບຄົວລາວ ແລ້ວກົມພຣະຣາຊວັງບໍວອນແມ່ທັບໃຫຍ່ຂອງໄທ ກໍເລີກທັບກັບຄືນເມືອໃນເດືອນ ໑໒ (ຊຸບເຍ ໑໑໘໗).



ພຣະເຈົ້າອະນຸ

ພຣະຍາຣາຊສຸພາວະດີກວາດເອົາຄອບຄົວລາວໄດ້ຫລາຍແລ້ວ ກໍແບ່ງໄວ້ໃຫ້ເປັນພົລເມືອງວຽງຈັນແຕ່ພຽງເລັກນ້ອຍ ແຕ່ລ້ວນເປັນຕະກູນທີ່ທຸກຍາກ ແລະໃຫ້ເພັຽເມືອງຈັນຢູ່ຮັກສາເມືອງນອກກວ່ານັ້ນກວາດເອົາໆໝົດພ້ອມທັງພຣະບາງ ແລະພາເອົາເຈົ້າອຸປຮາດຕິດສະລຶງໄປນຳ ພໍໄປເຖິງເມືອງຍະໂສທອນ ທ້າວພຸດຣາຊວົງເມືອງຍະໂສທອນ ຈຶ່ງໄປຟ້ອງຕໍ່ພຣະຍາຣາຊສຸພາວະດີວ່າ ທ້າວຄຳ ນ້ອງຊາຍອຸປຮາດເມືອງຍະໂສທອນ ອຳຍັງຄອບຄົວຊາວເມືອງວຽງຈັນໄວ້ ພຣະຍາຣາຊສຸພາວະດີຈຶ່ງໃຫ້ເອົາທ້າວຄຳໄປປະຫານຊີວິດ ອຸປຮາດເມືອງຍະໂສທອນຈຶ່ງຮ້ອງຂໍວ່າ ທ້າວຄຳ ເປັນນ້ອງຊາຍຂອງຕົນ ແລະ ເຄີຍມີຄວາມຊອບຢູ່ ຖ້າຈະປະຫານທ້າວຄຳ ກໍຂໍໃຫ້ປະຫານຕົນນຳ ພຣະຍາຣາຊສຸພາວະດີໄດ້ຍິນດັ່ງນັ້ນ ຈຶ່ງໃຫ້ຈັບເອົາຄອບຄົວລູກເມັຽໂຄດເຊື້ອຂອງທ້າວຄຳ ແລະ ອຸປຮາດທັງໝົດ ທັງໃຫຍ່ນ້ອຍໄດ້ ໑໐໐ ຄົນເສດ ໃສ່ຄອກຂັງໄວ້ຂ້າງແມ່ນ້ຳຊີ ໃຫ້ເອົາເຟືອງຖົມແລ້ວເອົາໄຟຈູດທັງເປັນ.

ຄັນເຖິງເດືອນ ໓ (ເຟວຣິເຍ ໑໘໒໗) ພຣະຍາຣາຊສຸພາວະດີ ລົງໄປເຖິງກຸງເທບ ພຣະເຈົ້າແຜ່ນດິນໄທຈຶ່ງຕັດວ່າ "ຕົວເຈົ້າອະນຸຍັງຈັບບໍ່ໄດ້ ຈະກັບມາຕັ້ງບ້ານເມືອງອີກປະການໃດ ກໍຍັງບໍ່ແຈ້ງ ເມືອງວຽງຈັນນີ້ບໍ່ຄວນເອົາໄວ້ເປັນບ້ານເປັນເມືອງຕໍ່ໄປ ໃຫ້ກັບຄືນໄປມ້າງເພທຳລາຍເສັຽໃຫ້ກ້ຽງ ຢ່າໃຫ້ຕັ້ງເປັນເມືອງໄດ້ ສັ່ງພຣະຍາຣາຊສຸພາວະດີດັ່ງນີ້ແລ້ວ ຈຶ່ງໃຫ້ອຸປຮາດຕິດສະຢູ່ແທນໂຮງຂອງເຈົ້າອະນຸທີ່ບາງຍີ່ຂັນ ສ່ວນພຣະບາງນັ້ນ ພຣະຍາຣາຊສຸພາວະດີ ເຊີນໄປໄວ້ວັດຈັກກະວັດ ແລະຄອບຄົວລາວວຽງຈັນ ທີ່ກວາດມານັ້ນ ສົ່ງໄປໄວ້ເມືອງລົບບູຣີ ເມືອງສະຣະບູຣີ ເມືອງສຸພັນບູຣີ ແລະເມືອງນະຄອນໄຊສີ ສ່ວນຄົວພວກເມືອງນະຄອນພະນົມເອົາໄປໄວ້ເມືອງພະນັດນິຄົມ.

## ພຣະເຈົ້າອະນຸເຂົ້າຍຶດວຽງຈັນອີກ

ຝ່າຍພຣະຍາຣາຊສຸພາວະດີ ເມື່ອໄດ້ຮັບສັ່ງຂອງພຣະເຈົ້າແຜ່ນດິນວ່າ ໃຫ້ຂຶ້ນມາມ້າງເພເມືອງວຽງຈັນອີກ ຄັນເຖິງເດືອນ ໘ (ຊຸຍເຍ ໑໘໒໘) ກໍຍົກທັບຂຶ້ນມາທາງເມືອງໜອງບົວລຸມພູ ແລ້ວແຕ່ງໃຫ້ພຣະຍາຣາດຣອງເມືອງ ໑ ພຣະຍາພິໄຊສົງຄາມ ໑ ພຣະຍາທຸກຂະຣາດ ເມືອງນະຄອນຣາຊສີມາ ໑ ຫລວງສຸເຣນທະຣະວິຊິດ ໑ ຄຸມທະຫານ ໔໐໐ ຄົນ ຍົກມາຕັ້ງຢູ່ເມືອງພັນພ້າວກ່ອນ ແລ້ວພຣະຍາຣອງເມືອງ ຈຶ່ງໃຫ້ພຣະຍາພິໄຊສົງຄາມ ພຣະຍາທຸກຂະຣາດ ກັບ ຫລວງສຸເຣນທະຣະວິຊິດ ຄຸມບ່າວ ໓໐໐ ຄົນ ຂ້າມມາວຽງຈັນ ແລະ ໄດ້ຕັ້ງຢູ່ວັດກາງ.

ຄັນເຖິງວັນທີ ໒໗ ຊຸຍເຍ ໑໘໒໘ (ເດືອນ ໘ ແຮມຄ່ຳ ໑) ເຈົ້າຣາຊວົງໄດ້ມີໜັງສືມາເຖິງເມືອງວຽງຈັນ ແລະ ເມືອງຊາຍວ່າ ພຣະເຈົ້າກຸງວຽດນາມໃຫ້ພວກແກວ ພາພຣະເຈົ້າອະນຸກັບຄືນມາວຽງຈັນ ພຣະຍາເມືອງຈັນ ກັບພຣະຍາເມືອງຊາຍ ຈຶ່ງສົ່ງໜັງສືນັ້ນໃຫ້ພຣະຍາພິໄຊສົງຄາມ ພຣະຍາພິໄຊສົງຄາມຈຶ່ງສົ່ງໜັງສືນັ້ນໃຫ້ພຣະຍາຣອງເມືອງແລ້ວພຣະຍາຣອງເມືອງຈຶ່ງສົ່ງໜັງສືນັ້ນໃຫ້ພຣະຍາຣາຊສຸພາວະ

ດີ ພຣະຍາຣາຊສຸພາວະດີ ຄັນໄດ້ຊາບດັ່ງນັ້ນ ກໍຟ້າວຍົກທັບມາເຖິງເມືອງພັນພ້າວໃນວັນເດືອນ ໘ ແຮມ ໔ ຄ່ຳ (ວັນທີ ໓໑ ຊຸຍເຍ ໑໘໒໘) ເວລາເຊົ້າ ເຖິງວັນແຮມ ໕ ຄ່ຳ (ວັນທີ ໑ ອາຊຸດ) ພຣະເຈົ້າອະນຸ ກໍມາເຖິງວຽງຈັນ ມີທະຫານລາວຕິດຕາມມານຳປະມານ ໑໐໐໐ ຄົນ ແກວປະມານ ໘໐ ຄົນນາຍພາສາແກວ ໒ ຄົນ ຈຶ່ງໄປບອກພຣະຍາພິໄຊສົງຄາມວ່າ ມື້ອື່ນເຊົ້າຈະພາເຈົ້າອະນຸມາຫາ ໃຫ້ເວົ້າຈາກັນໂດຍດີ ຄັນຕື່ນເຊົ້າ (ວັນທີ ໒ ອາຊຸດ) ແກວກໍພາເຈົ້າອະນຸໄປຫາພຣະຍາພິໄຊສົງຄາມ ແລ້ວນາຍພາສາແກວເວົ້າວ່າ ພຣະເຈົ້າອະນຸທຳຄວາມຜິດໜີໄປຫາແກວ ແກວເໝືອນມານດາ ກຸງເທພມະຫານະຄອນເໝືອນບິດາ ບິດາຄຽດໃຫ້ບຸດແລ້ວມານດາຕ້ອງພາມາຂໍໂທດ ທ່ານແມ່ທັບມາເຖິງແລ້ວ ພຣະເຈົ້າອະນຸ ແລະ ເຈົ້າຣາຊວົງຈະມາຫາທ່ານແມ່ທັບໃຫ້ພາລົງໄປກຣຸງເທພ ພຣະເຈົ້າວຽດນາມໄດ້ມີພຣະຣາຊສານໄປຂໍໂທດພຣະເຈົ້າອະນຸທາງເຮືອແລ້ວ ພຣະເຈົ້າອະນຸເຄີຍຂຶ້ນແກ່ກຣຸງເທພຢ່າງໃດ ແກວກໍບໍ່ຂັດຂວາງ ແກວຕ້ອງເອົາທຸຣະດ້ວຍວ່າວຽງຈັນເຄີຍໄປຈິ້ມກອງສາມປີຄັ້ງນຶ່ງ ຄັນເວົ້າກັນຕົກລົງແລ້ວ ພຣະເຈົ້າອະນຸ ແລະ ເຈົ້າຣາຊວົງກໍຄືນມາເຊົາຢູ່ວັດພຣະແກ້ວ.

ຝ່າຍພຣະເຈົ້າອະນຸໄດ້ ຊົງຊາບວ່າ ແມ່ທັບໄທໄດ້ສ້າງຈະດີປຣາບວຽງໄວ້ທີ່ເມືອງພັນພ້າວ ແລະໄດ້ຈາຣຶກການກະທຳຂອງພຣະອົງໄດ້ດ້ວຍ ຈຶ່ງມີຄວາມຄຽດແຄ້ນເປັນອັນມາກ ເພື່ອແກ້ຄວາມຄຽດແຄ້ນນັ້ນໃຫ້ຫາຍ ແລະເພື່ອທຳການຕໍ່ສູ້ເປັນຄັ້ງສຸດທ້າຍ ພຣະອົງຈຶ່ງສັ່ງໃຫ້ທະຫານລາວເຂົ້າລ້ອມຂ້າທະຫານໄທຢູ່ຄ້າຍວັດກາງໃນວັນເດືອນ ໘ ແຮມ ໖ ຄ່ຳນັ້ນເອງ (ວັນທີ ໒ ອາຊຸດ) ພວກທະຫານໄທຈຳນວນ ໓໐໐ ຄົນ ເຫລືອຄືນໄປໄດ້ພຽງ ໔໐ ຄົນເທົ່ານັ້ນ ພວກທີ່ລອບຂ້າມໄປໄດ້ນັ້ນ ຈຶ່ງໄປແຈ້ງຄວາມແກ່ ເຈົ້າພຣະຍາຣາຊສຸພາວະດີ ພຣະຍາຣາຊສຸພາວະດີໄດ້ຊາບດັ່ງນັ້ນຈຶ່ງປຶກສາກັບນາຍທັບນາຍກອງວ່າ ຄັນຈະຖອຍລົງໄປຕັ້ງທັບຕໍ່ສູ້ຢູ່ເມືອງນະຄອນຣາຊສີມາ ກໍເຫັນວ່າໄກໂພດ ຖ້າຈະຕັ້ງຢູ່ເມືອງພັນພ້າວ ກໍເຫັນວ່າ ຈະສູ້ບໍ່ໄດ້ ພຣະຍາຊຽງສາຈຶ່ງວ່າ ຄວນຈະຖອຍໄປຕັ້ງຢູ່ເມືອງຍະໂສທອນ ເມື່ອປຶກສາເຫັນດີພ້ອມກັນແລ້ວ ພຣະຍາຊຽງສາກໍພາເຈົ້າພຣະຍາຣາຊສຸພາວະດີໜີອອກຈາກເມືອງພັນພ້າວໃນຄືນນັ້ນ.

## ພຣະຣາຊສານພຣະເຈົ້າກຸງວຽດນາມ
## ມີມາເຖິງພຣະເຈົ້າແຜ່ນດິນໄທ ເພື່ອຂໍໂທດພຣະເຈົ້າອະນຸ

ພ້ອມກັນກັບເວລາທີ່ພຣະເຈົ້າອະນຸກັບຄືນມາວຽງຈັນນີ້ ພຣະເຈົ້າແຜ່ນດິນວຽດນາມໄດ້ແຕ່ງຣາຊທູດຖືພຣະຣາຊສານ ເຂົ້າມາຖວາຍພຣະເຈົ້າແຜ່ນດິນໄທສະບັບນຶ່ງ ເພື່ອຂໍໂທດໃຫ້ພຣະເຈົ້າອະນຸ ທູດເຂົ້າມາເຖິງກຸງເທພ ເດືອນ ໑໐ ອອກໃໝ່ ໓ ຄ່ຳ (ວັນທີ ໑໑ ເສັບຕອມ) ຂໍ້ຄວາມໃນພຣະຣາຊສານນັ້ນວ່າ:

ພຣະເຈົ້າອະນຸໜີກອງທັບໄທເຂົ້າໄປຢູ່ໃນປະເທດແກວ ແຈ້ງຄວາມແກ່ເຈົ້າເມືອງແງ່ອານວ່າ ກອງທັບໄທຂຶ້ນມາຂັບໄລ່ ໜີຈາກເມືອງ ພຣະເຈົ້າອະນຸບໍ່ຮູ້ວ່າໄດ້ທຳຜິດສິ່ງໃດ ພຣະເຈົ້າກຸງວຽດນາມເຫັນວ່າ

ເຈົ້າອະນຸມີຄວາມທຸກ ພັດພາກຈາກເມືອງໄປຈຶ່ງໃຫ້ອາສັຍຢູ່ເມືອງແງ່ອານໄດ້ ໑ ປີແລ້ວຂໍລາກັບຄືນເມືອເມືອ ຈຶ່ງໄດ້ໃຫ້ເສນາຂ້າຣາຊການແກວພາມາສົ່ງແຕ່ພົ້ນເຂດແດນ ແລະ ໄດ້ສັ່ງເຈົ້າອະນຸວ່າ ຄັນເມືອເຖິງເມືອງແລ້ວໃຫ້ແຕ່ງລູກຫລານເອົາ ເຄື່ອງຣາຊບັນນາການລົງໄປຖວາຍພຣະເຈົ້າກຸງເທບ ຕາມທັມນຽມ ຈະໄດ້ພົ້ນຈາກຄວາມຜິດ ແລ້ວຂໍໃຫ້ກຸງເທບມີຄວາມເມດຕາແກ່ເຈົ້າອະນຸໃຫ້ໄດ້ຢູ່ໃນບ້ານເມືອງເດີມ ຈະໄດ້ເປັນຂ້າຂອບຂັນທະເສມາທັງສອງພຣະນະຄອນເຫມືອນແຕ່ກ່ອນ.

ທູດແກວພວກນີ້ເຂົ້າມາເຖິງກຸງເທບໄດ້ ໘ ວັນ ອົງເລໂບກໍ່ໃຫ້ຂ້າຣາຊການແກວ ໑໘ ຄົນ ຖືຫນັງສືເຂົ້າມາຫາເຈົ້າພຣະຍາພຣະຄັງສະບັບນຶ່ງ ມີຂໍ້ຄວາມວ່າ: ພຣະເຈົ້າກຸງວຽດນາມ ໄດ້ຈັດຂຸນນາງແກວໄປສົ່ງເຈົ້າອະນຸພົ້ນເຂດແດນແລ້ວ ແລະ ໄດ້ມີພຣະຣາຊສານໃຫ້ຣາຊທູດຖືເຂົ້າມາຖວາຍພຣະເຈົ້າແຜ່ນດິນແລ້ວເຫມືອນກັນ.

ອົງກິມເຫລືອບຽນບູ້ໄດ້ມີຫນັງສືມາເຖິງເລໂບ ວ່າ ກອງທັບກຸງທີ່ຮັກສາສາງເຂົ້າບໍ່ຈ່າຍເຂົ້າໃຫ້ເຈົ້າອະນຸກິນ ເຈົ້າຣາຊວົງບຸດເຈົ້າອະນຸໄປຂໍເຂົ້າກອງທັບໄທກໍ່ເຫດຂຶ້ນກ່ອນ ເອົາປືນຍິງພວກລາວ ພວກລາວຈຶ່ງໄດ້ຮົບ ພວກໄທເລີຍຖິ້ມອາວຸດຫນີໄປ ພຣະເຈົ້າອະນຸກໍ່ບໍ່ໄດ້ຕິດຕາມ ພຣະເຈົ້າວຽດນາມຈຶ່ງໃຫ້ຂຸນນາງແກວມາບອກເຈົ້າອະນຸໃຫ້ເຈົ້າອະນຸເກັບເອົາອາວຸດຂອງໄທໄວ້ ແລ້ວໃຫ້ແຕ່ງເຄື່ອງຣາຊບັນນາການລົງມາຖວາຍພຣະເຈົ້າກຸງເທບ ກໍ່ເຫັນຈະໂຜດຍົກໂທດໃຫ້ເອົາບຸນ ເຈົ້າອະນຸຈະໄດ້ຮູ້ຕົວວ່າຕົນໄດ້ທຳຜິດໄວ້ແຕ່ກ່ອນ ຖ້າກຸງເທບພຣະມະຫານະຄອນທຳດັ່ງນີ້ ພຣະກຽດຕິຍົດກໍ່ຈະຍິ່ງຂຶ້ນໄປກວ່າແຕ່ກ່ອນ.

## ເຈົ້າຣາຊວົງນຳຕີກອງທັບໄທ

ຝ່າຍເຈົ້າອະນຸເມື່ອໄດ້ຊາບວ່າກອງທັບຂອງເຈົ້າພຣະຍາຣາຊສຸພາວະດີ ຍົກຫນີຈາກເມືອງພັນພ້າວແລ້ວ ຈຶ່ງໃຫ້ທະຫານຂ້າມໄປມ້າງເພພຣະເຈດີປຣາບວຽງທີ່ແມ່ທັບໄທຽຂອງໄທສ້າງໄວ້ທີ່ເມືອງພັນພ້າວແລ້ວເຊີນພຣະເສີມ(໑)ມາໄວ້ທີ່ເມືອງວຽງຈັນເກົ່າ.

ສ່ວນເຈົ້າຣາຊວົງຍົກກອງທະຫານນຳຕີກອງທັບໄທໄປ ພໍ້ກັນຢູ່ບ້ານບົກຫວານ ແຂວງເມືອງຫນອງຄາຍໃນມື້ເດືອນ ໑໑ ອອກໃຫມ່ ໑໐ ຄ່ຳ (ວັນທີ ໑໘ ອົກໂຕບເປີ) ໄດ້ສູ້ຮົບກັນຈົນຖຶງຕົວແຕ່ກອງທັບຂອງເຈົ້າຣາຊວົງມີທະຫານຫນ້ອຍ ເຈົ້າຣາຊວົງຂີ່ມ້າ ເອົາຫອກແທງເຈົ້າພຣະຍາຣາຊສຸພາວະດີຖືກທ້ອງນ້ອຍ ເຈົ້າພຣະຍາຣາຊສຸພາວະດີລົ້ມລົງ ຫລວງພິຊິດນ້ອງຊາຍເຈົ້າພຣະຍາຣາຊສຸພາວະດີແລ່ນເຂົ້າມາຊ່ອຍ ເຈົ້າຣາຊວົງຈຶ່ງຫັນຫນ້າມາສູ້ຫລວງພິຊິດ ແລະເອົາດາບຟັນຫລວງພິຊິດຂາດຕາຍກັບບ່ອນ ພໍຈະໂດດເຂົ້າຟັນເຈົ້າ

---

(໑) ພຣະເສີມເປັນພຣະພຸທຮູບບູຮານທີ່ສວຍງາມ ເວລານີ້ປະດິສຖານຢູ່ວັດປະທຸມວະນາຣາມ ໃນກຸງເທພ.

ພຣະຍາຣາຊສຸພາວະດີອີກ ນາຍທະຫານໄທຄົນນຶ່ງຍິງປືນມາຖືກຫົວເຂົ່າເຈົ້າຣາຊວົງລົ້ມລົງ ພວກບ່າວຈຶ່ງເຂົ້າຫາມເອົາເຈົ້າຣາຊວົງພາຫນີມາວຽງຈັນ ຈຶ່ງເຂົ້າປຶກສາກັບພຣະຣາຊບິດາວ່າ ເວລານີ້ທະຫານຂອງເຮົາເຫລືອຫນ້ອຍ ເຫັນຈະສູ້ບໍ່ໄຫວຄວນປະເມືອງຫນີໄປປະເທດແກວອີກ ຄັນປຶກສາກັນແລ້ວ ພຣະເຈົ້າອະນຸກໍພາຄອບຄົວຫນີຈາກນະຄອນວຽງຈັນອີກ ໃນວັນເດືອນ ໑໑ ອອກໃຫມ່ ໑໑ ຄ່ຳ (ວັນທີ ໑໙ ອົກໂຕບເບີ) ເວລາຂອນແຈ້ງ ສ່ວນເຈົ້າຣາຊວົງ ຂີ່ເຮືອລ່ອງໄປຂຶ້ນທາງເມືອງມະຫາໄຊກອງແກ້ວ.

ຝ່າຍເຈົ້າພຣະຍາຣາຊສຸພາວະດີ ແມ່ທັບໄທ ເມື່ອລຸກຂຶ້ນໄດ້ ກໍເບິ່ງບາດເຫັນວ່າບໍ່ເຂົ້າເລິກ ກໍເອົາຢາໃສ່ແລ້ວໃຫ້ທະຫານຫາມນຳກອງທັບເຈົ້າຣາຊວົງມາ ຄັນມາເຖິງເມືອງພັນພ້າວຈຶ່ງໃຫ້ທະຫານ ໙໐໐ ຄົນຂ້າມມາວຽງຈັນ ທະຫານໄທ ໙໐໐ ຄົນນຳຫາເຈົ້າອະນຸບໍ່ທັນ ທັນແຕ່ເຈົ້າສຸດທິສານ ເຈົ້າເຕ້ ເຈົ້າບັນ ເຈົ້າດວງຈັນ ເຈົ້ານາງຄຳວັນ ບຸດພຣະເຈົ້າອະນຸ ເຈົ້າຫລອດຫລານ ແລະ ເຈົ້ານາງມາໄລ ເຈົ້ານາງວອນ ພຣະຊາຍາຂອງເຈົ້າອະນຸກັບທ້າວພົມ ທ້າວເປນ ຫລານພຣະຍາຊຽງດີ ເຈົ້າຮູບ ເຈົ້າຫຍຸດ ເຈົ້າສຸດທິສານ ຢູ່ບ້ານໄຜ່ ໃນວັນອອກໃຫມ່ ໑໕ ຄ່ຳເດືອນ ໑໑ (ວັນທີ ໒໓ ອົກໂຕບເບີ) ຈຶ່ງຈັບສົ່ງມາໄວ້ເມືອງພັນພ້າວ ແລ້ວໃຫ້ສົ່ງໄປກຸງເທບກ່ອນ ເຈົ້າພຣະຍາຣາຊສຸພາວະດີ ແມ່ທັບໄທຈຶ່ງຂ້າມມາວຽງຈັນ ແລ້ວເກນທະຫານຊາວບ້ານຊາວເມືອງທີ່ຍັງເຫລືອຢູ່ນັ້ນໃຫ້ມ້າງເພບ້ານເມືອງ ຕໍ່ໂຮງ ແລະເອົາໄຟຈູດເຜົາໃຫ້ຫມົດກ້ຽງ ບໍ່ໃຫ້ເມືອງວຽງຈັນມີຫລັງເຫລືອຈັກຢ່າງ ໂດຍຫວັງຈະບໍ່ໃຫ້ຕັ້ງເປັນບ້ານເປັນເມືອງໄດ້ອີກ ແລ້ວກໍຫາກວາດຕ້ອນເອົາຄອບຄົວຄົນລາວຕາມບ້ານນອກຂອກນາ ສົ່ງລົງໄປກຸງເທບຈົນຫມົດໃນເດືອນ ໑໒ ນັ້ນເອງ.

## ໄທຈັບພຣະເຈົ້າອະນຸໄດ້

ຄັນເຖິງເດືອນ ໑໒ ອອກໃຫມ່ ໑໕ ຄ່ຳ (ວັນທີ ໑໒ ໂນວອມ) ເຈົ້ານ້ອຍເມືອງພວນຈຶ່ງໃຫ້ເພັຍກາງເມືອງ ກັບເພັຍມະຫາໄຊ ມາຣາຍງານຕໍ່ເຈົ້າພຣະຍາຣາຊສຸພາວະດີ ແມ່ທັບໄທທີ່ຢູ່ວຽງຈັນ ວ່າ ຈະອາສາແຕ່ງກອງທັບອອກລັດດ່ານບໍ່ໃຫ້ເຈົ້າອະນຸຫນີໄປໄດ້ ແລະຈະພຍາຍາມຈັບເຈົ້າອະນຸໃຫ້ຈົນໄດ້ ຂໍຢ່າໃຫ້ກອງທັບໄທຍົກຂຶ້ນໄປເມືອງພວນເລີຍ ແລ້ວເຈົ້ານ້ອຍເມືອງພວນກໍແຕ່ງກອງທະຫານອອກລັດຫາເຈົ້າອະນຸ ພວກທະຫານນຳໄປພໍ້ຢູ່ຕີນພູເຂົາໄກ່ ຈຶ່ງໃຫ້ທະຫານ ໕໐ ຄົນລ້ອມໄວ້ ເຈົ້ານ້ອຍຈຶ່ງສົ່ງເພັຍນາມໂຄດກັບເພັຍຊຸຫູມ ລົງມາບອກແມ່ທັບໄທ ແມ່ທັບໄທຈຶ່ງໃຫ້ພຣະອິນທະຣະເດດ, ພຣະສຸພົນຊຽງສາ ກັບເພັຍເມືອງກາງ ຍົກທະຫານ ໓໐໐ ຄົນ ຂຶ້ນໄປຈັບພຣະເຈົ້າອະນຸ. ຝ່າຍພຣະເຈົ້າມັນທາຕຸຣາດ ພຣະເຈົ້ານະຄອນຫລວງພຣະບາງ ກໍແຕ່ງໃຫ້ທ້າວມະຫາພົມ ແລະ ຫມານຂັດຕິຍະ ເມືອງນ່ານ ຄຸມທະຫານອອກມາຈັບເຈົ້າອະນຸເຫມືອນກັນທ້າວມະຫາພົມກັບຫມານຂັດຕິຍະ ໄປພໍ້ນາຍດ່ານເມືອງພວນ ພວກນາຍດ່ານເມືອງພວນຈຶ່ງພາໄປຈັບເຈົ້າອະນຸໄດ້ ພ້ອມດ້ວຍເຈົ້ານາງຄຳປ້ອງ ເຈົ້ານາງທອງດີ ເຈົ້ານາງຄຳໃສ ເຈົ້ານາງບຸສບາ ພຣະຊາຍາຂອງເຈົ້າອະນຸ ກັບ ເຈົ້ານາງຄຳແພງ ເຈົ້ານາງຫນູ ພຣະທິດາຂອງເຈົ້າອະນຸ ແລະ ຫລານ

ສາວອີກຄົນນຶ່ງແລ້ວທ້າວມະຫາພົມກໍຄຸມລົງມາສົ່ງໃຫ້ກອງທະຫານຂອງພຣະອິນທະຣະເດດຢູ່ທາດຸເດື່ອຍ ພຣະອິນທະຣະເດດກໍຄຸມລົງມາສົ່ງເຈົ້າພຣະຍາຣາຊສຸພາວະດີທີ່ວຽງຈັນ ໃນວັນເດືອນອ້າຍອອກໃໝ່ ໑໔ ຄ່ຳ (ວັນທີ ໒໑ ເດຊາມ) ເຈົ້າພຣະຍາຣາຊສຸພາວະດີຈຶ່ງໃຫ້ທະຫານ ໓໐໐ ຄົນຄຸມພຣະເຈົ້າອະນຸກັບພຣະຍາດຕີວົງລົງໄປກຸງເທບ ພໍໄປເຖິງເມືອງສະຣະບຸຣີ ພຣະຍາໄຊວາຣີຂຶ້ນມາຕັ້ງກອງສົ່ງສະບຽງອາຫານຢູ່ທີ່ນັ້ນຈຶ່ງໃຫ້ທຳກົງໃສ່ເຈົ້າອະນຸຕັ້ງປະຈານໄວ້ທີ່ກາງເຮືອ ແລ້ວພຣະຍາອະນຸຣັກໂຍທາກັບພຣະໂຍ ທາສົງຄາມ ເອົາເຮືອໃສ່ເຈົ້າອະນຸພາຕະເວນປະຈານລົງໄປຕາມທາງຈົນເຖິງກຸງເທບ ເມື່ອເດືອນຍີ່ອອກໃໝ່ ໑໑ ຄ່ຳ (ວັນທີ ໑໔ ຈັງວິເຢ ໑໘໒໙) ເຈົ້າແຜ່ນດິນໄທຈຶ່ງໃຫ້ເອົາຂັງໄວ້ທັງໝົດ ແລ້ວສັ່ງໃຫ້ກົມຕຳຣວດທຳບອນປະຈານໄວ້ຕໍ່ໜ້າພຣະທີ່ນັ່ງ ຄື: ທຳກົງເຫລັກໃຫຍ່ສຳລັບໃສ່ເຈົ້າອະນຸກົງນຶ່ງ ແລະກົງເຫລັກນ້ອຍສຳລັບໃສ່ບຸດທິດາແລະພຣະຊາຍາ ອີກ ໑໓ ກົງ ມີເຄື່ອງລົງໂທດຄື: ຄົກສາກ ສຳລັບຕຳ ມີເບັດສຳລັບເກາະແຂນມີໜໍ້ຂາງສຳລັບຕົ້ມ ມີຂວານສຳລັບຜ່າອົກ ມີເລື່ອຍສຳລັບເລື່ອຍ ໄວ້ຄົບທຸກອັນ ແລ້ວເຮັດຂາຢັ່ງໄວ້ສຳລັບສຽບທັງເປັນ ເວລາເຊົ້າ ໆ ກໍໄຂເອົາເຈົ້າອະນຸ ອອກມາພ້ອມດ້ວຍເຈົ້າຣາຊບຸດໂຍ້ ເຈົ້າສຸດທິສານເຈົ້າເປ້ ເຈົ້າປານ ເຈົ້າດວງຈັນ ເຈົ້າສຸວັນນະຈັກ ເຈົ້າປັນ ຊຶ່ງເປັນບຸດເຈົ້າອະນຸ ກັບນາງຄຳປ້ອງພຣະຊາຍາ ແລະ ເຈົ້າຫລານອີກ ໕ ຄົນ ຄື: ເຈົ້າສຸຣິຍະ ໑ ເຈົ້າໂງ່ນຄຳ ໑ ເຈົ້າປານ ໑ ເຈົ້າບຸ ໑ ເຈົ້າດີ ໑ ເອົາມາຂັງໄວ້ໃນກົງແລ້ວ ໃຫ້ເຈົ້ານາງຄຳປ້ອງ ອັຄຊາຍາຂອງພຣະເຈົ້າອະນຸ ຖືວີການໜ້າກເຂົ້າໄປນັ່ງວີຢູ່ໃນກົງ ໃຫ້ພວກອະນຸຊາຍາ (ເມັຽນ້ອຍ) ແຕ່ງຕົວຖືຖ້ວຍກະເບື້ອງໃສ່ເຂົ້າປາອາຫານໄປລ້ຽງກັນໃນກົງຕໍ່ໜ້າປະຊາຊົນທຸກ ໆ ວັນ ເຈົ້າແຜ່ນດິນໄທປ່າວໃຫ້ຣາສດອນໃນກຸງເທບແລະບ້ານນອກອອກມາພາກັນມາເບິ່ງ ແລະປ້ອຍດ່າຢູ່ທຸກວັນ ບໍ່ໄດ້ຂາດ ເຖິງເວລາບ່າຍກໍເອົາພວກລູກຫລານຂອງເຈົ້າອະນຸມາຂຶ້ນງອຍເທິງຂາຢັ່ງ ໃຫ້ຮ້ອງປະຈານໂທດທຸກ ໆ ຄົນ ເວລາຄ່ຳກໍເອົາຂັງໄວ້ດັ່ງເກົ່າ ພວກໄທທຳຢູ່ດັ່ງນີ້ໄດ້ ໘ ວັນ ພຣະເຈົ້າອະນຸກໍ ຈົງອາພາດລົງແດງຕາຍ ເມື່ອຕາຍແລ້ວເຈົ້າແຜ່ນດິນໃຫ້ເອົາສົບໄປສຽບປະຈານໄວ້ທີ່ສຳເຫລໃນກຸງເທບນັ້ນເອງ ສ່ວນການທີ່ຈະປະຫານຊີວິດພວກພຣະໂອຣົດແລະພຣະທິດານັ້ນ ກໍເລີຍມິດໄປ.

ສົມເດັດພຣະເຈົ້າອະນຸ ເກີດປີກຸນ (ຄ.ສ.໑໗໖໗) ສິ້ນພຣະຊົນເມື່ອເດືອນ ເຟວຣິເຢ ໑໘໒໙ ຣວມພຣະຊົນໄດ້ ໖໒ ປີ. ອັນນີ້ແລ ຄືອາວະສານແຫ່ງຊາຕາຂອງນະຄອນວຽງຈັນທະບຸຣີສຣີສັຕນາຄະນະຫຸຕ ໄດ້ໄດ້ສ້ຽງສູດລົງພ້ອມກັບພຣະຊົນຊີບຂອງພຣະເຈົ້າອະນຸຕລອດຈົນເຊື້ອແຖວແນວພັນຂອງວົງກະສັດນະຄອນວຽງຈັນ ກໍໄດ້ສົ້ນສຸດລົງຈົນໝົດກຽງໃນຄາວນີ້ດ້ວຍ ປະຊາຊົນພົລເມືອງຊາວລາວວຽງຈັນ ຫລາຍແສນຄົນກໍຖືກກວາດໄລ່ລົງໄປຢູ່ເມືອງໄທ ແລະ ເປັນພົລເມືອງຂອງໄທຕໍ່ມາຈົນທຸກວັນນີ້.

ຝ່າຍພຣະເຈົ້າວຽດນາມຄັນໄດ້ຊາບວ່າ ເຈົ້ານ້ອຍເມືອງພວນ ເປັນຜູ້ຈັບພຣະເຈົ້າອະນຸສົ່ງໃຫ້ແກ່ແມ່ທັບໄທ ກໍໃຫ້ທະຫານຂຶ້ນມາຄຸມຕົວເຈົ້ານ້ອຍເມືອງພວນລົງໄປເມືອງແກວປະຫານຊີວິດເສັຽ ແລ້ວພຣະເຈົ້າວຽດນາມຈຶ່ງແຕ່ງໃຫ້ ບັນຊຸນວຽນ ເປັນຣາຊທູດ ຖືພຣະຣາຊສານມາຖວາຍພຣະເຈົ້າແຜ່ນດິນໄທກຽວດ້ວຍ

ເຣື່ອງເມືອງວຽງຈັນອີກສອງຄັ້ງ ຄັ້ງນຶ່ງມາເດືອນ ໔ ອອກໃໝ່ ໑໐ ຄ່ຳ ຄັ້ງທີ ໒ ມາເດືອນ ໑໒ ອອກ ໃໝ່ ໖ ຄ່ຳ ໃນປີ ຄ.ສ.໑໘໒໙ ນັ້ນເອງ ສຸດທ້າຍຈຶ່ງປະເທດແກວ ກັບ ປະເທດໄທ ໄດ້ເກີດເປັນສົງ ຄາມກັນຂຶ້ນ ແລະ ຣົບກັນຢູ່ຫລາຍປີຈຶ່ງສງົບ.

## ອານາຈັກລ້ານຊ້າງຫລວງພຣະບາງ

## (ສມັຍເສັຽເອກຣາຊແລວ)

## (໑)ຣັຊການພຣະເຈົ້າອະນຸຣຸທະ

ເມື່ອປະເທດລາວທັງ ໓ ອານາຈັກໄດ້ຕົກເປັນເມືອງຂຶ້ນຂອງປະເທດໄທໝົດແລ້ວ ຝ່າຍອານາຈັກ ລ້ານຊ້າງຫລວງພຣະບາງກໍແມ່ນພຣະເຈົ້າສຸຣິຍະວົງໄດ້ຄອງຣາຊສົມບັດຕໍ່ມາຈົນເຖິງ ປີ ຄ.ສ.໑໗໙໑ ພຣະ ເຈົ້າສຸຣິຍະວົງສິ້ນພຣະຊົນແລ້ວ ເສນາອາມາດເມືອງຫລວງພຣະບາງຈຶ່ງບອກລົງໄປກຸງເທບ ຂໍຕັ້ງເຈົ້າອະ ນຸຣຸທະ ໂອຣົດອົງທີ ໒ ຂອງເຈົ້າອິນທະໂສມ ຂຶ້ນເປັນເຈົ້າແຜ່ນດິນ ໃຫ້ເຈົ້ານາກ ອະນຸຊາຂອງເຈົ້າອະນຸ ຣຸທະ ໂອຣົດອົງທີ ໒ ຂອງເຈົ້າອິນທະໂສມ ຂຶ້ນເປັນເຈົ້າແຜ່ນດິນ ໃຫ້ເຈົ້ານາກ ອະນຸຊາຂອງເຈົ້າອະນຸຣຸ ທະເປັນມະຫາອຸປຣາດ ແລະໃຫ້ເຈົ້າມັນທາຕຸຣາດ ໂອຣົດຂອງເຈົ້າອະນຸຣຸທະເປັນເຈົ້າຣາຊວົງ.

ເມື່ອພຣະເຈົ້າອະນຸຣຸທະໄດ້ຂຶ້ນສເວີຍເມືອງແລ້ວປີນຶ່ງ ຄື ໃນປີ ຄ.ສ.໑໗໙໒ ກໍຖືກເຈົ້ານັນທະເສນ ເຈົ້ານະຄອນວຽງຈັນ ຍົກທັບຂຶ້ນໄປຕີ ໂດຍອ້າງສາເຫດຟ້ອງຕໍ່ພຣະເຈົ້າແຜ່ນດິນສຍາມວ່າ ເຈົ້າອະນຸຣຸທະ ເປັນໃຈໄປເຂົ້າກັບພວກພະມ້າ ໃນການຕີນະຄອນຫລວງພຣະບາງຄາວນີ້ ທັບຝ່າຍວຽງຈັນເສັຽເຈົ້າອຸປຣາດ ແລະສຸດທ້າຍ ເຈົ້ານັນທະເສນຈັບພຣະເຈົ້າອະນຸຣຸທະໄດ້ພ້ອມດ້ວຍເຈົ້ານາກເຈົ້າມັນທາຕຸຣາດ ແລະ ຄອບ ຄົວ ສົ່ງລົງໄປກຸງເທບ ພວກພຣະເຈົ້າອະນຸຣຸທະຈຶ່ງຖືກກັກຢູ່ກຸງເທບເຖິງ ໔ ປີ ຄືເຖິງປີຄ.ສ.໑໗໙໖ ຈຶ່ງ ໄດ້ກັບຄືນມາຄອງເມືອງ ແລະພ້ອມກັນນີ້ທາງຣັຖບານໄທ ໄດ້ຕັ້ງໃຫ້ເຈົ້າອະໄພ ບຸດເຈົ້າອຸປຣາດນາກ ຂຶ້ນ ເປັນເຈົ້າຫໍໜ້າ ພຣະເຈົ້າອະນຸຣຸທະ ສເວີຍຣາດມາເຖິງປີ ຄ.ສ.໑໘໑໗ ກໍສິ້ນພຣະຊົນ ຣວມພຣະຊົນມາ ຢູ່ໄດ້ ໘໒ ປີ ພຣະອົງມີພຣະຣາຊໂອຣົດ ໖ ອົງ ແລະຣາຊທິດາ ໓ ອົງ ຣາຊໂອຣົດ ໖ ອົງນັ້ນຄື: ໑. ເຈົ້າມັນທາຕຸຣາດ ໒.ເຈົ້າສຸດທະຣາດ ໓.ເຈົ້າໄຊຍະຣາດ ໔.ເຈົ້າຣາຊະໄພ ໕.ເຈົ້າຂຸນແກ້ວ ໖.ເຈົ້າຊ້າງ. ຣາຊທິດາ ໓ ອົງນັ້ນຄື: ໑.ເຈົ້າຍິງປະທຸມມາ ໒.ເຈົ້ານາງຫລ້າ ໓.ເຈົ້າຍິງໄວຍະກາ.

## (໒) ຣັຊການເຈົ້າມັນທາຕຸຣາດ

ເມື່ອພຣະເຈົ້າອະນຸຣຸທະສິ້ນພຣະຊົນແລ້ວ ເຈົ້າມັນທາຕຸຣາດກໍໄດ້ຂຶ້ນສເວີຍຣາດເປັນພຣະເຈົ້າແຜ່ນ ດິນ ຈຶ່ງຕັ້ງໃຫ້ເຈົ້າສຸດທະຣາດ ນ້ອງຊາຍເປັນອຸປຣາດ ໃຫ້ເຈົ້າອະໄພ ບຸດເຈົ້ານາກເປັນເຈົ້າຣາຊວົງ ຢູ່ ມາເຖິງ ຄ.ສ.໑໘໒໕ ພຣະເຈົ້າແຜ່ນດິນໄທອົງທີ ໒ສວັນນະຄົດ ພຣະເຈົ້າມັນທາຕຸຣາດຈຶ່ງມອບເວນບ້ານ ເມືອງໃຫ້ພວກອຳມາດຢູ່ຮັກສາ ສ່ວນພຣະອົງຕົກແຕ່ງດອກໄມ້ເງິນຄຳແລ້ວກໍລົງໄປຄຳນັບສົບພຣະເຈົ້າແຜ່ນ

ດິນໄທທີ່ກຸງເທບ ແລ້ວໄດ້ຂໍອະນຸຍາດບວດຕໍ່ໜ້າສົບ ພຣະເຈົ້າແຜ່ນດິນໄທອົງທີ ໓ ກໍທຣົງອະນຸຍາດໃຫ້ເປັນນາກຫລວງ ອຸປສົມບົດຢູ່ວັດພຣະແກ້ວ ແລ້ວອອກໄປຈຳວັດສາຢູ່ວັດມະຫາທາດ ອອກວັດສາແລ້ວຈຶ່ງສິກເຖິງປີ ຄ.ສ.໑໘໒໖ ຈຶ່ງສະເດັດກັບມາຄອງເມືອງຕາມເດີມ ແຕ່ໃຫ້ເຈົ້າໂພເນື້ອທອງຣາຊໂອຣົດທຳຣາຊການຢູ່ໃນກຸງເທບ.

ພຣະເຈົ້າມັນທາຕຸຣາດມີໂອຣົດ ໙ ອົງ ແລະທິດາ ໖ ອົງ ພຣະໂອຣົດ ໙ ອົງນັ້ນຄື: ໑.ເຈົ້າສຸກເສີມ ໒.ເຈົ້າຈັນທະຣາດ ໓.ເຈົ້າໂພເນື້ອທອງ ໔.ເຈົ້າອຸ່ນຄຳ ໕.ເຈົ້າບົວຄຳ ໖.ເຈົ້າບົວຣະພັນ ໗.ເຈົ້າສຸດທິສານ ໘.ເຈົ້າໂພທິສານ ໙.ເຈົ້າສຸພົນ. ພຣະທິດາ ໖ ອົງນັ້ນຄື: ໑.ເຈົ້ານາຍອດຄຳ ໒.ເຈົ້ານາງສີມມາ ໓.ເຈົ້ານາງທອງທິບ ໔.ເຈົ້ານາງເມັງຄຳ ໕.ເຈົ້ານາງສີມມະລີ ໖.ເຈົ້ານາງທອງສຸກ.

ຢູ່ມາເຖິງ ຄ.ສ.໑໘໒໗ ພຣະເຈົ້າອະນຸວົງ ເຈົ້ານະຄອນວຽງຈັນ ຄິດທຳການກູ້ເອກຣາດ ຈຶ່ງແຕ່ງຣາຊບັນນາການມາຖວາຍພຣະເຈົ້າມັນທາຕຸຣາດ ຂໍໃຫ້ຮ່ວມມື ພຣະເຈົ້າມັນທາຕຸຣາດສະແດງອາການເຫມີ້ ຍິນດີ ພໍທູດວຽງຈັນກັບແລ້ວ ພຣະອົງຈຶ່ງແຕ່ງໃຫ້ເຈົ້າສຸກເສີມພຣະໂອຣົດລົງໄປກຸງເທບ ແຈ້ງເຫດການໃຫ້ພຣະເຈົ້າແຜ່ນດິນໄທຊາບ ແລ້ວພຣະອົງກໍໄດ້ຈັດທະຫານຈຳນວນ ໕໐໐໐ ຄົນເຂົ້າຮ່ວມມືກັບແມ່ທັບໄທຍົກມຕີນະຄອນວຽງຈັນ ໂດຍໃຫ້ເຈົ້າສຸດທະຣາດ ເປັນແມ່ທັບ ເມື່ອສົງຄາມເຈົ້າອະນຸສຳເຣັດແລ້ວ ເຈົ້າອຸປຣາເລີຍຖືກຟ້ອງວ່າ ປິດບັງຄອບຄົວວຽງຈັນໄວ້ ຈຶ່ງຖືກຮ້ອງໄປໄຕ່ສວນທີ່ກຸງເທບ ແລະເຖິງແກ່ກັມຢູ່ກຸງເທບນັ້ນເອງ ພຣະເຈົ້າມັນທາຕຸຣາດຈຶ່ງຂໍຕັ້ງ ເຈົ້າຣາຊໄພເປັນອຸປຣາດ ຕັ້ງເຈົ້າສຸກເສີມເປັນຣາຊວົງ ແລະໃຫ້ເຈົ້າຈັນທະຣາດເປັນຣາຊບຸດ.

ພຣະເຈົ້າມັນທາຕຸຣາດສເວີຍຣາຊສົມບັດໄດ້ ໒໐ ປີ ຮວມພຣະຊົນໄດ້ ໖໔ ປີ ກໍສູຣະຄົຕເມື່ອ ຄ. ໑໘໓໖.

## (໓) ຣັຊການພຣະເຈົ້າສຸກເສີມ

ເມື່ອພຣະເຈົ້າມັນທາຕຸຣາດສະເດັດສູຣະຄົດແລ້ວ ຣັຖບານໄທ ຈຶ່ງຕັ້ງເຈົ້າອຸ່ນແກ້ວ ພຣະອະນຸຊາຂອງພຣະເຈົ້າມັນທາຕຸຣາດໃຫ້ເປັນຜູ້ຮັກສາຣາຊການແຜ່ນດິນນະຄອນຫລວງພຣະບາງ ຄັນເຖິງ ຄ.ສ.໑໘໓໘ ຈຶ່ງໄດ້ທຳພິທີອະພິເສກເຈົ້າສຸກເສີມ ຂຶ້ນເປັນເຈົ້າແຜ່ນດິນຫລວງພຣະບາງ ແລ້ວຕັ້ງເຈົ້າອຸ່ນແກ້ວເປັນເຈົ້າອຸປຣາດເຈົ້າຈັນທະຣາດ ເປັນເຈົ້າຣາຊວົງ ເຈົ້າແກ່ນຄຳ (ໂອຣົດເຈົ້າສຸດທະຣາດ) ເປັນເຈົ້າຣາຊບຸດ ແລະໃຫ້ເຈົ້າຣາຊະໄພ ເປັນເຈົ້າອະໄພສຸຣິຍະວົງສາ ເຈົ້າອະໄພສຸຣິຍະວົງສານີ້ ມີເຣື່ອງວ່າ ຄິດຕໍ່ກັບພວກແກວຈະເປັນກະບົດ ພຣະເຈົ້າສຸກເສີມຈຶ່ງຈັບສົ່ງໄປກຸງເທບ ແລະ ເຖິງແກ່ກັມຢູ່ທີ່ນັ້ນ.

ພຣະເຈົ້າສຸກເສີມມີໂອຣົດ ໖ ອົງມີພຣະທິດາ ໗ ອົງ ພຣະໂອຣົດ ໖ ອົງນັ້ນຄື: ໑.ເຈົ້າຄຳເຫ້ງ

໒.ເຈົ້າບຸນເພັດ ໓.ເຈົ້າພົມມະຈັກ ໔.ເຈົ້າຄຳແສງ ໕.ເຈົ້າພົມມາ ໖.ເຈົ້າອິນທະຈັກ ພຣະທິດາ ໗ ອົງນັ້ນຄື: ໑.ເຈົ້ານາງກັລຍາ ໒.ເຈົ້ານາງຄຳອ້ນ ໓.ເຈົ້ານາງບຸສດີ ໔.ເຈົ້ານາງບົບພາ ໕. ເຈົ້ານາງຄຳສອນ ໖.ເຈົ້ານາງອຸ່ນຄຳ ໗.ເຈົ້ານາງຄຳປ້ອງ.

ເຈົ້າອຸປຣາດອຸ່ນແກ້ວມີໂອຣົດ ໔ ອົງ ມີທິດາ ໓ ອົງ ໂອຣົດ ໔ ອົງນັ້ນຄື: ໑.ເຈົ້າສີຣິສາ ໒.ເຈົ້າສຸວັນນະພົມມາ ໓.ເຈົ້າທອງຄຳ ໔.ເຈົ້າຄຳມ້າວ. ທິດາ ໓ ອົງນັ້ນຄື: ໑.ເຈົ້ານາງສຸພັນ ໒.ເຈົ້ານາງຄຳປື້ນ ໓.ເຈົ້ານາງຄຳຊາວ.

ຢູ່ມາເຖິງ ຄ.ສ.໑໘໔໗ ທາງເມືອງຊຽງຣຸ່ງ ເມືອງພົງ ເມືອງລາ ເກີດການວຸ້ນວາຍ ພຣະເຈົ້າສຸກເສີມໄດ້ສົ່ງກອງທະຫານຂຶ້ນໄປພາບ ແລະໄດ້ຮັບເອົາເຈົ້າອຸປຣາດເມືອງຊຽງຣຸ່ງ ກັບຄອບຄົວລົງມາຢູ່ເມືອງຫລວງພຣະບາງເປັນອັນມາກ.

ພຣະເຈົ້າສຸກເສີມສເວີຍຣາດຢູ່ໄດ້ ໑໘ ປີ ກໍສະເດັດສູຣະຄົດ ເມື່ອເດືອນ ໑໐ ແຮມ ໑໐ ຄ່ຳ ປີຈໍ ຄ.ສ.໑໘໕໐ ຣວມພຣະຊົນໄດ້ ໕໓ ປີ.

## (໔) ຣັຊການພຣະເຈົ້າຈັນທະຣາດ

ເຖິງປີຄ.ສ.໑໘໕໔ ເຈົ້າຈັນທະຣາດ (ໂອຣົດອົງທີ ໒ ຂອງພຣະເຈົ້າມັນທາຕຸຣາດ) ໄດ້ຂຶ້ນເປັນພຣະເຈົ້າແຜ່ນດິນ ພຣະເຈົ້າຈັນທະຣາດ ຈຶ່ງໄດ້ຫົງຕັ້ງ ເຈົ້າອຸ່ນຄຳ (ນ້ອງຊາຍ) ໃຫ້ເປັນເຈົ້າອຸປຣາດ ເຈົ້າບົວຄຳເປັນເຈົ້າຣາຊວົງ ເຖິງປີ ຄ.ສ.໑໘໕໓ ຣັຖບານໄທ ຍົກທັບຂຶ້ນໄປຕີເມືອງຊຽງຕຸງ ພຣະເຈົ້າຈັນທະຣາດໄດ້ແຕ່ງໃຫ້ເຈົ້າສີຣິສາ ກັບ ເຈົ້າຄຳມ້າວ ຈັດທະຫານ ໓໐໐໐ ຄົນໄປຮົບຊ່ອຍໄທ ເຈົ້າສີຣິສາສິ້ນພຣະຊົນໃນສນາມຮົບ ແລະເຈົ້າຄຳມ້າວນັ້ນ ກໍຫາຍສາບສູນໄປ.

ໃນຣັຊການຂອງພຣະເຈົ້າຈັນທະຣາດນີ້ ໄດ້ມີເຫດເກີດຂຶ້ນທາງເມືອງຣຸ່ງອີກຄື: ພຣະເຈົ້າຈັນທະຣາດແຕ່ງໃຫ້ພຣະຍາສີມະຫານາມ ກັບພຣະຍາກວານເຫລັກ ໄປສົ່ງມະຫາອຸປຣາຊາເມືອງຊຽງຣຸ່ງ ພໍໄປເຖິງເມືອງບູນໄດ້ຊາບຂ່າວວ່າ ເມືອງຊຽງຣຸ່ງຍັງບໍ່ສງົບ ພຣະມະຫາອຸປຣາຊາຈຶ່ງໃຫ້ພຣະຍາທັງສອງຖ້າຢູ່ເມືອງບູນ ສ່ວນຕົນເອງຂຶ້ນໄປຟັງເຫດການກ່ອນ ຄັນໄປເຖິງເມືອງພົງ ກໍໃຫ້ທ້າວມະຫາໄຊເຈົ້າເມືອງພົງ ພາຂຶ້ນໄປເຖິງເມືອງຣຳ ແຕ່ທ້າວມະຫາໄຊບໍ່ເຂົ້າໄປໃນເມືອງ ໄປຢຸດທັບຖ້າຢູ່ນອກລະຍະທາງວັນນຶ່ງມະຫາອຸປຣາຊາໄປເຖິງເມືອງຣຳແລ້ວ ກໍຂຽນໜັງສືສົ່ງໄປເຖິງເຈົ້າຣາຊບຸດເມືອງຊຽງຣຸ່ງວ່າ ຂໍຄືນມາຢູ່ບ້ານເມືອງໂດຍສວັສດີ ແຕ່ເຈົ້າຣາຊບຸດໄດ້ຊາບວ່າ ມະຫາໄຊເອົາກອງທັບມາສົ່ງເຈົ້າມະຫາອຸປຣາຊາ ກໍບໍ່ເຊື່ອໃຈ ຈຶ່ງສົ່ງໃຫ້ອາດຍານ້ອຍເຈົ້າເມືອງຣຳ ຍົກກອງທະຫານເຂົ້າຕີທັບມະຫາໄຊ ທັບມະຫາໄຊກໍແຕກຖອຍລົງມາເມືອງພົງ ແລ້ວມະຫາໄຊເຂົ້າໃຈວ່າ ມະຫາອຸປຣາຊາທຳການທັກຫລັງຕົນ ຈຶ່ງທ້ອນໂຮມກຳລັງຍົກຂຶ້ນໄປຕີເມືອງລາ ເມືອງລອງ ຈົນເຖິງເມືອງຣຳ ຈັບເຈົ້າອຸປຣາຊາເມືອງຊຽງຣຸ່ງໄດ້ກໍຂ້າເສັຽ ຝ່າຍເຈົ້າຣາຊບຸດເມືອງຊຽງຣຸ່ງເຫັນມະຫາໄຊທຳການເປັນເສິກຂຶ້ນດັ່ງນັ້ນ ກໍເກນກຳລັງພົນໃນເຂດເມືອງສິບສອງພັນນາ ຍົກລົງມາ

ຕີກອງທັບມະຫາໄຊ ກອງທັບມະຫາໄຊແຕກຖອຍລົງມາຢູ່ໃນເຂດແດນຫລວງພຣະບາງ ເຖິງເດືອນ ໕ ປີ ດຽວກັນນີ້ ມະຫາໄຊກັບຍົກຂຶ້ນໄປຕີອີກ ຄາວນີ້ມະຫາໄຊຕາຍໃນສນາມຣົບ ບຸດມະຫາໄຊ ຊື່ທ້າວຍິງ ພາທະຫານຫລົບໜີລົງມາໄດ້ ແຕ່ຈະເຂົ້າມາໃນເຂດຫລວງພຣະບາງບໍ່ໄດ້ ເພາະພຣະເຈົ້າຈັນທະຣາດໄດ້ເອົາກອງທັບຫລວງພຣະບາງໄປຕັ້ງໄວ້ທີ່ເຂດແດນ ທ້າວຍິງຈຶ່ງຕີຜ່າກອງທັບຫລວງພຣະບາງລົງມາເລີຍຖືກກອງທັບຫລວງພຣະບາງຕີແຕກໝົດ ເຫດການຈຶ່ງສງົບ.

ເຖິງປີ ຄ.ສ.໑໘໖໖ ພຣະເຈົ້າຈັນທະຣາດຈຶ່ງໄດ້ເອົາພຣະບາງ ຄືນມາຈາກປະເທດໄທ ແລະຄອງຣາຊສົມບັດຕໍ່ມາ ເຖິງ ຄ.ສ.໑໘໗໒ ກໍສະເດັດສູຣະຄົດ.

## (໕) ຣັຊການພຣະເຈົ້າອຸ່ນຄຳ

ເມື່ອພຣະເຈົ້າຈັນທະຣາດສະເດັດສູຣະຄົດແລ້ວ ເຈົ້າອຸ່ນຄຳ ກໍໄດ້ຂຶ້ນສເວີຍຣາດເປັນພຣະເຈົ້າແຜ່ນດິນ ໃນປີ ຄ.ສ.໑໘໗໒ ນັ້ນເອງ ພຣະເຈົ້າອຸ່ນຄຳມີພຣະຣາຊໂອຣົດ ໕ ອົງ ຄື: ເຈົ້າຄຳສຸກ ໑ ເຈົ້າສີສຸພົນ ໑ ເຈົ້າຄຳເຫງົ້າ ໑ ເຈົ້າຄຳປານ ໑ ເຈົ້າສົມໄຊ ໑. ເຈົ້າຄຳສຸກພຣະຣາຊໂອຣົດອົງໃຫຍ່ ໄດ້ຮັບຕຳແໜ່ງເປັນເຈົ້າຣາຊວົງ ຕັ້ງແຕ່ປີພຣະເຈົ້າອຸ່ນຄຳຂຶ້ນສເວີຍຣາຊສົມບັດເປັນຕົ້ນມາ ໄດ້ມີເຫດການວຸ້ນວາຍເກີດຂຶ້ນທາງພາກເໜືອຂອງປະເທດລາວ ກ່ຽວດ້ວຍພວກຮໍ້ເຂົ້າມາຕີປຸ້ນບ້ານເມືອງ ຍາດຊິງເອົາຊັບສົມບັດແລະຈູດເຜົາບ້ານເມືອງເປັນອັນມາກ ຄື:

ໃນປີ ຄ.ສ.໑໘໗໒ ນັ້ນມີຮໍ້ ໓ ພວກ ຄື: ຮໍ້ທຸງລາຍ ແລະ ຮໍ້ທຸງເຫລືອງ ໑ ຮໍ້ທຸງແດງ ໑ ຮໍ້ທຸງດຳ ໑ ຍົກເຂົ້າມາຕີປຸ້ນຫົວເມືອງລາວຝ່າຍເໜືອ ພວກຮໍ້ທຸງລາຍມີຫົວໜ້າໃຫຍ່ ໒ ຄົນ ຄົນໜຶ່ງຊື່ ທີ່ສາມກໍໃ ຄົນໜຶ່ງຊື່ ກໍຍິນໄຕ ມີກຳລັງພົນ ໓໐໐໐ ຄົນ ຮໍ້ພວກນີ້ຍົກລົງມາຕີເອົາສິບສອງຈຸໄທໄດ້ໝົດແລ້ວ ກໍແບ່ງກັນລົງມາຕີເອົາເມືອງລາວແຂວງຫົວພັນ ພວກຊາວລາວແຂວງຫົວພັນຕໍ່ສູ້ຢູ່ເຖິງ ໒ ປີ (ຄ.ສ.໑໘໗໔) ສູ້ຮໍ້ບໍ່ໄດ້ຈຶ່ງແຕກລົງໄປເພິ່ງແກວຢູ່ເມືອງສິບສິມຝ່າຍຮໍ້ ເມື່ອຕີແຂວງຫົວພັນໄດ້ແລ້ວກໍແບ່ງກັນອອກເປັນ ໓ ພວກ ໆ ໜຶ່ງຕັ້ງຄ້າຍຢູ່ເມືອງຮັງ ມີຮໍ້ຕາຢັດ ເປັນຫົວໜ້າ ພວກໜຶ່ງຕັ້ງຄ້າຍຢູ່ ບ້ານຕາງ ມີຮໍ້ສັບສຸຍ ເປັນຫົວໜ້າ ພວກໜຶ່ງຕັ້ງຄ້າຍຢູ່ ບ້ານສິບສາມ; ສ່ວນຮໍ້ສາມກໍປົວ ຍົກລົງມາຕັ້ງຄ້າຍຢູ່ທົ່ງຊຽງຄຳ ໃນແຂວງພວນ.

ພ້ອມກັນນີ້ພວກຮໍ້ທຸງແດງ ເຊິ່ງມີຫົວໜ້າຊື່ ຮໍ້ລີລີ ໑ ຮໍ້ກໍໄລ ໑ ຍົກລົງມາຕີທາງເມືອງແຖນ ແລ້ວເລີຍລ່ວງເຂົ້າມາຈະຕີເຂດແດນຫລວງພຣະບາງ ພຣະເຈົ້າອຸ່ນຄຳຈຶ່ງແຕ່ງໃຫ້ເຈົ້າຣາຊວົງເປັນແມ່ທັບ ຍົກໄປຕີຮໍ້ທາງເມືອງແຖນ ໑ ກອງ ອີກກອງໜຶ່ງ ໃຫ້ທ້າວເນົ້າ ເປັນແມ່ທັບຍົກໄປທາງເມືອງຊ່ອນ ແລ້ວຣາຍງານລົງໄປກຸງເທບ.

ກອງທັບເຈົ້າຣາຊວົງຕີຮໍ້ທາງເມືອງແຖນແຕກ ພວກຮໍ້ໜີລົງມາທາງເມືອງຊ່ອນ ຖືກກອງທັບຂອງທ້າວເນົ້າຕີແຕກອີກ ພວກຮໍ້ຈຶ່ງແຕກລົງມາໂຮມກັນຢູ່ທົ່ງຊຽງຄຳແລ້ວເຂົ້າຕີເອົາເມືອງຄັງລາດບອກໄດ້ ພວກຮໍ້ເລີຍລົງມາຕີເອົາເມືອງຊຽງຂວາງ ເຈົ້າອຸງເຈົ້າເມືອງຊຽງຂວາງ ພາທະຫານອອກຕໍ່ສູ້ ເຈົ້າອຸງຖືກປືນຕາ

ໃນສນາມຣົບ ພວກຫໍ້ຈິ່ງເຂົ້າຊຽງຂວາງໄດ້ ພຣະພະນົມສານນໍຣິນ ຫລານເຈົ້າຊຸງຈິ່ງພາຄອບຄົວຂອງເຈົ້າຊຸງຫນີລົງມາເມືອງຫນອງຄາຍ.

ຝ່າຍຫໍ້ສາມກໍປິວ ເມື່ອຕີຊຽງຂວາງໄດ້ແລ້ວຈິ່ງໃຫ້ຫໍ້ອີງວັນກັບຫໍ້ກວານລານ ຍົກພົນຫໍ້ ໑໐໐໐ ຄົນລົງມາຕີວຽງຈັນ ໃນປີ ຄ.ສ.໑໘໗໔ ເມືອງວຽງຈັນເວລານັ້ນເປັນເມືອງຮ້າງບໍ່ມີເຈົ້ານາຍຢູ່ຮັກສາ ເຈົ້າຫນ້າທີ່ຝ່າຍໄທຂຶ້ນມາປົກຄອງເມືອງວຽງຈັນ ໄດ້ຕັ້ງບ່ອນເຮັດການຢູ່ຫນອງຄາຍ ເມື່ອພວກຫໍ້ລົງມາ ຣາສດອນກໍພາກັນແຕກຕື່ນປະເຮືອນຊານເຂົ້າຂອງຫນີໄປຢູ່ເມືອງຫນອງຄາຍຫມົດ ຜູ້ຫນີບໍ່ທັນກໍຍອມອ່ອນນ້ອມ ເສັຽເງິນໃຫ້ພວກຫໍ້ຕາມແຕ່ມັນຈະຮຽກເອົາ ພວກຫໍ້ເຂົ້າຕີວຽງຈັນແລ້ວ ກໍທ້ຽວຫາເກັບເອົາສິ່ງຂອງແລະມ້າງເຜພຣະທາດເຈດີ ໂບດ ສິມ ວິຫານ ພຣະພຸທຮູບ ຂຸດຄົ້ນເອົາເງິນຄຳ ເປັນເວລານານເຖິງ ໔ ເດືອນ.

ເວລານັ້ນຂ້າຫລວງໄທ ຊື່ ພຣະຍາມະຫາອຳມາດຊື່ນ ຢູ່ເມືອງອຸບົນ ໄດ້ຮັບຣາຍງານຈາກເມືອງຫນອງຄາຍ ຈິ່ງຍົກທະຫານຂຶ້ນມາລ້ອມຕີຫໍ້ຢູ່ວຽງຈັນ ຕາຍເກືອບຫມົດ ເຫລືອຄົນໄປໄດ້ແຕ່ ໖ ຄົນແລ້ວກອງທະຫານພຣະຍາມະຫາອຳມາດ ກໍນຳຕີຫໍ້ໄປເຖິງທົ່ງຊຽງຄຳ ພວກຫໍ້ຈິ່ງແຕກຫນີ ພຣະຍາມະຫາອຳມາດຊື່ນຈິ່ງໃຫ້ພຣະພະນົມສານນໍຣິນ ຄືນໄປເປັນເຈົ້າເມືອງຊຽງຂວາງຊາມຊາ ແລະຕໍ່ມາເຈົ້າຂັນທີ ບຸດຂອງເຈົ້າຊຸງຈິ່ງໄດ້ຂຶ້ນໄປເປັນເຈົ້າເມືອງຊຽງຂວາງ.

ຝ່າຍເມືອງຫລວງພຣະບາງ ຣັຖບານໄທໄດ້ແຕ່ງໃຫ້ພຣະຍາພຸທະຣາໄພ ກັບ ເຈົ້າພຣະຍາສີທັມມາທິຣາດ ຍົກທະຫານຂຶ້ນມາຕີຫໍ້ຊ່ອຍພຣະເຈົ້າອຸ່ນຄຳ ກອງທັບພຣະເຈົ້າອຸ່ນຄຳ ແລະ ໄທ ຕີຫໍ້ທີ່ຕັ້ງຄ້າຍຢູ່ບ້ານນາບົວ ແຕກໄປຫມົດແລ້ວກອງທັບໄທທັງສອງກອງກໍເລີກກັບຄືນເມືອ.

ສ່ວນພວກຫໍ້ທີ່ແຕກຫນີໄປນັ້ນ ບໍ່ໄດ້ອອກໄປພົ້ນດິນແດນ ໄດ້ໄປຕັ້ງຄ້າຍຢູ່ເມືອງແວ່ນ ສ່ວນພວກຫໍ້ຍິບໄຕ ທີ່ຕັ້ງຄ້າຍໃຫຍ່ຢູ່ເມືອງລາ ແລະຄ້າຍນ້ອຍຢູ່ເມືອງຮັງ ເມືອງສິບສາມນັ້ນ ເຫັນພວກຫໍ້ສາມກໍປິວ ມາຕັ້ງຄ້າຍຢູ່ເມືອງແວ່ນກໍບໍ່ພໍໃຈ ຈິ່ງເກີດວິວາດກັນຂຶ້ນ ແລ້ວຫໍ້ສາມກໍປິວຈິ່ງພາພົນປະມານ ໖໐໐ ຄົນ ກັບຄືນມາຕີເອົາຄ້າຍ ທົ່ງຊຽງຄຳ ອີກ ໃນປີ ຄ.ສ.໑໘໗໗.

ໃນປີດຽວກັນນີ້ ເຈົ້າເມືອງໄລໄດ້ໄປຈ້າງເອົາພວກຫໍ້ທຸງດຳ ຢູ່ເມືອງລາວກາຍ ໑໐໐໐ ຄົນ ລົງມາຕີຫໍ້ຍິບໄຕຢູ່ເມືອງລາ ສູ້ກັນຢູ່ໄດ້ປີປາຍຍັງບໍ່ທັນແພ້ກັນ ເຈົ້າເມືອງໄລຈິ່ງມີຫນັງສືໄປຂໍເອົາກອງທັບເມືອງລາວກາຍມາຊ່ອຍເຈົ້າເມືອງລາວກາຍໄດ້ໃຫ້ ປັກເປັງເກົາ ເປັນຫົວຫນ້າທະຫານ ໘໐໐ ຄົນ ລົງມາຕີເມືອງລາປັກເປັງເກົາ ແຈ້ງຄວາມໃຫ້ກໍຍິບໄຕຊາບວ່າ ພຣະເຈົ້າກຸງຈີນມີຫນັງສືມາເຖິງເຈົ້າເມືອງລາວກາຍວ່າ ໃຫ້ມາຈັບເອົາພວກຫໍ້ທີ່ເຂົ້າມາຕີປຸ້ນເອົາເມືອງລາວ ໃຫ້ຫມົດ ຖ້າບໍ່ໄດ້ເຈົ້າເມືອງລາວກາຍຈະມີໂທດກໍຍິບໄຕໄດ້ຊາບດັ່ງນັ້ນ ກໍຍອມໃຫ້ປັກເປັງເກົາຄຸມຕົວໄປເມືອງລາວກາຍ ສ່ວນກວານກໍຍີ ກວານກໍວາງ ກວານກໍຊູ ກວານກໍເຈືອງ ລູກແຫລ້ງຂອງກໍຍິບໄຕບໍ່ຍອມໄປ ຈິ່ງພາລູກແຫລ້ງ ໒໐໐ ຄົນລັກຫນີໄປຢູ່ນຳພຣະຍາຂ້າເຈືອງທີ່ເມືອງເປີນ ໃນປີ ຄ.ສ.໑໘໗໕ ແລ້ວຫໍ້ພວກນີ້ຈິ່ງຍົວະເຍົ້າພຣະຍາຂ້າເຈືອງວ່າ ໃຫ້ພວກຂ້າຊ່ອຍຕີເອົາເມືອງສິບແອດໃຫ້ ພວກຫໍ້ຈະຊ່ອຍຕີເອົາເມືອງຊ່ອນໃຫ້ ພຣະຍາຂ້າເຈືອງ ກໍເຫັນດີ ຈິ່ງເກີດເປັນຂ້າເຈືອງກະບົດຂຶ້ນ

ອີກ ເຫດນັ້ນເຈົ້າເມືອງສິບແອດ ກັບຣາສດອນ ໑໐໐ ຄົນປາຍຈຶ່ງແຕກເຂົ້າມາຢູ່ຫລວງພຣະບາງເຫລືອນັ້ນ ຍອມສ່ວນທັງໝົດ.

ທັງອີກພວກນຶ່ງມີຈຳນວນ ໑໐໐ ຄົນມີກວານກໍ່ຕ້າຍເປັນຫົວໜ້າ ເຊິ່ງແຕ່ກ່ອນເປັນລູກແຫລ່ງກໍ່ຍົບໄຕ ໄດ້ພາກັນລັກໜີຈາກເມືອງລາວກາຍ ມາຕັ້ງຄ້າຍຢູ່ເມືອງສິບຄົບ ເຈົ້າເມືອງລາວກາຍຈຶ່ງແຕ່ງໃຫ້ ອົງບາ ຄຸມທະຫານ ໓໐໐ ຄົນນຳມາຈັບ ພວກກວານກໍ່ຕ້າຍ ກວານກໍ່ຍີ ແລະກວານກໍ່ຊູ ກວານກໍ່ເຈືອງ ຈຶ່ງໜີ ມາທາງທ້ວຍສຸຍ ແລ້ວມາຕີເອົາເມືອງຊອນ ອົງບານຳມາຕີອີກ ພວກທັງກວານກໍ່ຕ້າຍ ເລີຍແຕກໜີລົງມາ ທາງທົ່ງຊຽງຄຳ ພາຍຫລັງບໍ່ຖືກກັບກວານຫລວງ (ຫົວໜ້າທັງຜູ້ແທນສາມກໍ່ປິວ) ຈຶ່ງໜີໄປຕັ້ງຄ້າຍຢູ່ທາງ ທ້ວຍຊາຍ ແລ້ວອອກມາຕີປຸ້ນບ້ານເມືອງໄປທຸກແຫ່ງ.

ເຖິງປີ ຄ.ສ.໑໘໘໗ ພວກທັງຢູ່ທົ່ງຊຽງຄຳໄດ້ຍົກລົງມາຕີແຂວງວຽງຈັນອີກ ສ່ວນພວກທີ່ຢູ່ທາງທ້ວຍ ຊາຍໄດ້ລົງມາຕີນະຄອນຫລວງພຣະບາງ ພຣະເຈົ້າອຸ່ນຄຳບໍ່ທັນຮູ້ຕົວ ຈຶ່ງແຕກເສິກທັງ ພ່າຍລົງມາຢູ່ເມືອງ ປາກລາຍ ສ່ວນເຈົ້າມະຫາອຸປຣາຊຸມ່ນຖືກທັງຂາຕາຍເມື່ອສົງບເສິກທັງແລ້ວ ຝ່າຍສຍາມຈຶ່ງປົດພຣະເຈົ້າອຸ່ນຄຳ ເປັນພຣະເຈົ້າແຜ່ນດິນຈາງວາງ ແລ້ວອະພິເສກເຈົ້າຄຳສຸກ ພຣະຣາຊໂອຣົດຂຶ້ນເປັນພຣະເຈົ້າແຜ່ນດິນ ຖວາຍພຣະນາມວ່າ ພຣະເຈົ້າສັກຣິນ ຕໍ່ມາເຖິງປີ ຄ.ສ.໑໘໙໕ ພຣະເຈົ້າຫລວງອຸ່ນຄຳ ກໍ່ສະເດັດສູຣະ ຄົຕເມື່ອເດືອນຈຽງ ແຮມ ໑໓ ຄ່ຳ ຣວມພຣະຊົນມາຍຸໄດ້ ໘໔ ປີ ຄອງຣາຊສົມບັຕມານານໄດ້ ໒໗ ປີ.

## (ຝ) ຣັຊການເຈົ້າຄຳສຸກ(ພຣະເຈົ້າສັກຣິນ)

ເຖິງປີ ຄ.ສ.໑໘໘໙ ຝ່າຍຣັຖບານສຍາມພິຈາຣະນາເຫັນວ່າ ພຣະເຈົ້າອຸ່ນຄຳ ກໍ່ທົງຊະຣາພາບ ຫລາຍແລ້ວ ຈຶ່ງຍົກໃຫ້ເປັນພຣະເຈົ້າແຜ່ນດິນຈາງວາງ ແລ້ວອະພິເສກເຈົ້າຄຳສຸກ ພຣະຣາຊໂອຣົດ ອົງ ນາມວ່າ ອົງໃຫຍ່ຂອງພຣະເຈົ້າອຸ່ນຄຳ ຂຶ້ນເປັນເຈົ້າແຜ່ນດິນຖວາຍສົມເດັດພຣະເຈົ້າສັກຣິນ ພຣະເຈົ້າ ລ້ານຊ້າງຮົ່ມຂາວຫລວງພຣະບາງ ແລະຕັ້ງໃຫ້ເຈົ້າສີສຸພັນເປັນເຈົ້າຣາຊວົງ.

ສົມເດັດພຣະເຈົ້າສັກຣິນສເວີຍຣາຊສົມບັດມາໄດ້ ໓ ປີ ຄືເຖິງປີ ຄ.ສ.໑໘໙໓ ໄທກໍ່ໄດ້ຍົກດິນແດນ ຝັ່ງຊ້າຍແມ່ນ້ຳຂອງອັນເປັນພື້ນທີ່ປະເທດລາວສ່ວນນຶ່ງ ໃຫ້ແກ່ຝຣັ່ງເສດ ປະເທດຝຣັ່ງເສດ ຈຶ່ງໄດ້ປົກຄອງ ປະເທດລາວສ່ວນນີ້ ຕັ້ງແຕ່ນັ້ນມາ.

ຮູບ : ຈາກປຶ້ມ "ນິຣາດເມືອງຫລວງ
ພຣະບາງ" ຂອງຈອມພົລ ເຈົ້າ
ພຣະຍາສຸຣສັກ ມົນຕຣີ ຫນ້າ
ນ໔໔.



ແມ່ທັບ ແລະ ເຈົ້າຣາຊວົງ ເມືອງຫລວງພຣະບາງ ຊຶ່ງພາຍຫລັງໄດ້ເປັນເຈົ້າສັກດິນ ເຈົ້າເມືອງຫລວງພຣະບາງ ເມື່ອຕອນໄປປາບຫໍ້ກັບລົງມາເຖິງເມືອງຊ່ອນ ຈຶ່ງໄດ້ນຳທຸງໄຊ ສເລີມພົລ (ຊຶ່ງໃນສມັຍນັ້ນແມ່ນທຸງຂອງກອງທັບໄທ) ມາສຽບໄວ້ກາງ ເພື່ອເປັນທີ່ລະລຶກ.

## ອານາຈັກຈຳປາສັກ
## (ໃນສມັຍເສັຽເອກຣາຊແລ້ວ)
## (໑)ຣັຊການເຈົ້າໄຊຍະກຸມມານ

ອານາຈັກຈຳປາສັກຕັ້ງເປັນເອກຣາດຂຶ້ນປີ ຄ.ສ.໑໗໑໓ ໂດຍພຣະເຈົ້າສ້ອຍສີສມຸດພຸດທາງກູນແລະ ໄດ້ຕົກເປັນປະເທສຣາດຂອງໄທ ໃນປີ ຄ.ສ.໑໗໗໘ ໃນສມັຍຂອງເຈົ້າໄຊຍະກຸມມານໂອຣົດຂອງເຈົ້າສ້ອຍ

ສີສມຸດ ຣວມເວລາຈຳປາສັກເປັນເອກຣາດຢູ່ ພຽງ ໖໔ ປີ ເມື່ອຕົກເປັນປະເທສຣາຊຂອງໄທແລ້ວ ເຈົ້າໄຊຍະກຸມມານຍັງໄດ້ຄອງເມືອງຕໍ່ມາ ໂດຍມີເຈົ້າທັມມະເທໂວ(ນ້ອງຊາຍ)ເປັນອຸປຣາດ ແລະເຈົ້າສຸຣິໂຍ (ນ້ອງຄົນທີ່ ໓) ເປັນຣາຊວົງຕາມເດີມ.

ເຈົ້າໄຊຍະກຸມານມີໂອຣົດອົງນຶ່ງນາມວ່າ ເຈົ້າຫນໍ່ເມືອງມີພຣະທິດາ ໒ ອົງ ນາມວ່າ ເຈົ້າປອມ ທິວກຸມາຣີ ໑ ເຈົ້າທອນແກ້ວ ໑.

ເຖິງປີ ຄ.ສ.໑໗໙໑ ຊຽງແກ້ວບ້ານເຂົາໂຂງເປັນກະບົດຍົກມາຕີນະຄອນຈຳປາສັກ ເຈົ້າໄຊຍະກຸມມານເຊິ່ງເວລານັ້ນມີພຣະຊົນໄດ້ ໘໑ ປີແລ້ວ ພໍໄດ້ຍິນຂ່າວເສິກກໍຕົກໃຈ ເລີຍເຖິງແກ່ກັມໃນວັນນັ້ນ ຊຽງແກ້ວຈຶ່ງເຂົ້າເມືອງໄດ້ໂດຍງ່າຍ. ເວລານັ້ນທ້າວຝ່າຍຫນ້າບຸດພຣະຕາ ທີ່ຢູ່ບ້ານສິງທ່າ (ຄືເມືອງຍະໂສທອນທຸກວັນນີ້) ກັບພຣະປະທູສຸຣະຣາ (ຄຳຜົງ) ນາຍກອງຢູ່ບ້ານຫ້ວຍແຈະລະແມ (ຄືເມືອງອຸບົນ) ພ້ອມກັນທະຫານໄປຕີອ້າຍຊຽງແກ້ວ ທ້າວຝ່າຍຫນ້າຈັບອ້າຍຊຽງແກ້ວໄດ້ ກໍຂ້າເສັຽ ແລ້ວພາໄພ່ພົນເຂົ້າໄປຕັ້ງຢູ່ໃນເມືອງ.

## (໔) ສມັຍເຈົ້າພຣະວິໄຊຍະຣາຊຂັດຕິຍະວົງສາ

ພຣະເຈົ້າແຜ່ນດິນໄທຊາບວ່າ ທ້າວຝ່າຍຫນ້າເປັນຜູ້ປາບກະບົດຊຽງແກ້ວໄດ້ແລ້ວ ຈຶ່ງຕັ້ງໃຫ້ເປັນເຈົ້ານະຄອນຈຳປາສັກ ຂນານນາມວ່າ "ເຈົ້າພຣະວິໄຊຍະຣາຊຂັດຕິຍະວົງສາ" ເຈົ້າພຣະວິໄຊຍະຣາດຈຶ່ງຍ້າຍເມືອງຂຶ້ນມາຕັ້ງຢູ່ທາງເຫນືອ ຄືເມືອງເກົ່າຄັນເກິງດຽວນີ້ ເຖິງປີ ຄ.ສ.໑໘໐໔ ເຈົ້າພຣະວິໄຊຍະຣາຊຂັດຕິຍະວົງສາໄດ້ຕັ້ງບ້ານນາຍອນຂຶ້ນເປັນເມືອງ ເອີ້ນວ່າ ເມືອງສະພາດ ແລ້ວໃຫ້ພຣະຍາສີອັກຄະຣາດ ບຸດຈານຫວດ ເຈົ້າເມືອງໂຂງເປັນເຈົ້າເມືອງ.

ເຈົ້າພຣະວິໄຊຍະຣາດ ມີບຸດຄົນນຶ່ງ ຊື່ເຈົ້າບຸດ ມີທິດາ ໓ ຄົນ ຊື່ ນາງແດງ ໑ ນາງໄທ ໑ ນາງກອນແກ້ວ ໑ ເຖິງ ປີຄ.ສ.໑໘໐໗ ເຈົ້າພຣະວິໄຊຍະຣາດເຖິງແກ່ກັມ ຣັຖບານໄທຈຶ່ງຕັ້ງ ເຈົ້າຫນໍ່ເມືອງ (ບຸດເຈົ້າໄຊຍະກຸມມານ) ໃຫ້ເປັນເຈົ້ານະຄອນຈຳປາສັກແຕ່ເຈົ້າຫນໍ່ເມືອງເປັນຢູ່ໄດ້ ໓ ວັນກໍຕາຍ ປີ ຄ.ສ.໑໘໐໘ ພຣະຍາກະລາໂຫມຣາຊເສນາ ຂ້າຫລວງໄທ ທີ່ຂຶ້ນມາເຜົາສົບພຣະເຈົ້າວິໄຊຍະຣາດ ເວລາກັບໄປ ກຸງເທບໄດ້ເຊີນເອົາພຣະແກ້ວຜລຶກ ທີ່ເຈົ້າສ້ອຍສີສມຸດໄດ້ມາຈາກຂ້າບ້ານສົມປ່ອຍນາຍອນ ລົງໄປຖວາຍພຣະເຈົ້າແຜ່ນດິນ ກຸງເທບດ້ວຍ.

ພຣະພຸທຮູບແກ້ວຜລຶກອົງນີ້ ສູງ ໑໒ ນິ້ວເສດ ຫນ້າຕັກກວ້າງ ໙ ນິ້ວ ພຣະເຈົ້າແຜ່ນດິນໄທຈຶ່ງຖວາຍນາມວ່າ " ພຣະພຸທບຸສຍະຣັດຈັກກະພັດພິມົນມະນີໄມ " ຍັງຢູ່ໃນພຣະຣາຊວັງ ກຸງເທບຈົນທຸກວັນນີ້.

## (໓) ສມັຍເຈົ້າໜານ້ອຍ

ເຖິງປີ ຄ.ສ.໑໘໑໓ ຣັຖບານໄທຈຶ່ງຕັ້ງເຈົ້າໜານ້ອຍ (ບຸດເຈົ້າຣາຊວົງສຸຣິໂຍ ຫລານເຈົ້າສ້ອຍສີສມຸດ) ເປັນເຈົ້າຈຳປາສັກໃຫ້ເຈົ້າທັມມະກິດຕິກາ (ບຸດເຈົ້າອຸຣາດທັມມະເທໂວ) ເປັນອຸປຣາດເຈົ້າໜານ້ອຍ ກັບ ເຈົ້າທັມມະກິດຕິກາ ບໍ່ຖືກກັນ ຣັຖບານໄທ ຈຶ່ງເອົາເຈົ້າທັມມະກິດຕິກາໄປຂັງໄວ້ກຸງເທບ.

ເຖິງປີ ຄ.ສ.໑໘໑໔ ມີພຶກຂຸອະລັດຊີຕົນນຶ່ງຊື່ ສາ ຢູ່ພູກະດົງໂງງ ອ້າງຕົນວ່າເປັນຜູ້ວິເສດ ໂດຍເອົາແກ້ວສ່ອງເອົາໄຟໃນຕາເວັນ ແລ້ວຕົວະຊາວບ້ານວ່າ ຕົນຮຽກເອົາໄຟຟ້າໄດ້ ຈະໃຫ້ໄໝ້ບ້ານເມືອງກໍໄດ້ ພວກຊາວບ້ານຫລົງເຊື່ອ ຍອມເຂົ້າເປັນສິດເປັນອັນມາກ ເມື່ອພຶກຂຸໄດ້ພັກພວກຫລາຍແລ້ວກໍຕັ້ງເປັນກອງທັບຍົກເຂົ້າຕີນະຄອນຈຳປາສັກ ເຈົ້າໜານ້ອຍສູ້ບໍ່ໄດ້ເລີຍແຕກໜີເຂົ້າປ່າ ອ້າຍສາກໍເຂົ້າເມືອງໄດ້ ແລະ ເອົາໄຟເຜົາເມືອງເສັຽ ຣັຖບານໄທໄດ້ຊາບ ຈຶ່ງໃຫ້ພຣະຍາມະຫາອຳມາດ (ປ້ອມ) ກັບພຣະຍາສອນສຳແດງຍົກທັບມາຜາບອ້າຍສາ ອ້າຍສາຮູ້ຈຶ່ງຫລົບໜີໄປຢູ່ພູຍາປູແຂວງອັດຕະປື ແມ່ທັບໄທຈຶ່ງຄຸມເອົາເຈົ້າໜານ້ອຍລົງໄປ ກຸງເທບ ເຈົ້າໜານ້ອຍເລີຍເຖິງແກ່ກັມຢູ່ກຸງເທບນັ້ນເອງ.

ເຈົ້າໜານ້ອຍມີບຸດຊາຍ ໖ ຄົນ ຄື: ເຈົ້າຊຸມ ໑ ເຈົ້າບຸດ ໑ ເຈົ້າແສງ ໑ ເຈົ້າບຸນ ໑ ເຈົ້າຈຸ່ມ ໑ ເຈົ້າງູ ໑.

ເວລານັ້ນເຈົ້າຣາຊບຸດໂຍ້ (ໂອຣົດຂອງພຣະເຈົ້າອະນຸ) ໄດ້ຍົກທະຫານໄປຜາບອ້າຍສາ ແລະຈັບອ້າຍສາໄດ້ສົ່ງໄປກຸງເທບ ສະນັ້ນ ເຈົ້າຣາຊບຸດໂຍ້ ຈຶ່ງໄດ້ເປັນເຈົ້ານະຄອນຈຳປາສັກ ໃນເວລາຕໍ່ມາ.

## (໔) ສມັຍເຈົ້າຣາຊບຸດໂຍ້

ເຖິງປີ ຄ.ສ.໑໘໑໗ ສົມເດັດພຣະເຈົ້າອະນຸ ຈຶ່ງຂໍໃຫ້ເຈົ້າຣາຊບຸດໂຍ້ ໄປເປັນເຈົ້ານະຄອນຈຳປາສັກ ແທນເຈົ້າໜານ້ອຍ ແລະ ໃຫ້ເຈົ້າຄຳປ້ອມໄປເປັນເຈົ້າອຸປຣາດ ເຈົ້າຣາຊບຸດໂຍ້ໄດ້ສ້າງແປງນະຄອນຈຳປາສັກ ໃຫ້ມີກຳແພງເມືອງ ແລະ ປ້ອມຢ່າງແຂງແຮງ ທັງໄດ້ປັບປຸງແປງທັມມຣົມເກັບສ່ວຍຂຶ້ນໃໝ່ ຢູ່ມາເຖິງ ຄ.ສ.໑໘໒໔ ເມື່ອພຣະເຈົ້າອະນຸໄດ້ຄິດທຳການກູ້ອິສຣະພາບ ເຈົ້າຣາຊບຸດໂຍ້ ກໍໄດ້ເປັນກຳລັງແຂງແຮງທາງນະຄອນຈຳປາສັກ ຄືໄດ້ຍົກທັບລົງໄປຕີເອົາເມືອງສັງຂະ ເມືອງຂຸຂັນ ຈົນເຖິງເມືອງສຸຣິນ ແລ້ວກວາດເອົາຄອບຄົວເມືອງເຫລົ່ານັ້ນຂຶ້ນມາໄວ້ນະຄອນຈຳປາສັກ ແຕ່ເມື່ອກອງທັບໄທຕີທັບວຽງຈັນແຕກແລ້ວ ເຈົ້າຮຸຍ ເຊິ່ງເປັນບຸດຂອງເຈົ້າໂອ (ຫລານເຈົ້າອຸປຣາດທັມມະເທໂວ) ໄດ້ນຳຈັບເອົາເຈົ້າຣາຊບຸດໂຍ້ສົ່ງໃຫ້ແມ່ທັບໄທ ສ່ວນເຈົ້າອຸປຣາດຄຳປ້ອມນັ້ນໜີໄປຕາຍຢູ່ປ່າ.

## (໕) ສມັຍ ເຈົ້າຮຸຍ

ເມື່ອແລ້ວສົງຄາມວຽງຈັນກັບໄທແລ້ວ ຣັຖບານໄທ ຈຶ່ງຕັ້ງເຈົ້າຮຸຍ ໃຫ້ເປັນເຈົ້ານະຄອນຈຳປາສັກ

ໃຫ້ເຈົ້ານາກເປັນອຸປຣາດແລ້ວບັງຄັບໃຫ້ເຈົ້າຮຸຍສົ່ງສ່ວຍໃຫ້ປະເທດໄທປີລະ ໑໐໐ ຊັ່ງ (໘ ພັນບາທ)

ແລະເຖິງສາມປີໃຫ້ເອົາເຄື່ອງຣາຊບັນນາການລົງໄປຖວາຍກຸງເທບ ເທື່ອນຶ່ງ ຕໍ່ມາເຖິງ ໑໘໓໗ ເກີດໄຟໄໝ້ນະຄອນຈຳປາສັກເຈົ້າຮຸຍ ຈຶ່ງພາຣາສດອນ ອົພຍົບມາຕັ້ງເມືອງຢູ່ບ້ານຫີນຮອດ.

ເຈົ້າຮຸຍມີບຸດຊາຍ ໗ ຄົນ ຄື: ເຈົ້າໂສມ ໑ ເຈົ້າອິນ ໑ ເຈົ້າຄຳໃຫຍ່ ໑ ເຈົ້າຄຳສຸກ ໑ ເຈົ້າຄຳສຸຍ ໑ ເຈົ້ານ້ອຍ ໑ ເຈົ້າພິມມະ ໑, ມີບຸດຍິງ ໗ ຄົນຄື: ນາງພິມ ໑ ນາງເຂັມ ໑ ນາງທູມ ໑ ນາງຄຳສິງ ໑ ນາງໄຂ່ ໑ ນາງຄຳແພງ ໑ ນາງດວງຈັນ ໑. ເຈົ້າຮຸຍຄອງເມືອງມາເຖິງ ຄ.ສ.໑໘-໔໑ ກໍເຖິງແກ່ກັມ ອາຍຸໄດ້ ໖໑ ປີ.

## (໖) ສມັຍ ເຈົ້ານາກ

ເມື່ອເຈົ້າຮຸຍເຖິງແກ່ກັມແລ້ວ ເຈົ້າອຸປຮາດນາກກໍໄດ້ເປັນເຈົ້ານະຄອນຈຳປາສັກ ໃນປີ ຄ.ສ.໑໘-໔໑ ນັ້ນເອງ ແລວເຈົ້ານາກຕັ້ງເຈົ້າເສືອ (ບຸດເຈົ້າສີມ) ເປັນອຸປຮາດ ໃຫ້ເຈົ້າເສັມເປັນເຈົ້າຣາຊວົງ ແລະໃຫ້ເຈົ້າສາເປັນຣາຊບຸດ (ເຈົ້າເສັມ ກັບ ເຈົ້າສາ ເປັນບຸດເຈົ້ານາກ) ເຈົ້ານະຄອນຈຳປາສັກນາກມີບຸດຊາຍ ໖ ຄົນ ຄື: ເຈົ້າຣາຊວົງເສັມ ໑ ເຈົ້າຣາຊບຸດສາ ໑ ເຈົ້າໂພທິສານ (ໜີ) ໑ ເຈົ້າອິນທະຈິດ(ບຸດ) ໑ ເຈົ້າຄຳສິງ ໑ ເຈົ້າຄຳນ້ອຍ ໑, ບຸດຍິງ ໔ ຄົນ ຄື: ເຈົ້ານາງດວງຈັນ ໑ ເຈົ້າສີມ ໑ ເຈົ້າຈຽງ ໑ ເຈົ້າເຂັມ ໑. ປີ ຄ.ສ.໑໘໕໑ ເຈົ້ານາກລົງໄປກຸງເທບ ເລີຍປ່ວຍເປັນໂຣກອະຫິວາຕາຍຢູ່ກຸງເທບ ເມື່ອອາຍຸໄດ້ ໗໖ ປີ ເຖິງປີ ຄ.ສ.໑໘໕໖ ຣັຖບານໄທຈຶ່ງຕັ້ງເຈົ້າບົວ ໃຫ້ເປັນເຈົ້ານະຄອນຈຳປາສັກ ແຕ່ເຈົ້າບົວຍັງບໍ່ໄດ້ມາຄອງເມືອງ ເລີຍເກີດອາພາດ ປ່ວຍຕາຍຢູ່ໃນ ກຸງເທບ ນັ້ນເອງ.

## (໗) ສມັຍ ເຈົ້າຍຸຕິທັມທອນ (ຄຳໃຫຍ່)

ເຖິງ ຄ.ສ.໑໘໕໕ ຣັຖບານໄທຈຶ່ງຕັ້ງ ເຈົ້າຄຳໃຫຍ່ (ບຸດເຈົ້າຮຸຍ) ເປັນເຈົ້ານະຄອນຈຳປາສັກ ຂນານນາມວ່າ ເຈົ້າຍຸຕິທັມທອນ ໃຫ້ເຈົ້າອູເປັນອຸປຮາດ ເຈົ້າໜີ (ບຸດເຈົ້າເກດ) ເປັນຣາຊວົງເຈົ້າອິນທະຈິດ (ບຸດເຈົ້ານາກ) ເປັນຣາຊບຸດ ເຈົ້າສຸຣິຍະ (ບົງ) ນ້ອງຊາຍເຈົ້າຮຸຍ ເປັນເຈົ້າສີສຸຣາດ.

ເຈົ້າຍຸຕິທັມທອນ (ຄຳໃຫຍ່) ຄອງເມືອງໄດ້ ໒ ປີ ກໍເຖິງແກ່ກັມ ເມື່ອອາຍຸໄດ້ ໒໗ ປີ ມີບຸດຍິງ ໒ ຄົນ ຄື: ເຈົ້າຄຳຜິວ ໑ ເຈົ້າມາລາ ໑.

## (໘) ສມັຍ ເຈົ້າຍຸຕິທັມທອນ (ຄຳສຸກ)

ເຖິງປີ ຄ.ສ.໑໘໖໒ ເຈົ້າຄຳສຸກ ໄດ້ຂຶ້ນເປັນເຈົ້ານະຄອນຈຳປາສັກ ມີນາມວ່າ ເຈົ້າຍຸຕິທັມທອນ. ເຈົ້າຍຸຕິທັມທອນ ຕັ້ງເຈົ້າແສງ (ບຸດເຈົ້າໜານ້ອຍ) ເປັນອຸປຮາດ ໃຫ້ເຈົ້າໜໍ່ຄຳ(ບຸດເຈົ້າເສືອຫລານເຈົ້າອະນຸ) ເປັນຣາຊວົງ ເຖິງປີ ຄ.ສ.໑໘໖໖ ເຈົ້າຍຸຕິທັມທອນ ຄຳສຸກ ຈຶ່ງຍ້າຍຈາກເມືອງເກົ່າຫີນຮອດ

ໄປຕັ້ງເມືອງຢູ່ລະຫວ່າງໂພນບົກ ກັບ ວັດລະຄອນ ຣິມຝັ່ງຂອງ ທາງຕາເວັນຕົກ ໃຫ້ເປັນນະຄອນຈຳປາສັກ ຕໍ່ມາຈົນເທົ່າກາລະວັນນີ້.

## ບົດທີ ໙

## ລາວຂຶ້ນຢູ່ໃນຄວາມປົກຄອງຝຣັ່ງເສດ

## (ຄ.ສ. ໑໘໙໓)

ຣາຊອານາຈັກລ້ານຊ້າງທີ່ແຕກກັນອອກເປັນ ໓ ເຈົ້າແຕ່ປີ ຄ.ສ. ໑໗໐໗ ແລະຕໍ່ມາເຖິງປີ ຄ.ສ. ໑໗໗໘ ທັງ ໓ ອານາຈັກກໍເສັຽອິສຣະພາບ ເສັຽເອກຣາດ ຕົກເປັນເມືອງຂຶ້ນຂອງສຢາມພ້ອມກັນ ແຕ່ກໍຍັງມີເຈົ້າເປັນຜູ້ປົກຄອງເມືອງເບິ່ງແຍງສຸກທຸກຂອງໄພ່ຟ້າປະຊາກອນຕໍ່ມາຢູ່ທຸກ ໆ ເມືອງ ຫລື ອານາຈັກ ຄັນມາເຖິງປີ ຄ.ສ. ໑໘໒໖ ພຣະເຈົ້າອະນຸແຫ່ງນະຄອນວຽງຈັນໄດ້ຄິດທຳການກູ້ອິສຣະພາບ ແຕ່ບໍ່ເປັນຜົນສຳເຣັດ ພຣະອົງຈົນຕລອດພຣະຍາຕິກາວົງວານຈຶ່ງຖືກຂ້າທຳລາຍເສັຽຫມົດ ແລະ ນະຄອນວຽງຈັນທີ່ເປັນຈຸດສູນກາງຂອງຣາຊອານາຈັກລາວລ້ານຊ້າງທັງຫມົດກໍຖືກທຳລາຍເຜົາຜານຈົນເປັນເມືອງຮ້າງເຫລືອແຕ່ຊາກກຳແພງເມືອງທີ່ຫັກພັງ ສ່ວນນະຄອນຫລວງພຣະບາງນັ້ນຍັງມີເຈົ້ານາຍວົງກະສັດໄດ້ນັ່ງເມືອງສືບຕໍ່ກັນມາບໍ່ຂາດ ໃນຖານະເປັນເມືອງຂຶ້ນຂອງສຢາມ ແລະກະສັດອົງສຸດທ້າຍທີ່ຂຶ້ນກັບສຢາມນັ້ນກໍຄື ພຣະເຈົ້າສັກກະຣິນທຣນັ້ນເອງ ສ່ວນນະຄອນຈຳປາສັກ ເຈົ້າຣາຊດະໄນ ຫລຸຍເປັນເຈົ້າຄອງນະຄອນຕໍ່ມາ.

ຄັນມາເຖິງປີ ໑໘໙໓ ຝຣັ່ງເສດມາໄດ້ປະເທດວຽດນາມແລະປະເທດຂະເມນເປັນຫົວເມືອງຂຶ້ນແລ້ວກໍຂຍາຍອິດທິພົນເຂົ້າມາເອົາດິນແດນລາວທີ່ຢູ່ໃຕ້ອຳນາດຂອງປະເທດສຢາມ.

ມູນເຫດທີ່ຝຣັ່ງເສດຈະໄດ້ເຂົ້າມາເອົາປະເທດລາວນັ້ນ ກໍເນື່ອງຈາກວ່າ ເວລານັ້ນ ຊາວອັງກິດໄດ້ຂຍາຍອຳນາດເຂົ້າມາເອົາປະເທດພະມ້າ ແລະ ປະເທດມາເລເຊັຽ ອັນຢູ່ຕິດປະເທດສຢາມທາງດ້ານຕາເວັນຕົກຫມົດແລ້ວ ແລະກຳລັງຊອກຊ່ອງທາງຈະກືນເອົາປະເທດສຢາມອີກຢູ່ ຝຣັ່ງເສດເຫັນດັ່ງນັ້ນ ກໍຢາກຂຍາຍອິດທິພົນຂອງຕົນເຂົ້າໄປໃນດິນແດນສຢາມຄືກັນ.

ດັ່ງນັ້ນຝຣັ່ງເສດກັບອັງກິດຈຶ່ງໄດ້ທຳສົນຍາກັນລັບ ໆ ສະບັບນຶ່ງເພື່ອແບ່ງປັນເອົາດິນແດນປະເທດສຢາມຄື ທາງຝາກຕາເວັນຕົກແມ່ນ້ຳເຈົ້າພຣະຍາໃຫ້ເປັນດິນແດນຂອງອັງກິດ ສ່ວນທາງຝາກແມ່ນ້ຳເຈົ້າພຣະຍາດ້ານຕາເວັນອອກໃຫ້ເປັນດິນແດນຂອງຝຣັ່ງເສດ ເມື່ອຕົກລົງກັນດັ່ງນີ້ແລ້ວ ອັງກິດກໍແຮກບຸກແທຽເອົາດິນແດນໄທຍທາງພາກໃຕ້ອັນມີຄົນພົ້ນເມືອງເປັນແຂກມະລາຍູກ່ອນ ຝ່າຍຝຣັ່ງເສດກໍເຂົ້າບຸກແທຽເອົາດິນແດນຫົວເມືອງຂຶ້ນຂອງໄທຍ ຄືດິນແດນປະເທດລາວທາງພາກຕາເວັນອອກ.

ຂໍ້ອ້າງຂັ້ນຕົ້ນທີ່ຝຣັ່ງເສດຈະບຸກແທຽເອົາດິນແດນລາວ (ທີ່ຂຶ້ນກັບໄທ) ກໍອ້າງວ່າ ດິນແດນລາວນີ້ເປັນສ່ວນນຶ່ງຂອງປະເທດວຽດນາມ ຫລືເຄີຍເປັນເມືອງຂຶ້ນຂອງວຽດນາມມາກ່ອນ ເມື່ອຝຣັ່ງເສດໄດ້ປະເທດວຽດນາມແລ້ວ ກໍຄວນຕ້ອງໄດ້ປະເທດລາວດ້ວຍ (ຂໍ້ອ້າງຝຣັ່ງເສດດັ່ງກ່າວນີ້ ລາງທີຝຣັ່ງເສດ ຫລືພວກວຽດນາມເອງ ຈະຖືເອົາຕອນພຣະເຈົ້າອະນຸໄປຂໍຄວາມຊ່ວຍເຫລືອຈາກວຽດນາມກໍເປັນໄດ້) ດັ່ງນັ້ນຝຣັ່ງເສດຈຶ່ງເອົາທະຫານວຽດນາມ ແລະທະຫານຂະເມນ ລ່ວງລ້ຳເຂດປົກຄອງຂອງສຢາມເຂົ້າມາທາງແມ່

ນ້ຳຂອງ ຈຶ່ງໄດ້ມາປະທະກັບກອງກຳລັງຂອງໄທ ຊຶ່ງມີພົນພັກສ່ວນຫລາຍແມ່ນຄົນລາວທາງພາກອີສານນັ້ນ ເອງ ແລ້ວກໍເກີດເປັນກະຣະນີພິພາດລະຫວ່າງໄທ ກັບຝຣັ່ງເສດຂຶ້ນຈົນໃນທີ່ສຸດຝຣັ່ງໄດ້ເອົາເຮືອຮົບ ໓ ລຳແລ່ນເຂົ້າມາໃນແມ່ນ້ຳເຈົ້າພຣະຍາ ຕັ້ງປືນໃຫຍ່ແນໃສ່ພຣະຣາຊວັງ ບັງຄັບໃຫ້ສຍາມຍອມຍົກດິນແດນ ລາວທາງຝັ່ງຊ້າຍຂອງແມ່ນ້ຳຂອງ (ຊຶ່ງຝຣັ່ງເສດອ້າງວ່າເຄີຍເປັນຂອງແກວນັ້ນ) ພ້ອມທັງເກາະດອນ ຕ່າງ ໆ ໃນແມ່ນ້ຳຂອງໃຫ້ແກ່ຝຣັ່ງເສດໃນປີ ໑໘໙໓ ແລະເງິນປັບໃໝອີກ ໓.໐໐໐.໐໐໐ (ສາມລ້ານ) ບາທ ໃນສມັຍນັ້ນ ຕໍ່ຈາກນັ້ນມາອີກ ໑໐ ປີຄືເຖິງ ຄ.ສ.໑໙໐໓ ຝຣັ່ງເສດຈຶ່ງທວງທາວເອົາແຂວງນະ ຄອນຈຳປາສັກກັບແຂວງໄຊຍບູຣີທີ່ຢູ່ທາງຝັ່ງຂວາຂອງແມ່ນ້ຳຂອງໄປຈາກຣັຖບານສຍາມອີກ.

ຄວາມຈິງດິນແດນລາວ ຫລື ຣາຊອານາເຂດຂອງລາວແຕ່ດັ້ງເດີມນັ້ນກວມທັງ ໒ ຝັ່ງແມ່ນ້ຳຂອງ ມີໜ້າດິນກວ້າງຂວາງຫລາຍທີ່ສຸດ ແຕ່ຝຣັ່ງເສດຍາດແຍ່ງເອົາມາຈາກສຍາມນັ້ນມີພຽງເສດ ໑ ສ່ວນສາມ ຂອງໜ້າດິນທັງໝົດ ແລະ ສ່ວນທີ່ຝຣັ່ງເສດໄດ້ມານັ້ນກໍມີແຕ່ພູເຂົາເລົາກາ ປະຊາຊົນພົລເມືອງກໍມີແຕ່ໜ້ອຍ ດຽວ ສ່ວນທີ່ຕົກເປັນຂອງປະເທດສຍາມນັ້ນມີຫລາຍກວ່າຕັ້ງ ໓ ເທົ່າ ແລະ ໜ້າດິນກໍມີແຕ່ບ່ອນຮາບພຽງພົລ ເມືອງກໍໜານແໜ້ນ ຊຶ່ງດຽວນີ້ກ່າວກັນວ່າ ຈຳເພາະພາກອີສານນັ້ນມີເຖິງ ໑໔ ລ້ານຄົນແລ້ວ ຈຶ່ງເກີດ ມີບັນຫາຂຶ້ນວ່າ ເຫດໃດຝຣັ່ງເສດຈຶ່ງບໍ່ບຸກແຫຼ ຫລື ທວງທາວເອົາດິນແດນອັນເປັນອານາເຂດຂອງລາວ ແຕ່ບູຮານທັງໝົດ ເປັນຫຍັງຈຶ່ງຍິນດີເອົາຈຳເພາະຝັ່ງຊ້າຍເທົ່ານັ້ນ ເຖິງແມ່ນທາງຝັ່ງຂວາກໍເອົາຈຳເພາະ ແຂວງຈຳປາສັກກັບແຂວງໄຊຍບູຣີທີ່ເຄີຍຂຶ້ນກັບນະຄອນຫລວງພຣະບາງເທົ່ານັ້ນ ຄຳຕອບບັນຫານີ້ກໍແມ່ນຝຣັ່ງ ເສດເອງຈະເປັນຜູ້ຮູ້ຈັກດີ ແຕ່ຖ້າຈະໃຫ້ຂ້າພະເຈົ້າຕອບແລ້ວ ຂ້າພະເຈົ້າກໍຕອບໄດ້ດັ່ງນີ້:

໑. ຝຣັ່ງເສດບໍ່ຢາກຂຍາຍອິດທິພົນເຂົ້າໄປໃນດິນແດນສຍາມໃຫ້ເລິກຫລາຍ ເພາະຢ້ານໄປປະທະ ກັບອັງກິດ ຜູ້ເປັນຄູ່ແຂ່ງຂັນໃນເວລານັ້ນ.

໒. ພັກຝ່າຍຄ້ານໃນສະພາຂອງຝຣັ່ງເສດບໍ່ເຫັນດີເພາະເຫັນວ່າເປັນການເປືອງງົບປະມານຫລາຍ ແລະຈະບໍ່ໄດ້ກຳໄລ.

໓. ເຫັນວ່າ ດິນແດນພາກອີສານສ່ວນທີ່ເຫລືອຢູ່ນັ້ນເປັນເຂດຂອງວຽງຈັນ ເມື່ອວຽງຈັນບໍ່ມີເຈົ້າ ປົກຄອງພໍຈະຕໍ່ວ່າອ້າງເອື້ອຍເປັນຫລັກຖານແລ້ວ ຝຣັ່ງເສດກໍບໍ່ທານອ້າງ ຫລືຕໍ່ວ່າເອົາ ແລະການທີ່ຝຣັ່ງ ເສດທຳດັ່ງນີ້ຈຶ່ງເປັນການເສັຽປໂຍດໃຫ້ແກ່ລາວເປັນອັນມາກ ເພາະປະຊາຊົນທັງສອງຝັ່ງນ້ຳຂອງແມ່ນ ເຊື້ອຊາດເຜົ່າພັນດຽວກັນ ແຕ່ໃນທຸກວັນນີ້ຕ້ອງໄດ້ມາແຍກກັນຝ່າຍນຶ່ງເປັນລາວ ແລະ ອີກຝ່າຍນຶ່ງເປັນໄທ.

## <u>ຝຣັ່ງເສດຈັດຕັ້ງການປົກຄອງລາວ</u>

ເມື່ອຝຣັ່ງເສສໄດ້ດິນແດນລາວທາງຝັ່ງຊ້າຍແມ່ນ້ຳຂອງມາຈາກໄທຍຕາມສັນຍາລົງວັນທີ່ ໓ ຕຸລາ ປີ ໑໘໙໓ ແລ້ວ ຝຣັ່ງເສດກໍບໍ່ໄດ້ຟ້າວຟັ່ງຈັດການໃຫ້ຈະເຣີນພໍທີ່ໃດ ເປັນແຕ່ໄດ້ແບ່ງການປົກຄອງລາວອອກ ເປັນ ໒ ເຂດເທົ່ານັ້ນຄື:

ກ. ເຂດເໜືອ ອັນເປັນເຂດນະຄອນຫລວງພຣະບາງແຕ່ດັ້ງເດີມ ຝຣັ່ງເສດຍົກໃຫ້ເປັນສ່ວນນຶ່ງ ຄືໃຫ້ເປັນປະເທດຢູ່ໃນຄວາມອາຣັກຂາຂອງຝຣັ່ງເສດ ( Protectorat ) ໂດຍມີພຣະເຈົ້າແຜ່ນດິນຫລວງພຣະບາງເປັນຜູ້ຈັດການປົກຄອງເອງ ພາຍໃຕ້ການຄອບຄຸມເບິ່ງແຍງຂອງຣັຖບານຝຣັ່ງເສດອີກຕໍ່ນຶ່ງ.

ຂ. ພາກໃຕ້ ນັບແຕ່ແຂວງວຽງຈັນລົງໄປຈົນສຸດແດນ ຝຣັ່ງເສດຈັດການປົກຄອງເອງໂດຍເອົາເປັນປະເທດຫົວເມືອງຂຶ້ນໂດຍກົງ ( Colonie ).

ແນວໃດກໍດີ ເຂດປົກຄອງທັງສອງນີ້ເຖິງແມ່ນຈະຕ່າງກັນໃນດ້ານການເມືອງແດ່ຈັກໜ່ອຍກໍຕາມ ເຣື່ອງສ່ວນໃຫຍ່ແລ້ວກໍຖືວ່າເປັນປະເທດດຽວກັນຣຽກວ່າ ປະເທດລາວ ເຂົ້າໂຮມຢູ່ໃນອິນດູຈີນຂອງຝຣັ່ງເສດຣວມກັນກັບປະເທດຂະເມນ, ໂກແຊງຈີນ, ອານາມ ແລະ ຕັງແກງນັ້ນເອງ ໂດຍທີ່ປະເທດເຫລົ່ານີ້ແຕ່ລະປະເທດກໍມີຊາວຝຣັ່ງເສດຄົນນຶ່ງເປັນຂ້າຫລວງປົກຄອງ ຂ້າຫລວງນັ້ນຂຶ້ນຕໍ່ຂ້າຫລວງໃຫຍ່ຝຣັ່ງເສດປະຈຳອິນດູຈີນອີກ ແລະຂ້າຫລວງໃຫຍ່ປະຈຳອິນດູຈີນນັ້ນກໍຂຶ້ນຕໍ່ຣັຖມົນຕີອານານິຄົມອີກຕໍ່ນຶ່ງ.

ໃນສມັຍຝຣັ່ງເສດປົກຄອງຢູ່ນັ້ນ ຣາຊອານາຈັກລາວໄດ້ແບ່ງອອກເປັນ ໑໒ ແຂວງໃນປີ ໑໙໑໑ ຄື ໑.ແຂວງວຽງຈັນ ໒.ແຂວງຫລວງພຣະບາງ ໓.ແຂວງຫົວຂອງ ໔.ແຂວງຕຣັນນິນ (ຊຽງຂວາງ) ໕.ແຂວງຄຳມ່ວນ ໖.ແຂວງສາລະວັນ ໗.ແຂວງຈຳປາສັກ ໘.ແຂວງເມືອງໂຂງ ໙.ແຂວງສວັນນະເຂດ ໑໐.ແຂວງອັດຕະປື ໑໑.ແຂວງເມືອງຊູ ໑໒.ແຂວງຫົວພັນ.

ພ້ອມ ໆ ກັນນີ້ຝຣັ່ງເສດກໍໄດ້ຈັດຕັ້ງໂຮງພຍາບານຂຶ້ນຕາມເມືອງໃຫຍ່ ໆ ຄື ທີ່ວຽງຈັນ ຫລວງພຣະບາງ ເມືອງປາກຫີນບູນ ຊຽງຂວາງ ແລະ ເມືອງໂຂງ ເທົ່ານັ້ນ ສ່ວນການສຶກສານັ້ນນັບວ່າຫລ້າຊ້າຫລາຍ ຝຣັ່ງເສດໄດ້ຈັດຕັ້ງໂຮງຮຽນຊັ້ນປະຖົມສຶກສາຂຶ້ນພຽງເລັກນ້ອຍ ຕໍ່ມາຈຶ່ງໄດ້ຈັດຕັ້ງໂຮງຮຽນຂັ້ນວິທຍາລັຍ (ມັທຍົມ) ຂຶ້ນທີ່ວຽງຈັນ ຫລວງພຣະບາງ ແລະ ເມືອງໂຂງເທົ່ານັ້ນກ່ອນ.

ດ້ານການທະຫານ ກໍຈັດຕັ້ງກອງທະຫານທ້ອງຖິ່ນຂຶ້ນຊື່ ໆ ແລະໃຫ້ມີຢູ່ຕາມແຂວງທີ່ກັນດານເທົ່ານັ້ນໂດຍແມ່ນຝຣັ່ງເສດເປັນນາຍບັງຄັບ ແລະ ຍັງບໍ່ມີໂຮງຮຽນນາຍທະຫານເລີຍ ສະນັ້ນຄົນລາວທີ່ອົດເມື່ອຍເປີດໝາຍຄວາມຫຍຸ້ງຍາກທາງການເມືອງມາແຕ່ພໍ່ແຕ່ແມ່ແລ້ວນັ້ນຈຶ່ງບໍ່ມັກເປັນທະຫານ ແລະ ຝຣັ່ງເສດເອງກໍບໍ່ໄດ້ສົ່ງເສີມພໍປະມານເລີຍ.

ສ່ວນດ້ານການຄະມະນາຄົມ ແລະ ຖນົນຫົນທາງນັ້ນ ກໍນັບວ່າຊັກຊ້າ ແລະ ຣັດໄດ້ຍາກຫລາຍ ເພາະດິນແດນລາວປະກອບໄປດ້ວຍພູຜາປ່າໄມ້ຫລາຍ ທາງຈາກແຂວງຫາເມືອງ ແລະຈາກເມືອງຫາບ້ານເກືອບບໍ່ມີນອກຈາກທາງຫລວງເລກທີ່ ໑໓ ເສັ້ນດຽວທີ່ຕັດຈາກວຽງຈັນລົງໄປໃຕ້ເພື່ອຕິດຕໍ່ໃສ່ກັບວຽດນາມໃຕ້ເທົ່ານັ້ນ.

ໂຮມຄວາມແລ້ວ ຝຣັ່ງເສດປົກຄອງລາວຢູ່ໂດຍປົກຕິສຸກ ເປັນເວລາພຽງ ໔໗ ປີ ຄື ແຕ່ປີ ຄ.ສ ໑໘໙໓ ມາເຖິງປີ ໑໙໔໐ ຕໍ່ຈາກນັ້ນມາກໍມີເຣື່ອງຫຍຸ້ງຍາກເກີດຂຶ້ນ ດັ່ງຈະກ່າວຕໍ່ໄປ:

<u>ໄທຍທວງເອົາລາວຄືນ</u>

ໃນປີ ຄ.ສ.໑໙໔໐ ເມື່ອສົງຄາມໂລກຄັ້ງທີ່ ໒ ເກີດຂຶ້ນແລ້ວ ແລະເວລານັ້ນເຢີຣະມັນເປັນຝ່າຍມີຊັຍຄວບຄຸມເອົາປະເທດຝຣັ່ງເສດໄວ້ໄດ້ ຂນະນັ້ນປະເທດໄທເຊິ່ງໄດ້ສະແດງຕົນເປັນຝ່າຍເຢີຣະມັນ ແລະ ຍີ່ປຸ່ນ ຈຶ່ງໄດ້ຍື່ນຂໍ້ສເນີຕໍ່ຝຣັ່ງເສດວ່າ ຖ້າຝຣັ່ງເສດບໍ່ສາມາດຈະຮັກສາອິນດູຈີນໄວ້ໄດ້ຂໍໃຫ້ສົ່ງດິນລາວ ແລະ ຂເມນຄືນໃຫ້ໄທ ແຕ່ຄຳສເນີນີ້ ຝຣັ່ງເສດບໍ່ຕອບ ດັ່ງນັ້ນໄທ ກັບຝຣັ່ງເສດຈຶ່ງໄດ້ເກີດພິພາດຣົບກັນຂຶ້ນ ຈົນໃນທີ່ສຸດເຖິງວັນທີ່ ໙ ແມປີ ໑໙໔໑ ຝຣັ່ງເສດກໍໄດ້ຍິນຍອມຍົກແຂວງຈຳປາສັກກັບແຂວງປາກລາຍທີ່ຢູ່ທາງຝັ່ງຂວາແມ່ນ້ຳຂອງ ຄືນໃຫ້ແກ່ປະເທດໄທ ໄປ ຕາມຄວາມຕັດສິນເລື່ອໂລມຂອງປະເທດຍີ່ປຸ່ນ. ຕໍ່ຈາກນັ້ນມາອີກບໍ່ເຫິງ ຄືເຖິງປີ ຄ.ສ໑໙໔໒ ກໍເກີດ ສົງຄາມມະຫາອາເຊັຽບູຣະພາຂຶ້ນອີກໂດຍທີ່ປະເທດຍີ່ປຸ່ນໄດ້ປະກາດທຳສົງຄາມກັບຝ່າຍອະເມຣິກາ ແລະ ອັງກິດແລ້ວຍີ່ປຸ່ນກໍຍົກທັບເຂົ້າຍຶດເອົາປະເທດອິນດູຈີນທັງໝົດຈາກຝຣັ່ງເສດ ແລະ ຂັບໄລ່ໃຫ້ຝຣັ່ງເສດແຕກໜີໄປຈາກແຜ່ນດິນລາວ ວັນທີ່ ໙ ມາກ ປີ ຄ.ສ ໑໙໔໕ ຄັນມາເຖິງ ວັນທີ່ ໑໔ ເດືອນອູ໊ດຕາມ ໑໙໔໕ ນັ້ນເອງ ປະເທດຍີ່ປຸ່ນກໍໄດ້ອ່ອນຍອມຕໍ່ຝ່າຍສັມພັນທະມິດ ເມື່ອຍີ່ປຸ່ນຍອມແລ້ວ ໄທຍເຊິ່ງເຂົ້າກັບຝ່າຍຍີ່ປຸ່ນກໍຈຳເປັນໄດ້ສົ່ງດິນແດນທີ່ໄດ້ໄປແຕ່ປີ ໑໙໔໑ ນັ້ນຄືນໃຫ້ຝຣັ່ງເສດ. ແລ້ວພວກຝຣັ່ງເສດກໍຈະກັບຄືນມາ ມີອຳນາດປົກຄອງລາວອີກຕາມເດີມ ໃນຂນະນັ້ນມີລາວພວກຮັກຊາດຢ່າງແຮງກ້າພວກນຶ່ງ ອັນມີເຈົ້າມະຫາອຸປຣາຊເພັດຊຣາຊເປັນຫົວໜ້າ ຈຶ່ງພາກັນຈັດຕັ້ງຣັຖບານລາວອິສຣະຂຶ້ນໃນວັນທີ່ ໑໒ ຕຸລາ (ອົກໂຕບ) ແລະໄດ້ປະກາດໂຮມເອົາດິນແດນລາວທາງຝັ່ງຊ້າຍແມ່ນ້ຳຂອງທີ່ຝຣັ່ງເສດຈັດການປົກຄອງເປັນສອງພາກໄວ້ນັ້ນ ໃຫ້ເຂົ້າເປັນອັນນຶ່ງດຽວກັນ ແຕ່ເອກຣາຊແລະອິສຣະພາບທີ່ຄນະລາວອິສຣະປະກາດນັ້ນ ຕັ້ງຢູ່ບໍ່ໄດ້ເຫິງ ຄືພໍເຖິງວັນທີ່ ໒໔ ເມສາ ໑໙໔໖ ກອງທະຫານຝຣັ່ງເສດ ເຂົ້າຍຶດເອົາວຽງຈັນໄດ້ຄນະຣັຖບານລາວອິສຣະຈຶ່ງແຕກໜີໄປຢູ່ປະເທດໄທຍ ແລະກໍໄດ້ທຳການຂັດຂວາງຕໍ່ສູ້ກັບການປົກຄອງຂອງຝຣັ່ງເສດຢູ່ຕລອດມາຈົນມາເຖິງປີ ໑໙໔໗ ຝຣັ່ງເສດໄດ້ຕົກລົງທຳສັນຍາຍົກໃຫ້ລາວເປັນເອກຣາດພາຍໃນເຄືອສະຫະພັນຝຣັ່ງເສດ ດັ່ງນັ້ນ ເມື່ອມາເຖິງປີ ໑໙໔໙ ຄນະຣັ ບານລາວອິສຣະທີ່ຕັ້ງຢູ່ກຣຸງເທພຈຶ່ງໄດ້ປະກາດຍຸບຕົວເອງແລ້ວຄືນມາຮ່ວມມືກັບຣັຖບານລາວທີ່ຝຣັ່ງເສດມອ ໃຫ້ແຕ່ປີ ໑໙໔໗ ນັ້ນແລະຈັດຕັ້ງເປັນປະເທດເອກຣາຊທີ່ມີຣັຖບານເປັນຂອງຕົນເອງຕັ້ງແຕ່ວັນທີ ໑໙ ກໍຣະກະດາ ປີ ໑໙໔໙ ເປັນຕົ້ນມາດ້ວຍປະການດັ່ງນີ້.

ສຣຸບຄວາມລົງແລ້ວ ເຫັນວ່າ ຣາຊອານາຈັກລາວທີ່ກວ້າງໃຫຍ່ໄພສານມາແຕ່ບູຮານ ໄດ້ເສັຽອິສຣະພາບ ແລະ ເອກຣາດໃຫ້ແກ່ປະເທດໄທ ໃນປີ ຄ.ສ.໑໗໗໙ ຕໍ່ຈາກນັ້ນມາເຖິງປີ ຄ.ສ.໑໘໙໓ ຝຣັ່ງເ ໄດ້ມາແບ່ງປັນເອົາດິນລາວທີ່ຢູ່ທາງຝັ່ງຊ້າຍແມ່ນ້ຳຂອງໄປຈາກໄທ ຕົກມາເຖິງປີ ໑໙໔໙ ຝຣັ່ງເສດຈຶ່ງໄດ້ ຍິນຍອມໃຫ້ລາວໃນສ່ວນທີ່ຢູ່ນຳຝຣັ່ງເສດນັ້ນໄດ້ຮັບຄວາມເປັນເອກຣາຊ ມີສິດທິເສຣີພາບໃນການປົກຄອງຕົນ ໂຮມເວລາຕັ້ງແຕ່ຊາດລາວຕົກເປັນຫົວເມືອງຂຶ້ນຂອງຊາດອື່ນມາແຕ່ປີ ໑໗໗໙ ເຖິງປີ ໑໙໔໙ ຈຶ່ງໄດ້

ເອກຣາດເປັນເວລາເຫິງນານເຖິງ ໑໗໐ ປີ  ສ່ວນລາວທີ່ຢູ່ທາງຝັ່ງຂວາຂອງແມ່ນ້ຳຂອງນັ້ນ ຖືກໂອນຊາດເຂົ້າເປັນໄທເລີຍມາແຕ່ປີ ຄ.ສ.໑໘໙໙ ລຸນຫລັງໄທເສັຽດິນແດນລາວໃຫ້ຝຣັ່ງເສດແລ້ວພຽງ ໖ ປີ ຈຶ່ງເປັນອັນວ່າ ລາວທີ່ຢູ່ທາງຝັ່ງຂວາແມ່ນ້ຳຂອງນັ້ນໄດ້ກາຍເກີດເປັນຄົນໄທເຊື້ອຊາດໄທໄປແລ້ວຕາມກົດໝາຍ ສ່ວນຄົນລາວທີ່ຢູ່ທາງຝັ່ງຊ້າຍນ້ຳຂອງ ກໍໄດ້ເປັນ ຄົນລາວເຊື້ອຊາດລາວ (ທັງທີ່ຄົນທັງສອງຝັ່ງນີ້ແມ່ນເຊື້ອຊາດເຜົ່າພັນດຽວກັນ) ໂດຍສົມບູນດ້ວຍປະການດັ່ງນີ້.



ພຣະບາດສົມເດັດ ພຣະເຈົ້າສຣີສວ່າງວົງສ໌
ພຣະມະຫາບູຣຸດລາວ ແຫ່ງພຣະຣາຊອານາຈັກ
ເປັນຜູ້ຈິງເຈັນສົນຍາເອົາເອກຣາຊຈາກຝຣັ່ງເສດ ໃນວັນທີ
໑໙ ກໍຣະກະດາ ຄ.ສ. ໑໙໔໙ ທີ່ກຸງປາຣີ

## ບັນຊີໜັງສືແລະເອກສານ
## ທີ່ໃຊ້ໃນການຣິຈນາ ພົງສາວະດານຊາດລາວ

-------=== ໐ ===-----

໑. ນິທານຂຸນບໍຣົມ ໗ ສະບັບ ເປັນອັກສອນທັມ

໒. ພົງສາວະດານລ້ານຊ້າງ (ຈາກພົງສາວະດານສະບັບຄວາມສຳຄັນ ຂອງຫລວງວິຈິຕວາທະການ)

໓. ພົງສາວະດານຫລວງພຣະບາງ (ຈາກປະຊຸມ ພົງສາວະດານໄທ)

໔. ເຣື່ອງສອບສວນພົງສາວະດານລ້ານຊ້າງ

໕. ຈົດໝາຍເຫດໝໍໂຫນໄທ (ໃນປະຊຸມພົງສາວະດານໄທ ເຫລັ້ມ ໓)

໖. ເຣື່ອງເມືອງນະຄອນຈຳປາສັກ (ປະຊຸມພົງສາວະດານໄທ ພາກ ໗໐)

໗. ພົງສາວະດານຫຣົ້ວຽງຈັນ (ເຊິ່ງອິງເປັນເຈົ້າອັຕຕິຍະຂຽນໄວ້ ແຕ່ປີ ຄ.ສ.໑໗໒໙)

໘. ພົງສາວະດານອະຍຸທຍາ ຕອນທີ ໑

໙. ພົງສາວະດານໂຍນົກ (ພົງສາວະດານລານນາ)

໑໐. ພົງສາວະດານ ມອນ, ພະມ້າ, ຂເມນ (ຈາກປະຊຸມພົງສາວະດານຂອງຫລວງວິຈິຕວາທະກາຣ)

໑໑. ຕຳນານເມືອງພວນ ແລະຕຳນານເມືອງຍະໂສທອນ

໑໒. ເຣື່ອງເມືອງຊຽງແສນ (ໃນປະຊຸມພົງສາວະດານໄທພາກ ໖໑)

໑໓. ຕຳນານຂຸນເຈືອງ ຫລື ທ້າວຮຸ່ງ

໑໔. ຕຳນານພຣະທາຕສີສອງຮັກ ເມືອງດ່ານຊ້າຍ

໑໕. ຕຳນານທາຕໂພນເມືອງທ່າແຂກ

໑໖. ຕຳນານທາຕພະນົມ ຫລື ອຸຣັງຄະນິທານ

໑໗. ຕຳນານພຣະແກ້ວ, ພຣະບາງ, ແລະພຣະສິງຫ໌

໑໘. ເຣື່ອງຈັນທະພານິດ

໑໙. ປະຊຸມພົງສາວະດານໄທ ພາກ ໒໒ ເຣື່ອງເມືອງຫົວພັນທັງຫ້າທັງຫົກ

໒໐. ພົງສາວະດານໄທຣັຊການທີ ໑ ແລະ ທີ ໒ ຂອງພຣະຍາທິພາກອນວົງ

໒໑. ປວັດໄທອີສານ ຂອງນາຍພັນຕຳຣວຈຕຣີ ສິງການ ຣັຖມົນຕຣີຊ່ວຍວ່າການກະຊວງມະຫາດໄທ

໒໒. ສຳເນົາພຣະຣາຊສາຣແລະສຸພະອັກສຣລະຫວ່າງພຣະເຈົ້າບຸນຍະສາຣ ເຈົ້າແຜ່ນດິນວຽງຈັນ ກັບ ເຈົ້າຕາກສິນ ເຈົ້າແຜ່ນດິນໄທ ມີໄປມາຫາກັນ (ຈາກໜັງສືພຣະຣາຊວິຈານ)

໒໓. ເຣື່ອງຊາດໄທເດີມ ຂອງພຣະຍາອະນຸມານຣາຊທົນ

໒໔. ເຣື່ອງຊາດໄທໃນຍູນານ ຂອງອາຈາຣ ຄຣິຟຕັນດອດ ໝໍສອນສາສນາອະເມຣິກາ

໑໕. ພົງສາວະດານຊາດໄທ ຂອງພຣະບໍຣິວານເທພທານີ.



ເຈົ້າຍຸຕິທັມທອນ ເຈົ້ານະຄອນຈຳປາສັກ